# ພຣະທັມເພງສັຣເສີນ


| | | | | | | | | | |
|---|---|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 |
| 11 | 12 | 13 | 14 | 15 | 16 | 17 | 18 | 19 | 20 |
| 21 | 22 | 23 | 24 | 25 | 26 | 27 | 28 | 29 | 30 |
| 31 | 32 | 33 | 34 | 35 | 36 | 37 | 38 | 39 | 40 |
| 41 | 42 | 43 | 44 | 45 | 46 | 47 | 48 | 49 | 50 |
| 51 | 52 | 53 | 54 | 55 | 56 | 57 | 58 | 59 | 60 |
| 61 | 62 | 63 | 64 | 65 | 66 | 67 | 68 | 69 | 70 |
| 71 | 72 | 73 | 74 | 75 | 76 | 77 | 78 | 79 | 80 |
| 81 | 82 | 83 | 84 | 85 | 86 | 87 | 88 | 89 | 90 |
| 91 | 92 | 93 | 94 | 95 | 96 | 97 | 98 | 99 | 100 |
| 101 | 102 | 103 | 104 | 105 | 106 | 107 | 108 | 109 | 110 |
| 111 | 112 | 113 | 114 | 115 | 116 | 117 | 118 | 119 | 120 |
| 121 | 122 | 123 | 124 | 125 | 126 | 127 | 128 | 129 | 130 |
| 131 | 132 | 133 | 134 | 135 | 136 | 137 | 138 | 139 | 140 |
| 141 | 142 | 143 | 144 | 145 | 146 | 147 | 148 | 149 | 150 |


## ເພງສັຣເສີນ

PSALMS

## BOOK 1

(ພສສ 1-41)

### 1 ເພງສັຣເສີນ ບົດທີນຶ່ງ

**ຄວາມສຸກອັນແທ້ຈິງ**

The Two ways

1 ຄວາມສຸກເປັນຂອງຄົນຜູ້ທີ່ບໍ່ເຮັດຕາມຄຳແນະນຳຂອງຄົນຊົ່ວຜູ້ທີ່ບໍ່ປະພຶດຕາມແບບຢ່າງຂອງຄົນບາບ ຫລືບໍ່ຕິດພັນກັບພວກທີ່ຫມິ່ນປມາດພຣະເຈົ້າ

2 ແຕ່ວ່າຄວາມສຸກເປັນຂອງຜູ້ທີ່ມັກອ່ານພຣະທັມຂອງພຣະຜູ້ເປັນເຈົ້າ ແລະຮຽນຮູ້ເອົາທຸກມື້ທຸກຄືນ

3 ຄົນຜູ້ນີ້ເປັນຄືຕົ້ນໄມ້ທີ່ປູກຢູ່ໃກ້ລຳນ້ຳ ຊຶ່ງມີໃບຂຽວສົດງົດງາມ ແລະເກີດຫມາກຕາມຣະດູ ເຂົາກະທຳທຸກສິ່ງກໍສຳເຣັດຜົນ

4 ແຕ່ວ່າຄົນຊົ່ວບໍ່ເປັນຢ່າງນີ້ເລີຍ ເຂົາເປັນເຫມືອນຂີ້ແກບທີ່ລົມພັດປິວໄປ

5 ພຣະຜູ້ເປັນເຈົ້າຈະຕັດສິນລົງໂທດຄົນຊົ່ວ ຄົນບາບຈະຖືກກຳຈັດຫນີຈາກຄົນຊອບທັມ

6 ພຣະຜູ້ເປັນເຈົ້າຊົງພິທັກຮັກສາຄົນຊອບທັມ ແຕ່ວ່າຄົນຊົ່ວຈະຖືກປະປ່ອຍໃຫ້ດັບສູນໄປ

### 2 ເພງສັຣເສີນ ບົດທີສອງ

**ພຣະເຈົ້າຊົງເລືອກເອົາເຈົ້າຊີວິດ**

God’s Promise to His Anointed
(ກຈກ 4:23-31)
1 ເປັນຫຍັງປະຊາຊາດຕ່າງໆຈຶ່ງກໍ່ການກະບົດຂຶ້ນ? ເປັນຫຍັງຊົນຊາດເຫລົ່ານີ້ຈຶ່ງວາງແຜນຢ່າງບໍ່ມີປໂຍດ?
2 ເຈົ້າຊີວິດທັງຫລາຍຂອງເຂົາກໍ່ການກະບົດຕໍ່ສູ້ພຣະເຈົ້າ ພວກຜູ້ປົກຄອງເຂົາກໍພາກັນຄິດຮ້າຍຕໍ່ພຣະຜູ້ເປັນ
ເຈົ້າ ແລະເຈົ້າຊີວິດທີ່ພຣະອົງຊົງເລືອກໄວ້ກ່າວວ່າ,
3 “ຂໍໃຫ້ເຮົາເປັນອິສຣະຈາກການປົກຄອງຂອງພຣະອົງ ຂໍເຮົາຫນີໃຫ້ພົ້ນຈາກການບັງຄັບຂອງພຣະອົງ
4 ຝ່າຍພຣະຜູ້ເປັນເຈົ້າກໍຊົງຫົວຂວັນແລະເຍາະເຍີ້ຍເຂົາຈາກພຣະຣາຊບັນລັງໃນຟ້າສວັນ
5 ພຣະອົງຊົງກ່າວຕໍ່ເຂົາດ້ວຍພຣະພິໂຣດ ແລະຊົງທຳເຂົາແຕກຕື່ນຕົກໃຈດ້ວຍພຣະພິໂຣດຂອງພຣະອົງ
6 ພຣະອົງຊົງກ່າວວ່າ, “ເຮົາໄດ້ແຕ່ງຕັ້ງເຈົ້າຊີວິດຂອງເຮົາໄວ້ເທິງຊີໂອນ ພູເຂົາສັກສິດຂອງເຮົາ”
7 ເຈົ້າຊີວິດເມືອງຊີໂອນກ່າວຂຶ້ນວ່າ, “ຂ້າພະເຈົ້າຈະບອກເຖິງຄຳທີ່ພຣະຜູ້ເປັນເຈົ້າຊົງບັນຍັດໄວ້” ພຣະຜູ້ເປັນ
ເຈົ້າຊົງກ່າວແກ່ຂ້າພະເຈົ້າວ່າ, “ມື້ນີ້ເຮົາໄດ້ຮັບເຈົ້າເປັນລູກຊາຍຂອງເຮົາ ເຮົາເປັນພໍ່ຂອງເຈົ້າ
8 ຈົ່ງຂໍ ແລ້ວເຮົາຈະມອບຊົນຊາດທັງຫລາຍໃຫ້ແກ່ເຈົ້າ ຫມົດທັງໂລກຈະເປັນຂອງເຈົ້າ
9 ເຈົ້າຈະໃຊ້ອຳນາດປົກຄອງເຂົາ ເຈົ້າຈະຕີເຂົາແຕກເຫມືອນຕີຫມໍ້ດິນ
10 ບັດນີ້ ເຈົ້າຊີວິດທັງຫລາຍເອີຍ, ຈົ່ງຕັ້ງໃຈຟັງເທີນ ທັງພວກຜູ້ປົກຄອງຈົ່ງເອົາໃຈໃສ່
11 ຈົ່ງຮັບໃຊ້ພຣະຜູ້ເປັນເຈົ້າດ້ວຍຄວາມໂຄຣົບຢຳເກງ ຈົ່ງຖ່ອມຕົວລົງຕໍ່ພຣະພັກຂອງພຣະອົງ
12 ຖ້າພຣະອົງຊົງພຣະພິໂຣດ ພວກເຈົ້າຈະຕ້ອງຕາຍ ເພາະພຣະອົງຊົງພິໂຣດຢ່າງຮ້າຍແຮງ ຄວາມສຸກເປັນຂອງ
ທຸກຄົນທີ່ໄປຫາພຣະອົງ ເພື່ອຂໍຄວາມຄຸ້ມຄອງ

## 3 ເພງສັຣເສີນ ບົດທີສາມ

### ການອ້ອນວອນໃນເວລາເຊົ້າສະແດງຄວາມໄວ້ວາງໃຈໃນພຣະເຈົ້າ

Trust in God under Adversity

ເພງສັຣເສີນ ຂອງດາວິດ ເມື່ອສະເດັດຫນີຈາກອັບຊາໂລມໂອຣົດຂອງພຣະອົງ

A Psalm of David when he fled from his son Ab’salom

1 ຂ້າແດ່ພຣະຜູ້ເປັນເຈົ້າ ສັດຕຣູຂອງຂ້າພຣະອົງທະວີຫລາຍຂຶ້ນເຫລືອເກີນ ຄູ່ສັດຕຣູຫລາຍຄົນກຳລັງລຸກຂຶ້ນຕໍ່
ສູ້ຂ້າພຣະອົງ
2 ເຂົາກຳລັງກ່າວເຖິງຂ້າພຣະອົງວ່າ ໃນພຣະເຈົ້າບໍ່ມີທາງລອດສຳລັບເຂົາ
3 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເປັນໂລ່ອ້ອມຮອບຕົວຂ້າພຣະອົງ ແລະຊົງເປັນຜູ້ຊູຫົວຂອງຂ້າພຣະອົງໄວ້
4 ຂ້າພຣະອົງຮ້ອງທູນພຣະຜູ້ເປັນເຈົ້າ ແລະພຣະອົງຊົງຕອບຂ້າພຣະອົງຈາກພູເຂົາອັນບໍຣິສຸດຂອງພຣະອົງ
5 ຂ້າພະເຈົ້າ ນອນລົງແລະຫລັບໄປ ຂ້າພະເຈົ້າກັບຕື່ນຂຶ້ນ ເພາະພຣະຜູ້ເປັນເຈົ້າຊົງອຸປຖັມຂ້າພະເຈົ້າ
6 ຂ້າພະເຈົ້າບໍ່ຢ້ານຄົນເປັນຫມື່ນໆ ຊຶ່ງຕັ້ງຕົນຕໍ່ສູ້ຂ້າພະເຈົ້າຢູ່ຮອບດ້ານ
7 ຂ້າແດ່ພຣະຜູ້ເປັນເຈົ້າ ໂຜດຊົງລຸກຂຶ້ນ ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ໂຜດຊົງຊ່ອຍກູ້ຂ້າພຣະອົງ ຂໍພ
ຣະອົງຊົງຕົບຫນ້າສັດຕຣູທັງຫລາຍຂອງຂ້າພຣະອົງ ແລະຊົງຖອນແຂ້ວຂອງຄົນອະທັມທັງປວງ
8 ການຊ່ອຍກູ້ເປັນຂອງພຣະຜູ້ເປັນເຈົ້າ ຂໍພຣະພອນຂອງພຣະອົງຫລັ່ງລົງເຫນືອໄພ່ພົນຂອງພຣະອົງເທີນ

## 4 ເພງສັຣເສີນ ບົດທີສີ່

### ການອ້ອນວອນເວລາແລງ ສະແດງຄວາມໄວ້ວາງໃຈໃນພຣະເຈົ້າ

Confident Plea for Deliverance from Enemies

ເຖິງຫົວໜ້ານັກຮ້ອງ ໃຊ້ເຄື່ອງເສບ ເພງສັຣເສີນຂອງດາວິດ To the leader: with stringed instruments. A Psalm of David.

1 ຂ້າແດ່ພຣະຜູ້ເປັນເຈົ້າຜູ້ຊົງໃຫ້ປະຈັກວ່າ ຂ້າພຣະອົງເປັນຝ່າຍຊອບທັມ ຂໍຊົງໂຜດຕອບເມື່ອຂ້າພຣະອົງຮ້ອງ
ທູນ ເມື່ອຂ້າພຣະອົງເດືອດຮ້ອນ ຂໍພຣະອົງປະທານຊ່ອງທາງໃຫ້ ຂໍຊົງເມດຕາແກ່ຂ້າພຣະອົງ ແລະຊົງຟັງຄຳ
ອ້ອນວອນຂອງຂ້າ
ພຣະອົງ

2 ທ່ານຜູ້ດີເອີຍ, ຂ້າພະເຈົ້າຈະຕ້ອງເສື່ອມເສັຽກຽດໄປອີກດົນປານໃດ ທ່ານຈະຮັກຄຳໄຮ້ຄ່າ ແລະສແວງການ
ຕົວະອີກດົນປານໃດ

3 ຈົ່ງຮູ້ເຖີດວ່າ ພຣະຜູ້ເປັນເຈົ້າຊົງແຍກຄົນຊອບທັມໄວ້ສຳລັບພຣະອົງ ພຣະຜູ້ເປັນເຈົ້າຊົງສະດັບຮັບຟັງເມື່ອຂ້າ
ພະເຈົ້າທູນ ພຣະອົງ

4 ຮ້າຍກໍຮ້າຍເຖີດ ແຕ່ "ຢ່າທຳບາບ" ຈົ່ງຄຳນຶງໃນໃຈເວລາຢູ່ເທິງບ່ອນນອນແລະສງົບຢູ່

5 ຈົ່ງຖວາຍເຄື່ອງບູຊາໃຫ້ຖືກຕ້ອງ ແລະວາງໃຈໃນພຣະຜູ້ເປັນເຈົ້າ

6 ມີຄົນຈຳນວນຫລາຍເວົ້າວ່າ, "ໂອ ເຮົາຢາກຈະເຫັນສິ່ງດີໆ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງເງີຍພຣະພັກທີ່ສວ່າງ
ຂອງພຣະອົງມາເຫນືອຂ້າພຣະອົງທັງຫລາຍ"

7 ພຣະອົງໄດ້ປະທານຄວາມຊື່ນບານໃຫ້ແກ່ຈິດໃຈຂອງຂ້າພຣະອົງຫລາຍກວ່າເມື່ອໄດ້ເຂົ້າແລະນ້ຳອະງຸ່ນມາກ
ມາຍ

8 ຂ້າພຣະອົງຈະເອນກາຍລົງນອນຫລັບໃນຄວາມສັນຕິ ຂ້າແດ່ພຣະຜູ້ເປັນເຈົ້າ ເພາະພຣະອົງເທົ່ານັ້ນທີ່ຊົງທຳ
ໃຫ້ຂ້າພຣະອົງອາສັຍຢູ່ຢ່າງປອດພັຍ

## 5 ເພງສັຣເສີນ ບົດທີຫ້າ

### ການອ້ອນວອນຂໍຄວາມຄຸ້ມຄອງຮັກສາ

Trust in God for Deliverance from Enemies

ເຖິງຫົວໜ້ານັກຮ້ອງ ສຳລັບພວກຂຸ່ຍ ເພງສັຣເສີນຂອງດາວິດ

To the leader: for the flutes. A psalm of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງສະດັບຟັງຖ້ອຍຄຳຂອງຂ້າພຣະອົງ ຂໍຊົງຟັງສຽງຄ່ຳຄວນຂອງຂ້າພຣະອົງ

2 ຂ້າແດ່ພຣະບໍຣົມກະສັດ ພຣະເຈົ້າຂອງຂ້າພຣະອົງ ຂໍຊົງຟັງສຽງຮ້ອງທູນຂອງຂ້າພຣະອົງ ເພາະຂ້າພຣະ
ອົງອ້ອນວອນທູນຕໍ່ພຣະອົງ

3 ຂ້າແດ່ພຣະຜູ້ເປັນເຈົ້າ ໃນເວລາເຊົ້າພຣະອົງຊົງສະດັບສຽງຂອງຂ້າພຣະອົງ ຊຶ່ງຂ້າພຣະອົງຕຽມຖວາຍເຄື່ອງ
ສັກກາຣະບູຊາແດ່ພຣະອົງ ແລະເຝົ້າຄອຍເບິ່ງຢູ່

4 ພຣະອົງບໍ່ໄດ້ຊົງເປັນພຣະເຈົ້າຜູ້ຊົມຊື່ນຍິນດີໃນຄວາມອະທັມ ຄວາມຊົ່ວຮ້າຍຈະບໍ່ອາສັຍຢູ່ກັບພຣະອົງ

5 ຄົນໂອ້ອວດຈະບໍ່ຢືນຢູ່ຕໍ່ພຣະພັກຂອງພຣະອົງພຣະອົງຊົງກຽດຊັງຜູ້ກະທຳການຊົ່ວທັງສິ້ນ

6 ພຣະອົງຊົງທຳລາຍຜູ້ທີ່ມຸສາ ພຣະຜູ້ເປັນເຈົ້າຊົງດູຖູກຄົນຮຸນແຮງ ແລະຄົນຫລອກລວງ

7 ແຕ່ດ້ວຍຄວາມຮັກຫມັ້ນຄົງອັນບໍຣິບູນຂອງພຣະອົງ ຂ້າພຣະອົງຈະເຂົ້າໄປໃນພຣະວິຫານຂອງພຣະອົງ ຂ້າພ
ຣະອົງຈະນະມັສການໃນທີ່ພຣະວິຫານອັນບໍຣິສຸດຂອງພຣະອົງ ດ້ວຍຄວາມຢຳເກງພຣະອົງ

8 ຂ້າແດ່ພຣະຜູ້ເປັນເຈົ້າ ເຫດດ້ວຍສັດຕຣູຂອງຂ້າພຣະອົງ ຂໍຊົງນຳຂ້າພຣະອົງໄປໂດຍຄວາມຊອບທັມຂອງພ
ຣະອົງ ຂໍຊົງໂຜດນຳທາງຊຶ່ງຂ້າພຣະອົງນັ້ນໃຫ້ລາບລື້ນ

9 ເພາະໃນປາກຂອງເຂົາເຫລົ່ານັ້ນບໍ່ມີຄວາມຈິງ ຈິດໃຈຂອງເຂົາກໍຄືການທຳລາຍ ລຳຄໍຂອງເຂົາຄືຂຸມຝັງສົບທີ່
ເປີດຢູ່ ເຂົາປະຈົບປະແຈງດ້ວຍລີ້ນຂອງເຂົາ
10 ຂ້າແດ່ພຣະຜູ້ເປັນເຈົ້າ ໂຜດໃຫ້ເຂົາຮັບກັມຊົ່ວຂອງເຂົາ ແລະໃຫ້ເຂົາທັງຫລາຍລົ້ມລົງດ້ວຍຄວາມຄິດເຫັນ
ຂອງຕົນເອງ ເຫດການທໍຣະຍົດທັງຫລາຍນັ້ນ ຂໍຊົງຂັບໄລ່ເຂົາອອກໄປ ເນື່ອງຈາກເຂົາທັງຫລາຍໄດ້ກະບົດຕໍ່
ພຣະອົງ
11 ແຕ່ໃຫ້ຄົນທັງປວງທີ່ລີ້ພັຍຢູ່ໃນພຣະອົງນັ້ນເບີກບານໃຈ ໃຫ້ເຂົາຮ້ອງເພງດ້ວຍຄວາມຊື່ນຊົມຍິນດີຢູ່ສເມີ ແລະ
ຂໍຊົງປ້ອງກັນເຂົາໄວ້ ເພື່ອຄົນທີ່ຮັກພຣະນາມຂອງພຣະອົງຈະໄດ້ສຸກໃຈຢູ່ໃນພຣະອົງ
12 ຂ້າແດ່ພຣະຜູ້ເປັນເຈົ້າ ເພາະພຣະອົງຊົງອວຍພຣະພອນແກ່ຄົນຊອບທັມ ພຣະອົງຊົງຄຸ້ມຄອງເຂົາໄວ້ ດ້ວຍ
ຄວາມໂປດປານເຫມືອນເປັນໂລ່ປ້ອງກັນເຂົາ

## 6 ເພງສັຣເສີນ ບົດທີຫົກ

### ການອ້ອນວອນຂໍຄວາມກະຣຸນາໃນຍາມທຸກຍາກລຳບາກ

Prayer for Recovery from Grave Illness

ເຖິງຫົວຫນ້ານັກຮ້ອງ ໃຊ້ເຄື່ອງເສບຕາມທຳນອງເຊມີນິທ ເພງສັຣເສີນ ຂອງດາວິດ

To the leader: with stringed instruments; according to the Sheminith. A Psalm of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຢ່າຊົງຂນາບຂ້າພຣະອົງ ເມື່ອຊົງໂກດ ແລະຂໍຢ່າຊົງລົງໂທດຂ້າພຣະອົງດ້ວຍພຣະພິ
ໂຣດຂອງ   ພຣະອົງ
2 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງພຣະກະຣຸນາແກ່ຂ້າພຣະອົງ ເພາະຂ້າພຣະອົງເມື່ອຍອ່ອນກຳລັງ ຂ້າແດ່ພຣະຜູ້
ເປັນເຈົ້າ ຂໍຊົງຮັກສາຂ້າພຣະອົງເພາະກະດູກຂອງຂ້າພຣະອົງທຸກຍາກລຳບາກຫຼາຍ
3 ທັງຈິດໃຈຂອງຂ້າພຣະອົງກໍທຸກຍາກລຳບາກຫລາຍ ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ອີກດົນປານໃດຫນໍ
4 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຫັນມາຊ່ອຍຊີວິດຂອງຂ້າພຣະອົງໃຫ້ລອດດ້ວຍເຖີດ ຂໍຊົງຊ່ອຍກູ້ຂ້າພຣະອົງ
ເພາະເຫັນແກ່ຄວາມຮັກຫມັ້ນຄົງຂອງພຣະອົງ
5 ເພາະຖ້າໃນຄວາມຕາຍ ບໍ່ມີການລະນຶກເຖິງພຣະອົງແລ້ວ ໃນແດນມໍຣະນາໃຜເດ່ຈະໂມທະນາພຣະຄຸນຂອງ
ພຣະອົງ
6 ຂ້າພຣະອົງອ່ອນແຮງດ້ວຍການຄໍ່າຄວນ ແລະທຸກຄືນບ່ອນນອນກໍຊຸ່ມປຽກຍ້ອນຫລັ່ງນໍ້າຕາ ແລະຫມອນກໍຊຸ່ມ
ດ້ວຍນໍ້າຕາທີ່ຮ້ອງໄຫ້
7 ຕາຂອງຂ້າພຣະອົງເມື່ອຍລ້າເພາະຄວາມທຸກໃຈ ມັນອ່ອນເພັ້ຽລົງ ເພາະຄູ່ແຂ່ງຂັນທັງປວງຂອງຂ້າພຣະອົງ
8 ບັນດາເຈົ້າຜູ້ກະທຳຄວາມຊົ່ວຈົ່ງຫນີໄປຈາກເຮົາເພາະພຣະຜູ້ເປັນເຈົ້າຊົງສະດັບສຽງຮ້ອງໄຫ້ຂອງເຮົາແລ້ວ
9 ພຣະຜູ້ເປັນເຈົ້າຊົງສະດັບຄຳອ້ອນວອນຂອງຂ້າພຣະອົງ ຊົງຮັບຄຳອ້ອນວອນຂອງຂ້າພຣະອົງ
10 ສັດຕຣູທັງສິ້ນຂອງຂ້າພຣະອົງຈະໄດ້ອາຍ ແລະຍາກລຳບາກ ເຂົາທັງຫລາຍຈະກັບຄືນ ແລະຈະໄດ້ຮັບຄວາມ
ອັບອາຍໃນພິບຕາດຽວ

## 7 ເພງສັຣເສີນ ບົດທີເຈັດ

### ການອ້ອນວອນເພື່ອຂໍຊ່ອຍຊີວິດ

Plea for Help against Persecutors

ຊິກກັຍໂອນ ຂອງດາວິດ ຊຶ່ງທ່ານຮ້ອງຖວາຍພຣະເຈົ້າກ່ຽວກັບກູດ, ເບັນຢາມິນ

A Shiggaion of David, which he sang to the Lord concerning Cush, a Benjaminite.

1 ໂອ ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງລີ້ພັຍຢູ່ໃນພຣະອົງ ຂໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນພັຍຈາກຜູ້
ໄລ່ຕາມທັງມວນ ຂໍຊົງຊ່ອຍກູ້ຂ້າພຣະອົງ
2 ຢ້ານວ່າເຂົາຈະຈີກຂ້າພຣະອົງເສັ່ງດັ່ງສິງ ແລະລາກຂ້າພຣະອົງໄປ ໂດຍບໍ່ມີຜູ້ໃດຊ່ອຍໄດ້ຂ້າແດ່ພຣະຜູ້ເປັນ
ເຈົ້າຂອງຂ້າ  ພຣະອົງ ຖ້າຂ້າພຣະອົງກະທຳເຊັ່ນນີ້ ຄືຖ້າມີຄວາມຜິດໃນມືຂອງຂ້າພຣະອົງ
3 ຖ້າຂ້າພຣະອົງທຳຄວາມຊົ່ວແກ່ເພື່ອນບ້ານຂອງຂ້າພຣະອົງ ຫລືປຸ້ນສັດຕຣູຂອງຂ້າພຣະອົງໂດຍປາສຈາກສາ
ເຫດ
4 ກໍຂໍໃຫ້ສັດຕຣູໄລ່ຕາມຂ້າພຣະອົງທັນ ແລະໃຫ້ເຂົາຢຽບຍ່ຳຊີວິດຂ້າພຣະອົງລົງເຖິງດິນ ແລະວາງວິນຍານຂອງ
ຂ້າພຣະອົງໄວ້ໃນຝຸ່ນດິນ
5 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງລຸກຂຶ້ນດ້ວຍພຣະພິໂຣດຂອງພຣະອົງ ຂໍຊົງຂຶ້ນສູ້ຄວາມໂຫດຮ້າຍສັດ
ຕຣູຂອງຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ຂໍຊົງຕື່ນຂຶ້ນ ພຣະອົງຊົງກຳນົດການພິພາກສາ
6 ຂໍໃຫ້ຊຸມນຸມຊົນຊາດທັງຫລາຍມາຢູ່ຮອບພຣະອົງ ແລະຂໍຊົງກັບໄປປະທັບເດັ່ນຢູ່ເໜືອຊຸມນຸມນັ້ນ
7 ພຣະຜູ້ເປັນເຈົ້າຊົງພິພາກສາຊົນຊາດທັງຫລາຍ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງພິພາກສາ ຂ້າພຣະອົງຕາມ
ຄວາມຊອບທັມຂອງຂ້າພຣະອົງ ແລະຕາມຄວາມສັດສຸຈຣິດ ຊຶ່ງມີຢູ່ໃນຂ້າພຣະອົງ
8 ຂ້າແດ່ພຣະເຈົ້າຜູ້ຊົງທັມ ຜູ້ຊົງທົດລອງຄວາມຄິດແລະຈິດໃຈທັງຫລາຍ ຂໍໃຫ້ຄວາມຊົ່ວຂອງຄົນອະທັມຈົ່ງ
ເຖິງທີ່ສິ້ນສຸດ ແຕ່ຂໍຊົງສະຖາປະນາຄົນຊອບທັມຂຶ້ນ
9 ພຣະຜູ້ເປັນເຈົ້າເປັນທີ່ກຳບັງຂອງຂ້າພຣະອົງ ພຣະອົງຊົງຊ່ອຍຊູຜູ້ໃຈທ່ຽງຕົງໃຫ້ລອດ
10 ພຣະຜູ້ເປັນເຈົ້າຊົງເປັນຜູ້ພິພາກສາທີ່ຊອບທັມ ແລະເປັນຜູ້ປະທານຄຳພິພາກສາທຸກວັນ
11 ຖ້າມະນຸດຄົນໃດບໍ່ກັບໃຈ ພຣະອົງຈະຊົງຝົນຄົມດາບຂອງພຣະອົງ ພຣະອົງຊົງກົ່ງທະນູຕຽມພ້ອມໄວ້
12 ພຣະອົງຊົງຕຽມອາວຸດອັນຮ້າຍແຮງ ຊົງກະທຳໃຫ້ລູກທະນູຂອງພຣະອົງເປັນສອນໄຟ
13 ເບິ່ງແມ໋, ຄົນອະທັມກໍ່ຄວາມຊົ່ວຮ້າຍຂຶ້ນແລ້ວ ກຳລັງຕັ້ງທ້ອງຄວາມຊົ່ວຊ້າ ແລະຄອດອອກມາເປັນການຕົວະ
14 ເຂົາຂຸດຫລຸມໄວ້ ແລະຕົກລົງໄປໃນຫລຸມທີ່ເຂົາເຮັດໄວ້ນັ້ນ
15 ຄວາມຊົ່ວຊ້າຂອງເຂົາກັບມາສຸມຫົວເຂົາ ແລະຄວາມທາຣຸນຂອງເຂົາລົງມາເທິງຫົວຂອງເຂົາເອງ
16 ຂ້າພະເຈົ້າຈະຖວາຍໂມທະນາຂອບພຣະຄຸນພຣະເຈົ້າເນື່ອງດ້ວຍຄວາມຊອບທັມຂອງພຣະອົງ ແລະຂ້າພະ
ເຈົ້າຈະຮ້ອງເພງສັຣເສີນພຣະນາມຂອງພຣະເຈົ້າຜູ້ສູງສຸດ

## 8 ເພງສັຣເສີນ ບົດທີແປດ

### ພຣະຣັສມີຂອງພຣະເຈົ້າແລະສັກສີຂອງມະນຸດ

Devine Majesty and Human Dignity

ເຖິງຫົວໜ້ານັກຮ້ອງ ຕາມທຳນອງກິດຕິດ ເພງສັຣເສີນຂອງດາວິດ

To the leader: according to the Gittith. A psalm of David.

1 ໂອ ພຣະຜູ້ເປັນເຈົ້າຂອງພວກຂ້າພຣະອົງທັງຫລາຍ ຄວາມຍິ່ງໃຫຍ່ຂອງພຣະອົງເກີນວ່າລືຊາໄປທົ່ວທັງໂລກ
ຄວາມສັຣເສີນພຣະອົງດັ່ງກ້ອງຂຶ້ນສູ່ຟ້າສວັນ
2 ຊຶ່ງເປັນເພງສັຣເສີນຈາກເດັກຫນຸ່ມນ້ອຍ ແລະເດັກອ່ອນ ພຣະອົງໄດ້ສ້າງກຳແພງ ເພື່ອຕໍ່ສູ້ກັ້ນກາງສັດຕຣູ
ແລະຄູ່ແຂ່ງຂັນຂອງພຣະອົງ
3 ເມື່ອຂ້າພຣະອົງຫລຽວເບິ່ງທ້ອງຟ້າທີ່ພຣະອົງຊົງສ້າງ ແລະຫລຽວເບິ່ງເດືອນດາວທີ່ພຣະອົງຕັ້ງໄວ້
4 ມະນຸດສຳຄັນຫຍັງພໍທີ່ພຣະອົງຈະຄິດເຖິງເຂົາ ແລະດູແລຮັກສາເຂົາ ເປັນການປະຫລາດໃຈແທ້

5 ແຕ່ພຣະອົງຍັງຊົງແຕ່ງຕັ້ງໃຫ້ເຂົາມີຖານະຮອງຈາກພຣະອົງລົງມາ ພຣະອົງຊົງໃຫ້ມະນຸດມີສັກສີ ແລະໄດ້ຮັບກຽດຕິຍົດ
6 ພຣະອົງແຕ່ງຕັ້ງໃຫ້ມະນຸດຄຸ້ມຄອງເຫນືອທຸກສິ່ງທີ່ພຣະອົງຊົງສ້າງໄວ້
7 ເຫນືອຝູງແກະ ຝູງງົວ ຄວາຍ ແລະສັດປ່າ
8 ທັງນົກຫນູໃນອາກາດ ຕລອດທັງທຸກໆສິ່ງທີ່ສ້າງຂຶ້ນໃນທ້ອງທະເລ
9 ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ຄວາມຍິ່ງໃຫຍ່ຂອງພຣະອົງຊົງປາກົດກະຈາຍທົ່ວແຜ່ນດິນໂລກ

## 9 ເພງສັຣເສີນ ບົດທີເກົ້າ

### ການໂມທະນາໃນເຣື່ອງຄາມຍຸດຕິທັມຂອງພຣະເຈົ້າ

God's Power and Justice

ເຖິງຫົວຫນ້ານັກຮ້ອງ ຕາມທຳນອງມຸທລັບເບນ ເພງສັຣເສີນ ຂອງດາວິດ

To the leader: according to Muthlabben.

A Psalm of David

1 ຂ້າພຣະອົງຈະຂອບພຣະຄຸນພຣະຜູ້ເປັນເຈົ້າດ້ວຍສິ້ນສຸດໃຈຂອງຂ້າພຣະອົງ ຂ້າພຣະອົງຈະບອກເຖິງການອັສຈັນທັງສິ້ນຂອງພຣະອົງ
2 ຂ້າພຣະອົງຈະຊົມຊື່ນ ແລະຍິນດີໃນພຣະອົງ ຂ້າແດ່ອົງຜູ້ສູງສຸດ ຂ້າພຣະອົງຈະຮ້ອງເພງສັຣເສີນພຣະນາມຂອງພຣະອົງ
3 ເມື່ອສັດຕຣູຂອງຂ້າພຣະອົງກັບຄືນ ເຂົາທັງຫລາຍກໍສະດຸດ ແລະພິນາດໄປຕໍ່ເບື້ອງພຣະພັກຂອງພຣະອົງ
4 ເພາະພຣະອົງຊົງໃຫ້ຄວາມຍຸດຕິທັມ ແລະຄວາມທ່ຽງຕົງແກ່ຂ້າພຣະອົງ ພຣະອົງປະທັບເທິງພຣະທີ່ນັ່ງ ແລະປະທານການພິພາກສາອັນຊອບທັມ
5 ພຣະອົງໄດ້ຊົງຂນາບບັນດາປະຊາຊາດ ແລະຊົງທຳລາຍຄົນອະທັມ ແລ້ວຊົງລຶບຊື່ຂອງເຂົາອອກເສັຽເປັນນິດ
6 ສັດຕຣູໄດ້ສາບສູນໄປໃນຄວາມພິນາດເປັນນິດ ພຣະອົງຊົງຖອນຮາກບັນດາຫົວເມືອງຂອງເຂົາແລະອະນຸສອນຂອງເຂົາກໍວອດວາຍ
7 ແຕ່ພຣະເຈົ້າຍັງຄອບຄອງ ຍັງຊົງຄອບຄອງຢູ່ເປັນນິດ ພຣະອົງຊົງສະຖາປະນາບັນລັງຂອງພຣະອົງເພື່ອການພິພາກສາ
8 ພຣະອົງຊົງພິພາກສາໂລກດ້ວຍຄວາມຊອບທັມ ພຣະອົງຊົງພິພາກສາບັນດາປະຊາຊາດດ້ວຍຄວາມທ່ຽງທັມ
9 ພຣະຜູ້ເປັນເຈົ້າຊົງເປັນທີ່ກຳບັງເຂັ້ມແຂງຂອງຄົນທີ່ຖືກກົດຂີ່ ຊົງເປັນທີ່ກຳບັງເຂັ້ມແຂງໃນເວລາຍາກລຳບາກ
10 ບັນດາຜູ້ທີ່ຮູ້ຈັກພຣະນາມຂອງພຣະອົງກໍວາງໃຈໃນພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ເພາະວ່າພຣະອົງບໍ່ໄດ້ຊົງປະຖິ້ມບັນດາຜູ້ທີ່ຊອກສແວງຫາພຣະອົງ
11 ຈົ່ງຮ້ອງເພງສັຣເສີນພຣະເຈົ້າ ຜູ້ຊຶ່ງປະທັບໃນຊີໂອນ ຈົ່ງບອກເລົ່າເຖິງພຣະຣາຊກິຈຂອງພຣະອົງໃນຖ້າມກາງຊົນຊາດທັງຫລາຍ
12 ເພາະພຣະອົງຊົງແກ້ແຄ້ນແທນໂລຫິດ ແລະຊົງເອົາພຣະທັຍໃສ່ໃນເຂົາທັງຫລາຍ ພຣະອົງບໍ່ໄດ້ຊົງລືມຄຳຮ້ອງທຸກຂອງຜູ້ຖືກກົດຂີ່
13 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງພຣະກະຣຸນາແກ່ຂ້າພຣະອົງ ຂໍຊົງທອດພຣະເນດເບິ່ງວ່າ ຂ້າພຣະອົງຕ້ອງທົນທຸກທໍຣະມານເພາະຄົນທີ່ກຽດຊັງຂ້າພຣະອົງພຽງໃດ ຂ້າແດ່ພຣະອົງ ຜູ້ຊົງຍົກຂ້າພຣະອົງຂຶ້ນຈາກປະຕູຂອງຄວາມຕາຍ

14 ເພື່ອຂ້າພຣະອົງຈະກ່າວຄຳສັຣເສີນພຣະອົງແລະຈະຍິນດີໃນການຊ່ອຍກູ້ຂອງພຣະອົງ ທີ່ໃນປະຕູທັງຫລາຍ ແຫ່ງຊາວຊີໂອນ
15 ບັນດາປະຊາຊາດໄດ້ຈົມລົງໃນຫລຸມຊຶ່ງເຂົາຂຸດໄວ້ ແລະຕີນຂອງເຂົາຕິດຕາຂ່າຍຊຶ່ງເຂົາເອງເຊື່ອງດັກໄວ້
16 ພຣະຜູ້ເປັນເຈົ້າຊົງເຜີຍພຣະອົງໃຫ້ປາກົດແຈ້ງ ແລ້ວພຣະອົງຊົງພິພາກສາ ຊົງດັກຈັບຄົນອະທັມດ້ວຍກິຈການ ຂອງເຂົາເອງ
17 ຄົນອະທັມຈະຕ້ອງຖອຍໄປສູ່ແດນມໍຣະນາ ຄືປະຊາຊາດທັງມວນທີ່ລືມພຣະຜູ້ເປັນເຈົ້າ
18 ເພາະພຣະອົງຈະບໍ່ຊົງລືມຄົນຂັດສົນສເມີໄປ ແລະຄວາມຫວັງຂອງຄົນຍາກຈົນຈະບໍ່ພິນາດໄປເປັນນິດ
19 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລຸກຂຶ້ນ ຢ່າໃຫ້ມະນຸດມີຊັຍໄດ້ ແຕ່ໃຫ້ບັນດາປະຊາຊາດຖືກພິພາກສາຕໍ່ເບື້ອງພ ຣະພັກຂອງ    ພຣະອົງທັງສິ້ນ
20 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໃຫ້ເຂົາຢຳເກງ ແລະໃຫ້ບັນດາປະຊາຊາດຮູ້ວ່າ ເຂົາທັງຫລາຍເປັນພຽງມະນຸດ ເທົ່ານັ້ນ

## 10 ເພງສັຣເສີນ ບົດທີສິບ

### ການອ້ອນວອນເພື່ອຂໍຊົງຂວ້ຳຄົນອະທັມ

Prayer for Deliverance from Enemies

1 ຂ້າແດ່ພຣະຜູ້ເປັນເຈົ້າ ເຫດໃດພຣະອົງປະທັບຢືນຢູ່ຫ່າງໄກ ແລະຊົງລີ້ຊ່ອນພຣະອົງເສັຽໃນຍາມຍາກລຳບາກ
2 ຄົນອະທັມໄລ່ກວດຄົນຍາກຈົນຢ່າງທະນົງອົງອາດ ຂໍໃຫ້ເຂົາຕິດກັບ ຄືບ້ວງແຮ້ວແຫ່ງອຸບາຍທີ່ເຂົາຄິດຂຶ້ນນັ້ນ
3 ເພາະຄົນອະທັມອວດເຖິງສິ່ງທີ່ໃຈເຂົາຢາກໄດ້ນັ້ນ ແລະຄົນທີ່ໂລບມາກໃນກຳໄລ ກໍປ້ອຍດ່າ ແລະປະນາມພ ຣະເຈົ້າ
4 ເພາະຄວາມທະນົງຕົວ ຄົນອະທັມກ່າວວ່າ, “ພຣະເຈົ້າບໍ່ຊົງລົງໂທດ” ຄວາມຄິດທັງສິ້ນຂອງເຂົາຄື“ບໍ່ມີພຣະ ເຈົ້າ”
5 ວິທີການຂອງຄົນອະທັມຈະເຣີນຢູ່ທຸກເວລາ ການພິພາກສາຂອງພຣະອົງຢູ່ສູງພົ້ນສາຍຕາຂອງເຂົາ ເຂົາພົ່ນ ຄວາມຮ້າຍໃສ່ບັນດາຄູ່ແຂ່ງຂັນຂອງເຂົາ
6 ໂດຍຄິດໃນໃຈຂອງເຂົາວ່າ, “ຂ້າຈະບໍ່ຫວັ່ນໄຫວຕລອດທຸກຊົ່ວຊາດເຊື້ອຂອງຂ້າ ຈະບໍ່ພົບຄວາມຍາກລຳບາກ ເລີຍ”
7 ການສາບແຊ່ງ ການຫລອກລວງ ແລະການບີບບັງຄັບຢູ່ເຕັມປາກຂອງເຂົາ ຄວາມຊົ່ວຮ້າຍ ແລະຄວາມບາບ ຜິດຢູ່ທີ່ລີ້ນຂອງເຂົາ
8 ເຂົານັ່ງຊຸ່ມຄອຍດັກທຳຮ້າຍຢູ່ຕາມຊົນນະບົດ ແລະຂ້າຄົນທີ່ບໍ່ມີຄວາມຜິດເສັຽໃນທີ່ລັບລີ້ ຕາຂອງເຂົາສອດ ຫາຄົນໄຮ້ທີ່ເພິ່ງ
9 ເຂົາຊຸ່ມຢູ່ໃນທີ່ລັບເຫມືອນສິງຢູ່ໃນທີ່ກຳບັງ ເພື່ອຈັບຄົນຍາກຈົນແລ້ວພວກເຂົາດຶງລາກຄົນຍາກຈົນມາດ້ວຍ ຕານ່າງຂອງເຂົາ
10 ຄົນບໍ່ມີທີ່ເພິ່ງກໍຖືກກົດໃຫ້ຈົມລົງ ແລະລົ້ມລົງດ້ວຍກຳລັງຂອງຄົນອະທັມນັ້ນ
11 ຄົນອະທັມນັ້ນຄິດໃນໃຈວ່າ, “ພຣະເຈົ້າລືມແລ້ວ ພຣະອົງຊົງເຊື່ອງພຣະພັກແລະຈະບໍ່ຊົງເຫັນເລີຍ”
12 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລຸກຂຶ້ນ ຂ້າແດ່ພຣະຜູ້ເປັນເຈົ້າຂໍຊົງຊູພຣະຫັດຂອງພຣະອົງຂຶ້ນ ຂໍຢ່າຊົງລືມຄົນທີ່ ທຸກໃຈ
13 ເຫດສັນໃດຄົນອະທັມຈຶ່ງປະນາມພຣະເຈົ້າ ແລະກ່າວໃນໃຈຂອງຕົນເອງວ່າ, “ພຣະອົງຈະບໍ່ຊົງເອົາເຣື່ອງເອົາ ລາວ”

14 ພຣະອົງຊົງເຫັນ ໂອ ພຣະອົງຊົງພິເຄາະຄວາມຍາກລຳບາກແລະຄວາມເດືອດຮ້ອນແລ້ວ ເພື່ອພຣະອົງຈະໄດ້
ຊົງດຳເນີນຄະດີ ຄົນບໍ່ມີທີ່ເພິ່ງມອບຕົວໃຫ້ກັບພຣະອົງ ພຣະອົງຊົງເປັນຜູ້ຊ່ອຍຄົນກຳພ້າພໍ່
15 ຂໍພຣະອົງຊົງຫັກແຂນຂອງຄົນອະທັມ ແລະຄົນກະທຳຊົ່ວ ຂໍຊົງຄົ້ນຄວາມອະທັມຂອງເຂົາອອກມາຈົນຫມົດ
ສິ້ນ
16 ພຣະຜູ້ເປັນເຈົ້າຊົງເປັນພຣະມະຫາກະສັດຢູ່ເປັນນິດນິຣັນ ບັນດາປະຊາຊາດຈະພິນາດໄປຈາກແຜ່ນດິນຂອງ
ພຣະອົງ
17 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຟັງຄວາມປາຖນາຂອງຄົນອ່ອນສຸພາບ ຈະຊົງເສີມກຳລັງເຂົາ ແລະພຣະອົງ
ຈະຊົງງ່ຽງພຣະກັນຟັງຖ້ອຍຄຳຂອງເຂົາ
18 ເພື່ອປະທານຄວາມຍຸດຕິທັມແກ່ຄົນກຳພ້າພໍ່ ແລະຄົນຖືກບີບບັງຄັບ ເພື່ອມະນຸດເທິງແຜ່ນດິນໂລກຈະບໍ່ທຳ
ໃຫ້ເຂົາຢ້ານກົວອີກຕໍ່ໄປ

## 11 ເພງສັຣເສີນ ບົດທີສິບເອັດ

### ບ່ອນລີ້ພັຍຂອງຜູ້ທ່ຽງທັມ

Song of Trust in God To the leader Of David

ເຖິງຫົວຫນ້ານັກຮ້ອງ ຂອງດາວິດ

To the leader: Of David

1 ຂ້າພະເຈົ້າລີ້ພັຍຢູ່ໃນພຣະເຈົ້າ ທ່ານຈະເວົ້າກັບຂ້າພະເຈົ້າເຊັ່ນນີ້ຫລືວ່າ, “ຈົ່ງຫນີໄປທີ່ພູເຫມືອນນົກ
2 ເພາະຄົນອະທັມກົ່ງທະນູ ແລະເອົາລູກທະນູພາດສາຍໄວ້ແລ້ວ ເພື່ອຈະຍິງເຂົ້າໄປໃນຄວາມມືດໃຫ້ຖືກຄົນໃຈ
ທ່ຽງທັມ
3 ຖ້າຮາກຖານຖືກທຳລາຍເສັຽແລ້ວ ຄົນຊອບທັມຈະເຮັດຢ່າງໃດ”
4 ພຣະຜູ້ເປັນເຈົ້າຊົງສະຖິດໃນພຣະວິຫານອັນບໍຣິສຸດຂອງພຣະອົງ ພຣະທີ່ນັ່ງຂອງພຣະຜູ້ເປັນເຈົ້າຢູ່ເທິງຟ້າ
ສວັນ ພຣະເນດຂອງພຣະອົງເບິ່ງ ແລະທົດສອບລູກຫລານຂອງມະນຸດ
5 ພຣະເຈົ້າຊົງທົດສອບທັງຄົນຊອບທັມແລະຄົນອະທັມ ແລະວິນຍານຂອງພຣະອົງຊົງກຽດຊັງຜູ້ທີ່ຮັກຄວາມທາ
ຣຸນໂຫດຮ້າຍ
6 ພຣະອົງຊົງເທຖ່ານໄຟແລະໄຟກຳມະຖັນໃສ່ຄົນອະທັມ ລົມທີ່ແຜດເຜົາຈະເປັນສ່ວນຂອງເຂົາເຫລົ່ານັ້ນ
7 ເພາະພຣະຜູ້ເປັນເຈົ້າຊົງຊອບທັມ ຈຶ່ງຊົງຮັກກິຈການທີ່ຊອບທັມ ຄົນທ່ຽງຕົງຈະເຫັນພຣະພັກຂອງພຣະເຈົ້າໄດ້

## 12 ເພງສັຣເສີນ ບົດທີສິບສອງ

### ການອ້ອນວອນຂໍຄວາມຊ່ອຍເຫລືອເພື່ອຕໍ່ສູ້ຄົນອະທັມ

Plea for Help in Evil Times

ເຖິງຫົວຫນ້ານັກຮ້ອງ ຕາມທຳນອງເຊມິນິທ ເພງສັຣເສີນຂອງດາວິດ

To the leader: according to the Sheminith.

A Psalm of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໂຜດຊ່ອຍ ເພາະຄົນດີບໍ່ມີເຫລືອອີກແລ້ວ ແລະຄົນສຸຈຣິດໄດ້ສາບສູນໄປຈາກ
ເຫລົ່າລູກຂອງມະນຸດ
2 ທຸກຄົນກ່າວຄຳຕົວະຕໍ່ເພື່ອນບ້ານຂອງຕົນ ເຂົາທັງຫລາຍເວົ້າດ້ວຍຣິມຝີປາກທີ່ປົ້ຍໍແລະສອງໃຈ
3 ຂໍພຣະຜູ້ເປັນເຈົ້າຊົງຕັດຣິມຝີປາກທີ່ປົ້ຍໍອອກເສັຽ ແລະລີ້ນທີ່ອວດອ້າງການໃຫຍ່ນັ້ນດ້ວຍ
4 ຄືບັນດາຜູ້ທີ່ກ່າວວ່າ, “ເຮົາຈະຊະນະດ້ວຍລີ້ນຂອງເຮົາ ຣິມຝີປາກຂອງເຮົາເປັນຝ່າຍເຮົາໃຜຈະເປັນນາຍເຮົາ”

5 ພຣະຜູ້ເປັນເຈົ້າກ່າວວ່າ, “ເຮົາຈະລຸກຂຶ້ນດຽວນີ້ ເພາະຄົນຍາກຈົນຖືກຂົ່ມເຫັງ ແລະຄົນຂັດສົນຄໍ່າຄວນ ເຮົາ
ຈະຈັດເຂົາໄວ້ໃນທີ່ປອດພັຍຊຶ່ງເຂົາຢາກໄປຢູ່“
6 ພຣະດຳຣັດຂອງພຣະເຈົ້າ ເປັນດຳຣັດທີ່ບໍຣິສຸດ ເປັນເຫມືອນເງິນຫລອມໃຫ້ບໍຣິສຸດໃນເຕົາໄຟເທິງແຜ່ນດິນ
ແລ້ວເຖິງເຈັດເທື່ອ
7 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງປ້ອງກັນຂ້າະພຣະອົງທັງຫລາຍ ຂໍຊົງກັນຂ້າພຣະອົງສເມີໃຫ້ພົ້ນຈາກ
ພວກນີ້
8 ຄົນອະທັມກໍຢູ່ທຸກຫົນແຫ່ງ ຂນະເມື່ອລູກທັງຫລາຍຂອງມະນຸດພາກັນຍົກຍ້ອງຄວາມຊົ່ວຊ້າ

## 13 ເພງສັຣເສີນ ບົດທີສິບສາມ

### ການອ້ອນວອນຂໍຄວາມຊ່ອຍເຫລືອໃນຍາມຍາກລຳບາກ

Prayer for Deliverance from Enemies

ເຖິງຫົວຫນ້ານັກຮ້ອງ ເພງສັຣເສີນ ຂອງດາວິດ

To the leader. A Psalm of David

1 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຈະລືມຂ້າພຣະອົງໄປດົນປານໃດ ຈົນຕລອດໄປບໍ່ ພຣະອົງຈະລີ້ຂ້າພຣະ
ອົງນານເທົ່າໃດ?
2 ຂ້າພຣະອົງຈະຕ້ອງທໍຣະມານດົນປານໃດ ຂ້າພຣະອົງຈະໂສກເສົ້າເສັຽໃຈທັງວັນແລະຄືນນານເທົ່າໃດ ສັດຕຣູ
ຈະຊະນະຂ້າພຣະອົງໄປນານປານໃດ
3 ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ຂໍຊົງຫລຽວເບິ່ງຂ້າພຣະອົງ ແລະຕອບຂ້າພຣະອົງດ້ວຍ ຂໍຊົງເພີ້ມ
ຄວາມສວ່າງແກ່ຕາຂ້າພຣະອົງ ຢ້ານວ່າຂ້າພຣະອົງຈະຫລັບຢູ່ໃນຄວາມຕາຍ
4 ແລ້ວສັດຕຣູຂອງຂ້າພຣະອົງຈະບໍ່ສາມາດເວົ້າໄດ້ວ່າ, “ເຮົາໄດ້ຊະນະເຂົາແລ້ວ” ເຂົາຈະບໍ່ໄດ້ຍິນໃນການຫລົ້ມ
ຈົ່ມຂອງຂ້າພຣະອົງ
5 ແຕ່ຂ້າພຣະອົງໄວ້ໃຈໃນຄວາມຮັກຫມັ້ນຄົງຂອງພຣະອົງ ຂ້າພຣະອົງດີໃຈເພາະພຣະອົງຈະຊ່ອຍຂ້າພຣະ
ອົງໃຫ້ພົ້ນພັຍ
6 ຂ້າພະເຈົ້າຈະຮ້ອງເພງສັຣເສີນພຣະຜູ້ເປັນເຈົ້າ ເພາະພຣະອົງຊົງດີຕໍ່ຂ້າພະເຈົ້າ

## 14 ເພງສັຣເສີນ ບົດທີສິບສີ່

### ຄວາມຊົ່ວຊ້າຂອງມະນຸດ

Denunciation of Godlessness

ພສສ 53:1-6)

ເຖິງຫົວຫນ້ານັກຮ້ອງ ຂອງດາວິດ

To the leader: Of David

1 ຄົນໂງ່ຄິດໃນໃຈໂຕເອງວ່າ, “ພຣະເຈົ້າບໍ່ສຳຄັນ” ເຂົາທຸກໆຄົນເປັນຄົນອະທັມ ເຂົາໄດ້ເຮັດໃນສິ່ງທີ່ຫນ້າຢ້ານ
ຕົກໃຈໂດຍບໍ່ມີໃຜປະພຶດຕົນໃນທາງທີ່ຖືກຕ້ອງ
2 ພຣະຜູ້ເປັນເຈົ້າຊົງທອດພຣະເນດເບິ່ງມວນມະນຸດຈາກສວັນເພື່ອຢາກຮູ້ວ່າມີໃຜແດ່ທີ່ເປັນຄົນສລາດຂາບ
ໄຫວ້ພຣະອົງ
3 ແຕ່ວ່າເຂົາທຸກຄົນເຮັດໃນທາງຜິດແລະເປັນຄົນຊົ່ວ ໃນເຂົາບໍ່ມີຜູ້ໃດເຮັດໃນສິ່ງຖືກຕ້ອງ ແມ່ນແຕ່ຜູ້ດຽວກໍບໍ່ມີ
4 ພຣະຜູ້ເປັນເຈົ້າຊົງຖາມວ່າ, “ເຂົາບໍ່ມີປັນຍາບໍ່? ແມ່ນຄົນໂງ່ບໍ່ທີ່ເຮັດຊົ່ວແນວນີ້? ເຂົາມີຊີວິດຢູ່ໄດ້ດ້ວຍການ
ປຸ້ນຈີ້ໄພ່ພົນຂອງເຮົາ ແລະບໍ່ໄດ້ອ້ອນວອນຫາເຮົາເລີຍ”

5 ແຕ່ວ່າເຂົາຈະເປັນຄົນຂີ້ຢ້ານ ເພາະພຣະເຈົ້າຊົງສະຖິດຢູ່ກັບຜູ້ຊອບທັມ
6 ເຂົາຫມາຍຈະລົ້ມແຜນການຂອງຄົນອະນາຖາ ເພາະວ່າພວກນີ້ເພິ່ງອາສັຍພຣະຜູ້ເປັນເຈົ້າ
7 ຂໍໃຫ້ພວກອິສຣາເອນໄດ້ຮັບຄວາມພົ້ນມາຈາກເມືອງຊີໂອນ ເມື່ອໃດພຣະຜູ້ເປັນເຈົ້າຊົງໃຫ້ໄພ່ພົນຂອງພຣະ
ອົງຈະເຣີນຂຶ້ນອີກ ເມື່ອນັ້ນເຊື້ອສາຍຂອງຢາໂຄບຈະມີຄວາມສຸກ ແລະພວກອິສຣາເອນຈະຍິນດີ

## 15 ເພງສັຣເສີນ ບົດທີສິບຫ້າ

### ສິ່ງທີ່ພຣະເຈົ້າຊົງຕ້ອງການ

Who shall Abide in God’s Sanctuary?

ເພງສັຣເສີນ ຂອງດາວິດ

A Psalm of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ໃຜອາດຈະຢູ່ໃນວິຫານຂອງພຣະອົງໄດ້ ຜູ້ໃດຈະຢູ່ໃນຊີໂອນພູສັກສິດຂອງພຣະອົງໄດ້
2 ຄົນທີ່ເຊື່ອຟັງຄວາມຂອງພຣະເຈົ້າ ເຮັດໃນສິ່ງທີ່ຖືກຕ້ອງສເມີໄປ ຄືມີຄວາມເວົ້າອັນສັດຊື່ ແລະແນ່ແທ້
3 ແລະຜູ້ທີ່ບໍ່ປະຫມາດຄົນອື່ນ ເຂົາບໍ່ເຮັດຜິດຕໍ່ຫມູ່ຄູ່ ແລະບໍ່ກ່າວຂວັນນິນທາເພື່ອນບ້ານ
4 ເຂົາກຽດຊັງຄົນຊົ່ວທີ່ພຣະເຈົ້າປະຖິ້ມ ແຕ່ເຂົາໃຫ້ກຽດຜູ້ເຊື່ອຟັງພຣະອົງ ເຂົາເຮັດຕາມຄຳສັນຍາຂອງຕົນເອງ
ສເມີ ເຖິງແມ່ນເຂົາຈະເສັຽຜົນປໂຍດຫລາຍປານໃດກໍຕາມ ເຂົາກໍບໍ່ຍອມປີ້ນຄວາມ
5 ເຂົາໃຫ້ຄົນຢືມເງິນໂດຍບໍ່ຄິດດອກເບັ້ຽ ແລະບໍ່ຮັບເອົາສິນບົນເພື່ອຕໍ່ສູ້ຄົນທີ່ບໍ່ມີຄວາມຜິດ ຜູ້ກະທຳສິ່ງເຫລົ່ານີ້
ຈະບໍ່ຫລົງເສັຽໄປຈັກເທື່ອ

## 16 ເພງສັຣເສີນ ບົດທີສິບຫົກ

### ການອ້ອນວອນຂອງຜູ້ທີ່ມີຄວາມຫມັ້ນໃຈ

Song of Trust and Security in God

ມິກຕາມບົດນຶ່ງ ຂອງດາວິດ

A Miktam of David

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍໂຜດຄຸ້ມຄອງຂ້າພຣະອົງ ເພາະວ່າຂ້າພຣະອົງມາເພິ່ງພຣະອົງເພື່ອຄວາມປອດພັຍ
2 ຂ້າພຣະອົງທູນຕໍ່ພຣະອົງວ່າ, “ພຣະອົງແມ່ນພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ທຸກສິ່ງທີ່ດີແມ່ນຂອງພຣະອົງຊົງ
ປະທານໃຫ້”
3 ຜູ້ທີ່ເຊື່ອພຣະຜູ້ເປັນເຈົ້າເປັນຄົນປະເສີດທີ່ສຸດ ຂ້າພຣະອົງມີຄວາມດີໃຈຢ່າງໃຫຍ່ຕໍ່ເຂົາ
4 ແຕ່ຜູ້ທີ່ຕິດຕາມພຣະອື່ນ ກໍຮັບເອົາຄວາມທຸກລຳບາກເຂົ້າໃສ່ຕົວເອງ ຂ້າພຣະອົງຈະບໍ່ຮ່ວມໃນການບູຊາຂອງ
ເຂົາ ຂ້າພຣະອົງຈະບໍ່ນະມັສການພຣະທັງຫລາຍຂອງເຂົາ
5 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເປັນທຸກສິ່ງທີ່ຂ້າພຣະອົງມີ ແລະພຣະອົງຊົງປະທານທຸກສິ່ງທີ່ຂ້າພຣະອົງ
ຕ້ອງການ ຊີວິດຂ້າພຣະອົງຢູ່ໃນເງື້ອມພຣະຫັດຂອງພຣະອົງ
6 ຂອງປະທານທີ່ພຣະອົງຊົງໂຜດແກ່ຂ້າພຣະອົງກໍອັສຈັນຫລາຍ ຂອງປະທານນັ້ນເປັນສິ່ງທີ່ດີທີ່ສຸດ
7 ຂ້າພຣະອົງສັຣເສີນພຣະຜູ້ເປັນເຈົ້າ ເພາະພຣະອົງຊົງນຳຫນ້າຂ້າພຣະອົງ ໃນກາງຄືນຈິດສຳນຶກກໍເຕືອນສະຕິ
ຂ້າພຣະອົງ
8 ຂ້າພຣະອົງຮູ້ສຶກໃນໃຈສເມີວ່າ ພຣະຜູ້ເປັນເຈົ້າຊົງສະຖິດຢູ່ນຳ ແລະບໍ່ມີສິ່ງໃດເຮັດໃຫ້ຂ້າພຣະອົງຕົກສະທ້ານ
ຢ້ານກົວ ເພາະພຣະອົງຊົງສະຖິດຢູ່ໃກ້ຂ້າພຣະອົງ

9 ດັ່ງນັ້ນ ຂ້າພຣະອົງຈຶ່ງເຕັມໄປດ້ວຍຄວາມສຸກ ແລະຄວາມມ່ວນຊື່ນ ພ້ອມທັງມີຄວາມຮູ້ສຶກສະບາຍໃຈຢູ່ເລື້ອຍໆ

10 ເພາະພຣະອົງຈະບໍ່ຊົງນຳຂ້າພຣະອົງເຂົ້າໄປສູ່ພິພົບຄົນຕາຍ ພຣະອົງຈະບໍ່ປະປ່ອຍໃຫ້ຜູ້ທີ່ພຣະອົງຮັກເຂົ້າໄປໃນບ່ອນເລິກລັບນັ້ນ

11 ພຣະອົງຊົງຊີ້ໃຫ້ຂ້າພຣະອົງເຫັນຫົນທາງຊຶ່ງນຳໄປສູ່ຊີວິດ ພຣະພັກຂອງພຣະອົງທຳໃຫ້ຂ້າພຣະອົງເຕັມໄປດ້ວຍຄວາມ  ມ່ວນຊື່ນ ແລະຄວາມຊິດຊ່ອຍຂອງພຣະອົງກໍນຳຄວາມຍິນດີມາໃຫ້ຕລອດໄປ

## 17 ເພງສັຣເສີນ ບົດທີສິບເຈັດ

### ຄຳອ້ອນວອນເພື່ອໃຫ້ພົ້ນຈາກການຖືກກົດຂີ່

Prayer for Deliverance from Persecutors

ຄຳອ້ອນວອນ ຂອງດາວິດ

A Prayer of David

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງສະດັບຄວາມຝ່າຍຍຸດຕິທັມ ຊົງຟັງຄຳຮ້ອງທູນຂອງຂ້າພຣະອົງ ຂໍຊົງງ່ຽງພຣະກັນຟັງຄຳອ້ອນວອນຈາກຮີມຝີປາກທີ່ບໍ່ມີການຫລອກລວງຂອງຂ້າພຣະອົງ

2 ຂໍໃຫ້ການຊະນະຄວາມຂອງຂ້າພຣະອົງມາຈາກພຣະອົງ ຂໍພຣະເນດຂອງພຣະອົງຊົງເຫັນສິ່ງທ່ຽງທັມ

3 ເມື່ອພຣະອົງຊົງລອງຈິດໃຈຂອງຂ້າພຣະອົງ ແລະສະເດັດຢ້ຽມຢາມຂ້າພຣະອົງໃນເວລາກາງຄືນ ເມື່ອຊົງທົດສອບຂ້າ    ພຣະອົງ ພຣະອົງຈະບໍ່ຊົງພົບຄວາມອະທັມໃນຂ້າພຣະອົງເລີຍ ປາກຂອງຂ້າພຣະອົງກໍບໍ່ໄດ້ລະເມີດ

4 ກ່ຽວດ້ວຍກິຈການຂອງມະນຸດ ໂດຍພຣະວັຈນະຈາກພຣະໂອດຂອງພຣະອົງ ຂ້າພຣະອົງບໍ່ໄດ້ກ່ຽວຂ້ອງກັບທາງແຫ່ງຄວາມທາຣຸນໂຫດຮ້າຍ

5 ບາດກ້າວຂອງຂ້າພຣະອົງແນບສນິດກັບວິຖີຂອງພຣະອົງ ຕີນຂອງຂ້າພຣະອົງບໍ່ໄດ້ພາດ

6 ຂ້າພຣະອົງຮ້ອງທູນວ່າ, "ຂ້າແດ່ພຣະເຈົ້າ ເພາະພຣະອົງຈະຊົງຕອບຂ້າພຣະອົງ ຂໍຊົງງ່ຽງພຣະກັນຟັງຖ້ອຍຄຳຂອງຂ້າ  ພຣະອົງດ້ວຍເຖີດ

7 ຂ້າແດ່ພຣະຜູ້ຊ່ອຍຂອງບັນດາຜູ້ສແວງຫາທີ່ລີ້ພັຍຈາກປໍຣະປັກຂອງເຂົາ ໃນພຣະຫັດຂວາຂອງພຣະອົງ ຂໍຊົງສຳແດງຄວາມຮັກຫມັ້ນຄົງຂອງພຣະອົງຢ່າງມະຫັສຈັນ

8 ຂໍຊົງຮັກສາຂ້າພຣະອົງດັ່ງແກ້ວຕາ ຊົງເຊື່ອງຂ້າພຣະອົງໄວ້ພາຍໃຕ້ຮົ່ມປີກຂອງພຣະອົງ

9 ໃຫ້ພົ້ນຈາກຄົນອະທັມຜູ້ລ້າງຜານ ແລະຈາກສັດຕຣູຜູ້ຄອຍເຂັ່ນຂ້າຊຶ່ງອ້ອມຮອບຂ້າພຣະອົງໄວ້

10 ເຂົາປິດໃຈຂອງເຂົາໄວ້ຈາກຄວາມສົງສານ ປາກຂອງເຂົາເວົ້າຄຳຍິ່ງຍະໂສ

11 ເຂົາສະກົດຮອຍຂ້າພຣະອົງ ແລະໄດ້ອ້ອມຂ້າພຣະອົງໄວ້ ເຂົາຈັບຕາເບິ່ງຂ້າພຣະອົງເພື່ອຈະດຶງຂ້າພຣະອົງລົງດິນ

12 ເຂົາເປັນເຫມືອນສິ່ງທີ່ຫິວກະຫາຍຢາກຈະຈີກຖິ້ມ ເຫມືອນດັ່ງສິງຫນຸ່ມຊຶ່ງຊຸ່ມດັກທຳຮ້າຍຢູ່ໃນທີ່ລັບ

13 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລຸກຂຶ້ນຂັດຂວາງເຂົາໄວ້ ແລະຂວ້ຳເຂົາລົງເສັຽ ຂໍຊົງຊ່ອຍກູ້ຊີວິດຂອງຂ້າພຣະອົງໃຫ້ພົ້ນຈາກຄົນອະທັມດ້ວຍດາບຂອງພຣະອົງ

14 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນຈາກມະນຸດດ້ວຍພຣະຫັດຂອງພຣະອົງ ຈາກມະນຸດຜູ້ຊຶ່ງມີສ່ວນຂອງຊີວິດເປັນຂອງໂລກ ຂໍໃຫ້ທ້ອງຂອງເຂົາເຕັມໄປດ້ວຍສິ່ງທີ່ພຣະອົງຊົງສະສົມໄວ້ເພື່ອເຂົາ ໃຫ້ລູກຫລານຂອງເຂົາໄດ້ຫລາຍ

ກວ່າພໍດີໃຫ້ພວກເຂົາເຫລືອບາງສິ່ງໄວ້ໃຫ້ແກ່ລູກອ່ອນຂອງເຂົາ

15 ສ່ວນຂ້າພຣະອົງ ຂ້າພຣະອົງຈະເຫັນພຣະພັກຂອງພຣະອົງໃນຄວາມຊອບທັມ ເມື່ອຂ້າພຣະອົງຕື່ນຂຶ້ນ ຂ້າພ
ຣະອົງຈະເບີກບານໃຈດ້ວຍພຣະລັກສະນະຂອງພຣະອົງ

## 18 ເພງສັຣເສີນ ບົດທີສິບແປດ

## ດາວິດຂອບພຣະຄຸນເພາະຄວາມມີຊັຍ

Royal Thanksgiving for Victory

(2 ຊມອ 22:1-51)

ເຖິງຫົວຫນ້ານັກຮ້ອງ ເພງສັຣເສີນຂອງດາວິດ ຜູ້ຮັບໃຊ້ຂອງພຣະເຈົ້າ ຊຶ່ງຖວາຍຖ້ອຍຄຳຂອງເພງບົດນີ້ແກ່ພຣະເຈົ້າ ໃນວັນທີ່ພຣະອົງຊົງຊ່ອຍກູ້ທ່ານໃຫ້ພົ້ນຈາກເງື້ອມມືສັດຕຣູທັງຫລາຍຂອງທ່ານ ແລະຈາກເງື້ອມພຣະຫັດຂອງຊາອູນ ທ່ານກ່າວວ່າ

To the leader. A Psalm of David the servant of the Lord, who addressed the words of this song to the Lord on the day when the Lord delivered him from the hand of all his enemies, and from the hand of Saul. He said.

1 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະກຳລັງຂອງຂ້າພຣະອົງ ຂ້າພຣະອົງຮັກພຣະອົງ
2 ພຣະເຈົ້າຊົງເປັນພຣະສີລາ ເປັນປ້ອມອັນແຫນ້ນຫນາ ແລະຜູ້ປ້ອງກັນຂອງຂ້າພຣະອົງ ເປັນພຣະເຈົ້າຂອງຂ້າ
ພຣະອົງ ເປັນພຣະສີລາຊຶ່ງຂ້າພຣະອົງເຂົ້າລີ້ພັຍຢູ່ໃນພຣະອົງ ເປັນໂລ່ ເປັນພະລັງແຫ່ງຄວາມລອດຂອງຂ້າພ
ຣະອົງ ເປັນທີ່ກຳບັງເຂັ້ມແຂງຂອງຂ້າພຣະອົງ
3 ຂ້າພຣະອົງຮ້ອງທູນຕໍ່ພຣະເຈົ້າຜູ້ຊົງສົມຄວນແກ່ການສັຣເສີນ ແລະຂ້າພຣະອົງໄດ້ຮັບການຊ່ອຍໃຫ້ພົ້ນຈາກ
ສັດຕຣູຂອງຂ້າພຣະອົງ
4 ສາຍມັດຈຸຣາຊລ້ອມຂ້າພຣະອົງໄວ້ ກະແສແຫ່ງຄວາມຫາຍະນະຖ້ວມທັບຂ້າພຣະອົງ
5 ສາຍໃຍຂອງແດນຜູ້ຕາຍພັນຕົວຂ້າພຣະອົງ ບ້ວງມັດຈຸຣາຊທີ່ຈະດັບຊີວິດຂ້າພຣະອົງກໍຫ້າງໃສ່ຢູ່ສເມີ
6 ໃນຍາມທຸກເດືອດຮ້ອນໃຈ ຂ້າພະເຈົ້າຮ້ອງທູນຕໍ່ພຣະເຈົ້າ ຂ້າພະເຈົ້າຮ້ອງທູນຂໍຄວາມຊ່ອຍເຫລືອຈາກພຣະ
ເຈົ້າຂອງຂ້າພະເຈົ້າ ຈາກພຣະວິຫານຂອງພຣະອົງ ພຣະອົງຊົງສະດັບສຽງຂອງຂ້າພະເຈົ້າ ແລະສຽງຮ້ອງຂອງ
ຂ້າພະເຈົ້າໄດ້ຍິນໄປເຖິງພຣະກັນຂອງພຣະອົງ
7 ແລ້ວແຜ່ນດິນໂລກກໍສັ່ນສະເທືອນ ແລະຄອນແຄນ ຮາກຖານຂອງພູກໍຫວັ່ນໄຫວດ້ວຍ ແລະສັ່ນສະເທືອນ
ເ ພາະພຣະອົງຊົງໂກດ
8 ຄວັນໄຟພົ້ງອອກຈາກຮູດັງຂອງພຣະອົງ ແລະໄຟຜານອອກມາຈາກພຣະໂອດຂອງພຣະອົງ ຖ່ານກໍຕິດແປວ
ໄຟນັ້ນ
9 ພຣະອົງຊົງໂນ້ມຟ້າສວັນລົງດ້ວຍ ແລະສະເດັດລົງມາ ຄວາມມືດຕຶບຢູ່ໃຕ້ພຣະບາດຂອງພຣະອົງ
10 ພຣະອົງຊົງຂີ່ເຊຣຸບບິນຕິນນຶ່ງ ແລ້ວຊົງເຫາະໄປ ພຣະອົງສະເດັດໂດຍປີກຂອງລົມ
11 ພຣະອົງຊົງກະທຳໃຫ້ຄວາມມືດປົກຄຸມພຣະອົງໄວ້ ໃຫ້ເມກທີ່ມີນ້ຳອັນຕຶບຫນາອ້ອມພຣະອົງໄວ້
12 ມີໝາກເຫັບແລະຖ່ານໄຟແຕກອອກມາທະລຸເມກ ຈາກຄວາມສວ່າງສຸກໃສຂ້າງຫນ້າຂອງພຣະອົງ
13 ພຣະຜູ້ເປັນເຈົ້າທຳໃຫ້ຟ້າຮ້ອງກ້ອງກັງວານໃນຟ້າສວັນ ແລະອົງສູງສຸດກໍເປັ່ງພຣະສຸຣະສຽງ ຄືໝາກເຫັບແລະ
ຖ່ານໄຟ
14 ພຣະອົງຊົງຍິງທະນູຂອງພຣະອົງອອກໄປ ເຮັດໃຫ້ເຂົາຕ່າງກໍກະຈັດກະຈາຍໄປ ພຣະອົງຊົງປ່ອຍຟ້າແມບ
ເຫລື້ອມເຮັດໃຫ້ປົບຫນີ
15 ແລ້ວກໍເຫັນພື້ນທະເລ ຕລອດຈົນຮາກຖານຂອງພິພົບກໍປາກົດແຈ້ງ ເມື່ອພຣະອົງຊົງຂະຫນາບທະເລດ້ວຍ
ລົມທີ່ພຸ່ງຈາກຊ່ອງຮູດັງຂອງພຣະອົງ
16 ພຣະອົງຊົງເອື້ອມມາຈາກທີ່ສູງຊົງຈັບຂ້າພະເຈົ້າ ພຣະອົງຊົງດຶງຂ້າພະເຈົ້າອອກມາຈາກນ້ຳອັນແສນເລິກ

17 ພຣະອົງຊົງຊ່ອຍຂ້າພະເຈົ້າ ໃຫ້ພົ້ນຈາກສັດຕຣູທີ່ມີອໍານາດຂອງຂ້າພະເຈົ້າ ແລະຈາກບັນດາຜູ້ທີ່ກຽດຊັງຂ້າ
ພະເຈົ້າ ເພາະເຂົາມີອະນຸພາບເກີນກວ່າຂ້າພະເຈົ້າຫລາຍ
18 ເຂົາໂຈມຕີຂ້າພະເຈົ້າໃນວັນທີ່ຂ້າພະເຈົ້າເກີດມີຄວາມເດືອດຮ້ອນ ແຕ່ພຣະຜູ້ເປັນເຈົ້າຊົງເປັນທີ່ເພິ່ງຂອງຂ້າ
ພະເຈົ້າ
19 ພຣະອົງຊົງນໍາຂ້າພະເຈົ້າອອກມາຍັງທີ່ກວ້າງໃຫຍ່ ແລະຊົງຊູຂ້າພະເຈົ້າໄວ້ເພາະພຣະອົງຊົງຊົມຊື່ນຍິນດີໃນ
ຂ້າພະເຈົ້າ
20 ພຣະຜູ້ເປັນເຈົ້າປະທານຣາງວັນແກ່ຂ້າພະເຈົ້າ ຕາມຄວາມຊອບທັມຂອງຂ້າພະເຈົ້າ ພຣະອົງຊົງຕອບແທນຂ້າ
ພະເຈົ້າຕາມຄວາມສະອາດແຫ່ງມືຂອງຂ້າພະເຈົ້າ
21 ເພາະຂ້າພະເຈົ້າຮັກສາບັນດາພຣະບັນຍັດ ຂອງພຣະເຈົ້າ ແລະບໍ່ໄດ້ຫ່າງຈາກພຣະເຈົ້າຂອງຂ້າພະເຈົ້າຢ່າງ
ອະທັມ
22 ເພາະກົດຫມາຍທັງສິ້ນຂອງພຣະອົງຢູ່ຕໍ່ຫນ້າຂ້າພະເຈົ້າ ແລະຂ້າພະເຈົ້າບໍ່ໄດ້ລະເມີດກົດເກນຂອງພຣະອົງ
ໄປເລີຍ
23 ຕໍ່ພຣະພັກຂອງພຣະອົງຂ້າພະເຈົ້າບໍ່ມີຮອຍຕໍາຫນິ ແລະຂ້າພະເຈົ້າຮັກສາຕົວໄວ້ບໍ່ເຮັດບາບຕໍ່ພຣະອົງ
24 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງຕອບແທນຂ້າພະເຈົ້າຕາມຄວາມຊອບທັມຂອງຂ້າພະເຈົ້າ ຕາມຄວາມສະ
ອາດແຫ່ງມືຂອງຂ້າພະເຈົ້າໃນສາຍພຣະເນດຂອງພຣະອົງ
25 ພຣະອົງຊົງສໍາແດງຄວາມຮັກຫມັ້ນຄົງຕໍ່ຜູ້ທີ່ຈົງຮັກພັກດີ ພຣະອົງຊົງສໍາແດງພຣະອົງຢ່າງໄຮ້ຕໍາຫນິຕໍ່ຜູ້ທີ່ໄຮ້
ຕໍາຫນິ
26 ພຣະອົງຊົງສໍາແດງພຣະອົງບໍຣິສຸດຕໍ່ຜູ້ທີ່ບໍຣິສຸດ ພຣະອົງຊົງສໍາແດງພຣະອົງເປັນສັດຕຣູຕໍ່ຜູ້ທີ່ຄິດໂກງ
27 ເພາະພຣະອົງຊົງຊ່ອຍກູ້ປະຊາຊົນທີ່ຖ່ອມຕົວໃຫ້ພົ້ນພັຍ ແຕ່ຄົນຈອງຫອງນັ້ນພຣະອົງຊົງກະທໍາໃຫ້ຕໍ່າລົງ
28 ພຣະອົງຊົງຈຸດຕະກຽງຂອງຂ້າພຣະອົງ ພຣະຜູ້ເປັນເຈົ້າຂອງຂ້າພຣະອົງຊົງກະທໍາຄວາມມືດຂອງຂ້າພຣະອົງ
ໃຫ້ສວ່າງ
29 ຂ້າພຣະອົງຕະລຸຍກອງທັບໄດ້ໂດຍພຣະອົງ ແລະໂດຍພຣະເຈົ້າຂອງຂ້າພະເຈົ້ານີ້ ຂ້າພະເຈົ້າສາມາດກະໂດດ
ຂ້າມກໍາແພງໄດ້
30 ສໍາລັບພຣະຜູ້ເປັນເຈົ້າພຣະອົງນີ້ ພຣະບັນຍັດຂອງພຣະອົງບໍຣິບູນ ພຣະສັນຍາຂອງພຣະເຈົ້າພິສູດແລ້ວເປັນ
ຄວາມຈິງ ພຣະອົງຊົງເປັນໂລ່ຂອງບັນດາຜູ້ທີ່ລີ້ພັຍຢູ່ໃນພຣະອົງ
31 ເພາະຜູ້ໃດຈະເປັນພຣະເຈົ້າ ນອກຈາກພຣະຜູ້ເປັນເຈົ້າ ແລະຜູ້ໃດຫນໍຈະເປັນພຣະສີລາ ເວັ້ນແຕ່ພຣະເຈົ້າ
ຂອງເຮົາ
32 ຄືພຣະເຈົ້າຜູ້ຊົງເອົາກໍາລັງຄາດແອວຂອງຂ້າພະເຈົ້າໄວ້ ແລະຊົງກະທໍາໃຫ້ທາງຂອງຂ້າພະເຈົ້າປອດພັຍ
33 ພຣະອົງຊົງກະທໍາໃຫ້ຕີນຂອງຂ້າພະເຈົ້າເຫມືອນຢ່າງຕີນກວາງຕົວເມັຽ ແລະຊົງວາງຂ້າພະເຈົ້າໄວ້ເທິງທີ່ສູງ
34 ພຣະອົງຊົງຝຶກມືຂອງຂ້າພະເຈົ້າໃຫ້ທໍາສົງຄາມ ດັ່ງນັ້ນແຂນຂອງຂ້າພະເຈົ້າສາມາດກົ່ງທະນູທອງສັມຣິດໄດ້
35 ພຣະອົງປະທານໂລ່ແຫ່ງຄວາມລອດຂອງພຣະອົງໃຫ້ຂ້າພຣະອົງ ແລະຊຶ່ງພຣະອົງຊົງນ້ອມພຣະທັຍລົງກໍກະ
ທໍາໃຫ້ຂ້າພຣະອົງເປັນໃຫຍ່ຂຶ້ນ
36 ພຣະອົງປະທານທີ່ກວ້າງຂວາງສໍາລັບທາງຍ່າງຂອງຂ້າພຣະອົງ ເທົ້າຂອງຂ້າພຣະອົງຈຶ່ງບໍ່ພາດ
37 ຂ້າພຣະອົງໄລ່ຕາມສັດຕຣູຂອງຂ້າພຣະອົງທັນ ແລະບໍ່ທັນກັບຈົນກວ່າເຂົາຈະຖືກທໍາລາຍເສັຽສິ້ນ
38 ຂ້າພຣະອົງໄດ້ແທງເຂົາທະລຸ ເຂົາຈຶ່ງບໍ່ສາມາດລຸກຂຶ້ນໄດ້ອີກ ເຂົາລົ້ມລົງທີ່ໃຕ້ຕີນຂອງຂ້າພຣະອົງ
39 ເພາະພຣະອົງຊົງເອົາກໍາລັງຄາດແອວຂ້າພຣະອົງໄວ້ເພື່ອທໍາສົງຄາມ ພຣະອົງຊົງກະທໍາໃຫ້ຂ້າພຣະອົງຜາບ
ແພ້ເຫລົ່າສັດຕຣູ

40 ພຣະອົງຊົງກະທຳໃຫ້ສັດຕຣູຂອງຂ້າພຣະອົງແລ່ນເປີດຫນີໄປ ແລະບັນດາຜູ້ທີ່ກຽດຊັງຂ້າພຣະອົງ ຂ້າພຣະອົງ
ກໍທຳລາຍເສັຽສິ້ນ
41 ເຂົາຮ້ອງໃຫ້ຊ່ອຍ ແຕ່ບໍ່ມີໃຜຊ່ອຍໃຫ້ລອດໄດ້ ເຂົາຮ້ອງທູນພຣະເຈົ້າ ແຕ່ພຣະອົງບໍ່ໄດ້ຊົງຕອບເຂົາ
42 ຂ້າພຣະອົງຈຶ່ງທຸບເຂົາແຫລກລະອຽດເຫມືອນຂີ້ຝຸ່ນຊຶ່ງຖືກລົມພັດປິວໄປສິ້ນ ຂ້າພຣະອົງຈຶ່ງໂຍນເຂົາອອກໄປ
ເຫມືອນຂີ້ຕົມຕາມຖນົນ
43 ພຣະອົງຊົງຊ່ອຍຂ້າພຣະອົງໃຫ້ພົ້ນຈາກການແຍ່ງຊີງກັບປະຊາຊົນ ແລະຊົງຕັ້ງໃຫ້ຂ້າພຣະອົງເປັນຫົວຫນ້າ
ຂອງບັນດາປະຊາຊາດ ຊົນຊາດທີ່ຂ້າພຣະອົງບໍ່ເຄີຍຮູ້ຈັກ ກໍໄດ້ບົວລະບັດຂ້າພຣະອົງ
44 ພໍເຂົາໄດ້ຍິນເຖິງຂ້າພຣະອົງ ເຂົາກໍເຊື່ອຟັງ ຊົນຕ່າງດ້າວໄດ້ມາຫມອບກາບຕໍ່ຂ້າພຣະອົງ
45 ຊົນຕ່າງດ້າວນັ້ນເສັຽກຳລັງໃຈ ແລະຕົວສັ່ນອອກມາຈາກທີ່ກຳບັງອັນເຂັ້ມແຂງຂອງເຂົາເຫລົ່ານັ້ນ
46 ພຣະເຈົ້າຊົງພຣະຊົນຢູ່ ແລະພຣະສີລາຂອງຂ້າພຣະອົງເປັນທີ່ຄວນສັຣເສີນ ພຣະເຈົ້າແຫ່ງຄວາມລອດ
ພົ້ນຂອງຂ້າພຣະອົງເປັນທີ່ຍົກຍ້ອງ
47 ຄືພຣະເຈົ້າຜູ້ປະທານການແກ້ແຄ້ນແກ່ຂ້າພຣະອົງ ແລະຊົງປາບປາມບັນດາຊົນຊາດທັງຫລາຍໃຫ້ຢູ່ໃຕ້ອຳ
ນາດຂອງຂ້າ  ພຣະອົງ
48 ຜູ້ຊົງຊ່ອຍຂ້າພຣະອົງໃຫ້ພົ້ນຈາກສັດຕຣູ ພຣະອົງຊົງຍົກຂ້າພຣະອົງຂຶ້ນເຫນືອປໍຣະປັກຂອງຂ້າພຣະອົງ ພຣະ
ອົງຊົງຊ່ອຍກູ້ຂ້າພຣະອົງຈາກຄົນທາຣຸນໂຫດຮ້າຍ
49 ຂ້າແດ່ພຣະຜູ້ເປັນເຈົ້າ ເພາະເຫດນີ້ຂ້າພຣະອົງຈຶ່ງຂໍເທີດທູນພຣະອົງໄວ້ຖ້າມກາງປະຊາຊາດທັງຫລາຍ ແລະ
ຮ້ອງເພງສັຣເສີນພຣະນາມຂອງພຣະອົງ
50 ພຣະອົງປະທານຊັຍຊະນະອັນຍິ່ງໃຫຍ່ແກ່ກະສັດຂອງພຣະອົງ ແລະຊົງສຳແດງຄວາມຮັກຫມັ້ນຄົງແກ່ຜູ້ທີ່ພ
ຣະອົງຊົງເຈີມໄວ້ນັ້ນ ຄືດາວິດແລະເຊື້ອສາຍຂອງທ່ານຕລອດໄປເປັນນິດ

## 19 ເພງສັຣເສີນ ບົດທີສິບເກົ້າ

### ຄວາມສະງ່າຣາສີຂອງພຣະເຈົ້າໃນການນິຣະມິດສ້າງ

God’s Glory in Creation and the Law

ເຖິງຫົວຫນ້ານັກຮ້ອງ ເພງສັຣເສີນ ຂອງດາວິດ

To the leader. A Psalm of David.

1 ທ້ອງຟ້າສະແດງເຖິງຣັສມີຂອງພຣະເຈົ້າຢ່າງແຈ່ມແຈ້ງ ແລະບອກເຖິງການກະທຳຂອງພຣະອົງຢ່າງຄັກແນ່
2 ແຕ່ລະມື້ກໍຢືນຢັນເຣື່ອງນີ້ແກ່ມື້ຕໍ່ມາ ແຕ່ລະຄືນກໍກ່າວຢໍ້າເຖິງການນີ້ຈົນຮອດຄືນຂອງມື້ໃຫມ່
3 ບໍ່ມີຄຳປາສັຍຫລືຄຳເວົ້າໃດໆທີ່ເວົ້າອອກມາ ແລະສຽງໃດກໍບໍ່ໄດ້ຍິນທັງນັ້ນ
4 ແຕ່ຍັງມີສຽງຂອງພວກປະກາດໄດ້ແຜ່ອອກໄປທົ່ວໂລກ ຂ່າວຂອງເຂົາໄດ້ແຜ່ອອກໄປຈົນສຸດແຜ່ນດິນ ພຣະ
ເຈົ້າຊົງກາງຜ້າເຕັນໃນທ້ອງຟ້າໃຫ້ແກ່ດວງຕາເວັນ
5 ມັນໄດ້ສ່ອງແສງອອກມາເຫມືອນດັ່ງເຈົ້າບ່າວທີ່ກຳລັງຍ່າງກ້າວອອກມາຈາກຫ້ອງວິວາ ແລະເຫມືອນດັ່ງນັກກິ
ລາທີ່ຟ້າວຟັ່ງເອົາໄຊຊະນະໃນການແລ່ນເສັງກັນ
6 ຊຶ່ງການນີ້ໄດ້ຕັ້ງຕົ້ນໄປຈົນເຖິງສຸດຂອບຟ້າ ແລະໄດ້ຫມຸນວຽນໄປອ້ອມບ່ອນອື່ນໂດຍບໍ່ມີສິ່ງໃດສາມາດຫລົບ
ຫລີກຈາກຄວາມຮ້ອນນັ້ນໄດ້

**ພຣະທັມຂອງພຣະຜູ້ເປັນເຈົ້າ**

7 ພຣະທັມຂອງພຣະຜູ້ເປັນເຈົ້ານັ້ນຖືກຕ້ອງ ແລະເຮັດໃຫ້ມີຊີວິດໃຫມ່ ຄຳສັ່ງຂອງພຣະອົງໄວ້ວາງໃຈໄດ້ ແລະ
ຊົງປະທານຄວາມສລາດແກ່ຜູ້ທີ່ອ່ອນປັນຍາ

8 ພຣະທັມຂອງພຣະຜູ້ເປັນເຈົ້ານັ້ນຖືກຕ້ອງ ແລະຜູ້ທີ່ປະຕິບັດຕາມພຣະທັມນີ້ກໍມີຄວາມສຸກ ພຣະທັມຂອງພຣະ
ອົງຊົງເຕັມໄປດ້ວຍຄວາມສັດຈິງ ແລະເຮັດໃຫ້ມີຄວາມເຂົ້າໃຈຢ່າງແຈ່ມແຈ້ງ
9 ການຢຳເກງພຣະຜູ້ເປັນເຈົ້າເປັນການດີ ແລະດຳຣົງຄົງຢູ່ຕລອດໄປ ການຕັດສິນຂອງພຣະອົງຊົງສັດຊື່ ແລະ
ຍຸດຕິທັມເລື້ອຍໆ
10 ການຕັດສິນນີ້ປະເສີດເຫນືອກວ່າຄຳຊັ້ນດີ ແລະຍັງຫວານເຫນືອກວ່າຍອດນ້ຳເຜິ້ງ
11 ການຕັດສິນນີ້ໃຫ້ຄວາມຮູ້ແກ່ຂ້າພຣະອົງຊຶ່ງເປັນຜູ້ຮັບໃຊ້ຂອງພຣະອົງ ຂ້າພຣະອົງໄດ້ຮັບຣາງວັນຍ້ອນການ
ເຊື່ອຟັງພຣະທັມນັ້ນ
12 ບໍ່ມີຜູ້ໃດເຫັນຄວາມຜິດພາດຂອງຕົວເອງໄດ້ ຂໍໂຜດໃຫ້ຂ້າພຣະອົງຫລີກຫນີຈາກຄວາມຜິດທີ່ປິດບັງໄວ້
13 ຂໍໂຜດຊ່ອຍໃຫ້ຂ້າພຣະອົງປອດພັຍ ແລະພົ້ນຈາກຄວາມຜິດທີ່ເຮັດດ້ວຍເຈດຕະນາດ້ວຍ ຂໍຢ່າໃຫ້ສິ່ງເຫລົ່ານີ້
ຄຸ້ມຄອງຂ້າພຣະອົງ ເພື່ອຂ້າພຣະອົງຈະເປັນທີ່ຖືກຕ້ອງຢ່າງສົມບູນ ແລະໃຫ້ມີອິສຣະຈາກຄວາມບາບອັນ
ຫນັກຫນ່ວງນັ້ນ
14 ຂໍຊົງໂຜດຮັບເອົາຄວາມເວົ້າ ແລະຄວາມຄິດຂອງຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເປັນທີ່ເພິ່ງ
ຂອງຂ້າພຣະອົງ ແລະເປັນຜູ້ທີ່ໄຖ່ຂ້າພຣະອົງອອກຈາກຄວາມຜິດ

## 20 ເພງສັຣເສີນ ບົດທີຊາວ

### ຄຳອ້ອນວອນເພື່ອຊັຍຊະນະ

ເຖິງຫົວຫນ້ານັກຮ້ອງ ເພງສັຣເສີນ ຂອງດາວິດ

To the leader. A Psalm of David.

1 ຂໍພຣະເຈົ້າຊົງຕອບທ່ານໃນວັນຍາກລຳບາກ ພຣະນາມຂອງພຣະເຈົ້າແຫ່ງຢາໂຄບພິທັກຮັກສາທ່ານ
2 ຂໍພຣະອົງຊົງໃຫ້ຄວາມຊ່ອຍເຫລືອມາຈາກສະຖານນະມັສການ ແລະໃຫ້ຄວາມສນັບສນຸນທ່ານມາຈາກເມືອງ
ຊີໂອນ
3 ຂໍຊົງລະນຶກເຖິງເຄື່ອງຖວາຍທັງສິ້ນຂອງທ່ານ ແລະໂປດປານເຄື່ອງເຜົາບູຊາຂອງທ່ານ
4 ຂໍຊົງໂຜດໃຫ້ຕາມທີ່ທ່ານປາຖນາ ແລະນຳພາແຜນການທຸກຢ່າງໃຫ້ສຳເຣັດ
5 ເພື່ອພວກເຮົາຈະໄດ້ໂຮ່ຮ້ອງ ເນື່ອງເຖິງຄວາມມີໄຊຂອງທ່ານ ຍ້ອນພຣະຜູ້ເປັນເຈົ້າ ຂໍໃຫ້ພຣະເຈົ້າຊົງໂຜດໃຫ້
ຄຳທູນຂໍທັງສິ້ນຂອງທ່ານສຳເຣັດເຖີດ
6 ບັດນີ້ ຂ້າພະເຈົ້າຮູ້ວ່າພຣະເຈົ້າຈະຊົງຊ່ອຍຜູ້ທີ່ພຣະອົງຊົງເລືອກໄວ້ ພຣະອົງຈະຊົງຕອບເຂົາຈາກຟ້າສວັນອັນ
ບໍຣິສຸດຂອງພຣະອົງ ແລະໂດຍຊັຍຊະນະອັນຊົງອານຸພາບດ້ວຍພຣະຫັດຂວາຂອງພຣະອົງ
7 ບາງຄົນກໍໂອ້ອວດເຣື່ອງຣົດຮົບ ແລະກໍເຣື່ອງມ້າ ແຕ່ເຮົາອວດເຣື່ອງພຣະນາມພຣະຜູ້ເປັນເຈົ້າ ພຣະເຈົ້າຂອງ
ເຮົາ
8 ເຂົາທັງຫລາຍຈະລົ້ມຍ້ອນເຕະສະດຸດ ແຕ່ເຮົາຈະລຸກຂຶ້ນຢືນຕົງຢູ່
9 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍປະທານຊັຍຊະນະແດ່ພຣະຣາຊາ ເມື່ອຂ້າພຣະອົງທັງຫລາຍຮ້ອງທູນຂໍພຣະອົງຊົງ
ຕອບດ້ວຍເຖີດ

## 21 ເພງສັຣເສີນ ບົດທີຊາວເອັດ

### ຄຳສັຣເສີນເພາະໄດ້ຮັບການຊ່ອຍໃຫ້ພົ້ນຈາກສັດຕຣູ

Thanksgiving for Victory

ເຖິງຫົວໜ້ານັກຮ້ອງ ເພງສັຣເສີນ ຂອງດາວິດ

To the leader. A Psalm of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ກະສັດຈະຍິນດີໃນພຣະກຳລັງຂອງພຣະອົງ ທ່ານຈະຊົມຊື່ນຍິນດີໃນຄວາມຊ່ອຍ
ເຫລືອຂອງພຣະອົງ

2 ພຣະອົງໃຫ້ທ່ານໄດ້ຮັບຕາມໃຈປາຖນາ ແລະບໍ່ ໄດ້ຊົງຍັບຢັ້ງສິ່ງທີ່ທ່ານຮ້ອງທູນຂໍ

3 ເພາະພຣະອົງໄດ້ມາຫາທ່ານດ້ວຍພຣະພອນອັນມະຫາສານ ແລະສວມມົງກຸດຄຳໃຫ້ທ່ານດ້ວຍ

4 ທ່ານທູນຂໍຊີວິດ ແລະພຣະອົງກໍປະທານຊີວິດທີ່ຍືນຍາວນານດ້ວຍ

5 ໂດຍຄວາມຊ່ອຍຊູ ແລະສັກສີຂອງທ່ານຈຶ່ງຍິ່ງໃຫຍ່ ພຣະເຈົ້າຊົງປະດັບພຣະຣາຊາດ້ວຍຍົດສັກ ໃຫ້ທ່ານມີຊື່
ສູງ ແລະຣິດອຳນາດ

6 ພຣະພອນນັ້ນກໍດຳຣົງຢູ່ກັບທ່ານເປັນນິດ ແລະຊົງກະທຳໃຫ້ທ່ານຊົມຊື່ນຍິນດີຕໍ່ເບື້ອງພຣະພັກຂອງພຣະອົງ

7 ເພາະພຣະຣາຊາວາງໃຈໃນພຣະຜູ້ເປັນເຈົ້າ ດ້ວຍຄວາມຮັກໝັ້ນຄົງຂອງພຣະອົງຜູ້ສູງສຸດ ທ່ານຈະບໍ່ຫວັ່ນ
ໄຫວເລີຍ

8 ພຣະຫັດຂອງພຣະອົງ ຈະຄົ້ນພົບເຫລົ່າສັດຕຣູທັງຫລາຍ ພຣະຫັດຂວາຈະພົບບັນດາຜູ້ທີ່ກຽດຊັງ
ພຣະອົງ

9 ເມື່ອພຣະອົງຊົງປາກົດ ພຣະອົງຈະຊົງກະທຳໃຫ້ເຂົາຮ້ອນຈັດດັ່ງເຕົາໄຟ ພຣະຜູ້ເປັນເຈົ້າຈະຊົງກືນເຂົາດ້ວຍພ
ຣະພິໂຣດ ແລະໄຟຈະເຜົາຜານເຂົາໃຫ້ດັບສິ້ນ

10 ພຣະອົງຈະຊົງທຳລາຍລູກຫລານຂອງເຂົາເສັຽຈາກແຜ່ນດິນໂລກ ແລະພາກເຊື້ອສາຍຂອງເຂົາຈາກບຸດຂອງ
ມະນຸດ

11 ເຖິງວ່າເຂົາທັງຫລາຍໄດ້ປອງຮ້າຍຕໍ່ພຣະອົງ ແມ້ເຂົາປະດິດເຣື່ອງຊົ່ວຮ້າຍ ເຂົາກໍຈະກະທຳບໍ່ສຳເຣັດ

12 ເພາະພຣະອົງຈະຊົງກະທຳໃຫ້ເຂົາຫນີພ່າຍໄປສິ້ນ ແລະຈະຊົງເລັງທະນູໄປຕົງຫນ້າຂອງເຂົາ

13 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງເປັນທີ່ຍົກຍ້ອງເຊີດຊູໃນພຣະກຳລັງຂອງພຣະອົງ ຂ້າພຣະອົງທັງຫລາຍ ຈະຮ້ອງ
ເພງສັຣເສີນຣິດທານຸພາບຂອງພຣະອົງ

## 22 ເພງສັຣເສີນ ບົດທີຊາວສອງ

### ຄວາມຮ້ອງອັນແສນເຈັບປວດ ແລະບົດເພງສັຣເສີນ

Plea for Deliverance from Suffering and Hostility

ເຖິງຫົວໜ້ານັກຮ້ອງ ຕາມທຳນອງກວາງແຫ່ງຍາມຮຸ່ງອະຣຸນ ເພງສັຣເສີນ ຂອງດາວິດ

To the leader: according to The Deer of the Dawn.

A Psalm of David.

1 ພຣະເຈົ້າຂອງຂ້າພຣະອົງ ພຣະເຈົ້າຂອງຂ້າພຣະອົງ ເຫດໃດພຣະອົງຈຶ່ງໄດ້ຊົງປະປ່ອຍຂ້າພຣະອົງ? ຂ້າພຣະ
ອົງໄດ້ຮ້ອງຂໍຄວາມຊ່ອຍເຫລືອຢ່າງສິ້ນຄວາມຫວັງ ແຕ່ກໍຍັງບໍ່ທັນໄດ້ຮັບ

2 ພຣະອົງເຈົ້າຂ້າ ຕລອດທັງວັນຂ້າພຣະອົງໄດ້ຮ້ອງຫາພຣະອົງ ແຕ່ພຣະອົງບໍ່ໄດ້ຊົງຕອບຂ້າພຣະອົງ ຂ້າພຣະ
ອົງຮ້ອງຫາ ພຣະອົງໃນຍາມກາງຄືນຈົນບໍ່ໄດ້ພັກຜ່ອນ

3 ພຣະອົງຊົງເປັນອົງບໍຣິສຸດທີ່ປະທັບຢູ່ເທິງພຣະທີ່ນັ່ງ ຊົງເປັນຜູ້ທີ່ພວກອິສຣາເອນພາກັນກ່າວສັຣເສີນ

4 ພວກບັນພະບຸຣຸດຂອງຂ້າພຣະອົງເຊື່ອຫມັ້ນໃນພຣະອົງ ພວກທ່ານໄດ້ເຊື່ອພຣະອົງແລະພຣະອົງໄດ້ຊ່ອຍໃຫ້
ພົ້ນ

5 ພວກທ່ານໄດ້ຮ້ອງຫາພຣະອົງ ແລະກໍໄດ້ພົ້ນຈາກອັນຕະລາຍ ພວກທ່ານເຊື່ອພຣະອົງ ແລະບໍ່ໄດ້ສູນເສັຽຄວາມຫວັງ
6 ດຽວນີ້ ຂ້າພຣະອົງບໍ່ເປັນຄືຄົນ ແຕ່ຄືຕົວຫນອນຊຶ່ງທຸກໆຄົນກຽດຊັງ ແລະຫມິ່ນປມາດ
7 ທຸກໆຄົນທີ່ເຫັນຂ້າພຣະອົງກໍຫົວຂວັນໃສ່ຂ້າພຣະອົງ ເຂົາແລບລີ້ນ ແລະແກວ່ງຫົວໃສ່ຂ້າພຣະອົງ
8 ເຂົາເວົ້າວ່າ, "ເຈົ້າໄວ້ວາງໃຈພຣະຜູ້ເປັນເຈົ້າ ເປັນຫຍັງພຣະອົງຈຶ່ງບໍ່ຊ່ອຍໃຫ້ພົ້ນ ຖ້າວ່າພຣະອົງພໍພຣະທັຍໃນເຈົ້າ ເປັນຫຍັງພຣະອົງບໍ່ຊົງຊ່ອຍເຫລືອເຈົ້າ?"
9 ພຣະອົງຊົງເປັນຜູ້ນຳຂ້າພຣະອົງໃຫ້ເກີດມາຢ່າງປອດພັຍ ເມື່ອຂ້າພຣະອົງຍັງນ້ອຍ ພຣະອົງໄດ້ຊົງປົກປັກຮັກສາຂ້າພຣະອົງ
10 ນັບແຕ່ຂ້າພຣະອົງເກີດອອກມາ ພຣະອົງຊົງເປັນພຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງໄວ້ວາງໃຈໃນພຣະອົງ
11 ຂໍຢ່າຢູ່ຫ່າງໄກຈາກຂ້າພຣະອົງ ເພາະຄວາມລຳບາກເຂົ້າມາໃກ້ແລ້ວ ແລະບໍ່ມີຜູ້ໃດຊ່ອຍຂ້າພຣະອົງໄດ້
12 ສັດຕຣູຫລາຍຄົນໄດ້ອ້ອມຮອບຂ້າພຣະອົງເຫມືອນດັ່ງຝູງງົວປ່າ ເຂົາທັງຫມົດອ້ອມຮອບພວກຂ້າພຣະອົງໄວ້ເຫມືອນດັ່ງຝູງງົວເຖິກທີ່ໂຫດຮ້າຍຈາກດິນແດນບາຊານ
13 ເຂົາອ້າປາກເຫມືອນໂຕສິງທີ່ກຳລັງສົ່ງສຽງຮ້ອງ ແລະກຳລັງຈະທຳຮ້າຍຂ້າພຣະອົງ
14 ເຫື່ອແຮງຂອງຂ້າພຣະອົງໄດ້ສູນເສັຽໄປຫມົດເຫມືອນດັ່ງນ້ຳທີ່ໄຫລຊຶມລົງດິນ ແລະກະດູກຂອງຂ້າພຣະອົງກໍຫລຸດອອກຈາກກັນ ຫົວໃຈຂອງຂ້າພຣະອົງໄດ້ເປື່ອຍລະລາຍເຫມືອນດັ່ງນ້ຳເຜີ້ງ
15 ສ່ວນລຳຄໍຂອງຂ້າພຣະອົງກໍແຫ້ງຄືຂີ້ຝຸ່ນດິນ ແລະລີ້ນຂ້າພຣະອົງກໍຕິດເຂົ້າໄປຫາເຫລືອກ ພຣະອົງໄດ້ປະຂ້າພຣະອົງໄວ້ເຫມືອນຄົນຕາຍແລ້ວ
16 ຝູງຄົນຊົ່ວອ້ອມຮອບຂ້າພຣະອົງໄວ້ ເຫມືອນດັ່ງຝູງຫມາທີ່ຫຍັບເຂົ້າມາໃກ້ຂ້າພຣະອົງ ພວກມັນກັດຈັກມືຕີນຂອງຂ້າພຣະອົງ
17 ກະດູກທຸກໆສ່ວນຂອງຂ້າພຣະອົງກໍແລເຫັນໄດ້ ສັດຕຣູທັງຫລາຍຈ້ອງຕາເບິ່ງຂ້າພຣະອົງ
18 ພວກມັນເອົາເສື້ອຜ້າຂອງຂ້າພຣະອົງມາແບ່ງປັນກັນ ແລະເອົາເສື້ອຄຸມຂອງຂ້າພຣະອົງມາຈົກສະຫລາກກັນ
19 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຢ່າຊົງຢູ່ຫ່າງຈາກຂ້າພຣະອົງ ພຣະຜູ້ຊ່ອຍໃຫ້ພົ້ນຂອງຂ້າພຣະອົງ ຂໍຊົງຟ້າວມາຊ່ອຍຂ້າພຣະອົງແດ່ຖ້ອນ
20 ຂໍພຣະອົງຊົງຊ່ອຍຂ້າພຣະອົງໃຫ້ພົ້ນຈາກດາບ ແລະຊົງຊ່ອຍຊີວິດຂອງຂ້າພຣະອົງໃຫ້ພົ້ນຈາກຝູງຫມາຮ້າຍ
21 ຈົ່ງຊ່ອຍຊີວິດຂ້າພຣະອົງຈາກຝູງສິງ ຂ້າພຣະອົງຫມົດຫົນທາງເມື່ອຢູ່ຕໍ່ຫນ້າງົວກະທິງເຫລົ່ານັ້ນ
22 ຂ້າພຣະອົງຈະບອກປະຊາຊົນຂອງຂ້າພຣະອົງໃນສິ່ງທີ່ພຣະອົງຊົງກະທຳ ຂ້າພຣະອົງຈະສັຣເສີນພຣະອົງເວລາປະຊຸມ
23 ພວກເຈົ້າທີ່ຢຳເກງພຣະຜູ້ເປັນເຈົ້າ ຈົ່ງສັຣເສີນພຣະອົງ ພວກເຈົ້າທີ່ເປັນເຊື້ອສາຍຂອງຢາໂຄບ ຈົ່ງຖວາຍກຽດແດ່ພຣະອົງ ແລະພວກເຈົ້າທີ່ເປັນຊາວອິສຣາເອນ ຈົ່ງນະມັສການພຣະອົງ
24 ພຣະອົງບໍ່ໄດ້ປ່ອຍຄົນທຸກຍາກຫລືທຳເສີຍຕໍ່ການທົນທຸກທໍຣະມານຂອງເຂົາ ບໍ່ໄດ້ປິ່ນພຣະພັກຈາກເຂົາ ແຕ່ໄດ້ຊົງຕອບເມື່ອເຂົາຂໍຮ້ອງຄວາມຊ່ອຍເຫລືອຈາກພຣະອົງ
25 ຂ້າພຣະອົງຈະສັຣເສີນໃນສິ່ງທີ່ພຣະອົງຊົງກະທຳຕໍ່ຖ້າມກາງການປະຊຸມ ຂ້າພຣະອົງຈະຖວາຍບູຊາດັ່ງທີ່ຂ້າພຣະອົງໄດ້ສັນຍາໄວ້ຕໍ່ຫນ້າທຸກໆຄົນທີ່ຢຳເກງພຣະອົງ
26 ຄົນທຸກຍາກຈະກິນອີ່ມ ສ່ວນຜູ້ທີ່ເຂົ້າມາຫາພຣະຜູ້ເປັນເຈົ້າ ຈະສັຣເສີນພຣະອົງ ຂໍໃຫ້ເຂົາຈະເຣີນຮຸ່ງເຮືອງຂຶ້ນຕລອດໄປ
27 ຊົນຊາດທັງປວງຈະລະນຶກເຖິງພຣະຜູ້ເປັນເຈົ້າເຂົາຈະກັບມາຫາພຣະອົງໃນທຸກໆບ່ອນທົ່ວໂລກນີ້ ເຊື້ອສາຍຕ່າງໆຈະຂາບໄຫວ້ພຣະອົງ

28 ພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າມະຫາຊີວິດ ແລະພຣະອົງກໍຊົງປົກຄອງເຫນືອນຊົນຊາດທັງປວງ
29 ຄົນທີ່ຈອງຫອງທັງຫມົດຈະກາບລົງຕໍ່ພຣະອົງ ມະນຸດທຸກໆຄົນຈະຂາບໄຫວ້ຕໍ່ພຣະພັກພຣະອົງ ແລະຕລອດ
ທັງທຸກຄົນທີ່ລໍຄອຍຄວາມຕາຍ
30 ພວກເຊື້ອສາຍຕໍ່ມາຈະຮັບໃຊ້ພຣະອົງ ມະນຸດຈະກ່າວເຣື່ອງຂອງພຣະຜູ້ເປັນເຈົ້າຕລອດຊົ່ວເຊື້ອສາຍຂອງເຂົາ
31 ປະຊາຊົນທີ່ຍັງບໍ່ທັນໄດ້ເກີດມາຈະໄດ້ຍິນວ່າ, “ພຣະຜູ້ເປັນເຈົ້າໄດ້ຊົງຊ່ອຍໄພ່ພົນຂອງພຣະອົງໃຫ້ພົ້ນພັຍ”

## 23 ເພງສັຣເສີນ ບົດທີຊາວສາມ
## ພຣະຜູ້ເປັນເຈົ້າຊົງເປັນຜູ້ລ້ຽງຂ້າພຣະອົງ

The Divine Shepherd

ເພງສັຣເສີນ ຂອງດາວິດ

A Psalm of David.

1 ພຣະຜູ້ເປັນເຈົ້າຊົງເປັນຜູ້ລ້ຽງຂ້າພຣະອົງ ຂ້າພຣະອົງມີທຸກສິ່ງທີ່ຂ້າພຣະອົງຕ້ອງການ
2 ພຣະອົງຊົງພາຂ້າພຣະອົງໃຫ້ພັກເຊົາຢູ່ໃນປ່າຫຍ້າອັນຂຽວສົດ ພຣະອົງຊົງພາຂ້າພຣະອົງໄປໃນບ່ອນທີ່ບໍ່ນໍ້າ
ອັນສົດໃສ ແລະງຽບສງັດ
3 ພຣະອົງຊົງໃຫ້ຂ້າພຣະອົງມີແຮງຂຶ້ນໃຫມ່ ແລະຊົງພາຂ້າພຣະອົງໄປໃນທາງທີ່ຖືກຕ້ອງຕາມທີ່ພຣະອົງຊົງສັນ
ຍາໄວ້
4 ຂ້າແດ່ພຣະຜູ້ເປັນເຈົ້າ ເຖິງແມ່ນວ່າທາງຈະຜ່ານຄວາມມືດມົນອັນເລິກລັບ ຂ້າພຣະອົງກໍຈະບໍ່ຢ້ານ ເພາະວ່າ
ພຣະອົງຊົງຢູ່ກັບຂ້າພຣະອົງ ໄມ້ຄ້ອນແລະໄມ້ເທົ້າທີ່ພຣະອົງຊົງໃຊ້ກໍຊ່ອຍໃຫ້ຂ້າພຣະອົງພົ້ນພັຍ
5 ພຣະອົງຊົງລ້ຽງດູຂ້າພຣະອົງຢ່າງອີ່ມຫນໍາສໍາຣານຖ້າມກາງສັດຕຣູທັງຫລາຍ ພຣະອົງຊົງຕ້ອນຮັບຂ້າພຣະອົງ
ໂດຍຖອກນໍ້າມັນຫອມໃສ່ເທິງຫົວຂ້າພຣະອົງ ແລະຊົງໃຫ້ຈອກຂ້າພຣະອົງເຕັມລົ້ນຢູ່
6 ຄວາມດີແລະຄວາມຮັກຂອງພຣະອົງຈະຢູ່ກັບຂ້າພຣະອົງຕລອດຊົ່ວຊີວິດ ແລະພຣະວິຫານຂອງພຣະອົງກໍຈະ
ເປັນເຮືອນຢູ່ຂອງຂ້າພຣະອົງຕລອດໄປ

## 24 ເພງສັຣເສີນ ບົດທີຊາວສີ່
## ເຈົ້າຊີວິດອົງຍິ່ງໃຫຍ່

Entrance into the Temple

ເພງສັຣເສີນ ຂອງດາວິດ

of David. A Psalm.

1 ແຜ່ນດິນໂລກ ແລະທຸກໆສິ່ງໃນໂລກນີ້ເປັນຂອງພຣະຜູ້ເປັນເຈົ້າ ຜືນແຜ່ນດິນແລະທຸກຄົນທີ່ອາສັຍຢູ່ກໍເປັນ
ຂອງພຣະອົງ
2 ພຣະອົງຊົງສ້າງໂລກນີ້ຢູ່ເບື້ອງເທິງນໍ້າ ແລະພຣະອົງຊົງວາງຮາກຖານແຜ່ນດິນຢູ່ພື້ນມະຫາສະຫມຸດອັນເລິກ
3 ຜູ້ໃດອາດຂຶ້ນໄປເທິງພູສູງຂອງພຣະຜູ້ເປັນເຈົ້າໄດ້ ຜູ້ໃດມີອະນຸຍາດເຂົ້າໄປໃນພຣະວິຫານອັນບໍຣິສຸດຂອງ
ພຣະອົງໄດ້
4 ຜູ້ນັ້ນຕ້ອງເປັນຄົນຂາວສະອາດທັງການກະທໍາແລະຄວາມຄິດ ແລະເປັນຜູ້ທີ່ບໍ່ຍອມນະມັສການຮູບໂຄຣົບ
ຫລືບໍ່ຕັ້ງຄໍາສັນຍາເທັດ
5 ແລ້ວພຣະຜູ້ເປັນເຈົ້າຈະອວຍພອນຄົນນັ້ນ ພຣະເຈົ້າຊຶ່ງເປັນພຣະຜູ້ຊ່ອຍຈະປະກາດຄວາມຊອບທັມຂອງເຂົາ
6 ປະຊາຊົນຢ່າງນີ້ແຫລະ, ເປັນຜູ້ທີ່ຫຍັບເຂົ້າມາຫາພຣະຜູ້ເປັນເຈົ້າ ແລະຕໍ່ພຣະພັກພຣະເຈົ້າຂອງຢາໂຄບ

7 ດັ່ງນັ້ນ ຈົ່ງໄຂປະຕູເມືອງອອກໃຫ້ກວ້າງ ແລະຈົ່ງໄຂປະຕູອັນເກົ່າແກ່ອອກ ແລ້ວເຈົ້າຊີວິດອົງຊົງສະຫງ່າຣາສີຈະ
ສະເດັດເຂົ້າໄປ
8 ແມ່ນໃຜເປັນເຈົ້າຊີວິດອົງຊົງສະຫງ່າຣາສີນີ້? ພຣະອົງຊົງເປັນພຣະຜູ້ເປັນເຈົ້າອົງຊົງມີອຳນາດແລະເຂັ້ມແຂງ
ແລະເປັນ ພຣະຜູ້ເປັນເຈົ້າຜູ້ຊົງຊະນະໃນສນາມຮົບ
9 ດັ່ງນັ້ນ ຈົ່ງໄຂປະຕູເມືອງອອກໃຫ້ກວ້າງ ແລະຈົ່ງໄຂປະຕູອັນເກົ່າແກ່ອອກ ແລ້ວເຈົ້າຊີວິດອົງຊົງສະຫງ່າຣາສີຈະ
ສະເດັດເຂົ້າໄປ
10 ແມ່ນໃຜເປັນເຈົ້າຊີວິດອົງຊົງສະຫງ່າຣາສີ ແມ່ນພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງເປັນພຣະເຈົ້າອົງຍິ່ງໃຫຍ່

## 25 ເພງສັຣເສີນ ບົດທີຊາວຫ້າ

### ການອ້ອນວອນຂໍການນຳພາ ແລະການປ້ອງກັນ

Prayer for Guidance and for Deliverance

ຂອງດາວິດ

of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງວິງວອນຕໍ່ພຣະອົງ
2 ພຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງເຊື່ອໄວ້ວາງໃຈໃນພຣະອົງ ຂໍຊົງຊ່ອຍໃຫ້ພົ້ນຈາກຄວາມອັບອາຍຂາຍ
ຫນ້າເນື່ອງຈາກການແຕກພ່າຍ ຂໍຢ່າໃຫ້ສັດຕຣູເຍາະເຍີ້ຍຂ້າພຣະອົງ
3 ຜູ້ທີ່ເຊື່ອວາງໃຈໃນພຣະອົງຈະບໍ່ພ່າຍແພ້ ແຕ່ຈະຕົກຖືກຜູ້ທີ່ຄິດກະບົດຕໍ່ສູ້ພຣະອົງ
4 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງສັ່ງສອນຂ້າພຣະອົງໃຫ້ຮູ້ຈັກຫົນທາງຂອງພຣະອົງ ແລະຂໍຊົງໂຜດໃຫ້ຂ້າພຣະອົງຮູ້
ຈັກວິທີທາງນີ້
5 ຂໍຊົງສັ່ງສອນຂ້າພຣະອົງໃຫ້ດຳຣົງຢູ່ຕາມຄວາມຈິງຂອງພຣະອົງ ເພາະພຣະອົງຊົງເປັນພຣະຜູ້ຊ່ອຍຂອງຂ້າພ
ຣະອົງ ຂ້າພຣະອົງເຊື່ອໄວ້ວາງໃຈໃນພຣະອົງຕລອດເວລາ
6 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລະນຶກເຖິງພຣະເມດຕາ ແລະຄວາມຮັກອັນຫມັ້ນຄົງຂອງພຣະອົງ ຊຶ່ງພຣະອົງຊົງ
ສະແດງໃຫ້ເຫັນຕັ້ງແຕ່ໃດໆມາ
7 ຂໍຊົງໃຫ້ອະພັຍຄວາມຜິດແລະການພາດພັ້ງໃນຄາວທີ່ຂ້າພຣະອົງຍັງເປັນເດັກນ້ອຍຢູ່ ຂ້າແດ່ພຣະຜູ້ເປັນເຈົ້າ
ຍ້ອນຄວາມຮັກອັນຫມັ້ນຄົງແລະຄວາມດີຂອງພຣະອົງ ຂໍຊົງລະນຶກເຖິງຂ້າພຣະອົງດ້ວຍເຖີດ
8 ພຣະຜູ້ເປັນເຈົ້າຊົງສັດຊື່ແລະດີ ພຣະອົງຊົງສັ່ງສອນຄົນບາບໃຫ້ຮູ້ຈັກທາງທີ່ຄວນປະພຶດ
9 ພຣະອົງຊົງນຳພາຜູ້ທີ່ຖ່ອມຕົວໄປຕາມທາງທີ່ຖືກຕ້ອງ ແລະຊົງສັ່ງສອນເຂົາໃຫ້ຮູ້ຈັກນ້ຳພຣະທັຍຂອງພຣະອົງ
10 ພຣະອົງຊົງນຳພາທຸກໆຄົນເຊື່ອຟັງຄຳຫມັ້ນສັນຍາແລະຄຳສັ່ງຂອງພຣະອົງດ້ວຍຄວາມຮັກແລະຄວາມສັດຈິງ
11 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຮັກສາຄຳສັນຍາຂອງພຣະອົງ ແລະຂໍຊົງອະພັຍຄວາມຜິດຂອງຂ້າພຣະອົງ ເພາະ
ຂ້າພຣະອົງມີບາບເຫລືອຫລາຍ
12 ສ່ວນຜູ້ທີ່ຢຳເກງພຣະຜູ້ເປັນເຈົ້າ ຈະຮຽນຮູ້ນຳພຣະອົງໃນທາງທີ່ເຂົາຄວນປະພຶດ
13 ເຂົາຈະເຣີນຂຶ້ນເລື້ອຍໆ ແລະລູກຫລານຂອງເຂົາກໍຈະຢູ່ໃນປະເທດນີ້ຢ່າງປອດພັຍ
14 ພຣະຜູ້ເປັນເຈົ້າຊົງເປັນເພື່ອນກັບຜູ້ທີ່ຢຳເກງພຣະອົງ ແລະຊົງສັ່ງສອນເຂົາເຖິງຄຳຫມັ້ນສັນຍາຂອງພຣະອົງ
15 ຂ້າພຣະອົງແນມຫາພຣະອົງ ເພື່ອຂໍຄວາມຊ່ອຍເຫລືອຕລອດເວລາ ແລະພຣະອົງຊົງຊ່ອຍຊີວິດຂ້າພຣະອົງໃຫ້
ພົ້ນຈາກອັນຕະຣາຍ
16 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຫັນມາເມດຕາກະຣຸນາແກ່ຂ້າພຣະອົງຖ້ອນ ເພາະຂ້າພຣະອົງຢູ່ໂດດດ່ຽວ
ແລະອ່ອນແຮງ

17 ຂໍພຣະອົງຊົງບັນເທົາຄວາມທຸກໃຈຂອງຂ້າພຣະອົງ ແລະຊ່ວຍຂ້າພຣະອົງໃຫ້ພົ້ນຈາກຄວາມທຸກລຳບາກທຸກ
ຢ່າງ
18 ຂໍຊົງພິຈາຣະນາເບິ່ງຄວາມທຸກໂສກ ການທໍຣະມານທຸກຢ່າງຂອງຂ້າພຣະອົງ ແລະຍົກໂທດຄວາມຜິດທຸກຢ່າງ
ຂອງຂ້າ ພຣະອົງ
19 ຂໍພຣະອົງຊົງທອດພຣະເນດສັດຕຣູທັງປວງທີ່ຂ້າພຣະອົງມີຢູ່ວ່າເຂົາກຽດຊັງຂ້າພຣະອົງຫລາຍປານໃດ
20 ຂໍຊົງປົກປັກຮັກສາ ແລະຊ່ອຍຂ້າພຣະອົງໃຫ້ພົ້ນພັຍ ແລະຢ່າໃຫ້ຂ້າພຣະອົງຜ່າຍແພ້ ເພາະວ່າຂ້າພຣະອົງເຂົ້າ
ມາເພິ່ງພາອາສັຍພຣະອົງ
21 ຂໍໃຫ້ຜົນແຫ່ງຄວາມດີ ແລະຄວາມສັດຊື່ມາຄໍ້າຊູຍູ້ສົ່ງ ເພາະວ່າຂ້າພຣະອົງເຊື່ອພຣະອົງ
22 ພຣະອົງເຈົ້າຂ້າ ຂໍຊົງໂຜດຊ່ອຍຊາວອິສຣາເອນໄພ່ພົນຂອງພຣະອົງໃຫ້ພົ້ນຈາກຄວາມທຸກລຳບາກທັງປວງ

## 26 ເພງສັຣເສີນ ບົດທີຊາວຫົກ

**ຄຳຢືນຢັນເຣື່ອງຄວາມສັດສຸຈຣິດຂອງຕົນ** Plea for Justice and Declaration of Righteousness

ຂອງດາວິດ

Of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຕັດສິນເຂົ້າຂ້າງຂ້າພຣະອົງ ເພາະຂ້າພຣະອົງດຳເນີນຢູ່ໃນຄວາມສຸຈຣິດຂອງຂ້າພ
ຣະອົງ ຂ້າ ພຣະອົງໄດ້ວາງໃຈໃນພຣະເຈົ້າຢ່າງບໍ່ຫວັ່ນໄຫວ
2 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພິສູດຂ້າພຣະອົງ ລອງຂ້າພຣະອົງເຖີດ ທົດສອບໃຈແລະຈິດຂອງຂ້າພຣະອົງເຖີດ
3 ເພາະຄວາມຮັກໝັ້ນຄົງຂອງພຣະອົງຢູ່ຕໍ່ຕາຂ້າພຣະອົງ ແລະຂ້າພຣະອົງດຳເນີນໂດຍຄວາມສັດຈິງຕໍ່ພຣະອົງ
4 ຂ້າພຣະອົງບໍ່ໄດ້ນັ່ງກັບຄົນມຸສາ ຫລືບໍ່ໄດ້ສະມາຄົມກັບຄົນມານຍາ
5 ຂ້າພຣະອົງຊັງໃນການຊຸມນຸມຄົນທີ່ທຳຊົ່ວ ແລະຂ້າພຣະອົງບໍ່ນັ່ງກັບຄົນອະທັມ
6 ຂ້າແດ່ພຣະຜູ້ເປັນເຈົ້າ ເພື່ອຄວາມບໍຣິສຸດ ຂ້າພຣະອົງຊຳຣະລ້າງມື ແລະເດີນຢູ່ຮອບແທ່ນຂອງພຣະອົງ
7 ທັງຮ້ອງເພງໂມທະນາພຣະຄຸນ ແລະບອກເລົ່າເຖິງພຣະຣາຊກິດອັສຈັນທັງສິ້ນຂອງພຣະອົງ
8 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຮັກພຣະນິເວດອັນເປັນທີ່ປະທັບຂອງພຣະອົງ ແລະສະຖານທີ່ປະທັບແຫ່ງພ
ຣະສະງ່າຣາສີຂອງພຣະອົງ
9 ຂໍຢ່າຊົງກວາດຂ້າພຣະອົງໄປກັບຄົນບາບ ຫລືກວາດຊີວິດຂອງຂ້າພຣະອົງໄປກັບຄົນກະຫາຍເລືອດ
10 ຄືຄົນຊຶ່ງໃນມືຂອງເຂົາ ມີແຜນການຊົ່ວ ແລະມືຂວາຂອງເຂົາເຕັມດ້ວຍສິນບົນ
11 ແຕ່ສຳລັບຂ້າພຣະອົງ ຂ້າພຣະອົງເດີນໃນຄວາມສຸຈຣິດ ຂໍຊົງໄຖ່ຂ້າພຣະອົງ ແລະຊົງກະຣຸນາຕໍ່ຂ້າພຣະອົງ
12 ຕີນຂອງຂ້າພຣະອົງຢຽບຢູ່ເທິງພື້ນຮາບ ໃນທີ່ຊຸມນຸມຊົນ ຂ້າພຣະອົງຈະສັຣເສີນພຣະຜູ້ເປັນເຈົ້າ

## 27 ເພງສັຣເສີນ ບົດທີຊາວເຈັດ

**ການອ້ອນວອນດ້ວຍຄວາມໄວ້ໃຈ**

Triumphant Song of Confidence

ຂອງດາວິດ

Of David.

1 ພຣະຜູ້ເປັນເຈົ້າຊົງເປັນແສງສວ່າງ ເປັນພຣະຜູ້ຊ່ອຍໃຫ້ພົ້ນຂອງຂ້າພຣະອົງ ຂ້າພຣະອົງຈະບໍ່ຢ້ານຜູ້ນຶ່ງຜູ້ໃດ
ພຣະອົງຊົງຄຸ້ມຄອງຂ້າພຣະອົງຈາກພັຍອັນຕະຣາຍທຸກຢ່າງ ຂ້າພຣະອົງຈະບໍ່ຢ້ານ

2 ເມື່ອຄົນຊົ່ວຕໍ່ສູ້ຂ້າພຣະອົງ ແລະພະຍາຍາມສັງຫານຊີວິດຂ້າພຣະອົງ ພວກເຂົາໄດ້ເຕະສະດຸດຈົນລົ້ມລົງ
3 ຖ້າວ່າກອງທະຫານອ້ອມຮອບຂ້າພຣະອົງໄວ້ ຂ້າພຣະອົງກໍຈະບໍ່ຢ້ານ ຖ້າວ່າສັດຕຣູຕໍ່ສູ້ຂ້າພຣະອົງ ຂ້າພຣະ
ອົງກໍຍັງເຊື່ອໝັ້ນໃນພຣະເຈົ້າຢູ່
4 ຂ້າພຣະອົງໄດ້ທູນຂໍພຽງສິ່ງດຽວຕໍ່ພຣະຜູ້ເປັນເຈົ້າ ຄືອາສັຍຢູ່ໃນພຣະວິຫານຂອງພຣະອົງຕລອດຊົ່ວຊີວິດຂອງ
ຂ້າພຣະອົງ ເພື່ອເບິ່ງຄວາມດີຂອງພຣະອົງ ແລະທູນຂໍການນຳພາຂອງພຣະອົງຢູ່ທີ່ນັ້ນ
5 ໃນຄາວຕົກທຸກໄດ້ຍາກ ພຣະອົງຈະຊົງປົກປັກຮັກສາຂ້າພຣະອົງ ພຣະອົງຈະຊົງໃຫ້ຂ້າພຣະອົງຫລົບພັຍຢູ່ໃນ
ພຣະວິຫານຂອງພຣະອົງ ແລະຊົງໃຫ້ຢູ່ເທິງໂງ່ນຫີນສູງຢ່າງປອດພັຍ
6 ດັ່ງນັ້ນ ຂ້າພຣະອົງຈະຊະນະສັດຕຣູທີ່ອ້ອມຮອບຂ້າພຣະອົງ ຂ້າພຣະອົງຈະຖວາຍເຄື່ອງບູຊາໃນພຣະວິຫານ
ຂອງພຣະອົງ ດ້ວຍສຽງໂຮ່ຮ້ອງຍິນດີ ຂ້າພຣະອົງຈະຮ້ອງເພງສັຣເສີນພຣະອົງ
7 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຟັງສຽງຂ້າພຣະອົງ ເມື່ອຂ້າພຣະອົງຮ້ອງຫາພຣະອົງ ຂໍຊົງເມດຕາກະຣຸນາແລະ
ຕອບຂ້າພຣະອົງດ້ວຍ
8 ພຣະອົງຊົງກ່າວວ່າ, “ຈົ່ງມາຫາເຮົາ”  ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຈະມາຫາພຣະອົງ
9 ຂໍພຣະອົງຢ່າຊົງລີ້ ຢ່າຊົງພຣະພິໂຣດ ແລະຢ່າຊົງໄລ່ຂ້າໃຊ້ຂອງພຣະອົງໜີ ພຣະອົງຊົງເປັນພຣະຜູ້ຊ່ອຍຂອງ
ຂ້າພຣະອົງ ຂໍຢ່າຊົງໜີຈາກຂ້າພຣະອົງໄປເລີຍ ພຣະເຈົ້າຜູ້ຊົງຊ່ອຍໃຫ້ພົ້ນຂອງຂ້າພຣະອົງ
10 ພໍ່ແມ່ຂອງຂ້າພຣະອົງອາດຈະປະປ່ອຍຂ້າພຣະອົງໄປ ແຕ່ພຣະອົງຈະຮັກສາຂ້າພຣະອົງໄວ້
11 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງສັ່ງສອນຂ້າພຣະອົງໃຫ້ຮູ້ຈັກພຣະປະສົງຂອງພຣະອົງ ແລະຂໍຊົງພາຂ້າພຣະອົງໄປ
ໃນທາງອັນສັດຊື່ ເພາະຂ້າພຣະອົງມີສັດຕຣູຫລາຍຄົນ
12 ຂໍຢ່າຊົງປະປ່ອຍຂ້າພຣະອົງໄວ້ກັບສັດຕຣູ ຜູ້ທີ່ຕໍ່ສູ້ຂ້າພຣະອົງດ້ວຍຄຳຫລອກລວງ ແລະດ້ວຍລັກສນະທ່າທາງ
ທີ່ໜ້າຢ້ານກົວ
13 ແນ່ນອນທີ່ສຸດ ຂ້າພຣະອົງຈະຢູ່ຕໍ່ໄປ ເພື່ອເບິ່ງຄວາມດີຂອງພຣະອົງທີ່ມີຕໍ່ໄພ່ພົນ
14 ຈົ່ງລໍຄອຍພຣະເຈົ້າ ຈົ່ງເຂັ້ມແຂງ ແລະໃຫ້ຈິດໃຈຂອງທ່ານກ້າຫານເຖີດ ຈົ່ງລໍຄອຍພຣະຜູ້ເປັນເຈົ້າ

## 28 ເພງສັຣເສີນ ບົດທີຊາວແປດ

### ຄຳອະທິຖານເພື່ອຂໍຄວາມຊ່ອຍເຫລືອ ແລະຄຳສັຣເສີນເພາະໄດ້ຮັບຄຳຕອບ

Prayer for Help and Thanksgiving for It

ຂອງດາວິດ

Of David.

1 ຂ້າແດ່ພຣະເຈົ້າ ຂ້າພຣະອົງຮ້ອງທູນຕໍ່ພຣະອົງ ພຣະສີລາຂອງຂ້າພຣະອົງ ຂໍຢ່າໃຫ້ພຣະກັນໜວກຕໍ່ຂ້າພຣະ
ອົງ ຢ້ານວ່າ ຖ້າພຣະອົງຊົງງຽບຢູ່ຕໍ່ຂ້າພຣະອົງ ຂ້າພຣະອົງຈະເປັນເໝືອນຄົນເຫລົ່ານັ້ນ ທີ່ລົງໄປຍັງແດນຜູ້
ຕາຍ
2 ຂໍຊົງຟັງສຽງວິງວອນຂອງຂ້າພຣະອົງ ເມື່ອຂ້າພຣະອົງຮ້ອງທູນຂໍຄວາມອຸປຖັມຈາກພຣະອົງ ຂນະເມື່ອຂ້າພ
ຣະອົງຍົກມືຂອງຂ້າພຣະອົງຂຶ້ນຕໍ່ພຣະວິຫານຂອງພຣະອົງ
3 ຂໍຢ່າຊົງກວາດຂ້າພຣະອົງໄປພ້ອມກັບຄົນອະທັມ ກັບບັນດາຄົນທີ່ກະທຳຄວາມຊົ່ວ ຜູ້ເວົ້າຢ່າງສັນຕິກັບເພື່ອນ
ບ້ານຂອງຕົນ ແຕ່ການປອງຮ້າຍຢູ່ໃນໃຈຂອງເຂົາທັງຫລາຍ
4 ຂໍຊົງຕອບສນອງເຂົາຕາມການງານຂອງເຂົາ ແລະຕາມຄວາມຊົ່ວແຫ່ງກິຈການຂອງເຂົາ ຂໍຊົງຕອບສນອງ
ເຂົາຕາມງານນໍ້າມືຂອງເຂົາ ແລະຊົງຕອບແທນເຂົາຕາມສົມຄວນ

5 ເພາະເຂົາບໍ່ນັບຖືພຣະຣາຊກິຈຂອງພຣະຜູ້ເປັນເຈົ້າ ຫລືພຣະຫັດຖະກິດຂອງພຣະອົງ ພຣະອົງຈະຊົງພັງເຂົາ
ລົງ ແລະບໍ່ສ້າງເຂົາຂຶ້ນອີກ
6 ສາທຸການແດ່ພຣະຜູ້ເປັນເຈົ້າ ເພາະພຣະອົງຊົງຟັງສຽງວິງວອນຂອງຂ້າພະເຈົ້າ
7 ພຣະຜູ້ເປັນເຈົ້າຊົງເປັນພຣະກຳລັງ ແລະເປັນໂລ່ຂອງຂ້າພະເຈົ້າ ຈິດໃຈຂອງຂ້າພະເຈົ້າວາງໃຈໃນພຣະອົງ ຂ້າ
ພະເຈົ້າຈຶ່ງໄດ້ຮັບຄວາມອຸປຖັມ ແລະຈິດໃຈຂອງຂ້າພະເຈົ້າກໍຊົມຊື່ນຍິນດີ ຂ້າພະເຈົ້າຈະຖວາຍໂມທະນາແກ່
ພຣະອົງດ້ວຍບົດເພງຂອງຂ້າພະເຈົ້າ
8 ພຣະຜູ້ເປັນເຈົ້າຊົງເປັນກຳລັງຂອງໄພ່ພົນຂອງພຣະອົງ ພຣະອົງຊົງເປັນປ້ອມຄວາມພົ້ນຂອງຜູ້ຮັບເຈີມຂອງພ
ຣະອົງ
9 ຂໍຊົງຊ່ອຍໄພ່ພົນຂອງພຣະອົງໃຫ້ລອດພົ້ນ ແລະອວຍພຣະພອນແກ່ມໍຣະດົກຂອງພຣະອົງ ຂໍຊົງເປັນຜູ້ລ້ຽງດູ
ເຂົາຢ່າງລ້ຽງແກະ ແລະຫອບຫິ້ວເຂົາໄປເປັນນິດ

## 29 ເພງສັຣເສີນ ບົດທີຊາວເກົ້າ

### ພຣະສຸຣະສຽງຂອງພຣະເຈົ້າໃນພະຍຸ

The Voice of God in a Great Storm

ເພງສັຣເສີນ ຂອງດາວິດ

A Psalm  of David.

1 ຈົ່ງສັຣເສີນພຣະຜູ້ເປັນເຈົ້າ ຊາວສວັນເອີຍ ຈົ່ງຖວາຍແດ່ພຣະຜູ້ເປັນເຈົ້າເຖີດ ຈົ່ງຖວາຍພຣະສະງ່າຣາສີ
ແລະພຣະກຳລັງແດ່ພຣະເຈົ້າ
2 ຈົ່ງຖວາຍພຣະສະງ່າຣາສີຊຶ່ງຄວນແກ່ພຣະນາມຂອງພຣະອົງແດ່ພຣະເຈົ້າ ຈົ່ງປະດັບກາຍດ້ວຍເຄື່ອງບໍຣິສຸດ
ນະມັສການ ພຣະເຈົ້າ
3 ພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າຢູ່ເຫນືອນ້ຳພຣະເຈົ້າແຫ່ງພຣະສະງ່າຣາສີຊົງຄະນອງສຽງ ກ້ງວານ ຄືພຣະ
ຜູ້ເປັນເຈົ້າເຫນືອນ້ຳທັງຫລາຍ
4 ພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າ ຊົງຣິດທານຸພາບ ພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າເຕັມດ້ວຍຄວາມສູງ
ສົ່ງ
5 ພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າຫັກຕົ້ນສົນ ພຣະຜູ້ເປັນເຈົ້າຊົງຜ່າຕົ້ນສົນແຫ່ງເລບານອນ
6 ພຣະອົງຊົງທຳໃຫ້ເລບານອນເຕັ້ນເຫມືອນງົວນ້ອຍ ແລະສີຣີອອນເຫມືອນງົວກະທິງຫນຸ່ມ
7 ພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າແວບອອກມາເປັນແປວໄຟ
8 ພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າເຮັດໃຫ້ຖິ່ນກັນດານສັ່ນສະເທືອນ ພຣະຜູ້ເປັນເຈົ້າສັ່ນປ່າດົງແຫ່ງເມືອງກາ
ເດສ
9 ພຣະສຸຣະສຽງຂອງພຣະເຈົ້າສັ່ນຕົ້ນໂອກທັງຫລາຍ ແລະເຮັດໃຫ້ໃບໄມ້ຫລົ່ນລົງສູ່ພື້ນ ແລະໃນພຣະວິຫານ
ຂອງພຣະອົງທຸກຄົນຮ້ອງວ່າ, "ພຣະສະງ່າຣາສີ"
10 ພຣະຜູ້ເປັນເຈົ້າປະທັບເຫນືອນ້ຳເລິກທັງຫລາຍ ພຣະຜູ້ເປັນເຈົ້າເປັນພຣະຣາຊາເປັນນິດ
11 ຂໍພຣະຜູ້ເປັນເຈົ້າປະທານພຣະກຳລັງແກ່ປະຊາກອນຂອງພຣະອົງ ຂໍພຣະຜູ້ເປັນເຈົ້າຊົງອວຍພຣະພອນແກ່
ໄພ່ພົນຂອງພຣະອົງໃຫ້ມີສັນຕິພາບ

## 30 ເພງສັຣເສີນ ບົດທີສາມສິບ

### ຄຳໂມທະນາເພາະໄດ້ການຊ່ອຍກູ້ຈາກຄວາມຕາຍ

Thanksgiving for Recovery from Grave Illness
ເພງສັຣເສີນ ຂອງດາວິດ ບົດເພງໃນພິທີຖວາຍໂບດ
A Psalm. A Song at the dedication of the temple. Of David.
1 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຈະຍໍພຣະກຽດພຣະອົງ ແລະບໍ່ໄດ້ຊົງໃຫ້ສັດຕຣູຂອງຂ້າພຣະອົງຍິນດີ
ເພາະຂ້າພຣະອົງ
2 ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ຂ້າພຣະອົງຮ້ອງທູນຂໍຄວາມອຸປຖັມຈາກພຣະອົງ ແລະພຣະອົງໄດ້ຊົງ
ຮັກສາຂ້າ ພຣະອົງໃຫ້ຫາຍ
3 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງນຳຈິດວິນຍານຂອງຂ້າພຣະອົງຂຶ້ນມາຈາກແດນຜູ້ຕາຍ ຊົງໃຫ້ຂ້າພຣະອົງ
ມີຊີວິດ ຈຶ່ງບໍ່ຕ້ອງລົງໄປສູ່ປາກແດນ
4 ໄພ່ພົນຂອງພຣະອົງເອີຍ, ຈົ່ງຮ້ອງສັຣເສີນພຣະຜູ້ເປັນເຈົ້າ ແລະຖວາຍໂມທະນາແກ່ພຣະນາມບໍຣິສຸດຂອງ
ພຣະອົງ
5 ເພາະພຣະພິໂຣດຂອງພຣະອົງນັ້ນເປັນແຕ່ຊົ່ວຂນະນຶ່ງ ແລະຄວາມໂປດປານຂອງພຣະອົງນັ້ນຕລອດຊີວິດ
ການຮ້ອງໄຫ້ຈະອ້ອຍອິ່ງພຽງຄືນນຶ່ງ ແຕ່ຄວາມຊື່ນບານຈະມາໃນເວລາເຊົ້າ
6 ສ່ວນຂ້າພຣະອົງ ຂ້າພຣະອົງເວົ້າໃນຄວາມຈະເຣີນຮຸ່ງເຮືອງຂອງຂ້າພຣະອົງວ່າ, “ຂ້າພະເຈົ້າຈະບໍ່ຫວັ່ນໄຫວ
ເລີຍ”
7 ຂ້າແດ່ພຣະຜູ້ເປັນເຈົ້າ ໂດຍຄວາມໂປດປານຂອງພຣະອົງ ພຣະອົງຊົງສະຖາປະນາຂ້າພຣະອົງໄວ້ຢ່າງພູເຂົາ
ທີ່ເຂັ້ມແຂງ ເມື່ອພຣະອົງຊົງເຊື່ອງພຣະພັກຂອງພຣະອົງ ຂ້າພຣະອົງກໍລຳບາກໃຈ
8 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຮ້ອງທູນຕໍ່ພຣະອົງ ແລະຂ້າພຣະອົງໄດ້ອ້ອນວອນພຣະຜູ້ເປັນເຈົ້າວ່າ,
9 “ຖ້າຂ້າພຣະອົງຕາຍ ພຣະອົງຈະໄດ້ກຳໄລຫຍັງ ຄືເມື່ອຂ້າພຣະອົງລົງໄປຍັງປາກແດນຜູ້ຕາຍ ຂີ້ຝຸ່ນຈະ
ສັຣເສີນພຣະອົງຫລື ມັນຈະບອກເຖິງເຣື່ອງຄວາມສັດຈິງຂອງພຣະອົງຫລື
10 ຂ້າແດ່ຜູ້ເປັນເຈົ້າ ຂໍຊົງສະດັບຟັງແລະຊົງພຣະກະຣຸນາຕໍ່ຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງເປັນຜູ້ອຸປ
ຖັມຂອງຂ້າພຣະອົງ”
11 ສຳລັບຂ້າພຣະອົງ ພຣະອົງຊົງປ່ຽນການໄວ້ທຸກເປັນການເຕັ້ນລຳ ພຣະອົງຊົງແກ້ເສື້ອຜ້າກະສອບຂອງຂ້າພຣະ
ອົງອອກ ແລະຊົງຄາດແອວຂ້າພຣະອົງດ້ວຍຄວາມຍິນດີ
12 ເພື່ອຈິດວິນຍານຂອງຂ້າພຣະອົງຈະສັຣເສີນພຣະອົງແລະບໍ່ມິດງຽບ ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ
ຂ້າພຣະອົງຈະຖວາຍໂມທະນາແດ່ພຣະອົງເປັນນິດ

## 31 ເພງສັຣເສີນ ບົດທີສາມສິບເອັດ
## ການອ້ອນວອນພຣະເຈົ້າດ້ວຍຄວາມເຊື່ອ

Prayer and Praise for Deliverance from Enemies
ເຖິງຫົວໜ້ານັກຮ້ອງ ເພງສັຣເສີນ ຂອງດາວິດ
To the leader. A Psalm of David.
1 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງມາເພິ່ງພາອາສັຍພຣະອົງ ຂໍຢ່າໃຫ້ຂ້າພຣະອົງຜ່າຍແພ້ເລີຍ ພຣະອົງຊົງ
ເປັນພຣະເຈົ້າອົງທ່ຽງທັມ ຂ້າພຣະອົງອ້ອນວອນຫາພຣະອົງ ຂໍພຣະອົງຊົງຊ່ອຍຂ້າພຣະອົງໃຫ້ພົ້ນພັຍດ້ວຍ
2 ຂໍຊົງຟັງສຽງທູນຂໍຂອງຂ້າພຣະອົງ ແລະຊົງຊ່ອຍໃຫ້ຂ້າພຣະອົງພົ້ນພັຍໄວໆ ຂໍພຣະອົງຊົງເປັນທີ່ເພິ່ງແລະຄຸ້ມ
ຄອງຂ້າພຣະອົງ ຂໍພຣະອົງຊົງເປັນເຄື່ອງປ້ອງກັນຊ່ອຍຂ້າພຣະອົງໃຫ້ພົ້ນພັຍ
3 ພຣະອົງຊົງເປັນບ່ອນເພິ່ງແລະເຄື່ອງປ້ອງກັນຂ້າພຣະອົງ ຂໍຊົງຊັກຈູງແລະນຳພາຂ້າພຣະອົງດັ່ງທີ່ພຣະອົງຊົງ
ສັນຍາໄວ້

4 ຂໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນຈາກບ້ວງແຮ້ວທີ່ເຂົາຫ້າງໃສ່ຂ້າພຣະອົງ ເພາະພຣະອົງເປັນທີ່ເພິ່ງພາອາສັຍຂອງຂ້າພຣະອົງ

5 ຂ້າພຣະອົງຂໍມອບຕົວໄວ້ໃນການພິທັກຮັກສາຂອງພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຈະຕ້ອງຊ່ອຍຂ້າພຣະອົງໃຫ້ພົ້ນພັຍ ເພາະພຣະອົງຊົງເປັນພຣະເຈົ້າອົງສັດຊື່

6 ພຣະອົງຊົງກຽດຊັງຜູ້ທີ່ຂາບໄຫວ້ຮູບໂຄຣົບ ແຕ່ຂ້າພຣະອົງວາງໃຈໃນພຣະອົງ

7 ຂ້າພຣະອົງຈະຊົມຊື່ນຍິນດີ ຍ້ອນຄວາມຮັກອັນຫມັ້ນຄົງຂອງພຣະອົງ ພຣະອົງຊົງຫລຽວເຫັນຄວາມທຸກທໍຣະມານຂອງຂ້າພຣະອົງ ພຣະອົງຊົງຮູ້ຈັກຄວາມທຸກລໍາບາກຂອງຂ້າພຣະອົງ

8 ພຣະອົງບໍ່ໄດ້ຊົງອະນຸຍາດໃຫ້ສັດຕຣູຊະນະຂ້າພຣະອົງ ແຕ່ຊົງຮັກສາຂ້າພຣະອົງໃຫ້ປອດພັຍ

9 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງເມດຕາກະຣຸນາຂ້າພຣະອົງດ້ວຍ ເພາະຂ້າພຣະອົງຢູ່ໃນຄວາມທຸກໃຈ ດວງຕາຂອງຂ້າພຣະອົງອິດເມື່ອຍຍ້ອນການຮ້ອງໄຫ້ເຫລືອລົ້ນ ຂ້າພຣະອົງອິດອ່ອນສຸດກໍາລັງ

10 ຄວາມເສັຽໃຈພາໃຫ້ຊີວິດຂອງຂ້າພຣະອົງສິ້ນສຸດລົງ ແລະການຮ້ອງໄຫ້ຄໍ່າຄວນພາໃຫ້ອາຍຸຂອງພຣະອົງສັ້ນເຂົ້າ ຍ້ອນຄວາມທຸກລໍາບາກ ຂ້າພຣະອົງຈຶ່ງເປັນຄົນອ່ອນແອ ແມ່ນແຕ່ກະດູກຂອງຂ້າພຣະອົງກໍຈະສູນເສັຽໄປ

11 ສັດຕຣູທັງຫລາຍຂອງຂ້າພຣະອົງຫົວຂວັນໃສ່ຂ້າພຣະອົງ ເພື່ອນບ້ານໄດ້ດູຖູກຢຽດຫຍາມຂ້າພຣະອົງ ຜູ້ທີ່ຮູ້ຈັກຂ້າພຣະອົງກໍຢ້ານກົວຂ້າພຣະອົງ ເມື່ອເຂົາເຫັນຂ້າພຣະອົງຢູ່ກາງທາງເຂົາກໍປົບຫນີ

12 ທຸກຄົນໄດ້ຫລົງລືມຂ້າພຣະອົງ ຄ້າຍກັບວ່າຂ້າພຣະອົງໄດ້ຕາຍໄປ ຂ້າພຣະອົງເປັນເຫມືອນຂອງຖິ້ມແລ້ວ

13 ຂ້າພຣະອົງໄດ້ຍິນພວກສັດຕຣູທັງຫລາຍກໍາຊຸບກັນ ສິ່ງທີ່ຫນ້າຢ້ານຕົກໃຈໄດ້ອ້ອມຮອບຂ້າພຣະອົງ ພວກສັດຕຣູໄດ້ວາງແຜນຕໍ່ສູ້ ແລະທໍາກົນອຸບາຍສັງຫານຂ້າພຣະອົງຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງເຊື່ອພຣະອົງພຣະອົງຊົງເປັນພຣະເຈົ້າຂອງຂ້າພຣະອົງ

14 ຂ້າພຣະອົງຢູ່ໃນການພິທັກຮັກສາຂອງພຣະອົງເລື້ອຍມາ ຂໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນຈາກສັດຕຣູ ແລະໃຫ້ພົ້ນຈາກຜູ້ທີ່ຄອຍເຝົ້າຮົບກວນຂ້າພຣະອົງດ້ວຍ

15 ຂ້າພຣະອົງເປັນຜູ້ຮັບໃຊ້ຂອງພຣະອົງ ຂໍຊົງຫລຽວແລເມດຕາຂ້າພຣະອົງ ຍ້ອນຄວາມຮັກອັນຫມັ້ນຄົງຂອງພຣະອົງ ຂໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນພັຍ

16 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຮ້ອງຫາພຣະອົງ ຂໍຢ່າໃຫ້ຂ້າພຣະອົງຜ່າຍແພ້ ແຕ່ຂໍໃຫ້ຄົນຊົ່ວທັງຫລາຍຜ່າຍແພ້ ແລະໃຫ້ເຂົາມິດງຽບຢູ່ໃນພິພົບຄົນຕາຍ

17 ຄົນຂີ້ຕົວະທີ່ອວດດີຈອງຫອງ ແລະເວົ້າຫມິ່ນປມາດຄົນຊອບທັມ ຈົ່ງມິດຢູ່

18 ສິ່ງທີ່ພຣະອົງຮັກສາໄວ້ສໍາລັບຜູ້ທີ່ຢໍາເກງພຣະອົງກໍປະເສີດຫລາຍ ການທີ່ພຣະອົງຊົງປົກປັກຮັກສາຜູ້ທີ່ໄວ້ວາງໃຈໃນພຣະອົງ ກໍເປັນການແປກປລາດຕໍ່ສາຍຕາຂອງທຸກໆຄົນ

19 ພຣະອົງຊົງເຊື່ອງເຂົາໄວ້ໃນທີ່ປອດພັຍ ທີ່ພຣະພັກຂອງພຣະອົງໃຫ້ພົ້ນຈາກຜູ້ທີ່ວາງແຜນອຸບາຍປອງຮ້າຍເຂົາພຣະອົງຊົງເຊື່ອງເຂົາໄວ້ໃນບ່ອນພັກອາສັຍທີ່ປອດພັຍ ເພື່ອໃຫ້ພົ້ນຈາກຄໍາຫມິ່ນປມາດຂອງສັດຕຣູຂອງເຂົາ

20 ສາທຸການແດ່ພຣະຜູ້ເປັນເຈົ້າ ເພາະພຣະອົງຊົງສໍາແດງຄວາມຮັກຫມັ້ນຄົງຂອງພຣະອົງ ແກ່ຂ້າພຣະອົງຢ່າງອັສຈັນໃນເມືອງເຂັ້ມແຂງ

21 ຂ້າພຣະອົງຕົກໃຈກ່າວວ່າ, “ຂ້າພຣະອົງຖືກຕັດຂາດໄປພົ້ນຈາກສາຍພຣະເນດຂອງພຣະອົງແລ້ວ” ແຕ່ພຣະອົງຍັງຊົງໄດ້ຍິນຄໍາອ້ອນວອນຂອງຂ້າພຣະອົງ ເມື່ອຂ້າພຣະອົງຮ້ອງທູນຂໍຄວາມຊ່ອຍເຫລືອຈາກພຣະອົງ

22 ທຸກຄົນທີ່ໄວ້ວາງໃຈໃນພຣະຜູ້ເປັນເຈົ້າຈົ່ງຮັກພຣະອົງ ພຣະອົງຊົງຄຸ້ມຄອງຜູ້ທີ່ມີຄວາມໄວ້ວາງໃຈ ແຕ່ວ່າພຣະອົງຈະຊົງລົງໂທດຢ່າງຫນັກແກ່ຜູ້ທີ່ຈອງຫອງ

23 ທຸກຄົນທີ່ມີຄວາມຫວັງຢູ່ໃນພຣະຜູ້ເປັນເຈົ້າ ຈົ່ງມີກໍາລັງໃຈແລະກ້າຫານເທີ້ນ

## 32 ເພງສັຣເສີນບົດທີສາມສິບສອງ

### ການຍອມຜິດແລະການໃຫ້ອະພັຍ

The Joy of Forgiveness

ຂອງດາວິດ ມັສຄິລບົດນຶ່ງ

of David. A Maskil

1 ຄວາມສຸກເປັນຂອງຜູ້ທີ່ໄດ້ຮັບການໃຫ້ອະພັຍ ແລະຜູ້ທີ່ໄດ້ຮັບການຍົກໂທດ

2 ຄວາມສຸກເປັນຂອງຜູ້ທີ່ພຣະຜູ້ເປັນເຈົ້າບໍ່ໄດ້ຕໍ່ວ່າການກະທຳຜິດຂອງເຂົາ ແລະຜູ້ບໍ່ມີກົນອຸບາຍຫລອກລວງຄົນອື່ນ

3 ເມື່ອຂ້າພຣະອົງບໍ່ສາລະພາບຄວາມຜິດ ຂ້າພຣະອົງກໍໄດ້ຮັບທຸກຈົນຮ້ອງໄຫ້ຕລອດວັນ

4 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງໄດ້ຊົງລົງໂທດຂ້າພຣະອົງທັງກາງເວັນແລະກາງຄືນ ກຳລັງຂອງຂ້າພຣະອົງອ່ອນແຮງລົງເຫມືອນດັ່ງຄວາມປຽກຊຸ່ມທີ່ແຫ້ງລົງໃນຣະດູຮ້ອນ

5 ແຕ່ເມື່ອຂ້າພຣະອົງຍອມຮັບຜິດຕໍ່ພຣະອົງ ໂດຍບໍ່ໄດ້ປົກປິດຫຍັງໄວ້ ຂ້າພຣະອົງສາລະພາບທຸກຢ່າງ ແລ້ວພຣະອົງກໍຊົງອະພັຍໃນການລ່ວງລະເມີດຂອງຂ້າພຣະອົງ

6 ດັ່ງນັ້ນ ຜູ້ທີ່ຈົ່ງຮັກພັກດີຕໍ່ພຣະອົງຕ້ອງອ້ອນວອນຮ້ອງຫາພຣະອົງໃນຍາມຍາກລຳບາກ ເມື່ອນ້ຳນາກຂຶ້ນ ມັນຈະບໍ່ຖ້ວມໄປເຖິງຄົນນັ້ນ

7 ພຣະອົງຊົງເປັນບ່ອນຫລົບລີ້ຂອງຂ້າພຣະອົງ ພຣະອົງຈະຊົງຊ່ອຍຂ້າພຣະອົງໃຫ້ພົ້ນຈາກຄວາມທຸກລຳບາກ ຂ້າພຣະອົງຮ້ອງເພງດ້ວຍສຽງອັນດັງໃນການທີ່ພຣະອົງໄດ້ຊົງຊ່ອຍໃຫ້ພົ້ນພັຍ ເພາະວ່າພຣະອົງຊົງຄຸ້ມຄອງຂ້າພຣະອົງໄວ້

8 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເຮົາຈະສອນໃຫ້ເຈົ້າຮູ້ຈັກທາງທີ່ເຈົ້າຈະຕ້ອງໄປ ເຮົາຈະໃຫ້ເຈົ້າຮຽນຮູ້ ແລະເຮົາຈະຕັກເຕືອນເຈົ້າ

9 ຢ່າດື້ດ້ານດັ່ງມ້າຫລືລໍ ທີ່ບໍ່ຍອມຟັງຄວາມ ຖ້າບໍ່ເອົາເຊືອກຜູກປາກຂອງມັນ

10 ຄົນຊົ່ວຮ້າຍຈະໄດ້ຮັບຄວາມທຸກທໍຣະມານ ແຕ່ຜູ້ທີ່ເຊື່ອພຣະຜູ້ເປັນເຈົ້າຈະໄດ້ຮັບການຄຸ້ມຄອງດ້ວຍຄວາມຮັກອັນຫມັ້ນຄົງຂອງພຣະອົງ

11 ສ່ວນຜູ້ທີ່ຊອບທັມທຸກຄົນຈົ່ງຊົມຊື່ນຍິນດີ ໃນສິ່ງທີ່ພຣະອົງຊົງກະທຳ ແລະທຸກຄົນທີ່ມີຈິດໃຈຊື່ຕົງ ຈົ່ງໂຮ່ຮ້ອງຍິນດີ

## 33 ເພງສັຣເສີນ ບົດທີສາມສິບສາມ

### ສັຣເສີນຜູ້ຊົງສ້າງແລະຜູ້ຊົງດູແລຮັກສາ

The Greatness and Goodness of God

1 ທຸກຄົນທີ່ເປັນຄົນຊອບທັມ ຈົ່ງຍິນດີໃນສິ່ງທີ່ພຣະຜູ້ເປັນເຈົ້າຊົງກະທຳ ແລະທຸກຄົນທີ່ມີຈິດໃຈຊື່ຕົງ ຈົ່ງສັຣເສີນພຣະອົງ

2 ຈົ່ງຖວາຍການຂອບພຣະຄຸນແດ່ພຣະອົງດ້ວຍການດີດພິນ ຈົ່ງຮ້ອງເພງຖວາຍແກ່ພຣະອົງດ້ວຍເຄື່ອງດົນຕຣີນັ້ນ

3 ຈົ່ງຮ້ອງບົດເພງໃຫມ່ຖວາຍແດ່ພຣະອົງ ດ້ວຍການດີດພິນຢ່າງມ່ວນຊື່ນ ແລະຮ້ອງເພງດ້ວຍສຽງດັງ

4 ພຣະວາຈາຂອງພຣະຜູ້ເປັນເຈົ້າຊົງເປັນຈິງ ແລະກິຈການທຸກຢ່າງຂອງພຣະອົງຊົງເປັນທີ່ໄວ້ວາງໃຈໄດ້

5 ພຣະຜູ້ເປັນເຈົ້າຊົງຮັກຄວາມຊອບທັມ ແລະຄວາມສັດຊື່ ຄວາມຮັກອັນຫມັ້ນຄົງຂອງພຣະອົງຊົງເຕັມທົ່ວໄປໃນແຜ່ນດິນໂລກ

6 ພຣະຜູ້ເປັນເຈົ້າຊົງສ້າງຟ້າສວັນດ້ວຍພຣະດຳຣັດຂອງພຣະອົງ ພຣະອົງຊົງສ້າງຕາເວັນ ເດືອນ ແລະດາວດ້ວຍພຣະວາຈາຂອງພຣະອົງ

7 ພຣະອົງຊົງທ້ອນໂຮມເອົານ້ຳທະເລທັງຫມົດໄວ້ໃນບ່ອນດຽວ ພຣະອົງຊົງຂັງມະຫາສມຸດອັນເລິກໄວ້ໃນບ່ອນຂອງມັນ

8 ທົ່ວທັງແຜ່ນດິນໂລກ ຈົ່ງຢຳເກງພຣະຜູ້ເປັນເຈົ້າ ທຸກໆຄົນທີ່ຢູ່ໃນໂລກ ຈົ່ງຢ້ານຢຳພຣະອົງ

9 ເມື່ອພຣະອົງຊົງສັ່ງໂລກນີ້ກໍເກີດຂຶ້ນມາ ແລະທຸກໆສິ່ງປາກົດຂຶ້ນມາຕາມພຣະດຳຣັດຂອງພຣະອົງ

10 ພຣະຜູ້ເປັນເຈົ້າຊົງທຳລາຍຈຸດປະສົງຂອງຊົນຊາດຕ່າງໆ ພຣະອົງຊົງໃຫ້ແຜນການຂອງເຂົາໄຮ້ປໂຍດ

11 ແຕ່ສ່ວນແຜນການຂອງພຣະອົງນັ້ນຊົງຫມັ້ນຄົງຕລອດໄປ ແລະຄວາມປາຖນາດີຂອງພຣະອົງຊົງເປັນຢູ່ຊົ່ວນິຣັນດອນ

12 ຄວາມສຸກຈົ່ງມີແກ່ຊົນຊາດທີ່ພຣະຜູ້ເປັນເຈົ້າ ຜູ້ທີ່ພຣະອົງຊົງເລືອກໄວ້ໃຫ້ເປັນມໍຣະດົກຂອງພຣະອົງ

13 ພຣະຜູ້ເປັນເຈົ້າຊົງທອດພຣະເນດລົງມາຈາກຟ້າສວັນ ແລະຊົງຫລຽວເຫັນມະນຸດທຸກຄົນ

14 ຢູ່ທີ່ນັ້ນ ພຣະອົງຊົງປົກຄອງ ແລະເບິ່ງແຍງທຸກໆຄົນທີ່ຢູ່ເທິງແຜ່ນດິນໂລກ

15 ພຣະອົງຊົງປະກອບຄວາມນຶກຄິດທັງຫລາຍຂອງເຂົາ ແລະຊົງຮູ້ຈັກທຸກໆສິ່ງທີ່ເຂົາເຮັດ

16 ເຈົ້າຊີວິດບໍ່ສາມາດຊະນະດ້ວຍກຳລັງທະຫານໄດ້ ແລະທະຫານກໍບໍ່ສາມາດຊະນະຍ້ອນກຳລັງຂອງຕົນໄດ້

17 ມ້າເສິກໃຊ້ເອົາໄຊຊະນະໃນການຮົບບໍ່ໄດ້ ກຳລັງອັນແຮງກ້າຂອງມັນກໍຊ່ອຍໃຫ້ພົ້ນບໍ່ໄດ້

18 ພຣະຜູ້ເປັນເຈົ້າເຝົ້າເບິ່ງແຍງຜູ້ທີ່ຢ້ານຢຳພຣະອົງ ແລະຜູ້ທີ່ເຊື່ອໃນຄວາມຮັກອັນຫມັ້ນຄົງຂອງພຣະອົງ

19 ພຣະອົງຊົງຊ່ອຍເຂົາໃຫ້ພົ້ນຈາກຄວາມຕາຍ ແລະຊົງຄຸ້ມຄອງໃຫ້ເຂົາມີຊີວິດຢູ່ຕໍ່ໄປໃນເວລາອຶດຢາກ

20 ຈິດວິນຍານຂອງເຮົາທັງຫລາຍລໍຄອຍພຣະຜູ້ເປັນເຈົ້າ ພຣະອົງຊົງເປັນຄວາມອຸປຖັມແລະເປັນໂລ່ຂອງເຮົາ

21 ຈິດໃຈຂອງເຮົາທັງຫລາຍຍິນດີນຳພຣະອົງ ແລະເຊື່ອໄວ້ວາງໃຈໃນພຣະນາມອັນບໍຣິສຸດຂອງພຣະອົງ

22 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍໃຫ້ຄວາມຮັກອັນຫມັ້ນຄົງຂອງພຣະອົງຊົງສະຖິດຢູ່ກັບພວກຂ້າພຣະອົງຜູ້ໄດ້ຝາກຄວາມຫວັງໄວ້ກັບພຣະອົງ

## 34 ເພງສັຣເສີນ ບົດທີສາມສິບສີ່

### ການສັຣເສີນຄວາມດີຂອງພຣະເຈົ້າ

Praise for Deliverance from Trouble

ຂອງດາວິດ ເທື່ອທ່ານທຳເປັນບ້າຢູ່ຕໍ່ຫນ້າ ອາບີເມເລກ ພຣະອົງຈຶ່ງຂັບໄລ່ທ່ານອອກໄປເສັຽ ແລະທ່ານກໍໄປ

Of David, When he feigned madness before Abimelech, So that he drove him out, and he went away.

1 ຂ້າພຣະອົງຈະຂອບພຣະຄຸນພຣະຜູ້ເປັນເຈົ້າທຸກເວລາ ຂ້າພຣະອົງຈະບໍ່ເຊົາສັຣເສີນພຣະອົງຈັກເທື່ອ

2 ຂ້າພຣະອົງຈະສັຣເສີນໃນສິ່ງທີ່ພຣະອົງຊົງກະທຳ ຂໍໃຫ້ທຸກໆຄົນທີ່ຖືກຂົ່ມເຫັງຟັງເອົາແລະຍິນດີ

3 ຈົ່ງພາກັນປະກາດຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ ຂໍໃຫ້ເຮົາພ້ອມກັນສັຣເສີນພຣະນາມຂອງພຣະອົງ

4 ຂ້າພຣະອົງໄດ້ອ້ອນວອນຫາພຣະຜູ້ເປັນເຈົ້າ ແລະພຣະອົງຊົງຕອບຂ້າພຣະອົງ ພຣະອົງຊົງໃຫ້ຄວາມຢ້ານກົວຂອງຂ້າພຣະອົງຫມົດໄປ

5 ຜູ້ທີ່ຖືກຂົ່ມເຫັງໄດ້ມາເບິ່ງພຣະອົງແລະຍິນດີ ເຂົາຈະບໍ່ສູນເສັຽຄວາມຫວັງຈັກເທື່ອ

6 ຜູ້ທີ່ຕ້ອງການຄວາມຊ່ອຍເຫລືອຮ້ອງຫາພຣະອົງ ພຣະອົງຊົງຊ່ອຍເຂົາ ພຣະອົງຊົງຊ່ອຍເຂົາໃຫ້ພົ້ນຈາກຄວາມທຸກລຳບາກນາໆປະການ

7 ທູດຂອງພຣະຜູ້ເປັນເຈົ້າໄດ້ຮັກສາຜູ້ທີ່ຢ້ານຢຳພຣະອົງ ແລະຊ່ອຍຊີວິດຂອງເຂົາໃຫ້ພົ້ນຈາກອັນຕະລາຍ

8 ພວກທ່ານຈະພົບດ້ວຍຕົນເອງວ່າພຣະຜູ້ເປັນເຈົ້າຊົງດີພຽງໃດ ຄວາມສຸກເປັນຂອງຜູ້ທີ່ສແວງຫາຄວາມປອດ
ພັຍໃນພຣະອົງ
9 ໄພ່ພົນທຸກຄົນຂອງພຣະຜູ້ເປັນເຈົ້າຈົ່ງຢ້ານຢຳພຣະອົງ ຜູ້ທີ່ຢຳເກງພຣະອົງຈະໄດ້ຮັບສິ່ງຕາມທີ່ເຂົາຕ້ອງການ
10 ແມ່ນແຕ່ຝູງສິງກໍຍັງຂາດອາຫານແລະອຶດຫິວ ແຕ່ວ່າຜູ້ທີ່ເຊື່ອຟັງພຣະຜູ້ເປັນເຈົ້າຈະບໍ່ຂາດສິ່ງທີ່ດີເລີຍ
11 ພວກລູກຫລານຂອງຂ້າພະເຈົ້າເອີຍ ຈົ່ງມາພີ້ແລະຟັງຂ້າພະເຈົ້າເທີ້ນ ຂ້າພະເຈົ້າຈະສອນໃຫ້ພວກເຈົ້າຢ້ານຢຳ
ພຣະຜູ້ເປັນເຈົ້າ
12 ພວກເຈົ້າມັກຊີວິດມ່ວນຊື່ນແມ່ນບໍ່? ພວກເຈົ້າປາຖນາຊີວິດຍືນຍາວແລະຄວາມສຸກບໍ່ແມ່ນບໍ່?
13 ຈົ່ງລະວັງລີ້ນຂອງເຈົ້າຈາກຄວາມຊົ່ວ ແລະຢ່າໃຫ້ຮີມຝີປາກເວົ້າເປັນອຸບາຍຫລອກລວງ
14 ຈົ່ງຫັນຫລັງໃຫ້ຄວາມຊົ່ວ ແລະສ້າງແຕ່ຄວາມດີ ຖ້າຕ້ອງການສິ່ງເຫລົ່ານີ້ ຈົ່ງປາຖນາຫາແຕ່ຄວາມສງົບສຸກ
ແລະສ້າງແຕ່ຄວາມດີຂຶ້ນ
15 ພຣະຜູ້ເປັນເຈົ້າຊົງຄອຍເຝົ້າເບິ່ງແຍງຄົນຊອບທັມ ແລະຊົງຟັງສຽງຮ້ອງຂໍຂອງເຂົາ
16 ແຕ່ພຣະອົງຊົງຫັນຫນ້າຫນີຈາກຜູ້ທີ່ທຳຊົ່ວ ດັ່ງນັ້ນ ແມ່ນແຕ່ປະຊາຊົນຂອງເຂົາກໍຈະລືມເຂົາໄປ
17 ເມື່ອຄົນຊອບທັມຮ້ອງຫາພຣະຜູ້ເປັນເຈົ້າ ພຣະອົງຊົງຟັງເຂົາ ພຣະອົງຊົງຊ່ອຍຊີວິດເຂົາໃຫ້ພົ້ນຈາກຄວາມທຸກ
ລຳບາກ
18 ພຣະຜູ້ເປັນເຈົ້າຊົງສະຖິດຢູ່ໃກ້ຜູ້ທີ່ຂາດຄວາມກ້າຫານ ແລະພຣະອົງຊົງຊ່ອຍຜູ້ທີ່ສູນເສັຽຄວາມຫວັງທຸກຢ່າງ
19 ຄົນດີທົນທຸກທໍຣະມານຕໍ່ຄວາມທຸກຍາກລຳບາກຢ່າງຫລວງຫລາຍ ແຕ່ພຣະຜູ້ເປັນເຈົ້າຊົງຊ່ອຍເຂົາໃຫ້ພົ້ນ
ຈາກສິ່ງເຫລົ່ານີ້
20 ພຣະອົງຊົງຄຸ້ມຄອງເຂົາໄວ້ທຸກຢ່າງ ແມ່ນແຕ່ກະດູກຊິ້ນນຶ່ງຂອງເຂົາກໍຈະບໍ່ຫັກແຕກໄປ
21 ຄວາມຊົ່ວຈະເຮັດໃຫ້ຄົນຊົ່ວຊ້າຕາຍໄປ ຄົນທີ່ກຽດຊັງຄົນຊອບທັມຈະຖືກໂທດ
22 ພຣະຜູ້ເປັນເຈົ້າຊົງຊ່ອຍຜູ້ຮັບໃຊ້ຂອງພຣະອົງໃຫ້ພົ້ນພັຍ ຜູ້ທີ່ຢູ່ໃນຄວາມຄຸ້ມຄອງຂອງພຣະອົງຈະພົ້ນພັຍ

## 35 ເພງສັຣເສີນ ບົດທີສາມສິບຫ້າ

**ຄຳອະທິຖານຂໍຊົງຊ່ອຍໃຫ້ພົ້ນຈາກສັດຕຣູ**

Prayer for Deliverance from Enemies

ຂອງດາວິດ

Of David

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຕໍ່ຕ້ານຜູ້ທີ່ຕໍ່ຕ້ານຂ້າພຣະອົງ ຂໍຊົງສູ້ຮົບກັບຜູ້ທີ່ຮົບກັບຂ້າພຣະອົງ
2 ຂໍຊົງຖືໂລ້ແລະດັ້ງ ແລະຊົງລຸກຂຶ້ນຊ່ອຍຂ້າພຣະອົງ
3 ຂໍຊົງຕຽມຫອກແລະຂວານຕໍ່ສູ້ຜູ້ໄລ່ຕາມຂ້າພຣະອົງ ຂໍຕັສກັບຈິດໃຈຂອງຂ້າພຣະອົງວ່າ, “ເຮົາເປັນຜູ້ຊ່ອຍກູ້
ຂອງເຈົ້າ”
4 ຜູ້ທີ່ສແວງຊີວິດຂອງຂ້າພຣະອົງນັ້ນ ຂໍໃຫ້ເຂົາໄດ້ອາຍແລະອັປຍົດ ຜູ້ທີ່ປະດິດຄວາມຊົ່ວຕໍ່ສູ້ຂ້າພຣະອົງນັ້ນ ຂໍ
ຊົງໃຫ້ເຂົາ ກັບໄປແລະອົດສູ
5 ໃຫ້ເຂົາເປັນເຫມືອນແກບຕໍ່ຫນ້າລົມມີທູດສວັນຂອງພຣະຜູ້ເປັນເຈົ້າຂັບໄລ່ຕາມເຂົາໄປ
6 ຂໍໃຫ້ທາງຂອງເຂົາມືດແລະມື່ນ ມີທູດສວັນຂອງພຣະຜູ້ເປັນເຈົ້າໄລ່ຕາມເຂົາໄປ
7 ເພາະເຂົາຫ້າງແຮ້ວໃສ່ຂ້າພຣະອົງຢ່າງບໍ່ມີເຫດຜົນ ເຂົາຂຸດຂຸມເລິກດັກເອົາຊີວິດຂ້າພຣະອົງຢ່າງບໍ່ມີເຣື່ອງ
8 ຂໍໃຫ້ຄວາມພິນາດມາເຖິງເຂົາຢ່າງບໍ່ຮູ້ຕົວ ແລະຂໍໃຫ້ຫ້າງແຮ້ວທີ່ເຂົາເຊື່ອງໄວ້ນັ້ນຕິດເຂົາເອງ ແລະໃຫ້ເຂົາຕິດ
ແຮ້ວພິນາດເອງ

9 ແລ້ວຈິດວິນຍານຂອງຂ້າພຣະອົງຈະຍິນດີໃນພຣະຜູ້ເປັນເຈົ້າ ດີໃຈຢູ່ໃນການຊ່ອຍກູ້ຂອງພຣະອົງ
10 ກະດູກທັງຫມົດຂອງຂ້າພຣະອົງຈະກ່າວວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າບໍ່ມີຜູ້ໃດເຫມືອນພຣະອົງ ພຣະອົງຊົງ
ຊ່ອຍກູ້ຄົນອ່ອນແອຈາກຜູ້ທີ່ເຂັ້ມແຂງເກີນກຳລັງຂອງເຂົາ ຄົນອ່ອນແອແລະຄົນຂັດສົນຈາກຜູ້ທີ່ປຸ້ນເຂົາ"
11 ມີພຍານປອງຮ້າຍລຸກຂຶ້ນ ເຂົາຖາມເຖິງສິ່ງທີ່ຂ້າພຣະອົງບໍ່ຮູ້
12 ເຂົາສນອງຂ້າພຣະອົງໂດຍທາງທຳຊົ່ວຕອບຄວາມດີ ຈິດໃຈຂອງຂ້າພຣະອົງກໍສິ້ນຫວັງ
13 ສ່ວນຂ້າພຣະອົງ ເມື່ອເຂົາປ່ວຍ ຂ້າພຣະອົງໃສ່ຜ້າກະສອບ ຂ້າພຣະອົງຂົ່ມໃຈຕົນເອງດ້ວຍການອົດອາຫານ
ຂ້າພຣະອົງກົ້ມຫນ້າລົງທີ່ເອິກອ້ອນວອນ
14 ຢ່າງທີ່ຂ້າພຣະອົງເປັນທຸກເພື່ອຫມູ່ ຫລືພີ່ນ້ອງຂອງຂ້າພຣະອົງ ຂ້າພຣະອົງອອກໄປເຫມືອນຄົນໄວ້ທຸກໃຫ້ແມ່
ຄໍຕົກແລະຮ້ອງໄຫ້ຄ່ຳຄວນ
15 ແຕ່ພໍຂ້າພຣະອົງສະດຸດ ເຂົາກໍຊຸມນຸມກັນຢ່າງຊອບໃຈ ເຂົາຮວບຮວມກັນມາສູ້ກັບຂ້າພຣະອົງ ນັກເລງຫົວໄມ້
ຊຶ່ງຂ້າພຣະອົງບໍ່ຮູ້ຈັກໄດ້ດ່າວ່າຂ້າພຣະອົງຢ່າງບໍ່ຢຸດຢັ້ງ
16 ເຂົາເຍາະເຍີ້ຍຂຶ້ນຢ່າງຫຍາບຄາຍ ຂົບແຂ້ວຄ້ຽວຟັນໃສ່ຂ້າພຣະອົງ
17 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຈະທອດພຣະເນດເບິ່ງອີກດົນປານໃດ ຂໍຊົງຊ່ອຍກູ້ຂ້າພຣະອົງຈາກການຮ້າຍ
ກາດຂອງເຂົາ ຊ່ອຍຊີວິດຂ້າພຣະອົງຈາກຫມູ່ສິງຫນຸ່ມ
18 ແລ້ວຂ້າພຣະອົງຈະໂມທະນາພຣະຄຸນພຣະອົງໃນທີ່ຊຸມນຸມໃຫຍ່ ຂ້າພຣະອົງຈະສັຣເສີນພຣະອົງຖ້າມກາງຄົນ
ຈຳນວນຫລາຍ
19 ຂໍຢ່າໃຫ້ຄູ່ສັດຕຣູທີ່ໄຮ້ເຫດຜົນນັ້ນມີຄວາມຍິນດີເຫນືອຂ້າພຣະອົງ ແລະຢ່າໃຫ້ບັນດາຜູ້ທີ່ກຽດຊັງຂ້າພຣະອົງ
ຢ່າງບໍ່ມີເຫດໄດ້ຫລິ່ວຕາໃຫ້ກັນ
20 ເພາະເຂົາບໍ່ເວົ້າຢ່າງສັນຕິ ແຕ່ເຂົາຄິດຖ້ອຍຄຳຫລອກລວງຕໍ່ບັນດາຜູ້ທີ່ສງົບງຽບໃນແຜ່ນດິນ
21 ເຂົາອ້າປາກກວ້າງໃສ່ຂ້າພຣະອົງ ເຂົາກ່າວວ່າ, "ຫັ້ນເດ ເຮົາເຫັນກັບຕາແລ້ວ"
22 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງທອດພຣະເນດແລ້ວ ຂໍຢ່າຊົງມິດງຽບ ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂໍຢ່າຊົງສະ
ຖິດໄກຂ້າພຣະອົງ
23 ໂຜດຕື່ນຂຶ້ນມາປົກປ້ອງ ແລະແກ້ຄະດີໃຫ້ຂ້າພຣະອົງເຖີດ ຂ້າແດ່ພຣະເຈົ້າ ອົງພຣະຜູ້ເປັນເຈົ້າຂອງຂ້າພຣະ
ອົງ ຂໍຊົງຮ້ອນພຣະທັຍ
24 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຂ້າພຣະອົງ ຂໍຊົງໃຫ້ຄວາມຍຸດຕິທັມແກ່ຂ້າ ພຣະອົງຕາມຄວາມຊອບ
ທັມຂອງພຣະອົງ ແລະຂໍຢ່າໃຫ້ເຂົາຍິນດີເຫນືອຂ້າພຣະອົງ
25 ຢ່າໃຫ້ເຂົາທັງຫລາຍເວົ້າໃນໃຈວ່າ, "ເອີ, ເຮົາໄດ້ຕາມໃຈປາຖນາຂອງເຮົາ" ຢ່າໃຫ້ເຂົາກ່າວໄດ້ວ່າ, "ເຮົາໄດ້
ກຳຈັດເຂົາແລ້ວ"
26 ຂໍໃຫ້ເຂົາໄດ້ອາຍແລະໄດ້ຄວາມຫຍຸ້ງຍາກດ້ວຍກັນ ຄືເຂົາຜູ້ຍິນດີເພາະຄວາມລຳເຄັນຂອງຂ້າພຣະອົງ ໃຫ້
ເຂົາໄດ້ຮັບຄວາມອາຍແລະຄວາມອັປຍົດ ຄືຜູ້ທີ່ເຂົາອວດຕົວສູ້ຂ້າພຣະອົງ
27 ຂໍໃຫ້ບັນດາຜູ້ທີ່ເຫັນຊອບໃນໄຊຊະນະຂອງຂ້າພຣະອົງໂຮ່ຮ້ອງແລະຍິນດີ ແລະກ່າວຢູ່ສເມີວ່າ, "ພຣະເຈົ້ານັ້ນ
ຍິ່ງໃຫຍ່ ພຣະອົງຜູ້ຊົງຊົມຊື່ນຍິນດີໃນສວັດດີພາບຂອງຜູ້ຮັບໃຊ້ຂອງພຣະອົງ"
28 ແລ້ວລີ້ນຂອງຂ້າພຣະອົງຈະບອກເລົ່າເຖິງຄວາມຊອບທັມຂອງພຣະອົງ ແລະຈະສັຣເສີນພຣະອົງສືບໄປທຸກໆ
ມື້

## 36 ເພງສັຣເສີນ ບົດທີສາມສິບຫົກ

**ຄວາມຮັກໝັ້ນຄົງຂອງພຣະເຈົ້າ**

Human Wickedness and Divine Goodness

ເຖິງຫົວໜ້ານັກຮ້ອງ ຂອງດາວິດ ຜູ້ຮັບໃຊ້ຂອງພຣະເຈົ້າ

To the leader. Of David, the servant of the Lord.

1 ການລະເມີດເວົ້າກັບຄົນອະທັມ ເລິກເຂົ້າໄປໃນຈິດໃຈຂອງເຂົາ ເຂົາບໍ່ເຫັນຈະຕ້ອງຢ້ານພຣະເຈົ້າ

2 ເພາະເຂົາຍົກຕົນເອງໃນສາຍຕາຂອງຕົນວ່າ ບໍ່ມີໃຜພົບແລະກຽດຊັງຄວາມຜິດບາບຂອງເຂົາ

3 ຄຳເວົ້າຈາກປາກຂອງເຂົາກໍຊົ່ວຮ້າຍ ແລະຫລອກລວງ ເຂົາເຊົາທີ່ຈະບໍ່ເຮັດສິ່ງທີ່ສລາດ ແລະສິ່ງທີ່ດີອີກຕໍ່ໄປ

4 ເຂົາວາງແຜນຄວາມຊົ່ວຮ້າຍໃນເວລາເຂົາຢູ່ເທິງຕຽງນອນຂອງເຂົາ ເຂົາວາງຕົວໃນທາງທີ່ບໍ່ດີ ເຂົາບໍ່ໄດ້ກຽດ
ຊັງຄວາມຊົ່ວ

5 ຂ້າແດ່ພຣະຜູ້ເປັນເຈົ້າ ຄວາມຮັກໝັ້ນຄົງຂອງພຣະອົງຢູ່ໃນຟ້າສວັນ ຄວາມສັດຊື່ຂອງພຣະອົງໄປເຖິງເມກ

6 ຄວາມຊອບທັມຂອງພຣະອົງເຫມືອນພູເຂົາທັງຫລາຍຂອງພຣະຜູ້ເປັນເຈົ້າ ຄຳພິພາກສາຂອງພຣະອົງເຫມືອນ
ທີ່ເລິກ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຊ່ອຍມະນຸດແລະສັດໃຫ້ລອດ

7 ຂ້າແດ່ພຣະຜູ້ເປັນເຈົ້າ ຄວາມຮັກໝັ້ນຄົງຂອງພຣະອົງປະເສີດຢ່າງໃດຫນໍ ລູກຫລານຂອງມະນຸດເຂົ້າລີ້ພັຍຢູ່
ໃຕ້ຮົ່ມປີກຂອງພຣະອົງ

8 ເຂົາອີ່ມດ້ວຍຄວາມອຸດົມສົມບູນແຫ່ງພຣະຜາສາດຂອງພຣະອົງ ແລະພຣະອົງປະທານໃຫ້ເຂົາດື່ມຈາກແມ່ນໍ້າ
ແຫ່ງຄວາມສຸກກະເສີມຂອງພຣະອົງ

9 ເພາະທານນໍ້າພຸແຫ່ງຊີວິດຢູ່ກັບພຣະອົງ ເຮົາເຫັນຄວາມສວ່າງໂດຍແສງສວ່າງຂອງພຣະອົງ

10 ຂໍປະທານຄວາມຮັກໝັ້ນຄົງຂອງພຣະອົງຕໍ່ໄປແກ່ຜູ້ທີ່ຮູ້ຈັກພຣະອົງ ແລະຄວາມລອດຂອງພຣະອົງແກ່ຄົນໃຈ
ທ່ຽງທັມ

11 ຂໍຢ່າໃຫ້ຕີນຂອງຄົນຈອງຫອງມາເຫນືອຂ້າພຣະອົງ ຫລືໃຫ້ມືຂອງຄົນອະທັມຂັບໄລ່ຂ້າພຣະອົງໄປ

12 ແລ້ວຄົນທຳຊົ່ວກໍລົ້ມຢູ່ທີ່ນັ້ນ ເຂົາຖືກຊຸກລົງ ລຸກຂຶ້ນອີກບໍ່ໄດ້

## 37 ເພງສັຣເສີນ ບົດທີສາມສິບເຈັດ

**ໂຊກຊະຕາຂອງຄົນຊົ່ວແລະຄົນດີ**

Exhortation to Patience and Trust

ຂອງດາວິດ

Of David.

1 ຢ່າເສັຽໃຈຍ້ອນຄົນຊົ່ວ ຢ່າອິດສາຜູ້ທີ່ໄດ້ມາໃນທາງຜິດ

2 ເຂົາຈະສູນເສັຽໄປເຫມືອນຫຍ້າທີ່ຫ່ຽວແຫ້ງລົງ ເຂົາຈະຕາຍເຫມືອນດັ່ງຕົ້ນໄມ້ທີ່ຫ່ຽວແຫ້ງ

3 ຈົ່ງເຊື່ອຟັງພຣະຜູ້ເປັນເຈົ້າ ແລະສ້າງແຕ່ຄວາມດີ ແລ້ວອາສັຍຢູ່ໃນປະເທດຂອງຕົນຢ່າງປອດພັຍ

4 ຈົ່ງຊອກຫາຄວາມສຸກໃນພຣະຜູ້ເປັນເຈົ້າ ແລະພຣະອົງຈະປະທານໃຫ້ຕາມໃຈມັກຂອງເຈົ້າ

5 ຈົ່ງຖວາຍຕົວເອງແດ່ພຣະຜູ້ເປັນເຈົ້າ ຈົ່ງເຊື່ອພຣະອົງ ແລະພຣະອົງຈະຊ່ອຍເຫລືອເຈົ້າ

6 ພຣະອົງຈະຊົງກະທຳໃຫ້ຄວາມດີຂອງເຈົ້າຊ່າລືໄປ ແລະຄວາມຊອບທັມຂອງເຈົ້າເປັນເຫມືອນດັ່ງດວງຕາເວັນ
ໃນຍາມທ່ຽງ

7 ຈົ່ງຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າຢ່າງສົງບຽບ ແລະຄອຍຖ້າກິຈການຂອງພຣະອົງດ້ວຍຄວາມອົດທົນ ຢ່າ
ຄິດຫນັກໃຈກ່ຽວກັບຜູ້ລ້ຳລວຍຮັ່ງມີ ຫລືຜູ້ທີ່ສຳເຣັດຜົນໃນແຜນການຊົ່ວຂອງເຂົາ

8 ຢ່າໃຈຮ້າຍ ຢ່າວຸ້ນວາຍ ແລະຢ່າເສັຽໃຈ ເພາະສິ່ງເຫລົ່ານີ້ບໍ່ໄດ້ເຮັດໃຫ້ເຈົ້າດີຂຶ້ນຢ່າງໃດຫມົດ

9 ສ່ວນຜູ້ທີ່ເຊື່ອພຣະຜູ້ເປັນເຈົ້າຈະຢູ່ໃນພື້ນແຜ່ນດິນຢ່າງປອດພັຍ ແຕ່ຄົນຊົ່ວຈະຖືກຂັບໄລ່ຫນີ

10 ໃນພຽງຊົ່ວລະຍະດຽວເທົ່ານັ້ນແຫລະ ຄົນຊົ່ວຮ້າຍຈະດັບສູນໄປ ພວກເຈົ້າຈະຊອກຫາເຂົາແຕ່ຈະບໍ່ພົບ

11 ແຕ່ຜູ້ທີ່ອ່ອນໂຍນຈະຢູ່ໃນແຜ່ນດິນຢ່າງປອດພັຍ ແລະເຕັມໄປດ້ວຍຄວາມສງົບສຸກ

12 ຄົນຊົ່ວວາງແຜນອຸບາຍຕໍ່ສູ້ຄົນດີ ແລະກັດແຂ້ວໃສ່ເຂົາ

13 ພຣະຜູ້ເປັນເຈົ້າຊົງຫົວຂວັນຄົນຊົ່ວຮ້າຍ ເພາະພຣະອົງຊົງຮູ້ຈັກວ່າໃນບໍ່ດົນນີ້ເຂົາຈະຖືກທຳລາຍ

14 ຄົນຊົ່ວຮ້າຍຖອດດາບຂອງເຂົາອອກ ແລະກົ່ງຄັນທະນູເພື່ອຂ້າຄົນທຸກຍາກແລະຂັດສົນຖິ້ມ ແລະຂ້າຄົນດີທັງຫລາຍໂດຍວິທີປາດຄໍ

15 ແຕ່ວ່າເຂົາຈະຖືກທຳລາຍດ້ວຍດາບຂອງເຂົາເອງ ແລະຄັນທະນູຂອງເຂົາຈະຫັກ

16 ສິ່ງຂອງເລັກນ້ອຍທີ່ຄົນດີມີຢູ່ກໍດີກວ່າຊັບສົມບັດຂອງຄົນຊົ່ວທັງຫລາຍ

17 ເພາະວ່າພຣະຜູ້ເປັນເຈົ້າຈະໃຫ້ກຳລັງຂອງຄົນຊົ່ວຮ້າຍສູນເສັຽໄປ ແຕ່ພຣະອົງຈະຊົງຄ້ຳຊູຄົນດີ

18 ພຣະຜູ້ເປັນເຈົ້າຊົງພິທັກຮັກສາຜູ້ທີ່ສັດຊື່ຕໍ່ພຣະອົງ ແລະພື້ນແຜ່ນດິນຈະເປັນຂອງເຂົາຕລອດໄປ

19 ເຂົາຈະບໍ່ທົນທຸກທໍຣະມານໃນຄາວເຄາະຮ້າຍ ເຂົາຈະມີພຽງພໍໃນຄາວອຶດຢາກ

20 ແຕ່ວ່າຄົນຊົ່ວຈະຕ້ອງຕາຍ ສັດຕຣູທັງຫລາຍຂອງພຣະຜູ້ເປັນເຈົ້າຈະດັບສູນໄປເຫມືອນດອກໄມ້ປ່າ ເຂົາຈະສູນຫາຍໄປເຫມືອນດັ່ງຄວັນໄຟ

21 ຄົນຊົ່ວຮ້າຍຂໍຢືມເງິນແຕ່ບໍ່ສົ່ງຄືນ ສ່ວນຄົນດີມີໃຈກວ້າງຂວາງແລະເອື້ອເຟື້ອອາຣີ

22 ຜູ້ທີ່ຮັບພຣະພອນຈາກພຣະຜູ້ເປັນເຈົ້າຈະອາສັຍຢູ່ໃນພື້ນແຜ່ນດິນນີ້ຢ່າງປອດພັຍ ແຕ່ວ່າຜູ້ທີ່ພຣະອົງຊົງສາບແຊ່ງຈະຖືກຂັບໄລ່ອອກໄປ

23 ພຣະຜູ້ເປັນເຈົ້າຊົງນຳພາມະນຸດຢ່າງປອດພັຍຕາມວິຖີທາງທີ່ເຂົາປະພຶດ ແລະພຣະອົງຊົງພໍພຣະທັຍນຳຄວາມປະພຶດນັ້ນ

24 ຖ້າວ່າເຂົາລົ້ມລົງ ເຂົາຈະບໍ່ຖືກຢຽບຍ່ຳ ເພາະພຣະອົງຈະຊົງຊ່ອຍເຂົາໃຫ້ລຸກຂຶ້ນໄດ້

25 ແຕ່ກ່ອນຂ້າພະເຈົ້າເປັນເດັກນ້ອຍ ດຽວນີ້ຂ້າພະເຈົ້າເຖົ້າແລ້ວ ແຕ່ຂ້າພະເຈົ້າບໍ່ເຄີຍເຫັນວ່າພຣະຜູ້ເປັນເຈົ້າປະລະຄົນດີ ຫລືໃຫ້ລູກທັງຫລາຍຂອງເຂົາຂໍທານກິນ

26 ໃນຕລອດເວລາ ຄົນດີໄດ້ໃຫ້ທານຂອງໄປລ້າໆ ແລະເອົາເງິນໃຫ້ຄົນອື່ນຢືມ ລູກທັງຫລາຍຂອງເຂົາກໍໄດ້ຮັບພຣະພອນ

27 ຈົ່ງຫັນຫລັງໃຫ້ຄວາມຊົ່ວ ແລະສ້າງແຕ່ຄວາມດີ ແລະເຈົ້າຈະອາສັຍຢູ່ໃນແຜ່ນດິນຕລອດໄປ

28 ເພາະວ່າພຣະຜູ້ເປັນເຈົ້າຊົງຮັກຄວາມຊອບທັມ ພຣະອົງບໍ່ປະລະຜູ້ທີ່ຈົ່ງຮັກພັກດີຕໍ່ພຣະອົງ ພຣະອົງຊົງຄຸ້ມຄອງເຂົາຕລອດມາ ແຕ່ວ່າເຊື້ອສາຍຂອງຄົນຊົ່ວຮ້າຍຈະຖືກຂັບໄລ່ຫນີ

29 ຄົນຊອບທັມຈະຢູ່ໃນພື້ນແຜ່ນດິນຢ່າງປອດພັຍ ແລະເປັນເຈົ້າຂອງດິນນັ້ນຕລອດໄປ

30 ຄຳເວົ້າຂອງຄົນດີເປັນຄຳເວົ້າສລາດ ເຂົາເວົ້າແຕ່ສິ່ງທີ່ຖືກຕ້ອງ

31 ພຣະທັມຂອງພຣະເຈົ້າຢູ່ໃນຈິດໃຈຂອງເຂົາ ແລະ ບາດກ້າວຂອງເຂົາຈະບໍ່ພາດ

32 ຄົນຊົ່ວຮ້າຍທັງຫລາຍພຍາຍາມຄອຍເຝົ້າຂ້າຄົນດີ

33 ແຕ່ວ່າພຣະຜູ້ເປັນເຈົ້າຈະບໍ່ຊົງປະລະໃຫ້ຄົນດີຕົກຢູ່ໃຕ້ອຳນາດຂອງສັດຕຣູ ຫລືປ່ອຍໃຫ້ເຂົາຖືກໂທດເມື່ອຖືກສານຕັດສິນ

34 ຈົ່ງມອບຄວາມຫວັງຂອງເຈົ້າໄວ້ກັບພຣະຜູ້ເປັນເຈົ້າ ແລະເຊື່ອຟັງພຣະບັນຍັດຂອງພຣະອົງ ພຣະອົງຈະຊົງປະທານເຫື່ອແຮງໃຫ້ເຈົ້າຢູ່ໃນພື້ນແຜ່ນດິນຢ່າງປອດພັຍ ແລະເຈົ້າຈະເຫັນວ່າຄົນຊົ່ວຮ້າຍຖືກໄລ່ອອກໄປ

35 ຂ້າພະເຈົ້າເຄີຍເຫັນຄົນຊົ່ວປົກຄອງແບບການຂົ່ມເຫັງ ເຂົາຖືຕົວສູງດັ່ງຕົ້ນສົນທີ່ປະເທດເລບານອນ

36 ແຕ່ຕໍ່ມາ ຂ້າພະເຈົ້າກາຍຜ່ານມາ ແຕ່ບໍ່ເຫັນຄົນນັ້ນຢູ່ຫັ້ນ ຂ້າພະເຈົ້າໄດ້ຊອກຫາເຂົາແຕ່ບໍ່ພົບ

37 ຈົ່ງພິຈາຣະນາເບິ່ງຄົນດີແລະຊອບທັມ ເພາະວ່າມະນຸດທີ່ມີຄວາມສງົບຈະມີເຊື້ອສາຍຫລາຍ

38 ແຕ່ຄົນທີ່ເຮັດຜິດຕ້ອງຖືກທຳລາຍເປັນແນ່ ເຊື້ອສາຍຂອງເຂົາຈະຖືກທຳລາຍໃຫ້ດັບສູນໄປ
39 ພຣະຜູ້ເປັນເຈົ້າຊົງຊ່ອຍມະນຸດທີ່ຊອບທັມໃຫ້ພົ້ນພັຍ ແລະໃນເວລາທຸກລຳບາກ ພຣະອົງຊົງເປັນທີ່ເພິ່ງຂອງ
ເຂົາ
40 ພຣະອົງຊົງຊ່ອຍເຫລືອເຂົາ ແລະຊ່ອຍຊີວິດຂອງເຂົາໄວ້ ທັງຊ່ອຍເຂົາໃຫ້ພົ້ນຈາກຄົນຊົ່ວຮ້າຍ ເພາະວ່າພວກ
ເຂົາມາຂໍໃຫ້ພຣະອົງຄຸ້ມຄອງ

## 38 ເພງສັຣເສີນ ບົດທີສາມສິບແປດ

### ຄຳອ້ອນວອນຂອງຜູ້ສຳນຶກຕົວທີ່ຮັບທຸກ

A Penitent Sufferer’s Plea for Healing

ເພງສັຣເສີນ ຂອງດາວິດ ເພື່ອການຖວາຍບູຊາຣະນຶກ

A Psalm of David, for the memorial offering.

1 ຂ້າແດ່ພຣະເຈົ້າ ຂໍຢ່າຊົງລົງໂທດຂ້າພຣະອົງດ້ວຍຄວາມໂກດຂອງພຣະອົງ ຫລືຕີສອນຂ້າພຣະອົງດ້ວຍພຣະ
ພິໂຣດຂອງ ພຣະອົງ
2 ເພາະລູກທະນູຂອງພຣະອົງຈົມເຂົ້າໄປໃນຂ້າພຣະອົງ ແລະພຣະຫັດຂອງພຣະອົງລົງມາເຫນືອຂ້າພຣະອົງ
3 ເພາະພຣະພິໂຣດຂອງພຣະອົງຈຶ່ງບໍ່ມີຄວາມປົກກະຕິໃນເນື້ອຫນັງຂອງຂ້າພຣະອົງ ເພາະບາບຂອງຂ້າພຣະ
ອົງຈຶ່ງບໍ່ມີອະນາມັຍໃນກະດູກຂອງຂ້າພຣະອົງ
4 ເພາະຄວາມບາບຜິດຂອງຂ້າພຣະອົງຖ້ວມຫົວ ມັນຫນັກເຫມືອນພາຣະ ຊຶ່ງຫນັກເຫລືອກຳລັງຂ້າພຣະອົງ
5 ເພາະຄວາມໂງ່ຈ້າຂອງຂ້າພຣະອົງ ບາດແຜຂອງຂ້າພຣະອົງຈຶ່ງເໝັນແລະເນົ່າເປື່ອຍ
6 ຂ້າພຣະອົງຄ້ອມລົງແລະງໍລົງຫລາຍ ຂ້າພຣະອົງເດີນເປັນທຸກຕລອດວັນ
7 ເພາະບັ້ນເອວຂອງຂ້າພຣະອົງໄຫມ້ເຕັມໄປຫມົດ ແລະບໍ່ມີຄວາມປົກກະຕິໃນເນື້ອຫນັງຂອງຂ້າພຣະອົງ
8 ຂ້າພຣະອົງຫມົດແຮງທັງຖືກບີບຍ່ອງຈົນຫມົດສະຕິໄປ ຂ້າພຣະອົງຣະທົມທຸກເພາະຄວາມເຈັບປວດໃນໃຈ
9 ຂ້າແດ່ອົງພຣະຜູ້ເປັນເຈົ້າ ຄວາມປາຖນາທັງສິ້ນຂອງຂ້າພຣະອົງກໍແຈ້ງຢູ່ກັບພຣະອົງ ການຖອນຫາຍໃຈຂອງ
ຂ້າພຣະອົງຄົງບໍ່ພົ້ນທີ່ພຣະອົງຊົງຊາບ
10 ຫົວໃຈຂອງຂ້າພຣະອົງເຕັ້ນ ແລະກຳລັງຂອງຂ້າພຣະອົງຫມົດໄປ ແລະຄວາມສວ່າງຂອງໜ່ວຍຕາຂອງຂ້າພ
ຣະອົງກໍສູນໄປຈາກຂ້າພຣະອົງເສັຽແລ້ວ
11 ມິດແລະເພື່ອນຂອງຂ້າພຣະອົງຢືນເດັ່ນຢູ່ຫ່າງຈາກພັຍວິບັດຂອງຂ້າພຣະອົງ ແລະຍາດພີ່ນ້ອງຂອງຂ້າພຣະ
ອົງຢືນຫ່າງອອກໄປໄກ
12 ແລະບັນດາຜູ້ທີ່ສແວງຫາຊີວິດຂອງຂ້າພຣະອົງໄດ້ວາງບ້ວງໄວ້ ບັນດາຜູ້ທີ່ຄິດທຳຮ້າຍຂ້າພຣະອົງເວົ້າເປັນອຸ
ບາຍ ແລະພາວະນາເຖິງການທໍຣະຍົດຢູ່ຕລອດວັນ
13 ແຕ່ຂ້າພຣະອົງເຫມືອນຄົນຫູຫນວກ ຂ້າພຣະອົງບໍ່ໄດ້ຍິນເຫມືອນຄົນໃບ້ທີ່ເວົ້າຈາບໍ່ໄດ້
14 ຂ້າພຣະອົງເຫມືອນຄົນທີ່ບໍ່ໄດ້ຍິນ ຊຶ່ງໃນປາກຂອງເຂົາບໍ່ມີການຕອບຫຍັງເລີຍ
15 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ຂ້າພຣະອົງລໍຄອຍພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຂ້າພຣະອົງ ຄືພ
ຣະອົງຜູ້ທີ່ຈະຊົງຕອບຂ້າພຣະອົງ
16 ເພາະຂ້າພຣະອົງອ້ອນວອນວ່າ, “ຂໍພຽງຢ່າໃຫ້ເຂົາຍິນດີເພາະຂ້າພຣະອົງ ຄືຜູ້ທີ່ໂອ້ອວດຕໍ່ຂ້າພຣະອົງ ເມື່ອ
ຕີນຂ້າພຣະອົງພາດໄປ”
17 ເພາະຂ້າພຣະອົງຈະລົ້ມແລ້ວ ແລະຄວາມເຈັບປວດຢູ່ກັບຂ້າພຣະອົງສເມີ
18 ຂ້າພຣະອົງສາລະພາບບາບຜິດຂອງຂ້າພຣະອົງ ຂ້າພຣະອົງເປັນທຸກເພາະບາບຂອງຂ້າພຣະອົງ

19 ບັນດາຜູ້ທີ່ເປັນສັດຕຣູຂອງຂ້າພຣະອົງກໍວ່ອງໄວແລະແຂງແຮງ ແລະຄົນທີ່ຊັງຂ້າພຣະອົງໂດຍໄຮ້ເຫດຜົນມີຫລາຍ

20 ບັນດາຜູ້ທີ່ທຳຊົ່ວແກ່ຂ້າພຣະອົງຕອບແທນຄວາມດີ ເປັນປໍຣິປັກຂອງຂ້າພຣະອົງ ເພາະຂ້າພຣະອົງຕິດຕາມຄວາມດີ

21 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຢ່າຊົງປະຖິ້ມຂ້າພຣະອົງ ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂໍຢ່າສະຖິດໄກຂ້າພຣະອົງ

22 ຂ້າແດ່ອົງພຣະຜູ້ເປັນເຈົ້າ ຄວາມລອດຂອງຂ້າພຣະອົງ ຂໍຊົງຮີບມາຊ່ອຍຂ້າພຣະອົງເຖີດ

## 39 ເພງສັຣເສີນ ບົດທີສາມສິບເກົ້າ

## ຊີວິດທີ່ບໍ່ທ່ຽງຂອງມະນຸດ

Prayer for Wisdom and Forgiveness

ເຖິງຫົວໜ້ານັກຮ້ອງ ເຖິງເຢດູທູນ ເພງສັຣເສີນ ຂອງດາວິດ

To the leader: to Jeduthun. A Psalm of David.

1 ຂ້າພະເຈົ້າວ່າ, “ຂ້າພະເຈົ້າຈະລະວັງທາງຂອງຂ້າພະເຈົ້າ ເພື່ອຂ້າພະເຈົ້າຈະບໍ່ທຳບາບດ້ວຍລີ້ນຂອງຂ້າພະເຈົ້າ ຂ້າພະເຈົ້າຈະປິດປາກຂອງຂ້າພະເຈົ້າ ເມື່ອຄົນອະທັມຢູ່ຕໍ່ໜ້າຂ້າພະເຈົ້າ

2 ຂ້າພະເຈົ້າກໍເປັນຄົນກືກງຽບໄປ ຂ້າພະເຈົ້າມິດງຽບແຕ່ບໍ່ສຳເຣັດ ຄວາມທຸກໃຈຂອງຂ້າພະເຈົ້າຮຸນແຮງຂຶ້ນ

3 ຈິດໃຈຂ້າພະເຈົ້າຮ້ອນຢູ່ພາຍໃນຂ້າພະເຈົ້າ ຂນະທີ່ຂ້າພະເຈົ້າກຳລັງຄຶດຢູ່ນັ້ນໄຟກໍລຸກ ຂ້າພະເຈົ້າຈຶ່ງເວົ້າດ້ວຍລີ້ນຂອງຂ້າພະເຈົ້າວ່າ,

4 “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍໃຫ້ຂ້າພຣະອົງຮູ້ເຖິງບັ້ນປາຍຂອງຂ້າພຣະອົງ ແລະວັນເວລາຂອງຂ້າພຣະອົງຈະຢູ່ດົນປານໃດ ຂໍໃຫ້ຂ້າພຣະອົງຮູ້ວ່າຊີວິດຂ້າພຣະອົງບໍ່ທ່ຽງຢ່າງໃດ

5 ເບິ່ງແມ່, ພຣະອົງຊົງທຳໃຫ້ວັນເວລາຂອງຂ້າພຣະອົງຍາວສອງສາມຝາມືເທົ່ານັ້ນ ຊົ່ວຊີວິດຂອງຂ້າພຣະອົງບໍ່ເທົ່າໃດເລີຍ ຕໍ່ພຣະພັກຂອງພຣະອົງ ມະນຸດທຸກຄົນດຳຣົງຢູ່ດັ່ງລົມຫັນໃຈເທົ່ານັ້ນ

6 ບໍ່ມີຫຍັງດີລື່ນເພາະເປັນພຽງແຕ່ເງົາ ມະນຸດສະສົມຊັບສິນໄວ້ ແລະບໍ່ຮູ້ວ່າໃຜຈະໄດ້ສິ່ງນັ້ນ

7 “ຂ້າແດ່ອົງພຣະຜູ້ເປັນເຈົ້າ ຄັນຊັ້ນຂ້າພຣະອົງຈະລໍຄອຍຫຍັງ ຄວາມຫວັງຂອງຂ້າພຣະອົງຢູ່ໃນພຣະອົງ

8 ຂໍຊົງຊ່ອຍກູ້ຂ້າພຣະອົງໄວ້ຈາກການລະເມີດຂອງຂ້າພຣະອົງ ຢ່າໃຫ້ຂ້າພຣະອົງເປັນຂີ້ປາກຂອງຄົນໂງ່

9 ຂ້າພຣະອົງເປັນກືກ ຂ້າພຣະອົງບໍ່ອ້າປາກ ແມ່ນພຣະອົງເອງທີ່ຊົງກະທຳເຊັ່ນນັ້ນ

10 ຂໍຢ່າຊົງລົງໂທດຂ້າພຣະອົງຕໍ່ໄປອີກເລີຍ ຂ້າພຣະອົງອ່ອນແຮງໄປດ້ວຍພຣະຫັດຂອງພຣະອົງ

11 ເມື່ອພຣະອົງຊົງຕີສອນມະນຸດດ້ວຍການຂະຫນາບເພາະເຣື່ອງບາບ ພຣະອົງຊົງເຜົາຜານສິ່ງທີ່ເຂົາຮັກເສັຽຢ່າງແມງເມົ່າ ມະນຸດທຸກຄົນເປັນແຕ່ພຽງລົມຫັນໃຈເທົ່ານັ້ນ”

12 “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງສະດັບຄຳອ້ອນວອນຂອງຂ້າພຣະອົງ ຂໍຊົງງ່ຽງພຣະກັນແກ່ການຮ້ອງທູນຂອງຂ້າພຣະອົງ ຂໍຢ່າຊົງເສີຍເມີຍຕໍ່ນ້ຳຕາຂອງຂ້າພຣະອົງ ເພາະຂ້າພຣະອົງເປັນແຕ່ແຂກທີ່ຜ່ານໄປຂອງພຣະອົງເປັນຄົນທີ່ອາສັຍຢູ່ຢ່າງບັນພະບຸຣຸດຂອງຂ້າພຣະອົງ

13 ຂໍຊົງເມີນພຣະພັກຈາກຂ້າພຣະອົງ ເພື່ອຂ້າພຣະອົງຈະເບີກບານຂຶ້ນ ກ່ອນທີ່ຂ້າພຣະອົງຈະຈາກໄປ ແລະບໍ່ມີຢູ່ອີກ”

## 40 ເພງສັຣເສີນ ບົດທີສີ່ສິບ

**ສັຣເສີນເພາະຮັບການຊ່ອຍກູ້**

Thanksgiving for Deliverance and Prayer for Help

**(ພສສ 70:1-5)**

ເຖິງຫົວໜ້ານັກຮ້ອງ ເພງສັຣເສີນ ຂອງດາວິດ

To the leader. Of David. A Psalm.

1 ຂ້າພະເຈົ້າໄດ້ພຽນລໍຄອຍພຣະເຈົ້າ ພຣະອົງຊົງກົ້ມພຣະອົງລົງຟັງຄຳຮ້ອງທູນຂອງຂ້າພະເຈົ້າ

2 ພຣະອົງຊົງດຶງຂ້າພະເຈົ້າຂຶ້ນມາຈາກຫລຸມອັນໜ້າສລົດ ອອກມາຈາກເລນຕົມ ແລ້ວວາງຕີນຂອງຂ້າພະເຈົ້າ
ລົງເທິງສີລາ ກະທຳໃຫ້ບາດກ້າວຂອງຂ້າພະເຈົ້າໝັ້ນຄົງ

3 ພຣະອົງຊົງບັນຈຸເພງໃໝ່ໃນປາກຂ້າພະເຈົ້າ ເປັນບົດເພງສັຣເສີນພຣະເຈົ້າຂອງເຮົາ ຄົນເປັນຈຳນວນຫລາຍ
ຈະເຫັນແລະຢ້ານຢຳ ແລະວາງໃຈໃນພຣະເຈົ້າ

4 ຄົນໃດທີ່ວາງໃຈໃນພຣະຜູ້ເປັນເຈົ້າກໍເປັນສຸກ ຜູ້ບໍ່ໄດ້ຫັນໄປຫາຄົນຈອງຫອງ ຫລືໄປຫາບັນດາຜູ້ທີ່ຫລົງ
ເຈີ່ນໜີໄປຕາມຄວາມເທັດ

5 ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ພຣະອົງໄດ້ຊົງທະວີ ພຣະຣາຊກິຈອັນອັສຈັນຂອງພຣະອົງ ແລະພຣະດຳຣິ
ຂອງພຣະອົງແກ່ຂ້າພຣະອົງ ບໍ່ມີຜູ້ໃດທຽບທຽມພຣະອົງ ຖ້າຂ້າພຣະອົງຈະປະກາດແລະບອກກ່າວແລ້ວກໍມີ
ຫລາຍທີ່ຈະນັບ

6 ເຄື່ອງສັຕບູຊາແລະເຄື່ອງບູຊາພຣະອົງບໍ່ຊົງປະສົງ ພຣະອົງຊົງເບີກຫູຂອງຂ້າພຣະອົງ ເຄື່ອງເຜົາບູຊາ ແລະ
ເຄື່ອງບູຊາໄຖ່ບາບ ພຣະອົງບໍ່ໄດ້ຊົງຮຽກຮ້ອງ

7 ແລ້ວຂ້າພຣະອົງທູນວ່າ, "ຂ້າພຣະອົງມາແລ້ວ ໃນໜັງສືມ້ວນກໍມີຂຽນເຣື່ອງຂ້າພຣະອົງ

8 ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງຊົມຊື່ນຍິນດີທີ່ກະທຳຕາມນ້ຳພຣະທັຍພຣະອົງ ພຣະທັມຂອງພ
ຣະອົງຢູ່ໃນຈິດໃຈຂອງຂ້າພຣະອົງ"

9 ຂ້າພຣະອົງໄດ້ບອກຂ່າວເຣື່ອງການຊ່ອຍກູ້ ທີ່ໃນຊຸມນຸມຊົນໃຫຍ່ ຂ້າແດ່ພຣະຜູ້ເປັນເຈົ້າ ຕາມທີ່ພຣະອົງຊົງຮູ້
ແລ້ວ ຂ້າ ພຣະອົງບໍ່ໄດ້ຍັບຢັ້ງຮີມຝີປາກຂອງຂ້າພະອົງໄວ້ເລີຍ

10 ຂ້າພຣະອົງບໍ່ໄດ້ອຳການອັນຊອບທັມຂອງພຣະອົງໄວ້ແຕ່ໃນຈິດໃຈຂອງຂ້າພຣະອົງ ຂ້າພຣະອົງໄດ້ເວົ້າເຖິງ
ຄວາມສັດຊື່ແລະຄວາມລອດຂອງພຣະອົງ ຂ້າພຣະອົງບໍ່ໄດ້ປິດບັງຄວາມຮັກໝັ້ນຄົງແລະຄວາມສັດຊື່ຂອງພ
ຣະອົງໄວ້ຈາກຊຸມນຸມຊົນໃຫຍ່ນັ້ນ

11 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຢ່າຊົງຍຶດໜ່ຽວ ພຣະກະຣຸນາຄຸນຂອງພຣະອົງຈາກຂ້າພຣະອົງ ຂໍໃຫ້ຄວາມ
ຮັກໝັ້ນຄົງແລະຄວາມສັດຊື່ຂອງພຣະອົງສະຫງວນຂ້າພຣະອົງໄວ້ເປັນນິດ

12 ເພາະຄວາມຊົ່ວໄດ້ລ້ອມຂ້າພຣະອົງໄວ້ຢ່າງນັບບໍ່ຖ້ວນ ຄວາມບາບຜິດຂອງຂ້າພຣະອົງຕາມທັນຂ້າພຣະອົງ
ຈົນຂ້າພຣະອົງເບິ່ງຫຍັງບໍ່ເຫັນ ມັນຫລາຍກວ່າເສັ້ນຜົມເທິງຫົວຂ້າພຣະອົງ ຈິດໃຈຂອງຂ້າພຣະອົງກໍຂາດ
ຄວາມກ້າໄປ

13 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງພໍພຣະທັຍທີ່ຈະຊ່ອຍກູ້ຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຮີບມາຊ່ອຍຂ້າພ
ຣະອົງດຽວນີ້ເຖີດ

14 ຂໍໃຫ້ຜູ້ທີ່ຫວັງຊອກສັງຫານເອົາຊີວິດຂອງຂ້າພຣະອົງໄດ້ອາຍ ແລະເກີດຄວາມວຸ້ນວາຍດ້ວຍ ຂໍໃຫ້ຜູ້ປາຖນາທີ່
ຈະໃຫ້ຂ້າ ພຣະອົງເຈັບນັ້ນຕ້ອງຫັນກັບໄປ ແລະໄດ້ຄວາມອັບອາຍ

15 ຂໍໃຫ້ຜູ້ຄົນທີ່ຫົວເຍາະເຍີ້ຍຂ້າພຣະອົງຕົກຕະລຶງ ເພາະຄວາມອາຍຂອງເຂົາ

16 ຂໍໃຫ້ບັນດາຜູ້ສແວງພຣະອົງມີຄວາມຍິນດີໃນພຣະອົງ ຂໍໃຫ້ບັນດາຜູ້ທີ່ຮັກຄວາມລອດຂອງພຣະອົງກ່າວສເມີ
ວ່າ, "ພຣະເຈົ້າຍິ່ງໃຫຍ່"

17 ຝ່າຍຂ້າພຣະອົງຍາກຈົນ ແລະຂັດສົນ ແຕ່ອົງພຣະຜູ້ເປັນເຈົ້າຊົງເອົາພຣະທັຍໃສ່ຂ້າພຣະອົງ ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂໍຢ່າຊົງລໍຊ້າ ພຣະອົງຊົງເປັນຜູ້ອຸປຖັມ ແລະເປັນຜູ້ຊ່ອຍກູ້ຂອງຂ້າພຣະອົງ

## 41 ເພງສັຣເສີນ ບົດທີສີ່ສິບເອັດ

### ຄຳອ້ອນວອນຂໍຊົງຮັກສາໂຣກ

Assurance of God’s Help and a Plea for Healing

ເຖິງຫົວໜ້ານັກຮ້ອງ ເພງສັຣເສີນ ຂອງດາວິດ

To the leader. A Psalm of David.

1 ຜູ້ໃດເອົາໃຈໃສ່ຄົນຈົນ ກໍເປັນສຸກ ພຣະເຈົ້າຊົງຊ່ອຍກູ້ເຂົາໃນວັນຍາກລຳບາກ

2 ພຣະເຈົ້າຊົງປ້ອງກັນເຂົາແລະຮັກສາເຂົາໃຫ້ມີຊີວິດໃນແຜ່ນດິນ ຄົນເອີ້ນເຂົາວ່າ ຜູ້ທີ່ໄດ້ຮັບພຣະພອນ ຂໍພຣະອົງຢ່າຊົງມອບເຂົາໄວ້ກັບສັດຕຣູຂອງເຂົາໃຫ້ທຳຕາມໃຈຊອບ

3 ເມື່ອເຂົານອນເຈັບ ພຣະຜູ້ເປັນເຈົ້າຊົງຊວ້ານຊູເຂົາ ເມື່ອເຂົາປ່ວຍໄຂ້ພຣະອົງຊົງຮັກສາຄວາມເຈັບໄຂ້ທັງສິ້ນຂອງເຂົາໃຫ້ຫາຍ

4 ສ່ວນຂ້າພຣະອົງ ຂ້າພຣະອົງທູນວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງພຣະກະຣຸນາແກ່ຂ້າພຣະອົງ ຂໍຊົງຮັກສາຂ້າພຣະອົງເພາະຂ້າພຣະອົງໄດ້ທຳບາບຕໍ່ພຣະອົງ”

5 ສັດຕຣູຂອງຂ້າພະເຈົ້າກ່າວໃສ່ຮ້າຍຂ້າພະເຈົ້າວ່າ, “ເມື່ອໃດເຂົາຈະຕາຍໄປ ຊື່ຂອງເຂົາຈະໄດ້ພິນາດ”

6 ເມື່ອຄົນນຶ່ງຄົນໃດມາເຫັນຂ້າພຣະອົງ ເຂົາເວົ້າເຣື່ອງບໍ່ຈິງໃນຂນະທີ່ໃຈຂອງເຂົາເກັບເຣື່ອງຮ້າຍ ເມື່ອເຂົາອອກໄປເຂົາກໍປ່າວຮ້ອງໄປ

7 ທຸກຄົນທີ່ຊັງຂ້າພຣະອົງ ເຂົາຊຸບຊິບກັນເຖິງເຣື່ອງຂ້າພຣະອົງ ເຂົາປອງຮ້າຍຕໍ່ຂ້າພຣະອົງ

8 ເຂົາທັງຫລາຍກ່າວວ່າ, “ມີສິ່ງຮ້າຍເຂົ້າໄປຢູ່ໃນຕົວເຂົາແລ້ວ ເຂົາຈະບໍ່ລຸກໄປຈາກທີ່ຊຶ່ງເຂົານອນອີກ”

9 ແມ້ວ່າໝູ່ເພື່ອນໃນເອີກຂອງຂ້າພຣະອົງ ຜູ້ຊຶ່ງຂ້າພຣະອົງໄວ້ວາງໃຈ ຜູ້ຮັບປະທານອາຫານຂອງຂ້າພຣະອົງກໍຍົກສົ້ນຕີນໃສ່ຂ້າພຣະອົງ”

10 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍແຕ່ພຣະອົງຊົງພຣະກະຣຸນາຕໍ່ຂ້າພຣະອົງ ຂໍຊົງຍົກຂ້າພຣະອົງຂຶ້ນ ເພື່ອຂ້າພຣະອົງຈະສນອງເຂົາ

11 ໂດຍຂໍ້ນີ້ ຂ້າພຣະອົງຮູ້ວ່າ ພຣະອົງຊົງພໍພຣະທັຍໃນຂ້າພຣະອົງ ຄືສັດຕຣູຂອງຂ້າພຣະອົງບໍ່ໄດ້ຊະນະຂ້າພຣະອົງ

12 ແຕ່ພຣະອົງຊົງຄ້ຳຊູຂ້າພຣະອົງໄວ້ ເພາະຄວາມສັຕສຸດຈະຣິດຂອງຂ້າພຣະອົງ ແລະຊົງຕັ້ງຂ້າພຣະອົງໄວ້ຕໍ່ເບື້ອງພຣະພັກພຣະອົງເປັນນິດ

13 ສາທຸການແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ ເປັນນິດໃນອະດີດ ແລະສືບໆໄປເປັນນິດ ອາແມນແລະ ອາແມນ

## BOOK II

(ພສສ 42-72)

## 42 ເພງສັຣເສີນ ບົດທີສີ່ສິບສອງ

### ການອ້ອນວອນຂອງຄົນພາກຖິ່ນ

Longing for God and His Help in Distance
ເຖິງຫົວໜ້ານັກຮ້ອງ ມັສຄິລບົດທີນຶ່ງຂອງຄນະໂກຣາ
To the leader. A Maskil of the Korahites.
1 ໂອ້ ພຣະອົງເຈົ້າຂ້າ ຂ້າພຣະອົງຕ້ອງການພຣະອົງເໝືອນກວາງນ້ອຍທີ່ຕ້ອງການສາຍນໍ້າເຢັນໆ
2 ພຣະອົງເປັນພຣະເຈົ້າອົງຊົງພຣະຊົນຢູ່ ຂ້າພຣະອົງຢາກຢູ່ໃກ້ພຣະອົງ ເວລາໃດໜໍຂ້າພຣະອົງຈຶ່ງຈະໄດ້ໄປ
ນະມັສການຕໍ່ພຣະພັກພຣະອົງ
3 ຂ້າພຣະອົງຮ້ອງໄຫ້ທັງກາງເວັນແລະກາງຄືນ ຂ້າພຣະອົງກິນເຂົ້າກັບນໍ້າຕາ ສັດຕຣູທັງຫລາຍກໍຊັກຖາມຂ້າ
ພຣະອົງຢູ່ ຕລອດເວລາວ່າ, "ພຣະເຈົ້າຂອງເຈົ້າຢູ່ໃສ?
4 ເມື່ອໃດຂ້າພຣະອົງລະນຶກເຖິງອະດີດທີ່ຜ່ານມາ ຫົວໃຈຂອງຂ້າພຣະອົງກໍຫັກສະບັ້ນລົງ ຄືຄາວເມື່ອຂ້າພຣະ
ອົງໄປສູ່ພຣະວິຫານຂອງພຣະເຈົ້າຮ່ວມກັບຝູງຊົນຊາດທັງຫລາຍ ຂ້າພຣະອົງໄດ້ນໍາພາເຂົາຍ່າງຕາມກັນໄປ
ຊຶ່ງເປັນຝູງຊົນທີ່ມີຄວາມສຸກດ້ວຍການຮ້ອງເພງແລະໂຮ່ຮ້ອງສັຣເສີນພຣະເຈົ້າ
5 ເປັນຫຍັງຂ້າພຣະອົງຈຶ່ງໂສກເສົ້າ? ເປັນຫຍັງຂ້າພຣະອົງຈຶ່ງທຸກລໍາບາກ? ຂ້າພຣະອົງຈະມອບຄວາມຫວັງ
ໄວ້ກັບພຣະເຈົ້າ ແລະຂ້າພຣະອົງຍັງຈະສັຣເສີນພຣະອົງພຣະຜູ້ຊ່ອຍໃຫ້ພົ້ນພັຍ ແລະພຣະເຈົ້າຂອງຂ້າພຣະ
ອົງ
6 ຫົວໃຈຂອງຂ້າພຣະອົງແທບຈະຂາດ ດັ່ງນັ້ນ ຂ້າພຣະອົງຈຶ່ງລະນຶກເຖິງພຣະອົງໃນຕ່າງຖິ່ນທີ່ເຂດແມ່ນໍ້າຈໍ
ແດນຢູ່ໃກ້ພູເຮີໂມນແລະພູມີຊາຣ໌ ຂ້າພຣະອົງລະນຶກເຖິງພຣະອົງ
7 ມະຫາສມຸດເລິກກໍຮ້ອງໃສ່ກັນ ແລະນໍ້າຕົກຕາດຂອງພຣະເຈົ້າສົ່ງສຽງສນັ່ນຫວັ່ນໄຫວ ມັນເປັນເໝືອນກະແສ
ຄື້ນແຫ່ງຄວາມເສັ້ຽໃຈ ຊຶ່ງໄຫລຖ້ວມວິນຍານຂອງຂ້າພຣະອົງ
8 ຂໍໃຫ້ພຣະຜູ້ເປັນເຈົ້າຊົງສະແດງຄວາມຮັກໝັ້ນຄົງທຸກໆຄືນ ຂໍໃຫ້ຂ້າພຣະອົງຮ້ອງເພງສັຣເສີນພຣະອົງທຸກໆມື້
ແລະອ້ອນວອນຫາພຣະເຈົ້າຜູ້ຊົງປະທານຊີວິດໃຫ້ແກ່ຂ້າພຣະອົງ
9 ຂ້າພຣະອົງທູນຖາມພຣະເຈົ້າຜູ້ຊົງເປັນທີ່ເພິ່ງຂອງຂ້າພຣະອົງວ່າ, "ເປັນຫຍັງພຣະອົງຊົງລືມຂ້າພຣະອົງ?
ເປັນຫຍັງຂ້າພຣະອົງຈຶ່ງຕ້ອງທົນທຸກທໍຣະມານຈາກຄວາມໂຫດຮ້າຍຂອງສັດຕຣູ?"
10 ຂ້າພຣະອົງຖືກຢຽບຍໍ່າດ້ວຍຄວາມໝິ່ນປມາດຂອງເຂົາ ດັ່ງທີ່ເຂົາໄດ້ຖາມຂ້າພຣະອົງວ່າ, "ພຣະເຈົ້າຂອງເຈົ້າ
ຢູ່ໃສ?"
11 ເປັນຫຍັງຂ້າພຣະອົງຈຶ່ງໂສກເສົ້າ? ເປັນຫຍັງຂ້າພຣະອົງຈຶ່ງທຸກລໍາບາກ ຂ້າພຣະອົງຂໍມອບຄວາມຫວັງໄວ້ກັບ
ພຣະອົງເຈົ້າ ແລະຂ້າພຣະອົງຍັງຈະສັຣເສີນພຣະອົງພຣະຜູ້ຊ່ອຍໃຫ້ພົ້ນພັຍ ແລະພຣະເຈົ້າຂອງຂ້າພຣະອົງ

## 43 ເພງສັຣເສີນ ບົດທີສີ່ສິບສາມ

### ການອ້ອນວອນຂອງຄົນພາກຖິ່ນ (ຕໍ່)

Prayer to God in Time of Trouble
1 ໂອ້ ພຣະອົງເຈົ້າຂ້າ ຂໍພຣະອົງຊົງປະກາດຄວາມບໍຣິສຸດໃຈຂອງຂ້າພຣະອົງ ແລະຊ່ອຍຂ້າພຣະອົງໃນການຕໍ່ສູ້
ຄະດີກັບຄົນອະທັມ ຂໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນຈາກການຕົວະຍົວະຂອງຄົນຊົ່ວ
2 ພຣະອົງຊົງເປັນທີ່ເພິ່ງຂອງຂ້າພຣະອົງ ເປັນຫຍັງພຣະອົງຈຶ່ງຊົງປະລະຂ້າພຣະອົງໄປ? ເປັນຫຍັງຂ້າພຣະອົງ
ຈຶ່ງຕ້ອງທົນທຸກທໍຣະມານຍ້ອນຄວາມໂຫດຮ້າຍຂອງສັດຕຣູ?
3 ຂໍຊົງສົ່ງແສງສວ່າງແລະຄວາມຈິງຂອງພຣະອົງນໍາໜ້າຂ້າພຣະອົງໄປເທີນ ແລະຊົງພາຂ້າພຣະອົງກັບຄືນສູ່
ເມືອງຊີໂອນ ພູສັກສິດຂອງພຣະອົງແລະພຣະວິຫານບ່ອນທີ່ພຣະອົງຊົງປະທັບຢູ່

4 ໂອ້ ພຣະອົງເຈົ້າຂ້າ ຂ້າພຣະອົງຈະໄປສູ່ແທ່ນບູຊາຂອງພຣະອົງ ເພາະພຣະອົງຊົງປະທານຄວາມມ່ວນຊື່ນ
ແລະຄວາມ ສຸກແກ່ຂ້າພຣະອົງ ຂ້າແດ່ພຣະເຈົ້າ ພຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງຈະດີດພິນ ແລະຮ້ອງ
ເພງສັຣເສີນພຣະອົງ
5 ເປັນຫຍັງຂ້າພຣະອົງຈຶ່ງໂສກເສົ້າ? ເປັນຫຍັງຂ້າພຣະອົງຈຶ່ງທຸກລຳບາກ? ຂ້າພຣະອົງຂໍມອບຄວາມຫວັງໄວ້
ກັບພຣະເຈົ້າ ແລະຂ້າພຣະອົງຍັງຈະສັຣເສີນພຣະອົງພຣະຜູ້ຊ່ອຍໃຫ້ພົ້ນພັຍ ແລະພຣະເຈົ້າຂອງຂ້າພຣະອົງ

## 44 ເພງສັຣເສີນ ບົດທີສີ່ສິບສີ່

**ການຊ່ອຍກູ້ທີ່ແລ້ວມາ ແລະຄວາມທຸກຍາກປັດຈຸບັນ**

ເຖິງຫົວໜ້ານັກຮ້ອງ ມັສຄີລບົດທີນຶ່ງຂອງຄນະໂກຣາ

To the leader. Of the Korahites. A Maskil

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງທັງຫລາຍໄດ້ຍິນກັບຫູຂອງຕົນ ບັນພະບຸຣຸດຂອງຂ້າພຣະອົງທັງຫລາຍເລົ່າ
ໃຫ້ຟັງ ເຖິງກິຈການຊຶ່ງພຣະອົງຊົງກະທຳໃນສມັຍຂອງເຂົາ ໃນສມັຍບູຮານນະການນັ້ນ
2 ພຣະອົງຊົງຂັບໄລ່ບັນດາປະຊາຊາດອອກໄປດ້ວຍພຣະຫັດຂອງພຣະອົງເອງ ແຕ່ພຣະອົງຊົງປູກບັນພະບຸຣຸດ
ທັງຫລາຍໄວ້ ພຣະອົງຊົງໃຫ້ຊາດທັງຫລາຍທຸກໃຈ ແຕ່ຊົງປ່ອຍບັນພະບຸຣຸດທັງຫລາຍໃຫ້ເປັນອິສຣະ
3 ເພາະເຂົາທັງຫລາຍບໍ່ໄດ້ແຜ່ນດິນນັ້ນດ້ວຍດາບຂອງເຂົາເອງ ບໍ່ແມ່ນແຂນຂອງເຂົາທີ່ມີໄຊ ແຕ່ໂດຍພຣະຫັດ
ຂວາ ແລະ ພຣະກອນຂອງພຣະອົງ ແລະໂດຍຄວາມສວ່າງແຫ່ງພຣະພັກພຣະອົງ ເພາະພຣະອົງຊົງຊົມຊື່ນ
ຍິນດີໃນເຂົາທັງຫລາຍເຫລົ່ານັ້ນ
4 ຂ້າແດ່ພຣະເຈົ້າ ພຣະອົງຊົງເປັນພຣະມະຫາກະສັດຂອງຂ້າພຣະອົງ ຂໍພຣະອົງຊົງສະຖາປະນາໄຊຊະນະໄວ້
ໃຫ້ຢາໂຄບ
5 ຂ້າພຣະອົງທັງຫລາຍດັນສັດຕຣູອອກໄປໂດຍພຣະອົງ ຂ້າພຣະອົງທັງຫລາຍຢຽບຄົນທີ່ຕໍ່ສູ້ຂ້າພຣະອົງລົງດ້ວຍ
ພຣະນາມຂອງພຣະອົງ
6 ເພາະຂ້າພຣະອົງບໍ່ວາງໃຈໃນຄັນທະນູຂອງຂ້າພຣະອົງ ແລະດາບຂອງຂ້າພຣະອົງຊ່ອຍຂ້າພຣະອົງບໍ່ໄດ້
7 ແຕ່ພຣະອົງໄດ້ຊົງຊ່ອຍຂ້າພຣະອົງທັງຫລາຍໃຫ້ລອດຈາກສັດຕຣູ ແລະຊົງໃຫ້ຜູ້ກຽດຊັງຂ້າພຣະອົງໄດ້
ຮັບຄວາມອາຍ
8 ຂ້າພຣະອົງທັງຫລາຍອວດເຖິງພຣະເຈົ້າໄດ້ເລື້ອຍໄປ ແລະຂ້າພຣະອົງທັງຫລາຍຈະຖວາຍໂມທະນາຂອບພ
ຣະຄຸນພຣະນາມຂອງພຣະອົງເປັນນິດ
9 ແຕ່ພຣະອົງຍັງຊົງປະຖິ້ມຂ້າພຣະອົງທັງຫລາຍເສັຽ ແລະໃຫ້ຂ້າພຣະອົງໄດ້ຮັບຄວາມອັປຍົດ ແລະບໍ່ໄດ້ສະ
ເດັດອອກໄປກັບກອງທັບຂອງຂ້າພຣະອົງທັງຫລາຍ
10 ພຣະອົງຊົງກະທຳໃຫ້ຂ້າພຣະອົງທັງຫລາຍຖອຍກັບຈາກຄູ່ສັດຕຣູ ແລະຄົນທີ່ກຽດຊັງຂ້າພຣະອົງທັງຫລາຍກໍ
ໄດ້ຍຶດ ສິ່ງຂອງໄປ
11 ພຣະອົງຊົງກະທຳໃຫ້ຂ້າພຣະອົງທັງຫລາຍເປັນດັ່ງແກະທີ່ຈະເອົາໄປກິນ ແລະຊົງກະຈາຍຂ້າພຣະອົງທັງ
ຫລາຍໃຫ້ໄປຢູ່ຖ້າມກາງບັນດາປະຊາຊາດ
12 ພຣະອົງຊົງຂາຍໄພ່ພົນຂອງພຣະອົງຢ່າງຖືກໆ ຄືກັບວ່າເຂົາມີຄ່າພຽງເລັກນ້ອຍ
13 ພຣະອົງຊົງກະທຳໃຫ້ຂ້າພຣະອົງເປັນຂີ້ປາກຂອງເພື່ອນບ້ານ ເປັນທີ່ເຍາະເຍີ້ຍແລະດູຫມິ່ນແກ່ຜູ້ທີ່ຢູ່ຮອບຂ້າພ
ຣະອົງ
14 ພຣະອົງຊົງກະທຳໃຫ້ຂ້າພຣະອົງເປັນຂີ້ປາກຖ້າມກາງບັນດາປະຊາດຊາດ ເປັນທີ່ຫົວຂວັນຖ້າມກາງຊາດທັງ
ຫລາຍ

15 ຄວາມອັປຍົດອົດສູຢູ່ທາງໜ້າຂ້າພຣະອົງຕລອດວັນ ແລະຄວາມອັບອາຍຄຸມໜ້າຂ້າພຣະອົງ
16 ເນື່ອງດ້ວຍຄຳເວົ້າຂອງຄົນເຍາະເຍີ້ຍ ແລະຄົນປ້ອຍດ່າ ເນື່ອງດ້ວຍສັດຕຣູແລະຜູ້ແກ້ແຄ້ນ
17 ສິ່ງທັງປວງນີ້ເກີດແກ່ຂ້າພຣະອົງທັງຫລາຍ ແມ້ວ່າຂ້າພະອົງບໍ່ລືມພຣະອົງ ຫລືທຸຈຣິດຕໍ່ຄຳໝັ້ນສັນຍາຂອງພຣະອົງ
18 ຈິດໃຈຂອງຂ້າພຣະອົງທັງຫລາຍກໍບໍ່ໄດ້ຫັນກັບ ບາດກ້າວຂອງຂ້າພຣະອົງທັງຫລາຍບໍ່ໄດ້ແຍກຈາກທາງຂອງພຣະອົງ
19 ພຣະອົງຍັງຊົງໃຫ້ຂ້າພຣະອົງທັງຫລາຍແຫລກເຫລວໃນທີ່ຂອງໝາປ່າ ແລະຄຸມຂ້າພຣະອົງທັງຫລາຍໄວ້ດ້ວຍເງົາມັດຈຸຣາດ
20 ຖ້າເຮົາໄດ້ລືມພຣະນາມພຣະເຈົ້າຂອງເຮົາ ຫລືນົບມືຂອງເຮົາໃຫ້ແກ່ພຣະອື່ນ
21 ພຣະເຈົ້າຈະບໍ່ຊົງຮູ້ເຣື່ອງນີ້ຫລື ເພາະພຣະອົງຊົງຮູ້ຄວາມເລິກລັບຂອງຈິດໃຈ
22 ເພາະເຫັນແກ່ພຣະອົງ ຂ້າພຣະອົງທັງຫລາຍຖືກຂ້າຕລອດວັນ ແລະນັບວ່າເປັນແກະສຳລັບເອົາໄປຂ້າ
23 ຂໍຊົງຕື່ນເຖີດ ພຣະຜູ້ເປັນເຈົ້າຂ້າ ເປັນຫຍັງພຣະອົງບັນທົມຢູ່? ຂໍຊົງຕື່ນເຖີດ ຂໍຢ່າປະຖິ້ມຂ້າພຣະອົງເສັຽຕລອດການ
24 ເຫດໃດພຣະອົງຊົງເຊື່ອງພຣະພັກຂອງພຣະອົງ ເຫດໃດພຣະອົງຊົງລືມການທີ່ຂ້າພຣະອົງທັງຫລາຍທຸກຍາກແລະຖືກບີບບັງຄັບເສັຽ
25 ເພາະຈິດວິນຍານຂ້າພຣະອົງທັງຫລາຍໂນ້ມເຖິງຂີ້ດິນ ຮ່າງກາຍຂອງຂ້າພຣະອົງທັງຫລາຍເກາະຕິດດິນ
26 ລຸກຂຶ້ນເຖີດພຣະເຈົ້າຂ້າ ຂໍສະເດັດມາຊ່ອຍຂ້າພຣະອົງທັງຫລາຍ ຂໍຊົງຊ່ອຍກູ້ຂ້າພຣະອົງເພື່ອເຫັນແກ່ຄວາມຮັກໝັ້ນຄົງຂອງພຣະອົງ

## 45 ເພງສັຣເສີນ ບົດທີສີ່ສິບຫ້າ

### ບົດເພງໃນພຣະຣາຊພິທີສົມຣົດ

Ode for a Royal Wedding

ເຖິງຫົວໜ້ານັກຮ້ອງ ຕາມທຳນອງພລັບພຶງມັສກິລບົດທີນຶ່ງຂອງຄນະໂກຣາ ເພງຮັກ

To the leader: according to Lilies. Of the Korahites. A Maskil. A Love song

1 ຈິດໃຈຂອງຂ້າພະເຈົ້າລົ້ນໄຫລດ້ວຍແນວຄິດດີ ຂ້າພະເຈົ້າເລົ່າບົດປະພັນຂອງຂ້າພະເຈົ້າຖວາຍພຣະຣາຊາ ລີ້ນຂອງຂ້າພະເຈົ້າເໝືອນປາກໄກ່ຂອງນັກປະພັນທີ່ຊຳນານ
2 ພຣະອົງທ່ານງາມເລີດຍິ່ງກວ່າບຸດຂອງມະນຸດ ພຣະຄຸນຫລັ່ງລົງເທິງຣິມຝີປາກຂອງພຣະອົງທ່ານ ເພາະສະນັ້ນພຣະເຈົ້າຊົງອວຍພຣະພອນພຣະອົງທ່ານຕລອດການ
3 ຂ້າແຕ່ອົງຜູ້ຊົງມະຫິດທິຣິດ ຂໍຊົງຂັດກະບີ່ໄວ້ທີ່ແອວຂອງພຣະອົງທ່ານ ໂດຍພຣະສະງ່າ ແລະຄວາມສູງສົ່ງຂອງພຣະອົງທ່ານ
4 ຂໍຊົງຂີ່ມ້າຢ່າງສະງ່າຜ່າເຜີຍສະເດັດໄປຢ່າງມີຊັຍ ເພື່ອເຫັນແກ່ຄວາມຈິງ ຄວາມອ່ອນສຸພາບແລະຄວາມຊອບທັມ ໃຫ້ພຣະຫັດຂວາຂອງພຣະອົງທ່ານສອນກິຈກັມອັນໜ້າຢ້ານຢຳແກ່ພຣະອົງທ່ານ
5 ລູກທະນູຂອງພຣະອົງທ່ານກໍຄົມຢູ່ໃນຈິດໃຈຂອງສັດຕຣູຂອງຣາຊາ ຊົນຊາດທັງຫລາຍລົ້ມຢູ່ໃຕ້ພຣະອົງທ່ານ
6 ພຣະເຈົ້າຂ້າ ພຣະທີ່ນັ່ງຂອງພຣະອົງດຳຣົງເປັນນິດ ແລະເປັນນິດ ຣາຊທານພຣະກອນເປັນທານພຣະກອນທ່ຽງທັມ
7 ພຣະອົງຊົງຮັກຄວາມຊອບທັມ ແລະຊົງກຽດການອະທັມ ສະນັ້ນພຣະເຈົ້າຄືພຣະເຈົ້າຂອງພຣະອົງທ່ານໄດ້ຊົງເຈີມພຣະອົງທ່ານໄວ້ດ້ວຍນ້ຳມັນແຫ່ງຄວາມຍິນດີຍິ່ງກວ່າພຣະສະຫາຍທັງປວງຂອງພຣະອົງທ່ານ

8 ເຄື່ອງສລອງຂອງພຣະອົງທ່ານກໍຫອມຟຸ້ງໄປດ້ວຍກິ່ນຢາງໄມ້ຫອມແລະກິ່ນອາໂລ ຈາກພຣະຣາຊວັງງາຊ້າງມີ
ເຄື່ອງສາຍກະທຳໃຫ້ພຣະອົງທ່ານຍິນດີ
9 ໃນຫມູ່ສະຕຣີຜູ້ມີກຽດຂອງພຣະອົງ ທ່ານມີຣາຊທິດາຂອງບັນດາກະສັດ ພຣະຣາຊີນີປະດັບທອງຄຳເມືອງໂອ
ຟີປະທັບຢູ່ຂ້າງຂວາພຣະຫັດພຣະອົງທ່ານ
10 ທິດາເອີຍ ຈົ່ງຟັງເຖີດ ແລະງ່ຽງຫູຂອງເຈົ້າລົງ ຈົ່ງລືມຊົນຊາດຂອງເຈົ້າ ແລະລືມບ້ານບິດາຂອງເຈົ້າເສັຽ
11 ແລະພຣະຣາຊາຈະຊົງປາຖນາຄວາມງາມຂອງເຈົ້າ ເນື່ອງຈາກພຣະອົງທ່ານເປັນເຈົ້ານາຍຂອງເຈົ້າ ຈົ່ງໂຄ້ງ
ລົງໃຫ້ພຣະອົງທ່ານເຖີດ
12 ທິດາຂອງເມືອງຕີເຣຈະເອົາຂອງກຳນັນມາກຳນັນເຈົ້າ ຄືເສດຖີມັ່ງຄັ່ງທີ່ສຸດຂອງປະຊາຊົນພ້ອມກັບຊັບສົມບັດ
ທຸກຢ່າງ
13 ເຈົ້າຍິງປະດັບພຣະກາຍໃນຫ້ອງຂອງພຣະນາງເຈົ້າດ້ວຍເສື້ອຜ້າຍົກທອງຄຳ
14 ເຂົານຳພຣະນາງຜູ້ຊົງເສື້ອຫລາຍສີເຂົ້າເຝົ້າພຣະຣາຊາ ແລະນຳຍິງພົມມະຈາຣີຜູ້ຕິດຕາມຄືເພື່ອນເຈົ້າສາວ
ມາຖວາຍພຣະອົງທ່ານ
15 ເຂົາທັງຫລາຍຖືກນຳໄປດ້ວຍຄວາມຊື່ນບານແລະຍິນດີ ເຂົາເຂົ້າໄປໃນພຣະຣາຊວັງ
16 ບັນດາໂອຣົດຂອງພຣະອົງທ່ານຈະແທນບັນພະບຸຣຸດຂອງພຣະອົງທ່ານ ພຣະອົງທ່ານຈະແຕ່ງຕັ້ງໃຫ້ເປັນເຈົ້າ
ທົ່ວແຜ່ນດິນໂລກທັງສິ້ນ
17 ເຮົາຈະກະທຳໃຫ້ນາມຂອງພຣະອົງທ່ານເປັນທີ່ເຊີດຊູຕລອດບັນດາຊາດພັນ ສະນັ້ນຊົນຊາດທັງຫລາຍຈະຍົກ
ຍໍພຣະອົງທ່ານເທົ່າກາລະນານ

## 46 ເພງສັຣເສີນ ບົດທີສີ່ສິບຫົກ

### ພຣະເຈົ້າຊົງສະຖິດຢູ່ກັບເຮົາ

God’s Defense of His City and People

ເຖິງຫົວຫນ້ານັກຮ້ອງ ເພງສັຣເສີນ ຂອງຄນະໂກຣາ ຕາມທຳນອງອາລາໂມທ ບົດເພງ

To the leader. Of the Korahites. According to Alamoth. A song.

1 ພຣະເຈົ້າຊົງເປັນທີ່ພັກພາອາສັຍແລະຊົງເປັນກຳລັງຂອງຂ້າພຣະອົງທັງຫລາຍໃນຍາມລຳບາກ
ພຣະອົງຊົງຕຽມພ້ອມຊ່ອຍເຫລືອສເມີ
2 ເມື່ອໂລກນີ້ຫາກສັ່ນສະເທືອນ ແລະພູທັງຫລາຍລົ້ມເຈື່ອນທະລາຍລົງໃສ່ມະຫາສະຫມຸດອັນເລິກ
3 ແມ່ນວ່ານ້ຳທະເລມີສຽງດັງສະຫນັ່ນຫວັ່ນໄຫວ ແລະພູທັງຫລາຍສັ່ນສະເທືອນຢ່າງແຮງ ພວກຂ້າພຣະອົງກໍຈະ
ບໍ່ຢ້ານ
4 ມີແມ່ນ້ຳສາຍນຶ່ງໄດ້ທຳໃຫ້ຄົນໃນພຣະນະຄອນຂອງພຣະເຈົ້າ ແລະສູ່ບ່ອນປະທັບອັນສັກສິດຂອງພຣະເຈົ້າຜູ້
ສູງສຸດໄດ້ຮັບຄວາມຍິນດີ
5 ພຣະເຈົ້າຊົງສະຖິດຢູ່ໃນນະຄອນໃດ ນະຄອນນັ້ນກໍຈະບໍ່ຖືກທຳລາຍຈັກເທື່ອ ໃນຕອນເຊົ້າໆ ພຣະອົງຈະສະ
ເດັດມາຊ່ອຍເຫລືອເມືອງນັ້ນ
6 ຊົນຊາດທັງຫລາຍຫວາດຫວັ່ນຕົກໃຈ ຣາຊອານາຈັກປັ່ນປ່ວນ ພຣະອົງຊົງສົ່ງພຣະສຸຣະສຽງອັນດັງອອກມາ
ແຜ່ນດິນໂລກກໍລະລາຍໄປ
7 ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງສະຖິດຢູ່ກັບເຮົາທັງຫລາຍ ພຣະເຈົ້າຂອງຢາໂຄບຊົງເປັນທີ່ເພິ່ງຂອງເຮົາ
8 ມາເຖີດ ມາເບິ່ງພຣະຣາຊກິດຂອງພຣະຜູ້ເປັນເຈົ້າວ່າພຣະອົງຊົງກະທຳສິ່ງອັສຈັນໃນແຜ່ນດິນໂລກຢ່າງໃດ

9 ພຣະອົງຊົງກະທຳໃຫ້ເສິກສົງຄາມໃນໂລກນີ້ສງົບລົງ ພຣະອົງຊົງຫັກຄັນທະນູທຳລາຍຫອກ ແລະເອົາແຜ່ນ
ເຫລັກຕ້ານທານໂຍນເຂົ້າກອງໄຟ
10 “ຈົ່ງມິດງຽບ ແລະຮູ້ເຖີດວ່າ ເຮົາຄືພຣະເຈົ້າ ເຮົາເປັນທີ່ຍົກຍ້ອງຖ້າມກາງປະຊາຊາດ ເຮົາເປັນທີ່ຍົກຍ້ອງໃນ
ແຜ່ນດິນໂລກ”
11 ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງສະຖິດຢູ່ກັບເຮົາທັງຫລາຍ ພຣະເຈົ້າຂອງຢາໂຄບຊົງເປັນທີ່ເພິ່ງຂອງພວກ
ເຮົາ

## 47 ເພງສັຣເສີນ ບົດທີສີ່ສິບເຈັດ

### ພຣະເຈົ້າຊົງເປັນພຣະມະຫາຣາຊາເຫນືອສາກົນພິພົບ

God’s Rule over the Nation

ເຖິງຫົວຫນ້ານັກຮ້ອງ ເພງສັຣເສີນ ຂອງຄນະໂກຣາ

To the leader. Of the Korahites. A Psalm.

1 ເບິ່ງກ່ອນ ຊົນຊາດທັງຫລາຍ ຈົ່ງຕົບມື ຈົ່ງໂຮ່ຮ້ອງຖວາຍພຣະເຈົ້າດ້ວຍສຽງໄຊໂຍ
2 ເພາະພຣະເຈົ້າອົງຜູ້ສູງສຸດ ເປັນທີ່ຫນ້າຢ້ານຢຳ ຊົງເປັນມະຫາຣາຊເຫນືອແຜ່ນດິນໂລກທັງສິ້ນ
3 ພຣະອົງຊົງປາບປາມຊົນຊາດທັງຫລາຍໃຫ້ຢູ່ພາຍໃຕ້ເຮົາ ແລະຊາວປະເທດທັງຫລາຍໃຫ້ຢູ່ພາຍໃຕ້ຕີນຂອງ
ເຮົາ
4 ພຣະອົງຊົງເລືອກມໍຣະດົກຂອງເຮົາໃຫ້ເຮົາ ເປັນສິ່ງພູມໃຈຂອງຢາໂຄບທີ່ພຣະອົງຊົງຮັກ
5 ພຣະເຈົ້າສະເດັດຂຶ້ນດ້ວຍສຽງໂຮ່ຮ້ອງ ພຣະເຈົ້າສະເດັດຂຶ້ນດ້ວຍສຽງແກ
6 ຈົ່ງຮ້ອງເພງສັຣເສີນຖວາຍພຣະເຈົ້າ ຈົ່ງຮ້ອງເພງສັຣເສີນເຖີດ ຈົ່ງຮ້ອງເພງສັຣເສີນຖວາຍພຣະມະຫາຣາຊາ
ຂອງເຮົາ ຈົ່ງຮ້ອງເພງສັຣເສີນເຖີດ
7 ເພາະພຣະເຈົ້າຊົງເປັນພຣະຣາຊາເຫນືອແຜ່ນດິນໂລກທັງສິ້ນ ຈົ່ງຮ້ອງເພງສັຣເສີນດ້ວຍບົດສັຣເສີນ
8 ພຣະເຈົ້າຊົງຄອບຄອງປະຊາຊາດທັງຫລາຍ ພຣະເຈົ້າຊົງປະທັບເທິງພຣະທີ່ນັ່ງບໍຣິສຸດຂອງພຣະອົງ
9 ບັນດາເຈົ້ານາຍຂອງຊົນຊາດທັງຫລາຍປະຊຸມກັນ ເປັນໄພ່ພົນຂອງພຣະເຈົ້າແຫ່ງອັບຣາຮາມ ເພາະບັນດາໂລ່
ຂອງແຜ່ນດິນໂລກເປັນຂອງພຣະເຈົ້າ ພຣະອົງຊົງເປັນທີ່ຍົກຍ້ອງຢ່າງສູງ

## 48 ເພງສັຣເສີນ ບົດທີສີ່ສິບແປດ

### ຄວາມງາມແລະສັກສີຂອງຊີໂອນ

The Glory and Strength of Zion

ບົດເພງ ເພງສັຣເສີນ ຂອງຄນະໂກຣາ

A song. A Psalm of the Korahites.

1 ພຣະເຈົ້ານັ້ນຍິ່ງໃຫຍ່ ແລະສົມຄວນຈະສັຣເສີນຢ່າງສູງສຸດ ໃນນະຄອນແຫ່ງພຣະເຈົ້າຂອງເຮົາ ທີ່ເທິງເນີນພູ
ສັກສິດນັ້ນ
2 ເບິ່ງຂຶ້ນໄປກໍງາມຫລາຍ ເປັນຄວາມຊື່ນບານຂອງແຜ່ນດິນໂລກທັງສິ້ນ ຄືພູຊີໂອນອຸດອນໄກ ຊຶ່ງເປັນນະຄອນ
ຂອງພຣະມະຫາຣາຊາ
3 ພາຍໃນປ້ອມຂອງນະຄອນ ພຣະເຈົ້າຊົງສຳແດງພຣະອົງວ່າເປັນປ້ອມທີ່ຫມັ້ນຄົງ
4 ບັນດາພຣະຣາຊາໄດ້ມາຊຸມນຸມກັນ ແລ້ວສະເດັດໄປນຳກັນ
5 ພໍທ່ານທັງຫລາຍເຫັນນະຄອນນັ້ນ ທ່ານກໍພາກັນຕົກໃຈ ທ່ານຢ້ານຈົນຕົວສັ່ນ ແລ້ວກໍຕື່ນຫນີໄປ
6 ຄວາມຕົກຕະລຶງຈັບໃຈທ່ານທີ່ນັ້ນ ມີຄວາມທຸກຣະທົມຢ່າງຍິງກຳລັງເກີດລູກ

7 ພຣະອົງຊົງຟາດທຳລາຍກຳປັ່ນແຫ່ງຕາຣ໌ຊິດດ້ວຍລົມຕະເວັນອອກ
8 ເຮົາໄດ້ຍິນຢ່າງໃດ ເຮົາກໍໄດ້ເຫັນຢ່າງນັ້ນ ໃນນະຄອນແຫ່ງພຣະຜູ້ເປັນເຈົ້າຈອມໂຍທາ ໃນນະຄອນແຫ່ງພ
ຣະເຈົ້າຂອງເຮົາ ຊຶ່ງພຣະເຈົ້າຊົງສະຖາປະນາໄວ້ເປັນນິດ
9 ຂ້າແດ່ພຣະເຈົ້າ ຂ້າພຣະອົງທັງຫລາຍຄຳນຶງເຖິງຄວາມຮັກໝັ້ນຄົງຂອງພຣະອົງ ໃນຖ້າມກາງພຣະວິຫານ
ຂອງພຣະອົງ
10 ຂ້າແດ່ພຣະເຈົ້າ ພຣະນາມຂອງພຣະອົງໄປເຖິງທີ່ສຸດປາຍແຜ່ນດິນໂລກຢ່າງໃດ ຄຳສັຣເສີນພຣະອົງກໍໄປເຖິງ
ຢ່າງນັ້ນ ພຣະຫັດຂວາຂອງພຣະອົງເຕັມໄປດ້ວຍຄວາມຊອບທັມ
11 ຂໍພູເຂົາຊີໂອນຈົ່ງຍິນດີ ຂໍທິດາແຫ່ງຢູດາຈົ່ງຊົມຊື່ນຍິນດີ ເພາະເຫດການພິພາກສາຂອງພຣະອົງ
12 ຈົ່ງເດີນຮອບຊີໂອນ ໄປໃຫ້ຮອບເຖີດ ຈົ່ງນັບຫໍຄອຍຂອງຊີໂອນ
13 ຈົ່ງກວດກາເບິ່ງປ້ອມປ້ອງກັນເມືອງ ເພື່ອທ່ານຈະໄດ້ບອກຄົນຊົ່ວອາຍຸຕໍ່ໄປ
14 ວ່ານີ້ຄືພຣະເຈົ້າ ຊົງເປັນພຣະເຈົ້າຂອງເຮົາສືບໄປ ພຣະອົງຈະເປັນຜູ້ນຳຂອງເຮົາເປັນນິດ

## 49 ເພງສັຣເສີນ ບົດທີສີ່ສິບເກົ້າ

### ຄວາມໂງ່ຈ້າແຫ່ງການໄວ້ວາງໃຈໃນຄວາມມັ່ງຄັ່ງ

The Folly of Trust in Riches

ເຖິງຫົວໜ້ານັກຮ້ອງ ເພງສັຣເສີນ ຂອງຄນະໂກຣາ

To the leader. Of the Korahites. A Psalm.

1 ເບິ່ງກ່ອນຊາດທັງຫລາຍ ຈົ່ງຟັງຂໍ້ຄວາມນີ້ ຊາວພິພົບທັງປວງເອີຍ, ຈົ່ງງ່ຽງຫູຟັງ
2 ທັງຜູ້ນ້ອຍຜູ້ໃຫຍ່ ທັງເສດຖີແລະຄົນຈົນເໝືອນກັນ
3 ປາກຂອງຂ້າພະເຈົ້າຈະເຜີຍປັນຍາ ການພາວະນາຂອງຈິດໃຈຂ້າພະເຈົ້າຄືຄວາມເຂົ້າໃຈ
4 ຂ້າພະເຈົ້າຈະງ່ຽງຫູຟັງສຸພາສິດ ຂ້າພະເຈົ້າຈະແກ້ປິສນາຂອງຂ້າພະເຈົ້າໃຫ້ເຂົ້າກັບສຽງພິນເຂົາຄູ່
5 ເປັນຫຍັງຂ້າພະເຈົ້າຈຶ່ງຢ້ານໃນຄາວທຸກຍາກລຳບາກ ເມື່ອຄວາມບາບຊົ່ວແຫ່ງຜູ້ຂົ່ມເຫັງລ້ອມຕົວຂ້າພະເຈົ້າ
6 ຄົນຜູ້ວາງໃຈໃນຊັບສິນຂອງຕົວ ແລະອວດອ້າງຄວາມຮັ່ງມີອັນອຸດົມຂອງຕົນ
7 ແນ່ນອນ ບໍ່ມີຄົນໃດໄຖ່ພີ່ນ້ອງຂອງຕົນໄດ້ ຫລືຖວາຍຄ່າຊີວິດຂອງເຂົາແດ່ພຣະເຈົ້າ
8 ເພາະຄ່າໄຖ່ຊີວິດຂອງເຂົານັ້ນແພງ ແລະບໍ່ເຄີຍພໍເລີຍ
9 ທີ່ເຂົາຈະມີຊີວິດເລື້ອຍໄປເປັນນິດ ແລະບໍ່ຕ້ອງເຫັນປາກແດນຜູ້ຕາຍ
10 ເຂົາຈະເຫັນວ່າ ເຖິງນັກປາດກໍຍັງຕາຍ ຄົນໂງ່ຈ້າເບົາປັນຍາກໍຕ້ອງພິນາດເໝືອນກັນ ແລະປະຊັບສິນຂອງ
ຕົນໄວ້ໃຫ້ຄົນອື່ນ
11 ຫລຸມສົບຂອງເຂົາເປັນບ້ານຂອງເຂົາເປັນນິດ ເປັນທີ່ຢູ່ຂອງເຂົາທຸກຊົ່ວຊາດພັນ ເຖິງເຂົາເຄີຍເອີ້ນທີ່ດິນຂອງ
ຕົນຕາມຊື່ຂອງຕົນ
12 ມະນຸດຈະມີຊີວິດໃນຍົດສັກຂອງຕົນບໍ່ໄດ້ ເຂົາກໍເໝືອນສັດເດັຽຣະສານທີ່ພິນາດ
13 ນີ້ຄືເຄາະຂອງບັນດາຄົນທີ່ມີຄວາມເຊື່ອໂງ່ຈ້າ ຄືທີ່ສຸດປາຍຂອງຄົນເຫລົ່ານັ້ນທີ່ພໍໃຈຢູ່ກັບສ່ວນຂອງຕົນ
14 ເຂົາຖືກກຳນົດໄວ້ໃຫ້ແກ່ແດນຜູ້ຕາຍເໝືອນແກະ ມັດຈຸຣາດຈະເປັນຜູ້ລ້ຽງເຂົາໄວ້ ຄົນທ່ຽງທັມຈະມີອຳນາດ
ເໜືອເຂົາທັງຫລາຍໃນເວລາເຊົ້າ ແລະຮູບຮ່າງຂອງເຂົາຈະເປື່ອຍສິ້ນໄປ ແດນຜູ້ຕາຍຈະເປັນບ້ານຂອງເຂົາ
15 ແຕ່ພຣະເຈົ້າຈະຊົງໄຖ່ຈິດວິນຍານຂອງຂ້າພະເຈົ້າຈາກຣິດທານຸພາບຂອງແດນຜູ້ຕາຍ ເພາະພຣະອົງຈະຊົງ
ຮັບຂ້າພະເຈົ້າໄວ້
16 ທ່ານຢ່າຢ້ານ ເມື່ອຜູ້ນຶ່ງມັ່ງມີຂຶ້ນ ເມື່ອສັກສີຂອງບ້ານຂອງເຂົາເພີ້ມຂຶ້ນ

17 ເພາະເມື່ອເຂົາຕາຍ ເຂົາຈະບໍ່ເອົາຫຍັງໄປເລີຍ ສັກສີຂອງເຂົາຈະບໍ່ລົງໄປຕາມເຂົາ
18 ເຖິງວ່າເມື່ອເຂົາເປັນຢູ່ ເຂົານັບວ່າຕົວເຂົາສຸກສະບາຍ ແລະແມ່ນວ່າເຂົາໄດ້ຮັບຄຳຍົກຍ້ອງເມື່ອເຂົາທຳຕົວເຂົາໃຫ້ຮັ່ງມີນັ້ນ
19 ເຂົາຈະໄປຢູ່ກັບພວກບັນພະບຸຣຸດຂອງເຂົາ ຜູ້ຊຶ່ງຈະບໍ່ເຫັນຄວາມສວ່າງອີກ
20 ມະນຸດຈະມີຊີວິດໃນຍົດສັກຂອງຕົນບໍ່ໄດ້ ເຂົາກໍເຫມືອນສັດເດັຽຣະສານທີ່ພິນາດ

## 50 ເພງສັຣເສີນ ບົດທີຫ້າສິບ

### ການນະມັສການອັນແທ້ຈິງ

The Acceptable Sacrifice

ເພງສັຣເສີນ ຂອງອາສາຟ

A Psalm of Asaph

1 ພຣະຜູ້ເປັນເຈົ້າອົງມີອຳນາດຍິ່ງໃຫຍ່ຊົງກ່າວໄວ້ ພຣະອົງຊົງເອີ້ນຄົນທົ່ວໂລກນີ້ ແຕ່ທິດຕາເວັນອອກເຖິງທິດຕາເວັນຕົກ
2 ພຣະອົງຊົງສ່ອງແສງສວ່າງຈາກເມືອງຊີໂອນ ຊຶ່ງເປັນເມືອງອຸດົມສົມບູນດ້ວຍຄວາມງາມ
3 ພຣະເຈົ້າຂອງເຮົາຈະບໍ່ຊົງສະເດັດມາຢ່າງມິດໆ ແຕ່ວ່າຢູ່ຊື່ພຣະພັກຂອງພຣະອົງມີແປວໄຟຮ້ອນແຮງກ້າ ແລະອ້ອມຮອບ ພຣະອົງມີລົມພະຍຸທີ່ຮ້າຍແຮງທີ່ສຸດ
4 ພຣະອົງຊົງເອີ້ນເອົາຟ້າສວັນ ແລະແຜ່ນດິນໂລກເປັນພຍານໃຫ້ເຫັນເມື່ອພຣະອົງຊົງຕັດສິນໄພ່ພົນຂອງພຣະອົງ
5 ພຣະອົງຊົງກ່າວວ່າ, “ຈົ່ງທ້ອນໂຮມຄົນທັ່ງງທັມມາຫາເຮົາ ຜູ້ກະທຳຄຳສັນຍາກັບເຮົາໂດຍການຖວາຍເຄື່ອງສັດບູຊາ”
6 ຟ້າສວັນທັງຫລາຍຮ້ອງປະກາດວ່າ, “ພຣະເຈົ້າຊົງທ່ຽງທັມ ເພາະພຣະອົງຊົງຕັດສິນໂດຍພຣະອົງເອງ
7 “ໄພ່ພົນທັງຫລາຍຂອງເຮົາຈົ່ງຟັງເທີ້ນ ເຮົາຈະກ່າວວ່າ ອິສຣາເອນເອີຍ ເຮົາຈະເປັນພຍານຕໍ່ສູ້ເຈົ້າ ເຮົາເປັນພຣະເຈົ້າຂອງເຈົ້າ
8 ເຮົາບໍ່ໄດ້ຕິຕຽນເຈົ້າຍ້ອນເຄື່ອງສັດບູຊາ ແລະການເຄື່ອງເຜົາບູຊາທີ່ເຈົ້ານຳມາໃຫ້ເຮົາເລື້ອຍໆນັ້ນ
9 ເຮົາບໍ່ຕ້ອງການງົວເຖິກຈາກເຮືອນຂອງເຈົ້າ ຫລືແບ້ເຖິກຈາກຄອກສັດຂອງເຈົ້າ
10 ເພາະວ່າສັດໃນປ່າທັງຫມົດ ພ້ອມທັງຝູງງົວຢູ່ເທິງພູພັນຫນ່ວຍເປັນຂອງເຮົາ
11 ນົກແລະປາທັງຫລາຍພ້ອມດ້ວຍທຸກສິ່ງທີ່ມີຊີວິດຢູ່ຕາມທົ່ງນາກໍເປັນຂອງເຮົາ
12 ຖ້າເຮົາຫິວເຂົ້າ ເຮົາຈະບໍ່ບອກເຈົ້າ ເພາະວ່າໂລກນີ້ພ້ອມທັງທຸກໆສິ່ງໃນໂລກນີ້ເປັນຂອງເຮົາ
13 ເຮົາກິນເນື້ອງົວເຖິກຫລື ຫລືດື່ມເລືອດແບ້ຫລື
14 ຈົ່ງຖວາຍບູຊາຂອບພຣະຄຸນພຣະເຈົ້າ ແລະຖວາຍແດ່ພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ຕາມທີ່ເຈົ້າໄດ້ສັນຍາໄວ້
15 ເວລາຖືກຄວາມທຸກລຳບາກ ຈົ່ງຮ້ອງຫາເຮົາ ເຮົາຈະຊ່ອຍເຈົ້າໃຫ້ພົ້ນ ແລະເຈົ້າຈະສັຣເສີນເຮົາ
16 ແຕ່ພຣະເຈົ້າຊົງກ່າວຕໍ່ຄົນຊົ່ວຮ້າຍວ່າ, “ເປັນຫຍັງເຈົ້າຈຶ່ງທ່ອງຂຶ້ນໃຈເອົາຂໍ້ຄຳສັ່ງຂອງເຮົາ ແລະເວົ້າເຖິງຄຳຫມັ້ນສັນຍາຂອງເຮົາ
17 ເຈົ້າປະຕິເສດບໍ່ຍອມໃຫ້ເຮົາຕິຕຽນເຈົ້າ ແລະບໍ່ຍອມຮັບເອົາຄຳສັ່ງຂອງເຮົາ
18 ເມື່ອເຈົ້າພົບເຫັນຄົນຂີ້ລັກ ເຈົ້າກໍກາຍເປັນຫມູ່ຂອງເຂົາ ແລະເຈົ້າຄົບຄ້າສະມາຄົມກັບຄົນປະພຶດຜິດປະເວນີ
19 ເຈົ້າເວົ້າແຕ່ຄວາມຊົ່ວຢູ່ເລື້ອຍໆ ແລະລີ້ນຂອງເຈົ້າປະກອບການຫລອກລວງ
20 ເຈົ້າຕຽມຫາແຕ່ເຣື່ອງໃສ່ອ້າຍນ້ອງເຈົ້າເອງ ແລະຊອກຫາຄວາມຜິດໃສ່ເຂົາ

21 ເຈົ້າໄດ້ເຮັດທຸກໆສິ່ງເຫລົ່ານີ້ ແຕ່ເຮົາບໍ່ເວົ້າຫຍັງ ດັ່ງນັ້ນ ເຈົ້າຈຶ່ງຄິດວ່າເຮົາຄິດຄືກັນກັບເຈົ້າ ດຽວນີ້ເຮົາຈະຕິ
ຕຽນເຈົ້າ ແລະນຳເອົາເຣື່ອງເຫລົ່ານີ້ມາຕໍ່ສູ້ເຈົ້າ
22 "ເຈົ້າທັງຫລາຍຜູ້ລືມພຣະເຈົ້າ ຈົ່ງພິຈາຣະນາເຣື່ອງນີ້ ເຮົາຈະທຳລາຍເຈົ້າ ແລະບໍ່ມີຜູ້ໃດຊ່ອຍເຈົາໃຫ້ພົ້ນພັຍນີ້
ໄດ້
23 ຜູ້ທີ່ຖວາຍບູຊາຂອບພຣະຄຸນ ເປັນຜູ້ທີ່ໃຫ້ກຽດແກ່ເຮົາ ແລະເຮົາຈະຊ່ອຍຄົນທັງປວງທີ່ຟັງຄວາມເຮົາໃຫ້ພົ້ນ
ຢ່າງແນ່ນອນ

## 51 ເພງສັຣເສີນ ບົດທີຫ້າສິບເອັດ

### ການອ້ອນວອນຂໍອະພັຍໂທດ

Prayer for Cleansing and Pardon

ເຖິງຫົວຫນ້ານັກຮ້ອງ ເພງສັຣເສີນຂອງດາວິດ ເມື່ອນາທານ
ຜູ້ເຜີຍພຣະວັຈນະມາເຝົ້າທ່ານ ຫລັງຈາກທີ່ທ່ານເຂົ້າຫານາງບັທເຊບາ

To the leader. A Psalm of David, when the prophet Nathan came to him after he had gone in to Bathsheba.

1 ໂອ້ ພຣະອົງເຈົ້າຂ້າ ຍ້ອນຄວາມຮັກຫມັ້ນຄົງຂອງພຣະອົງ ຂໍຊົງໂຜດເມດຕາຂ້າພຣະອົງເທີ້ນ ຍ້ອນຄວາມ
ເມດຕາອັນຍິ່ງໃຫຍ່ຂອງພຣະອົງ ຂໍຊົງປັດເປົ່າຄວາມຜິດຂອງຂ້າພຣະອົງອອກໄປດ້ວຍ
2 ຂໍຊົງຊຳຣະລ້າງຄວາມຊົ່ວຂອງຂ້າພຣະອົງໃຫ້ສູນສິ້ນໄປ ແລະທຳໃຫ້ຂ້າພຣະອົງຂາວສະອາດຈາກຄວາມຜິດ
ຂອງຂ້າພຣະອົງ
3 ຂ້າພຣະອົງຍອມຮັບເອົາຄວາມຜິດ ຂ້າພຣະອົງຮູ້ຈັກຄວາມຜິດຂອງຂ້າພຣະອົງຕລອດມາ
4 ຂ້າພຣະອົງໄດ້ທຳບາບຕໍ່ພຣະອົງ ຕໍ່ພຣະອົງເທົ່ານັ້ນ ແລະໄດ້ກະທຳສິ່ງຊົ່ວຮ້າຍຕໍ່ສາຍພຣະເນດຂອງພຣະອົງ
ສະນັ້ນ ພຣະອົງຊົງເປັນຝ່າຍຖືກຕ້ອງທີ່ຕັດສິນຂ້າພຣະອົງ
5 ຂ້າພຣະອົງຊົ່ວ ແລະເຕັມໄປດ້ວຍຄວາມຜິດຕັ້ງແຕ່ມື້ເກີດມາ
6 ຈິດໃຈທີ່ເຕັມດ້ວຍຄວາມສັດຊື່ເປັນສິ່ງທີ່ພຣະອົງຊົງພໍພຣະທັຍ ຂໍພຣະອົງຊົງໃຫ້ຈິດໃຈຂອງຂ້າພຣະອົງເຕັມ
ປ່ຽມດ້ວຍສະຕິປັນຍາຂອງພຣະອົງ
7 ຂໍຊົງປັດເຊັ່ຽຄວາມບາບຂອງຂ້າພຣະອົງອອກໄປເພື່ອຂ້າພຣະອົງຈະຂາວສະອາດສົດໃສ ຂໍພຣະອົງຊົງຊຳຣະ
ລ້າງຂ້າພຣະອົງ ແລະຂ້າພຣະອົງກໍຂາວກວ່ານວນຝ້າຍ
8 ຂໍຊົງໂຜດໃຫ້ຂ້າພຣະອົງໄດ້ຍິນສຽງອັນມ່ວນຊື່ນແລະຍິນດີ ເຖິງແມ່ນວ່າພຣະອົງໄດ້ຢຽບຢໍ່າທຳລາຍຂ້າພຣະ
ອົງກໍຕາມ ຂ້າພຣະອົງກໍຍັງຈະມີຄວາມສຸກຢູ່ອີກ
9 ຂໍພຣະອົງຢ່າຫລຽວເບິ່ງຄວາມຜິດຂອງຂ້າພຣະອົງ ແລະກຳຈັດຄວາມຊົ່ວທັງຫມົດຂອງຂ້າພຣະອົງອອກໄປ
10 ຂ້າແດ່ພຣະເຈົ້າ ຂໍຊົງສ້າງຈິດໃຈຂ້າພຣະອົງໃຫ້ບໍຣິສຸດ ຂໍພຣະອົງຊົງສວມຈິດວິນຍານທີ່ສັດຊື່ໃຫ້ແກ່ຂ້າພຣະ
ອົງ
11 ຂໍຢ່າຂັບໄລ່ຂ້າພຣະອົງຈາກພຣະພັກຂອງພຣະອົງ ແລະຢ່າຖອນເອົາພຣະວິນຍານບໍຣິສຸດຂອງພຣະອົງໄປ
ຈາກຂ້າພຣະອົງ
12 ຂໍພຣະອົງຊົງປະທານຄວາມປິຕິຍິນດີອີກ ຄືຄວາມຍິນດີທີ່ມາຈາກຄວາມຊ່ອຍໃຫ້ພົ້ນຂອງພຣະອົງ ແລະຂໍຊົງ
ກະທຳໃຫ້ຈິດວິນຍານຂອງຂ້າພຣະອົງເຊື່ອຟັງ
13 ແລ້ວຂ້າພຣະອົງຈະສອນພຣະດຳຣັດຂອງພຣະອົງແກ່ຜູ້ທີ່ທຳຜິດ ເພື່ອເຂົາຈະກັບຄືນມາຫາພຣະອົງ
14 ພຣະເຈົ້າພຣະຜູ້ຊ່ອຍຂອງຂ້າພຣະອົງ ຂໍຊົງໄວ້ຊີວິດຂ້າພຣະອົງ ແລ້ວຂ້າພຣະອົງຈະປະກາດຄວາມຊອບທັມ
ຂອງພຣະອົງດ້ວຍຄວາມຍິນດີ

15 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງເປີດຮີມສົບຂອງຂ້າພຣະອົງ ແລະປາກຂອງຂ້າພຣະອົງຈະສຳແດງການສັຣເສີນ
ພຣະອົງ
16 ເພາະພຣະອົງບໍ່ຊົງຕ້ອງການເຄື່ອງສັດຖວາຍບູຊາ ເຖິງຂ້າພຣະອົງຖວາຍເຄື່ອງເຜົາບູຊາ ພຣະອົງກໍບໍ່ຊົງຍິນດີ
ຮັບເອົາ
17 ເຄື່ອງຖວາຍບູຊາທີ່ພຣະເຈົ້າຊົງຮັບໄດ້ຄື ຈິດໃຈທີ່ຊອກຊໍ້າ ຈິດໃຈທີ່ສຳນຶກຜິດແລະຊອກຊໍ້ານັ້ນ ຂ້າແດ່ພຣະ
ເຈົ້າ ພຣະອົງບໍ່ໄດ້ຊົງດູຖູກ
18 ຂ້າແດ່ພຣະເຈົ້າ ຂໍຊົງເມດຕາແລະຊ່ອຍເຫລືອເມືອງຊີໂອນດ້ວຍ ແລະຂໍຊົງສ້າງກຳແພງເມືອງເຢຣູຊາເລັມຂຶ້ນ
ໃຫມ່
19 ແລ້ວພຣະອົງຈະຊົງຍິນດີຮັບເອົາເຄື່ອງເຜົາຖວາຍບູຊາຕ່າງໆທີ່ຖືກຕ້ອງ ແລະງົວທີ່ຖືກເຜົາຖວາຍບູຊາເທິງ
ແທ່ນບູຊາຂອງພຣະອົງ

## 52 ເພງສັຣເສີນ ບົດທີຫ້າສິບສອງ

### ຄວາມເປົ່າປໂຍດແຫ່ງຄວາມອະທັມທີ່ໂອ້ອວດ

Judgment on the Deceitful

ເຖິງຫົວໜ້ານັກຮ້ອງ ມັສຄິລບັດນຶ່ງຂອງດາວິດ ເມື່ອໂດເອກ ຄົນເອໂດມມາທູນຊາອູນວ່າ, “ດາວິດໄດ້ມາທີ່ເຮືອນອາຮີເມເລກ”

To theleader. A Maskil of David, when Doeg the Edomite came to Saul and said to him, “David has come to the house of Ahimelech.”

1 ເຈົ້າຜູ້ມີອິດທິຣິດ ເປັນຫຍັງເຈົ້າຈຶ່ງໂອ້ອວດໃນການຊົ່ວ ຄວາມຮັກໝັ້ນຄົງຂອງພຣະເຈົ້າດຳຣົງຢູ່ຕລອດວັນ
2 ລີ້ນຂອງເຈົ້າຄິດການທຳລາຍ ແລະຫລອກລວງຢ່າງມີດແຖຄົມ
3 ເຈົ້າຮັກຊົ່ວຫລາຍກວ່າດີ ແລະການມຸສາຫລາຍກວ່າເວົ້າຄວາມຈິງ
4 ເຈົ້າຮັກທຸກຄຳທີ່ທຳລາຍ ເຈົ້າຄົນມັກຕົວະມັກຕົ້ມ
5 ແຕ່ພຣະເຈົ້າຈະຊົງທຳລາຍເຈົ້າລົງເສັຽເປັນນິດພຣະອົງຈະຊົງສວຍໂອກາດແລະດຶງເຈົ້າຈາກເຕັນຂອງເຈົ້າ ພ
ຣະອົງຈະຊົງຖອນຮາກເຈົ້າເສັຽຈາກແດນຂອງຄົນເປັນ
6 ຄົນຊອບທັມຈະເຫັນແລະຢ້ານຢຳ ແລະຈະຫົວເຍາະເຍີ້ຍໃສ່ເຂົາ ແລະກ່າວວ່າ
7 “ຈົ່ງເບິ່ງບຸຣຸດຜູ້ບໍ່ໃຫ້ພຣະເຈົ້າເປັນທີ່ລີ້ພັຍຂອງຕົນ ແຕ່ໄວ້ໃຈໃນຄວາມຮັ່ງມີອັນອຸດົມຂອງເຂົາ ເຂົາເສີມກຳລັງ
ຕົວເຂົາໃນຄວາມຊົ່ວຮ້າຍຂອງເຂົາ
8 ຝ່າຍຂ້າພະເຈົ້າເປັນເຫມືອນຕົ້ນຫມາກກອກຂຽວສົດ ໃນພຣະຜາສາດຂອງພຣະເຈົ້າ ຂ້າພະເຈົ້າວາງໃຈໃນ
ຄວາມຮັກໝັ້ນຄົງຂອງພຣະເຈົ້າຕລອດໄປ
9 ຂ້າພຣະອົງຈະໂມທະນາພຣະຄຸນພຣະອົງເປັນນິດ ເພາະພຣະອົງໄດ້ຊົງກະທຳເຊັ່ນນັ້ນ ຂ້າພຣະອົງຈະຫວັງໃຈ
ໃນພຣະນາມຂອງພຣະອົງ ເພາະເປັນພຣະນາມປະເສີດຕໍ່ໜ້າໄພ່ພົນຂອງພຣະອົງ

## 53 ເພງສັຣເສີນ ບົດທີຫ້າສິບສາມ

### ຄວາມໂງ່ແລະຄວາມອະທັມຂອງມະນຸດ

Denunciation of Godlessness

**(ພສສ 14:1-7)**

ເຖິງຫົວໜ້ານັກຮ້ອງ ຕາມທຳນອງມະຮາລັທ ມັສຄິລບົດນຶ່ງ ຂອງດາວິດ

To the leader: according to Mahalath.  A Maskil of David.

1 ຄົນໂງ່ຈ້າເວົ້າຢູ່ໃນໃຈຂອງຕົນວ່າ, "ບໍ່ມີພຣະເຈົ້າ" ເຂົາທັງຫລາຍກໍທຳຕົນໃຫ້ຊົ່ວລົງ ກະທຳຄວາມຜິດບາບທີ່
ໜ້າກຽດໜ້າຊັງ ບໍ່ມີຈັກຄົນດຽວທີ່ກະທຳດີ"
2 ພຣະເຈົ້າຊົງຫລຽວລົງມາຈາກຟ້າສວັນ ເບິ່ງບຸດຊາຍທັງຫລາຍຂອງມະນຸດວ່າຈະມີຄົນໃດແດ່ທີ່ສລາດທີ່ຊອກ
ຫາພຣະເຈົ້າ
3 ເຂົາທັງຫລາຍກໍທຳຜິດເໝືອນກັນໝົດ ບໍ່ມີຈັກຄົນດຽວທີ່ກະທຳດີ ບໍ່ມີເລີຍ
4 ເຫລົ່າຄົນທີ່ກະທຳຊົ່ວບໍ່ຮູ້ຫລື ຄືຜູ້ທີ່ກິນປະຊາກອນຂອງເຮົາຢ່າງກິນເຂົ້າຈີ່ ແລະບໍ່ຮ້ອງທູນພຣະເຈົ້າ
5 ເຂົາທັງຫລາຍຈະຢູ່ທີ່ນັ້ນຢ່າງຢ້ານກົວຫລາຍເໝືອນກັບວ່າເຂົາບໍ່ເຄີຍເປັນມາກ່ອນ ເພາະພຣະເຈົ້າຈະຊົງກະ
ຈາຍກະດູກຂອງຄົນທີ່ຕັ້ງຄ້າຍສູ້ເຈົ້າ ພຣະອົງຊົງໃຫ້ເຂົາທັງຫລາຍໄດ້ອາຍ ເພາະພຣະເຈົ້າຊົງປະຕິເສດເຂົາ
6 ຂໍຊົງຊ່ອຍກູ້ເພື່ອອິສຣາເອນມາຈາກຊີໂອນເສັຽເຖີດ ເມື່ອພຣະເຈົ້າຊົງໃຫ້ໄພ່ພົນຂອງພຣະອົງກັບສູ່ສະພາບດີ
ຢາໂຄບຈະຊົມຊື່ນຍິນດີ ອິສຣາເອນຈະຍິນດີ (6/11/10)

## 54 ເພງສັຣເສີນ ບົດທີຫ້າສິບສີ່
### ຄຳອ້ອນວອນຂໍຊົງປ້ອງກັນໃຫ້ພົ້ນສັດຕຣູ

Prayer for Vindication

ເຖິງຫົວໜ້ານັກຮ້ອງ ໃຊ້ເຄື່ອງສາຍມັສຄິລບົດນຶ່ງ ຂອງດາວິດ ເມື່ອພວກຊາວຊີຟີທໄປທູນຊາອູນວ່າ, "ດາວິດລີ້ຢູ່ຖ້າມກາງເຮົາບໍ່ແມ່ນ
ຫລື"

To the leader: with stringed instruments. A Maskil of David, when the Ziphites went and told Saul, "David is in hiding among us."

1 ຂ້າແດ່ພຣະເຈົ້າ ຂໍຊົງຊ່ອຍຂ້າພຣະອົງໃຫ້ລອດດ້ວຍພຣະນາມຂອງພຣະອົງ ແລະແກ້ແທນຂ້າພຣະອົງດ້ວຍ
ອານຸພາບຂອງພຣະອົງ
2 ຂ້າແດ່ພຣະເຈົ້າ ຂໍຊົງຟັງຄຳອ້ອນວອນຂອງຂ້າພຣະອົງ ຂໍຊົງງ່ຽງພຣະກັນຟັງຖ້ອຍຄຳຈາກປາກຂອງຂ້າພຣະ
ອົງ
3 ເພາະຄວາມໂອ້ອວດໄດ້ລຸກຂຶ້ນສູ້ຂ້າພຣະອົງ ຄົນໄຮ້ຄວາມປານີຊອກສັງຫານຊີວິດຂອງຂ້າພຣະອົງ ເຂົາບໍ່ໄດ້
ປະດິດສະຖານພຣະເຈົ້າໄວ້ຕໍ່ໜ້າເຂົາ
4 ເບິ່ງແມ, ພຣະເຈົ້າຊົງເປັນຜູ້ຊ່ອຍຂອງຂ້າພະເຈົ້າ ອົງພຣະຜູ້ເປັນເຈົ້າຊົງເປັນຜູ້ປ້ອງກັນຊີວິດຂອງຂ້າພະເຈົ້າ
ໄວ້
5 ພຣະອົງຈະຊົງໃຫ້ການຊົ່ວຮ້າຍຂອງພວກສັດຕຣູຂອງຂ້າພະເຈົ້າກັບສນອງເຂົາເອງ ຂໍຊົງທຳລາຍເຂົາເສັຽ
ໂດຍຄວາມທ່ຽງທັມຂອງພຣະອົງ
6 ຂ້າພຣະອົງຈະຖວາຍສັດບູຊາຕາມໃຈສມັກແກ່ພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຈະຖວາຍໂມທະ
ນາຂອບພຣະຄຸນພຣະນາມຂອງພຣະອົງ ເພາະພຣະນາມນັ້ນປະເສີດ
7 ເພາະພຣະອົງຊົງຊ່ອຍກູ້ຂ້າພຣະອົງໃຫ້ພົ້ນຈາກຄວາມທຸກຍາກລຳບາກທຸກຢ່າງ ແລະຕາຂອງຂ້າພຣະອົງ
ເບິ່ງເຫັນພວກສັດຕຣູຂອງຂ້າພຣະອົງພ່າຍແພ້

## 55 ເພງສັຣເສີນ ບົດທີຫ້າສິບຫ້າ
### ຄຳອ້ອນວອນຂໍຊົງທຳລາຍຄົນທໍຣະຍົດ

Complaint about a Friend's Treachery

ເຖິງຫົວໜ້ານັກຮ້ອງໃຊ້ເຄື່ອງສາຍມັສຄິລບົດນຶ່ງ
ຂອງດາວິດ

To the leader: with stringed instruments. A Maskil of David.

1 ຂ້າແດ່ພຣະເຈົ້າ ຂໍຊົງງ່ຽງພຣະກັນຟັງຄຳອ້ອນວອນຂອງຂ້າພຣະອົງ ຂໍຢ່າລີ້ຊ່ອນພຣະອົງເສັຽຈາກຄຳວິງວອນຂອງຂ້າພຣະອົງ

2 ຂໍຊົງສະດັບ ແລະຂໍຊົງຕອບຂ້າພຣະອົງ ຂ້າພຣະອົງຍອມແພ້ຄວາມທຸກຍາກລຳບາກແລ້ວ

3 ຂ້າພຣະອົງບ້າໄປເພາະສຽງຂອງສັດຕຣູ ເພາະການບີບບັງຄັບຂອງຄົນອະທັມ ເຫດວ່າເຂົານຳຄວາມທຸກຍາກລຳບາກມາໃຫ້ຂ້າພຣະອົງ ແລະເຂົາໂບ່ມຄວາມກຽດຊັງຂ້າພຣະອົງໂດຍຄວາມໂກດ

4 ຈິດໃຈຂອງຂ້າພຣະອົງທຸກໂສກຢູ່ໃນຂ້າພຣະອົງ ຄວາມສຍົດສຍອງຂອງມັດຈຸຣາດຕົກເຫນືອຂ້າພຣະອົງ

5 ຄວາມຢ້ານແລະຄວາມສະທົກສະທ້ານມາຢູ່ເຫນືອຂ້າພຣະອົງ ຄວາມຫວາດກົວຖ້ວມຂ້າພຣະອົງ

6 ແລະຂ້າພຣະອົງເວົ້າວ່າ, “ໂອ ຂ້າຢາກມີປີກເຫມືອນຢ່າງນົກກາງແກ ຈະໄດ້ບິນຫນີໄປແລະຢູ່ສງົບ

7 ຂ້າຈະໄດ້ພະເນຈອນໄປໄກ ຂ້າຈະໄດ້ພັກຢູ່ໃນຖິ່ນທຸຣະກັນດານ

8 ຂ້າຈະໄດ້ຮີບໄປຫາທີ່ກຳບັງຈາກລົມອັນຮຸນແຮງແລະພະຍຸຮ້າຍ”

9 ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂໍຊົງທຳລາຍເສັຽ ແລະໃຫ້ພາສາຂອງເຂົາຫຍຸ້ງຍາກໄປ ເພາະຂ້າພຣະອົງເຫັນຄວາມທາຣຸນແລະການຫວຸ້ນວາຍທີ່ນະຄອນ

10 ເຂົາຍ່າງເທິງກຳແພງຮອບນະຄອນຢູ່ທັງກາງເວັນແລະກາງຄືນ ແລະຄວາມບາບຜິດກັບຄວາມທຸກຍາກລຳບາກຢູ່ພາຍໃນນະຄອນ

11 ການທຳລາຍມີຢູ່ທຸກຫົນທຸກແຫ່ງ ການບີບບັງຄັບແລະການສໍ້ໂກງບໍ່ຫນີອອກໄປຈາກຕລາດເລີຍ

12 ບໍ່ແມ່ນສັດຕຣູຜູ້ເຍາະເຍີ້ຍຂ້າພະເຈົ້າ ຂ້າພະເຈົ້າຈະໄດ້ທົນໄດ້ ບໍ່ແມ່ນຜູ້ທີ່ກຽດຊັງຂ້າພະເຈົ້າ ຜູ້ອວດຕົວໃສ່ຂ້າພະເຈົ້າ ຂ້າພະເຈົ້າຈະໄດ້ຫລົບເຂົາໄດ້

13 ແຕ່ເປັນທ່ານ ສເມີບ່າສເມີໄຫລ່ກັບຂ້າພະເຈົ້າ ເປັນເພື່ອນຂອງຂ້າພະເຈົ້າ ເປັນມິດຮູ້ຈັກມັກຄຸ້ນກັບຂ້າພະເຈົ້າ

14 ເຮົາເຄີຍສົນທະນາປາສັຍກັນຢ່າງຊື່ນໃຈ ເຮົາດຳເນີນໃນພຣະຜາສາດຂອງພຣະເຈົ້າຢ່າງເປັນມິດສນິດສນົມ

15 ຂໍມັດຈຸຣາດມາຫາເຂົາເຫລົ່ານັ້ນ ໃຫ້ເຂົາລົງໄປຍັງແດນຜູ້ຕາຍທັງເປັນ ເພາະຄວາມໂຫດຮ້າຍຢູ່ໃນບ້ານຂອງເຂົາແລະຢູ່ໃນໃຈຂອງເຂົາ

16 ຝ່າຍຂ້າພະເຈົ້າຮ້ອງທູນຕໍ່ພຣະເຈົ້າ ແລະພຣະເຈົ້າຈະຊົງຊ່ອຍຂ້າພະເຈົ້າໃຫ້ລອດ

17 ທັງເວລາເຊົ້າ ເວລາຄ່ຳ ແລະເວລາທ່ຽງ ຂ້າພະເຈົ້າຮ້ອງທຸກແລະຄ່ຳຄວນ ແລະພຣະອົງຈະຊົງຟັງສຽງຂອງຂ້າພະເຈົ້າ

18 ພຣະອົງຈະຊົງຊ່ອຍກູ້ຈິດວິນຍານຂອງຂ້າພະເຈົ້າໃຫ້ປອດພັຍຈາກສົງຄາມທີ່ຂ້າພະເຈົ້າຕໍ່ສູ້ຢູ່ ເພາະຄົນເປັນຈຳນວນຫລາຍຕັ້ງແຖວສູ້ຂ້າພະເຈົ້າ

19 ພຣະເຈົ້າຈະຊົງສະດັບຟັງແລະລົດເຂົາລົງ ຄືພຣະອົງຜູ້ປະທັບເທິງບັນລັງຕັ້ງແຕ່ບູຮານນະການ ເພາະເຂົາບໍ່ປ່ຽນແລະບໍ່ຢຳເກງພຣະເຈົ້າ

20 ຫມູ່ເກົ່າຂອງຂ້າພະເຈົ້າຍື່ນມືຂອງເຂົາອອກຕໍ່ສູ້ເພື່ອນ ເຂົາຝ່າຝືນຄຳສັນຍາຂອງເຂົາ

21 ຄຳເວົ້າຂອງເຂົາຮາບມື່ນຍິ່ງກວ່າເນີຍ ແຕ່ສົງຄາມຢູ່ພາຍໃນໃຈຂອງເຂົາ ຖ້ອຍຄຳຂອງເຂົາອ່ອນນຸ້ມຍິ່ງກວ່ານ້ຳມັນ ແຕ່ວ່າເປັນດາບທີ່ຊັກອອກມາແລ້ວ

22 ຈົ່ງມອບພາຣະຂອງທ່ານໄວ້ກັບພຣະເຈົ້າ ແລະພຣະອົງຈະຊົງຊວ້ານຊູທ່ານ ພຣະອົງຈະບໍ່ຊົງຍອມໃຫ້ຄົນຊອບທັມຄອນແຄນເລີຍ

23 ຂ້າແດ່ພຣະເຈົ້າ ແຕ່ພຣະອົງຈະຊົງແກວ່ງເຂົາລົງສູ່ປາກແດນພິນາດ ຄົນທີ່ທຳໃຫ້ໂລຫິດຕົກ ແລະຄົນທໍຣະຍົດຈະມີຊີວິດຢູ່ບໍ່ເຖິງເຄິ່ງຈຳນວນເວລາຂອງເຂົາ ແຕ່ຂ້າພຣະອົງຈະວາງໃຈໃນພຣະອົງ

## 56 ເພງສັຣເສີນ ບົດທີຫ້າສິບຫົກ

### ຄຳອ້ອນວອນສະແດງຄວາມໄວ້ວາງໃຈ

Trust in God under Persecution

ເຖິງຫົວໜ້ານັກຮ້ອງທຳນອງນົກເຂົາເທິງຕົ້ນເຕເຣບິນພຸ້ນ ມິກຕາມບົດນຶ່ງຂອງດາວິດ ເມື່ອຟີລິສຕິນຈັບທ່ານໃນເມືອງກາດ

To The leader: according to The Dove on Far off Terebinths. Of David. A Miktam, when the Philistiones Seized him in Gath.

1 ຂ້າແດ່ພຣະເຈົ້າ ຂໍຊົງເມດຕາຂ້າພຣະອົງ ເພາະຄົນຢຽບຢ່ຳຂ້າພຣະອົງ ສັດຕຣູບີບບັງຄັບຂ້າພຣະອົງຕລອດ
ວັນ

2 ພວກສັດຕຣູຂອງຂ້າພຣະອົງຢຽບຢ່ຳຂ້າພຣະອົງຕລອດວັນ ເພາະຫລາຍຄົນຕໍ່ສູ້ຂ້າພຣະອົງຢ່າງທະນົງ

3 ເມື່ອຂ້າພຣະອົງຢ້ານ ຂ້າພຣະອົງວາງໃຈໃນພຣະອົງ

4 ໃນພຣະເຈົ້າ ຜູ້ທີ່ຂ້າພຣະອົງສັຣເສີນພຣະວັຈນະຂອງພຣະອົງ ໃນພຣະເຈົ້າ ຂ້າພຣະອົງວາງໃຈຢ່າງປາສຈາກ
ຄວາມຢ້ານ ເນື້ອໜັງຈະກະທຳສິ່ງໃດແກ່ຂ້າພຣະອົງ

5 ເຂົາກໍ່ຄວາມເດືອດຮ້ອນຕໍ່ກິຈການຂອງຂ້າພຣະອົງຕລອດວັນ ຄວາມຄິດທັງສິ້ນຂອງເຂົາ ຄິດຫາທາງທຳລາຍ
ຕໍ່ຂ້າພຣະອົງ

6 ເຂົາຮ່ວມຫົວກັນ ເຂົາຊອມເບິ່ງ ເຂົາເຝົ້າຮອຍຕີນຂອງຂ້າພຣະອົງເໝືອນກັບຄົນທີ່ຊອມຄອຍເອົາຊີວິດຂ້າພ
ຣະອົງ

7 ຂໍຊົງຖິ້ມເຂົາເພາະຄວາມຜິດຂອງເຂົາ ຂ້າແດ່ພຣະເຈົ້າ ຂໍຊົງຜາບແພ້ຊົນຊາດທັງຫລາຍລົງມາດ້ວຍພຣະພິ
ໂຣດ

8 ພຣະອົງຊົງນັບຄວາມເດືອອຮ້ອນຂອງຂ້າພຣະອົງ ຊົງເກັບນ້ຳຕາຂອງຂ້າພຣະອົງໃສ່ຂວດຂອງພຣະອົງໄວ້ ນ້ຳ
ຕານັ້ນບໍ່ຢູ່ໃນບັນຊີຂອງພຣະອົງຫລື

9 ແລ້ວສັດຕຣູຂອງຂ້າພຣະອົງຈະຫັນກັບໃນວັນທີ່ຂ້າພຣະອົງຮ້ອງທູນ ຂ້າພຣະອົງຮູ້ໄດ້ວ່າ ພຣະເຈົ້າຊົງສະຖິດ
ຢູ່ຝ່າຍຂ້າ   ພຣະອົງ

10 ໃນພຣະເຈົ້າຜູ້ຊຶ່ງຂ້າພຣະອົງສັຣເສີນ ພຣະວັຈນະຂອງພຣະອົງໃນພຣະຜູ້ເປັນເຈົ້າ ຜູ້ຊຶ່ງຂ້າພຣະອົງສັຣເສີນພ
ຣະວັຈນະຂອງພຣະອົງ

11 ໃນພຣະເຈົ້າ ຂ້າພຣະອົງວາງໃຈຢ່າງປາສຈາກຄວາມຢ້ານກົວ ມະນຸດຈະກະທຳສິ່ງໃດແກ່ຂ້າພຣະອົງໄດ້

12 ຂ້າແດ່ພຣະເຈົ້າ ທີ່ຂ້າພຣະອົງບະບົນໄວ້ນັ້ນຂ້າພຣະອົງຈະແກ້ ຂ້າພຣະອົງຈະຖວາຍບູຊາໂມທະນາພຣະຄຸນ
ແກ່ພຣະອົງ

13 ເພາະພຣະອົງຊົງຊ່ອຍກູ້ຈິດວິນຍານຂອງຂ້າພຣະອົງຈາກມັດຈຸຣາດ ພຣະອົງຊົງຊ່ອຍກູ້ຕີນຂອງຂ້າພຣະອົງ
ຈາກການລົ້ມບໍ່ແມ່ນຫລື ເພື່ອຂ້າພຣະອົງຈະດຳເນີນຢູ່ຕໍ່ເບື້ອງພຣະພັກພຣະເຈົ້າໃນຄວາມສວ່າງແຫ່ງຊີວິດ

## 57 ເພງສັຣເສີນ ບົດທີຫ້າສິບເຈັດ

### ການອ້ອນວອນຂໍຄວາມຊ່ອຍເຫລືອ

Praise and Assurance under Persecurion

( ພສສ 108:1-5)

ເຖິງຫົວໜ້ານັກຮ້ອງ ຕາມທຳນອງຢ່າທຳລາຍມິກຕາມບົດນຶ່ງ ຂອງດາວິດ ເມື່ອທ່ານໜີຊາອູນ ຢູ່ໃນຖ້ຳ

To the leader: Do not Destroy. Of David. A Miktam, when he fled from Saul, in the cave.

1 ຂ້າແດ່ພຣະເຈົ້າ ຂໍຊົງເມດຕາກະຣຸນາຂ້າພຣະອົງ ເພື່ອຄວາມປອດພັຍ ຂ້າພຣະອົງເຂົ້າມາເພິ່ງພຣະອົງ ຂ້າ
ພຣະອົງໄດ້ຮັບການຄຸ້ມຄອງພາຍໃຕ້ຮົ່ມເງົາຂອງພຣະອົງ ຈົນກວ່າພັຍອັນຕະລາຍທຸກຢ່າງຜ່ານພົ້ນໄປ

2 ຂ້າພະເຈົ້າຮ້ອງທູນຕໍ່ພຣະເຈົ້າອົງຜູ້ສູງສຸດ ຕໍ່ພຣະເຈົ້າຜູ້ຊົງກະທຳການໃຫ້ສຳເຣັດເພື່ອຂ້າພະເຈົ້າ
3 ພຣະອົງຈະຊົງໃຊ້ມາຈາກຟ້າສວັນ ແລະຊ່ອຍຂ້າພະເຈົ້າໃຫ້ລອດ ພຣະອົງຈະຊົງໃຫ້ຜູ້ຢຽບຢ່ຳຂ້າພະເຈົ້າໄດ້ອາຍ ພຣະເຈົ້າຈະຊົງໃຊ້ຄວາມຮັກໝັ້ນຄົງ ແລະຄວາມສັດຊື່ສຸຈຣິດລົງມາ
4 ຂ້າພະເຈົ້າຢູ່ຖ້າມກາງເຫລົ່າສິງຫະຣາດ ຂ້າພະເຈົ້ານອນຖ້າມກາງຜູ້ທີ່ໄຟຕິດຕົວຄືບຸດຂອງມະນຸດ ແຂ້ວຂອງເຂົາທັງຫລາຍຄືຫອກແລະລູກທະນູ ລີ້ນຂອງເຂົາຄືດາບຄົມ
5 ຂ້າແດ່ພຣະເຈົ້າ ຂໍຊົງເປັນທີ່ຍົກຍ້ອງເຫນືອຟ້າສວັນ ຂໍພຣະສະຫງ່າຣາສີຂອງພຣະອົງຢູ່ທົ່ວແຜ່ນດິນໂລກ
6 ເຂົາທັງຫລາຍວາງຕາຂ່າຍດັກຕີນຂ້າພະເຈົ້າ ຈິດໃຈຂອງຂ້າພະເຈົ້າໄດ້ຄ້ອມລົງ ເຂົາຂຸດບໍ່ໄວ້ໃນທາງຂ້າພະເຈົ້າ ແຕ່ເຂົາກໍຕົກລົງໄປເອງ
7 ຂ້າແດ່ພຣະເຈົ້າ ຈິດໃຈຂອງຂ້າພຣະອົງຫມັ້ນຄົງ ຈິດໃຈຂອງຂ້າພຣະອົງຫມັ້ນຄົງ ຂ້າພຣະອົງຈະຮ້ອງເພງ ຂ້າພຣະອົງຈະຮ້ອງເພງສັຣເສີນ
8 ຈິດໃຈຂອງຂ້າພະເຈົ້າເອີຍ ຈົ່ງຕື່ນເຖີດ ພິນໃຫຍ່ແລະພິນເຂົາຄູ່ເອີຍ ຈົ່ງຕື່ນເຖີດ ຂ້າພະເຈົ້າຈະປຸກອະຣຸນ
9 ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂ້າພຣະອົງຈະຖວາຍໂມທະນາພຣະຄຸນພຣະອົງຖ້າມກາງປະຊາຊາດ ຂ້າພຣະອົງຈະຮ້ອງເພງສັຣເສີນພຣະອົງຖ້າມກາງຊົນຊາດທັງຫລາຍ
10 ເພາະຄວາມຮັກຫມັ້ນຄົງຂອງພຣະອົງຍິ່ງໃຫຍ່ເຖິງຟ້າສວັນ ຄວາມສັດຊື່ສຸຈຣິດຂອງພຣະອົງສູງເຖິງເມກ
11 ຂ້າແດ່ພຣະເຈົ້າ ຂໍຊົງເປັນທີ່ເຊີດຊູເຫນືອຟ້າສວັນ ຂໍພຣະສະຫງ່າຣາສີຂອງພຣະອົງຢູ່ທົ່ວແຜ່ນດິນໂລກ

## 58 ເພງສັຣເສີນ ບົດທີຫ້າສິບແປດ

### ຄຳອ້ອນວອນຂໍຊົງລົງໂທດຄົນອະທັມ

Prayer for Vengeance

ເຖິງຫົວຫນ້ານັກຮ້ອງ ຕາມທຳນອງຢ່າທຳລາຍມິກຕາມບົດນຶ່ງ ຂອງດາວິດ

To the leader: Do not Destroy. Of David. A Miktam.

1 ທ່ານຜູ້ເປັນເຈົ້ານາຍ ທ່ານເວົ້າຢ່າງຊອບທັມຫລື ບຸດຂອງມະນຸດເອີຍ ທ່ານພິພາກສາຢ່າງທ່ຽງທັມຫລື
2 ບໍ່ເລີຍ ໃນໃຈຂອງທ່ານ ທ່ານປະດິດຄວາມຜິດ ມືຂອງທ່ານຊັ່ງຄວາມທຳຣຸນອອກໃຫ້ແຜ່ນດິນໂລກ
3 ຄົນອະທັມຫລົງເຈີ່ນໄປຕັ້ງແຕ່ຈາກຄັນ ເຂົາທຳຜິດມາຕັ້ງແຕ່ມື້ເກີດ ຄືເວົ້າມຸສາ
4 ເຂົາມີພິດເຫມືອນພິດງູ ເຫມືອນງູເຫົ່າຫູຫນວກທີ່ອຸດຫູຂອງມັນ
5 ມັນຈຶ່ງບໍ່ໄດ້ຍິນສຽງຂອງຫມໍງູ ຫລືເຊື່ອຟັງຜູ້ມີມົນຂັງ
6 ຂ້າແດ່ພຣະເຈົ້າ ຂໍຊົງຫັກແຂ້ວໃນປາກຂອງມັນເສັຽ ຂ້າແດ່ພຣະເຈົ້າ ຂໍຊົງຫັກແຂ້ວໂຄບຂອງສິງຫນຸ່ມອອກເສັຽ
7 ໃຫ້ເຂົາຫາຍໄປເຫມືອນນ້ຳໄຫລ ພຣະອົງຈະຊົງເລັ່ງທະນູໃສ່ເຂົາທັງຫລາຍ ແລະເຂົາຈະຖືກສັງຫານ
8 ຂໍໃຫ້ເຂົາເຫມືອນທາກທີ່ລະລາຍເປັນເມືອກໄປ ເຫມືອນທາຣົກແທ້ງທີ່ບໍ່ເຄີຍເຫັນດວງອາທິດ
9 ໄວຍິ່ງກວ່າຫມໍ້ຈະຮູ້ສຶກຮ້ອນດ້ວຍໄຟ ແຕ່ຫນາມຂຽວຫລືໄຫມ້ເປັນແປວກໍຂໍພຣະອົງຊົງກວາດເຂົາໄປເສັຽ
10 ຄົນຊອບທັມຈະຊົມຊື່ນຍິນດີ ເມື່ອເຂົາເຫັນການແກ້ແຄ້ນ ເຂົາຈະເອົາໂລຫິດຂອງຄົນອະທັມລ້າງຕີນຂອງເຂົາ
11 ຈະມີຄົນກ່າວວ່າ, “ແນ່ແລ້ວ ມີບຳເຫນັດໃຫ້ແກ່ຄົນຊອບທັມ ແນ່ແລ້ວ ມີພຣະເຈົ້າຜູ້ຊົງພິພາກສາໂລກ”

## 59 ເພງສັຣເສີນ ບົດທີຫ້າສິບເກົ້າ

### ຄຳອ້ອນວອນຂໍຊົງຊ່ອຍກູ້ຈາກສັດຕຣູ

Prayer for Deliverance from Enemies

ເຖິງຫົວໜ້ານັກຮ້ອງ ທຳນອງຢ່າທຳລາຍມິກຕາມບົດນຶ່ງຂອງດາວິດ ເມື່ອຊາອູນຊົງໃຊ້ຄົນໃຫ້ໄປເຝົ້າບ້ານຂອງທ່ານເພື່ອຈະຂ້າທ່ານເສັຽ

To the leader: Do Not Destroy. Of David. A Miktam, when Saul ordered his house to be watched in order to kill him.

1 ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂໍຊົງຊ່ອຍກູ້ຂ້າພຣະອົງຈາກສັດຕຣູຂອງຂ້າພຣະອົງ ຂໍຊົງຊ່ອຍປ້ອງກັນຂ້າພ
ຣະອົງໃຫ້ພົ້ນຈາກບັນດາຜູ້ທີ່ລຸກຂຶ້ນຕໍ່ສູ້ຂ້າພຣະອົງ
2 ຂໍຊົງຊ່ອຍກູ້ຂ້າພຣະອົງຈາກຜູ້ທີ່ທຳຄວາມຊົ່ວຮ້າຍ ແລະຂໍຊົງຊ່ອຍຂ້າພຣະອົງໃຫ້ລອດຈາກຄົນກະຫາຍເລືອດ
3 ເພາະເຂົາຊຸ່ມຄອຍເອົາຊີວິດຂ້າພຣະອົງ ຄົນໂຫດຮ້າຍຮ່ວມຫົວກັນຕໍ່ສູ້ຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ບໍ່
ແມ່ນການລະເມີດຫລືບາບຂອງຂ້າພຣະອົງເອງ
4 ເຂົາແລ່ນໄປຕຽມພ້ອມ ບໍ່ແມ່ນຄວາມຜິດຂອງຂ້າພຣະອົງ ຂໍຊົງມາຊ່ອຍຂ້າພຣະອົງແລະທອດພຣະເນດ
5 ຂ້າແດ່ພຣະເຈົ້າຈອມໂຍທາ ພຣະອົງຊົງເປັນພຣະເຈົ້າຂອງອິສຣາເອນ ຂໍຊົງຕື່ນຂຶ້ນລົງໂທດບັນດາປະຊາຊາດ
ຂໍຢ່າຊົງເມດຕາຜູ້ທີ່ທໍຣະຍົດຄິດຮ້າຍແມ້ແຕ່ຄົນດຽວ
6 ເຂົາກັບມາທຸກແລງ ຫອນຢ່າງໝາ ແລະເຂົ້າໄປທົ່ວນະຄອນ
7 ເຂົາຢູ່ທີ່ນັ້ນ ປາກຂອງເຂົາຍັງພົ່ນຢູ່ ແລະມີດາບທີ່ຮີມຝີປາກຂອງມັນ ເພາະມັນຄິດວ່າ, “ໃຜ ຈະຟັງເຮົາ?”
8 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງຊົງຫົວຂວັນແລະເຍາະເຍີ້ຍປະຊາຊາດທັງປວງ
9 ຂ້າແດ່ພຣະກຳລັງຂອງຂ້າພຣະອົງ ຂ້າພຣະອົງຈະຄອຍເຝົ້າພຣະອົງ ຂ້າແດ່ພຣະເຈົ້າ ເພາະພຣະອົງຊົງເປັນທີ່
ເພິ່ງຂອງຂ້າພຣະອົງ
10 ພຣະເຈົ້າຂອງຂ້າພະເຈົ້າຈະພົບຂ້າພະເຈົ້າດ້ວຍຄວາມຮັກໝັ້ນຄົງຂອງພຣະອົງ ພຣະເຈົ້າຈະຊົງໃຫ້ຂ້າພະ
ເຈົ້າມອງເຫັນພວກສັດຕຣູຂອງຂ້າພະເຈົ້າ
11 ຂ້າແດ່ອົງພຣະຜູ້ເປັນເຈົ້າ ຜູ້ປົກປ້ອງຂ້າພຣະອົງທັງຫລາຍ ຂໍຢ່າຊົງສັງຫານເຂົາເສັຽ ຢ້ານວ່າຊົນຊາດຂອງຂ້າ
ພຣະອົງຈະລືມ ຂໍໃຫ້ເຂົາແຕກຊະໄປດ້ວຍຣິດທານຸພາບຂອງພຣະອົງແລະທຳໃຫ້ເຂົາລົ້ມລົງ
12 ເພາະບາບປາກຂອງເຂົາ ແລະເພາະຖ້ອຍຄຳຮີມຝີປາກຂອງເຂົາ ຂໍໃຫ້ເຂົາຕິດກັບໂດຍຄວາມຈອງຫອງຂອງ
ເຂົາ ເພາະການສາບແຊ່ງແລະການມຸສາຊຶ່ງເປັ່ງອອກມານັ້ນ
13 ຂໍຊົງເຜົາຜານເຂົາເສັຽໂດຍພຣະພິໂຣດ ຂໍຊົງເຜົາຜານເຂົາຈົນເຂົາບໍ່ເຫລືອເລີຍ ແລ້ວຄົນຈະຮູ້ວ່າພຣະເຈົ້າຊົງ
ປົກຄອງເໜືອຢາໂຄບ ເຖິງທີ່ສຸດປາຍແຜ່ນດິນໂລກ
14 ເຂົາກັບມາທຸກແລງ ຫອນຢ່າງໝາ ແລະເຂົ້າໄປທົ່ວນະຄອນ
15 ເຂົາທ່ຽວຊອກຫາອາຫານ ຖ້າບໍ່ໄດ້ກິນອີ່ມກໍຂູ່ຄຳຣາມ
16 ແຕ່ຂ້າພຣະອົງຈະຮ້ອງເພງເຖິງອານຸພາບຂອງພຣະອົງ ຂ້າພຣະອົງຈະຮ້ອງເພງເຖິງຄວາມຮັກໝັ້ນຄົງຂອງພ
ຣະອົງໃນເວລາເຊົ້າ ເພາະພຣະອົງຊົງເປັນທີ່ເພິ່ງຂອງຂ້າພຣະອົງ
17 ຂ້າແດ່ພຣະກຳລັງຂອງຂ້າພຣະອົງ ຂ້າພຣະອົງຈະຮ້ອງເພງສັຣເສີນພຣະອົງ ຂ້າແດ່ພຣະເຈົ້າ ເພາະພຣະອົງຊົງ
ເປັນທີ່ເພິ່ງຂອງຂ້າພຣະອົງ ພຣະເຈົ້າຜູ້ຊົງສຳແດງຄວາມຮັກໝັ້ນຄົງແກ່ຂ້າພຣະອົງ

## 60 ເພງສັຣເສີນ ບົດທີຫົກສິບ

### ຄຳອ້ອນວອນຂໍຊົງຊ່ອຍຕໍ່ຕ້ານສັດຕຣູ

Prayer for National Victory after Defeat

**(ພສສ 108:6-13)**

ເຖິງຫົວໜ້ານັກຮ້ອງ ທຳນອງຊູຊັນເອດູມິກຕາມບົດນຶ່ງ ຂອງດາວິດ ເພື່ອສັ່ງສອນເມື່ອທ່ານຕໍ່ສູ້ກັບອາຣາມນາຣາຣາອີມ
ແລະກັບອາຣາມໂຊບາ ແລະເມື່ອເຂົາກັບໂຢອາບໄດ້ຂ້າຊາວເອໂດມເສັຽນຶ່ງໝື່ນສອງພັນຄົນໃນຫຸບເຂົາເກືອ

To the leader: according to The Lily of The Covenant. A Miktam of David; for instruction; when he struggled with Aramnaharaim and with Aramzobah, and when Jeab on his return killed twelve thousand Edomites in the Valley of Salt.

1 ຂ້າແດ່ພຣະເຈົ້າ ພຣະອົງໄດ້ຊົງປະຖິ້ມຂ້າພຣະອົງທັງຫລາຍແລ້ວ ທັງໄດ້ຊົງທຳລາຍທີ່ປ້ອງກັນຂອງຂ້າພຣະ
ອົງທັງຫລາຍ ພຣະອົງຊົງພຣະພິໂຣດ ຂໍຊົງຊ່ອຍໃຫ້ຂ້າພຣະອົງກັບຄືນອີກ
2 ພຣະອົງຊົງກະທຳໃຫ້ແຜ່ນດິນຫວັ່ນໄຫວ ຊົງໃຫ້ມັນແຕກແຍກອອກ ຂໍຊົງສ້ອມແປງຊ່ອງຂອງມັນເພາະມັນ
ພວມແຕກເປັນປ່ຽງໆ
3 ພຣະອົງຊົງກະທຳໃຫ້ໄພ່ພົນຂອງພຣະອົງປະສົບຄວາມລຳບາກ ພຣະອົງຊົງບັງຄັບຂ້າພຣະອົງໃຫ້ດື່ມເຫລົ້າອະ
ງຸ່ນເຫມືອນຄົນເມົາເຫລົ້າ
4 ພຣະອົງຊົງຕັ້ງທຸງໄວ້ໃຫ້ບັນດາຜູ້ທີ່ເກງກົວພຣະອົງ ເພື່ອເຂົາຈະໄດ້ຫລົບຫນີຈາກການທຳລາຍ
5 ຂໍປະທານໄຊຊະນະໂດຍພຣະຫັດຂວາຂອງພຣະອົງ ແລະຊົງຕອບຂ້າພຣະອົງ ເພື່ອວ່າຜູ້ທີ່ພຣະອົງຊົງຮັກຈະ
ໄດ້ຮັບການຊ່ອຍກູ້
6 ພຣະເຈົ້າຕຣັສໃນສະຖານນະມັສການຂອງພຣະອົງວ່າ, “ເຮົາຈະແບ່ງເມືອງເຊເຄມດ້ວຍຄວາມຍິນດີ ແລະ
ແບ່ງຫຸບເຂົາເມືອງຊຸັກໂກດອອກ
7 ກີເລອາດເປັນຂອງເຮົາ ມານັສເຊເປັນຂອງເຮົາ ເອຟຣາອິມເປັນທີ່ກັນຫົວຂອງເຮົາ ຢູດາເປັນຄະທາ (ຕະບອງ)
ຂອງເຮົາ
8 ໂມອາບເປັນອ່າງລ້າງຊຳຣະຂອງເຮົາ ເຮົາໂຍນເກີບຂອງເຮົາລົງເທິງເອໂດມ ເຮົາໂຮ່ຮ້ອງດ້ວຍຄວາມມີ
ຊັຍເຫນືອຟີລິສຕີນ”
9 ຜູ້ໃດຈະນຳຂ້າພະເຈົ້າເຂົ້າໄປໃນນະຄອນມີປ້ອມ ຜູ້ໃດຈະນຳຂ້າພະເຈົ້າໄປຍັງເອໂດມ
10 ຂ້າແດ່ພຣະເຈົ້າ ພຣະອົງໄດ້ຊົງປະຖິ້ມຂ້າພຣະອົງທັງຫລາຍແທ້ບໍ່? ຂ້າແດ່ພຣະເຈົ້າ ພຣະອົງບໍ່ຊົງອອກໄປ
ກັບກອງທັບຂອງຂ້າພຣະອົງທັງຫລາຍອີກແລ້ວຫລື?
11 ຂໍປະທານຄວາມຊ່ອຍເຫລືອເພື່ອຕໍ່ຕ້ານສັດຕຣູ ເພາະຄວາມຊ່ອຍເຫລືອຂອງມະນຸດກໍໄຮ້ຜົນ
12 ໂດຍເພິ່ງໃນພຣະເຈົ້າ ຂ້າພະເຈົ້າທັງຫລາຍຈະປະຕິບັດຢ່າງເຂັ້ມແຂງ ພຣະອົງເອງຊົງເປັນຜູ້ຢຽບຄູ່ສັດຕຣູ
ຂອງຂ້າພະເຈົ້າທັງຫລາຍລົງ

## 61 ເພງສັຣເສີນ ບົດທີຫົກສິບເອັດ
### ຫມັ້ນໃຈໃນການປົກປ້ອງຂອງພຣະເຈົ້າ

Assurance of God’s Protection

ເຖິງຫົວຫນ້ານັກຮ້ອງ ໃຊ້ເຄື່ອງສາຍ ຂອງດາວິດ

To the leader: with stringed instruments. Of David.

1 ຂ້າແດ່ພຣະເຈົ້າ ຂໍຊົງຟັງສຽງຮ້ອງຂອງຂ້າພຣະອົງ ຂໍຊົງສະດັບຄຳອ້ອນວອນຂອງຂ້າພຣະອົງ
2 ຂ້າພຣະອົງຮ້ອງທູນພຣະອົງມາແຕ່ທີ່ສຸດປາຍແຜ່ນດິນໂລກ ເມື່ອຈິດໃຈຂອງຂ້າພຣະອົງອ່ອນລະອາໄປ ຂໍຊົງ
ນຳຂ້າພຣະອົງມາເຖິງສີລາທີ່ສູງກວ່າຂ້າພຣະອົງ
3 ເພາະພຣະອົງຊົງເປັນທີ່ລີ້ພັຍຂອງຂ້າພຣະອົງ ເປັນຫໍຄອຍເຂັ້ມແຂງທີ່ປະຈັນຫນ້າສັດຕຣູ
4 ຂ້າພຣະອົງຈະຂໍຢູ່ໃນພຣະວິຫານຂອງພຣະອົງເປັນນິດ ຂໍໃຫ້ປອດພັຍຢູ່ທີ່ກຳບັງປີກຂອງພຣະອົງ
5 ຂ້າແດ່ພຣະເຈົ້າ ເພາະພຣະອົງຊົງສະດັບຄຳບົນບານຂອງຂ້າພຣະອົງ ແລະພຣະອົງປະທານມໍຣະດົກຂອງ
ບັນດາຜູ້ທີ່ເກງກົວພຣະນາມຂອງພຣະອົງແກ່ຂ້າພຣະອົງ
6 ຂໍຊົງຍືດພຣະຊົນຂອງພຣະຣາຊາ ຂໍໃຫ້ປີເດືອນຂອງທ່ານຍືນນານໄປຫລາຍຊາດພັນ

7 ຂໍໃຫ້ທ່ານໄດ້ປະທັບເທິງບັນລັງຕໍ່ພຣະພັກພຣະເຈົ້າເປັນນິດ ຂໍຊົງແຕ່ງຕັ້ງຄວາມຮັກໝັ້ນຄົງ ແລະຄວາມຊື່ສັດ
ໄວ້ເຝົ້າທ່ານ
8 ແລ້ວຂ້າພຣະອົງຈະຮ້ອງເພງສັຣເສີນພຣະນາມຂອງພຣະອົງສເມີ ຕາມທີ່ຂ້າພຣະອົງແກ້ບົນຢູ່ແຕ່ລະວັນນັ້ນ

## 62 ເພງສັຣເສີນ ບົດທີຫົກສິບສອງ

### ຄວາມໄວ້ວາງໃຈໃນການຄຸ້ມຄອງຂອງພຣະອົງ

Song of Trust in God Alone

ເຖິງຫົວໜ້ານັກຮ້ອງ ຕາມທຳນອງເຢດູທູນ ເພງສັຣເສີນຂອງດາວິດ

To the leader: according to Jedunthun. A Psalm of David.

1 ຂ້າພະເຈົ້າຂໍມອບຕົວໄວ້ກັບພຣະເຈົ້າພຽງອົງດຽວ ພຣະເຈົ້າຊົງຊ່ອຍຂ້າພະເຈົ້າໃຫ້ພົ້ນ
2 ພຣະອົງຊົງເປັນທີ່ເພິ່ງ ແລະພຣະຜູ້ຊ່ອຍໃຫ້ພົ້ນຂອງຂ້າພະເຈົ້າພຽງອົງດຽວ ພຣະອົງຊົງເປັນຜູ້ປົກປ້ອງຂ້າພະ
ເຈົ້າ ແລະຂ້າພະເຈົ້າຈະບໍ່ຜ່າຍແພ້ ແຕ່ຈະຕັ້ງໝັ້ນຄົງຢູ່
3 ພວກເຈົ້າທຸກຄົນຈະໂຈມຕີຄົນຄົນດຽວ ນານປານໃດ ຜູ້ຊຶ່ງກຳລັງຈະລົ້ມຕາຍເໝືອນກຳແພງແລະຮົ້ວທີ່ກຳລັງ
ຈະພັງທະລາຍລົງ
4 ເຂົາມີແຕ່ຢາກດຶງທ່ານລົງຈາກຕຳແໜ່ງອັນມີກຽດ ເຂົາມັກເວົ້າຕົວະ ເຂົາກ່າວຄຳອວຍພອນ ແຕ່ພາຍໃນຫົວ
ໃຈເຂົາກໍປ້ອຍດ່າ
5 ຈິດໃຈຂອງຂ້າພະເຈົ້າສງົບຄອຍຖ້າພຣະເຈົ້າແຕ່ອົງດຽວ ຂ້າພະເຈົ້າຝາກຄວາມຫວັງໄວ້ກັບພຣະອົງ
6 ພຣະອົງຊົງເປັນທີ່ເພິ່ງ ແລະເປັນພຣະຜູ້ຊ່ອຍໃຫ້ພົ້ນຂອງຂ້າພະເຈົ້າພຽງອົງດຽວ ພຣະອົງຊົງເປັນຜູ້ປົກປ້ອງຂ້າ
ພະເຈົ້າ ແລະຂ້າພະເຈົ້າຈະບໍ່ຜ່າຍແພ້ ແຕ່ຈະຕັ້ງໝັ້ນຄົງຢູ່
7 ຄວາມພົ້ນ ແລະກຽດຕິຍົດຂອງຂ້າພະເຈົ້າຢູ່ກັບພຣະອົງ ພຣະອົງຊົງເປັນຄືໂງ່ນຫີນປ້ອງກັນຂ້າພະເຈົ້າ ພຣະ
ອົງຊົງເປັນບ່ອນພັກອາສັຍຂອງຂ້າພະເຈົ້າ
8 ປະຊາຊົນທັງຫລາຍຂອງຂ້າພະເຈົ້າເອີຍ ຈົ່ງເຊື່ອຟັງພຣະເຈົ້າຕລອດໄປ ຈົ່ງຂາບທູນຄວາມທຸກຍາກລຳບາກ
ຂອງທ່ານຕໍ່ ພຣະອົງ ເພາະພຣະອົງຊົງເປັນທີ່ເພິ່ງຂອງເຮົາ
9 ມະນຸດປຽບເໝືອນລົມຫາຍໃຈ ຄົນທີ່ຕາຍເປັນນັ້ນບໍ່ມີຄ່າຫຍັງເລີຍ ເມື່ອເອົາມາຊັ່ງຊາເບິ່ງກໍບໍ່ມີນ້ຳໜັກ
ຫຍັງໝົດ ເຂົາເບົາກວ່າລົມຫາຍໃຈ
10 ຢ່າຄິດວ່າຈະໄດ້ມາດ້ວຍຄວາມຮຸນແຮງ ຢ່າຫວັງຢາກໄດ້ສິ່ງນຶ່ງສິ່ງໃດເລີຍຈາກການລັກໂລບ ຖ້າຄວາມມັ່ງຄັ່ງ
ເພີ້ມຂຶ້ນກໍຢ່າມົວເມົາກັບສິ່ງເຫລົ່ານັ້ນ
11 ພຣະເຈົ້າຊົງກ່າວຄັ້ງນຶ່ງ  ຂ້າພະເຈົ້າໄດ້ຍິນຢ່າງນີ້ສອງຄັ້ງແລ້ວ ວ່າຣິດທານຸພາບເປັນຂອງພຣະເຈົ້າ
12 ແລະຄວາມຮັກຂອງພຣະອົງກໍໝັ້ນຄົງ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງເອງຊົງເປັນຜູ້ທີ່ຕອບສນອງຕາມຜົນ
ການກະທຳຂອງທຸກໆຄົນ

## 63 ເພງສັຣເສີນ ບົດທີຫົກສິບສາມ

### ຄວາມປາຖນາໃນພຣະເຈົ້າ

Comfort and Assurance in God’s Presence

ເພງສັຣເສີນ ຂອງດາວິດ ເມື່ອທ່ານຢູ່ໃນຖິ່ນກັນດານຢູດາ

A Psalm of David, when he was in the Wilderness of Judah

1 ຂ້າແດ່ພຣະເຈົ້າ ພຣະອົງຊົງເປັນພຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງຊອກສແວງຫາພຣະອົງ ຂ້າພຣະອົງ
ຕ້ອງປະສົງພຣະອົງດ້ວຍສຸດຈິດສຸດໃຈ ຈິດໃຈຂອງຂ້າພຣະອົງຫິວກະຫາຍພຣະອົງເຫມືອນດັ່ງດິນແຫ້ງແລ້ງທີ່
ຂາດນໍ້າ

2 ຂໍໃຫ້ຂ້າພຣະອົງພົບພຣະອົງໃນພຣະວິຫານຂອງພຣະອົງ ເພື່ອໃຫ້ຂ້າພຣະອົງເຫັນຄວາມຍິ່ງໃຫຍ່ແລະຣັສມີທີ່
ພຣະອົງຊົງມີຢູ່

3 ຄວາມຮັກຫມັ້ນຄົງຂອງພຣະອົງກໍດີກວ່າຊີວິດ ດ້ວຍເຫດນີ້ ຂ້າພຣະອົງຈະສັຣເສີນພຣະອົງ

4 ຂ້າພຣະອົງຈະໂມທະນາຂອບພຣະຄຸນແດ່ພຣະອົງຕລອດຊີວິດ ຂ້າພຣະອົງຈະຍໍມືອ້ອນວອນຫາພຣະອົງ

5 ຈິດໃຈຂອງຂ້າພຣະອົງຈະອີ່ມຫນໍາສໍາລານ ແລະຂ້າພຣະອົງຈະຮ້ອງເພງຍິນດີສັຣເສີນພຣະອົງ

6 ເວລາຂ້າພຣະອົງນອນ ຂ້າພຣະອົງລະນຶກເຖິງພຣະອົງ ແລະຄິດເຖິງພຣະອົງຕລອດທັງຄືນ

7 ເພາະພຣະອົງຊົງເປັນຜູ້ຊົດຊ່ອຍຂ້າພຣະອົງຢູ່ເລື້ອຍໆ ຂ້າພຣະອົງຮ້ອງເພງຍິນດີໃຕ້ຮົ່ມເງົາຂອງພຣະອົງ

8 ຂ້າພຣະອົງຕິດພັນຢູ່ກັບພຣະອົງ ແລະພຣະຫັດຂອງພຣະອົງຊົງອຸ້ມຊູຂ້າພຣະອົງໃຫ້ປອດພັຍ

9 ສ່ວນຜູ້ທີ່ພຍາຍາມສັງຫານຂ້າພຣະອົງກໍຈະໄປສູ່ພິພົບຄົນຕາຍ

10 ພວກເຂົາຈະຖືກຂ້າໃນສນາມຮົບ ແລະສົບຂອງເຂົາຈະຖືກຫມາປ່າກັດກິນ

11 ເຈົ້າຊີວິດທັງຫລາຍຈະຊົມຊື່ນຍິນດີໃນພຣະເຈົ້າ ຄົນທັງປວງທີ່ສາບານໃນພຣະນາມຂອງພຣະອົງຈະມີຄວາມ
ພາກພູມໃຈ ແຕ່ວ່າປາກຂອງຄົນຂີ້ຕົວະຈະຖືກງັບໄວ້

## 64 ເພງສັຣເສີນ ບົດທີຫົກສິບສີ່

### ຄໍາອ້ອນວອນຂໍຊົງປົກປ້ອງຈາກສັດຕຣູຜູ້ລີ້ຢູ່

Prayer for Protection from Enemies

ເຖິງຫົວຫນ້ານັກຮ້ອງ ເພງສັຣເສີນ ຂອງດາວິດ

To The leader. A Psalm of David.

1 ຂ້າແດ່ພຣະເຈົ້າ ຂໍຊົງສະດັບສຽງຂອງຂ້າພຣະອົງ ເມື່ອຂ້າພຣະອົງຮ້ອງທຸກ ຂໍຊົງສງວນຊີວິດຂອງຂ້າພຣະອົງ
ໄວ້ຈາກຄວາມຄິດຢ້ານສັດຕຣູ

2 ຂໍຊົງເຊື່ອງຂ້າພຣະອົງໄວ້ຈາກການຫາລືຢ່າງລັບໆຂອງຄົນໂຫດຮ້າຍ ຈາກການປອງຮ້າຍຂອງຄົນກະທໍາຜິດ

3 ຜູ້ຝົນລີ້ນຂອງເຂົາຢ່າງຝົນດາບ ຜູ້ເອົາຄໍາຂົມຂື່ນເລັງຢ່າງທະນູ

4 ຍິງອອກມາຈາກທີ່ຊຸ່ມຍັງຄົນປາສຈາກຕໍາຫນິ ຍິງເຂົາທັນທີແລະຢ່າງບໍ່ກົວເກງ

5 ເຂົາຍຶດຈຸດປະສົງຊົ່ວຂອງເຂົາໄວ້ຫມັ້ນ ເຂົາເວົ້າເຖິງການວາງກັບດັກຢ່າງລັບໆ ຄິດວ່າ, “ໃຜຈະເຫັນເຂົາທັງ
ຫລາຍໄດ້

6 ເຂົາທັງຫລາຍຄົ້ນຫາຄວາມບາບຜິດ ເຂົາຄິດແຜນການປອງຮ້າຍຂຶ້ນຢ່າງສລາດ” ເພາະຄວາມຄິດພາຍໃນ
ແລະຈິດໃຈຂອງມະນຸດນັ້ນລຶກລັບຫລາຍ

7 ແຕ່ພຣະເຈົ້າຈະຊົງຍິງທະນູໃສ່ເຂົາ ເຂົາຈະບາດເຈັບທັນທີ

8 ເພາະວ່າເຂົາທໍາໃຫ້ລີ້ນຂອງເຂົາເປັນສິ່ງສະດຸດແກ່ເຂົາເອງ ທຸກຄົນທີ່ເຫັນເຂົາຈະສັ່ນຫົວ

9 ແລ້ວທຸກຄົນຈະຢ້ານກົວ ເຂົາຈະບອກເຖິງກິຈການຂອງພຣະເຈົ້າ ແລະຕຶກຕອງເຖິງສິ່ງນັ້ນທີ່ພຣະອົງໄດ້ຊົງກະ
ທໍາແລ້ວ

10 ໃຫ້ຄົນຊອບທັມຊົມຊື່ນຍິນດີໃນພຣະເຈົ້າ ແລະລີ້ພັຍຢູ່ໃນພຣະອົງ ໃຫ້ຄົນທີ່ທ່ຽງທັມໃນຈິດໃຈອວດອ້າງພຣະ
ອົງ

## 65 ເພງສັຣເສີນ ບົດທີຫົກສິບຫ້າ

### ການສັຣເສີນແລະການຖວາຍຂອບພຣະຄຸນ

Thanksgiving for Earth’s Bounty

ເຖິງຫົວຫນ້ານັກຮ້ອງ ເພງສັຣເສີນ ຂອງດາວິດ ບົດເພງ

To the leader. A Psalm of David. A Song.

1 ໂອ້ຂ້າແດ່ພຣະເຈົ້າ ປະຊາຊົນຕ້ອງສັຣເສີນພຣະອົງທີ່ເມືອງຊີໂອນ ແລະຖວາຍສິ່ງທີ່ເຂົາສັນຍາໄວ້ກັບພຣະອົງ

2 ກໍຍ້ອນພຣະອົງຊົງຕອບຄຳອ້ອນວອນທັງຫລາຍຂອງເຂົາ ທຸກໆຄົນຈະຕ້ອງມາຫາພຣະອົງ

3 ເພາະເຫດຄວາມບາບ ຍ້ອນຄວາມຜິດຂອງຂ້າພຣະອົງທັງຫລາຍ ຂ້າພຣະອົງທັງຫລາຍຈຶ່ງຜ່າຍແພ້ ແຕ່ພຣະ
ອົງຊົງໃຫ້ອະພັຍບາບນັ້ນ

4 ຄວາມສຸກເປັນຂອງຜູ້ທີ່ພຣະອົງຊົງເລືອກໄວ້ ຄືຜູ້ທີ່ພຣະອົງຊົງນຳເຂົາເຂົ້າມາໃນສະຖານທີ່ສັກສິດ ຂ້າພຣະອົງ
ທັງຫລາຍຈະອີ່ມບໍຣິບູນດ້ວຍພຣະພອນແລະຂອງດີທີ່ພຣະວິຫານສັກສິດຂອງພຣະອົງ

5 ຂ້າແດ່ພຣະຜູ້ຊ່ອຍໃຫ້ພົ້ນຂອງຂ້າພຣະອົງທັງຫລາຍ ພຣະອົງຊົງຕອບຂ້າພຣະອົງທັງຫລາຍແລະຊົງຊ່ອຍຂ້າພ
ຣະອົງທັງຫລາຍໃຫ້ພົ້ນພັຍດ້ວຍການກະທຳສິ່ງອັສຈັນ ປະຊາຊົນທຸກຄົນຢູ່ໃນໂລກນີ້ ແລະຢູ່ຟາກນ້ຳທະເລທີ່
ມີລະຍະໄກກໍເຊື່ອໄວ້ວາງໃຈໃນພຣະອົງ

6 ພຣະອົງຊົງຕັ້ງພູທັງຫລາຍໄວ້ເປັນບ່ອນດ້ວຍອຳນາດອັນຍິ່ງໃຫຍ່ຂອງພຣະອົງ

7 ພຣະອົງຊົງທຳໃຫ້ສນັ່ນຫວັ່ນໄຫວຂອງຄື້ນນ້ຳທະເລງຽບສົງບລົງ ແລະຊົງທຳໃຫ້ສຽງອຶກກະທຶກຂອງປະຊາຊົນ
ມິດງຽບ

8 ຍ້ອນສິ່ງຍິ່ງໃຫຍ່ທີ່ພຣະອົງໄດ້ຊົງກະທຳທົ່ວທັງໂລກນີ້ຈຶ່ງຢ້ານກົວກິຈການຂອງພຣະອົງນຳເອົາສຽງໂຮ່ຮ້ອງຍິນ
ດີ ແຕ່ແຜ່ນດິນໂລກເບື້ອງຕາເວັນອອກຈົນເຖິງເບື້ອງຕາເວັນຕົກ

9 ພຣະອົງຊົງສັ່ງນ້ຳຝົນລົງມາບຳລຸງຮັກສາພື້ນແຜ່ນດິນ ພຣະອົງຊົງກະທຳໃຫ້ພື້ນແຜ່ນດິນນີ້ມັ່ງຄັ່ງແລະອຸດົມສົມ
ບູນ ນ້ຳຫ້ວຍທີ່ພຣະອົງຊົງປະທານໃຫ້ນ້ຳກໍບໍ່ເຫືອດແຫ້ງຈັກເທື່ອ ມັນໄດ້ເຮັດໃຫ້ພື້ນແຜ່ນດິນເກີດພືດຜົນ ນີ້
ແມ່ນການກະທຳຂອງ ພຣະອົງ

10 ພຣະອົງຊົງທຳໃຫ້ຝົນຕົກລົງທົດທົ່ງນາທີ່ໄຖແລ້ວຢ່າງພຽງພໍ ພຣະອົງຊົງເຮັດໃຫ້ດິນອ່ອນດ້ວຍຫ່າຝົນ ແລະຊົງ
ໃຫ້ຕົ້ນກ້າເກີດຂຶ້ນມາ

11 ຄວາມດີຂອງພຣະອົງຊົງປະທານການເກັບກ່ຽວອັນມັ່ງຄັ່ງສົມບູນ

12 ຕາມທົ່ງຫຍ້າກໍເຕັມໄປດ້ວຍພືດຜົນ ຕາມອ້ອມແອ້ມພູກໍເຕັມໄປດ້ວຍຄວາມມ່ວນຊື່ນ

13 ຝູງແກະກໍຢູ່ທົ່ວທົ່ງຫຍ້າ ຕາມຮ່ອມພູເຕັມແຕ່ເຂົ້າບເລ ເຂົາໂຮ່ຮ້ອງແລະຮ້ອງລຳທຳເພງຢ່າງມ່ວນຊື່ນ

## 66 ເພງສັຣເສີນ ບົດທີຫົກສິບຫົກ

### ສັຣເສີນເພາະພຣະຣາຊກິດຈອັນຍິ່ງໃຫຍ່ຂອງພຣະເຈົ້າ

Praise for God’s Goodness to Israel

ເຖິງຫົວຫນ້ານັກຮ້ອງ ບົດເພງ ເພງສັຣເສີນ

To the leader. A Song. A Psalm

1 ແຜ່ນດິນໂລກທັງສິ້ນເອີຍ ຈົ່ງທຳສຽງຊື່ນບານຖວາຍພຣະເຈົ້າ

2 ສັຣເສີນພຣະສະງ່າຣາສີແຫ່ງພຣະນາມຂອງພຣະອົງ ຈົ່ງຖວາຍສັຣເສີນຢ່າງຮຸ່ງເຮືອງຕໍ່ພຣະອົງ

3 ຈົ່ງທູນພຣະເຈົ້າວ່າ, “ພຣະຣາຊກິດຂອງພຣະອົງຫນ້າອັສຈັນ ຣິດທານຸພາບຂອງພຣະອົງຍິ່ງໃຫຍ່ຈົນສັດຕຣູ
ຫມອບຂາບຕໍ່ເບື້ອງພຣະພັກພຣະອົງ

4 ແຜ່ນດິນໂລກທັງສິ້ນຈະນະມັສການພຣະອົງ ເຂົາທັງຫລາຍຈະຮ້ອງເພງສັຣເສີນພຣະອົງ ຮ້ອງເພງສັຣເສີນພ
ຣະນາມຂອງພຣະອົງ”
5 ຈົ່ງມາເບິ່ງສິ່ງທີ່ພຣະເຈົ້າໄດ້ຊົງກະທຳພຣະຣາຊກິດຂອງພຣະອົງຫນ້າອັສຈັນຖ້າມກາງມະນຸດ
6 ພຣະອົງຊົງປ່ຽນທະເລໃຫ້ເປັນດິນແຫ້ງ ຄົນເດີນຂ້າມແມ່ນ້ຳໄປ ທີ່ນັ້ນເຮົາໄດ້ຍິນດີໃນພຣະອົງ
7 ຜູ້ຊົງປົກຄອງດ້ວຍອານຸພາບຂອງພຣະອົງເປັນນິດ ຜູ້ຊຶ່ງພຣະເນດເຝົ້າບັນດາປະຊາຊາດຢູ່ ຢ່າໃຫ້ຄົນມັກກະ
ບົດຍົກຍ້ອງຕົນເອງ
8 ຊົນຊາດທັງຫລາຍເອີຍ ຈົ່ງສັຣເສີນພຣະເຈົ້າຂອງເຮົາ ຈົ່ງໃຫ້ໄດ້ຍິນສຽງສັຣເສີນພຣະອົງ
9 ຜູ້ຊົງໃຫ້ເຮົາຢູ່ຖ້າມກາງຄົນເປັນ ແລະບໍ່ໄດ້ຊົງຍອມໃຫ້ຕີນເຮົາພາດລົ້ມລົງ
10 ຂ້າແດ່ພຣະເຈົ້າ ເພາະພຣະອົງຊົງລອງໃຈຂ້າພຣະອົງທັງຫລາຍ ພຣະອົງຊົງທົດລອງຂ້າພຣະອົງຢ່າງທົດລອງ
ເງິນ
11 ພຣະອົງຊົງນຳຂ້າພຣະອົງທັງຫລາຍເຂົ້າມາໃນຂ່າຍ ພຣະອົງຊົງວາງຄວາມທຸກຍາກໄວ້ທີ່ເອວຂອງຂ້າພຣະອົງ
12 ພຣະອົງຊົງໃຫ້ຄົນຂັບຣົດຣົບທັບຫົວຂອງຂ້າພຣະອົງທັງຫລາຍ ຂ້າພຣະອົງທັງຫລາຍຕ້ອງລຸຍໄຟລຸຍນ້ຳ ແຕ່ພ
ຣະອົງຍັງຊົງນຳຂ້າພຣະອົງມາສູ່ທີ່ປອດພັຍ
13 ຂ້າພຣະອົງຈະມາຍັງພຣະຜາສາດຂອງພຣະອົງພ້ອມດ້ວຍເຄື່ອງເຜົາບູຊາ ຂ້າພຣະອົງຈະແກ້ບົນຕໍ່ພຣະອົງ
14 ຕາມທີ່ປາກຂ້າພຣະອົງໄດ້ເວົ້າໄວ້ ແລະທີ່ປາກຂ້າພຣະອົງສັນຍາໃນຍາມທີ່ຂ້າພຣະອົງທຸກຍາກລຳບາກ
15 ຂ້າພຣະອົງຈະຖວາຍສັດອ້ວນພີເປັນເຄື່ອງເຜົາບູຊາດ້ວຍແກະເຖິກ ຂ້າພຣະອົງຈະຖວາຍບູຊາດ້ວຍງົວເຖິກ
ແລະແບ້
16 ບັນດາຜູ້ທີ່ເກງກົວພຣະເຈົ້າ ຂໍເຊີນມາຟັງ ແລະຂ້າພະເຈົ້າຈະບອກເຖິງວ່າພຣະອົງໄດ້ຊົງກະທຳສິ່ງໃດແກ່ຂ້າ
ພະເຈົ້າແດ່
17 ປາກຂ້າພະເຈົ້າໄດ້ຮ້ອງທູນພຣະອົງ ແລະລີ້ນຂ້າພະເຈົ້າໄດ້ຍົກຍ້ອງພຣະອົງ
18 ຖ້າຂ້າພະເຈົ້າໄດ້ຈື່ມຄວາມຊົ່ວໄວ້ໃນໃຈຂ້າພະເຈົ້າ ອົງພຣະຜູ້ເປັນເຈົ້າຄົງບໍ່ຊົງສະດັບຟັງ
19 ແຕ່ພຣະເຈົ້າໄດ້ຊົງສະດັບຟັງແນ່ນອນ ພຣະອົງໄດ້ຊົງຟັງສຽງຄຳອ້ອນວອນຂອງຂ້າພະເຈົ້າ
20 ສາທຸການແດ່ພຣະເຈົ້າ ເພາະວ່າພຣະອົງບໍ່ຊົງປະຕິເສດຄຳອ້ອນວອນຂອງຂ້າພະເຈົ້າ ຫລືຢັບຢັ້ງຄວາມຮັກ
ຫມັ້ນຄົງຂອງ ພຣະອົງເສັຽຈາກຂ້າພະເຈົ້າ

## 67 ເພງສັຣເສີນ ບົດທີຫົກສິບເຈັດ

### ການຮ້ອງເພງສັຣເສີນ ແລະການຖວາຍຂອບພຣະຄຸນ

The Nations Called to Praise God

ເຖິງຫົວຫນ້ານັກຮ້ອງໃຊ້ເຄື່ອງສາຍ ເພງສັຣເສີນ ບົດເພງ

To the leader: with stringed instruments. A Psalm. A Song.

1 ຂໍພຣະເຈົ້າຊົງພຣະເມດຕາກະຣຸນາແລະອວຍພອນແກ່ຂ້າພຣະອົງທັງຫລາຍ ຂໍຊົງເບິ່ງແຍງຂ້າພຣະອົງທັງ
ຫລາຍດ້ວຍ ຄວາມເມດຕາ
2 ເພື່ອວ່າທົ່ວທັງໂລກນີ້ຈະຮູ້ຈັກນ້ຳພຣະທັຍພຣະອົງ ແລະເພື່ອມະນຸດຊາດທັງຫລາຍຈະຮູ້ຈັກການຊ່ອຍໃຫ້ພົ້ນ
ຂອງພຣະອົງ
3 ຂ້າແດ່ພຣະເຈົ້າ ຂໍຊົງໃຫ້ປະຊາຊົນທັງປວງສັຣເສີນພຣະອົງ ຂໍຊົງໃຫ້ປະຊາຊົນທັງປວງສັຣເສີນພຣະອົງ

4 ຂໍຊົງໃຫ້ມະນຸດຊາດທັງຫລາຍຍິນດີ ແລະຮ້ອງເພງຢ່າງມ່ວນຊື່ນ ເພາະພຣະອົງຊົງປົກຄອງປະຊາຊົນດ້ວຍ
ຄວາມຍຸດຕິທັມ ແລະຊົງນຳໜ້າຊົນຊາດທັງປວງ
5 ຂ້າແດ່ພຣະເຈົ້າ ຂໍໃຫ້ປະຊາຊົນສັຣເສີນພຣະອົງ ຂໍໃຫ້ປະຊາຊົນທັງປວງສັຣເສີນພຣະອົງ
6 ແຜ່ນດິນໄດ້ເກີດຜົນແລະເກັບກ່ຽວ ເພາະພຣະເຈົ້າຂອງເຮົາໄດ້ອວຍພອນແກ່ເຮົາ
7 ພຣະເຈົ້າຊົງອວຍພອນແກ່ເຮົາແລ້ວ ໃນທີ່ສຸດປາຍແຜ່ນດິນໂລກຢ້ານກົວພຣະອົງ

## 68 ເພງສັຣເສີນ ບົດທີຫົກສິບແປດ

### ພຣະເຈົ້າແຫ່ງຊີນາຍແລະແຫ່ງສະຖານນະມັສການ

Praise and Thanksgiving

ເຖິງຫົວໜ້ານັກຮ້ອງ ເພງສັຣເສີນ ຂອງດາວິດ ບົດເພງ

To the leader. Of David. A Psalm. A Song.

1 ຂໍພຣະເຈົ້າຊົງລຸກຂຶ້ນ ໃຫ້ສັດຕຣູຂອງພຣະອົງກະຈາຍໄປ ໃຫ້ບັນດາຜູ້ທີ່ກຽດຊັງພຣະອົງໜີໄປຕໍ່ເບື້ອງພຣະ
ພັກພຣະອົງ
2 ຄວັນຖືກພັດໄປສັນໃດ ກໍຂໍຊົງໄລ່ເຂົາໄປສັນນັ້ນ ຂີ້ເຜີ້ງລະລາຍຕໍ່ໜ້າໄຟສັນໃດ ກໍຂໍໃຫ້ຄົນອະທັມພິນາດຕໍ່
ເບື້ອງພຣະພັກ ພຣະເຈົ້າສັນນັ້ນ
3 ແຕ່ຂໍໃຫ້ຄົນຊອບທັມເບີກບານ ໃຫ້ເຂົາຍິນດີຕໍ່ເບື້ອງພຣະພັກພຣະເຈົ້າ ໃຫ້ເຂົາສຸກໃຈ ແລະໂຮ່ຮ້ອງຢ່າງ
ມ່ວນຊື່ນ
4 ຈົ່ງຮ້ອງເພງຖວາຍພຣະເຈົ້າ ຈົ່ງຮ້ອງເພງສັຣເສີນພຣະນາມຂອງພຣະອົງ ຈົ່ງຍົກຍ້ອງພຣະອົງຜູ້ຊົງຂີ່ເມກເປັນ
ພາຫະນະ ພຣະນາມຂອງພຣະອົງຄືພຣະຜູ້ເປັນເຈົ້າ ຈົ່ງຍິນດີຕໍ່ເບື້ອງພຣະພັກພຣະອົງ
5 ພຣະເຈົ້າໃນທີ່ປະທັບບໍຣິສຸດຂອງພຣະອົງ ຊົງເປັນພຣະບິດາຂອງຄົນກຳພ້າແລະຊົງເປັນຜູ້ປ້ອງກັນຍິງໝ້າຍ
6 ພຣະເຈົ້າຊົງໃຫ້ຄົນເປົ່າປ່ຽວອາສັຍຢູ່ຕາມບ້ານເຮືອນ ພຣະອົງຊົງນຳຊະເລີຍອອກມາເຖິງຄວາມຮຸ່ງເຮືອງ ແຕ່
ຄົນມັກກະບົດອາສັຍໃນແຜ່ນດິນທີ່ແຕກຣະແຫງ
7 ຂ້າແດ່ພຣະເຈົ້າ ເມື່ອພຣະອົງສະເດັດນຳໜ້າປະຊາຊົນຂອງພຣະອົງ ເມື່ອພຣະອົງສະເດັດໄປຕາມຖິ່ນກັນ
ດານ
8 ແຜ່ນດິນໂລກກໍຫວັ່ນໄຫວ ທ້ອງຟ້າກໍເທຝົນລົງມາຕໍ່ເບື້ອງພຣະພັກພຣະເຈົ້າ ພູເຂົາຊີນາອີໂນ້ມສັ່ນສະເທືອນຕໍ່
ເບື້ອງພຣະພັກພຣະເຈົ້າ ຄືພຣະເຈົ້າຂອງອິສຣາເອນ
9 ຂ້າແດ່ພຣະເຈົ້າ ພຣະອົງຊົງເທຝົນອຸດົມລົງ ເມື່ອມໍຣະດົກຂອງພຣະອົງຊຸດໂຊມ ພຣະອົງຊົງຟື້ນຂຶ້ນໃຫມ່
10 ປະຊາຊົນຂອງພຣະອົງກໍມາອາສັຍໃນນັ້ນ ຂ້າແດ່ພຣະເຈົ້າ ໂດຍຄວາມດີຂອງພຣະອົງ ພຣະອົງຊົງຈັດຕຽມໄວ້
ໃຫ້ແກ່ຄົນຂັດສົນ
11 ອົງພຣະຜູ້ເປັນເຈົ້າປະທານພຣະວັຈນະ ພວກຜູ້ຍິງທີ່ນຳຂ່າວດີ ກໍເປັນພວກໃຫຍ່ໂຕ
12 ປະກາດວ່າ, “ບັນດາພຣະຣາຊາຂອງກອງທັບທັງຫລາຍ ເຂົາໜີໄປ ເຂົາໜີໄປ” ຜູ້ຍິງທີ່ຢູ່ບ້ານກໍເອົາເຄື່ອງຂອງ
ທີ່ຍຶດມາໄດ້ແບ່ງກັນ
13 ເມື່ອທ່ານທັງຫລາຍນອນຢູ່ຖ້າມກາງຄອກແກະ ປີກນົກພິຣາບກໍອາບເງິນ ແລະຂົນກໍເຫລືອງເຫລື້ອມໄປດ້ວຍ
ຄຳ
14 ເມື່ອຜູ້ຊົງມະຫິດທິຣິດກະຈາຍພຣະຣາຊາ ໃນທີ່ນັ້ນຫິມະກໍຕົກລົງເທິງພູຊັນໂມນ
15 ພູຊົງມະຫິດທິຣິດເອີຍ ພູເຂົາເມືອງບາຊານ ພູເຂົາຫລາຍຍອດເອີຍ ພູເຂົາເມືອງບາຊານ

16 ພູຫລາຍຍອດເອີຍ ເປັນຫຍັງເບິ່ງດ້ວຍຄວາມຣິສຍາ ບ່ອນພູຊຶ່ງພຣະເຈົ້າຊົງປະສົງໃຫ້ເປັນທີ່ພຳນັກຂອງພຣະ
ອົງ ພຣະຜູ້ເປັນເຈົ້າຈະປະທັບຢູ່ທີ່ນັ້ນເປັນນິດ
17 ອົງພຣະຜູ້ເປັນເຈົ້າສະເດັດຈາກຊີນາອີເຂົ້າໄປໃນສະຖານນະມັສການພ້ອມຣົດຮົບຂອງພຣະເຈົ້ານັບເປັນພັນໆ
18 ພຣະອົງສະເດັດຂຶ້ນສູ່ເບື້ອງສູງນຳຊະເລີຍໄປດ້ວຍ ແລະຮັບຂອງຂວັນຖ້າມກາງມະນຸດ ຂ້າແດ່ພຣະເຈົ້າ ແມ້
ຈາກຜູ້ທີ່ຂັດຂວາງທີ່ພຣະອົງປະທັບທີ່ນັ້ນ
19 ສາທຸການແດ່ພຣະຜູ້ເປັນເຈົ້າ ຜູ້ຊົງຄ້ຳຊູເຮົາທັງຫລາຍຢູ່ທຸກວັນ ພຣະເຈົ້າຜູ້ຊົງເປັນຄວາມລອດຂອງເຮົາ
20 ພຣະເຈົ້າຂອງເຮົາ ເປັນພຣະເຈົ້າແຫ່ງຄວາມລອດ ຊຶ່ງໄດ້ພົ້ນຄວາມຕາຍນັ້ນກໍຢູ່ທີ່ພຣະເຈົ້າ
21 ແຕ່ພຣະເຈົ້າຈະຊົງຕີຫົວຂອງສັດຕຣູຂອງພຣະອົງໃຫ້ແຕກ ຄືກະຫມ່ອມມີຜົມຂອງຜູ້ທີ່ຂືນດຳເນີນໃນທາງກັມ
ຊົ່ວຂອງເຂົາ
22 ອົງພຣະຜູ້ເປັນເຈົ້າສັ່ງວ່າ, "ເຮົາຈະນຳເຂົາທັງຫລາຍກັບມາຈາກບາຊານ ເຮົາຈະນຳເຂົາທັງຫລາຍກັບມາຈາກ
ທີ່ເລິກຂອງທະເລ
23 ເພື່ອເຈົ້າຈະເອົາຕີນອາບເລືອດ ເພື່ອລີ້ນຫມາຂອງເຈົ້າຈະມີສ່ວນຈາກຄູ່ສັດຕຣູຂອງເຈົ້າ"
24 ຂ້າແດ່ພຣະເຈົ້າ ຂະບວນແຫ່ຂອງພຣະອົງປາກົດແລ້ວ ຂະບວນແຫ່ຂອງພຣະເຈົ້າຂອງຂ້າພະເຈົ້າ ພຣະມະຫາ
ກະສັດຂອງຂ້າພະເຈົ້າເຂົ້າໃນສະຖານນະມັສການ
25 ນັກຮ້ອງນຳຫນ້າ ນັກດົນຕຣີຂັດທ້າຍລະຫວ່າງນັ້ນມີສະຕຣີຫລີ້ນຣຳມະນາ
26 "ທ່ານທັງຫລາຍຜູ້ເປັນເຊື້ອສາຍຂອງອິສຣາເອນ ຈົ່ງສັຣເສີນພຣະເຈົ້າຄືພຣະຜູ້ເປັນເຈົ້າໃນທີ່ຊຸມນຸມໃຫຍ່
27 ນັ້ນມີເບັນຢາມິນຜູ້ນ້ອຍທີ່ສຸດນຳຫນ້າບັນດາເຈົ້ານາຍຢູດາຢູ່ເປັນຫມູ່ໃຫຍ່ ເຈົ້ານາຍແຫ່ງເຊບູລູນ ເຈົ້ານາຍ
ແຫ່ງເນັຟທາລີ
28 ຂ້າແດ່ພຣະເຈົ້າ ຂໍຊົງໃຫ້ຣິດທານຸພາບຂອງພຣະອົງປາກົດ ຂ້າແດ່ພຣະເຈົ້າ ຂໍຊົງສຳແດງພຣະກຳລັງຂອງພ
ຣະອົງ ພຣະອົງຜູ້ໄດ້ຊົງກະທຳເພື່ອຂ້າພຣະອົງທັງຫລາຍ
29 ບັນດາພຣະຣາຊານຳຂອງກຳນັນມາຖວາຍພຣະອົງ ເນື່ອງດ້ວຍພຣະວິຫານຂອງພຣະອົງທີ່ເຢຣູຊາເລັມ
30 ຂໍຊົງຂະຫນາບສັດປ່າທີ່ຢູ່ໃນກໍຕົ້ນອໍ້ ຝູງງົວແລະລູກງົວ ຄືຊົນຊາດທັງຫລາຍ ຜູ້ຍົບຍອມດ້ວຍຖວາຍເງິນແຜ່ນ
ຂໍໃຫ້ຊົນຊາດທັງຫລາຍຜູ້ປິຕິຍິນດີໃນສົງຄາມໄດ້ກະຈັດພັດພາກໄປ
31 ຂໍໃຫ້ເຂົານຳພັສດຸທອງສັມຣິດມາຈາກເອຢິບ ຂໍໃຫ້ເອທິໂອເປັຽຮີບຍື່ນມືຂອງເຂົາອອກທູນພຣະເຈົ້າ
32 ບັນດາອານາຈັກແຫ່ງແຜ່ນດິນໂລກເອີຍ ຈົ່ງຮ້ອງເພງຖວາຍພຣະເຈົ້າ ຈົ່ງສັຣເສີນອົງພຣະຜູ້ເປັນເຈົ້າ
33 ຕໍ່ພຣະອົງຜູ້ຊົງເນຣະມິດຟ້າສວັນ ຟ້າສວັນດຶກດຳບັນ ພຣະອົງຊົງເປັ່ງພຣະສຸຣະສຽງຊົງມະຫິດທິຣິດ
34 ຈົ່ງຖວາຍຣິດທານຸພາບແດ່ພຣະເຈົ້າ ຊຶ່ງຄວາມສູງສົ່ງຂອງພຣະອົງຢູ່ເຫນືອອິສຣາເອນ ແລະຣິດທານຸພາບຂອງ
ພຣະອົງຢູ່ໃນທ້ອງຟ້າ
35 ພຣະເຈົ້າໃນສະຖານນະມັສການຫນ້າຢ້ານຢຳ ຄືພຣະເຈົ້າຂອງອິສຣາເອນ ພຣະອົງນັ້ນປະທານຣິດແລະກຳ
ລັງແກ່ໄພ່ພົນຂອງພຣະອົງ ສາທຸການແດ່ພຣະເຈົ້າ

## 69 ເພງສັຣເສີນ ບົດທີຫົກສິບເກົ້າ

### ຮ່ຳຮ້ອງເພາະຄວາມທຸກໃຈ

Prayer for Deliverance from Persecution

ເຖິງຫົວຫນ້ານັກຮ້ອງທຳນອງພັບພຶງ ຂອງດາວິດ

To the leader: according to Lilies. Of David.

1 ຂ້າແດ່ພຣະເຈົ້າ ຂໍຊົງຊ່ອຍຂ້າພຣະອົງໃຫ້ລອດ ເພາະນ້ຳຂຶ້ນມາເຖິງຄໍຂ້າພຣະອົງແລ້ວ

2 ຂ້າພຣະອົງຈົມຢູ່ໃນເລນເລິກບໍ່ມີທີ່ຢືນ ຂ້າພຣະອົງມາຢູ່ໃນນ້ຳເລິກ ແລະນ້ຳຖ້ວມຂ້າພຣະອົງ

3 ຂ້າພຣະອົງອ່ອນລະອາໃຈດ້ວຍເຫດຮ້ອງໄຫ້ ຄໍຂອງຂ້າພຣະອົງແຫ້ງ ຕາຂອງຂ້າພຣະອົງມົວລົງ ດ້ວຍການຄອຍຖ້າພຣະເຈົ້າຂອງຂ້າພຣະອົງ

4 ບັນດາຄົນທີ່ກຽດຊັງຂ້າພຣະອົງໂດຍໄຮ້ເຫດຜົນມີຫລາຍຍິ່ງກວ່າເສັ້ນຜົມເທິງຫົວຂ້າພຣະອົງ ຄົນທີ່ທຳລາຍຂ້າພຣະອົງກໍມີອິດທິພົນ ຄືຜູ້ທີ່ເປັນພວກສັດຕຣູຂອງຂ້າພຣະອົງຢ່າງບໍ່ມີເຫດ ບັດນີ້ຂ້າພຣະອົງຈະຕ້ອງສົ່ງຄືນສິ່ງທີ່ຂ້າພຣະອົງບໍ່ໄດ້ລັກໄປຫລື

5 ຂ້າແດ່ພຣະເຈົ້າ ພຣະອົງຊົງຮູ້ເຖິງຄວາມໂງ່ຂອງຂ້າພຣະອົງ ຄວາມຜິດທີ່ຂ້າພຣະອົງກະທຳແລ້ວຈະເຊື່ອງໄວ້ຈາກພຣະອົງບໍ່ໄດ້

6 ຂ້າແດ່ພຣະເຈົ້າຈອມໂຍທາ ຂໍຢ່າໃຫ້ບັນດາຜູ້ທີ່ຫວັງໃຈໃນພຣະອົງໄດ້ຮັບຄວາມອັບອາຍເພາະຂ້າພຣະອົງ ຂ້າແດ່ພຣະເຈົ້າຂອງອິສຣາເອນ ຂໍຢ່າໃຫ້ບັນດາຜູ້ທີ່ຊອກຫາພຣະອົງໄດ້ຮັບຄວາມອັປຍົດເພາະຂ້າພຣະອົງ

7 ທີ່ຂ້າພຣະອົງທົນການເຍາະເຍີ້ຍ ທີ່ຄວາມອັບອາຍໄດ້ຄຸມໜ້າຂ້າພຣະອົງໄວ້ກໍເພາະເຫັນແກ່ພຣະອົງ

8 ຂ້າພຣະອົງກາຍເປັນແຂກແປກໜ້າຂອງພີ່ນ້ອງ ແລະເປັນຄົນຕ່າງດ້າວຂອງລູກແຫ່ງມານດາຂ້າພຣະອົງ

9 ຄວາມຮ້ອນໃຈໃນເຣື່ອງພຣະວິຫານຂອງພຣະອົງໄດ້ຖ້ວມລົ້ນຂ້າພຣະອົງ ແລະຄຳເຍາະເຍີ້ຍພຣະອົງຕົກແກ່ຂ້າພຣະອົງ

10 ເມື່ອຂ້າພຣະອົງຖ່ອມໃຈລົງດ້ວຍການອົດອາຫານ ມັນກາຍເປັນການເຍາະເຍີ້ຍຂ້າພຣະອົງ

11 ເມື່ອຂ້າພຣະອົງໃຊ້ຜ້າກະສອບເປັນເຄື່ອງນຸ່ງຫົ່ມ ຂ້າພຣະອົງກັບເປັນຂີ້ປາກຂອງເຂົາ

12 ຄົນທີ່ນັ່ງທີ່ປະຕູເມືອງກໍເວົ້າເຣື່ອງຂ້າພຣະອົງ ຄົນຂີ້ເມົາແຕ່ງເພງຮ້ອງວ່າຂ້າພຣະອົງ

13 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ສ່ວນຂ້າພຣະອົງ ຂ້າພຣະອົງອ້ອນວອນຕໍ່ພຣະອົງ ຂ້າແດ່ພຣະເຈົ້າ ໃນເວລາອັນເຫມາະສົມໂດຍຄວາມຮັກຫມັ້ນຄົງອັນອຸດົມຂອງພຣະອົງ ຂໍຊົງໂຜດຕອບຂ້າພຣະອົງດ້ວຍຄວາມອຸປຖັມຢ່າງວາງໃຈໄດ້

14 ຂໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນຈາກການຈົມລົງໃນບຶງຕົມ ຂໍຊົງຊ່ອຍກູ້ຂ້າພຣະອົງຈາກຄົນທີ່ກຽດຊັງຂ້າພຣະອົງ ແລະຈາກນ້ຳເລິກ

15 ຂໍຢ່າໃຫ້ນ້ຳຖ້ວມຂ້າພຣະອົງ ຫລືນ້ຳທີ່ເລິກກືນຂ້າພຣະອົງເສັຽ ຫລືປາກແດນຜູ້ຕາຍງັບຂ້າພຣະອົງໄວ້

16 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຕອບຂ້າພຣະອົງ ເພາະຄວາມຮັກຫມັ້ນຄົງຂອງພຣະອົງນັ້ນປະເສີດ ຂໍຊົງຫັນມາຫາຂ້າພຣະອົງຕາມພຣະກະຣຸນາອັນອຸດົມຂອງພຣະອົງ

17 ຂໍຢ່າຊົງເຊື່ອງພຣະພັກຂອງພຣະອົງເສັຽຈາກຜູ້ຮັບໃຊ້ຂອງພຣະອົງ ເພາະຂ້າພຣະອົງທຸກໃຈ ຂໍຊົງຮີບຕອບຂ້າພຣະອົງ

18 ຂໍມາໃກ້ຂ້າພຣະອົງ ຊົງໄຖ່ຂ້າພຣະອົງໄວ້ ເພາະສັດຕຣູຂອງຂ້າພຣະອົງ ຂໍຊົງຊ່ອຍກູ້ຂ້າພຣະອົງ

19 ພຣະອົງຊົງຮູ້ການທີ່ເຂົາເຍາະເຍີ້ຍຂ້າພຣະອົງແລ້ວທັງຄວາມອາຍແລະຄວາມອັປຍົດຂອງຂ້າພຣະອົງ ພຣະອົງຊົງຮູ້ເຖິງບັນດາຄູ່ສັດຕຣູຂອງຂ້າພຣະອົງຫມົດ

20 ການເຍາະເຍີ້ຍກະທຳໃຫ້ຈິດໃຈຂ້າພຣະອົງຊອກຊ້ຳ ຂ້າພຣະອົງຈຶ່ງຫມົດກຳລັງໃຈ ຂ້າພຣະອົງມອງຫາຜູ້ສົງສານ ແຕ່ກໍບໍ່ມີ ຫາຜູ້ເລົ້າໂລມ ແຕ່ຂ້າພຣະອົງຫາບໍ່ພົບ

21 ເຂົາໃຫ້ຢາພິດແກ່ຂ້າພຣະອົງເປັນອາຫານ ເມື່ອຫິວນ້ຳ ເຂົາໃຫ້ນ້ຳສົ້ມແກ່ຂ້າພຣະອົງດື່ມ

22 ຂໍໃຫ້ສຳລັບທີ່ຢູ່ທາງຫນ້າເຂົາເອງເປັນກັບດັກເຂົາ ແລະການລ້ຽງໃນພິທີສັກກາຣະບູຊາເປັນບ້ວງ

23 ຂໍໃຫ້ຕາຂອງເຂົາມືດ ເພື່ອເຂົາຈະບໍ່ເຫັນ ແລະເຮັດໃຫ້ແອວເຂົາໃຫ້ສັ່ນສະເທື່ອນເລື້ອຍໄປ

24 ຂໍຊົງເທຄວາມໂກດລົງເຫນືອເຂົາ ແລະໃຫ້ຄວາມໂກດອັນເຜົາຮ້ອນຕາມທັນເຂົາ

25 ຂໍໃຫ້ຄ້າຍຂອງເຂົາຮ້າງເປົ່າ ຢ່າໃຫ້ຜູ້ໃດພັກຢູ່ໃນເຕັນຂອງເຂົາ

26 ເພາະເຂົາໄດ້ຂົ່ມເຫັງ ຜູ້ທີ່ພຣະອົງຊົງຊົງລົງໂທດ ເຂົາເລົ່າເຖິງຄວາມເຈັບປວດຂອງຜູ້ທີ່ພຣະອົງໃຫ້ບາດເຈັບແລ້ວ
27 ຂໍຊົງເພີ່ມໂທດ ແລ້ວຊົງເພີ່ມອີກ ຢ່າໃຫ້ເຂົາໄດ້ການອະພັຍຈາກພຣະອົງ
28 ຂໍໃຫ້ເຂົາຖືກລຶບອອກເສັຽຈາກທະບຽນຜູ້ມີຊີວິດ ຢ່າໃຫ້ເຂົາຂຶ້ນທະບຽນໄວ້ໃນຫມູ່ຄົນຊອບທັມ
29 ແຕ່ຂ້າພຣະອົງທຸກຍາກແລະເຈັບປວດ ຂ້າແດ່ພຣະເຈົ້າ ຂໍຄວາມລອດຂອງພຣະອົງຕັ້ງຂ້າພຣະອົງໄວ້ໃຫ້ສູງ
30 ຂ້າພະເຈົ້າຈະສັຣເສີນພຣະນາມພຣະເຈົ້າດ້ວຍບົດເພງ ຂ້າພະເຈົ້າຈະຍົກຍ້ອງພຣະອົງໂດຍໂມທະນາພຣະ
ຄຸນ
31 ການນັ້ນຈະເປັນທີ່ພໍພຣະທັຍພຣະເຈົ້າຫລາຍກວ່າການຖວາຍບູຊາງົວ ຫລືຖວາຍບູຊາງົວເຖິກເປັນໂຕແກ່ພ
ຣະອົງນັ້ນ
32 ຂໍໃຫ້ບັນດາຜູ້ທີ່ຖ່ອມໃຈເຫັນແລະຍິນດີ ທ່ານຜູ້ຊອກຫາພຣະເຈົ້າ ຂໍໃຫ້ໃຈຂອງທ່ານຟື້ນຊື່ນຂຶ້ນ
33 ເພາະພຣະຜູ້ເປັນເຈົ້າຊົງຟັງຄົນຂັດສົນ ແລະບໍ່ໄດ້ຊົງດູຫມິ່ນຄົນຂອງພຣະອົງທີ່ຖືກຈໍາຈອງ
34 ຂໍຟ້າສວັນແລະແຜ່ນດິນໂລກ ສັຣເສີນພຣະອົງ ທັງທະເລແລະສັພສິ່ງທີ່ເຄື່ອນໄຫວຢູ່ໃນນັ້ນ
35 ເພາະພຣະເຈົ້າຈະຊົງຊ່ອຍຊີໂອນໃຫ້ລອດ ແລະສ້າງຫົວເມືອງຢູດາຂຶ້ນ ເຂົາທັງຫລາຍຈະອາສັຍຢູ່ທີ່ນັ້ນ ແລະ
ໄດ້ເປັນກໍາມະສິດ
36 ລູກຫລານຂອງຜູ້ຮັບໃຊ້ຂອງພຣະອົງຈະໄດ້ເປັນມໍຣະດົກ ແລະບັນດາຜູ້ທີ່ຮັກພຣະນາມຂອງພຣະອົງຈະຢູ່ທີ່
ນັ້ນ

## 70 ເພງສັຣເສີນ ບົດທີເຈັດສິບ

### ຄໍາອ້ອນວອນຂໍຊົງຊ່ອຍກູ້

Prayer for Deliverance from Enemies

**(ພສສ 40:13-17)**

ເຖິງຫົວຫນ້ານັກຮ້ອງ ເພງສັຣເສີນຂອງດາວິດ ສໍາລັບການບູຊາອັນເປັນທີ່ລະລຶກ

To the leader, Of David, for the memorial offering.

1 ຂ້າແດ່ພຣະເຈົ້າ ຂໍຊົງພໍພຣະທັຍທີ່ຈະຊ່ອຍກູ້ຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຮີບມາຊ່ອຍຂ້າພຣະອົງ
ເຖີດ
2 ຂໍໃຫ້ຜູ້ປາຖນາທີ່ຈະໃຫ້ຂ້າພຣະອົງເຈັບນັ້ນ ຕ້ອງຫັນກັບໄປແລະໄດ້ຄວາມອັປຍົດ
3 ຜູ້ທີ່ເວົ້າໃຫ້ນັ້ນ ຂໍໃຫ້ຕ້ອງຕົກຕະລຶງເພາະຄວາມອາຍຂອງເຂົາ
4 ຂໍໃຫ້ບັນດາຜູ້ທີ່ສແວງຫາພຣະອົງຊົມຊື່ນແລະຍິນດີໃນພຣະອົງ ຂໍໃຫ້ບັນດາຜູ້ທີ່ຮັກຄວາມລອດຂອງພຣະອົງ
ກ່າວວ່າ, "ພຣະເຈົ້າຍິ່ງໃຫຍ່"
5 ແຕ່ຂ້າພຣະອົງຍາກຈົນແລະຂັດສົນ ຂ້າແດ່ພຣະເຈົ້າ ຂໍຊົງຮີບມາຊ່ອຍຂ້າພຣະອົງ ຂ້າແດ່ພຣະເຈົ້າ ຂໍຊົງຢ່າລໍ
ຊ້າ ພຣະອົງຊົງເປັນຜູ້ອຸປຖັມ ແລະຜູ້ຊ່ອຍກູ້ຂອງຂ້າພຣະອົງ

## 71 ເພງສັຣເສີນ ບົດທີເຈັດສິບເອັດ

### ຄໍາອ້ອນວອນຂອງຜູ້ເຖົ້າ

Prayer for Lifelong Protection and Help

1 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງເປັນທີ່ເພິ່ງຂອງຂ້າພຣະອົງ ຂໍຢ່າປ່ອຍໃຫ້ຂ້າພຣະອົງຜ່າຍແພ້ຈັກເທື່ອ
2 ເພາະວ່າພຣະອົງຊົງທ່ຽງທັມ ພຣະອົງຊົງຊ່ອຍຊີວິດຂ້າພຣະອົງໄວ້ ຂໍຊົງຟັງສຽງຂ້າພຣະອົງ ແລະຊົງຊ່ອຍຂ້າ
ພຣະອົງໃຫ້ພົ້ນພັຍ

3 ຂໍພຣະອົງຊົງເປັນບ່ອນພັກພາອາສັຍທີ່ປອດພັຍຂອງຂ້າພຣະອົງ ແລະເປັນປ້ອມອັນຫມັ້ນຄົງເພື່ອຄຸ້ມກັນຂ້າ
ພຣະອົງ ພຣະອົງຊົງປ້ອງກັນ ແລະເປັນທີ່ເພິ່ງຂອງຂ້າພຣະອົງ
4 ພຣະເຈົ້າຂອງຂ້າພຣະອົງ ຂໍຊົງຊ່ວຍຊີວິດຂ້າພຣະອົງໃຫ້ພົ້ນຈາກເງື້ອມມືຂອງຄົນໂຫດຮ້າຍແລະອະທັມ
5 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງມອບຄວາມຫວັງໄວ້ກັບພຣະອົງ ຂ້າພຣະອົງເຊື່ອພຣະອົງຕັ້ງແຕ່ຂ້າພຣະອົງ
ຍັງຫນຸ່ມ
6 ຂ້າພຣະອົງໄວ້ໃຈນຳພຣະອົງຕລອດຊົ່ວຊີວິດຂອງຂ້າພຣະອົງ ເພາະວ່າພຣະອົງຊົງຄຸ້ມຄອງຂ້າພຣະອົງຕັ້ງແຕ່
ຂ້າພຣະອົງໄດ້ເກີດມາ ຂ້າພຣະອົງຈະສັຣເສີນພຣະອົງຕລອດໄປ
7 ຊີວິດຂ້າພຣະອົງສ້າງຄວາມປລາດໃຈໃຫ້ຫລາຍຄົນ ແຕ່ພຣະອົງຊົງເປັນທີ່ເພິ່ງທີ່ດີຂອງຂ້າພຣະອົງ
8 ຂ້າພຣະອົງສັຣເສີນພຣະອົງ ແລະປ່າວປະກາດຄວາມສະງ່າຣາສີຂອງພຣະອົງຕລອດວັນ
9 ດຽວນີ້ຂ້າພຣະອົງເຖົ້າແກ່ແລ້ວ ຂໍຢ່າປະຖິ້ມຂ້າພຣະອົງເລີຍ ແລະດຽວນີ້ຂ້າພຣະອົງອ່ອນແຮງ ຂໍຢ່າປະລະຂ້າ
ພຣະອົງໄປ
10 ສັດຕຣູທັງຫລາຍຢາກສັງຫານຂ້າພຣະອົງ ເຂົາສົນທະນາວາງແຜນອຸບາຍຕໍ່ສູ້ຂ້າພຣະອົງ
11 ເຂົາເວົ້າວ່າ, “ພຣະເຈົ້າຊົງປະລະເຂົາແລ້ວ ຂໍໃຫ້ພວກເຮົາຕາມຈັບເຂົາ ເພາະວ່າຈະບໍ່ມີໃຜມາຊ່ວຍຊີວິດເຂົາ
ໄວ້ໄດ້”
12 ພຣະອົງເຈົ້າຂ້າ ຂໍຢ່າຢູ່ຫ່າງໄກຈາກຂ້າພຣະອົງ ໂອ ພຣະເຈົ້າຂອງຂ້າພຣະອົງ ຂໍຊົງຟ້າວມາຊ່ວຍຂ້າພຣະອົງ
ດ້ວຍ
13 ຂໍໃຫ້ຜູ້ທີ່ຕໍ່ສູ້ຂ້າພຣະອົງຖືກທຳລາຍແລະພ່າຍແພ້ໄປ ຂໍໃຫ້ຜູ້ທີ່ພຍາຍາມທຳຮ້າຍຂ້າພຣະອົງຖືກອັບອາຍຂາຍ
ຫນ້າແລະເສື່ອມເສັຽກຽດ
14 ຂ້າພຣະອົງຈະຝາກຄວາມຫວັງໄວ້ກັບພຣະອົງຕລອດໄປ ຂ້າພຣະອົງຈະສັຣເສີນພຣະອົງຫລາຍກວ່າເກົ່າ
15 ແລະຂ້າພຣະອົງຈະກ່າວແຕ່ເຣື່ອງຄວາມຊອບທັມ ແລະຄວາມຊ່ວຍໃຫ້ພົ້ນຂອງພຣະອົງຕລອດມື້ ເຖິງແມ່ນ
ວ່າຂ້າພຣະອົງບໍ່ເຂົ້າໃຈຄັກ ຂ້າພຣະອົງກໍຈະຍັງເວົ້າເຖິງຢູ່
16 ໂອ ຂ້າແດ່ພຣະເຈົ້າ ຂ້າພຣະອົງສັຣເສີນອຳນາດຂອງພຣະອົງ ຂ້າພຣະອົງຈະປ່າວປະກາດແຕ່ຄວາມຊອບທັມ
ຂອງພຣະອົງເທົ່ານັ້ນ
17 ຕັ້ງແຕ່ຂ້າພຣະອົງຍັງຫນຸ່ມ ພຣະອົງເຄີຍສັ່ງສອນຂ້າພຣະອົງ ຂ້າພຣະອົງຍັງຈະບອກຄົນອື່ນເຖິງກິຈການອັນ
ອັສຈັນຂອງພຣະອົງ
18 ຂ້າແດ່ພຣະເຈົ້າ ເຖິງແມ່ນວ່າຂ້າພຣະອົງເຖົ້າແກ່ຈົນຜົມຫງອກແລ້ວກໍຕາມ ຂໍພຣະອົງຢ່າຊົງປະລະຂ້າພຣະອົງ
ເລີຍ ໃນຂະນະທີ່ຂ້າພຣະອົງປະກາດເຖິງອຳນາດແລະຄວາມຍິ່ງໃຫຍ່ຂອງພຣະອົງແກ່ຄົນຮຸ່ນຫລັງ ຂໍພຣະອົງ
ຊົງສະຖິດຢູ່ກັບຂ້າພຣະອົງ
19 ຂ້າແດ່ພຣະເຈົ້າ ຄວາມຊອບທັມຂອງພຣະອົງສູງຈຸຟ້າ ພຣະອົງຊົງກະທຳການອັນຍິ່ງໃຫຍ່ ບໍ່ມີຜູ້ໃດເຫມືອນ
ດັ່ງພຣະອົງ
20 ພຣະອົງຊົງໃຫ້ຄວາມທຸກຍາກລຳບາກແລະການທໍຣະມານຕົກຖືກຂ້າພຣະອົງ ແຕ່ພຣະອົງຈະຊົງເສີມສ້າງເຫື່ອ
ແຮງຂອງຂ້າພຣະອົງຂຶ້ນໃຫມ່ ແລະຈະຊົງຮັກສາຂ້າພຣະອົງໃຫ້ພົ້ນຈາກຄວາມຕາຍ
21 ພຣະອົງຈະຊົງທຳໃຫ້ຂ້າພຣະອົງມີຍົດຖາບັນດາສັກຫລາຍກວ່າເກົ່າ ແລະຈະຊົງເລົ້າໂລມໃຈຂ້າພຣະອົງ
22 ຂ້າພຣະອົງຈະສັຣເສີນພຣະອົງດ້ວຍສຽງພິນ ພຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງຈະສັຣເສີນຄວາມສັດຊື່
ຂອງພຣະອົງ ຂ້າພຣະອົງດີດພິນແລະຮ້ອງເພງສັຣເສີນພຣະອົງ ຜູ້ຊົງເປັນອົງບໍຣິສຸດຂອງພວກອິສຣາເອນ
23 ຂ້າພຣະອົງຈະໂຮ່ຮ້ອງຢ່າງມ່ວນຊື່ນໃນຂນະທີ່ດີດພິນ ຂ້າພຣະອົງຈະຮ້ອງເພງດ້ວຍຫມົດຈິດຫມົດໃຈຂອງຂ້າ
ພຣະອົງ ເພາະວ່າພຣະອົງຊົງຊ່ວຍຂ້າພຣະອົງໃຫ້ພົ້ນພັຍ

24 ຂ້າພຣະອົງຈະກ່າວແຕ່ຄວາມຊອບທັມຂອງພຣະອົງຕລອດວັນ ເພາະວ່າຜູ້ທີ່ພຍາຍາມທຳອັນຕະຣາຍແກ່ຂ້າ
ພຣະອົງຈະຖືກອັບອາຍຂາຍໜ້າແລະເສື່ອມເສັຽກຽດ

## 72 ເພງສັຣເສີນ ບົດທີເຈັດສິບສອງ

**ການປົກຄອງຂອງພຣະຣາຊາຜູ້ຊອບທັມ**

Prayer for Guidance and Support for the king

ຂອງໂຊໂລໂມນ

Of solomon

1 ຂ້າແດ່ພຣະເຈົ້າ ຂໍປະທານຄວາມຍຸດຕິທັມຂອງພຣະອົງແກ່ພຣະຣາຊາ ແລະຄວາມຊອບທັມຂອງພຣະອົງແກ່
ຣາຊໂອຣົດ

2 ເພື່ອທ່ານຈະໄດ້ພິພາກສາໄພ່ພົນຂອງພຣະອົງ ດ້ວຍຄວາມຊອບທັມ ແລະຄົນຍາກຈົນຂອງພຣະອົງດ້ວຍ
ຄວາມຍຸດຕິທັມ

3 ໃຫ້ພູບັງເກີດສັນຕິສຸກສຳລັບປະຊາຊົນ ແລະເນີນເຂົາ ໂດຍຄວາມຊອບທັມ

4 ຂໍທ່ານສູ້ຄະດີຂອງຄົນຍາກຈົນແຫ່ງປະຊາຊົນໃຫ້ການຊ່ອຍກູ້ແກ່ລູກຫລານຂອງຄົນຂັດສົນ ແລະຜາບແພ້ຜູ້
ບີບບັງຄັບ

5 ຂໍໃຫ້ທ່ານດຳຣົງຊີວິດຕາບທີ່ດວງອາທິດຄົງຢູ່ ຕາບເທົ່າດວງຈັນຕລອດຊົ່ວຊາດອາຍຸຄົນ

6 ຂໍໃຫ້ທ່ານເປັນເຫມືອນຝົນທີ່ຕົກເທິງຫຍ້າທີ່ຕັດແລ້ວ ເຫມືອນຫ່າຝົນທີ່ຫົດແຜ່ນດິນໂລກ

7 ໃນສມັຍຂອງທ່ານ ຂໍຄວາມຊອບທັມຈະເຣີນຂຶ້ນ ແລະສັນຕິພາບອັນອຸດົມ ຈົນບໍ່ມີດວງຈັນ

8 ຂໍທ່ານຄອບຄອງຈາກທະເລເຖິງທະເລ ແລະຈາກແມ່ນ້ຳນັ້ນເຖິງທີ່ສຸດປາຍແຜ່ນດິນໂລກ

9 ບັນດາຜູ້ທີ່ຢູ່ໃນຖິ່ນກັນດານຈະຂາບລົງຕໍ່ເຂົາ ແລະໃຫ້ບັນດາສັດຕຣູຂອງທ່ານເລັຽຝຸ່ນດິນ

10 ຂໍບັນດາພຣະຣາຊາແຫ່ງເມືອງທາຣ໌ຊິສ ແລະຂອງເກາະທັງປວງຖວາຍຣາຊບັນນາການ ຂໍບັນດາພຣະຣາຊາ
ແຫ່ງເຊບາ ແລະເສບານຳຂອງກຳນັນ

11 ຂໍພຣະຣາຊາທັງປວງກາບລົງໄຫວ້ທ່ານ ບັນດາປະຊາຊາດຈົ່ງຮັບໃຊ້ທ່ານ

12 ເພາະທ່ານຊ່ອຍກູ້ຄົນຂັດສົນເມື່ອເຂົາຮ້ອງທູນ ຄົນຍາກຈົນ ແລະຄົນທີ່ໄຮ້ຜູ້ອຸປຖັມ

13 ທ່ານສົງສານຄົນອ່ອນເປັ້ຽ ແລະຄົນຂັດສົນ ແລະຊ່ອຍຊີວິດບັນດາຄົນຂັດສົນ

14 ທ່ານໄຖ່ຊີວິດຂອງເຂົາຈາກການບີບບັງຄັບແລະຄວາມທາຣຸນ ແລະໂລຫິດຂອງເຂົາກໍປະເສີດໃນສາຍຕາຂອງ
ທ່ານ

15 ຂໍທ່ານຜູ້ນັ້ນມີຊີວິດຍືນນານ ໃຫ້ຄົນຖວາຍທອງຄຳເມືອງເຊບາແກ່ທ່ານ ໃຫ້ເຂົາອ້ອນວອນເພື່ອທ່ານເລື້ອຍໄປ
ແລະອວຍພອນທ່ານຕລອດວັນ

16 ຂໍໃຫ້ມີເຂົ້າອຸດົມໃນແຜ່ນດິນ ໃຫ້ມັນແກວ່ງໄກວຮວງຢູ່ເທິງຍອດພູທັງຫລາຍ ຂໍໃຫ້ຜົນຂອງແຜ່ນດິນໂລກ
ເຫມືອນເລບານອນ ແລະໃຫ້ຄົນເບັ່ງບານອອກມາຈາກນະຄອນເຫມືອນຫຍ້າໃນທົ່ງນາ

17 ຂໍນາມຂອງທ່ານດຳຣົງຢູ່ເປັນນິດ ຊື່ສຽງຂອງທ່ານຢັ້ງຍືນຢ່າງດວງອາທິດ ໃຫ້ຄົນອວຍພອນກັນເອງໂດຍໃຊ້ຊື່
ທ່ານ ປະຊາຊາດທັງປວງເອີ້ນທ່ານວ່າ ຜູ້ໄດ້ຮັບພຣະພອນ

18 ສາທຸການແດ່ພຣະເຈົ້າ ພຣະເຈົ້າແຫ່ງອິສຣາເອນ ຜູ້ຊົງກະທຳສິ່ງມະຫັສຈັນແຕ່ພຣະອົງດຽວ

19 ສາທຸການແດ່ພຣະນາມຮຸ່ງເຮືອງຂອງພຣະອົງເປັນນິດ ຂໍພຣະສະງ່າຣາສີຂອງພຣະອົງເຕັມໂລກ ອາແມນ
ແລະອາແມນ

20 ຄຳອ້ອນວອນຂອງດາວິດ ບຸດຊາຍຂອງເຈສຊີ ຈົບເທົ່ານີ້

## BOOK III

(ພສສ 73-89)

## 73 ເພງສັຣເສີນ ບົດທີເຈັດສິບສາມ

### ຄວາມຍຸດຕິທັມຂອງພຣະເຈົ້າ

Plea for Relief from Oppressors

ເພງສັຣເສີນ ຂອງອາສາຟ

A Psalm of Asaph.

1 ພຣະເຈົ້າຊົງດີຕໍ່ອິສຣາເອນຢ່າງແທ້ຈິງ ແລະຕໍ່ຜູ້ມີຈິດໃຈບໍຣິສຸດ

2 ແຕ່ຝ່າຍຂ້າພຣະອົງ ຂ້າພຣະອົງເກືອບລົ້ມລົງ ຕີນຂອງຂ້າພຣະອົງເກືອບມື່ນພະລາດໄປ

3 ເພາະຂ້າພຣະອົງໄດ້ອິດສາຄົນຈອງຫອງ ຄືຄົນຊົ່ວຮ້າຍທີ່ຈະເຣີນຮຸ່ງເຮືອງ

4 ເຂົາບໍ່ໄດ້ທົນທຸກທໍຣະມານ ເຂົາມີສຸຂະພາບສົມບູນ

5 ເຂົາບໍ່ໄດ້ທົນທຸກທໍຣະມານເຫມືອນຄົນອື່ນ ແລະບໍ່ມີຄວາມຫຍຸ້ງຍາກລຳບາກເຫມືອນຄົນອື່ນມີຢູ່

6 ເຂົາເອົາຄວາມຈອງຫອງເຂົ້າໃສ່ຕົວ ດັ່ງເອົາສາຍສ້ອຍຄ້ອງຄໍໄວ້ ແລະເອົາຄວາມໂຫດຮ້າຍຫຸ້ມຫໍ່ຕົວເຫມືອນ
ຫົ່ມເສື້ອຄຸມ

7 ຫົວໃຈເຂົາສະແດງອອກແຕ່ຄວາມຊົ່ວຮ້າຍ ແລະຈິດໃຈຂອງເຂົາກໍເຕັມໄປດ້ວຍກົນອຸບາຍອັນຊົ່ວຮ້າຍ

8 ເຂົາຫົວຂວັນແລະເວົ້າຫຍໍ້ຫຍັນຄົນອື່ນ ເຂົາຈອງຫອງແລະເວົ້າແຕ່ຄວາມຊົ່ວ

9 ເຂົາເວົ້າຄວາມຊົ່ວຊ້າຕໍ່ພຣະເຈົ້າຜູ້ຊົງປະທັບຢູ່ເທິງຟ້າສວັນ ແລະອອກຄຳສັ່ງຢ່າງອວດອ້າງຈອງຫອງແກ່ມະ
ນຸດຢູ່ໃນໂລກນີ້

10 ຈົນໄພ່ພົນຂອງພຣະເຈົ້າກັບໄປຫາເຂົາ ແລະມັກເຊື່ອຄຳເວົ້າຂອງເຂົາ

11 ເຂົາເວົ້າວ່າ, "ພຣະເຈົ້າບໍ່ຮູ້ຫຍັງດອກ ພຣະຜູ້ຊົງຍິ່ງໃຫຍ່ກໍຈະບໍ່ພົບພໍ້ສິ່ງໃດ"

12 ຄົນຊົ່ວຊ້າກໍເປັນຢ່າງນີ້ ເຂົາມີທຸກສິ່ງອຸດົມສົມບູນ ແລະຈະເຣີນຂຶ້ນເລື້ອຍໆ

13 ການທີ່ຂ້າພຣະອົງທຳຕົນໃຫ້ບໍຣິສຸດ ແລະລ້າງມືໃຫ້ສະອາດຈາກຄວາມຜິດນັ້ນ ຈະບໍ່ມີປໂຍດຫຍັງບໍ່?

14 ພຣະອົງຊົງທຳໃຫ້ຂ້າພຣະອົງທົນທຸກທໍຣະມານຕລອດວັນ ແລະພຣະອົງຊົງລົງໂທດຂ້າພຣະອົງທຸກໆເຊົ້າ

15 ຫາກວ່າຂ້າພຣະອົງໄດ້ເວົ້າຢ່າງນີ້ ຂ້າພຣະອົງກໍຈະເປັນຄົນບໍ່ສັດຊື່ຕໍ່ໄພ່ພົນຂອງພຣະອົງ

16 ເຖິງແມ່ນວ່າການນີ້ຍາກເທົ່າໃດກໍຕາມ ຂ້າພຣະອົງກໍໄດ້ພຍາຍາມຢ່າງສຸດຄວາມສາມາດເພື່ອໃຫ້ເຂົ້າໃຈ
ເຣື່ອງນີ້

17 ຈົນກວ່າຂ້າພຣະອົງໄດ້ໄປເຖິງພຣະວິຫານຂອງພຣະອົງ ແລະເຂົ້າໃຈສິ່ງທີ່ຈະເກີດຂຶ້ນກັບຄົນຊົ່ວຮ້າຍນັ້ນ

18 ແນ່ນອນທີ່ສຸດ ພຣະອົງຊົງປ່ອຍໃຫ້ເຂົາພະລາດລົ້ມ ແລະໃຫ້ເຂົາຖືກທຳລາຍໄປ

19 ເຂົາຖືກທຳລາຍໃນບັດດຽວ ແລະລົງໄປສູ່ຈຸດຈົບອັນຫນ້າຢ້ານໃນຂັ້ນສຸດທ້າຍ

20 ຂ້າແດ່ພຣະຜູ້ເປັນເຈົ້າ ຊີວິດຂອງເຂົາເປັນເຫມືອນຄວາມຝັນ ເມື່ອພຣະອົງຊົງຕື່ນຈາກບັນທົມ ພຣະອົງກໍລືມ
ສິ່ງທີ່ເຂົາເປັນມານັ້ນ

21 ເມື່ອຈິດໃຈຂົມຂື່ນ ຂ້າພຣະອົງຮູ້ສຶກເຈັບປວດ

22 ຂ້າພຣະອົງເປັນຄົນໂງ່ຈ້າແລະຂາດຄວາມເຂົ້າໃຈຕໍ່ພຣະພັກຂອງພຣະອົງ ຂ້າພຣະອົງທຳຕົນເຫມືອນສັດເດັຽ
ລະສານ

23 ແຕ່ແລ້ວ ຂ້າພຣະອົງກໍຢູ່ກັບພຣະອົງເລື້ອຍມາ ພຣະອົງຊົງຈູງແຂນຂ້າພຣະອົງໄປ

24 ພຣະອົງຊົງນຳພາຂ້າພຣະອົງດ້ວຍການຕັກເຕືອນຂອງພຣະອົງ ແລະໃນທີ່ສຸດພຣະອົງຈະຕ້ອນຮັບຂ້າພຣະອົງ
ດ້ວຍກຽດຕິຍົດ
25 ນອກຈາກພຣະອົງ ຂ້າພຣະອົງບໍ່ມີຜູ້ໃດອີກໃນຟ້າສວັນ ແລະຂ້າພຣະອົງບໍ່ຕ້ອງການເຮັດສິ່ງໃດອີກໃນໂລກນີ້
26 ຈິດໃຈແລະຮ່າງກາຍຂອງຂ້າພຣະອົງອ່ອນແຮງລົງ ແຕ່ພຣະເຈົ້າຊົງເປັນກຳລັງເຊີດຊູຂ້າພຣະອົງ ພຣະອົງຊົງ
ເປັນທຸກສິ່ງທີ່ຂ້າພຣະອົງຕ້ອງການຕລອດໄປ
27 ແນ່ນອນທີ່ສຸດ ຜູ້ທີ່ປະລະພຣະອົງໄປຈະຕ້ອງຕາຍແລະຈະຖືກທຳລາຍ
28 ແຕ່ສຳລັບຂ້າພຣະອົງ ເປັນການດີທີ່ສຸດທີ່ຢູ່ໃກ້ພຣະອົງ ພຣະອົງເປັນທີ່ເພິ່ງຂອງຂ້າພຣະອົງ ແລະຂ້າພຣະອົງ
ຈະປ່າວປະກາດໃນທຸກໆສິ່ງທີ່ພຣະອົງຊົງກະທຳ

## 74 ເພງສັຣເສີນ ບົດທີເຈັດສິບສີ່

### ຄຳອ້ອນວອນພຣະເຈົ້າເພື່ອໃຫ້ຕໍ່ສູ້ສັດຕຣູແຫ່ງຊົນຊາດຂອງພຣະອົງ

Plea for Help in Time of National Humiliation

ມັສຄິລບົດນຶ່ງ ຂອງອາສາຟ

A Maskil of A saph

1 ຂ້າແດ່ພຣະເຈົ້າ ເຫດໃດພຣະອົງຊົງໂຍນຂ້າພຣະອົງທັງຫລາຍເສັຽເປັນນິດ ເຫດໃດຄວາມກິ້ວຂອງພຣະອົງ
ຈະກຸ່ນຂຶ້ນຕໍ່ແກະແຫ່ງທົ່ງຫຍ້າຂອງພຣະອົງ
2 ຂໍຊົງລະນຶກເຖິງຊຸມນຸມຊົນຂອງພຣະອົງ ຊຶ່ງພຣະອົງຊົງຊຸບລ້ຽງມາແຕ່ດຶກດຳບັນ ຊຶ່ງພຣະອົງຊົງໄຖ່ໄວ້ໃຫ້ເປັນ
ເຜົ່າແຫ່ງມໍຣະດົກຂອງພຣະອົງ ຂໍຊົງລະນຶກເຖິງພູຊີໂອນ ຊຶ່ງພຣະອົງຊົງເຄີຍປະທັບນັ້ນ
3 ຂໍຊົງນຳຍ່າງພຣະບາດຂອງພຣະອົງໄປຍັງທີ່ສລັກຫັກພັງເປັນນິດ ສັດຕຣູໄດ້ທຳລາຍທຸກສິ່ງໃນສະຖານນະມັສ
ການ
4 ພວກຄູ່ສັດຕຣູຂອງພຣະອົງຄຳຣາມຢູ່ກາງສະຖານປະຊຸມຂອງພຣະອົງ ເຂົາຕັ້ງຫມາຍສຳຄັນຂອງເຂົາເອງໄວ້
ເປັນຫມາຍສຳຄັນ
5 ເບິ່ງເຂົາເປັນເຫມືອນຄົນຍົກຂວານຂຶ້ນເຫນືອພຸ່ມຕົ້ນໄມ້
6 ແລ້ວບັນດາໄມ້ທີ່ແກະສລັກທັງສິ້ນ ເຂົາກໍພັງລົງມາເສັຽດ້ວຍຂວານແລະຄ້ອນ
7 ເຂົາເອົາໄຟເຜົາສະຖານນະມັສການຂອງພຣະອົງ ເຂົາທຳລາຍຄວາມສັກສິດແຫ່ງສະຖານທີ່ພຣະນາມຂອງພ
ຣະອົງປະທັບນັ້ນເຖິງດິນ
8 ເຂົາຣຳພຶງໃນໃຈວ່າ, “ເຮົາຈະເອົາຊະນະເຂົາທັງຫລາຍໃຫ້ສິ້ນເຊີງ” ເຂົາເຜົາບັນດາສະຖານປະຊຸມຂອງພຣະ
ເຈົ້າທີ່ໃນແຜ່ນດິນຫມົດ
9 ພວກເຮົາບໍ່ເຫັນຫມາຍສຳຄັນທັງຫລາຍຂອງເຮົາ ບໍ່ມີຜູ້ປະກາດພຣະທັມອີກແລ້ວໃນພວກເຮົາ ບໍ່ມີໃຜຮູ້ວ່າ
ເຫິງປານໃດ
10 ຂ້າແດ່ພຣະເຈົ້າ ຄູ່ສັດຕຣູຈະເຍີ້ຍຢູ່ດົນປານໃດ ສັດຕຣູຈະກ່າວຄຳຫຍາບຊ້າຕໍ່ພຣະນາມຂອງ
ພຣະອົງເປັນນິດຫລື
11 ເປັນຫຍັງພຣະອົງຈຶ່ງຫົດພຣະຫັດຂອງພຣະອົງເສັຽ ຄືພຣະຫັດຂວາຂອງພຣະອົງ ຂໍຊົງຢຽດພຣະຫັດຈາກພຣະ
ຊວງຂອງພຣະອົງທຳລາຍເຂົາເສັຽ
12 ເຖິ ງປານນັ້ນ ພຣະເຈົ້າກະສັດຂອງຂ້າພຣະອົງ ຊົງປະກອບກິຈຄວາມລອດຖ້າມກາງແຜ່ນດິນໂລກ
13 ພຣະອົງຊົງແຍກທະເລດ້ວຍຣິດທານຸພາບຂອງພຣະອົງ ພຣະອົງຊົງຫັກຫົວມັງກອນເທິງນ້ຳ

14 ພຣະອົງຊົງຍ່ອງຫົວທັງຫລາຍຂອງເລວີອາທານ ພຣະອົງປະທານມັນໃຫ້ເປັນອາຫານຂອງສັດແຫ່ງຖິ່ນກັນດານ
15 ພຣະອົງຊົງແຍກເປີດນໍ້າພຸແລະລໍາທານ ພຣະອົງຊົງໃຫ້ແມ່ນໍ້າທີ່ໄຫລຢູ່ສເມີແຫ້ງໄປ
16 ວັນເປັນຂອງພຣະອົງ ຄືນເປັນຂອງພຣະອົງ ພຣະອົງຊົງສະຖາປະນາດວງສະວ່າງແລະດວງອາທິດ
17 ພຣະອົງຊົງຈັດເຂດທັງສິ້ນຂອງແຜ່ນດິນໂລກ ພຣະອົງຊົງສ້າງຣະດູຮ້ອນແລະຣະດູຫນາວ
18 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລະນຶກເຖິງຂໍ້ນີ້ວ່າ ສັດຕຣູເຍາະເຍີ້ຍຢ່າງໃດ ແລະຊົນຊາດໂງ່ໄດ້ກ່າວຄໍາຫຍາບຊ້າຕໍ່ພຣະນາມຂອງພຣະອົງຢ່າງໃດ
19 ຂໍຢ່າຊົງມອບວິນຍານນົກເຂົາຂອງພຣະອົງແກ່ສັດປ່າ ຂໍຢ່າຊົງລືມຊີວິດຄົນຍາກຈົນຂອງພຣະອົງເປັນນິດ
20 ຂໍສົນພຣະທັຍໃນຄໍາສັນຍາຂອງພຣະອົງ ເພາະສະຖານທີ່ມືດຂອງແຜ່ນດິນເຕັມໄປດ້ວຍທີ່ຢູ່ຂອງຄວາມທາຣຸນ
21 ຂໍຢ່າໃຫ້ຜູ້ທີ່ຖືກຢຽບຢໍ່າໄດ້ອາຍ ຂໍໃຫ້ຄົນຈົນແລະຄົນຂັດສົນສັຣເສີນພຣະນາມຂອງພຣະອົງ
22 ຂ້າແດ່ພຣະເຈົ້າ ຂໍຊົງລຸກຂຶ້ນສູ້ຄະດີຂອງພຣະອົງ ຂໍຊົງລະນຶກວ່າຄົນໂງ່ເຍີ້ຍພຣະອົງຢູ່ຕລອດວັນ
23 ຂໍຢ່າຊົງລືມສຽງຂອງຄູ່ສັດຕຣູຂອງພຣະອົງ ສຽງອຶກກະທຶກຂອງຄົນທັງຫລາຍທີ່ຍົກຍໍຕໍ່ຕໍ່ສູ້ພຣະອົງກໍຂຶ້ນເລື້ອຍໆ

## 75 ເພງສັຣເສີນ ບົດທີເຈັດສິບຫ້າ

### ພຣະເຈົ້າຊົງຕັດສິນຄວາມ

Thanksgiving for God's Wondrous Deeds

ເຖິງຫົວຫນ້ານັກຮ້ອງ ທໍານອງຢ່າທໍາລາຍ ເພງສັຣເສີນ ຂອງອາສາຟ ບົດເພງ

Of Asaph. A Song.

1 ຂ້າພຣະອົງທັງຫລາຍຂໍໂມທະນາພຣະອົງ ຂ້າແດ່ພຣະເຈົ້າ ຂ້າພຣະອົງທັງຫລາຍຂໍໂມທະນາພຣະນາມຂອງພຣະອົງຢູ່ໃກ້ເຂົາເລົ່າເຖິງພຣະຣາຊກິດອັສຈັນຂອງພຣະອົງ
2 ເຖິງເວລາຊຶ່ງເຮົາໄດ້ກໍານົດໄວ້ ເຮົາຈະພິພາກສາດ້ວຍຄວາມທ່ຽງທັມ
3 ເມື່ອແຜ່ນດິນໂລກຄອນແຄນພ້ອມທັງບັນດາຊາວແຜ່ນດິນໂລກນັ້ນ ຜູ້ທີ່ຮັກສາພື້ນຖານຂອງມັນໃຫ້ຫມັ້ນຢູ່ ຄືເຮົາເອງ
4 ເຮົາເວົ້າກັບຄົນໂອ້ອວດວ່າ, "ຢ່າໂອ້ອວດ" ແລະແກ່ຄົນອະທັມວ່າ, "ຢ່າຍົກຫົວຂອງເຈົ້າຂຶ້ນ
5 ຢ່າຍົກຫົວຂອງເຈົ້າຂຶ້ນໃຫ້ສູງ ຫລືເວົ້າຈາຢ່າງໂອ້ອວດ"
6 ເພາະການຍົກຂຶ້ນນັ້ນບໍ່ໄດ້ມາຈາກທິດຕາເວັນອອກຫລືທິດຕາເວັນຕົກ ແລະບໍ່ແມ່ນມາຈາກຖິ່ນກັນດານ
7 ແຕ່ເປັນພຣະເຈົ້າຜູ້ຊົງກະທໍາການພິພາກສາ ຊົງໃຫ້ຄົນນຶ່ງລົງ ແລະຊົງຍົກອີກຄົນນຶ່ງຂຶ້ນ
8 ເພາະໃນພຣະຫັດຂອງພຣະເຈົ້າມີຈອກຫນ່ວຍນຶ່ງ ມີເຫລົ້າອະງຸ່ນເປັນຟອງປະສົມໄວ້ດີ ພຣະອົງຊົງເທຂອງດື່ມຈາກຈອກນັ້ນ ແລະຄົນອະທັມຂອງແຜ່ນດິນໂລກທັງສິ້ນຈະດື່ມຫມົດຈົນຍອດສຸດທ້າຍ
9 ແຕ່ຂ້າພະເຈົ້າຈະຍິນດີເປັນນິດ ຂ້າພະເຈົ້າຈະຮ້ອງເພງສັຣເສີນພຣະເຈົ້າຂອງຢາໂຄບ
10 "ເຮົາຈະທໍາລາຍອໍານາດຂອງຄົນອະທັມອອກຫມົດ ແຕ່ອໍານາດຂອງຜູ້ຊອບທັມຈະທະວີຂຶ້ນ"

## 76 ເພງສັຣເສີນ ບົດທີເຈັດສິບຫົກ

### ພຣະເຈົ້າແຫ່ງຊັຍຊະນະແລະການພິພາກສາ

**Israel’s God--Judge of All The Earth**

ເຖິງຫົວໜ້ານັກຮ້ອງໃຊ້ເຄື່ອງສາຍ ເພງສັຣເສີນ ຂອງ

ອາສາຟ ບົດເພງ

To the leader: with stringed instruments. A Psalm of Asaph. A Song.

1 ໃນຢູດາເຂົາຮູ້ຈັກພຣະເຈົ້າ ໃນອິສຣາເອນພຣະນາມຂອງພຣະອົງຍິ່ງໃຫຍ່
2 ທີ່ປະທັບຂອງພຣະອົງຕັ້ງຢູ່ໃນຊາເລັມ ທີ່ພຳນັກຂອງພຣະອົງຢູ່ໃນຊີໂອນ
3 ທີ່ນັ້ນ ພຣະອົງຊົງຫັກລູກທະນູເພີງ ໂລ້ ດາບ ແລະຍຸດທະພັນ
4 ພຣະອົງຊົງສະງ່າຣາສີສູງສົ່ງຍິ່ງພູເຂົານິຣັນ
5 ດ້ວຍວ່າຄົນໃຈເຂັ້ມແຂງຖືກປຸ້ນສະດົມ ເຂົາຫລັບຢູ່ ທະຫານທີ່ອົງອາດເກັ່ງກ້າທັງຫມົດບໍ່ສາມາດໃຊ້ມືຂອງ
ເຂົາອີກໄດ້ແລ້ວ
6 ຂ້າແດ່ພຣະເຈົ້າຂອງຢາໂຄບ ພໍພຣະອົງຊົງຂນາບທັງມ້າແລະຄົນຂີ່ກໍລ່ວງລັບໄປ
7 ແຕ່ພຣະອົງເຈົ້າ ພຣະອົງຊົງເປັນທີ່ຢ້ານກົວ ເມື່ອພຣະອົງຊົງກິ້ວຂຶ້ນແລ້ວ ໃຜຈະຢືນຕໍ່ເບື້ອງພຣະພັກພຣະອົງ
ໄດ້
8 ຈາກຟ້າສວັນພຣະອົງຊົງລັ່ນຄຳພິພາກສາ ທົ່ວທັງໂລກກໍຢ້ານກົວແລະມິດງຽບ
9 ເມື່ອພຣະເຈົ້າຊົງລຸກຂຶ້ນພິພາກສາ ເພື່ອຊ່ອຍຜູ້ຖືກບີບບັງຄັບທັງຫມົດຂອງແຜ່ນດິນໂລກໃຫ້ລອດ
10 ຄວາມໂກດຂອງມະນຸດກໍເປັນແຕ່ພຽງການສັຣເສີນພຣະອົງ ຜູ້ທີ່ລອດຈາກການເສິກຈະສລອງຊັຍຊະນະຂອງ
ພຣະຜູ້ເປັນເຈົ້າ
11 ຈົ່ງຖວາຍແກ່ພຣະຜູ້ເປັນເຈົ້າຄືພຣະເຈົ້າຕາມທີ່ໄດ້ສັນຍາໄວ້ ໃຫ້ຄົນທີ່ຢູ່ອ້ອມພຣະອົງນຳຂອງຂວັນມາຖວາຍ
ແກ່ພຣະອົງຜູ້ຊຶ່ງເຂົາຄວນເກງກົວ
12 ຜູ້ຊົງຕັດນ້ຳຈິດຂອງເຈົ້ານາຍ ຜູ້ຊົງເປັນທີ່ຫນ້າຢ້ານກົວແກ່ບັນດາພຣະຣາຊາແຫ່ງແຜ່ນດິນໂລກ

## 77 ເພງສັຣເສີນ ບົດທີເຈັດສິບເຈັດ

### ຄວາມປອບໃຈອັນໄດ້ຈາກການລະນຶກເຖິງພຣະຣາຊກິຈອັນຍິ່ງໃຫຍ່ຂອງພຣະເຈົ້າ

**God’s Mighty Deeds Recalled**

ເຖິງຫົວຫນ້ານັກຮ້ອງ ທຳນອງເຢດູທູນ ເພງສັຣເສີນ ຂອງ

ອາສາຟ

To the leader: According to Jeduthun. Of Asaph.

A Psalm.

1 ຂ້າພະເຈົ້າຮ້ອງທູນພຣະເຈົ້າ ທູນຕໍ່ພຣະເຈົ້າເພື່ອພຣະອົງຈະຊົງຟັງຂ້າພະເຈົ້າ
2 ໃນວັນຍາກລຳບາກຂອງຂ້າພະເຈົ້າ ຂ້າພະເຈົ້າສແວງຫາອົງພຣະຜູ້ເປັນເຈົ້າ ໃນກາງຄືນມືຂ້າພະເຈົ້າຢຽດບໍ່
ຢຸດ ຈິດໃຈຂອງຂ້າພະເຈົ້າບໍ່ຮັບຄຳເລົ້າໂລມ
3 ຂ້າພະເຈົ້າຄຶດເຖິງພຣະເຈົ້າ ຂ້າພະເຈົ້າກໍຖອນຫາຍໃຈ ຂ້າພະເຈົ້າຕຶກຕອງ ຈິດໃຈຂອງຂ້າພະເຈົ້າກໍອ່ອນລະ
ອາໄປ
4 ພຣະອົງຊົງຈັບຫນັງຕາຂອງຂ້າພະເຈົ້າໄວ້ບໍ່ໃຫ້ປິດ ຂ້າພະເຈົ້າທຸກຫລາຍຈົນເວົ້າບໍ່ອອກ
5 ຂ້າພະເຈົ້າພິຈາຣະນາເຖິງສມັຍກ່ອນ ຂ້າພະເຈົ້າຈຳປີທີ່ດົນນານມາແລ້ວໄດ້
6 ຂ້າພະເຈົ້າພາວະນາໃນໃຈຂອງຂ້າພະເຈົ້າໃນກາງຄືນ ຂ້າພະເຈົ້າຕຶກຕອງແລະວິນຍານຈິດຂອງຂ້າພະເຈົ້າກໍ
ຊອກຫາ
7 “ອົງພຣະຜູ້ເປັນເຈົ້າຈະຊົງປະຖິ້ມເປັນນິດ ແລະຈະບໍ່ເຄີຍພໍພຣະທັຍອີກຫລື

8 ຄວາມຮັກຫມັ້ນຄົງຂອງພຣະອົງຈະລະງັບຢູ່ເປັນນິດຫລື ພຣະສັນຍາຂອງພຣະອົງຈະສິ້ນສຸດຕລອດຊົ່ວອາຍຸ
ຄົນຫລື
9 ພຣະເຈົ້າຊົງລືມທີ່ຈະຊົງພຣະກະຣຸນາຫລື ເພາະພຣະພິໂຣດ ພຣະອົງຈຶ່ງປິດຄວາມສົງເວດເສັຽຫລື”
10 ແລະຂ້າພະເຈົ້າວ່າ, “ທີ່ພຣະຫັດຂວາຂອງພຣະອົງຜູ້ສູງສຸດປ່ຽນໄປ ນັ້ນແຫລະເປັນຄວາມທຸກຂອງຂ້າພະເຈົ້າ”
11 ຂ້າພະເຈົ້າຈະຣະນຶກເຖິງພຣະຣາຊກິດທັງປວງຂອງພຣະຜູ້ເປັນເຈົ້າ ຂ້າພຣະອົງຈະຈົດຈຳບັນດາການອັສຈັນ
ຂອງພຣະອົງໃນສມັຍກ່ອນໆ
12 ຂ້າພຣະອົງຈະຕຶກຕອງເຖິງພຣະຣາຊກິດອັນຊົງຣິດຂອງພຣະອົງ
13 ຂ້າແດ່ພຣະເຈົ້າ ວິທີການຂອງພຣະອົງບໍຣິສຸດ ບໍ່ມີພຣະອົງໃດຈະຍິ່ງໃຫຍ່ກວ່າພຣະເຈົ້າຂອງເຮົາ
14 ພຣະອົງຄືພຣະເຈົ້າຜູ້ຊົງກະທຳການອັສຈັນ ຜູ້ຊົງສຳແດງຣິດທານຸພາບຂອງພຣະອົງຖ້າມກາງຊົນຊາດທັງ
ຫລາຍ
15 ພຣະອົງໄດ້ຊົງໄຖ່ປະຊາຊົນຂອງພຣະອົງດ້ວຍພຣະກອນຂອງພຣະອົງ ຄືເຊື້ອສາຍຂອງຢາໂຄບ ແລະໂຢເຊັບ
16 ເມື່ອນ້ຳເຫັນພຣະອົງ, ຂ້າແດ່ພຣະເຈົ້າ ເມື່ອນ້ຳເຫັນພຣະອົງມັນກໍເກງກົວ ບ່ອນເລິກໃນທ້ອງທະເລກໍສັ່ນສະ
ເທືອນດ້ວຍ
17 ເມກເທນ້ຳລົງມາ ທ້ອງຟ້າກໍຄະນອງສຽງ ລູກທະນູຂອງພຣະອົງກໍປິວໄປປິວມາ
18 ຟ້າຜ່າຂອງພຣະອົງມີສຽງຢູ່ໃນລົມບ້າຫມູ ຟ້າແລບທຳໃຫ້ພິພົບສວ່າງ ແຜ່ນດິນໂລກກໍສັ່ນສະເທືອນແລະຫວັ່ນ
ໄຫວ
19 ທາງຂອງພຣະອົງຢູ່ໃນທະເລ ພຣະວິຖີຂອງພຣະອົງຢູ່ໃນນ້ຳທັງຫລາຍ ເຖິງປານນັ້ນຮອຍພຣະບາດຂອງພຣະ
ອົງກໍບໍ່ມີໃຜຮູ້
20 ພຣະອົງຊົງນຳໄພ່ພົນຂອງພຣະອົງ ໂດຍມືຂອງໂມເຊ ແລະອາໂຣນເຫມືອນຝູງແກະ

## 78 ເພງສັຣເສີນ ບົດທີເຈັດສິບແປດ

### ຄວາມສັດສຸຈຣິດຂອງພຣະເຈົ້າຕໍ່ຊົນຊາດຜູ້ບໍ່ຊື່ສັດຂອງພຣະອົງ

God’s Goodness and Israel’s Ingratitude

ມັສຄີລບົດນຶ່ງ ຂອງອາສາຟ

A Maskil of Asaph.

1 ປະຊາຊົນຂອງຂ້າພະເຈົ້າເອີຍ ຈົ່ງງ່ຽງຫູຟັງຄຳສອນຂອງຂ້າພະເຈົ້າ ອ່ຽງຫູຂອງທ່ານທັງຫລາຍຟັງຖ້ອຍຄຳ
ຈາກປາກຂ້າພະເຈົ້າ
2 ຂ້າພະເຈົ້າຈະອ້າປາກກ່າວຄຳອຸປມາ ຂ້າພະເຈົ້າຈະກ່າວຄຳລັບເລິກຂອງບູຮານນະການ
3 ເຖິງສິ່ງທີ່ເຮົາທັງຫລາຍໄດ້ຍິນໄດ້ຮູ້ທີ່ບັນພະບຸຣຸດຂອງເຮົາໄດ້ບອກເຮົາ
4 ເຮົາບໍ່ໄດ້ເຊື່ອງໄວ້ຈາກລູກຫລານຂອງເຂົາ ແຕ່ຈະບອກແກ່ເຊື້ອສາຍທີ່ກຳລັງເກີດມາ ເຖິງພຣະຣາຊກິຈອັນ
ຄວນສັຣເສີນຂອງພຣະຜູ້ເປັນເຈົ້າ ແລະຣິດທານຸພາບຂອງພຣະອົງ ແລະການອັດສະຈັນຊຶ່ງພຣະອົງໄດ້ຊົງກະ
ທຳ
5 ເພາະພຣະອົງຊົງສະຖາປະນາກົດບັນຍັດໄວ້ໃນຢາໂຄບ ແລະຊົງແຕ່ງຕັ້ງກົດຫມາຍໄວ້ໃນອິສຣາເອນ ຊຶ່ງພຣະ
ອົງຊົງບັນຊາແກ່ບັນພະບຸຣຸດຂອງເຮົາ ວ່າໃຫ້ແຈ້ງເຣື່ອງຣາວເຫລົ່ານັ້ນແກ່ລູກຫລານຂອງເຂົາ
6 ເພື່ອເຊື້ອສາຍລຸ້ນຕໍ່ໄປຈະຮູ້ເຣື່ອງຄືລູກຫລານທີ່ຈະເກີດມາ ແລະບອກລູກຫລານຕໍ່ໄປຕາມຜຽນຂອງເຂົາ
7 ເພື່ອເຂົາຈະຕັ້ງຄວາມຫວັງຂອງເຂົາໄວ້ໃນພຣະເຈົ້າ ແລະບໍ່ລືມພຣະຣາຊກິຈຂອງພຣະເຈົ້າ ແຕ່ຮັກສາພຣະ
ບັນຍັດຂອງ ພຣະອົງ

8 ແລະເພື່ອເຂົາຈະບໍ່ໄດ້ເຫມືອນບັນພະບຸຣຸດຂອງເຂົາ ຄືເຊື້ອສາຍທີ່ດື້ດ້ານແລະມັກກະບົດ ເຊື້ອຊາດທີ່ຈິດໃຈບໍ່
ຫມັ້ນຄົງ ຜູ້ຊຶ່ງຈິດວິນຍານຂອງເຂົາບໍ່ຫມັ້ນຄົງຕໍ່ພຣະເຈົ້າ
9 ບັນດາຄົນເອຟຣາອີມທີ່ຖືອາວຸດຫນ້າແລະທະນູ ໄດ້ແລ່ນປົບຫນີໃນວັນສົງຄາມ
10 ເຂົາທັງຫລາຍບໍ່ໄດ້ຮັກສາຄໍາສັນຍາຂອງພຣະເຈົ້າ ແລະປະຕິເສດທີ່ຈະເດີນຕາມກົດຫມາຍຂອງພຣະອົງ
11 ເຂົາລືມສິ່ງທີ່ພຣະອົງໄດ້ຊົງກະທໍາ ແລະການອັສຈັນຊຶ່ງພຣະອົງຊົງສໍາແດງແກ່ເຂົາ
12 ພຣະອົງຊົງກະທໍາການປະຫລາດຕໍ່ຫນ້າຕໍ່ຕາບັນພະບຸຣຸດຂອງເຂົາໃນແຜ່ນດິນເອຢິບ ໃນໄຮ່ນາໂຊອານ
13 ພຣະອົງຊົງແຍກທະເລ ແລະໃຫ້ເຂົາຍ່າງຜ່ານໄປ ແລະກະທໍາໃຫ້ນໍ້າຕັ້ງຢູ່ເຫມືອນກອງສູງ
14 ໃນກາງເວັນພຣະອົງຊົງນໍາເຂົາດ້ວຍເມກ ແລະກາງຄືນດ້ວຍແສງໄຟຄືຍັງຮຸ່ງ
15 ພຣະເຈົ້າຊົງຜ່າຫີນໃນຖິ່ນກັນດານປະທານນໍ້າເປັນອັນມາກໃຫ້ເຂົາດື່ມ ເຫມືອນມາຈາກທີ່ເລິກ
16 ພຣະອົງຊົງກະທໍາໃຫ້ລໍາທານອອກມາຈາກຫີນ ຊົງກະທໍາໃຫ້ນໍ້າໄຫລລົງມາເຫມືອນແມ່ນໍ້າ
17 ແຕ່ເຂົາຍັງກະທໍາບາບຍິ່ງຂຶ້ນຕໍ່ພຣະອົງ ໄດ້ກະບົດຕໍ່ອົງຜູ້ສູງສຸດໃນທີ່ແຫ້ງແລ້ງ
18 ເຂົາທົດລອງພຣະເຈົ້າຢູ່ໃນໃຈຂອງເຂົາ ໂດຍຮຽກຮ້ອງອາຫານທີ່ເຂົາຢາກ
19 ເຂົາເວົ້າຕໍ່ສູ້ພຣະເຈົ້າວ່າ, “ພຣະເຈົ້າຈະຊົງຕຽມສໍາລັບໃນຖິ່ນກັນດານໄດ້ຫລື”
20 ເບິ່ງແມ, ພຣະອົງຊົງຕີຫີນໃຫ້ນໍ້າພຸອອກມາ ແລະລໍາທານກໍໄຫລລົ້ນ ພຣະອົງຈະປະທານເຂົ້າຈີ່ດ້ວຍໄດ້ຫລື
ຫລືຊົງຈັດເນື້ອໃຫ້ປະຊາຊົນຂອງພຣະອົງໄດ້ຫລື”
21 ເຫດສັນນັ້ນ ເມື່ອພຣະເຈົ້າຊົງສະດັບຟັງແລ້ວ ພຣະອົງຊົງພຣະພິໂຣດ ມີໄຟລຸກຂຶ້ນສູ້ຢາໂຄບ ພຣະພິໂຣດ
ຂອງພຣະອົງສູງຂຶ້ນສູ້ອິສຣາເອນ
22 ເພາະເຂົາບໍ່ເຊື່ອພຣະເຈົ້າ ແລະບໍ່ໄວ້ວາງໃຈໃນຣິດຊ່ອຍຂອງພຣະອົງ
23 ພຣະອົງຍັງຊົງບັນຊາຟ້າເບື້ອງເທິງ ແລະຊົງເປີດປະຕູຟ້າສວັນ
24 ພຣະອົງຊົງຫລັ່ງມານາໃຫ້ເຂົາຮັບປະທານ ແລະຊົງປະທານອາຫານທິບໃຫ້ເຂົາ
25 ມະນຸດໄດ້ກິນອາຫານຂອງທູດສວັນ ພຣະອົງຊົງປະທານອາຫານໃຫ້ເຂົາຢ່າງອຸດົມ
26 ພຣະອົງຊົງກະທໍາໃຫ້ລົມຕາເວັນອອກພັດໃນຟ້າສວັນ ແລະຊົງນໍາລົມໃຕ້ອອກມາດ້ວຍຣິດຂອງພຣະອົງ
27 ພຣະອົງຊົງຫລັ່ງເນື້ອໃຫ້ເຂົາຢ່າງຜົງຂີ້ຝຸ່ນ ຄືນົກດັ່ງເມັດຊາຍທະເລ
28 ພຣະອົງຊົງໃຫ້ມັນຕົກລົງມາກາງຄ້າຍຂອງເຂົາ ແລະຮອບທີ່ອາສັຍຂອງເຂົາ
29 ເຂົາໄດ້ຮັບປະທານອີ່ມດີ ເພາະພຣະອົງປະທານສິ່ງທີ່ເຂົາຢາກ
30 ແຕ່ກ່ອນທີ່ເຂົາຈະຫາຍຢາກ ໃນຂນະທີ່ອາຫານຍັງຢູ່ໃນປາກຂອງເຂົາ
31 ພຣະພິໂຣດຂອງພຣະເຈົ້າກໍລະເບີດຂຶ້ນຕໍ່ເຂົາ ແລະພຣະອົງຊົງສັງຫານຄົນສະກັນທີ່ສຸດຂອງເຂົາເສັຽ ແລະຊົງ
ຂວໍ້າຄົນຫນຸ່ມໃນອິສຣາເອນເສັຽ
32 ແຕ່ປານນັ້ນ ເຂົາກໍຍັງກະທໍາບາບ ເຂົາບໍ່ໄດ້ເຊື່ອຖືການອັສຈັນຂອງພຣະອົງ
33 ພຣະອົງຈຶ່ງຊົງກະທໍາໃຫ້ວັນຂອງເຂົາຫາຍໄປດັ່ງລົມຫາຍໃຈ ແລະຊົງໃຫ້ປີຂອງເຂົາຫາຍໄປຍ້ອນພັຍພິບາດ
34 ເມື່ອພຣະອົງຊົງສັງຫານເຂົາ ເຂົາສແວງຫາພຣະອົງ ເຂົາໄດ້ກັບມາສແວງຫາພຣະເຈົ້າດ້ວຍໃຈຮ້ອນຮົນ
35 ເຂົາຣະນຶກວ່າພຣະເຈົ້າຊົງເປັນພຣະສີລາຂອງເຂົາ ແລະພຣະເຈົ້າອົງສູງສຸດເປັນພຣະຜູ້ໄຖ່ຂອງເຂົາ
36 ແຕ່ເຂົາຍໍພຣະອົງດ້ວຍປາກຂອງເຂົາ ແລະມຸສາຕໍ່ພຣະອົງດ້ວຍລີ້ນຂອງເຂົາ
37 ເພາະຈິດໃຈຂອງເຂົາບໍ່ແນ່ນອນຕໍ່ພຣະອົງ ເຂົາບໍ່ຈິງຈັງຕໍ່ຄໍາສັນຍາຂອງພຣະອົງ
38 ສັນນັ້ນ ດ້ວຍຄວາມສັງເວດ ພຣະອົງຊົງອະພັຍຄວາມຜິດບາບຂອງເຂົາ ແລະບໍ່ໄດ້ຊົງທໍາລາຍເຂົາ ພຣະອົງຊົງ
ຢັບຢັ້ງພຣະພິໂຣດຂອງພຣະອົງ ເລື້ອຍໆ ແລະບໍ່ໄດ້ຊົງກວນພຣະພິໂຣດຂອງພຣະອົງທັງສິ້ນໃຫ້ຂຶ້ນມາ
39 ພຣະອົງຊົງຣະນຶກວ່າເຂົາເປັນພຽງແຕ່ເນື້ອຫນັງ ເປັນລົມທີ່ຜ່ານໄປແລ້ວບໍ່ໄດ້ກັບມາອີກ

40 ເຂົາກະບົດຕໍ່ພຣະອົງໃນຖິ່ນກັນດານເລື້ອຍມາ ແລະທຳໃຫ້ພຣະອົງເສັຽໃຈໃນທະເລຊາຍ
41 ແຕ່ເຂົາຍັງໄດ້ກັບທົດລອງພຣະເຈົ້າອີກ ແລະໄດ້ທຳໃຫ້ອົງບໍຣິສຸດຂອງອິສຣາເອນເສົ້າພຣະທັຍ
42 ເຂົາບໍ່ໄດ້ຣະລຶກເຖິງຣິດທານຸພາບຂອງພຣະອົງ ຫລືວັນທີ່ພຣະອົງຊົງໄຖ່ເຂົາຈາກຄູ່ສັດຕຣູຂອງເຂົາ
43 ເມື່ອພຣະອົງຊົງກະທຳຫມາຍສຳຄັນຂອງພຣະອົງໃນເອຢິບ ແລະການອັສຈັນຂອງພຣະອົງໃນໄຮ່ນາໂຊອານ
44 ພຣະອົງຊົງປ່ຽນ ແມ່ນ້ຳຂອງເຂົາໃຫ້ເປັນເລືອດ ເຂົາຈຶ່ງດື່ມຈາກລຳທານຂອງເຂົາບໍ່ໄດ້
45 ພຣະອົງຊົງສົ່ງຝູງເຫລືອກມາຖ້າມກາງເຂົາ ຊຶ່ງຕໍ່ສູ້ເຂົາ ແລະກົບຊຶ່ງທຳລາຍເຂົາ
46 ພຣະອົງປະທານພືດຜົນຂອງເຂົາແກ່ຕັກແຕນວັຍຄານ ແລະຜົນງານອອກແຮງຂອງເຂົາແກ່ຕັກແຕນວັຍບິນ
47 ພຣະອົງຊົງທຳລາຍເຄືອອະງຸ່ນຂອງເຂົາດ້ວຍຫມາກເຫັບ ແລະຕົ້ນຫມາກເດື່ອຂອງເຂົາດ້ວຍນ້ຳຄ້າງແຂງ
48 ພຣະອົງຊົງມອບຝູງງົວຂອງເຂົາໄວ້ກັບຫມາກເຫັບ ແລະຝູງແກະຂອງເຂົາກັບຟ້າຜ່າ
49 ພຣະອົງຊົງປ່ອຍຄວາມໂກດດຸຮ້າຍຂອງພຣະອົງມາເຫນືອເຂົາ ທັງພຣະພິໂຣດ ຄວາມກິ້ວໂກດ ແລະຄວາມ
ທຸກລຳບາກ ຄືຄນະທູດສວັນຜູ້ທຳລາຍ
50 ພຣະອົງຊົງເປີດວິຖີໃຫ້ແກ່ຄວາມໂກດຂອງພຣະອົງ ພຣະອົງບໍ່ໄດ້ຊົງເວັ້ນເຂົາໄວ້ຈາກຄວາມຕາຍ ແຕ່ປະທານ
ຊີວິດຂອງເຂົາແກ່ໂຣກລະບາດ
51 ພຣະອົງຊົງປະຫານລູກຫົວປີທັງສິ້ນໃນເອຢິບ ຄືຜົນທຳອິດແຫ່ງກຳລັງເຂົາເຂົ້າໃນເຕັນຂອງຮາມ
52 ແລ້ວພຣະອົງຊົງນຳໄພ່ພົນຂອງພຣະອົງອອກມາເຫມືອນນຳແກະ ແລະນຳເຂົາໄປໃນຖິ່ນກັນດານເຫມືອນຝູງ
ແກະ
53 ພຣະອົງນຳເຂົາໄປຢ່າງປອດພັຍ ເຂົາຈຶ່ງບໍ່ຢ້ານ ແຕ່ທະເລຖ້ວມສັດຕຣູຂອງເຂົາ
54 ແລະພຣະອົງຊົງພາເຂົາມາຍັງແດນບໍຣິສຸດຂອງພຣະອົງ ຍັງພູເຂົາຊຶ່ງພຣະຫັດຂວາຂອງພຣະອົງໄດ້ເນຣະມິດ
ຂຶ້ນ
55 ພຣະອົງຊົງໄລ່ປະຊາຊາດຕ່າງໆອອກໄປຂ້າງຫນ້າເຂົາ ພຣະອົງຊົງວັດແທກແບ່ງແດນປະຊາຊາດນັ້ນໃຫ້ເປັນ
ມໍຣະດົກ ແລະຊົງຕັ້ງບັນດາເຜົ່າອິສຣາເອນໄວ້ໃນເຕັນຂອງເຂົາ
56 ແຕ່ເຂົາທັງຫລາຍຍັງທົດລອງແລະກະບົດຕໍ່ພຣະເຈົ້າອົງສູງສຸດ ບໍ່ໄດ້ຮັກສາບັນດາພຣະໂອວາດຂອງພຣະອົງ
57 ກັບຫັນໄປເສັຽແລະປະພຶດທໍຣະຍົດຢ່າງບັນພະບຸຣຸດຂອງເຂົາ ເຂົາບິດໄປເຫມືອນຄັນທະນູທີ່ໄວ້ໃຈບໍ່ໄດ້
58 ເພາະເຂົາກຸກວນພຣະອົງໃຫ້ຊົງກິ້ວສເມີມາໂດຍມີບ່ອນຂາບໄຫວ້ຂອງຄົນບໍ່ນັບຖືພຣະເຈົ້າ ແລະເຂົາໄດ້ເຮັດ
ໃຫ້ພຣະອົງເຄືອງພຣະທັຍຫລາຍຍ້ອນຮູບໂຄຣົບທີ່ເຂົາໄດ້ເຮັດຂຶ້ນນັ້ນ
59 ເມື່ອພຣະເຈົ້າຊົງໄດ້ຍິນ ພຣະອົງຊົງພຣະພິໂຣດຍິ່ງ ແລະພຣະອົງຊົງປະຖິ້ມອິສຣາເອນໄວ້ເສັຽ
60 ພຣະອົງຊົງປະທີ່ປະທັບຂອງພຣະອົງໃນຊີໂລ ຄືທໍເຕັນທີ່ພຣະອົງຊົງຕັ້ງໄວ້ຖ້າມກາງມະນຸດ
61 ແລະຊົງມອບປະຊາອັນເປັນຣິດທານຸພາບຂອງພຣະອົງແກ່ການເປັນຊະເລີຍ ແລະຊົນອັນເປັນກຽດຂອງພຣະ
ອົງແກ່ມືຂອງຄູ່ສັດຕຣູ
62 ພຣະອົງຊົງມອບໄພ່ພົນຂອງພຣະອົງແກ່ດາບ ແລະຊົງພຣະພິໂຣດຕໍ່ມໍຣະດົກຂອງເຂົາ
63 ໄຟຜານຊາຍຫນຸ່ມຂອງເຂົາເສັຽ ແລະຍິງສາວຂອງເຂົາກໍບໍ່ມີເພງແຕ່ງງານ
64 ບັນດາປະໂຣຫິດຂອງເຂົາລົ້ມລົງດ້ວຍດາບ ແລະຍິງຫມ້າຍຂອງເຂົາບໍ່ມີການຮ້ອງທຸກ
65 ແລ້ວອົງພຣະຜູ້ເປັນເຈົ້າຊົງຕື່ນຢ່າງຕື່ນບັນທົມ ດັ່ງຊາຍຜູ້ນຶ່ງທີ່ແຂງແຮງຍ້ອນຣິດເຫລົ້າ
66 ພຣະອົງຊົງຕີພວກສັດຕຣູຂອງພຣະອົງໃຫ້ຖອຍຫລັງ ແລະໃຫ້ເຂົາໄດ້ອາຍເປັນນິດ
67 ພຣະອົງຊົງປະຕິເສດເຕັນຂອງໂຢເຊັບ ພຣະອົງບໍ່ໄດ້ຊົງເລືອກເຜົ່າເອຟຣາອິມ
68 ແຕ່ພຣະອົງຊົງເລືອກເຜົ່າຢູດາ ພູເຂົາຊີໂອນຊຶ່ງພຣະອົງຊົງຮັກ

69 ພຣະອົງຊົງສ້າງສະຖານນະມັສການຂອງພຣະອົງຢ່າງກັບຟ້າສວັນສູງ ຢ່າງແຜ່ນດິນໂລກຊຶ່ງພຣະອົງຕັ້ງໄວ້ເປັນນິດ

70 ພຣະອົງຊົງເລືອກດາວິດຜູ້ຮັບໃຊ້ຂອງພຣະອົງ ຊົງພາທ່ານມາຈາກຄອກແກະ

71 ພຣະອົງຊົງພາທ່ານມາຈາກການດູແລແມ່ແກະທີ່ມີລູກອ່ອນ ໃຫ້ເປັນຜູ້ລ້ຽງດູຢາໂຄບໄພ່ພົນຂອງພຣະອົງ ຄືອິສຣາເອນມໍ ຣະດົກຂອງພຣະອົງຢ່າງລ້ຽງແກະ

72 ທ່ານຈຶ່ງລ້ຽງດູເຂົາທັງຫລາຍດ້ວຍໃຈທ່ຽງທັມ ແລະນຳພາເຂົາທັງຫລາຍໄປດ້ວຍພິກໄທວອັນສລາດ

## 79 ເພງສັຣເສີນ ບົດທີເຈັດສິບເກົ້າ

### ຄຳຮ້ອງທຸກເພາະກຸງເຢຣູຊາເລັມຖືກທຳລາຍ

Plea for Mercy for Jerusalem

ເພງສັຣເສີນ ຂອງອາສາຟ

A Psalm of Asaph

1 ຂ້າແດ່ພຣະເຈົ້າ ພວກຕ່າງສາສນາໄດ້ເຂົ້າໃນມໍຣະດົກຂອງພຣະອົງ ເຂົາໄດ້ທຳໃຫ້ພຣະວິຫານສັກສິດຂອງພຣະອົງມົມົນທິນ ເຂົາໄດ້ທຳໃຫ້ເຢຣູຊາເລັມເປັນທີ່ພັງທະລາຍ

2 ເຂົາໃຫ້ສົບຜູ້ຮັບໃຊ້ຂອງພຣະອົງເປັນອາຫານແກ່ບັນດານົກໃນອາກາດ ໃຫ້ເນື້ອຂອງປະຊາຊົນຂອງພຣະອົງແກ່ສັດປ່າແຫ່ງແຜ່ນດິນໂລກ

3 ເຂົາໄດ້ເທໂລຫິດຂອງຄົນເຫລົ່ານັ້ນອອກມາຢ່າງນ້ຳຮອບເຢຣູຊາເລັມຈົນບໍ່ມີຄົນຝັງສົບ

4 ເຮົາເປັນທີ່ດູຫມິ່ນແກ່ເພື່ອນບ້ານຂອງເຮົາ ຄົນທີ່ອ້ອມເຮົາກໍຫົວຂວັນແລະຫຍໍ້ຫຍັນ

5 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຈະຊົງກິ້ວອີກເທົ່າປານໃດ ເປັນນິດຫລືພຣະເຈົ້າຂ້າ ພຣະພິໂຣດອັນຫວງແຫນຂອງພຣະອົງຈະໄຫມ້ດັ່ງໄຟໄປອີກເທົ່າປານໃດ

6 ຂໍຊົງເທຄວາມກິ້ວຂອງພຣະອົງລົງເຫນືອບັນດາປະຊາຊາດທີ່ບໍ່ຮູ້ຈັກພຣະອົງ ແລະເຫນືອຣາຊອານາຈັກທັງຫລາຍທີ່ບໍ່ຮ້ອງທູນອອກພຣະນາມຂອງພຣະອົງ

7 ເພາະເຂົາທັງຫລາຍໄດ້ຜານຢາໂຄບ ແລະກະທຳໃຫ້ທີ່ອາໄສຂອງເຂົາຮົກຮ້າງເພພັງໄປສິ້ນ

8 ຂໍຢ່າຊົງຖືເອົາຄວາມບາບຜິດຂອງບັນພະບຸຣຸດຂອງຂ້າພຣະອົງທັງຫລາຍ ເພື່ອລົງໂທດຂ້າພຣະອົງທັງຫລາຍ ຂໍຄວາມສັງເວດຂອງພຣະອົງຈົ່ງມາພົບຂ້າພຣະອົງທັງຫລາຍ ເພາະຂ້າພຣະອົງທັງຫລາຍຕົກຕ່ຳຫລາຍ

9 ຂ້າແດ່ພຣະເຈົ້າແຫ່ງຄວາມລອດຂອງຂ້າພຣະອົງທັງຫລາຍ ຂໍຊົງຊ່ວຍຂ້າພຣະອົງ ເພາະເຫັນແກ່ພຣະສະງ່າຣາສີແຫ່ງ ພຣະນາມຂອງພຣະອົງ ຂໍຊົງຊ່ວຍກູ້ຂ້າພຣະອົງແລະອະພັຍບາບຂອງຂ້າພຣະອົງ ເພາະເຫັນແກ່ພຣະນາມຂອງພຣະອົງ

10 ຄວນຫລືທີ່ບັນດາປະຊາຊາດຈະກ່າວວ່າ, "ພຣະເຈົ້າຂອງເຂົາຢູ່ໃສ" ຂໍໃຫ້ການແກ້ແຄ້ນແຫ່ງໂລຫິດຜູ້ຮັບໃຊ້ຂອງພຣະອົງທີ່ໄຫລອອກມາ ຈົ່ງປາກົດໃນຖ້າມກາງປະຊາຊາດຕໍ່ຫນ້າຕໍ່ຕາຂ້າພຣະອົງທັງຫລາຍ

11 ຂໍໃຫ້ສຽງຄວນຄາງຂອງບັນດາຊະເລີຍ ມາຢູ່ຕໍ່ພຣະພັກພຣະອົງ ດ້ວຍພຣະກອນຊົງຣິດຂອງພຣະອົງ ຂໍຊົງສງວນຄົນ ເຫລົ່ານັ້ນທີ່ຕ້ອງເຖິງຕາຍ

12 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຕອບແທນການທີ່ເຂົາໄດ້ຫຍໍ້ຫຍັນຕໍ່ພຣະອົງເຖິງເຈັດເທົ່າໃນຊວງເອິກເພື່ອນບ້ານຂອງຂ້າພຣະອົງ

13 ແລ້ວຂ້າພຣະອົງທັງຫລາຍ ໄພ່ພົນຂອງພຣະອົງ ຝູງແກະແຫ່ງທົ່ງຫຍ້າຂອງພຣະອົງ ຈະໂມທະນາພຣະຄຸນຂອງພຣະອົງເປັນນິດ ຂ້າພຣະອົງທັງຫລາຍຈະກ່າວສັຣເສີນພຣະອົງຕລອດທຸກຊົ່ວອາຍຸຄົນ

## 80 ເພງສັດເສີນ ບົດທີແປດສິບ

### ການອ້ອນວອນສຳລັບສ້າງຊົນຊາດຂຶ້ນໃໝ່

Prayer for Israel's Restoration

ເຖິງຫົວໜ້ານັກຮ້ອງ ທຳນອງດອກພັບພຶງສັກຂີພະຍານ ຂອງອາສາຟ ເພງສັດເສີນ

To the leader: on Lilies, a Covenant. Of Asaph. A Psalm.

1 ຂ້າແດ່ພຣະຜູ້ຊົງລ້ຽງດູອິສຣາເອນຢ່າງລ້ຽງແກະ ຄືພຣະອົງຜູ້ຊົງນຳໂຢເຊັບຢ່າງນຳຝູງແກະ ຂໍຊົງງ່ຽງພຣະກັນ
ສະດັບຟັງ ພຣະຜູ້ຊົງປະທັບເທິງພຣະທີ່ນັ່ງເໜືອເທວະດາເຊຣຸບິມ ຂໍຊົງສົ່ງແສງອອກມາ

2 ຂໍຊົງເຜີຍຄວາມຮັກຂອງພຣະອົງແກ່ ເອຟຣາອິມ ເບັນຢາມິນ ແລະມານັສເຊ ຂໍຊົງສະແດງໃຫ້ຂ້າພຣະອົງທັງ
ຫລາຍເຫັນ ຣິດທານຸພາບຂອງພຣະອົງ ແລະສະເດັດມາຊ່ອຍຂ້າພຣະອົງໃຫ້ພົ້ນພັຍດ້ວຍ

3 ຂ້າແດ່ພຣະເຈົ້າ ຂໍຊົງນຳຂ້າພຣະອົງທັງຫລາຍກັບຄືນສູ່ສະພາບເດີມ ຂໍພຣະພັກຂອງພຣະອົງສ່ອງແສງ ເພື່ອ
ຂ້າພຣະອົງທັງຫລາຍຈະພົ້ນພັຍ

4 ຂ້າແດ່ພຣະຜູ້ເປັນເຈົ້າແຫ່ງຈັກກະວານ ພຣະອົງຍັງຈະຄຽດແຄ້ນຕໍ່ຄຳອ້ອນວອນຂອງໄພ່ພົນພຣະອົງຢູ່ອີກດົນ
ປານໃດ?

5 ພຣະອົງຊົງກະທຳໃຫ້ເຂົາກິນເຂົ້າກັບນໍ້າຕາ ແລະຊົງທຳໃຫ້ເຂົາຮ້ອງໄຫ້ຕລອດເວລາ

6 ພຣະອົງຊົງປ່ອຍໃຫ້ຊົນຊາດເພື່ອນບ້ານມາຮຸກຮານຜືນແຜ່ນດິນຂອງຂ້າພຣະອົງ ແລະສັດຕຣູກໍຫົວຂວັນຂ້າພ
ຣະອົງ

7 ພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຂໍຊົງນຳຂ້າພຣະອົງທັງຫລາຍກັບຄືນສູ່ສະພາບເດີມ ຂໍພຣະພັກຂອງພຣະອົງ
ສ່ອງແສງ ເພື່ອຂ້າພຣະອົງທັງຫລາຍຈະພົ້ນພັຍ

8 ພຣະອົງຊົງນຳເບັ້ຽອະງຸ່ນອອກຈາກເອຢິບ ພຣະອົງຊົງຂັບໄລ່ຊົນຊາດອື່ນໆອອກ ແລ້ວເອົາເບັ້ຽອະງຸ່ນປູກ
ໄວ້ໃນແຜ່ນ ດິນຂອງພຣະອົງ

9 ພຣະອົງຊົງຖາກຖາງດິນປູກຝັງ ເພື່ອໃຫ້ເບັ້ຽມັນປົ່ງຂຶ້ນ ຮາກຂອງມັນຢັ່ງລົງເລິກ ແລະແຜ່ຜາຍອອກໄປທົ່ວທັງ
ປະເທດ

10 ມັນປົກຫຸ້ມໜ່ວຍພູທັງຫລາຍ ແລະເຄືອຂອງມັນປົກຫຸ້ມຕົ້ນສົນທີ່ສູງສຸດ

11 ມັນໄດ້ແຜ່ລາມອອກໄປຈົນເຖິງທະເລເມດິແຕຣາເນແລະຮອດແມ່ນໍ້າເອີຟຣາດ

12 ເປັນຫຍັງພຣະອົງຈຶ່ງຊົງທຳລາຍຮົ້ວທີ່ອ້ອມຮອບມັນນັ້ນ? ແລະດຽວນີ້ ເມື່ອທຸກຄົນຍ່າງຜ່ານໄປກໍລັກເອົາ
ໝາກຂອງມັນ

13 ສ່ວນໝູປ່າໄດ້ມາຢຽບຢໍ່າມັນແລະສັດປ່າກໍມາກິນມັນ

14 ຂ້າແດ່ພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຂໍຊົງຫັນກັບເຖີດພຣະອົງເຈົ້າຂ້າ ຂໍຊົງຫລຽວລົງຈາກຟ້າສວັນແລະຊົງ
ເບິ່ງ ຂໍຊົງສົນພຣະທັຍໃນເຄືອອະງຸ່ນນີ້

15 ຂໍພຣະອົງຊົງສະເດັດມາຮັກສາຕົ້ນອະງຸ່ນທີ່ພຣະອົງປູກໄວ້ນັ້ນໃຫ້ພົ້ນພັຍ ຄືເບັ້ຽອະງຸ່ນຊຶ່ງພຣະອົງໄດ້ຊົງທຳໃຫ້
ມັນໃຫຍ່ຂຶ້ນມາແລ້ວ

16 ສັດຕຣູຂອງຂ້າພຣະອົງໄດ້ຕັດມັນລົງແລະຈູດຖິ້ມ ຂໍພຣະອົງຊົງທຳລາຍເຂົາດ້ວຍຄວາມຄຽດຮ້າຍ

17 ຂໍພຣະອົງຊົງຄຸ້ມຄອງຮັກສາຄົນທີ່ພຣະອົງຊົງເລືອກໄວ້ ຄືຜູ້ທີ່ພຣະອົງຊົງທຳໃຫ້ແຂງແຮງຂຶ້ນ

18 ແລ້ວຂ້າພຣະອົງທັງຫລາຍຈະບໍ່ໜີຈາກພຣະອົງອີກ ຂໍຊົງໂຜດໃຫ້ຂ້າພຣະອົງທັງຫລາຍມີຊີວິດ ແລະຂ້າພຣະ
ອົງທັງຫລາຍຈະສັດເສີນພຣະອົງ

19 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງຈັກກະວານ ຂໍຊົງນຳຂ້າພຣະອົງທັງຫລາຍກັບຄືນສູ່ສະພາບເດີມ ຂໍພຣະ
ພັກຂອງພຣະອົງສ່ ງແສງ ເພື່ອຂ້າພຣະອົງທັງຫລາຍຈະພົ້ນພັຍ

## 81 ເພງສັຣເສີນ ບົດທີສິບເອັດ

### ພຣະຄຸນຂອງພຣະເຈົ້າແລະຄວາມຫລົງເຈີ່ນຂອງອິສຣາເອນ

God’s Appeal to Stubborn Israel

ເຖິງຫົວຫນ້ານັກຮ້ອງທຳນອງກິດຕີ ຂອງອາສາຟ

To the leader: according to the Gittith. Of Asaph.

1 ຈົ່ງຮ້ອງເພງຖວາຍພຣະເຈົ້າ ພຣະກຳລັງຂອງພວກເຮົາ ຈົ່ງໂຮ່ຮ້ອງດ້ວຍຄວາມຊື່ນບານຖວາຍແດ່ພຣະເຈົ້າ
ຂອງຢາໂຄບ

2 ຈົ່ງເປົ່ງສຽງເພງ ຈົ່ງຕີຣຳມະນາ ທັງພິນເຂົາຄູ່ອັນມ່ວນອອນຊອນ ແລະພິນໃຫຍ່

3 ຈົ່ງເປົ່າແກເມື່ອຮອດມື້ເດືອນອອກໃຫມ່ ແລະເດືອນເຕັມດວງ ໃນວັນສລອງເທສການ

4 ເພາະເປັນພຣະບັນຍັດຂອງອິສຣາເອນ ເປັນລະບຽບຂອງພຣະເຈົ້າຂອງຢາໂຄບ

5 ພຣະອົງຊົງກະທຳໃຫ້ເປັນຄຳສັ່ງໃນໂຢເຊັບ ເມື່ອພຣະອົງຊົງອອກໄປສູ່ແຜ່ນດິນຂອງເອຢິບ ຂ້າພະເຈົ້າໄດ້ຍິນ
ສຽງຊຶ່ງຂ້າພະເຈົ້າບໍ່ເຄີຍຮູ້ຈັກ

6 ວ່າ, “ເຮົາໄດ້ເອົາພາຣະຂອງເຂົາອອກຈາກບ່າ ມືຂອງເຂົາເຮົາໃຫ້ເປັນອິສຣະພົ້ນຈາກກະຕ່າ

7 ເມື່ອທຸກໃຈເຈົ້າເອີ້ນ ເຮົາກໍຊ່ອຍກູ້ເຈົ້າ ເຮົາຕອບເຈົ້າໃນທີ່ລັບລີ້ຂອງຟ້າຮ້ອງ ເຮົາໄດ້ທົດລອງເຈົ້າທີ່ແມ່ນ້ຳເມຣິ
ບາ

8 ປະຊາກອນຂອງເຮົາເອີຍ ຈົ່ງຟັງ ແລ້ວເຮົາຈະທັກທ້ວງເຈົ້າ ໂອ ອິສຣາເອນເອີຍ ເຈົ້າຫນ້າຈະຟັງເຮົາແລ້ວ

9 ຢ່າມີພຣະອື່ນໃດຖ້າມກາງເຈົ້າເລີຍ ຢ່າຂາບໄຫວ້ພຣະຂອງຊາວຕ່າງຊາດນັ້ນ

10 ເຮົາຄືພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ ຜູ້ໄດ້ພາເຈົ້າອອກມາຈາກແຜ່ນດິນເອຢິບ ອ້າປາກຂອງເຈົ້າໃຫ້ກວ້າງ
ເຖີດ ເຮົາຈະປ້ອນເຈົ້າໃຫ້ອີ່ມ

11 “ແຕ່ປະຊາກອນຂອງເຮົາບໍ່ຟັງສຽງຂອງເຮົາ ອິສຣາເອນບໍ່ຍອມຮັບເຮົາເລີຍ

12 ເຮົາຈຶ່ງມອບເຂົາໄວ້ແກ່ຈິດໃຈດື້ດ້ານຂອງເຂົາເອງ ໃຫ້ຕາມຄຳປຶກສາຂອງເຂົາເອງ

13 ປະຊາກອນຂອງເຮົາ ຫນ້າຈະຟັງເຮົາ ແລະອິສຣາເອນຫນ້າຈະເດີນໃນທາງທັງຫລາຍຂອງເຮົາ

14 ແລ້ວເຮົາຈະໃຫ້ສັດຕຣູຂອງເຂົານອບນ້ອມລົງ ແລະຈະຫັນມືຂອງເຮົາຕໍ່ສູ້ສັດຕຣູຂອງເຂົາ

15 ບັນດາຜູ້ທີ່ກຽດຊັງພຣະຜູ້ເປັນເຈົ້າ ຈະຫມອບລົງຕໍ່ເຂົາ ແລະເວລາຂອງເຂົາຈະຍັ້ງຍືນຢູ່ເປັນນິດ”

16 ພຣະອົງຈະຊົງລ້ຽງເຂົາດ້ວຍເຂົ້າສາລີຢ່າງດີທີ່ສຸດ “ເຮົາຈະໃຫ້ເຈົ້າພໍໃຈດ້ວຍນ້ຳເຜີ້ງທີ່ມາຈາກຫີນ”

## 82 ເພງສັຣເສີນ ບົດທີແປດສິບສອງ

### ຊົງຂນາບການຕັດສິນທີ່ອະທັມ

A Plea for Justice

ເພງສັຣເສີນ ຂອງອາສາຟ

A Psalm of Asaph.

1 ພຣະເຈົ້າຊົງເຂົ້າປະທັບໃນສະພາຂອງພຣະເຈົ້າພຣະອົງຊົງທຳການພິພາກສາຖ້າມກາງພຣະທັງຫລາຍວ່າ,

2 “ທ່ານຈະຕັດສິນຢ່າງຍຸດຕິທັມ ແລະສະແດງຄວາມລຳອຽງຂ້າງຄົນອະທັມດົນປານໃດ

3 ຈົ່ງໃຫ້ຄວາມຍຸດຕິທັມແກ່ຄົນອ່ອນເປັ້ຽແລະກຳພ້າພໍ່ ຈົ່ງດຳຣົງສິດຂອງຜູ້ທີ່ທຸກຍາກ ແລະຄົນສິ້ນເນື້ອປະດາ
ຕົວ

4 ຈົ່ງຊ່ອຍຄົນອ່ອນເປັ້ຽແລະຄົນຂັດສົນໃຫ້ພົ້ນ ຊ່ອຍກູ້ເຂົາຈາກມືຂອງຄົນອະທັມ”

5 ເຂົາທັງຫລາຍບໍ່ຮູ້ແລະບໍ່ເຂົ້າໃຈ ເຂົາຍ່າງໄປມາໃນຄວາມມືດ ຮາກທັງສິ້ນຂອງແຜ່ນດິນໂລກກໍຫວັ່ນໄຫວ

6 ເຮົາໄດ້ກ່າວວ່າ, "ທ່ານທັງຫລາຍເປັນພຣະ ເປັນບຸດອົງສູງສຸດ ທ່ານທຸກຄົນນັ້ນແຫລະ
7 ເຖິງປານນັ້ນ ທ່ານຈະຕາຍຢ່າງມະນຸດ ແລະລົ້ມລົງເຫມືອນເຈົ້ານາຍຄົນນຶ່ງຄົນໃດ"
8 ຂ້າແດ່ພຣະເຈົ້າ ຂໍຊົງລຸກຂຶ້ນພິພາກສາແຜ່ນດິນໂລກ ເພາະບັນດາປະຊາຊາດທັງສິ້ນເປັນຂອງ
ພຣະອົງ

## 83 ເພງສັຣເສີນ ບົດທີແປດສິບສາມ

### ຂໍຊົງທຳລາຍສັດຕຣູຂອງອິສຣາເອນ

Prayer for Judgment on Israel's Foes

ບົດເພງ ເພງສັຣເສີນ ຂອງອາສາຟ

A song. A Psalm of A'saph.

1 ຂ້າແດ່ພຣະເຈົ້າ ຂໍຢ່າຊົງມິດງຽບຢູ່ ຂ້າແດ່ພຣະເຈົ້າ ຂໍຢ່າຊົງງຽບແລະເສີຍເມີຍ
2 ເບິ່ງແມ, ສັດຕຣູຂອງພຣະອົງສັບສົນອົນລະມ່ານ ບັນດາຜູ້ທີ່ຊັງພຣະອົງໄດ້ຍົກຫົວຂອງເຂົາຂຶ້ນ
3 ເຂົາວາງແຜນປອງຮ້າຍໄພ່ພົນຂອງພຣະອົງ ເຂົາປຶກສາກັນສູ້ຜູ້ທີ່ພຣະອົງຊົງທະນຸຖະນອມ
4 ເຂົາເວົ້າວ່າ, "ມາເຖີດ, ໃຫ້ເຮົາກວາດເຂົາອອກຈາກການເປັນປະຊາຊາດ ຢ່າໃຫ້ລະນຶກເຖິງຊື່ອິສຣາເອນອີກຕໍ່
ໄປ"
5 ເຂົາປອງຮ້າຍເປັນໃຈດຽວກັນ ເຂົາເຮັດຄຳສັນຍາສູ້ພຣະອົງ
6 ຄືເຕັນຂອງເອໂດມ ແລະຄົນຍິຊມາເອນ ໂມອາບ ແລະຄົນຮາກາ
7 ເກບານ ອັມໂມນ ແລະ ອາມາເລກ ຟີລິສຕີນ ກັບຊາວເມືອງຕີເຣ
8 ອັສຊີເຣັຽກໍສົມທົບເຂົາເຫມືອນກັນ ເຂົາເປັນແຂນຂອງລູກຫລານຂອງໂລດ
9 ຂໍຊົງທຳກັບເຂົາຢ່າງພຣະອົງຊົງກະທຳກັບມີດີອານ ຢ່າງທີ່ທຳກັບສີເຊຣາ ແລະຢາບິນ ທີ່ແມ່ນ້ຳກີໂຊນ
10 ຜູ້ຖືກທຳລາຍທີ່ເມືອງເອນໂດຣ໌ ຜູ້ກາຍເປັນປຸຍຂອງດິນ
11 ຂໍຊົງທຳຕໍ່ຜູ້ນຳຂອງເຂົາເຫມືອນໂອເຣັບ ແລະເຊເອັບ ຕໍ່ເຈົ້ານາຍຂອງເຂົາເຫມືອນເຊບາ ແລະຊັນມູນນາ
12 ຜູ້ທີ່ກ່າວວ່າ, "ໃຫ້ເຮົາເອົາທີ່ງຫຍ້າຂອງພຣະເຈົ້າ ມາເປັນກຳມະສິດຂອງເຮົາເຖີດ"
13 ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂໍຊົງທຳເຂົາໃຫ້ເຫມືອນຜົງຂີ້ດິນທີ່ວົນວຽນເຫມືອນແກບຕໍ່ຫນ້າລົມ
14 ເຫມືອນດັ່ງໄຟເຜົາຜານປ່າໄມ້ ເຫມືອນດັ່ງແປວໄຟທີ່ໄຫມ້ເນີນພູຢູ່ນັ້ນ
15 ຂໍຊົງຕິດຕາມເຂົາໄປດ້ວຍພາຍຸຂອງພຣະອົງ ແລະຊົງທຳໃຫ້ເຂົາຢ້ານກົວດ້ວຍລົມຮ້າຍແຮງຂອງພຣະອົງ
16 ຊົງໃຫ້ຫນ້າຂອງເຂົາມີຄວາມອາຍ ຂ້າແດ່ພຣະຜູ້ເປັນເຈົ້າ ເພື່ອເຂົາຈະໄດ້ສແວງຫາພຣະນາມຂອງພຣະອົງ
17 ຂໍໃຫ້ເຂົາອັບອາຍ ແລະຢ້ານຢູ່ເປັນນິດ ໃຫ້ເຂົາອິດສູແລະພິນາດໄປ
18 ໃຫ້ເຂົາທັງຫລາຍຮູ້ວ່າພຣະອົງຜູ້ດຽວ ຜູ້ຊົງພຣະນາມວ່າພຣະຜູ້ເປັນເຈົ້າ ຊົງເປັນຜູ້ສູງສຸດເຫນືອແຜ່ນດິນໂລກ
ທັງສິ້ນ

## 84 ເພງສັຣເສີນ ບົດທີແປດສິບສີ່

### ຢາກຢູ່ໃນພຣະວິຫານຂອງພຣະເຈົ້າ

The Joy of Worship in the Temple

ເຖິງຫົວຫນ້ານັກຮ້ອງ ທຳນອງກິດຕີ ຂອງຄນະໂກຣາ ເພງສັຣເສີນ

To the leader: according to the Gittith. Of the Korahites. A Psalm.

1 ຂ້າແດ່ພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຂ້າພຣະອົງຮັກ ແລະຢາກຢູ່ໃນພຣະວິຫານຂອງພຣະອົງອີ່ຫລີ

2 ຂ້າພຣະອົງຢູ່ໃນບໍຣິເວນພຣະວິຫານຂອງພຣະອົງ ໂອ ພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ ຂ້າພຣະອົງຮ້ອງເພງຢ່າງມ່ວນຊື່ນດ້ວຍຫມົດຈິດຫມົດໃຈ
3 ຂ້າແດ່ພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຜູ້ຊົງເປັນເຈົ້າຊີວິດ ແລະພຣະເຈົ້າຂອງຂ້າພຣະອົງ ນົກຈອກແລະນົກແອ່ນກໍຍັງມີຮັງຢູ່ ພວກມັນຮັກສາລູກນ້ອຍຂອງມັນໄວ້ໃກ້ແທ່ນບູຊາຂອງພຣະອົງ
4 ຄວາມສຸກເປັນຂອງຄົນທີ່ອາສັຍຢູ່ໃນພຣະວິຫານຂອງພຣະອົງ ຄືຜູ້ທີ່ຮ້ອງເພງສັຣເສີນພຣະອົງຢູ່ບໍ່ຂາດ
5 ຄວາມສຸກເປັນຂອງຄົນທີ່ໄດ້ຮັບເຫື່ອແຮງມາຈາກພຣະອົງ ແລະຢາກເດີນທາງໄປນະມັສການທີ່ພູຊີໂອນ
6 ຂນະທີ່ ເຂົາເດີນທາງຜ່ານໄປໃນຮ່ອມພູທີ່ແຫ້ງແລ້ງ ບ່ອນນັ້ນກໍກາຍເປັນບ່ອນທີ່ບໍ່ມີນໍ້າ ເມື່ອຣະດູຝົນມາບ່ອນນັ້ນກໍເຕັມໄປດ້ວຍນໍ້າ
7 ໃນຂນະທີ່ເຂົາຍ່າງໄປ ເຂົາໄດ້ມີແຮງຂຶ້ນຫລາຍກວ່າເກົ່າ ເຂົາຈະເຫັນພຣະເຈົ້າຂອງພຣະທັງຫລາຍເທິງພູຊີໂອນ
8 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງຈັກກະວານ ຂໍຊົງຟັງສຽງອ້ອນວອນຂອງຂ້າພຣະອົງ ພຣະເຈົ້າຂອງຢາໂຄບ ຂໍຊົງຟັງສຽງຂອງຂ້າພຣະອົງດ້ວຍ
9 ຂ້າແດ່ພຣະເຈົ້າ ຂໍຊົງອວຍພຣະພອນແກ່ເຈົ້າຊີວິດຂອງຂ້າພຣະອົງຜູ້ທີ່ພຣະອົງຊົງເລືອກໄວ້ແລ້ວ
10 ຢູ່ໃນພຣະວິຫານຂອງພຣະອົງພຽງມື້ດຽວ ກໍມີຄວາມສຸກກວ່າພັນມື້ໃນແຫ່ງອື່ນ ຂ້າພຣະອົງຢາກຢືນຢູ່ໃກ້ປະຕູພຣະວິຫານຂອງພຣະເຈົ້າຫລາຍກວ່າທີ່ຈະຢູ່ໃນເຮືອນຂອງຄົນຊົ່ວຮ້າຍ
11 ເພາະພຣະເຈົ້າຊົງເປັນດວງອາທິດ ແລະເປັນໂລ້ ພຣະອົງຊົງປູນຄວາມຊອບທັມແລະໃຫ້ກຽດ ພຣະເຈົ້າບໍ່ໄດ້ຊົງຫວງຂອງດີອັນໃດໄວ້ເລີຍ ຈາກບຸກຄົນຜູ້ເດີນຢ່າງທ່ຽງທັມ
12 ຂ້າແດ່ພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຄວາມສຸກເປັນຂອງຜູ້ທີ່ເຊື່ອໄວ້ວາງໃຈໃນພຣະອົງ

## 85 ເພງສັຣເສີນ ບົດທີແປດສິບຫ້າ

### ການອ້ອນວອນສຳລັບຄວາມດີຂອງຊົນຊາດ

### ອິສຣາເອນ

Prayer for the Restoration of God’s Favor

ເຖິງຫົວຫນ້ານັກຮ້ອງ ຂອງຄນະໂກຣາ ເພງສັຣເສີນ

To the leader. Of the Korahites. A Psalm.

1 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເມດຕາຜືນແຜ່ນດິນຂອງພຣະອົງ ພຣະອົງຊົງເຮັດໃຫ້ອິສຣາເອນຈະເຣີນຂຶ້ນໃຫມ່
2 ພຣະອົງໃຫ້ອະພັຍບາບແກ່ໄພ່ພົນຂອງພຣະອົງ ແລະຍົກໂທດໃນຄວາມຜິດທຸກຢ່າງຂອງເຂົາ
3 ພຣະອົງຊົງເຊົາຄວາມຄຽດເຂົາ ແລະບໍ່ຊົງພຣະພິໂຣດເຂົາຕໍ່ໄປອີກ
4 ພຣະຜູ້ຊ່ອຍຂອງຂ້າພຣະອົງທັງຫລາຍ ຂໍພຣະອົງຊົງນຳພາຂ້າພຣະອົງກັບຄືນອີກ ຂໍຊົງຄາຍຄວາມຄຽດແຄ້ນຈາກຂ້າ ພຣະອົງທັງຫລາຍ
5 ພຣະອົງຊົງພຣະພິໂຣດຂ້າພຣະອົງທັງຫລາຍຕລອດໄປບໍ່? ຄວາມພິໂຣດຂອງພຣະອົງຈະບໍ່ສິ້ນສຸດລົງຈັກເທື່ອບໍ່?
6 ຂໍພຣະອົງຊົງໃຫ້ຂ້າພຣະອົງທັງຫລາຍມີແຮງຂຶ້ນມາໃຫມ່ອີກ ແລະໄພ່ພົນຂອງພຣະອົງຈະສັຣເສີນພຣະອົງ
7 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງສະແດງຄວາມຮັກຫມັ້ນຄົງຂອງພຣະອົງແກ່ຂ້າພຣະອົງທັງຫລາຍ ແລະຊົງຊ່ອຍໃຫ້ຂ້າພຣະອົງທັງຫລາຍພົ້ນພັຍດ້ວຍ

8 ຂ້າພຣະອົງກຳລັງຟັງສິ່ງທີ່ພຣະເຈົ້າຈະກ່າວ ພຣະອົງຊົງສັນຍາວ່າ ຖ້າຂ້າພຣະອົງທັງຫລາຍບໍ່ຫັນໄປເປັນຄົນ
ໂງ່ທີ່ເຮັດຜິດອີກ ພຣະອົງຈະຊົງປະທານສັນຕິສຸກແກ່ຂ້າພຣະອົງທັງຫລາຍຊຶ່ງເປັນໄພ່ພົນຂອງພຣະອົງ
9 ແນ່ນອນທີ່ສຸດ ພຣະອົງຊົງຕຽມພ້ອມເພື່ອຈະຊ່ອຍຜູ້ທີ່ຖວາຍກຽດແດ່ພຣະອົງໃຫ້ພົ້ນພັຍ ແລະຣັສມີຂອງພຣະ
ອົງຈະຄົງຢູ່ໃນແຜ່ນດິນຂອງຂ້າພຣະອົງທັງຫລາຍ
10 ຄວາມຮັກແລະຄວາມສັດຊື່ສຸດຈະຣິດຈະມາພ້ອມກັນ ຄວາມຊອບທັມແລະຄວາມສງົບສຸກຈະພົບພໍ້ກັນ
11 ຄວາມສັດຊື່ສຸດຈະຣິດຂອງມະນຸດຈະເກີດມີຂຶ້ນໃນແຜ່ນດິນນີ້ແລະຄວາມຊອບທັມຂອງພຣະເຈົ້າຈາກຟ້າ
ສວັນຈະສອດສ່ອງລົງມາເທິງເຂົາ
12 ພຣະຜູ້ເປັນເຈົ້າຈະຊົງທຳໃຫ້ພວກເຮົາຈະເຣີນຂຶ້ນ ແລະການເກັບກ່ຽວ ໃນແຜ່ນດິນຂອງພວກເຮົາກໍເກີດດອກ
ອອກຜົນຫມັ້ນຄົງສົມບູນ
13 ຄວາມຊອບທັມຈະມາກ່ອນພຣະຜູ້ເປັນເຈົ້າ ເພື່ອຈັດຕຽມທົນທາງສຳລັບພຣະອົງ

## 86 ເພງສັຣເສີນ ບົດທີແປດສິບຫົກ

### ຄຳອ້ອນວອນຂໍພຣະເຈົ້າຊົງພຣະກະຣຸນາຄຸນຢ່າງບໍ່ຢຸດຢັ້ງ

Supplication for Help against Enemies

ຄຳອ້ອນວອນ ຂອງດາວິດ

A Prayer of David.

1 ຂ້າແດ່ພຣະເຈົ້າ ຂໍຊົງງ່ຽງພຣະກັນຕອບຂ້າພຣະອົງ ເພາະຂ້າພຣະອົງຍາກຈົນແລະຂັດສົນ
2 ຂໍຊົງສງວນຊີວິດຂ້າພຣະອົງໄວ້ ເພາະຂ້າພຣະອົງເປັນໄພ່ພົນ ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂໍຊົງຊ່ອຍຜູ້
ຮັບໃຊ້ຂອງພຣະອົງ ຜູ້ວາງໃຈໃນພຣະອົງ
3 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງພຣະກະຣຸນາຕໍ່ຂ້າພຣະອົງ ເພາະຂ້າພຣະອົງຮ້ອງທູນຕໍ່ພຣະອົງຕລອດວັນ
4 ຂໍຊົງໃຫ້ຈິດໃຈຜູ້ຮັບໃຊ້ຂອງພຣະອົງຍິນດີ ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂ້າພຣະອົງຕັ້ງໃຈແນ່ວແນ່ໃນພຣະອົງ
5 ຂ້າແດ່ອົງພຣະຜູ້ເປັນເຈົ້າ ເພາະພຣະອົງປະເສີດແລະຊົງພ້ອມທີ່ຈະປະທານອະພັຍ ອຸດົມດ້ວຍຄວາມ
ຮັກຫມັ້ນຄົງຕໍ່ບັນດາຜູ້ຮ້ອງທູນພຣະອົງ
6 ຂ້າແດ່ພຣະເຈົ້າ ຂໍຊົງງ່ຽງພຣະກັນຟັງຄຳທູນອະທິຖານຂອງຂ້າພຣະອົງ ຂໍຊົງສະດັບສຽງຮ້ອງທູນວິງວອນຂອງ
ຂ້າພຣະອົງ
7 ໃນວັນລຳບາກຂອງຂ້າພຣະອົງ ຂ້າພຣະອົງຮ້ອງທູນພຣະອົງ ເພາະພຣະອົງຊົງຕອບຂ້າພຣະອົງ
8 ຂ້າແດ່ອົງພຣະຜູ້ເປັນເຈົ້າ ໃນບັນດາພຣະບໍ່ມີຜູ້ໃດເຫມືອນພຣະອົງ ແລະບໍ່ມີກິຈການໃດໆເຫມືອນພຣະຣາຊ
ກິຈຂອງພຣະອົງ
9 ຂ້າແດ່ອົງພຣະຜູ້ເປັນເຈົ້າ ບັນດາປະຊາຊາດທີ່ພຣະອົງຊົງສ້າງ ຈະມາຈຂາບລົງຕໍ່ພຣະອົງ ແລະຈະເທີດທູນ
ພຣະນາມຂອງພຣະອົງ
10 ເພາະພຣະອົງຍິ່ງໃຫຍ່ ແລະຊົງກະທຳການອັສຈັນ ພຣະອົງແຕ່ອົງດຽວຊົງເປັນພຣະເຈົ້າ
11 ຂ້າແດ່ພຣະເຈົ້າ ຂໍຊົງສອນຂ້າພຣະອົງໃຫ້ຮູ້ຈັກທາງຂອງພຣະອົງ ເພື່ອຂ້າພຣະອົງຈະດຳເນີນໃນຄວາມຈິງ
ຂອງພຣະອົງ ຂໍຊົງສຳຣວມໃຈຂອງຂ້າພຣະອົງໃຫ້ຢຳເກງພຣະນາມຂອງພຣະອົງ
12 ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງໂມທະນາພຣະຄຸນພຣະອົງດ້ວຍສິ້ນສຸດໃຈ ແລະຂ້າ
ພຣະອົງຈະເທີດທູນພຣະນາມຂອງພຣະອົງເປັນນິດ
13 ເພາະຄວາມຮັກຫມັ້ນຄົງຂອງພຣະອົງທີ່ຊົງມີຕໍ່ຂ້າພຣະອົງນັ້ນຍິ່ງໃຫຍ່ນັກ ແລະພຣະອົງຊົງຊ່ອຍກູ້ຈິດວິນຍານ
ຂອງຂ້າ ພຣະອົງຈາກທີ່ເລິກຂອງແດນຜູ້ຕາຍ

14 ຂ້າແດ່ພຣະເຈົ້າ ຄົນຍິ່ງຍະໂສໄດ້ລຸກຂຶ້ນຕໍ່ສູ້ຂ້າພຣະອົງ ຄົນທີ່ໄຮ້ຄວາມປານີຊອກຊີວິດຂອງຂ້າພຣະອົງ ເຂົາ
ບໍ່ໄດ້ເອົາພຣະອົງມາວາງໄວ້ຕໍ່ໜ້າເຂົາ
15 ຂ້າແດ່ອົງພຣະຜູ້ເປັນເຈົ້າ ແຕ່ພຣະອົງຊົງເປັນພຣະເຈົ້າປະກອບດ້ວຍພຣະກະຣຸນາ ແລະພຣະເມດຕາ ຊົງ
ໂກດຊ້າ ແລະອຸດົມດ້ວຍຄວາມຮັກໝັ້ນຄົງ ແລະຄວາມສັດສຸຈຣິດ
16 ຂໍຊົງຫັນມາເມດຕາຂ້າພຣະອົງ ຂໍປະທານພຣະກຳລັງແກ່ຜູ້ຮັບໃຊ້ຂອງພຣະອົງ ແລະຂໍຊົງຊ່ອຍຊີວິດບຸດຊາຍ
ຂອງຍິງຄົນໃຊ້ຂອງພຣະອົງ
17 ຂໍປະທານໝາຍສຳຄັນແຫ່ງຄວາມໂປດປານຂອງພຣະອົງແກ່ຂ້າພຣະອົງ ເພື່ອຄົນທີ່ກຽດຊັງຂ້າພຣະອົງຈະ
ເຫັນ ແລະຈະໄດ້ອາຍ ຂ້າແດ່ພຣະເຈົ້າ ເພາະພຣະອົງໄດ້ຊົງຊ່ອຍຂ້າພຣະອົງ ແລະຊົງເລົ້າໂລມຂ້າພຣະອົງ

## 87 ເພງສັຣເສີນ ບົດທີແປດສິບເຈັດ

### ໂອກາດພິເສດຂອງການທີ່ຢູ່ໃນຊີໂອນ

The Joy of Living in Zion

ຂອງຄນະໂກຣາ ເພງສັຣເສີນ ບົດເພງ

Of the korahites. A Psalm. A song.

1 ຮາກຖານຂອງພຣະອົງຢູ່ເທິງພູສັກສິດ
2 ພຣະເຈົ້າຊົງຮັກປະຕູຊີໂອນຫລາຍຍິ່ງກວ່າທີ່ອາສັຍແຫ່ງໃດໆຂອງຢາໂຄບ
3 ໂອ ນະຄອນແຫ່ງພຣະເຈົ້າເອີຍ ເຂົາກ່າວສັຣເສີນທ່ານ
4 ໃນບັນດາຜູ້ທີ່ຮູ້ຈັກເຮົາ ເຮົາລະບຸຊື່ ຣາຮັບ ແລະບາບີໂລນ ເບິ່ງແມ, ຟີລິສຕິນ ຕີເຣ ແລະ ເອທີໂອເປັຽ ເຂົາ
ກ່າວກັນວ່າ, "ຜູ້ນີ້ເກີດທີ່ນັ້ນ"
5 ແລະເຂົາຈະເວົ້າເຣື່ອງຊີໂອນວ່າ, "ຜູ້ນີ້ແລະຜູ້ນັ້ນເກີດໃນເມືອງນັ້ນ" ເພາະພຣະອົງຜູ້ສູງສຸດນັ້ນແຫລະຈະສະ
ຖາປະນາເມືອງນັ້ນໄວ້
6 ຂນະທີ່ພຣະເຈົ້າ ຊົງຈົດຊົນຊາດທັງຫລາຍ ພຣະອົງຊົງບັນທຶກວ່າ, "ຜູ້ນີ້ເກີດທີ່ນັ້ນ"
7 ນັກຮ້ອງແລະນັກເຕັ້ນລຳກ່າວກັນວ່າ, "ນ້ຳພຸທັງສິ້ນຂອງເຮົາຢູ່ທີ່ເຈົ້າ"

## 88 ເພງສັຣເສີນ ບົດທີແປດສິບແປດ

### ຄຳອ້ອນວອນຂໍຊົງຊ່ອຍກູ້ຈາກຄວາມຕາຍ

Prayer for Help in Despondency

ບົດເພງ ເພງສັຣເສີນຂອງຄນະໂກຣາ ເຖິງຫົວໜ້ານັກຮ້ອງ ທຳນອງມາຮາລາທເລອານໂນທ ມັສຄີລບົດນຶ່ງຂອງເຮມານ ຕະກູນເອັຊຣາ

A Song. A Psalm of the Korahites. To the leader: according to Mahalath Leannoth. A Maskil of Heman the Ezrahites

1 ຂ້າແດ່ພຣະເຈົ້າ ພຣະເຈົ້າແຫ່ງຄວາມລອດຂອງຂ້າພຣະອົງ ເມື່ອຂ້າພຣະອົງຮ້ອງທູນຕໍ່ພຣະອົງໃນກາງຄືນ
2 ຂໍຄຳອ້ອນວອນຂອງຂ້າພຣະອົງມາຈຳເພາະເບື້ອງພຣະພັກຂອງພຣະອົງ ຂໍຊົງງ່ຽງພຣະກັນຟັງຄຳຮ້ອງທູນຂອງ
ຂ້າພຣະອົງ
3 ເພາະຈິດໃຈຂອງຂ້າພຣະອົງລຳບາກເຕັມທີ ແລະຊີວິດຂອງຂ້າພຣະອົງເຂົ້າໃກ້ແດນຜູ້ຕາຍ
4 ເຂົານັບຂ້າພຣະອົງໃນບັນດາຜູ້ທີ່ລົງໄປຍັງປາກແດນ ຂ້າພຣະອົງເໝືອນຊາຍທີ່ບໍ່ມີກຳລັງ
5 ເໝືອນຄົນທີ່ເຂົາຖິ້ມໄວ້ຖ້າມກາງຄົນຕາຍ ເໝືອນຄົນຖືກຂ້າທີ່ນອນຢູ່ໃນຫລຸມສົບທີ່ພຣະອົງບໍ່ໄດ້ລະນຶກ
ເຖິງອີກ ເພາະເຂົາທັງຫລາຍຖືກພາກເສັຽຈາກພຣະຫັດຂອງພຣະອົງ
6 ພຣະອົງຊົງໃສ່ຂ້າພຣະອົງໄວ້ໃນສ່ວນເລິກຂອງປາກແດນຜູ້ຕາຍໃນແດນທີ່ມືດແລະເລິກ

7 ພຣະພິໂຣດຂອງພຣະອົງຫນັກຢູ່ເທິງຂ້າພຣະອົງ ແລະພຣະອົງຊົງທັບຖົມຂ້າພຣະອົງດ້ວຍຄື້ນແຫ່ງຄວາມໂກດ
ຮ້າຍຂອງ ພຣະອົງ
8 ພຣະອົງຊົງໃຫ້ເພື່ອນຂອງຂ້າພຣະອົງເຫີນຫ່າງຈາກຂ້າພຣະອົງ ພຣະອົງຊົງກະທຳໃຫ້ຂ້າພຣະອົງເປັນທີ່ຫນ້າກ
ຽດຊັງຂອງເຂົາທັງຫລາຍ ຂ້າພຣະອົງຖືກຂັງ ຂ້າພຣະອົງຈຶ່ງອອກໄປບໍ່ໄດ້
9 ຕາຂອງຂ້າພຣະອົງມົວໄປເພາະຄວາມທຸກ ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຮ້ອງທູນພຣະອົງທຸກມື້ ຂ້າພຣະ
ອົງຊູມືຂຶ້ນຕໍ່ພຣະອົງ
10 ພຣະອົງຊົງກະທຳການອັສຈັນເພື່ອຄົນຕາຍຫລື ຊາວແດນຜູ້ຕາຍລຸກຂຶ້ນສັຣເສີນພຣະອົງໄດ້ຫລື
11 ເຂົາປະກາດຄວາມຮັກຫມັ້ນຄົງຂອງພຣະອົງໃນຫລຸມຝັງສົບຫລື ຫລືປະກາດຄວາມສັດສຸຈຣິດໃນແດນພິນາດ
ຫລື
12 ໃຈຄວາມມືດເຂົາຮູ້ຈັກການອັສຈັນຂອງພຣະອົງຫລື ໃນແຜ່ນດິນແຫ່ງຄວາມຫລົງລືມ ເຂົາຮູ້ຈັກການຊ່ອຍກູ້
ຂອງພຣະອົງຫລື
13 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ຂ້າພຣະອົງຮ້ອງຫາຕໍ່ພຣະອົງ ໃນເວລາເຊົ້າຄຳອ້ອນວອນຂອງຂ້າພຣະອົງຂຶ້ນໄປ
ຫາພຣະອົງ
14 ຂ້າແດ່ພຣະຜູ້ເປັນເຈົ້າ ເປັນຫຍັງພຣະອົງຊົງໂຍນຂ້າພຣະອົງອອກໄປເສັຽ ເປັນຫຍັງພຣະອົງຊົງເຊື່ອງພຣະພັກ
ເສັຽຈາກຂ້າພຣະອົງ
15 ຕັ້ງແຕ່ເປັນຫນຸ່ມມາ ຂ້າພຣະອົງທຸກຍາກແລະໃກ້ຄວາມຕາຍ ຍ້ອນຖືກພຣະອົງລົງໂທດ
16 ພຣະພິໂຣດຂອງພຣະອົງກວາດໄປເຫນືອຂ້າພຣະອົງ ສິ່ງທີ່ຫນ້າຢ້ານຈາກພຣະອົງທຳລາຍຂ້າພຣະອົງ
17 ມັນລ້ອມຂ້າພຣະອົງໄວ້ຕລອດວັນເຫມືອນດັ່ງນ້ຳຖ້ວມ ມັນອ້ອມຮອບຂ້າພຣະອົງໄວ້ທຸກດ້ານ
18 ພຣະອົງຊົງໃຫ້ຄົນຮັກ ແລະສະຫາຍຫ່າງເຫີນຈາກຂ້າພຣະອົງ ພວກເພື່ອນຂອງຂ້າພຣະອົງຢູ່ໃນຄວາມມືດ

## 89 ເພງສັຣເສີນ ບົດທີແປດສິບເກົ້າ

### ຄຳສັນຍາຂອງພຣະເຈົ້າທີ່ມີຕໍ່ດາວິດ

God's Covenant with David

ມັສຄິລບົດນຶ່ງ ຂອງເອທານ ຊາວເອັຊຣາ

A Maskil of Ethan the Ezrahite

1 ຂ້າພຣະອົງຈະຮ້ອງເພງເຖິງຄວາມຮັກຫມັ້ນຄົງຂອງພຣະເຈົ້າເປັນນິດ ດ້ວຍປາກຂອງຂ້າພຣະອົງ ຂ້າພຣະອົງ
ຈະປະກາດຄວາມສັດສຸຈຣິດຂອງພຣະອົງຕລອດທຸກຊົ່ວຊາດພັນ
2 ດ້ວຍຂ້າພະເຈົ້າໄດ້ກ່າວແລ້ວວ່າຄວາມຮັກຫມັ້ນຄົງຂອງພຣະອົງຈະຕັ້ງຢູ່ເປັນນິດ ແນ່ນອນທີ່ສຸດພຣະອົງຈະ
ສະຖາປະນາຄວາມສັດສຸຈຣິດຂອງພຣະອົງໃນຟ້າສວັນ
3 “ເຮົາໄດ້ກະທຳຄຳສັນຍາກັບຜູ້ທີ່ຖືກເລືອກຂອງເຮົາ ເຮົາໄດ້ປະຕິຍານກັບດາວິດຜູ້ຮັບໃຊ້ຂອງເຮົາ
4 ວ່າ ເຮົາຈະສະຖາປະນາເຊື້ອສາຍຂອງເຈົ້າໄວ້ເປັນນິດ ແລະຈະສ້າງບັນລັງຂອງເຈົ້າໄວ້ທຸກຊົ່ວຊາດອາຍຸຄົນ”
5 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຟ້າສວັນຈົ່ງສັຣເສີນການອັສຈັນຂອງພຣະອົງ ແລະສັຣເສີນຄວາມສັດສຸຈຣິດຂອງພ
ຣະອົງໃນທີ່ປະຊຸມຂອງບັນດາທ່ານຜູ້ບໍຣິສຸດ
6 ໃນສວັນບໍ່ມີຜູ້ໃດຈະປຽບກັບພຣະເຈົ້າໄດ້ ໃນບັນດາຊາວສວັນບໍ່ມີໃຜຈະເຫມືອນພຣະເຈົ້າ
7 ຄືອົງພຣະເຈົ້າຜູ້ເປັນທີ່ເຄົາຣົບນັບຖືໃນສະພາບັນດາຜູ້ບໍຣິສຸດຍິ່ງໃຫຍ່ແລະຫນ້າເກງກົວເຫນືອກວ່າທັງສິ້ນທີ່ຢູ່
ອ້ອມພຣະອົງ

8 ຂ້າແດ່ພຣະເຈົ້າຈອມໂຍທາ ຂ້າແດ່ພຣະຜູ້ເປັນເຈົ້າ ຜູ້ໃດຈະຊົງຣິດທານຸພາບເທົ່າທຽມພຣະອົງ ດ້ວຍຄວາມສັຕສຸດຈະຣິດຂອງພຣະອົງອ້ອມພຣະອົງ

9 ພຣະອົງຊົງປົກຄອງຄື້ນທະເລກວ້າງທີ່ມີກຳລັງແຮງ ເມື່ອຄື້ນສູງຂຶ້ນພຣະອົງຊົງໃຫ້ສງົບລົງ

10 ພຣະອົງຊົງຢຽບຣາຮັບເຫມືອນຜູ້ຖືກຂ້າ ພຣະອົງຊົງກະຈາຍສັດຕຣູຂອງພຣະອົງ ດ້ວຍພຣະກອນຊົງຣິດຂອງພຣະອົງ

11 ຟ້າສວັນເປັນຂອງພຣະອົງ ແຜ່ນດິນໂລກເປັນຂອງພຣະອົງດ້ວຍ ພຣະອົງໄດ້ຊົງຕັ້ງພິພົບ ແລະບັນດາສິ່ງທີ່ຢູ່ໃນນັ້ນ

12 ທິດເຫນືອແລະທິດໃຕ້ ພຣະອົງກໍໄດ້ຊົງສ້າງ ພູຕາໂບຣ໌ກັບພູເຮີໂມນ ສັຣເສີນພຣະນາມຂອງພຣະອົງຢ່າງຊື່ນບານ

13 ພຣະອົງມີພຣະກອນອັນຊົງຣິດ ພຣະຫັດຂອງພຣະອົງກໍແຂງແຮງ ພຣະຫັດຂວາຂອງພຣະອົງກໍສູງ

14 ຄວາມຊອບທັມແລະຄວາມຍຸດຕິທັມເປັນຮາກຖານແຫ່ງບັນລັງຂອງພຣະອົງ ຄວາມຮັກຫມັ້ນຄົງ ແລະຄວາມສັດສຸຈຣິດເດີນນຳຫນ້າພຣະອົງ

15 ຊົນຊາດທີ່ຮູ້ຈັກໂຮ່ຮ້ອງຢ່າງຊື່ນບານ ກໍເປັນສຸກ ຂ້າແດ່ພຣະຜູ້ເປັນເຈົ້າ ຄືຜູ້ທີ່ເດີນໃນສະວ່າງແຫ່ງພຣະພັກຂອງພຣະອົງ

16 ຜູ້ເຕັ້ນໂລດຢູ່ໃນພຣະນາມຂອງພຣະອົງຕລອດວັນ ແລະໄດ້ຮັບການເຊີດຊູໂດຍຄວາມຊອບທັມຂອງພຣະອົງ

17 ເພາະພຣະອົງຊົງເປັນພຣະສະງ່າຣາສີແຫ່ງກຳລັງຂອງເຂົາ ແຕ່ໂດຍຄວາມໂປດປານຂອງພຣະອົງ ກຳລັງຂອງຂ້າພຣະອົງທັງຫລາຍຈຶ່ງເພີ້ມຂຶ້ນ

18 ເພາະໂລ້ຂອງເຮົາທັງຫລາຍຂອງເຮົາເປັນຂອງພຣະຜູ້ເປັນເຈົ້າ ພຣະຣາຊາຂອງເຮົາເປັນຂອງພຣະອົງ ບໍຣິສຸດແຫ່ງອິສຣາເອນ

19 ໃນເມື່ອກ່ອນ ພຣະອົງຕັສດ້ວຍນິມິດແກ່ໄພ່ພົນຂອງພຣະອົງ ແລະກ່າວວ່າ, “ເຮົາໄດ້ຍົກຊາຍຫນຸ່ມຄົນນຶ່ງເຫນືອຊາຍສະກັນ ເຮົາໄດ້ເຊີດຊູຄົນທີ່ຖືກເລືອກຄົນນຶ່ງເຫນືອປະຊາຊົນ

20 ເຮົາໄດ້ພົບດາວິດຜູ້ຮັບໃຊ້ຂອງເຮົາ ເຮົາໄດ້ເຈີມເຂົາໄວ້ແລ້ວ

21 ເພື່ອວ່າມືຂອງເຮົາຈະຢູ່ກັບເຂົາເປັນນິດ ແລະແຂນຂອງເຮົາຈະເສີມກຳລັງຂອງເຂົາ

22 ສັດຕຣູຈະຫລອກເຂົາບໍ່ໄດ້ ຄົນທີ່ປະພຶດຜິດຈະຂົ່ມເຂົາບໍ່ໄດ້

23 ເຮົາຈະຢຽບຢ່ຳສັດຕຣູຂອງເຂົາຕໍ່ຫນ້າເຂົາ ແລະຕີຜູ້ທີ່ກຽດເຂົາໃຫ້ລົ້ມລົງ

24 ຄວາມສັດສຸຈຣິດ ແລະຄວາມຮັກຫມັ້ນຄົງຂອງເຮົາຈະຢູ່ນຳເຂົາ ແລະກຳລັງຂອງເຂົາຈະເປັນທີ່ເຊີດຊູໂດຍນາມຂອງເຮົາ

25 ເຮົາຈະເອົາມືຂອງເຂົາວາງໄວ້ເທິງທະເລ ແລະມືຂວາຂອງເຂົາເທິງແມ່ນ້ຳທັງຫລາຍ

26 ເຂົາຈະຮ້ອງຕໍ່ເຮົາວ່າ, “ພຣະອົງຊົງເປັນພຣະບິດາຂອງຂ້າພຣະອົງ ພຣະເຈົ້າຂອງຂ້າພຣະອົງ ແລະພຣະສີລາແຫ່ງຄວາມລອດຂອງຂ້າພຣະອົງ”

27 ແລະເຮົາຈະໃຫ້ເຂົາເປັນບຸດຫົວປີ ສູງທີ່ສຸດໃນບັນດາກະສັດແຫ່ງແຜ່ນດິນໂລກ

28 ເຮົາຈະເກັບຄວາມຮັກຫມັ້ນຄົງຂອງເຮົາໄວ້ໃຫ້ເຂົາເປັນນິດ ແລະຄຳສັນຍາຂອງເຮົາຈະຕັ້ງຫມັ້ນຄົງຢູ່ເພື່ອເຂົາ

29 ເຮົາຈະສະຖາປະນາເຊື້ອສາຍຂອງເຂົາໄວ້ເປັນນິດ ທັງບັນລັງຂອງເຂົາໃຫ້ດຳຣົງຕາບເທົ່າກາລຂອງຟ້າສວັນ

30 ຖ້າລູກຫລານຂອງເຂົາຖິ້ມກົດຫມາຍຂອງເຮົາ ແລະບໍ່ດຳເນີນຕາມລະບຽບຂອງເຮົາ

31 ຖ້າເຂົາທັງຫລາຍຝ່າຝືນຂໍ້ຄຳສັ່ງຂອງເຮົາ ແລະບໍ່ໄດ້ຮັກສາບັນຍັດຂອງເຮົາ

32 ແລ້ວເຮົາຈະລົງໂທດການລະເມີດຂອງເຂົາດ້ວຍໄມ້ແສ້ ແລະຄວາມບາບຜິດຂອງເຂົາດ້ວຍການຂ້ຽນ

33 ແຕ່ຈະບໍ່ຖອນຄວາມຮັກຫມັ້ນຄົງຂອງເຮົາໄປຈາກເຂົາ ຫລື ບໍ່ຈິງຕໍ່ຄວາມສັດສຸຈຣິດຂອງເຮົາ

34 ເຮົາຈະບໍ່ຝ່າຝືນຄໍາສັນຍາຂອງເຮົາ ຫລືຖອນຖ້ອຍຄໍາທີ່ອອກໄປຈາກຣິມຝີປາກຂອງເຮົາ
35 ເຮົາປະຕິຍານດ້ວຍຄວາມບໍຣິສຸດຂອງເຮົາເດັດຂາດ ເຮົາຈະບໍ່ມຸສາຕໍ່ດາວິດ
36 ເຊື້ອສາຍຂອງເຂົາຈະດໍາຣົງຢູ່ເປັນນິດ ບັນລັງຂອງເຂົາຈະຍືນນານຢ່າງດວງອາທິດຕໍ່ຫນ້າເຮົາ
37 ຈະສະຖາປະນາໄວ້ຢ່າງດວງຈັນເປັນນິດ ແລະສັກຂີພຍານໃນທ້ອງຟ້າກໍແນ່ນອນ"
38 ແຕ່ ບັດນີ້ ພຣະອົງຊົງໄດ້ໂຍນອອກໄປແລະປະຕິເສດ ພຣະອົງຊົງພຣະພິໂຣດຕໍ່ຜູ້ທີ່ເຈີມໄວ້ຂອງພຣະອົງ
39 ພຣະອົງໄດ້ຊົງບອກເລີກຄໍາສັນຍາກັບຜູ້ຮັບໃຊ້ຂອງພຣະອົງ ພຣະອົງຊົງກະທໍາມົງກຸດຂອງທ່ານມົນທິນໃນຜົງ
ຂີ້ດິນ
40 ພຣະອົງໄດ້ພັງກໍາແພງຂອງທ່ານທັງສິ້ນ ພຣະອົງຊົງໃຫ້ທີ່ກໍາບັງເຂັ້ມແຂງຂອງທ່ານຮົກຮ້າງເພພັງ
41 ຄົນທັງປວງທີ່ຜ່ານໄປກໍປຸ້ນທ່ານ ທ່ານກໍເປັນຂີ້ປາກຂອງເພື່ອນບ້ານ
42 ພຣະອົງຊົງຍົກຍ້ອງມືຂວາຂອງສັດຕຣູຂອງທ່ານ ພຣະອົງຊົງກະທໍາໃຫ້ສັດຕຣູທັງສິ້ນຂອງທ່ານຍິນດີ
43 ພຣະອົງຊົງຫັນຄົມດາບຂອງທ່ານ ແລະພຣະອົງບໍ່ໄດ້ຊົງກະທໍາໃຫ້ທ່ານຕັ້ງຫມັ້ນຢູ່ໃນສົງຄາມ
44 ພຣະອົງໄດ້ຊົງກະທໍາໃຫ້ສະງ່າຂອງທ່ານເສື່ອມສູນໄປ ແລະຊົງໂຍນບັນລັງຂອງທ່ານລົງສູ່ພື້ນດິນ
45 ພຣະອົງຊົງຕັດວັນວັຍຫນຸ່ມຂອງທ່ານໃຫ້ສັ້ນ ແລະຊົງຄຸມທ່ານໄວ້ດ້ວຍຄວາມອາຍ
46 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຈະລີ້ຊ່ອນຢູ່ເຫິງປານໃດ ເປັນນິດຫລື ພຣະພິໂຣດຂອງພຣະອົງຈະໄຫມ້ຢູ່ເຫິງ
ປານໃດ
47 ຂໍຊົງຣະລຶກວ່າ ຊ່ວງຊີວິດຂອງຂ້າພຣະອົງເປັນຢ່າງໃດ ເພາະວ່າພຣະອົງຊົງສ້າງເຊື້ອສາຍຂອງມະນຸດມາໂດຍ
ບໍ່ມີປໂຍດແທ້ໆ
48 ມະນຸດຄົນໃດມີຊີວິດຢູ່ໄດ້ໂດຍບໍ່ຕ້ອງເຫັນຄວາມຕາຍ ຜູ້ໃດຈະຊ່ອຍກູ້ວິນຍານຈິດຂອງຕົນຈາກມືຂອງແດນຜູ້
ຕາຍໄດ້
49 ຂ້າແດ່ພຣະອົງຜູ້ເປັນພຣະເຈົ້າ ຄວາມຮັກຫມັ້ນຄົງໃນເມື່ອກ່ອນຂອງພຣະອົງນັ້ນຢູ່ໃສ ຊຶ່ງພຣະອົງຊົງປະຕິ
ຍານຕໍ່ດາວິດໂດຍຄວາມສັດສຸຈຣິດຂອງພຣະອົງ
50 ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂໍຊົງຣະລຶກວ່າຜູ້ຮັບໃຊ້ຂອງພຣະອົງຖືກດ່າຢ່າງໃດ ແລະຂ້າພຣະອົງຮັບຄວາມສົບ
ປມາດຂອງຊົນຊາດທັງຫລາຍໄວ້ໃນເອິກຂອງຂ້າພຣະອົງຢ່າງໃດ
51 ຂ້າແດ່ພຣະຜູ້ເປັນເຈົ້າ ນັ້ນແຫລະສັດຕຣູຂອງພຣະອົງໄດ້ເຍີ້ຍຫຍັນ ນັ້ນແຫລະເຂົາເຍີ້ຍຮອຍຕີນຂອງຜູ້ເຈີມ
ໄວ້ຂອງພຣະອົງ
52 ສາທຸການແດ່ພຣະຜູ້ເປັນເຈົ້າເປັນນິດ ອາແມນ ແລະ ອາແມນ

## BOOK IV

(ພສສ 90-106)

## 90 ເພງສັຣເສີນ ບົດທີເກົ້າສິບ

### ຄວາມອ່ອນແອຂອງມະນຸດ

God's Eternity and Human Frailty

ຄໍາອ້ອນວອນຂອງໂມເຊ ຄົນຂອງພຣະເຈົ້າ

A Prayer of Moses, the man of God

1 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເປັນທີ່ເພິ່ງຂອງຂ້າພຣະອົງເລື້ອຍມາ
2 ພຣະອົງຊົງເປັນພຣະເຈົ້າອົງຊົ່ວນິຣັນດອນ ບໍ່ມີກົກແລະບໍ່ມີປາຍ ກ່ອນສ້າງພູທັງຫລາຍແລະພື້ນແຜ່ນດິນໂລກ
ນີ້

3 ພຣະອົງຊົງບອກໃຫ້ມະນຸດກັບຄືນໄປຫາສິ່ງທີ່ເຂົາເຄີຍເປັນຢູ່ມາກ່ອນ ພຣະອົງຊົງປ່ຽນແປງເຂົາໃຫ້ກັບຄືນ
ເປັນດິນອີກ
4 ສຳລັບພຣະອົງພັນປີເທົ່າກັບມື້ດຽວ ມັນເຫມືອນກັບມື້ວານນີ້ທີ່ຜ່ານໄປແລ້ວ ແລະເຫມືອນກັບເວລາສັ້ນໆໃນ
ເວລາກາງຄືນ
5 ພຣະອົງຊົງກວາດມະນຸດອອກເຫມືອນກະແສນ້ຳກວາດຊີວິດເຂົາເຫມືອນຄວາມຝັນ ແລະເຂົາກໍເຫມືອນຕົ້ນ
ຫຍ້າທີ່ສົດຊື່ນໃນເວລາເຊົ້າ
6 ຊຶ່ງປົ່ງຂຶ້ນແລະອອກດອກຢ່າງເບີກບານ ແລ້ວມັນກໍຫ່ຽວແຫ້ງແລະຕາຍໄປໃນເວລາຄ່ຳ
7 ຂ້າພຣະອົງທັງຫລາຍໄດ້ຖືກທຳລາຍດ້ວຍຄວາມພິໂຣດຂອງພຣະອົງ ຂ້າພຣະອົງຫວາດຫວັ່ນຕົກໃຈດ້ວຍ
ຄວາມຮ້າຍຢ່າງແຮງກ້າຂອງພຣະອົງ
8 ພຣະອົງຊົງຮູ້ຈັກຄວາມຜິດຂອງຂ້າພຣະອົງ ແລະຊົງເຫັນຄວາມຜິດອັນທີ່ຂ້າພຣະອົງອຳໄວ້
9 ຄວາມພິໂຣດຂອງພຣະອົງກໍບັ່ນທອນ ໃຫ້ຊີວິດປະຈຳວັນຂອງຂ້າພຣະອົງສັ້ນເຂົ້າ ຊີວິດຂອງຂ້າພຣະອົງໄດ້ມາ
ເຖິງຈຸດຈົບເຫມືອນດັ່ງສຽງລົມ
10 ຕລອດເຈັດສິບປີທີ່ຂ້າພຣະອົງມີຊີວິດຢູ່ ແລະຖ້າວ່າຂ້າພຣະອົງມີເຫື່ອແຮງຈົນຮອດແປດສິບປີ ມັນກໍຍັງພາໃຫ້
ຂ້າພຣະອົງມີຄວາມຂັດສົນແລະຄວາມທຸກລຳບາກອີກ ໃນບໍ່ຊ້ານີ້ຊີວິດຈະສິ້ນສຸດລົງແລະຂ້າພຣະອົງກໍຈະ
ຕາຍໄປ
11 ແມ່ນໃຜຮູ້ຈັກຣິດແຫ່ງຄວາມພິໂຣດຂອງພຣະອົງຢ່າງແທ້ຈິງ ຄວາມພິໂຣດຂອງພຣະອົງນັ້ນຫນ້າຢ້ານສ່ຳໃດ
12 ຂໍພຣະອົງຊົງສັ່ງສອນໃຫ້ຂ້າພຣະອົງເຂົ້າໃຈວ່າຊີວິດນີ້ນັ້ນສັ້ນຫລາຍ ເພື່ອຂ້າພຣະອົງທັງຫລາຍຈະກາຍເປັນ
ຄົນສລາດ
13 ຂ້າແດ່ພຣະຜູ້ເປັນເຈົ້າ ຍັງດົນປານໃດ ພຣະອົງຈຶ່ງຈະຍົກໂທດແກ່ຂ້າພຣະອົງ ຂໍໂຜດສົງສານຜູ້ຮັບໃຊ້ຂອງ
ພຣະອົງດ້ວຍ
14 ໃນທຸກໆເຊົ້າ ຂໍໃຫ້ຂ້າພຣະອົງທັງຫລາຍເຕັມໄປດ້ວຍຄວາມຮັກຫມັ້ນຄົງຂອງພຣະອົງ ເພື່ອຂ້າພຣະອົງທັງ
ຫລາຍຈະຮ້ອງເພງສັຣເສີນ ແລະຍິນດີຕລອດຊົ່ວຊີວິດ
15 ໃນຂນະນີ້ ຂໍພຣະອົງຊົງປະທານຄວາມສຸກໃຫ້ຂ້າພຣະອົງທັງຫລາຍເທົ່າກັນກັບຄວາມໂສກເສົ້າທີ່ພຣະອົງຊົງ
ໃຫ້ແຕ່ກ່ອນໃນຫລາຍປີທີ່ຂ້າພຣະອົງມີຄວາມທຸກລຳບາກ
16 ຂໍໃຫ້ຂ້າພຣະອົງຜູ້ຮັບໃຊ້ຂອງພຣະອົງເຫັນກິຈການອັນຍິ່ງໃຫຍ່ຂອງພຣະອົງ ແລະຂໍໃຫ້ເຊື້ອສາຍຂອງຂ້າພຣະ
ອົງເຫັນຣັສມີອັນຍິ່ງໃຫຍ່ຂອງພຣະອົງດ້ວຍ
17 ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ຂໍໃຫ້ພຣະພອນຂອງພຣະອົງດຳຣົງຢູ່ນຳຂ້າພຣະອົງ ຂໍພຣະອົງຊົງກະ
ທຳໃຫ້ວຽກການຂອງຂ້າພຣະອົງສຳເຣັດ

## 91 ເພງສັຣເສີນ ບົດທີເກົ້າສິບເອັດ

### ພຣະເຈົ້າຜູ້ຊົງຄຸ້ມຄອງເຮົາ

Assurance of God’s Protection

1 ຜູ້ທີ່ໄປເພິ່ງຄວາມປອດພັຍໃນພຣະເຈົ້າອົງສູງສຸດ ແລະຜູ້ທີ່ອາສັຍຢູ່ພາຍໃຕ້ຮົ່ມເງົາຂອງພຣະຜູ້ຊົງອຳນາດຍິ່ງ
ໃຫຍ່
2 ຈະເວົ້າກັບພຣະອົງວ່າ, “ພຣະອົງຊົງເປັນຜູ້ປ້ອງກັນແລະຄຸ້ມຄອງຂອງຂ້າພຣະອົງ ພຣະອົງຊົງເປັນພຣະເຈົ້າ
ຂອງຂ້າພຣະອົງ ຂ້າພຣະອົງໄວ້ເນື້ອເຊື່ອໃຈໃນພຣະອົງ”
3 ພຣະອົງຊົງຊ່ອຍທ່ານໃຫ້ພົ້ນຈາກບ້ວງແຮ້ວອັນລັບລີ້ທຸກຢ່າງແນ່ນອນ ແລະຈາກພຍາດໂຣຄານາໆປະການ

4 ພຣະອົງຊົງຕຸ້ມທ່ານດ້ວຍປີກຂອງພຣະອົງ ທ່ານຈະປອດພັຍພາຍໃຕ້ການພິທັກຮັກສາຂອງພຣະອົງ ຄວາມສັດ
ຊື່ຂອງພຣະອົງຈະຄຸ້ມຄອງແລະປ້ອງກັນທ່ານໄວ້
5 ທ່ານບໍ່ຕ້ອງຢ້ານອັນຕະຣາຍໃນເວລາກາງຄືນ ຫລືລູກທະນູທີ່ຍິງມາຢ່າງກະທັນຫັນໃນເວລາກາງເວັນ
6 ຫລືພຍາດໂຣຄາທີ່ເກີດຕິດຕໍ່ໃນເວລາກາງຄືນ ຕລອດທັງໂຣກລະບາດທີ່ເກີດຂຶ້ນໃນເວລາກາງເວັນ
7 ອາດຈະມີພັນຄົນລົ້ມຕາຍລົງໃກ້ທ່ານ ສິບພັນຄົນຈະຕາຍອ້ອມຮອບທ່ານ ແຕ່ທ່ານຈະບໍ່ໄດ້ຮັບອັນຕະຣາຍ
ຢ່າງໃດຫມົດ
8 ທ່ານຈະເຫັນວ່າ ຄົນຊົ່ວຮ້າຍຈະຖືກລົງໂທດແບບໃດ
9 ເນື່ອງຈາກວ່າທ່ານໄດ້ເອົາພຣະຜູ້ເປັນເຈົ້າ ເປັນຜູ້ປ້ອງກັນທ່ານ ແລະເອົາພຣະເຈົ້າອົງສູງສຸດເປັນທີ່ເພິ່ງຂອງ
ທ່ານ
10 ພັຍວິບັດຈະບໍ່ມາຕົກຖືກທ່ານ ຄວາມໂທດຮ້າຍຈະບໍ່ມາໃກ້ເຮືອນຂອງທ່ານ
11 ພຣະເຈົ້າຈະຊົງສັ່ງເທວະດາລົງມາຮັກສາເບິ່ງແຍງທ່ານໃນທຸກບ່ອນທີ່ທ່ານໄປ
12 ເທວະດາຈະອຸ້ມທ່ານໄວ້ ເພື່ອບໍ່ໃຫ້ທ່ານສະດຸດກ້ອນຫີນ
13 ທ່ານຈະຜາບແພ້ສິງຮ້າຍແລະງູພິດ ໂດຍຢຽບມັນລົງໃຕ້ພື້ນຕີນຂອງທ່ານ
14 ພຣະເຈົ້າຊົງກ່າວວ່າ, "ເຮົາຈະຊ່ອຍຜູ້ທີ່ຮັກເຮົາໃຫ້ພົ້ນພັຍ ແລະຄຸ້ມຄອງຜູ້ທີ່ຮູ້ຈັກເຮົາ
15 ເວລາເຂົາເອີ້ນຫາເຮົາ ເຮົາຈະຕອບເຂົາ ເມື່ອເຂົາຕົກຢູ່ໃນຄວາມທຸກຍາກລຳບາກ ເຮົາຈະຊ່ອຍຊີວິດເຂົາແລະ
ໃຫ້ກຽດເຂົາ ເຮົາຈະສະຖິດຢູ່ກັບເຂົາ
16 ເຮົາຈະຕອບແທນເຂົາ ໂດຍໃຫ້ເຂົາມີຊີວິດຍືນຍາວ ແລະເຮົາຈະຊ່ອຍໃຫ້ເຂົາພົ້ນພັຍຢ່າງແນ່ນອນ"

## 92 ເພງສັຣເສີນ ບົດທີເກົ້າສິບສອງ

### ສັຣເສີນພຣະຄຸນຂອງພຣະເຈົ້າ

Thanksgiving for Vindication

1 ເປັນການດີທີ່ຈະໂມທະນາພຣະຄຸນພຣະເຈົ້າ ຂ້າແດ່ອົງຜູ້ສູງສຸດທີ່ຈະຮ້ອງເພງສັຣເສີນພຣະນາມຂອງພຣະອົງ
2 ທີ່ຈະປະກາດຄວາມຮັກຫມັ້ນຄົງຂອງພຣະອົງໃນເວລາເຊົ້າ ແລະຄວາມສັດສຸດຈະຣິດຂອງພຣະອົງໃນກາງ
ຄືນ
3 ເປັນເພງດ້ວຍພິນສິບສາຍແລະພິນໃຫຍ່ ແລະດ້ວຍສຽງພິນເຂົາຄູ່
4 ຂ້າແດ່ພຣະຜູ້ເປັນເຈົ້າ ເພາະພຣະອົງກະທຳໃຫ້ຂ້າພຣະອົງຍິນດີດ້ວຍພຣະຣາຊກິດຂອງພຣະອົງ ຂ້າພຣະອົງ
ຮ້ອງເພງດ້ວຍຄວາມຊື່ນບານ ເນື່ອງໃນພຣະຣາຊກິຈຂອງພຣະອົງ
5 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະຣາຊກິຈຂອງພຣະອົງຍິ່ງໃຫຍ່ນັກ ພຣະດຳຣິຂອງພຣະອົງສຸດເລິກລ້ຳ
6 ຄົນໂງ່ຈ້າຈະຮູ້ບໍ່ໄດ້ ຄົນເບົາປັນຍາເຂົ້າໃຈເຣື່ອງນີ້ບໍ່ໄດ້
7 ວ່າ, "ເຖິງວ່າຄົນອະທັມຈະງອກຂຶ້ນຢ່າງຫຍ້າ ແລະຄົນກະທຳຊົ່ວທັງປວງຈະເຣີນຂຶ້ນ ເຂົາທັງຫລາຍຈະຖືກທຳ
ລາຍເປັນນິດ
8 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງຊົງຢູ່ເທິງທີ່ສູງເປັນນິດ
9 ຂ້າແດ່ພຣະຜູ້ເປັນເຈົ້າ ເພາະນີ້ແຫລະສັດຕຣູຂອງພຣະອົງ ສັດຕຣູຂອງພຣະອົງຈະພິນາດ ຄົນກະທຳຊົ່ວທັງ
ປວງຈະຕ້ອງກະຈັດກະຈາຍໄປ
10 ແຕ່ພຣະອົງຊົງເຊີດຊູເຂົາຂອງຂ້າພຣະອົງ ເຫມືອນຢ່າງກັບເຂົາງົວກະທິງ ພຣະອົງຊົງເທນ້ຳມັນໃຫມ່ເທິງຂ້າ
ພຣະອົງ

11 ຕາຂອງຂ້າພຣະອົງເບິ່ງເຫັນພວກສັດຕຣູຂອງຂ້າພຣະອົງແພ້ ຫູຂອງຂ້າພຣະອົງ ໄດ້ຍິນເຖິງຄວາມຫລົ້ມຈົມ
ຂອງຄົນທຳຊົ່ວທີ່ລຸກຂຶ້ນສູ້ຂ້າພຣະອົງ
12 ຄົນຊອບທັມກໍ່ງອກຂຶ້ນຢ່າງຕົ້ນຕານ ຈະເຣີນຂຶ້ນເຫມືອນຕົ້ນສົນໃນເລບານອນ
13 ຄົນໄດ້ປູກມັນໄວ້ໃນພຣະຜາສາດຂອງພຣະເຈົ້າ ມັນຈະເຣີນຂຶ້ນໃນບໍຣິເວນຂອງພຣະເຈົ້າຂອງເຮົາທັງຫລາຍ
14 ມັນແກ່ແລ້ວກໍຍັງເກີດຜົນ ມັນມີນ້ຳລ້ຽງເຕັມແລະຂຽວສົດຢູ່
15 ເພື່ອສະແດງວ່າພຣະເຈົ້ານັ້ນທ່ຽງທັມ ພຣະອົງຊົງເປັນພຣະສີລາຂອງຂ້າພຣະອົງ ໃນພຣະອົງບໍ່ມີຄວາມອະທັມ

## 93 ເພງສັຣເສີນ ບົດທີເກົ້າສິບສາມ

### ພຣະເຈົ້າຊົງເປັນເຈົ້າຊີວິດ

The Majesty of God's Rule

1 ພຣະຜູ້ເປັນເຈົ້າຊົງເປັນເຈົ້າຊີວິດ ພຣະອົງຊົງຫຸ້ມຫໍ່ດ້ວຍສະງ່າຣາສີ ແລະຊົງເຕັມໄປດ້ວຍອຳນາດ ແນ່ນອນທີ່
ສຸດ ແຜ່ນດິນໂລກຕັ້ງຫມັ້ນຄົງຢູ່ ແລະຈະບໍ່ຍົກຍ້າຍໄປໃສ
2 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະທີ່ນັ່ງຂອງພຣະອົງຊົງມີຢູ່ ແລະພຣະອົງຊົງເປັນຢູ່ຕັ້ງແຕ່ໃດໆມາ
3 ຂ້າແດ່ພຣະຜູ້ເປັນເຈົ້າ ສຽງມະຫາສມຸດເລີກດັງກ້ອງສນັ່ນຫວັ່ນໄຫວ
4 ພຣະຜູ້ເປັນເຈົ້າຊົງເປັນຜູ້ປົກຄອງສູງສຸດໃນຟ້າສວັນ ພຣະອົງຊົງຍິ່ງໃຫຍ່ກວ່າສຽງມະຫາສມຸດ ແລະຊົງມີອຳ
ນາດເຫນືອກວ່າຄື້ນທະເລ
5 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະບັນຍັດຂອງພຣະອົງຊົງແນ່ແທ້ ພຣະວິຫານຂອງພຣະອົງຊົງບໍຣິສຸດແລະເປັນຢູ່
ຕລອດໄປ

## 94 ເພງສັຣເສີນ ບົດທີເກົ້າສິບສີ່

### ຄຳອ້ອນວອນເພື່ອການແກ້ແຄ້ນ

God the Avenger of the Righteous

1 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງການແກ້ແຄ້ນ ຂ້າແດ່ພຣະເຈົ້າແຫ່ງການແກ້ແຄ້ນ ຂໍຊົງສ່ອງແສງອອກ
ໄປ
2 ຂ້າແດ່ຜູ້ພິພາກສາໂລກ ຂໍຊົງລຸກຂຶ້ນ ໃຫ້ຄົນໂອ້ອວດໄດ້ຮັບຜົນສນອງອັນສົມກັບເຂົາ
3 ຂ້າແດ່ພຣະຜູ້ເປັນເຈົ້າ ຄົນອະທັມຈະນານເທົ່າໃດ ຄົນອະທັມຈະດີໃຈຢູ່ນານເທົ່າໃດ
4 ເຂົາເວົ້າຢ່າງຈອງຫອງ ຄົນກະທຳຊົ່ວທັງປວງ ເຂົາໂອ້ອວດ
5 ຂ້າແດ່ພຣະຜູ້ເປັນເຈົ້າ ເຂົາຢຽບຢ່ຳໄພ່ພົນຂອງພຣະອົງ ແລະເຮັດມໍຣະດົກຂອງພຣະອົງໃຫ້ທຸກຍາກ
6 ເຂົາສັງຫານຍິງຫມ້າຍແລະຄົນຕ່າງດ້າວ ແລະກະທຳຄາດຕະກັມລູກກຳພ້າ
7 ແລະເຂົາກ່າວວ່າ, "ພຣະເຈົ້າບໍ່ຫລຽວເຫັນ ພຣະເຈົ້າຂອງຢາໂຄບບໍ່ຢັ່ງຮູ້"
8 ຄົນໂງ່ຈ້າທີ່ສຸດຂອງປະຊາຊົນເອີຍ ຈົ່ງເຂົ້າໃຈເຖີດ ຄົນໂງ່ທັງຫລາຍ ເມື່ອໃດເຈົ້າຈຶ່ງຈະສລາດ
9 ພຣະອົງຜູ້ຊົງປູກຫູ ພຣະອົງຈະບໍ່ຊົງໄດ້ຍິນຫລື ພຣະອົງຊົງປັ້ນຕາ ພຣະອົງຈະບໍ່ຊົງເຫັນຫລື
10 ພຣະອົງຊົງຕີສອນບັນດາປະຊາຊາດ ພຣະອົງຈະບໍ່ຊົງຂນາບຫລື ຄືພຣະອົງຜູ້ຊົງສອນຄວາມຮູ້ໃຫ້ມະນຸດ
11 ພຣະຜູ້ເປັນເຈົ້າຊົງຮູ້ຄວາມຄິດຂອງມະນຸດ ວ່າເປັນແຕ່ພຽງລົມຫາຍໃຈ
12 ຂ້າແດ່ພຣະຜູ້ເປັນເຈົ້າ ຄົນທີ່ພຣະອົງຊົງຕີສອນນັ້ນ ກໍເປັນສຸກ ຄືຄົນທີ່ພຣະອົງຊົງສອນດ້ວຍພຣະທັມຂອງພ
ຣະອົງ
13 ເພື່ອຈະໃຫ້ເຂົາພັກຈາກວັນລຳບາກ ຈົນກວ່າຈະຂຸດບໍ່ໄວ້ໃຫ້ຄົນອະທັມ

14 ເພາະພຣະຜູ້ເປັນເຈົ້າຈະບໍ່ປະຖິ້ມໄພ່ພົນຂອງພຣະອົງ ພຣະອົງຈະບໍ່ຊົງສະລະມໍຣະດົກຂອງພຣະອົງ
15 ເພາະຄວາມຍຸດຕິທັມຈະກັບໄປຫາຄວາມຊອບທັມ ແລະບັນດາຄົນທ່ຽງທັມໃນໃຈຈະຕິດຕາມໄປ
16 ຜູ້ໃດລຸກຂຶ້ນຕໍ່ຕ້ານຄົນໂຫດຮ້າຍແທນພຣະເຈົ້າ ຜູ້ໃດຢືນຕໍ່ສູ້ຄົນກະທຳຄວາມຊົ່ວແທນພຣະເຈົ້າ
17 ຖ້າພຣະຜູ້ເປັນເຈົ້າບໍ່ໄດ້ຊ່ວຍເຫລືອຂ້າພະເຈົ້າ ວິນຍານຂອງຂ້າພະເຈົ້າຄົງຢູ່ໃນຄວາມສງັດໃນປ່າຊ້າ
18 ເມື່ອຂ້າພະເຈົ້າໄດ້ຄິດວ່າ, “ຕີນຂອງຂ້າພາດລົ້ມລົງ“ ຂ້າແດ່ພຣະຜູ້ເປັນເຈົ້າ ຄວາມຮັກຫມັ້ນຄົງຂອງພຣະອົງ
ຈະຍຶດຂ້າ ພຣະອົງໄວ້
19 ເມື່ອຄວາມກັງວົນໃນໃຈຂອງຂ້າພຣະອົງມີຫລາຍ ການເລົ້າໂລມຂອງພຣະອົງກໍຫນູນຈິດໃຈຂອງຂ້າພຣະອົງ
ໃຫ້ຊື່ນບານ
20 ຜູ້ປົກຄອງທີ່ໂຫດຮ້າຍຈະຮ່ວມມິດກັບພຣະອົງໄດ້ຫລື ຄືຜູ້ທີ່ໃຊ້ກົດເກນປະກອບການຊົ່ວຮ້າຍ
21 ເຂົາທັງຫລາຍຜູກມິດກັນຕໍ່ສູ້ຊີວິດຂອງຄົນຊອບທັມ ແລະກ່າວໂທດຄົນໄຮ້ຄວາມຜິດເຖິງຕາຍ
22 ແຕ່ພຣະຜູ້ເປັນເຈົ້າຊົງເປັນທີ່ກຳບັງເຂັ້ມແຂງຂອງຂ້າພະເຈົ້າແລ້ວ ແລະພຣະເຈົ້າຂອງຂ້າພະເຈົ້າເປັນພຣະສີ
ລາທີ່ລີ້ພັຍຂອງຂ້າພະເຈົ້າ
23 ພຣະອົງຈະຊົງນຳຄວາມບາບຜິດຂອງເຂົາກັບມາສນອງເຂົາ ແລະຊົງທຳລາຍເຂົາເສັຽເພາະຄວາມໂຫດຮ້າຍ
ຂອງເຂົາ ພຣະເຈົ້າຂອງເຮົາຈະຊົງທຳລາຍເຂົາເສັຽ

## 95 ເພງສັຣເສີນ ບົດທີເກົ້າສິບຫ້າ

### ບົດເພງສັຣເສີນແລະນະມັສການ

A Call to worship and Obedience

1 ມາເຖີດ ໃຫ້ເຮົາທັງຫລາຍຮ້ອງເພງຖວາຍພຣະຜູ້ເປັນເຈົ້າ ໃຫ້ເຮົາກະທຳສຽງຊື່ນບານຖວາຍພຣະສີລາແຫ່ງ
ຄວາມລອດຂອງພວກເຮົາ
2 ໃຫ້ເຮົາທັງຫລາຍເຂົ້າມາຢູ່ສະເພາະເບື້ອງພຣະພັກດ້ວຍໂມທະນາ ໃຫ້ເຮົາກະທຳສຽງຊື່ນບານຖວາຍພຣະອົງ
ດ້ວຍບົດເພງສັຣເສີນ
3 ເພາະພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າຍິ່ງໃຫຍ່ ແລະຊົງເປັນກະສັດຍິ່ງໃຫຍ່ເຫນືອພຣະທັງຫລາຍ
4 ທີ່ເລິກຂອງແຜ່ນດິນໂລກຢູ່ໃນພຣະຫັດຂອງພຣະອົງ ທີ່ສູງຂອງພູເປັນຂອງພຣະອົງດ້ວຍ
5 ທະເລເປັນຂອງພຣະອົງ ເພາະພຣະອົງຊົງສ້າງມັນ ແລະພຣະຫັດຂອງພຣະອົງຊົງປັ້ນແຜ່ນດິນ
6 ມາເຖີດ ໃຫ້ເຮົານະມັສການແລະຂາບລົງ ໃຫ້ເຮົາຄຸເຂົ່າລົງຕໍ່ພຣະຜູ້ເປັນເຈົ້າຜູ້ຊົງສ້າງພວກເຮົາ
7 ເພາະພຣະອົງຊົງເປັນພຣະເຈົ້າຂອງເຮົາ ແລະເຮົາເປັນປະຊາກອນແຫ່ງທົ່ງຫຍ້າຂອງພຣະອົງ ແລະເປັນແກະ
ແຫ່ງພຣະຫັດຂອງພຣະອົງ ວັນນີ້ ຢາກຈະໃຫ້ທ່ານທັງຫລາຍຟັງພຣະສຸຣະສຽງຂອງພຣະອົງ
8 ຢ່າໃຫ້ຈິດໃຈເຈົ້າແຂງກະດ້າງ ເໝືອນທີ່ເມຣິບາ ເໝືອນວັນມັດສາໃນຖິ່ນກັນດານ
9 ເມື່ອບັນພະບຸຣຸດຂອງເຈົ້າທົດລອງເຮົາ ແລະເອົາເຮົາເຂົ້າພິສູດ ເຖິງແມ້ວ່າເຂົາເຫັນກິຈການຂອງເຮົາ
10 ເຮົາກຽດເຊື້ອສາຍນັ້ນຢູ່ສີ່ສິບປີ ແລະວ່າ, “ເຂົາເປັນຊົນຊາດທີ່ມີໃຈມັກຫລົງຜິດ ເຂົາບໍ່ນັບຖືທາງຂອງເຮົາ”
11 ເພາະສະນັ້ນເຮົາຈຶ່ງປະຕິຍານດ້ວຍຄວາມກິ້ວຂອງເຮົາ ວ່າເຂົາຈະບໍ່ໄດ້ເຂົ້າໃນທີ່ພັກເຊົາຂອງເຮົາ

## 96 ເພງສັຣເສີນ ບົດທີເກົ້າສິບຫົກ

### ພຣະເຈົ້າຊົງເປັນພຣະເຈົ້າມະຫາຊີວິດອົງສູງສຸດ

Praise to God Who Comes in Judgment

(1 ຂຄວ 16:23-33)

1 ຈົ່ງຮ້ອງເພງໃຫມ່ຖວາຍແດ່ພຣະຜູ້ເປັນເຈົ້າ ທົ່ວທັງໂລກ ຈົ່ງຮ້ອງເພງຖວາຍແດ່ພຣະອົງ
2 ຈົ່ງຮ້ອງເພງຖວາຍແດ່ພຣະຜູ້ເປັນເຈົ້າ ແລະສັຣເສີນພຣະນາມພຣະອົງທຸກໆມື້ໃດ ຈົ່ງປະກາດຂ່າວດີທີ່ພຣະອົງ ໄດ້ຊົງຊ່ອຍໃຫ້ເຮົາພົ້ນພັຍ
3 ຈົ່ງປະກາດພຣະຣັສມີຂອງພຣະອົງແກ່ຊົນຊາດຕ່າງໆ ແລະກິຈການອັນຍິ່ງໃຫຍ່ຂອງພຣະອົງແກ່ປະຊາຊົນທັງ ປວງ
4 ພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ ແລະຄວນທີ່ສັຣເສີນຢ່າງສູງສຸດ ພຣະອົງຊົງເປັນທີ່ຢຳເກງເຫນືອກວ່າພຣະອື່ນທັງ ປວງ
5 ສ່ວນພຣະຂອງຊົນຊາດອື່ນບໍ່ແມ່ນພຣະແທ້ ແຕ່ພຣະຜູ້ເປັນເຈົ້າຊົງເປັນຜູ້ສ້າງຟ້າສວັນ
6 ຣັສມີ ແລະຣິດທານຸພາບກໍອ້ອມຮອບພຣະອົງ ຄວາມຍິ່ງໃຫຍ່ແລະຄວາມສະງ່າງາມຢູ່ໃນພຣະວິຫານຂອງ ພຣະອົງ
7 ທຸກໆຄົນໃນໂລກນີ້ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ ຈົ່ງສັຣເສີນຣັສມີ ແລະຄວາມຍິ່ງໃຫຍ່ຂອງພຣະອົງ
8 ຈົ່ງສັຣເສີນພຣະນາມຂອງພຣະຜູ້ເປັນເຈົ້າ ແລະນຳເອົາເຄື່ອງຖວາຍບູຊາມາໃນພຣະວິຫານຂອງພຣະອົງ
9 ຈົ່ງນອບນ້ອມຖ່ອມຕົວລົງຕໍ່ພຣະພັກຜູ້ຊົງບໍຣິສຸດ ເມື່ອພຣະອົງຊົງມາປາກົດທົ່ວທັງແຜ່ນດິນໂລກນີ້ ຈົ່ງສະທ້ານ ຢ້ານກົວຕໍ່ພຣະພັກຂອງພຣະອົງ
10 ຈົ່ງກ່າວແກ່ຊົນຊາດທັງປວງວ່າ, "ພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າມະຫາຊີວິດ ແຜ່ນດິນໂລກຕັ້ງຫມັ້ນຄົງຢູ່ ຈະບໍ່ຍົກຍ້າຍໄປໃສ ພຣະອົງຈະຊົງຕັດສິນປະຊາຊາດທັງປວງດ້ວຍຄວາມຍຸດຕິທັມ"
11 ແຜ່ນດິນໂລກ ແລະເທິງທ້ອງຟ້າຈົ່ງຊົມຊື່ນຍິນດີ ນ້ຳທະເລ ແລະທຸກໆສິ່ງທີ່ມີຢູ່ໃນນັ້ນ ຈົ່ງຮ້ອງສຽງສນັ່ນຫວັ່ນ ໄຫວ
12 ທົ່ງນາທັງຫລາຍພ້ອມທຸກໆສິ່ງທີ່ມີຢູ່ໃນນັ້ນ ຈົ່ງຊົມຊື່ນຍິນດີ ຕົ້ນໄມ້ທີ່ຢູ່ໃນປ່າ ຈົ່ງມີສຽງມ່ວນຊື່ນຕໍ່ພຣະພັກ ພຣະຜູ້ເປັນເຈົ້າ
13 ເພາະວ່າພຣະອົງຊົງສະເດັດມາປົກຄອງໂລກນີ້ ພຣະອົງຈະປົກຄອງປະຊາຊາດທັງປວງໃນໂລກດ້ວຍຄວາມ ສັດຊື່ແລະຍຸດຕິທັມ

## 97 ເພງສັຣເສີນ ບົດທີເກົ້າສິບເຈັດ

### ອຳນາດປົກຄອງແລະຣິດທານຸພາບຂອງພຣະເຈົ້າ

The Glory of God’s Reign

1 ພຣະເຈົ້າຊົງຄອບຄອງ ຈົ່ງໃຫ້ແຜ່ນດິນໂລກຊົມຊື່ນຍິນດີ ໃຫ້ແຜ່ນດິນຊາຍທະເລມາກມາຍນັ້ນຍິນດີ
2 ເມກ ແລະຄວາມມືດຕຶບຢູ່ຮອບພຣະອົງ ຄວາມຊອບທັມເປັນຮາກຖານແຫ່ງບັນລັງຂອງພຣະອົງ
3 ໄຟລຸກຢູ່ຂ້າງຫນ້າພຣະອົງ ແລະໄຫມ້ປໍຣະປັກຂອງພຣະອົງຮອບຂ້າງເສັ້ງ
4 ຟ້າແລບຂອງພຣະອົງທຳໃຫ້ພິພົບສະວ່າງ ແຜ່ນດິນໂລກຫວັ່ນແລະສັ່ນສະທ້ານ
5 ພູລະລາຍເຫມືອນຂີ້ເຜີ້ງຕໍ່ພຣະພັກພຣະເຈົ້າ ຕໍ່ພຣະພັກອົງພຣະຜູ້ເປັນເຈົ້າແຫ່ງແຜ່ນດິນໂລກທັງສິ້ນ
6 ຟ້າສວັນປ່າວຮ້ອງຄວາມຊອບທັມຂອງພຣະອົງ ແລະຊົນຊາດທັງຫລາຍເປັນພຣະສະງ່າຣາສີຂອງພຣະອົງ
7 ໃຫ້ຜູ້ນະມັສການຮູບໂຄຣົບທັງສິ້ນໄດ້ອາຍ ຄືຜູ້ທີ່ອວດໃນພຣະປອມຂອງເຂົາ ໃຫ້ພຣະທັງສິ້ນກາບລົງຕໍ່ພຣະ ອົງ
8 ຊີໂອນໄດ້ຍິນ ແລະຍິນດີ ແລະທິດາທັງປວງຂອງຢູດາຊົມຊື່ນຍິນດີ ຂ້າແດ່ພຣະຜູ້ເປັນເຈົ້າ ເພາະຄັມພິພາກສາ ຂອງພຣະອົງ
9 ຂ້າແດ່ພຣະຜູ້ເປັນເຈົ້າ ເພາະພຣະອົງສູງສຸດເຫນືອແຜ່ນດິນໂລກທັງສິ້ນ ພຣະອົງຊົງສູງເດັ່ນກວ່າພຣະທັງປວງ

10 ທ່ານຜູ້ທີ່ຮັກພຣະເຈົ້າ ກໍກຽດຊັງຄວາມຊົ່ວ ພຣະອົງຊົງປົກປັກຮັກສາຊີວິດໄພ່ພົນຂອງພຣະອົງ ພຣະອົງຊົງ
ຊ່ອຍໃຫ້ເຂົາພົ້ນຈາກມືຂອງຄົນອະທັມ
11 ຄວາມສວ່າງແຈ້ງຂຶ້ນແກ່ຄົນຊອບທັມ ແລະຄວາມຊື່ນບານມີຂຶ້ນແກ່ຄົນໃຈທ່ຽງທັມ
12 ທ່ານຜູ້ຊອບທັມເອີຍ ຈົ່ງຊົມຊື່ນຍິນດີໃນພຣະເຈົ້າ ແລະຖວາຍໂມທະນາແດ່ພຣະນາມບໍຣິສຸດຂອງ
ພຣະອົງ

## 98 ເພງສັຣເສີນ ບົດທີເກົ້າສິບແປດ

### ສັຣເສີນຄວາມຊອບທັມຂອງພຣະເຈົ້າ

Praise the Judge of The World

ເພງສັຣເສີນ

A Psalm

1 ຈົ່ງຮ້ອງເພງບົດໃຫມ່ຖວາຍພຣະຜູ້ເປັນເຈົ້າ ເພາະພຣະອົງໄດ້ຊົງກະທຳການອັສຈັນ ພຣະຫັດຂວາແລະພຣະ
ກອນບໍຣິສຸດຂອງພຣະອົງໄດ້ນຳຄວາມມີຊັຍມາ
2 ພຣະເຈົ້າຊົງໃຫ້ຄວາມມີຊັຍຂອງພຣະອົງປະຈັກແຈ້ງ ພຣະອົງຊົງເຜີຍການຊ່ອຍກູ້ຂອງພຣະອົງໃນສາຍຕາ
ຂອງບັນດາປະຊາຊາດ
3 ພຣະອົງຊົງລະນຶກເຖິງຄວາມຮັກຫມັ້ນຄົງຂອງພຣະອົງ ແລະຄວາມສັດສຸຈຣິດຕໍ່ວົງວານອິສຣາເອນທີ່ສຸດປາຍ
ແຜ່ນດິນໂລກທັງສິ້ນໄດ້ເຫັນຊັຍຊະນະຂອງພຣະເຈົ້າຂອງເຮົາ
4 ຊາວໂລກທັງສິ້ນເອີຍ ຈົ່ງເປົ່ງສຽງຊື່ນບານຖວາຍແດ່ພຣະຜູ້ເປັນເຈົ້າ ເປົ່ງເປັນສຽງເພງຊື່ນບານແລະຮ້ອງເພງ
ສັຣເສີນ
5 ຈົ່ງຮ້ອງເພງສັຣເສີນຖວາຍພຣະຜູ້ເປັນເຈົ້າດ້ວຍພິນເຂົາຄູ່ ແລະດ້ວຍສຽງເພງ
6 ດ້ວຍສຽງແກແລະສຽງເປົ່າເຂົາສັດ ຈົ່ງກະທຳສຽງຊື່ນບານຖວາຍພຣະມະຫາກະສັດ ຄືພຣະຜູ້ເປັນເຈົ້າ
7 ໃຫ້ທະເລສນັ່ນຫວັ່ນໄຫວ ກັບສິ່ງທັງປວງທີ່ຢູ່ໃນທະເລນັ້ນ ພິພົບແລະບັນດາຜູ້ອາສັຍຢູ່ໃນນັ້ນ
8 ໃຫ້ກະແສນ້ຳຕົບມືຂອງມັນ ໃຫ້ບັນດາໂນນພູ ຮ້ອງເພງດ້ວຍຄວາມຊື່ນບານດ້ວຍກັນ
9 ສະເພາະເບື້ອງພຣະພັກພຣະຜູ້ເປັນເຈົ້າ ເພາະພຣະອົງສະເດັດມາພິພາກສາໂລກ ພຣະອົງຈະຊົງພິພາກສາ
ໂລກດ້ວຍຄວາມຍຸດຕິທັມ ແລະຊົນຊາດທັງຫລາຍດ້ວຍຄວາມທ່ຽງທັມ

## 99 ເພງສັຣເສີນ ບົດທີເກົ້າສິບເກົ້າ

### ຄວາມສັຕສຸດຈະຣິດຂອງພຣະເຈົ້າຕໍ່ອິສຣາເອນ

Praise to God for His Holiness

1 ພຣະຜູ້ເປັນເຈົ້າເປັນເຈົ້າຊີວິດ ແລະມະນຸດທັງຫລາຍກໍສະທ້ານຢ້ານກົວ ພຣະອົງປະທັບເຫນືອເຊຣູບິມ ໃຫ້
ແຜ່ນດິນໂລກຫວັ່ນໄຫວ
2 ພຣະເຈົ້າຍິ່ງໃຫຍ່ຢູ່ໃນຊີໂອນ ພຣະອົງສູງເດັ່ນຢູ່ເຫນືອປະຊາຊາດທັງປວງ
3 ໃຫ້ເຂົາສັຣເສີນພຣະນາມອັນຍິ່ງໃຫຍ່ ແລະຫນ້າຢ້ານຢຳຂອງພຣະອົງ ພຣະອົງສັກສິດ
4 ຂ້າແດ່ກະສັດຜູ້ຊົງມະຫິດທິຣິດ ຜູ້ຊົງຮັກຄວາມຍຸດຕິທັມ ພຣະອົງຊົງສະຖາປະນາຄວາມທ່ຽງທັມ ພຣະອົງຊົງ
ປະກອບຄວາມຍຸດຕິທັມ ແລະຄວາມຊອບທັມຂຶ້ນໃນຢາໂຄບ
5 ຈົ່ງຍໍພຣະກຽດພຣະຜູ້ເປັນເຈົ້າ ຄືພຣະເຈົ້າຂອງເຮົາ ນະມັສການທີ່ແທ່ນຮອງພຣະບາດຂອງພຣະອົງ ພຣະອົງ
ບໍຣິສຸດ

6 ໂມເຊ ແລະອາໂຣນຢູ່ໃນພວກປະໂຣຫິດຂອງພຣະອົງ ຊາມູເອນຢູ່ໃນພວກທີ່ທູນອອກພຣະນາມຂອງພຣະອົງ
ດ້ວຍ ທ່ານຮ້ອງທູນພຣະຜູ້ເປັນເຈົ້າ ແລະພຣະອົງຊົງຕອບທ່ານເຫລົ່ານັ້ນ
7 ພຣະອົງສັ່ງກັບທ່ານທີ່ໃນເສົາເມກ ທ່ານທັງປວງໄດ້ຮັກສາບັນດາພຣະໂອວາດຂອງພຣະອົງ ແລະກົດເກນທີ່ພ
ຣະອົງປະທານແກ່ທ່ານ
8 ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງທັງຫລາຍ ພຣະອົງຊົງຕອບທ່ານເຫລົ່ານັ້ນ ພຣະອົງຊົງເປັນພຣະເຈົ້າຜູ້
ຍົກໂທດທ່ານເຫລົ່ານັ້ນ ແຕ່ຊົງເປັນຜູ້ສນອງການກະທຳຜິດຂອງທ່ານເຫລົ່ານັ້ນ
9 ຈົ່ງຍໍພຣະກຽດພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຮົາ ແລະນະມັສການທີ່ພູສັກສິດຂອງພຣະອົງ ເພາະພຣະຜູ້ເປັນ
ເຈົ້າພຣະເຈົ້າຂອງເຮົາບໍຣິສຸດ

## 100 ເພງສັຣເສີນ ບົດທີນຶ່ງຮ້ອຍ

### ຄຳເຕືອນໃຫ້ໂມທະນາ

All Lands Summoned to Praise God

1 ທົ່ວທັງໂລກນີ້ ຈົ່ງຮ້ອງເພງມ່ວນຊື່ນຖວາຍແດ່ພຣະຜູ້ເປັນເຈົ້າ
2 ຈົ່ງນະມັສການພຣະອົງດ້ວຍຄວາມຊົມຊື່ນຍິນດີ ແລະເຂົ້າມາຮ້ອງເພງຢ່າງມ່ວນຊື່ນຕໍ່ພຣະພັກຂອງພຣະອົງ
3 ຈົ່ງຮູ້ໄວ້ເຖີດວ່າ ພຣະຜູ້ເປັນເຈົ້າແມ່ນພຣະເຈົ້າພຣະອົງຊົງສ້າງພວກເຮົາ ແລະພວກເຮົາເປັນຂອງພຣະອົງ
ພວກເຮົາເປັນໄພ່ພົນຂອງພຣະອົງ ແລະເປັນຝູງແກະຂອງພຣະອົງ
4 ຈົ່ງເຂົ້າໄປໃນພຣະວິຫານຂອງພຣະອົງເພື່ອກ່າວຂອບພຣະຄຸນ ຈົ່ງໄປໃນພຣະວິຫານອັນສັກສິດຂອງພຣະອົງ
ດ້ວຍການສັຣເສີນ ຈົ່ງຂອບພຣະຄຸນ ແລະສັຣເສີນພຣະອົງ
5 ພຣະຜູ້ເປັນເຈົ້າຊົງປະກອບດ້ວຍຄວາມດີ ຄວາມຮັກຂອງພຣະອົງມີຢູ່ຕລອດໄປ ແລະຄວາມສັດຊື່ສຸດຈະຣິດ
ຂອງພຣະອົງ ກໍມີຢູ່ຕລອດເວລາ

## 101 ເພງສັຣເສີນ ບົດທີນຶ່ງຮ້ອຍນຶ່ງ

### ຄຳປະຕິຍານທີ່ດຳຣົງຊີບຢ່າງຊອບທັມ

A Sovereign's Pledge of Integrity and Justice

1 ຂ້າພຣະອົງຈະຮ້ອງເພງເຣື່ອງຄວາມຈົ່ງຮັກພັກດີ ແລະຄວາມຍຸຕິທັມ ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຈະ
ຮ້ອງເພງຖວາຍພຣະອົງ
2 ຂ້າພຣະອົງຈະເອົາໃຈໃສ່ໃນທາງທີ່ດີຮອບຄອບ ເມື່ອໃດພຣະອົງຈະສະເດັດມາຫາຂ້າພຣະອົງ ຂ້າພຣະອົງຈະ
ດຳເນີນດ້ວຍໃຈສັດຊື່ພາຍໃນເຮືອນຂອງຂ້າພຣະອົງ
3 ຂ້າພຣະອົງຈະບໍ່ຕັ້ງສິ່ງໃດໆທີ່ຊົ່ວຊ້າໄວ້ຕໍ່ຫນ້າຕໍ່ຕາຂອງຂ້າພຣະອົງ ຂ້າພຣະອົງກຽດຊັງກິຈການຂອງຜູ້ທີ່ກະ
ບົດທັງຫລາຍ ກິຈການນັ້ນຈະບໍ່ຕິດຂ້າພຣະອົງ
4 ຂ້າພຣະອົງຈະຢູ່ຫ່າງໄກຈາກເຣື່ອງໃຈແຕກ ຂ້າພຣະອົງຈະບໍ່ເອົາເຣື່ອງເອົາຣາວກັບຄວາມຊົ່ວຮ້າຍເລີຍ
5 ບຸກຄົນທີ່ໃສ່ຮ້າຍເພື່ອນບ້ານລັບໆນັ້ນ ຂ້າພຣະອົງຈະທຳລາຍເສັຽ ຄົນທີ່ອວດອ້າງແລະໃຈທີ່ຈອງຫອງຂ້າ
ພຣະເອົງຈະບໍ່ຍອມໂຍະຍານດ້ວຍ
6 ຂ້າພຣະອົງຈະມອງຫາຄົນທີ່ສັດຊື່ໃນແຜ່ນດິນ ເພື່ອເຂົາຈະອາສັຍຢູ່ກັບຂ້າພຣະອົງ ຜູ້ໃດດຳເນີນໃນທາງທີ່ດີ
ຮອບຄອບ ຜູ້ນັ້ນຈະບົວລະບັດຂ້າພຣະອົງ
7 ຜູ້ທີ່ປະພຶດຫລອກລວງຈະບໍ່ໄດ້ອາສັຍຢູ່ໃນເຮືອນຂອງຂ້າພຣະອົງ ຄົນໃດທີ່ອ້າປາກເວົ້າຄວາມບໍ່ຈິງຈະບໍ່ຢັ້ງ
ຢືນຢູ່ຕໍ່ຫນ້າຂ້າພຣະອົງ

8 ທຸກໆເຊົ້າ ຂ້າພຣະອົງຈະທຳລາຍຄົນອະທັມທັງສິ້ນໃນແຜ່ນດິນ ຕັດຜູ້ທີ່ກະທຳຊົ່ວອອກເສັຽໃຫ້ຫມົດຈາກນະຄອນຂອງ ພຣະເຈົ້າ

## 102 ເພງສັຣເສີນ ບົດທີນຶ່ງຮ້ອຍສອງ

### ຄຳຮ່ຳຮ້ອງໃນຍາມທຸກໃຈ

Prayer to the Eternal King for Help

ຄຳອ້ອນວອນຂອງຜູ້ຖືກຂົ່ມໃຈ ເມື່ອເຂົາອ່ອນລະອາໃຈ ແລະລະບາຍຄວາມນັ້ນຕໍ່ພຣະເຈົ້າ

A Prayer of one Afflicted, when faint and Pleading before the Lord

1 ຂ້າແດ່ພຣະເຈົ້າ ຂໍຊົງຟັງຄຳອ້ອນວອນຂອງຂ້າພຣະອົງ ຂໍສຽງຮ້ອງຂອງຂ້າພຣະອົງມາເຖິງພຣະອົງ

2 ຂໍຢ່າຊົງເຊື່ອງພຣະພັກຂອງພຣະອົງຈາກຂ້າພຣະອົງ ໃນວັນທຸກໃຈຂອງຂ້າພຣະອົງ ຂໍຊົງງ່ຽງພຣະກັນຟັງຂ້າພຣະອົງ ຂໍຊົງຕອບຂ້າພຣະອົງໂດຍໄວ ເມື່ອຂ້າພຣະອົງຮ້ອງທູນຕໍ່ພຣະອົງ

3 ເພາະວັນຂອງຂ້າພຣະອົງສິ້ນໄປເໝືອນຄວັນ ແລະກະດູກຂອງຂ້າພຣະອົງໄຫມ້ເໝືອນເຕົາໄຟ

4 ຈິດໃຈຂອງຂ້າພຣະອົງຖືກຕີຈົນລົ້ມເຫມືອນຫຍ້າແລະຫ່ຽວໄປ ຂ້າພຣະອົງລືມກິນອາຫານຂອງຂ້າພຣະອົງ

5 ເຫດດ້ວຍສຽງຮ້ອງຄາງຂອງຂ້າພຣະອົງ ກະດູກຂອງຂ້າພຣະອົງເກາະຕິດເນື້ອຂອງຂ້າພຣະອົງ

6 ຂ້າພຣະອົງເປັນເຫມືອນນົກກະທຸງທີ່ຢູ່ໃນຖິ່ນກັນດານ ເຫມືອນນົກເຄົ້າແມວຢູ່ໃນທີ່ຮ້າງເປົ່າ

7 ຂ້າພຣະອົງນອນບໍ່ຫລັບ ຂ້າພຣະອົງເຫມືອນນົກໂດດດ່ຽວເທິງຫລັງຄາເຮືອນ

8 ສັດຕຣູຂອງຂ້າພຣະອົງຫຍໍ້ຫຍັນຂ້າພຣະອົງຕລອດວັນ ໂດຍໃຊ້ຊື່ຂ້າພຣະອົງເປັນຄຳປ້ອຍດ່າ

9 ເພາະຂ້າພຣະອົງກິນຂີ້ເຖົ່າຕ່າງອາຫານ ແລະເຈືອປົນນ້ຳຕາເຂົ້າກັບເຄື່ອງດື່ມ

10 ເຫດດ້ວຍຄວາມພິໂຣດແລະຄວາມກິ້ວຂອງພຣະອົງ ເພາະພຣະອົງຊົງຊູຂ້າພຣະອົງຂຶ້ນແລະໂຍນຂ້າພຣະອົງຖິ້ມໄປເສັຽ

11 ວັນເວລາຂອງຂ້າພຣະອົງເຫມືອນເງົາເວລາຄ່ຳ ຂ້າພຣະອົງຫ່ຽວໄປເຫມືອນຫຍ້າ

12 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງປະທັບເທິງບັນລັງເປັນນິດ ພຣະນາມຂອງພຣະອົງດຳຣົງຢູ່ທຸກຊົ່ວຊາດອາຍຸຄົນ

13 ພຣະອົງຊົງລຸກຂຶ້ນສົງສານຊີໂອນ ເພາະເຖິງເວລາທີ່ຈະຊົງພຣະກະຣຸນານາງ ເວລາກຳນົດມາເຖິງແລ້ວ

14 ເພາະຜູ້ຮັບໃຊ້ຂອງພຣະອົງຮັກຊາກກ້ອນຫີນຂອງນາງຫລາຍ ແມ່ນວ່າຖືກທຳລາຍມາແລ້ວກໍຍອມ

15 ບັນດາປະຊາຊາດຈະຢ້ານພຣະນາມຂອງພຣະຜູ້ເປັນເຈົ້າ ແລະບັນດາກະສັດຂອງແຜ່ນດິນໂລກຢ້ານພຣະສະງ່າຣາສີຂອງພຣະອົງ

16 ເພາະພຣະຜູ້ເປັນເຈົ້າຈະຊົງສ້າງຊີໂອນ ພຣະອົງຈະຊົງສ້າງປາກົດດ້ວຍພຣະສະງ່າຣາສີຂອງພຣະອົງ

17 ພຣະອົງຈະສົນພຣະທັຍໃນຄຳອ້ອນວອນຂອງຄົນສິ້ນເນື້ອປະດາຕົວ ແລະຈະບໍ່ຊົງດູຫມິ່ນຄຳອ້ອນວອນຂອງເຂົາ

18 ຂໍບັນທຶກເຣື່ອງນີ້ໄວ້ໃຫ້ເຊື້ອສາຍທີ່ຈະມີມາ ເພື່ອປະຊາຊົນທີ່ຍັງຈະຊົງສ້າງມານັ້ນຈະໄດ້ສັຣເສີນພຣະຜູ້ເປັນເຈົ້າ

19 ບັນທຶກວ່າ ພຣະອົງທອດພຣະເນດລົງມາຈາກທີ່ສູງອັນບໍຣິສຸດຂອງພຣະອົງ ຈາກຟ້າສວັນ ພຣະຜູ້ເປັນເຈົ້າທອດພຣະເນດແຜ່ນດິນໂລກ

20 ເພື່ອຊົງຟັງສຽງຮ້ອງຄາງຂອງຊະເລີຍ ເພື່ອຊົງປ່ອຍຄົນທີ່ຕ້ອງເຖິງຕາຍໃຫ້ເປັນອິສຣະ

21 ເພື່ອມະນຸດຈະປະກາດພຣະນາມຂອງພຣະຜູ້ເປັນເຈົ້າໃນຊີໂອນ ແລະກ່າວສັຣເສີນພຣະອົງໃນເຢຣູຊາເລັມ

22 ຂນະເມື່ອຊົນຊາດທັງຫລາຍຮວມກັນ ທັງບັນດາຣາຊອານາຈັກເພື່ອນະມັສການພຣະຜູ້ເປັນເຈົ້າ

23 ເມື່ອຍັງໜຸ່ມພຣະອົງຊົງຫັກກຳລັງຂອງຂ້າພະເຈົ້າ ພຣະອົງຊົງກະທຳໃຫ້ວັນເວລາຂອງຂ້າພະເຈົ້າສັ້ນເຂົ້າ
24 ຂ້າພະເຈົ້າເວົ້າວ່າ, "ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂໍຢ່າຊົງນຳຂ້າພຣະອົງໄປເສັຽໃນເຄິ່ງກາງວັນເວລາຂອງ
ຂ້າພຣະອົງ ພຣະອົງຜູ້ປີເດືອນດຳຣົງຢູ່ຕລອດທຸກຊົ່ວຊາດອາຍຸຄົນ"
25 ເມື່ອເດີມພຣະອົງຊົງວາງຮາກຖານຂອງແຜ່ນດິນໂລກ ແລະຟ້າສວັນເປັນສີພຣະຫັດຂອງພຣະອົງ
26 ສິ່ງເຫລົ່ານີ້ຈະພິນາດ ແຕ່ພຣະອົງຈະຊົງດຳຣົງຢູ່ ສິ່ງເຫລົ່ານີ້ຈະເກົ່າໄປເຫມືອນເຄື່ອງນຸ່ງຫົ່ມ ພຣະອົງຊົງປ່ຽນ
ສິ່ງເຫລົ່ານີ້ເຫມືອນເສື້ອຜ້າແລ້ວມັນກໍສູນຫາຍສລາຍໄປສິ້ນ
27 ແຕ່ພຣະອົງຍັງຄົງເໝືອນເດີມ ແລະປີເດືອນຂອງພຣະອົງບໍ່ສິ້ນສຸດ
28 ລູກຫລານຂອງບັນດາຜູ້ຮັບໃຊ້ຂອງພຣະອົງຈະຢູ່ຫມັ້ນຄົງ ແລະເຊື້ອສາຍຂອງເຂົາຈະໄດ້ຮັບການສະຖາປະນາ
ຕໍ່ເບື້ອງ ພຣະພັກພຣະອົງ

## 103 ເພງສັຣເສີນ ບົດທີນຶ່ງຮ້ອຍສາມ

### ຄວາມຮັກຂອງພຣະເຈົ້າ

Thanksgiving for God's Goodness

ຂອງດາວິດ

Of David

1 ຈິດວິນຍານຂອງຂ້າເອີຍ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ ຂ້າສັຣເສີນພຣະນາມອັນບໍຣິສຸດຂອງພຣະອົງດ້ວຍຫມົດ
ຈິດຫມົດໃຈ
2 ຈິດວິນຍານຂອງຂ້າເອີຍ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ ແລະຢ່າລືມຄຸນງາມຄວາມດີຂອງພຣະອົງ
3 ພຣະອົງຊົງໃຫ້ອະພັຍຄວາມບາບທັງສິ້ນຂອງຂ້າ ແລະປິ່ນປົວພຍາດໂຣຄາຕ່າງໆຂອງຂ້າໃຫ້ດີ
4 ພຣະອົງຊົງຊ່ອຍຂ້າໃຫ້ພົ້ນຈາກຕາຍ ແລະຊົງອວຍພອນຂ້າດ້ວຍຄວາມຮັກແລະຄວາມເມດຕາ
5 ພຣະອົງຊົງທຳໃຫ້ຊີວິດຂອງຂ້າເຕັມໄປດ້ວຍສິ່ງທີ່ດີ ດັ່ງນີ້ ຂ້າຈຶ່ງຫນຸ່ມແຫນ້ນແລະແຂງແຮງເຫມືອນດັ່ງນົກອິນ
ຊີ
6 ພຣະຜູ້ເປັນເຈົ້າຊົງແກ້ແຄ້ນແລະໃຫ້ຄວາມເປັນທັມແກ່ຜູ້ທີ່ຖືກຂົ່ມເຫັງ
7 ພຣະອົງຊົງບອກແຜນການຂອງພຣະອົງແກ່ໂມເຊ ແລະທຳໃຫ້ພວກອິສຣາເອນເຫັນກິຈການອັນຍິ່ງໃຫຍ່ຂອງ
ພຣະອົງ
8 ພຣະຜູ້ເປັນເຈົ້າຊົງເຕັມໄປດ້ວຍພຣະເມດຕາກະຣຸນາ ພຣະອົງຊົງເຕັມໄປດ້ວຍຄວາມຮັກອັນຫມັ້ນຄົງແລະບໍ່
ຊົງພິໂຣດງ່າຍ
9 ພຣະອົງບໍ່ຊົງຕິຕຽນແລະບໍ່ຊົງພິໂຣດຕລອດໄປ
10 ພຣະອົງບໍ່ໄດ້ຊົງລົງໂທດພວກເຮົາຕາມທີ່ພວກເຮົາສົມຄວນຈະໄດ້ຮັບ ຫລືບໍ່ໄດ້ຕອບແທນໃນຄວາມບາບແລະ
ການຜິດພາດຂອງພວກເຮົາ
11 ຟ້າສວັນສູງເຫນືອແຜ່ນດິນໂລກຫລາຍເທົ່າໃດ ຄວາມຮັກທີ່ພຣະອົງຊົງມີແກ່ຜູ້ທີ່ຢຳເກງພຣະອົງກໍສູງຫລາຍ
ເທົ່ານັ້ນ
12 ທິດຕາເວັນອອກໄກຈາກທິດຕາເວັນຕົກຫລາຍເທົ່າໃດ ພຣະອົງກໍຊົງຍົກຄວາມບາບຂອງພວກເຮົາອອກໄປໄກ
ຫລາຍເທົ່ານັ້ນ
13 ພໍ່ເມດຕາກະຣຸນາຕໍ່ລູກຫລາຍເທົ່າໃດ ພຣະຜູ້ເປັນເຈົ້າກໍຊົງເມດຕາກະຣຸນາຕໍ່ຜູ້ທີ່ຢຳເກງພຣະອົງຫລາຍເທົ່າ
ນັ້ນ
14 ພຣະອົງຊົງຮູ້ດີວ່າພວກເຮົາຖືກສ້າງມາຢ່າງໃດ ແລະຊົງຈື່ຈຳສເມີວ່າພວກເຮົາເປັນຂີ້ຝຸ່ນດິນ

15 ສ່ວນມະນຸດນັ້ນ ຊີວິດຂອງເຂົາປຽບເຫມືອນຕົ້ນຫຍ້າ ເຂົາຈະເຣີນເຕີບໂຕຂຶ້ນເຫມືອນດັ່ງດອກໄມ້ປ່າ
16 ເມື່ອລົມພັດມັນກໍລົ້ມທັກເສັ່ງໄປ ແລະບໍ່ມີຜູ້ໃດເຫັນມັນອີກ
17 ແຕ່ວ່າຄວາມຮັກພຣະຜູ້ເປັນເຈົ້າ ຊົງມີແກ່ຜູ້ທີ່ຖວາຍກຽດແດ່ພຣະອົງຕລອດໄປ ແລະຄວາມຊອບທັມຂອງພ
ຣະອົງຊົງຫມັ້ນຄົງຢູ່ທຸກຊົ່ວອາຍຸຄົນ
18 ແລະແກ່ຜູ້ທີ່ປະຕິບັດຕາມຂໍ້ຄໍາສັນຍາຂອງພຣະອົງ ຄືຜູ້ທີ່ເຊື່ອຟັງຢ່າງຈິງໃຈໃນຂໍ້ຄໍາສັ່ງຂອງພຣະອົງ
19 ພຣະຜູ້ເປັນເຈົ້າຊົງຕັ້ງພຣະທີ່ນັ່ງໄວ້ໃນຟ້າສວັນພຣະອົງຊົງເປັນພຣະເຈົ້າມະຫາຊີວິດປົກຄອງທຸກສິ່ງ
20 ພວກເທວະດາອົງຍິ່ງໃຫຍ່ ອົງທີ່ປະຕິບັດຕາມຄໍາສັ່ງຂອງພຣະເຈົ້າ ແລະຟັງສິ່ງທີ່ພຣະອົງຊົງກ່າວ ຈົ່ງສັຣເສີນພ
ຣະຜູ້ເປັນເຈົ້າເທີນ
21 ຜູ້ທີ່ມີອໍານາດຢູ່ເທິງຟ້າສວັນທັງຫມົດ ຊຶ່ງເປັນຜູ້ຮັບໃຊ້ທີ່ກະທໍາຕາມພຣະປະສົງຂອງພຣະອົງ ຈົ່ງສັຣເສີນພຣະ
ຜູ້ເປັນເຈົ້າ
22 ທຸກໆສິ່ງທີ່ພຣະອົງຊົງສ້າງມາ ທຸກໆບ່ອນທີ່ພຣະອົງຊົງປົກຄອງ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ ຈິດວິນຍານຂອງ
ຂ້າເອີຍ ຈົ່ງສັຣເສີນພຣະອົງ

## 104 ເພງສັຣເສີນ ບົດທີນຶ່ງຮ້ອຍສີ່

### ການສັຣເສີນພຣະຜູ້ຊົງສ້າງ

God the Creator and Provider

(ປຖກ 1:1-31)

1 ຈິດວິນຍານຂອງຂ້າເອີຍ ຈົ່ງສັຣເສີນພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຂ້າພຣະອົງ ພຣະອົງຊົງ
ເປັນພຣະເຈົ້າອົງຍິ່ງໃຫຍ່ແທ້ ພຣະອົງຊົງປະກອບດ້ວຍອໍານາດ ແລະຣັສມີ
2 ພຣະກາຍຂອງພຣະອົງຊົງຫຸ້ມຫໍ່ດ້ວຍແສງສວ່າງ ພຣະອົງຊົງກາງຟ້າສວັນອອກເຫມືອນກາງຜ້າເຕັນ
3 ແລະຊົງສ້າງບ່ອນຢູ່ຂອງພຣະອົງເທິງແມ່ນໍ້າທັງຫລາຍ ພຣະອົງຊົງໃຊ້ກ້ອນເມກເປັນຣາຊຣົດຂອງພຣະອົງ
ແລະຊົງສະເດັດມາກັບລົມ
4 ພຣະອົງຊົງໃຊ້ລົມເປັນຜູ້ສົ່ງຂ່າວ ແລະໃຊ້ແສງຟ້າແມບເປັນຜູ້ຮັບໃຊ້ຂອງພຣະອົງ
5 ພຣະອົງຊົງແຕ່ງຕັ້ງແຜ່ນດິນໂລກໄວ້ເທິງຮາກຖານຂອງມັນຢ່າງຫມັ້ນຄົງ ແລະມັນຈະບໍ່ເຄື່ອນໄຫວໄປມາຈັກ
ເທື່ອ
6 ພຣະອົງຊົງໃຫ້ມະຫາສມຸດຫຸ້ມຫໍ່ມັນເຫມືອນດັ່ງເສື້ອຜ້າຫຸ້ມຫໍ່ຮ່າງກາຍ ແລະໃຫ້ນໍ້າຢູ່ເທິງພູທັງຫລາຍ
7 ແຕ່ວ່າເມື່ອພຣະອົງຊົງສັ່ງນໍ້ານັ້ນກໍຫນີໄປ ເວລາມັນໄດ້ຍິນສຽງຮ້ອງສັ່ງຂອງພຣະອົງມັນໄດ້ໄຫລຫນີໄປ
8 ມັນໄດ້ໄຫລຜ່ານພູທັງຫລາຍລົງໄປຕາມຮ່ອມພູສູ່ບ່ອນທີ່ພຣະອົງສ້າງໄວ້ສໍາລັບມັນ
9 ພຣະອົງຕັ້ງເຂດແດນໄວ້ ນໍ້ານັ້ນກໍບໍ່ສາມາດໄຫລຜ່ານເຂົ້າມາໄດ້ ເພື່ອບໍ່ໃຫ້ນໍ້ານັ້ນໄຫລຖ້ວມແຜ່ນດິນໂລກນີ້
ອີກ
10 ພຣະອົງຊົງສ້າງນໍ້າອອກບໍ່ໃຫ້ໄຫລໄປຕາມຮ່ອມພູ ແລະນໍ້າກໍໄຫລໄປ
11 ຊຶ່ງຕຽມໄວ້ໃຫ້ສັດປ່າກິນ ແລະບໍ່ໃຫ້ລໍປ່າຫິວນໍ້າ
12 ທີ່ຕົ້ນໄມ້ໃກ້ໆແຄມນໍ້ານັ້ນ ນົກໄດ້ເຮັດຮັງໃສ່ ແລະຮ້ອງຢ່າງມ່ວນຊື່ນ
13 ພຣະອົງຊົງໃຫ້ຝົນຈາກຟ້າສວັນຕົກລົງໃສ່ພູທັງຫລາຍ ຜົນການກະທໍາຂອງພຣະອົງກໍເຕັມທົ່ວໂລກນີ້
14 ພຣະອົງຊົງໃຫ້ຫຍ້າເກີດຂຶ້ນສໍາລັບຝູງສັດ ແລະພືດຜົນຕ່າງໆໃຫ້ມະນຸດປູກຝັງເພື່ອເຂົາຈະມີຜົລປູກ
15 ຄືເຫລົ້າອະງຸ່ນທີ່ເຮັດໃຫ້ເຂົາມີຄວາມສຸກ ນໍ້າມັນຫອມຈາກຫມາກກອກທີ່ໃຊ້ທາໃຫ້ຫນ້າຊື່ນຕາບານ ແລະເຂົ້າ
ຈີ່ທີ່ໃຫ້ເຂົາມີເຫື່ອແຮງຂຶ້ນ

16 ສ່ວນຕົ້ນສົນທີ່ເລບານອນ ຊຶ່ງເປັນຕົ້ນໄມ້ຂອງພຣະຜູ້ເປັນເຈົ້າຊົງປູກໄວ້ກໍໄດ້ຮັບນໍ້າຝົນອັນອຸດົມສົມບູນ
17 ໃນທີ່ນັ້ນຝູງນົກໄດ້ກໍ່ຮັງຂອງມັນ ເປັນຮັງນົກຍາງທີ່ຢູ່ເທິງຕົ້ນສົນ
18 ສ່ວນເຍືອງກໍຢູ່ເທິງພູສູງສຸດ ແລະຝູງກະຕ່າຍກໍລີ້ຢູ່ຫນ້າຜານັ້ນ
19 ພຣະອົງຊົງສ້າງດວງເດືອນ ເພື່ອຫມາຍເດືອນແລະປີ ແລະສ້າງຕາເວັນເພື່ອໃຫ້ຮູ້ເວລາຕົກຂອງມັນ
20 ພຣະອົງຊົງສ້າງກາງຄືນ ແລະໃນຕອນກາງຄືນ ສັດປ່າໄດ້ອອກມາ
21 ຝ່າຍສິງຫນຸ່ມກໍຮ້ອງຄາງເວລາອອກຊອກຫາກິນ ແລະຊອກຫາອາຫານທີ່ພຣະເຈົ້າຊົງປະທານໃຫ້ແກ່ມັນ
22 ເມື່ອຕາເວັນຂຶ້ນພວກມັນກັບຄືນໄປ ແລະນອນຫມອບຢູ່ໃນຖໍ້າຂອງມັນ
23 ສ່ວນມະນຸດກໍອອກໄປເຮັດວຽກຂອງຕົນ ແລະເຮັດວຽກຈົນເຖິງຄໍ່າ
24 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງສ້າງຫລາຍສິ່ງ ພຣະອົງຊົງສ້າງສິ່ງເຫລົ່ານີ້ຢ່າງສລາດຮອບຄອບ ແຜ່ນດິນ
ໂລກນີ້ເຕັມໄປດ້ວຍສິ່ງທີ່ພຣະອົງຊົງສ້າງມາ
25 ມີມະຫາສະຫມຸດກວ້າງໃຫຍ່ ຊຶ່ງໃນບ່ອນນີ້ມີທັງສັດໃຫຍ່ແລະນ້ອຍທີ່ພຣະອົງຊົງສ້າງອາສັຍຢູ່ນັບບໍ່ຖ້ວນ
26 ເຮືອກໍແລ່ນໄປມາ ແລະເງືອກຊຶ່ງເປັນສັດໃຫຍ່ທີ່ພຣະອົງຊົງສ້າງໄວ້ກໍຫລິ້ນຢູ່ທີ່ນັ້ນ
27 ສັດເຫລົ່ານັ້ນອາສັຍພຣະອົງ ພວກມັນຄອງຖ້າອາຫານຈາກພຣະອົງໃນຍາມຕ້ອງການ
28 ເມື່ອພຣະອົງຊົງປະທານອາຫານໃຫ້ກິນ ພວກມັນກໍກິນຢ່າງເພິ່ງພໍໃຈ
29 ເວລາພຣະອົງບໍ່ສົນໃຈພວກມັນ ພວກມັນກໍຢ້ານກົວ ເມື່ອພຣະອົງຖອດເອົາລົມຫາຍໃຈຄືນໄປ ພວກມັນຕ້ອງ
ຕາຍ ແລະກັບຄືນໄປໃນດິນບ່ອນເກົ່າທີ່ມັນມາແຕ່ກ່ອນ
30 ແຕ່ເມື່ອພຣະອົງຊົງປະທານລົມຫາຍໃຈແກ່ພວກມັນ ພວກມັນກໍມີຊີວິດຢູ່ ພຣະອົງຊົງປະທານຊີວິດໃຫມ່ແກ່
ແຜ່ນດິນໂລກ
31 ຂໍໃຫ້ພຣະຣັສມີຂອງພຣະຜູ້ເປັນເຈົ້າຊົງມີຢູ່ຕລອດໄປ ຂໍໃຫ້ພຣະອົງຊົງມີຄວາມສຸກກັບສິ່ງທີ່ພຣະອົງຊົງສ້າງ
ມາ
32 ເມື່ອພຣະອົງຊົງທອດພຣະເນດເທິງແຜ່ນດິນໂລກ ມັນກໍສັ່ນສະເທືອນໄປ ເມື່ອພຣະອົງຊົງແຕະຕ້ອງພູທັງ
ຫລາຍຄວັນໄຟໄດ້ຫລັ່ງໄຫລອອກມາຈາກພູນັ້ນ
33 ຂ້າພຣະອົງຈະຮ້ອງເພງຖວາຍແດ່ພຣະຜູ້ເປັນເຈົ້າ ຕລອດຊົ່ວຊີວິດຂອງຂ້າພຣະອົງ ຂ້າພຣະອົງຈະຮ້ອງເພງ
ສັຣເສີນແດ່ ພຣະຜູ້ເປັນເຈົ້າຂອງຂ້າພຣະອົງຕລອດຊົ່ວຊີວິດ
34 ຂໍໃຫ້ພຣະອົງຊົງພໍພຣະທັຍໃນບົດເພງຂອງຂ້າພຣະອົງ ຍ້ອນພຣະອົງ ຂ້າພຣະອົງກໍຊົມຊື່ນຍິນດີ
35 ຂໍໃຫ້ຄົນເຮັດຜິດຖືກທໍາລາຍຫມົດຈາກແຜ່ນດິນນີ້ ຂໍຢ່າໃຫ້ມີຄົນຊົ່ວຊ້າອີກຕໍ່ໄປ ຈິດວິນຍານຂອງຂ້າພຣະອົງ
ເອີຍ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ

## 105 ເພງສັຣເສີນ ບົດທີນຶ່ງຮ້ອຍຫ້າ

**ການອັສຈັນຂອງພຣະເຈົ້າເພື່ອອິສຣາເອນ**

God's Faithfulness to Israel

(ອພຍ 7:8-11.10; 1 ຂຄວ 16:8-22)

1 ຈົ່ງໂມທະນາຂອບພຣະຄຸນພຣະເຈົ້າ ຈົ່ງຮ້ອງທູນອອກພຣະນາມພຣະອົງ ຈົ່ງໃຫ້ບັນດາພຣະຣາຊກິຈຂອງພຣະ
ອົງແຈ້ງແກ່ຊົນຊາດທັງຫລາຍ
2 ຈົ່ງຮ້ອງເພງຖວາຍພຣະອົງ ຮ້ອງເພງສັຣເສີນຖວາຍພຣະອົງ ຈົ່ງເລົ່າເຖິງການອັສຈັນທັງສິ້ນຂອງພຣະອົງ
3 ຈົ່ງອວດພຣະນາມບໍຣິສຸດຂອງພຣະອົງ ໃຫ້ຈິດໃຈຂອງບັນດາຜູ້ສແວງຫາພຣະຜູ້ເປັນເຈົ້າຊົມຊື່ນຍິນດີ
4 ຈົ່ງສແວງຫາພຣະຜູ້ເປັນເຈົ້າ ແລະພຣະກໍາລັງຂອງພຣະອົງ ສແວງພຣະພັກຂອງພຣະອົງເລື້ອຍໄປ

5 ຈົ່ງຣະລຶກເຖິງການອັສຈັນຊຶ່ງພຣະອົງຊົງກະທຳ ການມະຫັສຈັນແລະຄຳພິພາກສາແຫ່ງພຣະໂອດຂອງພຣະອົງ

6 ເຊື້ອສາຍຂອງອັບຣາຮາມ ຜູ້ຮັບໃຊ້ຂອງພຣະອົງ ເຊື້ອສາຍຂອງຢາໂຄບຜູ້ຊົງເລືອກຂອງພຣະອົງ

7 ພຣະອົງຄືພຣະຜູ້ເປັນເຈົ້າຂອງເຮົາ ຄຳພິພາກສາຂອງພຣະອົງຢູ່ທົ່ວໄປໃນແຜ່ນດິນໂລກ

8 ພຣະອົງຊົງຈົດຈຳຄຳສັນຍາຂອງພຣະອົງຢູ່ເປັນນິດ ຄືພຣະຄຳທີ່ພຣະອົງຊົງບັນຊາໄວ້ຕລອດຊົ່ວນຶ່ງພັນຊົ່ວອາຍຸຄົນ

9 ຄືຄຳສັນຍາຊຶ່ງພຣະອົງຊົງກະທຳໄວ້ກັບອັບຣາຮາມ ພຣະສັນຍາຊຶ່ງຊົງປະຕິຍານໄວ້ກັບອີຊາກ

10 ຊຶ່ງພຣະອົງຊົງຢືນຢັນອີກກັບຢາໂຄບໃຫ້ເປັນກົດເກນແກ່ອິສຣາເອນ ໃຫ້ເປັນຄຳສັນຍານິຣັນ

11 ວ່າ, "ເຮົາຈະໃຫ້ແຜ່ນດິນການາອານແກ່ເຈົ້າ" ເປັນສ່ວນມໍຣະດົກຂອງເຈົ້າທັງຫລາຍ

12 ເມື່ອເຂົາຍັງມີຄົນຈຳນວນຫນ້ອຍ ຈຳນວນຫນ້ອຍຈິງ ຍັງເປັນແຕ່ຄົນອາສັຍຢູ່ໃນນັ້ນ

13 ພະເນຈອນຈາກປະຊາຊາດນີ້ເຖິງປະຊາຊາດນັ້ນ ຈາກຣາຊອານາຈັກນີ້ເຖິງອີກຊົນຊາດນຶ່ງ

14 ພຣະອົງບໍ່ໄດ້ຊົງຍອມໃຫ້ຜູ້ໃດບີບບັງຄັບເຂົາ ພຣະອົງຊົງຂນາບກະສັດຫລາຍອົງດ້ວຍເຫັນແກ່ເຂົາ

15 ວ່າ, "ຢ່າແຕະຕ້ອງບັນດາຜູ້ທີ່ເຮົາເຈີມໄວ້ ຢ່າທຳອັນຕະຣາຍແກ່ຜູ້ປະກາດພຣະຄຳທັງຫລາຍຂອງເຮົາ"

16 ເມື່ອພຣະອົງຊົງເອີ້ນການອຶດຢາກອາຫານ ໃຫ້ເກີດຂຶ້ນທີ່ແຜ່ນດິນ ແລະຊົງທຳລາຍອາຫານທີ່ບຳຣຸງຊີວິດເສັຽສິ້ນ

17 ພຣະອົງຊົງໃຊ້ຊາຍຄົນນຶ່ງໄປຂ້າງຫນ້າເຂົາ ໂຢເຊັບຖືກຂາຍໄປເປັນທາດ

18 ຕີນຂອງເຂົາເຈັບຊ້ຳດ້ວຍໂສ້ຕວນ ຄໍຂອງເຂົາເຂົ້າຢູ່ໃນປອກເຫລັກ

19 ຈົນກວ່າສິ່ງທີ່ເຂົາບອກໄດ້ບັງເກີດຂຶ້ນຈິງ ພຣະຄຳຂອງພຣະຜູ້ເປັນເຈົ້າທົດສອບເຂົາ

20 ພຣະຣາຊາກໍຊົງໃຊ້ໃຫ້ໄປປ່ອຍຕົວເຂົາ ຜູ້ປົກຄອງຂອງຊົນຊາດທັງຫລາຍໄດ້ປ່ອຍເຂົາເປັນອິສຣະ

21 ພຣະຣາຊາຊົງຕັ້ງເຂົາໃຫ້ເປັນເຈົ້ານາຍເຫນືອວັງຂອງພຣະອົງ ເປັນຜູ້ປົກຄອງກຳມະສິດຂອງພຣະອົງ

22 ໃຫ້ສອນເຈົ້ານາຍຂອງພຣະອົງຕາມໃຈ ແລະສອນສະຕິປັນຍາແກ່ຜູ້ອະວຸໂສຂອງພຣະອົງ

23 ແລ້ວອິສຣາເອນໄດ້ມາທີ່ເອຢິບ ຢາໂຄບໄດ້ອາສັຍຢູ່ໃນແຜ່ນດິນຂອງຮາມ

24 ແລະພຣະຜູ້ເປັນເຈົ້າຊົງກະທຳໃຫ້ໄພ່ພົນຂອງພຣະອົງມີລູກຫລາຍ ແລະຊົງກະທຳໃຫ້ເຂົາແຂງແຮງກວ່າສັດຕຣູຂອງເຂົາ

25 ພຣະອົງຫັນໃຈເຂົາເຫລົ່ານັ້ນໃຫ້ກຽດໄພ່ພົນຂອງພຣະອົງ ໃຫ້ໃຊ້ກົນອຸບາຍແກ່ຜູ້ຮັບໃຊ້ຂອງພຣະອົງ

26 ພຣະອົງຊົງໃຊ້ໂມເຊຜູ້ຮັບໃຊ້ຂອງພຣະອົງ ແລະອາໂຣນຜູ້ທີ່ພຣະອົງຊົງເລືອກໄວ້

27 ເຂົາທັງສອງກະທຳຫມາຍສຳຄັນຖ້າມກາງເຂົາທັງຫລາຍ ທຳການອັສຈັນໃນແຜ່ນດິນຂອງຮາມ

28 ພຣະອົງຊົງໃຊ້ຄວາມມືດມາ ກະທຳໃຫ້ແຜ່ນດິນມືດ ເຂົາທັງຫລາຍບໍ່ໄດ້ກະບົດຕໍ່ພຣະຄຳຂອງພຣະອົງ

29 ພຣະອົງຊົງກະທຳໃຫ້ນ້ຳກາຍເປັນເລືອດ ແລະໃຫ້ປາຂອງເຂົາຕາຍ

30 ກົບແຫ່ກັນມາທີ່ແຜ່ນດິນຂອງເຂົາ ແມ້ແຕ່ຫ້ອງໃນຂອງພຣະຣາຊາຂອງເຂົາກໍມີ

31 ພຣະອົງຕັສ ແລະຝູງເຫລືອກກໍມາ ແລະຮີ້ນມີໄປທົ່ວໃນແຜ່ນດິນຂອງເຂົາ

32 ພຣະອົງປະທານໝາກເຫັບແກ່ເຂົາແທນຝົນ ແລະຟ້າຜ່າທົ່ວແຜ່ນດິນຂອງເຂົາ

33 ພຣະອົງຊົງທຳລາຍເຄືອອະງຸ່ນ ແລະຕົ້ນຫມາກເດື່ອຂອງເຂົາ ແລະຊົງຟາດຕົ້ນໄມ້ໃນປະເທດຂອງເຂົາໃຫ້ຫັກ

34 ພຣະອົງຕັສ ແລະຕັກແຕນວັຍບິນກໍມາ ແລະຕັກແຕນວັຍກະໂດດມານັບບໍ່ຖ້ວນ

35 ມາກິນພືດໃນແຜ່ນດິນຂອງເຂົາຫມົດ ແລະກິນຜົນແຫ່ງດິນຂອງເຂົາສິ້ນ

36 ພຣະອົງຊົງສັງຫານລູກຫົວປີໃນແຜ່ນດິນຂອງເຂົາ ຄືຜົນແຣກແຫ່ງກຳລັງຂອງເຂົາ

37 ແລ້ວພຣະອົງຊົງນຳອິສຣາເອນອອກໄປ ພ້ອມກັບເງິນແລະທອງຄຳ ແລະບໍ່ມີຈັກຄົນນຶ່ງໃນເຜົ່າຂອງພຣະອົງ
ສະດຸດ
38 ເມື່ອເຂົາພາກຈາກໄປ ເອຢິບກໍຍິນດີ ເພາະຄວາມຢ້ານຕໍ່ອິສຣາເອນໄດ້ຕົກຢູ່ເທິງເຂົາ
39 ພຣະອົງຊົງກາງເມກເປັນເຄື່ອງກຳບັງ ແລະໄຟໃຫ້ຄວາມສະວ່າງເວລາກາງຄືນ
40 ເຂົາທັງຫລາຍຮ້ອງຂໍ ແລະພຣະອົງຊົງນຳນົກຂຸ້ມມາ ແລະປະທານອາຫານຈາກຟ້າໃຫ້ເຂົາຢ່າງອຸດົມ
41 ພຣະອົງຊົງເປີດຫີນ ແລະນ້ຳກໍໄຫລອອກມາ ມັນໄຫລໄປເປັນແມ່ນ້ຳໃນທີ່ແຫ້ງແລ້ງ
42 ເພາະພຣະອົງຊົງຣະລຶກເຖິງສັນຍາບໍຣິສຸດຂອງພຣະອົງ ແລະອັບຣາຮາມຜູ້ຮັບໃຊ້ຂອງພຣະອົງ
43 ພຣະອົງຈຶ່ງຊົງນຳໄພ່ພົນຂອງພຣະອົງອອກມາດ້ວຍຊື່ນບານ ຊົງນຳຜູ້ທີ່ຊົງເລືອກໄວ້ນັ້ນດ້ວຍການຮ້ອງເພງ
44 ແລະພຣະອົງປະທານແຜ່ນດິນຂອງບັນດາປະຊາຊາດໃຫ້ເຂົາ ແລະເຂົາໄດ້ຜົນງານຂອງຊາດທັງຫລາຍເປັນ
ກຳມະສິດ
45 ເພື່ອເຂົາຈະຮັກສາກົດເກນຂອງພຣະອົງ ແລະຖືປະຕິບັດພຣະທັມຂອງພຣະອົງ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ
ເທີນ

## 106 ເພງສັຣເສີນ ບົດທີນຶ່ງຮ້ອຍຫົກ

### ອິສຣາເອນນັ້ນມັກກະບົດ

A Confession of Israel's Sins

1 ຈົ່ງສັຣເສີນພຣະເຈົ້າເຖີດ ຈົ່ງໂມທະນາຂອບພຣະຄຸນພຣະຜູ້ເປັນເຈົ້າ ເພາະພຣະອົງປະເສີດ ເພາະຄວາມຮັກ
ຫມັ້ນຄົງຂອງພຣະອົງດຳຣົງເປັນນິດ
2 ຜູ້ໃດຈະພັລະນາເຖິງພຣະຣາຊກິດອັນຊົງມະຫິດທິຣິດຂອງພຣະຜູ້ເປັນເຈົ້າ ຫລືສະແດງເຖິງພຣະກຽດຂອງພ
ຣະອົງຢ່າງຄົບຖ້ວນໄດ້
3 ບັນດາຜູ້ທີ່ປະພຶດຄວາມຍຸດຕິທັມກໍເປັນສຸກ ຄືຜູ້ທີ່ກະທຳຄວາມຊອບທັມຕລອດເວລາ
4 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລະນຶກເຖິງຂ້າພຣະອົງເມື່ອພຣະອົງຊົງໂປດປານໄພ່ພົນຂອງພຣະອົງ ເມື່ອພຣະ
ອົງຊົງຊ່ອຍກູ້ເຂົາ ຂໍຊົງຊ່ອຍຂ້າພຣະອົງດ້ວຍ
5 ເພື່ອຂ້າພຣະອົງຈະເຫັນຄວາມຈະເຣີນຮຸ່ງເຮືອງຂອງບັນດາຜູ້ເລືອກສັນຂອງພຣະອົງ ເພື່ອຂ້າພຣະອົງຈະຊົມ
ຊື່ນໃນຄວາມຍິນດີແຫ່ງປະຊາຊາດຂອງພຣະອົງ ເພື່ອຂ້າພຣະອົງຈະອວດໄດ້ຮ່ວມກັບມໍຣະດົກຂອງພຣະອົງ
6 ຂ້າພຣະອົງທັງຫລາຍແລະບັນພະບຸຣຸດຂອງຂ້າພຣະອົງໄດ້ກະທຳບາບແລ້ວ ຂ້າພຣະອົງທັງຫລາຍໄດ້ກະທຳ
ຄວາມຜິດບາບ ຂ້າພຣະອົງທັງຫລາຍໄດ້ກະທຳຢ່າງອະທັມ
7 ບັນພະບຸຣຸດຂອງຂ້າພຣະອົງທັງຫລາຍເມື່ອທ່ານຢູ່ໃນເອຢິບ ທ່ານບໍ່ໄດ້ສົນໃຈໃນການອັສຈັນຂອງພຣະອົງ
ທ່ານບໍ່ໄດ້ລະນຶກເຖິງຄວາມຫມັ້ນຄົງອັນອຸດົມຂອງພຣະອົງ ແຕ່ໄດ້ກະບົດທີ່ທະເລ ທີ່ທະເລແດງ
8 ເຖິງປານນັ້ນພຣະອົງຍັງຊົງຊ່ອຍທ່ານ ເພາະເຫັນແກ່ພຣະນາມຂອງພຣະອົງ ເພື່ອພຣະອົງຈະໃຫ້ຊາບເຖິງຣິດ
ທານຸພາບຂອງພຣະອົງ
9 ພຣະອົງຊົງຂນາບທະເລແດງ ມັນກໍແຫ້ງໄປ ແລະພຣະອົງຊົງນຳທ່ານຂ້າມທີ່ເລິກຢ່າງກັບຍ່າງຂ້າມຖິ່ນກັນ
ດານ
10 ພຣະອົງຈຶ່ງຊົງຊ່ອຍທ່ານໃຫ້ພົ້ນມືຂອງຜູ້ທີ່ກຽດຊັງທ່ານ ແລະຊ່ອຍກູ້ທ່ານໃຫ້ພົ້ນຈາກເງື້ອມມືຂອງສັດຕຣູ
11 ແລະນ້ຳຖ້ວມສັດຕຣູຂອງທ່ານ ເຂົາບໍ່ເຫລືອຈັກຄົນດຽວ
12 ແລ້ວທ່ານເຊື່ອພຣະວັຈນະຂອງພຣະອົງ ທ່ານຮ້ອງເພງຍໍພຣະກຽດພຣະອົງ
13 ແຕ່ບໍ່ຊ້າທ່ານກໍລືມພຣະຣາຊກິດຂອງພຣະອົງເສັຽ ທ່ານບໍ່ຄອຍພຣະດຳຣັດປຶກສາຂອງພຣະອົງ

14 ແຕ່ໃນຖິ່ນກັນດານນັ້ນທ່ານມີຄວາມຢາກຢ່າງຮຸນແຮງ ແລະໄດ້ທົດລອງພຣະເຈົ້າໃນທີ່ແຫ້ງແລ້ງ
15 ພຣະອົງຊົງປະທານສິ່ງທີ່ທ່ານຂໍ ແຕ່ຊົງໃຊ້ໂຣກຜອມແຫ້ງມາຖ້າມກາງທ່ານ
16 ເມື່ອຄົນໃນຄ້າຍຣິສຍາໂມເຊ ແລະອາໂຣນ ຄົນບໍຣິສຸດຂອງພຣະຜູ້ເປັນເຈົ້າ
17 ພື້ນແຜ່ນດິນອ້າປາກກືນດາທານ ແລະທັບຄະນະອາບີດານເສັຽ
18 ໄຟລະເບີດໃນຄະນະຂອງທ່ານ ແລະແປວໄຟຜານຄົນອະທັມເສັຽ
19 ທ່ານໄດ້ສ້າງລູກງົວໃນໂຮເຣັບ ແລະນະມັສການຮູບໂຄຣົບຫລໍ່
20 ທ່ານເອົາພຣະສະງ່າຣາສີຂອງພຣະເຈົ້າແລກກັບຮູບຂອງງົວທີ່ກິນຫຍ້າ
21 ທ່ານລືມພຣະເຈົ້າ ພຣະຜູ້ຊ່ອຍຂອງທ່ານ ຜູ້ໄດ້ຊົງກະທຳພຣະຣາຊກິດອັນໃຫຍ່ໃນເອຢິບ
22 ທຳການອັສຈັນໃນແຜ່ນດິນຂອງຮາມ ແລະສິ່ງໜ້າຢ້ານກົວທີ່ທະເລແດງ
23 ເພາະສະນັ້ນພຣະອົງຕັສວ່າຈະທຳລາຍທ່ານເສັຽ ດີແຕ່ໂມເຊຜູ້ເລືອກສັນຂອງພຣະອົງໄດ້ມາຢືນເຝົ້າຂັດຄ້ານ
ພຣະອົງ ເພື່ອຫັນພຣະພິໂຣດຂອງພຣະອົງເສັຽຈາກການທຳລາຍ
24 ແລ້ວທ່ານກໍປມາດແຜ່ນດິນອັນຣື່ນເຢັນນັ້ນ ບໍ່ມີຄວາມເຊື່ອໃນພຣະສັນຍາຂອງພຣະອົງ
25 ທ່ານຈົ່ມຢູ່ໃນເຕັນຂອງທ່ານ ແລະບໍ່ຟັງພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າ
26 ເພາະສະນັ້ນພຣະອົງຊົງຍົກພຣະຫັດຂອງພຣະອົງປະຕິຍານຕໍ່ທ່ານວ່າຈະທຳໃຫ້ທ່ານລົ້ມຕາຍໃນຖິ່ນກັນດານ
27 ແລະຈະກະຈາຍເຊື້ອສາຍຂອງທ່ານໄປຖ້າມກາງປະຊາຊາດ ຫວ່ານເຂົາໄປທົ່ວປະເທດທັງຫລາຍ
28 ແລ້ວທ່ານກໍໄປຕິດພັນຢູ່ກັບບາອານແຫ່ງເມືອງເປໂອຣ໌ ແລະກິນເຄື່ອງສັດບູຊາ ທີ່ບູຊາພຣະຕາຍ
29 ທ່ານຍົວະເຍົ້າພຣະອົງໃຫ້ຊົງໂກດດ້ວຍການກະທຳຂອງທ່ານ ແລະໂຣກລະບາດເກີດຂຶ້ນຖ້າມກາງທ່ານ
30 ແລ້ວຟີເນຮັສ ໄດ້ຢືນຂຶ້ນຈັດການລົງໂທດ ແລະໂຣກລະບາດນັ້ນກໍຢຸດ
31 ທີ່ເຂົາທຳນັ້ນພຣະອົງຊົງນັບວ່າເປັນຄວາມຊອບທັມແກ່ເຂົາຕລອດທຸກຊົ່ວຊາດອາຍຸສືບຕໍ່ໄປເປັນນິດ”
32 ທ່ານທຳໃຫ້ພຣະອົງຊົງພິໂຣດທີ່ນ້ຳເມຣີບາ ເພາະເຣື່ອງຂອງທ່ານນີ້ ໂມເຊກໍເດືອດຮ້ອນນຳ
33 ເພາະທ່ານທຳໃຫ້ຈິດໃຈໂມເຊຂົມຂື່ນ ແລະຮີມຝີປາກຂອງເຂົາເວົ້າຖ້ອຍຄຳຫຸນຫັນ
34 ທ່ານບໍ່ໄດ້ທຳລາຍຊົນຊາດທັງຫລາຍຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາທ່ານໄວ້
35 ແຕ່ທ່ານໄດ້ປະປົນກັບປະຊາຊາດເຫລົ່ານັ້ນ ແລະຫັດທຳຢ່າງທີ່ເຂົາທຳກັນ
36 ທ່ານບົວລະບັດຮູບໂຄຣົບຂອງເຂົາ ຊຶ່ງກາຍເປັນບ້ວງສຳລັບທ່ານ
37 ທ່ານຂ້າບຸດຊາຍແລະບຸດຍິງຂອງທ່ານ ຖວາຍເປັນເຄື່ອງສັກກາຣະບູຊາແກ່ປີສາດ
38 ທ່ານເທໂລຫິດຜູ້ໄຮ້ຜິດອອກມາ ຄືໂລຫິດບຸດຊາຍແລະບຸດຍິງຂອງທ່ານ ຜູ້ຊຶ່ງທ່ານໄດ້ຂ້າເປັນເຄື່ອງສັກກາຣະ
ບູຊາແກ່ຮູບໂຄຣົບແຫ່ງການາອານ ແຜ່ນດິນກໍມົນທິນໄປດ້ວຍໂລຫິດ
39 ທ່ານຈຶ່ງເປັນຄົນບໍ່ສະອາດດ້ວຍການກະທຳຂອງທ່ານ ແລະປະພຶດຢ່າງໂສເພນີໃນການກະທຳຂອງທ່ານ
40 ສະນັ້ນພຣະຜູ້ເປັນເຈົ້າຈຶ່ງພິໂຣດຕໍ່ປະຊາກອນຂອງພຣະອົງ ແລະພຣະອົງຊົງລັງກຽດມໍຣະດົກຂອງພຣະອົງ
41 ພຣະອົງຊົງມອບທ່ານໄວ້ໃນມືປະຊາຊາດຕ່າງໆ ບັນດາຜູ້ທີ່ກຽດທ່ານຈຶ່ງປົກຄອງເໜືອທ່ານ
42 ສັດຕຣູຂອງທ່ານໄດ້ບີບບັງຄັບທ່ານ ແລະທ່ານຕົກໄປຢູ່ໃຕ້ອຳນາດຂອງເຂົາ
43 ພຣະອົງຊົງຊ່ອຍກູ້ທ່ານຫລາຍຄັ້ງ ແຕ່ທ່ານມັກກະບົດໃນຈຸດປະສົງຂອງທ່ານ ແລະຖືກຈົມລົງດ້ວຍຄວາມ
ບາບຜິດຂອງທ່ານ
44 ປານນັ້ນ ເມື່ອພຣະອົງສະດັບສຽງຮ້ອງທູນຂອງທ່ານ ພຣະອົງຊົງສົນພຣະທັຍ ໃນຄວາມທຸກໃຈຂອງທ່ານ
45 ເພື່ອເຫັນແກ່ທ່ານ ພຣະອົງຊົງຣະນຶກເຖິງຄຳສັນຍາຂອງພຣະອົງ ແລະຍັງຊົງກະຣຸນາຕາມຄວາມຮັກໝັ້ນຄົງ
ອັນອຸດົມຂອງພຣະອົງ
46 ພຣະອົງຊົງໃຫ້ທ່ານໄດ້ຮັບຄວາມສົງສານ ຈາກບັນດາຜູ້ທີ່ໄດ້ຍຶດທ່ານໄປເປັນຊະເລີຍ

47 ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງທັງຫລາຍ ຂໍຊົງຊ່ອຍຂ້າພຣະອົງທັງຫລາຍໃຫ້ລອດ ແລະຂໍຊົງຮວບ
ຮວມຂ້າພຣະອົງທັງຫລາຍຈາກຖ້າມກາງປະຊາຊາດຕ່າງໆ ເພື່ອຂ້າພຣະອົງທັງຫລາຍຈະໂມທະນາຂອບພຣະ
ຄຸນພຣະນາມບໍຣິສຸດຂອງພຣະອົງ ແລະເຮົງໂລດໃນການສັຣເສີນພຣະອົງ
48 ຈົ່ງຖວາຍສາທຸການແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງອິສຣາເອນ ແຕ່ນິຣັນຈົນເຖິງນິຣັນ ແລະຂໍປະຊາຊົນທັງ
ປວງກ່າວວ່າ, "ອາແມນ" ຈົ່ງສັຣເສີນພຣະຜູ້ເປັນເຈົ້າເຖີດ

## BOOK V

(ພສສ 107-150)

## 107 ເພງສັຣເສີນ ບົດທີນຶ່ງຮ້ອຍເຈັດ

### ການສັຣເສີນພຣະຣາຊບຸນຄຸນຂອງພຣະເຈົ້າ

Thanksgiving for Deliverance from Many Troubles

1 ຈົ່ງຂອບພຣະຄຸນພຣະຜູ້ເປັນເຈົ້າ ເພາະຄວາມດີຂອງພຣະອົງ ຄວາມຮັກຂອງພຣະອົງຊົງມີຕລອດໄປ
2 ບັນດາຜູ້ທີ່ພຣະອົງຊົງຊ່ອຍໃຫ້ພົ້ນພັຍ ຈົ່ງຮ່ວມກັນສັຣເສີນພຣະຜູ້ເປັນເຈົ້າ ເພາະພຣະອົງໄດ້ຊົງຊ່ອຍຊີວິດ
ຂອງພວກເຂົາອອກຈາກເງື້ອມມືຂອງສັດຕຣູ
3 ແລະນໍາພວກເຂົາອອກມາຈາກຕ່າງປະເທດ ຈາກທິດຕາເວັນອອກແລະທິດຕາເວັນຕົກ ຈາກທິດເຫນືອແລະ
ທິດໃຕ້
4 ສ່ວນບາງຄົນທີ່ທ່ຽວໄປມາໃນທາງຖິ່ນກັນດານ ກໍບໍ່ອາດພົບພໍ້ຫົນທາງທີ່ຈະເຂົ້າໄປຢູ່ໃນເມືອງໄດ້
5 ພວກເຂົາຫິວເຂົ້າຫິວນໍ້າ ແລະສູນເສັຽຄວາມຫວັງທຸກຢ່າງ
6 ເມື່ອມີຄວາມທຸກຍາກລໍາບາກ ພວກເຂົາໄດ້ຮ້ອງຫາພຣະຜູ້ເປັນເຈົ້າ ພຣະອົງກໍໄດ້ຊົງຊ່ອຍເຂົາໃຫ້ພົ້ນຈາກ
ຄວາມທຸກໂສກ
7 ພຣະອົງຊົງນໍາພວກເຂົາມຸ່ງຫນ້າໄປອາສັຍຢູ່ໃນເມືອງ
8 ພວກເຂົາຕ້ອງຂອບພຣະຄຸນພຣະຜູ້ເປັນເຈົ້າ ຍ້ອນຄວາມຮັກອັນຫມັ້ນຄົງຂອງພຣະອົງ ແລະຍ້ອນການອັດສະ
ຈັນທີ່ພຣະອົງຊົງກະທໍາສໍາລັບພວກເຂົາ
9 ພຣະອົງຊົງທໍາໃຫ້ຜູ້ຫິວນໍ້າອີ່ມຢ່າງພໍໃຈ ແລະຜູ້ທີ່ຫິວເຂົ້າກໍອີ່ມດ້ວຍຂອງດີ
10 ບາງຄົນທີ່ເປັນນັກໂທດຢູ່ໃນຄວາມໂສກເສົ້າ ແລະມືດມົວທີ່ຖືກມັດດ້ວຍໂສ້ຢ່າງທໍຣະມານ
11 ເພາະວ່າພວກເຂົາໄດ້ກະບົດຕໍ່ສູ້ພຣະວັຈນະຂອງພຣະເຈົ້າອົງສູງສຸດ ແລະປະຕິເສດຄໍາສັ່ງສອນຂອງພຣະອົງ
12 ພວກເຂົາອິດເມື່ອຍຍ້ອນວຽກຫນັກ ພວກເຂົາລົ້ມລົງແລະບໍ່ມີຜູ້ໃດຊ່ອຍເຂົາ
13 ເມື່ອມີຄວາມທຸກຍາກລໍາບາກ ພວກເຂົາໄດ້ຮ້ອງຫາພຣະຜູ້ເປັນເຈົ້າ ພຣະອົງກໍໄດ້ຊົງຊ່ອຍເຂົາໃຫ້ພົ້ນຈາກ
ຄວາມທຸກໂສກ
14 ພຣະອົງຊົງໃຫ້ພວກເຂົາພົ້ນຈາກຄວາມໂສກເສົ້າ ແລະຄວາມມືດມົວ ແລະຊົງຕັດໂສ້ມັດຕົວຂອງພວກເຂົາ
ອອກ
15 ພວກເຂົາຕ້ອງຂອບພຣະຄຸນພຣະຜູ້ເປັນເຈົ້າ ຍ້ອນຄວາມຮັກອັນຫມັ້ນຄົງຂອງພຣະອົງ ແລະຍ້ອນການອັສຈັນ
ທີ່ພຣະອົງຊົງກະທໍາສໍາລັບພວກເຂົາ
16 ພຣະອົງຊົງມ້າງເພປະຕູທອງລົງ ແລະຕັດກົງເຫລັກໃຫ້ຂາດອອກ
17 ບາງຄົນກໍເຈັບໄຂ້ຍ້ອນຄວາມຜິດຂອງພວກເຂົາ ແລະທຸກທໍຣະມານຍ້ອນຄວາມຊົ່ວຂອງພວກເຂົາ
18 ພວກເຂົາອ່ອນແຮງຈົນບໍ່ຢາກກິນເຂົ້າ ພວກເຂົາໄດ້ຢູ່ໃກ້ໆກັບຄວາມຕາຍ

19 ເມື່ອມີຄວາມທຸກລຳບາກ ພວກເຂົາໄດ້ຮ້ອງຫາພຣະຜູ້ເປັນເຈົ້າ ພຣະອົງກໍໄດ້ຊົງຊ່ອຍເຂົາໃຫ້ພົ້ນຈາກຄວາມທຸກໂສກ

20 ພວກເຂົາດີຈາກພຍາດດ້ວຍພຣະຄຳຂອງພຣະອົງ ແລະພຣະອົງຊົງຊ່ອຍພວກເຂົາບໍ່ໃຫ້ຕາຍ

21 ພວກເຂົາຕ້ອງຂອບພຣະຄຸນພຣະຜູ້ເປັນເຈົ້າ ຍ້ອນຄວາມຮັກອັນໝັ້ນຄົງຂອງພຣະອົງ ແລະຍ້ອນການອັສຈັນທີ່ພຣະອົງຊົງກະທຳສຳລັບພວກເຂົາ

22 ພວກເຂົາຕ້ອງຂອບພຣະຄຸນພຣະອົງດ້ວຍການຖວາຍບູຊາ ແລະບົດເພງອັນມ່ວນຊື່ນທີ່ກ່າວເຖິງທຸກສິ່ງທີ່ພຣະອົງຊົງກະທຳ

23 ບາງຄົນກໍຂີ່ເຮືອແລ່ນໄປມາຢູ່ເທິງມະຫາສມຸດເພື່ອຫາລ້ຽງຊີບ

24 ພວກເຂົາໄດ້ເຫັນສິ່ງທີ່ພຣະຜູ້ເປັນເຈົ້າຊົງກະທຳ ຄືກິຈການອັນອັສຈັນຂອງພຣະອົງຢູ່ເທິງທະເລ

25 ເມື່ອພຣະອົງຊົງສັ່ງລົມອັນແຮງກ້າກໍເລີ້ມພັດ ແລະເຮັດໃຫ້ຄື້ນນ້ຳທະເລຟອງຂຶ້ນ

26 ເຮືອໄດ້ຖືກໂຍກຂຶ້ນໂຍກລົງຕາມລະດັບນ້ຳ ໃນເວລາອັນຕະຣາຍເຊັ່ນນີ້ມະນຸດໄດ້ຂາດຄວາມກ້າຫານ

27 ພວກເຂົາໄດ້ເຕະສະດຸດແລະຍ່າງໂຊເຊເໝືອນຄົນເມົາເຫລົ້າ ຄວາມຊຳນານຂອງພວກເຂົາກໍຊ່ອຍຫຍັງບໍ່ໄດ້

28 ເມື່ອມີຄວາມທຸກລຳບາກ ພວກເຂົາໄດ້ຮ້ອງຫາພຣະຜູ້ເປັນເຈົ້າ ພຣະອົງກໍໄດ້ຊົງຊ່ອຍພວກເຂົາໃຫ້ພົ້ນຈາກຄວາມທຸກໂສກ

29 ພຣະອົງຊົງກະທຳໃຫ້ພະຍຸງຽບສງັດ ແລະຟອງທະເລກໍມິດງຽບລົງ

30 ພວກເຂົາຕ່າງກໍພາກັນດີໃຈ ແລ້ວພຣະອົງຊົງນຳພວກເຂົາມາຮອດທ່າເຮືອຕາມຈຸດໝາຍປາຍທາງ

31 ພວກເຂົາຕ້ອງຂອບພຣະຄຸນພຣະຜູ້ເປັນເຈົ້າ ຍ້ອນຄວາມຮັກອັນໝັ້ນຄົງຂອງພຣະອົງ ແລະຍ້ອນການອັສຈັນທີ່ພຣະອົງຊົງກະທຳສຳລັບພວກເຂົາ

32 ພວກເຂົາຕ້ອງປະກາດຄວາມຍິ່ງໃຫຍ່ຂອງພຣະອົງຕໍ່ຊຸມນຸມຊົນ ແລະສັຣເສີນພຣະອົງຕໍ່ກອງປະຊຸມພວກເຖົ້າແກ່

33 ພຣະຜູ້ເປັນເຈົ້າຊົງທຳໃຫ້ແມ່ນ້ຳຂອດແຫ້ງລົງ ແລະຊົງໃຫ້ບໍ່ນ້ຳເຊົາໄຫລ

34 ພຣະອົງໄດ້ຊົງກະທຳໃຫ້ດິນທີ່ອຸດົມສົມບູນກາຍເປັນດິນເຄັມແລະໃຊ້ການບໍ່ໄດ້ ເພາະຄວາມຊົ່ວຊ້າຂອງຜູ້ທີ່ອາສັຍຢູ່ເທິງດິນນັ້ນ

35 ພຣະອົງຊົງປ່ຽນແປງຖິ່ນກັນດານໃຫ້ມີໜອງນ້ຳ ແລະຖິ່ນທີ່ແຫ້ງແລ້ງໃຫ້ມີນ້ຳບໍ່

36 ພຣະອົງຊົງໃຫ້ຜູ້ທີ່ຫິວເຂົ້າອາສັຍຢູ່ທີ່ນັ້ນ ແລະພວກເຂົາໄດ້ສ້າງເມືອງອາສັຍຢູ່

37 ພວກເຂົາໄດ້ຫວ່ານກ້າດຳນາແລະປູກຕົ້ນອະງຸ່ນ ຊຶ່ງໄດ້ເກີດໝາກຢ່າງອຸດົມສົມບູນ

38 ພຣະອົງຊົງອວຍພຣະພອນແກ່ໄພ່ພົນຂອງພຣະອົງໃຫ້ມີລູກຫລາຍຄົນ ແລະຊົງລ້ຽງຮັກສາຝູງສັດຂອງພວກເຂົາບໍ່ໃຫ້ຫລຸດນ້ອຍຖອຍລົງ

39 ເມື່ອໄພ່ພົນຂອງພຣະເຈົ້າໄດ້ຜ່າຍແພ້ແລະໄດ້ຮັບຄວາມອັບອາຍຍ້ອນຖືກການຂົ່ມເຫັງຢ່າງຫຼົງໂຫດແລະການທໍຣະມານ

40 ພຣະອົງບໍ່ຊົງພໍພຣະທັຍຜູ້ທີ່ຂົ່ມເຫັງພວກເຂົາ ແລະຊົງໃຫ້ພວກເຂົາຫຼົງໄປມາໃນຖິ່ນກັນດານ

41 ແຕ່ວ່າພຣະອົງຊົງຊ່ອຍຄົນຈົນໃຫ້ພົ້ນຈາກຄວາມທຸກຍາກລຳບາກ ແລະຊົງໃຫ້ພວກເຂົາມີຄອບຄົວເພີ້ມທະວີຂຶ້ນເໝືອນສັດໃນຝູງ

42 ເມື່ອຄົນຊອບທັມເຫັນເຫດການຢ່າງນີ້ກໍມີຄວາມຍິນດີ ແຕ່ວ່າພວກຄົນຊົ່ວຮ້າຍທັງປວງກໍມິດງຽບຢູ່

43 ຂໍໃຫ້ຜູ້ທີ່ສລາດຄິດເຖິງສິ່ງເຫລົ່ານີ້ ຂໍໃຫ້ພວກເຂົາຮັບຮູ້ເຖິງຄວາມຮັກອັນໝັ້ນຄົງຂອງພຣະອົງ

## 108 ເພງສັຣເສີນ ບົດທີນຶ່ງຮ້ອຍແປດ

### ຄຳອ້ອນວອນຂໍຄວາມຊ່ອຍເຫລືອສູ້ສັດຕຣູ

Praise and Prayer for Victory

(ພສສ 57:7-11; 60:5-12)

ບົດເພງ ເພງສັຣເສີນ ຂອງດາວິດ

A song. A psalm of David.

1 ຂ້າແດ່ພຣະເຈົ້າ ຈິດໃຈຂອງຂ້າພຣະອົງໜັ້ນຄົງ ຂ້າພຣະອົງຈະຮ້ອງເພງ ຂ້າພຣະອົງຈະຮ້ອງເພງສັຣເສີນ
ດ້ວຍຈິດໃຈຂອງຂ້າພຣະອົງ

2 ພິນໃຫຍ່ແລະພິນເຂົາຄູ່ເອີຍ ຕື່ນເຖີດ ຂ້າພະເຈົ້າຈະປຸກອະຣຸນ

3 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຈະຖວາຍໂມທະນາຂອບພຣະຄຸນພຣະອົງຖ້າມກາງປະຊາຊາດ ຂ້າພຣະ
ອົງຈະຮ້ອງເພງສັຣເສີນພຣະອົງຖ້າມກາງຊົນຊາດທັງຫລາຍ

4 ເພາະຄວາມຮັກໜັ້ນຄົງຂອງພຣະອົງຍິ່ງໃຫຍ່ເໜືອຟ້າສວັນ ຄວາມສັດຈິງຂອງພຣະອົງສູງເຖິງເມກ

5 ຂ້າແດ່ພຣະເຈົ້າ ຂໍຊົງເປັນທີ່ເຊີດຊູເໜືອຟ້າສວັນ ຂໍພຣະສະງ່າຣາສີຂອງພຣະອົງຢູ່ທົ່ວແຜ່ນດິນໂລກ

6 ຂໍປະທານໄຊຊະນະໂດຍພຣະຫັດຂວາຂອງພຣະອົງແລະຊົງຕອບຂ້າພຣະອົງ ເພື່ອວ່າຜູ້ທີ່ພຣະອົງຊົງຮັກຈະ
ໄດ້ຮັບການຊ່ອຍກູ້

7 ພຣະເຈົ້າໄດ້ຕຣັສໃນສະຖານນະມັສການຂອງພຣະອົງວ່າ, “ເຮົາຈະແບ່ງເມືອງເຊເຄມດ້ວຍຄວາມຍິນດີ ແລະ
ແບ່ງຫຸບເຂົາເມືອງຊຸກໂກທອອກ

8 ກີເລອາດເປັນຂອງເຮົາ ມານັສເຊເປັນຂອງເຮົາ ເອຟຣາອິມເປັນທີ່ກັນຫົວຂອງເຮົາ ຢູດາເປັນກະບອງຂອງເຮົາ

9 ໂມອາບເປັນອ່າງລ້າງຊຳຣະຂອງເຮົາ ເຮົາແກວ່ງເກີບຂອງເຮົາລົງເທິງເອໂດມ ເຮົາໂຮ່ຮ້ອງດ້ວຍຄວາມມີໄຊ
ເໜືອຟີລິສຕິນ”

10 ຜູ້ໃດຈະນຳຂ້າພະເຈົ້າເຂົ້າໄປໃນນະຄອນທີ່ມີປ້ອມ ຜູ້ໃດຈະນຳຂ້າພະເຈົ້າໄປຍັງເອໂດມ

11 ຂ້າແດ່ພຣະເຈົ້າ ພຣະອົງບໍ່ໄດ້ຊົງປະຖິ້ມຂ້າພຣະອົງທັງຫລາຍແລ້ວຫລື ຂ້າແດ່ພຣະເຈົ້າ ພຣະອົງບໍ່ຊົງອອກໄປ
ກັບກອງທັບຂອງຂ້າພຣະອົງທັງຫລາຍຫລືນີ້

12 ຂໍປະທານຄວາມຊ່ອຍເຫລືອເພື່ອຕໍ່ຕ້ານສັດຕຣູ ເພາະຄວາມຊ່ອຍເຫລືອຂອງມະນຸດກໍໄຮ້ເຫດຜົນ

13 ໂດຍເພິ່ງໃນພຣະເຈົ້າ ຂ້າພະເຈົ້າທັງຫລາຍຈະທຳຢ່າງເຂັ້ມແຂງ ພຣະອົງເອງຊົງເປັນຜູ້ຢຽບຄູ່ສັດຕຣູຂອງຂ້າ
ພະເຈົ້າ ທັງຫລາຍລົງ

## 109 ເພງສັຣເສີນ ບົດທີນຶ່ງຮ້ອຍເກົ້າ

### ຄຳຮຽກຮ້ອງຂໍຊົງແກ້ແຄ້ນ

Prayer for Vindication and Vengeance

ເຖິງຫົວໜ້ານັກຮ້ອງ ເພງສັຣເສີນ ຂອງດາວິດ

To the leader. Of David. A Psalm.

1 ຂ້າແດ່ພຣະເຈົ້າ ຜູ້ຊຶ່ງຂ້າພຣະອົງສັຣເສີນ ຂໍຢ່າຊົງນິດເສີຍ

2 ເພາະປາກທີ່ອະທັມແລະຫລອກລວງອ້າໃສ່ຂ້າພຣະອົງຢູ່ແລ້ວ ໄດ້ເວົ້າປັກປຳຂ້າພຣະອົງດ້ວຍລີ້ນມຸສາ

3 ເຂົາທັງຫລາຍລ້ອມຂ້າພຣະອົງໄວ້ດ້ວຍຖ້ອຍຄຳກຽດຊັງ ແລະໂຈມຕີຂ້າພຣະອົງຢ່າງໄຮ້ເຫດຜົນ

4 ເຂົາຟ້ອງຂ້າພຣະອົງແທນຄວາມຮັກຂອງຂ້າພຣະອົງ ສ່ວນຂ້າພຣະອົງໄດ້ອ້ອນວອນເທົ່ານັ້ນ

5 ເຂົາຕອບແທນຂ້າພຣະອົງດ້ວຍຄວາມຊົ່ວແທນຄວາມດີ ແລະຄວາມກຽດຊັງແທນຄວາມຮັກຂອງຂ້າພຣະອົງ

6 ຂໍຊົງຕັ້ງຄົນອະທັມປັກປຳເຂົາ ແລະໃຫ້ໂຈດຟ້ອງເຂົາໃຫ້ເປັນຄະດີ

7 ເມື່ອພິຈາຣະນາຄະດີ ກໍໃຫ້ເຂົາປາກົດວ່າ ເປັນຜູ້ກະທຳຜິດ ແລະໃຫ້ຄຳອ້ອນວອນຂອງເຂົາໄຮ້ຜົນ

8 ຂໍໃຫ້ວັນເວລາຂອງເຂົາຫນ້ອຍ ຂໍໃຫ້ອີກຜູ້ນຶ່ງມາຍຶດຕຳແຫນ່ງຂອງເຂົາ

9 ຂໍໃຫ້ລູກຂອງເຂົາກຳພ້າພໍ່ ແລະເມັຽຂອງເຂົາເປັນຫມ້າຍ

10 ຂໍໃຫ້ລູກຂອງເຂົາຕ້ອງພະເນຈອນຂໍທານໄປ ຂໍໃຫ້ເຂົາຖືກຂັບໄລ່ໄປຈາກບ່ອນເພພັງທີ່ເຂົາຢູ່

11 ຂໍໃຫ້ເຈົ້າຫນີ້ມາຍຶດຂອງທັງສິ້ນທີ່ເຂົາມີຢູ່ ຂໍຄົນຕ່າງຖິ່ນມາປຸ້ນຜົນງານຂອງເຂົາໄປ

12 ຂໍຢ່າໃຫ້ຜູ້ໃດເອັນດູເຂົາ ຢ່າໃຫ້ຜູ້ໃດສົງສານລູກກຳພ້າຂອງເຂົາ

13 ຂໍໃຫ້ວົງວານຂອງເຂົາຖືກຕັດອອກ ຂໍໃຫ້ຕະກູນຂອງເຂົາສິ້ນໄປໃນອີກຊົ່ວຊີວິດນຶ່ງ

14 ຂໍໃຫ້ຄວາມບາບຜິດຂອງບັນພະບຸຣຸດຂອງເຂົາຍັງເປັນທີ່ຈຳໄດ້ຢູ່ຕໍ່ພຣະພັກພຣະຜູ້ເປັນເຈົ້າ ຢ່າໃຫ້ບາບຂອງ
ມານດາເຂົາລຶບເລືອນໄປ

15 ຂໍໃຫ້ບາບນັ້ນຢູ່ຕໍ່ເບື້ອງພຣະພັກພຣະຜູ້ເປັນເຈົ້າເປັນນິດ ເພື່ອພຣະອົງຈະຊົງຕັດອະນຸສອນຂອງເຂົາເຫລົ່ານັ້ນ
ເສັຽຈາກແຜ່ນດິນໂລກ

16 ເພາະເຂົາບໍ່ຈົດຈຳທີ່ຈະສະແດງຄວາມເອັນດູ ແຕ່ໄລ່ຂົ່ມເຫັງຄົນທຸກຍາກ ແລະຄົນຂັດສົນ ແລະຄົນໃຈທໍ້ຖອຍ
ເພື່ອຈະຂ້າເສັຽ

17 ເຂົາຮັກທີ່ຈະແຊ່ງ ຂໍໃຫ້ຄຳແຊ່ງຕົກເທິງເຂົາ ເຂົາບໍ່ມັກການໃຫ້ພອນ ຂໍພອນຈົ່ງຫ່າງໄກຈາກເຂົາ

18 ເຂົາເອົາການແຊ່ງຫົ່ມຕ່າງເສື້ອຜ້າຂອງເຂົາ ຂໍໃຫ້ຊຶມເຂົ້າໄປໃນກາຍຂອງເຂົາຢ່າງນໍ້າ ຂໍໃຫ້ຊຶມເຂົ້າໄປໃນກະ
ດູກຂອງເຂົາຢ່າງນໍ້າມັນ

19 ໃຫ້ເຫມືອນເຄື່ອງແຕ່ງກາຍທີ່ຄຸມເຂົາຢູ່ ເຫມືອນເຂັມຂັດທີ່ຄາດເຂົາໄວ້ສເມີ

20 ທັງນີ້ຂໍໃຫ້ເປັນບຳເຫນັດຈາກພຣະຜູ້ເປັນເຈົ້າ ແກ່ໂຈດຂອງຂ້າພຣະອົງ ແກ່ຜູ້ທີ່ກ່າວຮ້າຍຕໍ່ຊີວິດຂອງຂ້າພຣະ
ອົງ

21 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຂ້າພຣະອົງ ຂໍຊົງກະທຳເພື່ອຂ້າພຣະອົງໂດຍເຫັນແກ່ພຣະນາມຂອງພ
ຣະອົງ ເພາະວ່າຄວາມຮັກຫມັ້ນຄົງຂອງພຣະອົງນັ້ນປະເສີດ ຂໍຊົງຊ່ອຍກູ້ຂ້າພຣະອົງ

22 ເພາະຂ້າພຣະອົງຍາກຈົນແລະຂັດສົນ ແລະຈິດໃຈຂອງຂ້າພຣະອົງກໍບາດເຈັບຢູ່ພາຍໃນ

23 ຂ້າພຣະອົງສິ້ນສຸດໄປແລ້ວຢ່າງເງົາຕອນຄໍ່າ ຂ້າພຣະອົງຖືກສລັດອອກເຫມືອນຕັກແຕນ

24 ເຂົ່າຂອງຂ້າພຣະອົງກໍອ່ອນເປັ້ຽເພາະການອົດອາຫານ ຮ່າງກາຍຂອງຂ້າພຣະອົງກໍຈ່ອຍລົງ

25 ຂ້າພຣະອົງເປັນຂີ້ປາກຂອງເຂົາ ເມື່ອເຂົາເຫັນຂ້າພຣະອົງ ເຂົາກໍສັ່ນຫົວ

26 ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ຂໍຊົງຊ່ອຍຂ້າພຣະອົງ ຂໍຊົງຊ່ອຍຂ້າພຣະອົງໃຫ້ລອດ ຕາມຄວາມຮັກ
ຫມັ້ນຄົງຂອງພຣະອົງ

27 ຂໍໃຫ້ເຂົາຮູ້ວ່າ ນີ້ເປັນສິພຣະຫັດຂອງພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງໄດ້ຊົງກະທຳການນີ້

28 ໃຫ້ເຂົາແຊ່ງໄປ ແຕ່ຂໍພຣະອົງຊົງອວຍພຣະພອນ ຂໍໃຫ້ຜູ້ທີ່ລຸກຂຶ້ນສູ້ຂ້າພຣະອົງໄດ້ອາຍ ຂໍໃຫ້ຜູ້ຮັບໃຊ້ຂອງພ
ຣະອົງຍິນດີ

29 ຂໍໃຫ້ໂຈດຂອງຂ້າພຣະອົງຫົ່ມຄວາມອັປຍົດ ຂໍໃຫ້ຄວາມອັບອາຍສວມກາຍເຂົາຢ່າງເສື້ອຄຸມ

30 ດ້ວຍປາກຂອງຂ້າພະເຈົ້າ ຂ້າພະເຈົ້າຈະໂມທະນາຂອບພຣະຄຸນພຣະເຈົ້າຢ່າງມາກມາຍ ຂ້າພະເຈົ້າຈະ
ສັຣເສີນພຣະອົງຖ້າມກາງຄົນຫລວງຫລາຍ

31 ເພາະພຣະອົງປະທັບຂວາມືຂອງຄົນຂັດສົນ ເພື່ອຊົງຊ່ອຍເຂົາໃຫ້ພົ້ນຈາກຄົນທີ່ຢາກຂ້າເຂົານັ້ນ

## 110 ເພງສັຣເສີນ ບົດທີນຶ່ງຮ້ອຍສິບ

**ພຣະຜູ້ເປັນເຈົ້າແລະເຈົ້າຊີວິດທີ່ພຣະອົງຊົງເລືອກ**

Assurance of Victory for God’s Priest king

(ມທ 22:44; ກຈກ 2:34-35)

1 ພຣະເຈົ້າຊົງກ່າວກັບ ພຣະອົງຜູ້ເປັນເຈົ້າຂອງຂ້າພະເຈົ້າວ່າ , “ຈົ່ງນັ່ງທີ່ຂ້າງຂວາຂອງເຮົາ ຈົນກວ່າເຮົາຈະກະທຳໃຫ້ສັດຕຣູຂອງເຈົ້າເປັນແທ່ນຮອງຕີນຂອງເຈົ້າ”

2 ພຣະເຈົ້າຊົງໃຊ້ຄະທາ (ກະບອງ)ຊົງຣິດຂອງພຣະອົງທ່ານໄປຈາກຊີໂອນ ຈົ່ງຄອບຄອງຖ້າມກາງສັດຕຣູຂອງພຣະອົງທ່ານເຖີດ

3 ຊົນຊາດຂອງພຣະອົງທ່ານຈະສມັກຖວາຍຕົວຂອງເຂົາດ້ວຍຄວາມເຕັມໃຈ ໃນວັນທີ່ພຣະອົງທ່ານນຳພົນໂຍທາພຣະອົງທ່ານໄປເທິງພູບໍຣິສຸດ ດັ່ງນໍ້າໝອກຍອດລົງໃນຍາມເຊົ້າຕູ່ ນໍ້າໝອກແຫ່ງວັຍໜຸ່ມເປັນຂອງພຣະອົງ

4 ພຣະຜູ້ເປັນເຈົ້າຊົງປະຕິຍານແລ້ວ ແລະຈະບໍ່ປ່ຽນພຣະທັຍຂອງພຣະອົງ “ເຈົ້າເປັນປະໂຣຫິດຕລອດໄປ ໃນລຳດັບດຽວກັບເມນຄີເຊເດັກ”

5 ອົງພຣະຜູ້ເປັນເຈົ້າປະທັບຂ້າງຂວາຫັດຂອງພຣະອົງທ່ານ ພຣະອົງຊົງສລາຍບັນດາພຣະຣາຊາ ໃນວັນທີ່ຊົງພຣະພິໂຣດ

6 ພຣະອົງຊົງກະທຳການພິພາກສາຖ້າມກາງປະຊາຊາດໃຫ້ຊາກລົບເຕັມໄປຫມົດ ພຣະອົງຈະຊົງສລາຍຜູ້ເປັນປະມຸກທົ່ວແຜ່ນດິນໂລກອັນກວ້າງຂວາງ

7 ພຣະອົງທ່ານຈະຊົງດື່ມຈາກລຳຫ້ວຍຂ້າງທາງ ສະນັ້ນພຣະອົງທ່ານຈະຊົງຍົກພຣະສຽນຂຶ້ນ

## 111 ເພງສັຣເສີນ ບົດທີນຶ່ງຮ້ອຍສິບເອັດ

**ພຣະເຈົ້າຊົງດູແລຊົນຊາດຂອງພຣະອົງ**

Praise for God’s Wonderful Works

1 ຈົ່ງສັຣເສີນພຣະເຈົ້າເຖີດ ຂ້າພະເຈົ້າຈະໂມທະນາພຣະຄຸນພຣະຜູ້ເປັນເຈົ້າດ້ວຍສິ້ນສຸດໃຈຂອງຂ້າພະເຈົ້າ ໃນຄນະຜູ້ທ່ຽງທັມໃນຊຸມນຸມຊົນ

2 ບັນດາພຣະຣາຊກິດຂອງພຣະຜູ້ເປັນເຈົ້າຍິ່ງໃຫຍ່ ເປັນທີ່ຄົ້ນຄວ້າຂອງທຸກຄົນທີ່ພໍໃຈ

3 ພຣະຣາຊກິດຂອງພຣະອົງສູງສົ່ງແລະມີກຽດ ແລະຄວາມຊອບທັມຂອງພຣະອົງດຳຣົງຢູ່ເປັນນິດ

4 ພຣະອົງໄດ້ຊົງໃຫ້ພຣະຣາຊກິດອັສຈັນຂອງພຣະອົງເປັນທີ່ຈົດຈຳ ພຣະເຈົ້າຊົງມີພຣະຄຸນແລະຊົງພຣະກະຣຸນາ

5 ພຣະອົງປະທານອາຫານໃຫ້ຜູ້ທີ່ເກງກົວພຣະອົງ ພຣະອົງຊົງຈື່ຈຳຄຳສັນຍາຂອງພຣະອົງສເມີ

6 ພຣະອົງໄດ້ຊົງສຳແດງຣິດທານຸພາບແຫ່ງພຣະຣາຊກິດຂອງພຣະອົງແກ່ໄພ່ພົນຂອງພຣະອົງ ໃນການທີ່ປະທານມໍຣະດົກຂອງບັນດາປະຊາຊາດແກ່ເຂົາ

7 ພຣະຫັຖກິດຂອງພຣະອົງນັ້ນສຸຈຣິດ ແລະຍຸດຕິທັມ ແລະຂໍ້ບັງຄັບຂອງພຣະອົງກໍໄວ້ໃຈໄດ້

8 ສະຖາປະນາຢູ່ຕລອດການ ແລະປະກອບຄວາມສັດສຸຈຣິດກັບຄວາມທ່ຽງທັມ

9 ພຣະອົງຊົງໃຊ້ການໄຖ່ໃຫ້ມາຍັງປະຊາກອນຂອງພຣະອົງ ພຣະອົງຊົງບັນຊາຄຳສັນຍາຂອງພຣະອົງຕລອດໄປ ຄວາມບໍຣິສຸດ ແລະຣິດທານຸພາບທັງຫມົດ ຈົ່ງເປັນຂອງພຣະອົງເທີນ

10 ຄວາມຢຳເກງພຣະຜູ້ເປັນເຈົ້າເປັນທີ່ເລີ່ມຕົ້ນຂອງສະຕິປັນຍາ ບັນດາຜູ້ທີ່ປະຕິບັດຕາມກໍໄດ້ຄວາມເຂົ້າໃຈດີ ການສັຣເສີນ ພຣະເຈົ້າດຳຣົງຢູ່ເປັນນິດ

## 112 ເພງສັຣເສີນ ບົດທີນຶ່ງຮ້ອຍສິບສອງ

**ຄວາມຮັ່ງມີຂອງຜູ້ທີ່ຢຳເກງພຣະເຈົ້າ**

Blessing of the Righteous

1 ຈົ່ງສັຣເສີນພຣະຜູ້ເປັນເຈົ້າເຖີດ ຄົນທີ່ເກງກົວພຣະຜູ້ເປັນເຈົ້າກໍເປັນສຸກ ຄືຜູ້ທີ່ປິຕິຍິນດີເປັນອັນມາກໃນພຣະບັນຍັດຂອງ ພຣະອົງ

2 ເຊື້ອສາຍຂອງເຂົາຈະຊົງອານຸພາບໃນແຜ່ນດິນ ພວກຄົນທ່ຽງທັມຈະຮັບພຣະພອນ

3 ຄວາມຮຸ່ງເຮືອງແລະຄວາມມັ່ງຄັ່ງມີຢູ່ໃນເຮືອນຂອງເຂົາ ແລະຄວາມຊອບທັມຂອງເຂົາດຳຣົງຢູ່ນິດ

4 ຄວາມສະວ່າງຈະໂຜ່ຂຶ້ນມາໃນຄວາມມືດໃຫ້ຄົນທ່ຽງທັມ ພຣະອົງຊົງເປັນມີພຣະຄຸນ ຊົງພຣະກະຣຸນາແລະຊົງຊອບທັມ

5 ຄົນທີ່ສະແດງຄວາມເມດຕາຄຸນແລະໃຫ້ຢືມ ກໍຢູ່ເຢັນເປັນສຸກ ຄືຜູ້ທີ່ດຳເນີນການຂອງເຂົາດ້ວຍຄວາມຍຸດຕິທັມ

6 ເພາະຄົນຊອບທັມຈະບໍ່ຖອຍ ຄົນຈະລະນຶກເຖິງເຂົາຢູ່ເປັນນິດ

7 ເຂົາບໍ່ຢ້ານຂ່າວຮ້າຍ ຈິດໃຈຂອງເຂົາຍຶດແໜ້ນ ວາງໃຈໃນພຣະເຈົ້າ

8 ຈິດໃຈຂອງເຂົາແນ່ວແນ່ ເຂົາຈະບໍ່ຢ້ານ ຈົນກວ່າຈະເຫັນຄວາມປະສົງຕໍ່ສັດຕຣູຂອງເຂົາສຳເຣັດ

9 ເຂົາບໍຣິຈາກຢ່າງກວ້າງຂວາງໃຫ້ແກ່ຄົນທຸກຍາກຄຸນຄວາມດີຂອງເຂົາກໍຕັ້ງຢູ່ເປັນນິດ ສັກສີຂອງເຂົາຈະໄດ້ຮັບກຽດ

10 ຄົນອະທັມເຫັນການນີ້ກໍເກີດຄວາມບໍ່ພໍໃຈ ເຂົາຂົບແຂ້ວຄຽ້ວຟັນແລ້ວສລາຍໄປ ຄວາມປາຖນາຂອງຄົນອະທັມນັ້ນກໍຫາຍໄປ

## 113 ເພງສັຣເສີນ ບົດທີນຶ່ງຮ້ອຍສິບສາມ

**ຄຳສັຣເສີນທີ່ຊົງເຊີດຊູຜູ້ມີໃຈຖ່ອມ**

God the Helper of the Needy

1 ຈົ່ງສັຣເສີນພຣະຜູ້ເປັນເຈົ້າເຖີດ ບັນດາຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າເອີຍ ຈົ່ງສັຣເສີນເຖີດ ຈົ່ງສັຣເສີນພຣະນາມພຣະຜູ້ເປັນເຈົ້າ

2 ສາທຸການແດ່ພຣະນາມຂອງພຣະຜູ້ເປັນເຈົ້າ ຕັ້ງແຕ່ບັດນີ້ເປັນຕົ້ນໄປເປັນນິດ

3 ຕັ້ງແຕ່ບ່ອນຕາເວັນຂຶ້ນຈົນເຖິງບ່ອນຕາເວັນຕົກ ພຣະນາມຂອງພຣະຜູ້ເປັນເຈົ້າເປັນທີ່ສັຣເສີນ

4 ພຣະຜູ້ເປັນເຈົ້າປະທັບຢູ່ສູງເໜືອປະຊາຊາດທັງຫລາຍ ແລະພຣະສະງ່າຣາສີຂອງພຣະອົງສູງເໜືອຟ້າສວັນ

5 ບໍ່ມີພຣະໃດເປັນເໝືອນພຣະຜູ້ເປັນເຈົ້າຂອງເຮົາ ຜູ້ປະທັບເທິງທີ່ສູງ

6 ຜູ້ທອດພຣະເນດລົງມາທີ່ຕ່ຳເໜືອຟ້າສວັນແລະແຜ່ນດິນໂລກ

7 ພຣະອົງຊົງຍົກຄົນທຸກຍາກຂຶ້ນມາຈາກຜົງຂີ້ດິນ ແລະຊົງຍົກຄົນຂັດສົນຂຶ້ນມາຈາກກອງຂີ້ເຖົ່າ

8 ເພື່ອໃຫ້ເຂົານັ່ງກັບບັນດາເຈົ້ານາຍກັບບັນດາເຈົ້ານາຍແຫ່ງຊົນຊາດຂອງພຣະອົງ

9 ພຣະອົງໂຜດໃຫ້ຍິງໝັນມີບ້ານຢູ່ ເປັນແມ່ທີ່ຊື່ນບານມີບຸດ ຈົ່ງສັຣເສີນພຣະຜູ້ເປັນເຈົ້າເຖີດ

## 114 ເພງສັຣເສີນ ບົດທີນຶ່ງຮ້ອຍສິບສີ່

**ບັນດາການອັສຈັນໃຈຄາວອົບພະຍົບ**

God's Wonders at the Exodus

(ອພຍ 14:1-31)

1 ເມື່ອອິສຣາເອນອອກໄປຈາກເອຢິບ ຄືເຊື້ອສາຍຂອງຢາໂຄບໄປຈາກຊົນຊາດຕ່າງພາສາ
2 ຢູດາກາຍເປັນສະຖານນະມັສການຂອງພຣະອົງ ອິສຣາເອນເປັນອານາຈັກຂອງພຣະອົງ
3 ທະເລໄດ້ຫລຽວເບິ່ງແລ້ວໜີ ຈໍແດນໄດ້ຫັນກັບຄືນ
4 ພູເຂົາໂດດຂຶ້ນເຫມືອນແກະເຖິກ ຈ້າຍພູເຕັ້ນເຫມືອນລູກແກະ
5 ເປັນຫຍັງໜໍທະເລເອີຍ ເຈົ້າຈຶ່ງໜີ ແມ່ນໍ້າຈໍແດນເອີຍ ເຈົ້າຈຶ່ງຫັນກັບຄືນ
6 ພູເຂົາເອີຍ ເຈົ້າຈຶ່ງໂດດຂຶ້ນເຫມືອນແກະເຖິກ ຈ້າຍພູເອີຍ ເຈົ້າຈຶ່ງເຕັ້ນເຫມືອນລູກແກະ
7 ແຜ່ນດິນເອີຍ ຫວັ່ນໄຫວເຖີດຕໍ່ເບື້ອງພຣະພັກພຣະເຈົ້າຂອງຢາໂຄບ
8 ຜູ້ໃຫ້ຫີນເປັນສະນໍ້າ ຫີນເຫລັກໄຟເປັນນໍ້າພຸ

## 115 ເພງສັຣເສີນ ບົດທີນຶ່ງຮ້ອຍສິບຫ້າ

### ພຣະເຈົ້າ ແລະຮູບໂຄຣົບ

The Impotence of Idols and the Greatness of God

1 ບໍ່ແມ່ນແກ່ພວກຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ບໍ່ແມ່ນແກ່ພວກຂ້າພຣະອົງ ແຕ່ຂໍຖວາຍພຣະກຽດແດ່ພ
ຣະນາມຂອງ ພຣະອົງ ເພາະເຫັນແກ່ຄວາມຮັກຫມັ້ນຄົງຂອງພຣະອົງ ແລະຄວາມສັດສຸຈຣິດຂອງພຣະອົງ
2 ເປັນຫຍັງບັນດາປະຊາຊາດຈຶ່ງກ່າວວ່າ, “ພຣະເຈົ້າຂອງເຂົາທັງຫລາຍຢູ່ທີ່ໃດ?”
3 ແຕ່ພຣະເຈົ້າຂອງເຮົາທັງຫລາຍຢູ່ໃນຟ້າສວັນ ສິ່ງໃດທີ່ພຣະອົງພໍພຣະທັຍ ພຣະອົງກໍຊົງກະທຳ
4 ຮູບໂຄຣົບຂອງຄົນເຫລົ່ານັ້ນເປັນເງິນແລະທອງຄຳ ເປັນຫັຖກັມຂອງມະນຸດ
5 ຮູບເຫລົ່ານັ້ນມີປາກແຕ່ເວົ້າບໍ່ໄດ້ ມີຕາແຕ່ເບິ່ງບໍ່ໄດ້
6 ມີຫູແຕ່ຟັງບໍ່ໄດ້ຍິນ ມີດັງແຕ່ດົມບໍ່ໄດ້
7 ມີມືແຕ່ຈັບບໍ່ໄດ້ ມີຕີນແຕ່ຍ່າງບໍ່ໄດ້ ຮູບເຫລົ່ານັ້ນທຳສຽງໃນຄໍບໍ່ໄດ້
8 ຜູ້ທີ່ທຳຮູບເຫລົ່ານັ້ນຈະເປັນເຫມືອນຮູບເຫລົ່ານັ້ນ ບັນດາຜູ້ທີ່ວາງໃຈໃນຮູບເຫລົ່ານັ້ນກໍເຫມືອນກັນ
9 ອິສຣາເອນເອີຍ ຈົ່ງວາງໃຈໃນພຣະຜູ້ເປັນເຈົ້າເຖີດ ພຣະອົງຊົງເປັນຜູ້ອຸປຖັມແລະເປັນໂລ້ຂອງເຂົາທັງຫລາຍ
10 ເຊື້ອສາຍອາໂຣນເອີຍ ຈົ່ງວາງໃຈໃນພຣະຜູ້ເປັນເຈົ້າເຖີດ ພຣະອົງຊົງເປັນຄວາມອຸປຖັມແລະເປັນໂລ້ຂອງເຂົາ
ທັງຫລາຍ
11 ທ່ານຜູ້ເກງກົວພຣະຜູ້ເປັນເຈົ້າເອີຍ ຈົ່ງວາງໃຈໃນພຣະຜູ້ເປັນເຈົ້າເຖີດ ພຣະອົງຊົງເປັນຄວາມອຸປຖັມແລະເປັນ
ໂລ້ຂອງເຂົາທັງຫລາຍ
12 ພຣະຜູ້ເປັນເຈົ້າເປັນຫ່ວງເຮົາທັງຫລາຍ ພຣະອົງຊົງອວຍພຣະພອນແກ່ເຊື້ອສາຍອິສຣາເອນ ພຣະອົງຊົງອວຍ
ພຣະພອນແກ່ເຊື້ອສາຍຂອງອາໂຣນ
13 ພຣະອົງຈະຊົງອວຍພຣະພອນແກ່ບັນດາຜູ້ທີ່ຢຳເກງພຣະຜູ້ເປັນເຈົ້າ ທັງຜູ້ນ້ອຍແລະຜູ້ໃຫຍ່
14 ຂໍພຣະຜູ້ເປັນເຈົ້າໃຫ້ທ່ານເພີ້ມພູນຂຶ້ນ ທັງທ່ານແລະລູກຫລານຂອງທ່ານ
15 ຂໍທ່ານຮັບພຣະພອນຈາກພຣະຜູ້ເປັນເຈົ້າ ຜູ້ຊົງສ້າງຟ້າສວັນແລະແຜ່ນດິນໂລກ
16 ຟ້າສວັນເປັນຟ້າສວັນຂອງພຣະຜູ້ເປັນເຈົ້າ ແຕ່ພຣະອົງປະທານແຜ່ນດິນໂລກໃຫ້ແກ່ບຸດຂອງມະນຸດ
17 ຄົນຕາຍບໍ່ສັຣເສີນພຣະຜູ້ເປັນເຈົ້າ ຫລືຜູ້ທີ່ລົງໄປສູ່ທີ່ສງັດກໍເຫມືອນກັນ
18 ແຕ່ເຮົາທັງຫລາຍຈະສັຣເສີນພຣະຜູ້ເປັນເຈົ້າ ຕັ້ງແຕ່ບັດນີ້ເປັນຕົ້ນໄປເປັນນິດ ຈົ່ງສັຣເສີນພຣະເຈົ້າເຖີດ

## 116 ເພງສັຣເສີນ ບົດທີນຶ່ງຮ້ອຍສິບຫົກ

### ຄຳໂມທະນາເພາະຊົງຊ່ອຍກູ້ຈາກຄວາມຕາຍ

Thanksgiving for Recovery from Illness

1 ຂ້າພະເຈົ້າຮັກພຣະຜູ້ເປັນເຈົ້າ ເພາະພຣະອົງຊົງຟັງສຽງແລະຄຳອ້ອນວອນຂອງຂ້າພະເຈົ້າ

2 ພຣະອົງຊົງງ່ຽງພຣະກັນຟັງຂ້າພະເຈົ້າ ເຫດສະນັ້ນຂ້າພະເຈົ້າຈະທູນພຣະອົງຕາບເທົ່າທີ່ຂ້າພະເຈົ້າມີຊີວິດຢູ່

3 ບ້ວງຂອງຄວາມຕາຍດັກຢູ່ລ້ອມຂ້າພະເຈົ້າໄວ້ ຂ້າພະເຈົ້າປະສົບຄວາມທຸກໃຈແລະຄວາມລະທົມ

4 ແລ້ວຂ້າພະເຈົ້າຮ້ອງທູນອອກພຣະນາມພຣະຜູ້ເປັນເຈົ້າວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຊ່ອຍຊີວິດຂອງຂ້າ
ພຣະອົງໃຫ້ລອດ"

5 ພຣະຜູ້ເປັນເຈົ້າຊົງພຣະກະຣຸນາແລະຊອບທັມ ພຣະເຈົ້າຂອງເຮົາທັງຫລາຍປະກອບດ້ວຍພຣະເມດຕາ

6 ພຣະຜູ້ເປັນເຈົ້າຊົງສງວນຄົນຮູ້ນ້ອຍໄວ້ ເມື່ອຂ້າພະເຈົ້າຕົກຕ່ຳ ພຣະອົງຊົງຊ່ອຍຂ້າພະເຈົ້າໃຫ້ລອດ

7 ຈິດໃຈຂອງຂ້າພະເຈົ້າເອີຍ ກັບໄປສູ່ທີ່ພັກຂອງເຈົ້າເຖີດ ເພາະພຣະຜູ້ເປັນເຈົ້າຊົງໂປດປານເຈົ້າຫລາຍແລ້ວ

8 ເພາະພຣະອົງຊົງຊ່ອຍກູ້ຂ້າພຣະອົງຈາກມັດຈຸຣາດ ຊ່ອຍນັຍຕາຂອງຂ້າພຣະອົງຈາກນ້ຳຕາ ຊ່ອຍຕີນຂອງຂ້າ
ພຣະອົງຈາກການລົ້ມ

9 ຂ້າພະເຈົ້າດຳເນີນຢູ່ສະເພາະເບື້ອງພຣະພັກພຣະຜູ້ເປັນເຈົ້າ ໃນດິນແດນຂອງຄົນເປັນ

10 ຂ້າພະເຈົ້າຍັງເຊື່ອຢູ່ ແມ້ເມື່ອຂ້າພະເຈົ້າວ່າ, "ຂ້າພະເຈົ້າໄດ້ຮັບຄວາມທຸກຍາກຍິ່ງໃຫຍ່"

11 ຂ້າພະເຈົ້າກ່າວໃນເວລາຕົກໃຈວ່າ, "ຄົນເຮົານີ້ເປັນຄົນຂີ້ຕົວະທັງນັ້ນ"

12 ຂ້າພະເຈົ້າຈະເອົາຫຍັງຕອບແທນພຣະຜູ້ເປັນເຈົ້າໄດ້ ເນື່ອງຈາກບັນດາພຣະຣາຊກິດອັນມີພຣະຄຸນຕໍ່ຂ້າພະ
ເຈົ້າ

13 ຂ້າພະເຈົ້າຈະຍົກຖ້ວຍແຫ່ງຄວາມລອດ ແລະຮ້ອງທູນອອກພຣະນາມພຣະຜູ້ເປັນເຈົ້າ

14 ຂ້າພະເຈົ້າຈະແກ້ບົນຂອງຂ້າພະເຈົ້າແດ່ພຣະຜູ້ເປັນເຈົ້າ ຕໍ່ຫນ້າປະຊາຊົນທັງຫລາຍຂອງພຣະອົງ

15 ມໍຣະນະກັມແຫ່ງໄພ່ພົນຂອງພຣະອົງສຳຄັນໃນສາຍພຣະເນດພຣະຜູ້ເປັນເຈົ້າ

16 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງເປັນຜູ້ຮັບໃຊ້ຂອງພຣະອົງ ພຣະເຈົ້າຂ້າ ຂ້າພຣະອົງເປັນຜູ້ຮັບໃຊ້ຂອງພຣະ
ອົງເປັນບຸດຊາຍຂອງຍິງຄົນໃຊ້ຂອງພຣະອົງ ພຣະອົງຊົງຊ່ອຍແກ້ຂໍ້ຜູກມັດຂອງຂ້າພຣະອົງ

17 ຂ້າພຣະອົງຈະຖວາຍເຄື່ອງສັກກາຣະບູຊາໂມທະນາພຣະຄຸນແດ່ພຣະອົງ ແລະຮ້ອງທູນອອກພຣະນາມຂອງພ
ຣະຜູ້ເປັນເຈົ້າ

18 ຂ້າພະເຈົ້າຈະແກ້ບົນຂອງຂ້າພະເຈົ້າແດ່ພຣະຜູ້ເປັນເຈົ້າ ຕໍ່ຫນ້າປະຊາຊົນທັງຫລາຍຂອງພຣະອົງ

19 ໃນບໍຣິເວນພຣະວິຫານຂອງພຣະຜູ້ເປັນເຈົ້າ ເຢຣູຊາເລັມເອີຍ ໃນຖ້າມກາງເຈົ້າ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ
ເຖີດ

## 117 ເພງສັຣເສີນ ບົດທີນຶ່ງຮ້ອຍສິບເຈັດ

**ສັຣເສີນເພາະຄວາມຮັກຫມັ້ນຄົງຂອງພຣະເຈົ້າ**

Universal Call to Worship

1 ປະຊາຊາດທັງຫລາຍເອີຍ ຈົ່ງສັຣເສີນພຣະຜູ້ເປັນເຈົ້າເຖີດ ຊົນຊາດທັງຫລາຍເອີຍ ຈົ່ງຍົກຍ້ອງພຣະອົງເຖີດ

2 ເພາະຄວາມຮັກຫມັ້ນຄົງຂອງພຣະອົງທີ່ມີຕໍ່ເຮົານັ້ນໃຫຍ່ຫລວງ ແລະຄວາມສັດສຸຈຣິດຂອງພຣະອົງດຳຣົງຢູ່
ເປັນນິດ ຈົ່ງສັຣເສີນພຣະຜູ້ເປັນເຈົ້າເຖີດ

## 118 ເພງສັຣເສີນ ບົດທີນຶ່ງຮ້ອຍສິບແປດ

**ຄຳໂມທະນາເພາະຄວາມລອດຂອງພຣະເຈົ້າ**

A Song of Victory

1 ຈົ່ງໂມທະນາຂອບພຣະຄຸນພຣະຜູ້ເປັນເຈົ້າ ເພາະພຣະອົງປະເສີດ ເພາະຄວາມຮັກໝັ້ນຄົງຂອງພຣະອົງດຳ
ຣົງຢູ່ເປັນນິດ
2 ໃຫ້ອິສຣາເອນກ່າວເຖີດວ່າ, "ຄວາມຮັກໝັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ"
3 ໃຫ້ເຊື້ອສາຍອາໂຣນກ່າວເຖີດວ່າ, "ຄວາມຮັກໝັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ"
4 ໃຫ້ບັນດາຜູ້ທີ່ຢຳເກງພຣະເຈົ້າກ່າວເຖີດວ່າ, "ຄວາມຮັກໝັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ"
5 ຂ້າພະເຈົ້າໄດ້ຮ້ອງທູນພຣະຜູ້ເປັນເຈົ້າ ຈາກທີ່ຄັບແຄ້ນໃຈຂອງຂ້າພະເຈົ້າ ພຣະຜູ້ເປັນເຈົ້າຊົງຕອບຂ້າພະເຈົ້າ
ແລະປະທານຄວາມໂລ່ງໃຈແກ່ຂ້າພະເຈົ້າ
6 ມີພຣະຜູ້ເປັນເຈົ້າຢູ່ຝ່າຍຂ້າພະເຈົ້າ ຂ້າພະເຈົ້າຈະບໍ່ຢ້ານ ມະນຸດຄົນໃດໜໍຈະເຮັດອັນໃດແກ່ຂ້າພະເຈົ້າໄດ້
7 ພຣະຜູ້ເປັນເຈົ້າຊົງຢູ່ຝ່າຍຂ້າພະເຈົ້າ ເປັນຜູ້ຊົງຊ່ອຍຂ້າພະເຈົ້າ ຂ້າພະເຈົ້າໄດ້ເຫັນຄົນທີ່ກຽດຊັງຂ້າພະ
ເຈົ້າພ່າຍແພ້
8 ເຂົ້າລີ້ພັຍຢູ່ໃນພຣະຜູ້ເປັນເຈົ້າ ກໍດີກວ່າທີ່ຈະເຊື່ອໃຈໃນມະນຸດ
9 ເຂົ້າລີ້ພັຍຢູ່ໃນພຣະຜູ້ເປັນເຈົ້າ ກໍດີກວ່າທີ່ຈະເຊື່ອໃຈໃນເຈົ້ານາຍ
10 ປະຊາຊາດທັງຫລາຍໄດ້ລ້ອມຂ້າພະເຈົ້າ ຂ້າພະເຈົ້າທຳລາຍເຂົາອອກໃນພຣະນາມພຣະຜູ້ເປັນເຈົ້າ
11 ເຂົາທັງຫລາຍໄດ້ລ້ອມຂ້າພະເຈົ້າ ລ້ອມອ້ອມຂ້າພະເຈົ້າ ຂ້າພະເຈົ້າທຳລາຍເຂົາອອກໃນພຣະນາມພຣະຜູ້
ເປັນເຈົ້າ
12 ເຂົາໄດ້ລ້ອມຂ້າພະເຈົ້າເຫມືອນເຜີ້ງ ເຂົາທັງຫລາຍດັບເສັຽແລ້ວເຫມືອນແປວໄຟໜາມ ຂ້າພະເຈົ້າທຳລາຍ
ເຂົາອອກໃນ  ພຣະນາມພຣະຜູ້ເປັນເຈົ້າ
13 ຂ້າພະເຈົ້າຖືກໂຈມຕີຢ່າງໜັກ ຂ້າພະເຈົ້າກຳລັງຈະລົ້ມ ແຕ່ພຣະຜູ້ເປັນເຈົ້າຊົງຊ່ອຍຂ້າພະເຈົ້າ
14 ພຣະຜູ້ເປັນເຈົ້າຊົງເປັນກຳລັງ ແລະບົດເພງຂອງຂ້າພະເຈົ້າ ພຣະຜູ້ເປັນເຈົ້າຊົງເປັນຄວາມລອດຂອງຂ້າພະ
ເຈົ້າ
15 ຟັງເດີ ສຽງຍິນດີແລະໄຊໂຍ ໃນເຕັນຂອງຜູ້ຊອບທັມວ່າ, "ພຣະຫັດຂວາຂອງພຣະຜູ້ເປັນເຈົ້າຫ້າວຫານນັກ
16 ພຣະຫັດຂວາຂອງພຣະຜູ້ເປັນເຈົ້າ ເປັນທີ່ເຊີດຊູ ພຣະຫັດຂວາຂອງພຣະຜູ້ເປັນເຈົ້າມີອຳນາດຍິ່ງໃຫຍ່"
17 ຂ້າພະເຈົ້າບໍ່ຕາຍ ແຕ່ຂ້າພະເຈົ້າຈະເປັນຢູ່ ແລະປະກາດພຣະຣາຊກິດຂອງພຣະຜູ້ເປັນເຈົ້າ
18 ພຣະຜູ້ເປັນເຈົ້າຊົງຕີສອນຂ້າພະເຈົ້າຢ່າງໜັກ ແຕ່ພຣະອົງໄດ້ຊົງມອບຂ້າພະເຈົ້າໄວ້ກັບມັດຈຸຣາດ
19 ຂໍເປີດປະຕູຄວາມຊອບທັມໃຫ້ຂ້າພະເຈົ້າ ຂ້າພະເຈົ້າຈະເຂົ້າປະຕູນັ້ນໄປ ແລະຖວາຍໂມທະນາພຣະຄຸນພ
ຣະຜູ້ເປັນເຈົ້າ
20 ນີ້ຄືປະຕູຂອງພຣະເຈົ້າ ຄົນຊອບທັມຈະເຂົ້າໄປທາງນີ້
21 ຂ້າພຣະອົງໂມທະນາພຣະຄຸນພຣະອົງ ເພາະພຣະອົງຊົງຕອບຂ້າພຣະອົງ ແລະມາເປັນຄວາມລອດຂອງຂ້າພ
ຣະອົງ
22 ຫີນທີ່ນາຍຊ່າງໄດ້ປະຖິ້ມເສັຽ ຫີນນັ້ນແຫລະໄດ້ກາຍເປັນຫີນເສົາເອກແລ້ວ
23 ການນີ້ເປັນມາຈາກອົງພຣະຜູ້ເປັນເຈົ້າ ເປັນການປລາດແກ່ຕາຂອງເຮົາ
24 ນີ້ເປັນວັນຊຶ່ງພຣະເຈົ້າ ໄດ້ຊົງສ້າງໃຫ້ເຮົາຊົມຊື່ນແລະຍິນດີໃນວັນນັ້ນ
25 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຊ່ອຍຂ້າພຣະອົງໃຫ້ລອດເຖີດ ຂ້າແດ່ພຣະຜູ້ເປັນເຈົ້າຂໍປະທານຄວາມສຳເຣັດແກ່
ຂ້າພຣະອົງ  ທັງຫລາຍເຖີດ
26 ຂໍທ່ານຜູ້ເຂົ້າມາໃນພຣະນາມຂອງພຣະເຈົ້າ ຈົ່ງໄດ້ຮັບພຣະພອນ ຂ້າພະເຈົ້າທັງຫລາຍອວຍພອນທ່ານທັງ
ຫລາຍຈາກພຣະວິຫານຂອງພຣະຜູ້ເປັນເຈົ້າ

27 ພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າ ແລະພຣະປະທານຄວາມສະວ່າງແກ່ເຮົາ ຈົ່ງເລີ້ມສລອງເທສການດ້ວຍກິ່ງ
ໄມ້ໄປອ້ອມ ຮອບຂອງແທ່ນບູຊາ
28 ພຣະອົງຊົງເປັນພຣະເຈົ້າຂອງຂ້າພຣະອົງ ແລະຂ້າພຣະອົງຈະຖວາຍໂມທະນາແກ່ພຣະອົງ ພຣະອົງຊົງເປັນພ
ຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງຈະເຊີດຊູພຣະອົງ
29 ຈົ່ງໂມທະນາຂອບພຣະຄຸນພຣະຜູ້ເປັນເຈົ້າ ເພາະພຣະອົງປະເສີດ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳ
ຣົງຢູ່ເປັນນິດ

## 119 ເພງສັຣເສີນ ບົດທີນຶ່ງຮ້ອຍສິບເກົ້າ

### ການຈົ່ງຮັກພັກດີຕໍ່ພຣະທັມຂອງພຣະຜູ້ເປັນເຈົ້າ

The Glories of God's Law

1 ບັນດາຜູ້ທີ່ດີຮອບຄອບໃນທາງຂອງເຂົາກໍເປັນສຸກ ຄືຜູ້ທີ່ດຳເນີນຕາມພຣະທັມຂອງພຣະເຈົ້າ
2 ຜູ້ທີ່ຮັກສາບັນດາພຣະທັມຄຳສອນຂອງພຣະອົງກໍເປັນສຸກ ຄືຜູ້ທີ່ສແວງຫາພຣະອົງດ້ວຍສຸດໃຈ
3 ຜູ້ທີ່ບໍ່ທຳຜິດ ແຕ່ເດີນຕາມທາງຂອງພຣະອົງ
4 ພຣະອົງໄດ້ຕັ້ງຂໍ້ບັງຄັບຂອງພຣະອົງໄວ້ ໃຫ້ເຮົາທັງຫລາຍປະຕິບັດຕາມຢ່າງເຄັ່ງຄັດ
5 ໂອ ຂໍໃຫ້ທາງທັງຫລາຍຂອງຂ້າພຣະອົງຫມັ້ນຄົງໃນການຮັກສາກົດລະບຽບຂອງພຣະອົງ
6 ຂ້າພຣະອົງຈະບໍ່ໄດ້ຮັບຄວາມອັບອາຍ ຖ້າເອົາໃຈໃສ່ຕໍ່ພຣະບັນຍັດທັງສິ້ນຂອງພຣະອົງ
7 ຂ້າພຣະອົງຈະສັຣເສີນພຣະອົງດ້ວຍໃຈທ່ຽງຕົງ ເມື່ອຂ້າພຣະອົງຮຽນຮູ້ກົດຫມາຍອັນຊອບທັມຂອງພຣະອົງ
8 ຂ້າພຣະອົງຈະຖືກົດລະບຽບຂອງພຣະອົງ ຂໍຢ່າຊົງປະລະຂ້າພຣະອົງເລີຍເທາະ

### ການເຊື່ອຟັງພຣະບັນຍັດ

9 ຊາຍຫນຸ່ມຈະຮັກສາທາງຂອງຕົນໃຫ້ບໍຣິສຸດໄດ້ຢ່າງໃດ ໂດຍລະມັດລະວັງຕາມພຣະຄຳຂອງພຣະອົງ
10 ຂ້າພຣະອົງສແວງພຣະອົງດ້ວຍສຸດໃຈຂອງຂ້າພຣະອົງ ຂໍຢ່າໃຫ້ຂ້າພຣະອົງຫລົງໄປຈາກພຣະບັນຍັດຂອງ
ພຣະອົງ
11 ຂ້າພຣະອົງໄດ້ສະສົມພຣະດຳຣັດຂອງພຣະອົງໄວ້ໃນໃຈຂອງຂ້າພຣະອົງ ເພື່ອຂ້າພຣະອົງຈະບໍ່ທຳບາບຕໍ່ພຣະ
ອົງ
12 ຂ້າແດ່ພຣະເຈົ້າ ສາທຸການແດ່ພຣະອົງ ຂໍຊົງສອນກົດເກນຂອງພຣະອົງແກ່ຂ້າພຣະອົງ
13 ຂ້າພຣະອົງຈະປະກາດດ້ວຍຮີມຝີປາກຂອງຂ້າພຣະອົງ ເຖິງບັນດາກົດຫມາຍແຫ່ງພຣະໂອດຂອງພຣະອົງ
14 ຂ້າພຣະອົງປິຕິຍິນດີໃນທາງແຫ່ງບັນດາພຣະໂອວາດຂອງພຣະອົງຫລາຍເທົ່າກັບໃນຄວາມຮັ່ງມີທັງສິ້ນ
15 ຂ້າພຣະອົງຈະພາວະນາຂໍ້ບັງຄັບຂອງພຣະອົງ ແລະຈັບຕາຂອງຂ້າພຣະອົງຢູ່ທີ່ທາງທັງຫລາຍຂອງພຣະອົງ
16 ຂ້າພຣະອົງຈະປິຕິຍິນດີໃນກົດລະບຽບຂອງພຣະອົງ ຂ້າພຣະອົງຈະບໍ່ລືມພຣະຄຳຂອງພຣະອົງ

### ພົບຄວາມສຸກໃນພຣະບັນຍັດ

17 ຂໍຊົງໂຜດເມດຕາຜູ້ຮັບໃຊ້ຂອງພຣະອົງ ເພື່ອຂ້າພຣະອົງຈະມີຊີວິດ ແລະຈະຖືພຣະຄຳຂອງພຣະອົງ
18 ຂໍເປີດຕາຂ້າພຣະອົງ ເພື່ອຂ້າພຣະອົງຈະເຫັນສິ່ງມະຫັສຈັນຈາກພຣະທັມຂອງພຣະອົງ
19 ຂ້າພຣະອົງເປັນຄົນພະເນຈອນເທິງແຜ່ນດິນໂລກ ຂໍຢ່າຊົງເຊື່ອງພຣະບັນຍັດຂອງພຣະອົງຈາກຂ້າພຣະອົງເສັຽ
20 ຈິດໃຈຂອງຂ້າພຣະອົງກໍລະທົມທຸກດ້ວຍຄຳນຶງເຖິງກົດຫມາຍຂອງພຣະອົງຕລອດເວລາ
21 ພຣະອົງຊົງຂນາບຄົນຈອງຫອງ ສາບແຊ່ງຄົນບໍ່ເຊື່ອຟັງພຣະບັນຍັດຂອງພຣະອົງ
22 ຂໍຊົງນຳການດ່າ ແລະການປມາດໄປຈາກຂ້າພຣະອົງ ເພາະຂ້າພຣະອົງໄດ້ຮັກສາບັນດາພຣະໂອວາດຂອງ
ພຣະອົງ

23 ພວກຜູ້ປົກຄອງຮ່ວມໃຈກັນປອງຮ້າຍຂ້າພຣະອົງ ຜູ້ຮັບໃຊ້ຂອງພຣະອົງຈະພາວະນາກົດລະບຽບຂອງພຣະອົງ

24 ບັນດາພຣະໂອວາດຂອງພຣະອົງເປັນຄວາມປິຕິຍິນດີຂອງຂ້າພຣະອົງ ເປັນທີ່ປຶກສາຂອງຂ້າພຣະອົງ

**ຄວາມຕັ້ງໃຈເຊື່ອຟັງພຣະບັນຍັດ**

25 ຈິດໃຈຂອງຂ້າພຣະອົງຕິດພື້ງຂີ້ດິນ ຂໍຊົງສງວນຊີວິດຂອງຂ້າພຣະອົງຕາມພຣະຄຳຂອງພຣະອົງ

26 ຂ້າພຣະອົງໄດ້ທູນເຖິງທາງຂອງຂ້າພຣະອົງ ແລະພຣະອົງຊົງຕອບຂ້າພຣະອົງ ຂໍຊົງສອນກົດລະບຽບຂອງພຣະອົງແກ່ຂ້າພຣະອົງ

27 ຂໍຊົງກະທຳໃຫ້ຂ້າພຣະອົງເຂົ້າໃຈທາງຂໍ້ບັງຄັບຂອງພຣະອົງ ແລະຂ້າພຣະອົງຈະພາວະນາເຖິງພຣະຣາຊກິດມະຫັສຈັນຂອງພຣະອົງ

28 ຈິດໃຈຂອງຂ້າພຣະອົງອິດອ່ອນຍ້ອນຄວາມໂສກເສົ້າ ຂໍຊົງໃຫ້ກຳລັງຂ້າພຣະອົງຕາມພຣະຄຳຂອງພຣະອົງ

29 ຂໍຊົງໃຫ້ທາງແປກປອມໄກຈາກຂ້າພຣະອົງ ແລະຂໍໂຜດປະທານພຣະທັມຂອງພຣະອົງແກ່ຂ້າພຣະອົງ

30 ຂ້າພຣະອົງໄດ້ເລືອກທາງຄວາມສັດຊື່ ຂ້າພຣະອົງຕັ້ງກົດຫມາຍຂອງພຣະອົງໄວ້ຊື່ຫນ້າຂ້າພຣະອົງ

31 ຂ້າພຣະອົງຜູກພັນຢູ່ກັບບັນດາພຣະໂອວາດຂອງພຣະອົງ ຂ້າແດ່ພຣະເຈົ້າຂໍຢ່າໃຫ້ຂ້າພຣະອົງຂາຍຫນ້າ

32 ຂ້າພຣະອົງຈະແລ່ນໃນທາງພຣະບັນຍັດຂອງພຣະອົງ ເມື່ອພຣະອົງຊົງຂຍາຍຄວາມເຂົ້າໃຈຂອງຂ້າພຣະອົງ

**ຄຳອ້ອນວອນຂໍຄວາມເຂົ້າໃຈ**

33 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງສອນທາງກົດລະບຽບແກ່ຂ້າພຣະອົງ ແລະຂ້າພຣະອົງຈະຮັກສາທາງນັ້ນໄວ້ຈົນສຸດປາຍ

34 ຂໍປະທານຄວາມເຂົ້າໃຈແກ່ຂ້າພຣະອົງ ເພື່ອຂ້າພຣະອົງຈະຮັກສາພຣະທັມຂອງພຣະອົງໄວ້ ແລະປະຕິບັດດ້ວຍສຸດໃຈຂອງຂ້າພຣະອົງ

35 ຂໍໂຜດໃຫ້ຂ້າພຣະອົງໄປໃນທາງພຣະບັນຍັດຂອງພຣະອົງ ເພາະຂ້າພຣະອົງຍິນດີໃນທາງນັ້ນ

36 ຂໍຊົງໂນ້ມໃຈຂ້າພຣະອົງໃນບັນດາພຣະໂອວາດຂອງພຣະອົງ ແລະບໍ່ແມ່ນໃນທາງໂລບກຳໄລ

37 ຂໍຊົງຫັນຕາຂອງຂ້າພຣະອົງໄປຈາກການຫລຽວເບິ່ງສິ່ງອະນິຈັງ ແລະຂໍຊົງສງວນຊີວິດຂອງຂ້າພຣະອົງໃນທາງຂອງພຣະອົງ

38 ຂໍຊົງຢືນຢັນພຣະສັນຍາຂອງພຣະອົງກັບຜູ້ຮັບໃຊ້ຂອງພຣະອົງ ເພື່ອໃຫ້ຢ້ານກົວພຣະອົງ

39 ຂໍຊົງຊ່ອຍໃຫ້ພົ້ນຈາກການເຍາະເຍີ້ຍ ຊຶ່ງຂ້າພຣະອົງຢ້ານກົວນັ້ນໄປເສັຽ ເພາະກົດຫມາຍຂອງພຣະອົງນັ້ນດີ

40 ເບິ່ງແມ, ຂ້າພຣະອົງຄຳນຶງເຖິງຂໍ້ບັງຄັບຂອງພຣະອົງໂດຍຄວາມຊອບທັມຂອງພຣະອົງ ຂໍຊົງສງວນຊີວິດຂອງຂ້າພຣະອົງ

**ຄວາມໄວ້ວາງໃຈໃນພຣະບັນຍັດ**

41 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຄວາມຮັກອັນຫມັ້ນຄົງຂອງພຣະອົງມາເຖິງຂ້າພຣະອົງ ຄືຄວາມລອດຂອງພຣະອົງຕາມພຣະສັນຍາຂອງພຣະອົງ

42 ແລ້ວຂ້າພຣະອົງຈະມີຄຳຕອບແກ່ຜູ້ທີ່ເຍາະເຍີ້ຍຂ້າພຣະອົງ ເພາະຂ້າພຣະອົງວາງໃຈໃນພຣະຄຳຂອງພຣະອົງ

43 ຂໍຢ່າຊົງນຳພຣະຄຳແຫ່ງຄວາມຈິງອອກໄປຈາກປາກຂ້າພຣະອົງ ເພາະຄວາມຫວັງຂອງຂ້າພຣະອົງຢູ່ໃນກົດຫມາຍຂອງພຣະອົງ

44 ຂ້າພຣະອົງຈະປະຕິບັດພຣະທັມຂອງພຣະອົງສືບໆໄປເປັນນິດ

45 ແລະຂ້າພຣະອົງຈະເດີນຢ່າງເສຣີ ເພາະຂ້າພຣະອົງໄດ້ສແວງຂໍ້ບັງຄັບຂອງພຣະອົງ

46 ຂ້າພຣະອົງຈະເວົ້າເຖິງພຣະໂອວາດຂອງພຣະອົງຕໍ່ເບື້ອງພຣະພັກບັນດາພຣະຣາຊາແລະຈະບໍ່ຂາຍຫນ້າ

47 ເພາະຂ້າພຣະອົງປິຕິຍິນດີໃນພຣະບັນຍັດຂອງພຣະອົງຊຶ່ງຂ້າພຣະອົງຮັກ

48 ຂ້າພຣະອົງໂຄຣົບພຣະບັນຍັດຂອງພຣະອົງຊຶ່ງຂ້າພຣະອົງຮັກ ແລະຂ້າພຣະອົງຈະພາວະນາກົດລະບຽບຂອງພຣະອົງ

**ຄວາມເຊື່ອໝັ້ນໃນພຣະບັນຍັດ**

49 ຂໍຊົງລະນຶກເຖິງພຣະວັຈນະຂອງພຣະອົງທີ່ມີຕໍ່ຜູ້ຮັບໃຊ້ຂອງພຣະອົງ ຊຶ່ງພຣະອົງຊົງກະທຳໃຫ້ຂ້າພຣະອົງຫວັງຢູ່ນັ້ນ

50 ນີ້ຄືການເລົ້າໂລມໃນຄວາມທຸກຍາກຂອງຂ້າພຣະອົງ ຄືພຣະສັນຍາຂອງພຣະອົງໃຫ້ຊີວິດແກ່ຂ້າພຣະອົງ

51 ຄົນຈອງຫອງຫຍໍ້ຫຍັນຂ້າພຣະອົງສເມີມາ ແຕ່ຂ້າພຣະອົງບໍ່ໄດ້ຫັນໜີຈາກພຣະທັມຂອງພຣະອົງ

52 ເມື່ອຂ້າພຣະອົງຄິດເຖິງກົດໝາຍຂອງພຣະອົງແຕ່ບູຮານນະການ ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງໄດ້ຮັບຄວາມເລົ້າໂລມໃຈ

53 ເມື່ອເຫັນຄົນອະທັມຝ່າຝືນພຣະບັນຍັດຂອງພຣະອົງ ຂ້າພຣະອົງກໍເຕັມໄປດ້ວຍຄວາມໂກດຮ້າຍ

54 ກົດລະບຽບຂອງພຣະອົງໄດ້ເປັນບົດເພງຂອງຂ້າພຣະອົງ ໃນເຮືອນທີ່ຂ້າພຣະອົງອາສັຍຢູ່ນັ້ນ

55 ຂ້າແດ່ພຣະຜູ້ເປັນເຈົ້າ ໃນກາງຄືນ ຂ້າພຣະອົງລະນຶກເຖິງພຣະນາມຂອງພຣະອົງ ແລະປະຕິບັດຕາມພຣະທັມຂອງພຣະອົງ

56 ພຣະພອນນີ້ໄດ້ຕົກມາຍັງຂ້າພຣະອົງ ຄືທີ່ຂ້າພຣະອົງຮັກສາຂໍ້ບັງຄັບຂອງພຣະອົງໄວ້

**ການອຸທິດຕົນແກ່ພຣະບັນຍັດ**

57 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເປັນທຸກສິ່ງຂອງຂ້າພຣະອົງ ຂ້າພຣະອົງຂໍສັນຍາວ່າຈະເຊື່ອຟັງກົດຂໍ້ບັນຍັດຂອງພຣະອົງ

58 ຂ້າພຣະອົງທູນຂໍຕໍ່ພຣະອົງ ດ້ວຍສຸດອົກສຸດໃຈຂອງຂ້າພຣະອົງ ຂໍຊົງໂຜດເມດຕາກະຣຸນາຕໍ່ຂ້າພຣະອົງຕາມທີ່ພຣະອົງຊົງສັນຍາໄວ້ເທີນ

59 ຂ້າພຣະອົງໄດ້ພິຈາຣະນາການດຳເນີນຊີວິດຂອງຂ້າພຣະອົງແລ້ວ ແລະສັນຍາວ່າຈະເຮັດຕາມກົດລະບຽບຂອງພຣະອົງ

60 ຂ້າພຣະອົງເຊື່ອຟັງຄຳສັ່ງຂອງພຣະອົງ ໂດຍບໍ່ໄດ້ລໍຊ້າ

61 ຄົນຊົ່ວຮ້າຍໄດ້ມັດຮອບຂ້າພຣະອົງໄວ້ ແຕ່ວ່າຂ້າພຣະອົງບໍ່ໄດ້ລືມພຣະທັມຂອງພຣະອົງ

62 ໃນຕອນກາງຄືນຂ້າພຣະອົງລຸກຂຶ້ນສັຣເສີນພຣະອົງ ຍ້ອນການຕັດສິນອັນຍຸດຕິທັມຂອງພຣະອົງ

63 ຂ້າພຣະອົງເປັນເພື່ອນກັບທຸກໆຄົນທີ່ຮັບໃຊ້ພຣະອົງ ແລະທຸກໆຄົນທີ່ເຊື່ອຟັງກົດຂໍ້ບັນຍັດຂອງພຣະອົງ

64 ຂ້າແດ່ພຣະຜູ້ເປັນເຈົ້າ ໂລກນີ້ເຕັມໄປດ້ວຍຄວາມຮັກອັນໝັ້ນຄົງຂອງພຣະອົງ ຂໍຊົງສັ່ງສອນກົດຂໍ້ບັນຍັດຂອງພຣະອົງແກ່ຂ້າພຣະອົງດ້ວຍ

**ຄຸນຄ່າຂອງພຣະທັມ**

65 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຮັກສາຄຳສັນຍາຂອງພຣະອົງ ແລະພຣະອົງກໍຊົງດີຕໍ່ຂ້າພຣະອົງຜູ້ຮັບໃຊ້ພຣະອົງ

66 ຂໍພຣະອົງຊົງປະກາດຄວາມຮູ້ ແລະຄວາມສລາດຫລັກແຫລມແກ່ຂ້າພຣະອົງດ້ວຍ ເພາະຂ້າພຣະອົງເຊື່ອຖືໃນກົດບັນຍັດຂອງພຣະອົງ

67 ກ່ອນທີ່ພຣະອົງຊົງລົງໂທດຂ້າພຣະອົງນັ້ນ ກໍເພາະວ່າຂ້າພຣະອົງເຄີຍທຳຜິດ ແຕ່ດຽວນີ້ຂ້າພຣະອົງເຊື່ອຟັງພຣະທັມຂອງພຣະອົງ

68 ພຣະອົງຊົງດີ ແລະເມດຕາກະຣຸນາ ຂໍພຣະອົງຊົງສັ່ງສອນກົດບັນຍັດຂອງພຣະອົງແກ່ຂ້າພຣະອົງດ້ວຍ

69 ຄົນຈອງຫອງໄດ້ຫາເຣື່ອງໃສ່ຂ້າພຣະອົງ ແຕ່ຂ້າພຣະອົງເຊື່ອຟັງກົດລະບຽບຂອງພຣະອົງຢ່າງສຸດອົກສຸດໃຈ

70 ຄົນເຫລົ່ານີ້ບໍ່ມີຄວາມເຂົ້າໃຈຢ່າງໃດເລີຍ ແຕ່ຂ້າພຣະອົງໄດ້ພົບຄວາມຍິນດີໃນພຣະທັມຂອງພຣະອົງ

71 ການລົງໂທດຂ້າພຣະອົງເປັນການດີສຳລັບຂ້າພຣະອົງ ເພາະວ່າມັນເຮັດໃຫ້ຂ້າພຣະອົງຮຽນຮູ້ເຖິງຂໍ້ຄຳສັ່ງຂອງພຣະອົງ

72 ພຣະທັມທີ່ພຣະອົງຊົງປະທານໃຫ້ນັ້ນມີຄວາມຫມາຍສຳລັບຂ້າພຣະອົງຫລາຍກວ່າເງິນ ແລະຄຳຫລາຍພັນແທ່ງ

**ຄວາມຊອບທັມແຫ່ງພຣະບັນຍັດ**

73 ພຣະຫັດຂອງພຣະອົງໄດ້ສ້າງແລະສະຖາປະນາຂ້າພຣະອົງ ຂໍປະທານຄວາມເຂົ້າໃຈແກ່ຂ້າພຣະອົງເພື່ອຂ້າພຣະອົງຈະຮຽນຮູ້ພຣະບັນຍັດຂອງພຣະອົງ

74 ບັນດາຜູ້ຢ້ານຢຳພຣະອົງຈະເຫັນຂ້າພຣະອົງແລະຍິນດີ ເພາະວ່າຂ້າພຣະອົງໄດ້ຫວັງໃນພຣະຄຳຂອງພຣະອົງ

75 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຮູ້ວ່າ ການພິພາກສາຂອງພຣະອົງນັ້ນຖືກຕ້ອງ ແລະຮູ້ວ່າດ້ວຍຄວາມຊື່ສັດພຣະອົງຊົງໃຫ້ຂ້າພຣະອົງທຸກຍາກ

76 ຂໍຄວາມຮັກອັນຫມັ້ນຄົງຂອງພຣະອົງເປັນທີ່ເລົ້າໂລມຂ້າພຣະອົງ ຕາມພຣະດຳຣັດຂອງພຣະອົງທີ່ມີແກ່ຜູ້ຮັບໃຊ້ຂອງພຣະອົງ

77 ຂໍພຣະກະຣຸນາຂອງພຣະອົງມາຍັງຂ້າພຣະອົງ ເພື່ອຂ້າພຣະອົງຈະມີຊີວິດຢູ່ ເພາະພຣະທັມຂອງພຣະອົງເປັນຄວາມປິຕິຍິນດີຂອງຂ້າພຣະອົງ

78 ຂໍຊົງໃຫ້ຄົນຈອງຫອງໄດ້ຮັບຄວາມອັບອາຍ ເພາະວ່າເຂົາໄດ້ຫາເຣື່ອງຂ້າພຣະອົງດ້ວຍຄວາມບໍ່ຈິງ ຝ່າຍຂ້າພຣະອົງ ຂ້າພຣະອົງຈະພາວະນາຂໍ້ບັງຄັບຂອງພຣະອົງ

79 ຂໍໃຫ້ບັນດາຜູ້ທີ່ຢຳເກງພຣະອົງຫັນກັບມາຫາຂ້າພຣະອົງ ເພື່ອເຂົາຈະຮູ້ເຖິງບັນດາພຣະໂອວາດຂອງພຣະອົງ

80 ຂໍໃຫ້ຈິດໃຈຂ້າພຣະອົງໄຮ້ຕຳຫນິໃນເຣື່ອງກົດລະບຽບຂອງພຣະອົງ ເພື່ອຂ້າພຣະອົງຈະບໍ່ຕ້ອງຂາຍຫນ້າ

**ຄຳອ້ອນວອນຂໍໃຫ້ຖືກປົດປ່ອຍ**

81 ຈິດໃຈຂອງຂ້າພຣະອົງອິດອ່ອນຄອຍຄວາມລອດຂອງພຣະອົງ ຂ້າພຣະອົງຫວັງໃນພຣະວັຈນະຂອງພຣະອົງ

82 ຕາຂອງຂ້າພຣະອົງມົວມືດໄປ ດ້ວຍຄອຍພຣະດຳຣັດຂອງພຣະອົງ ຂ້າພຣະອົງທູນຖາມວ່າ, “ເມື່ອໃດພຣະອົງຈະຊົງເລົ້າໂລມຂ້າພຣະອົງ”

83 ເພາະວ່າຂ້າພຣະອົງເປັນເຫມືອນຖົງຫນັງເຫລົ້າອະງຸ່ນໄຮ້ຄ່າ ແຕ່ຂ້າພຣະອົງຍັງບໍ່ລືມກົດລະບຽບຂອງພຣະອົງ

84 ຜູ້ຮັບໃຊ້ຂອງພຣະອົງຕ້ອງທົນຢູ່ດົນປານໃດ? ເມື່ອໃດພຣະອົງຈະຊົງກະທຳການພິພາກສາບັນດາຜູ້ຂົ່ມເຫັງຂ້າພຣະອົງ?

85 ຄົນຈອງຫອງໄດ້ຂຸດຂຸມເພື່ອຈະດັກຈັບຂ້າພຣະອົງ ຊຶ່ງບໍ່ສອດຄ່ອງກັບພຣະທັມຂອງພຣະອົງ

86 ພຣະບັນຍັດຂອງພຣະອົງທັງສິ້ນແນ່ນອນ ເຂົາຂົ່ມເຫັງຂ້າພຣະອົງດ້ວຍຄວາມບໍ່ຈິງ ຂໍຊົງຊ່ອຍຂ້າພຣະອົງດ້ວຍ

87 ເຂົາເກືອບຈະທຳໃຫ້ຂ້າພຣະອົງດັບຊີວິດໄປຈາກແຜ່ນດິນໂລກ ແຕ່ຂ້າພຣະອົງບໍ່ປະຖິ້ມຂໍ້ບັງຄັບຂອງພຣະອົງ

88 ຂໍຊົງສງວນຊີວິດຂ້າພຣະອົງໄວ້ດ້ວຍຄວາມຮັກອັນຫມັ້ນຄົງຂອງພຣະອົງ ເພື່ອຂ້າພຣະອົງຈະປະຕິບັດຕາມພຣະໂອວາດແຫ່ງພຣະໂອດຂອງພຣະອົງ

**ການເຊື່ອພຣະທັມພຣະຜູ້ເປັນເຈົ້າ**

89 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະທັມຂອງພຣະອົງຊົງມີຢູ່ຕລອດໄປ ແລະຊົງຫມັ້ນຄົງຢູ່ໃນຟ້າສວັນ

90 ຄວາມສັດຈິງຂອງພຣະອົງຊົງດຳຣົງຢູ່ທຸກຍຸກທຸກສມັຍ ພຣະອົງຊົງຕັ້ງໂລກນີ້ໄວ້ໃນບ່ອນຂອງມັນ ແລະມັນກໍຍັງຕັ້ງຢູ່

91 ຍ້ອນຂໍ້ຄຳສັ່ງຂອງພຣະອົງທຸກສິ່ງກໍຍັງຕັ້ງຫມັ້ນຄົງຢູ່ຈົນເຖິງວັນນີ້ ເພາະທຸກສິ່ງນີ້ເປັນທາດໃຊ້ຂອງພຣະອົງ

92 ຖ້າວ່າພຣະທັຍຂອງພຣະອົງບໍ່ເປັນບໍ່ເກີດແຫ່ງຄວາມຍິນດີຂອງຂ້າພຣະອົງແລ້ວ ຂ້າພຣະອົງຈະຕ້ອງຕາຍຍ້ອນການລົງໂທດນີ້

93 ຂ້າພຣະອົງຈະບໍ່ລະເລີຍຕໍ່ກົດລະບຽບຂອງພຣະອົງຈັກເທື່ອ ເພາະຍ້ອນສິ່ງເຫລົ່ານີ້ພຣະອົງໄດ້ຊ່ອຍໃຫ້ຂ້າພຣະອົງມີຊີວິດຢູ່

94 ຂ້າພຣະອົງເປັນຄົນຂອງພຣະອົງ ຂໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນພັຍດ້ວຍ ຂ້າພຣະອົງເຄີຍພຍາຍາມເຮັດຕາມຂໍ້ຄໍາສັ່ງຂອງພຣະອົງ

95 ຄົນຊົ່ວຮ້າຍຄອຍຖ້າສັງຫານຂ້າພຣະອົງ ແຕ່ຂ້າພຣະອົງໄດ້ຍຶດໝັ້ນໃນກົດຂໍ້ບັນຍັດຂອງພຣະອົງ

96 ຂ້າພຣະອົງໄດ້ຮູ້ວ່າບໍ່ມີສິ່ງໃດດີໝົດທຸກຢ່າງ ແຕ່ວ່າຂໍ້ຄໍາສັ່ງຂອງພຣະອົງບໍ່ມີຂອບເຂດຈໍາກັດ

**ຄວາມຮັກພຣະທັມຂອງພຣະຜູ້ເປັນເຈົ້າ**

97 ຂ້າພຣະອົງຮັກພຣະທັມຂອງພຣະອົງທີ່ສຸດ ຂ້າພຣະອົງຄິດເຖິງພຣະທັມນີ້ຕລອດເວລາ

98 ຂ້າພຣະອົງຍຶດຖືຄໍາສັ່ງຂອງພຣະອົງຕລອດເວລາ ແລະເຮັດໃຫ້ຂ້າພຣະອົງສລາດກວ່າສັດຕຣູທັງຫລາຍ

99 ຂ້າພຣະອົງເຂົ້າໃຈຫລາຍກວ່າຄຣູສອນທັງຫລາຍຂອງຂ້າພຣະອົງ ເພາະຂ້າພຣະອົງຄິດເຖິງຄໍາສອນຂອງພຣະອົງ

100 ຂ້າພຣະອົງມີຄວາມສລາດຫລັກແຫລມກວ່າພວກຜູ້ເຖົ້າ ເພາະຂ້າພຣະອົງເຊື່ອຟັງຄໍາສັ່ງສອນຂອງພຣະອົງ

101 ຂ້າພຣະອົງໄດ້ຫລີກໜີຈາກການດໍາເນີນໃນທາງຊົ່ວທຸກຢ່າງ ເພາະຂ້າພຣະອົງຕ້ອງການເຊື່ອຟັງພຣະທັມຂອງພຣະອົງ

102 ຂ້າພຣະອົງບໍ່ໄດ້ລະເລີຍຕໍ່ຄໍາສອນຂອງພຣະອົງ ເພາະວ່າພຣະອົງເອງຊົງເປັນຜູ້ສັ່ງສອນຂ້າພຣະອົງ

103 ຄວາມເວົ້າຂອງພຣະອົງຫວານເໜືອກວ່ານໍ້າເຜິ້ງ

104 ຂ້າພຣະອົງໄດ້ຮັບຄວາມສລາດຫລັກແຫລມຈາກກົດຂໍ້ບັນຍັດຂອງພຣະອົງ ດັ່ງນັ້ນຂ້າພຣະອົງຈຶ່ງກຽດຊັງການດໍາເນີນໃນທາງຊົ່ວທຸກຢ່າງ

**ແສງສວ່າງຈາກພຣະທັມພຣະຜູ້ເປັນເຈົ້າ**

105 ພຣະທັມຂອງພຣະອົງເປັນເໝືອນຕະກຽງສ່ອງແສງນໍາໜ້າຂ້າພຣະອົງ ແລະເປັນແຈ້ງເຍືອງທີນທາງໃຫ້ຂ້າພຣະອົງ

106 ຂ້າພຣະອົງຈະຮັກສາຄໍາໝັ້ນສັນຍາອັນໝັ້ນຄົງຂອງຂ້າພຣະອົງໄວ້ ເພື່ອເຊື່ອຟັງຄໍາສອນອັນແທ້ຈິງຂອງພຣະອົງ

107 ຂ້າແດ່ພຣະຜູ້ເປັນເຈົ້າ ຄວາມທຸກທໍຣະມານຂອງຂ້າພຣະອົງແສນສາຫັດທີ່ສຸດ ຂໍຊົງໂຜດໃຫ້ຂ້າພຣະອົງມີຊີວິດຢູ່ຕໍ່ໄປຕາມທີ່ພຣະອົງຊົງສັນຍາໄວ້

108 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຮັບເອົາຄວາມອ້ອນວອນຂອບພຣະຄຸນຈາກຂ້າພຣະອົງ ແລະສັ່ງສອນຂໍ້ຄໍາສັ່ງຂອງພຣະອົງໃຫ້ແກ່ຂ້າພຣະອົງ

109 ຂ້າພຣະອົງພ້ອມສເມີທີ່ຈະສ່ຽງຊີວິດ ແຕ່ຈະບໍ່ລືມພຣະທັມຂອງພຣະອົງ

110 ຄົນຊົ່ວຮ້າຍຫ້າງແຮ້ວໃສ່ຂ້າພຣະອົງ ແຕ່ວ່າຂ້າພຣະອົງບໍ່ໄດ້ລະເມີດຂໍ້ຄໍາສັ່ງຂອງພຣະອົງ

111 ກົດຂໍ້ຄໍາສັ່ງຂອງພຣະອົງເປັນສົມບັດຂອງຂ້າພຣະອົງຕລອດໄປ ແລະສ້າງຄວາມພາກພູມໃຈແກ່ຂ້າພຣະອົງ

112 ຂ້າພຣະອົງໄດ້ຕັດສິນໃຈເຊື່ອຟັງກົດລະບຽບຂອງພຣະອົງຈົນເຖິງວັນຕາຍຂອງຂ້າພຣະອົງ

**ຄວາມປອດພັຍໃນພຣະບັນຍັດ**

113 ຂ້າພຣະອົງກຽດຊັງຄົນສອງໃຈ ແຕ່ຂ້າພຣະອົງຮັກພຣະທັມຂອງພຣະອົງ

114 ພຣະອົງຊົງເປັນທີ່ລີ້ພັຍ ແລະເປັນໂລ່ຂອງຂ້າພຣະອົງ ຂ້າພຣະອົງຫວັງໃນພຣະຄໍາຂອງພຣະອົງ

115 ເຈົ້າຄົນຊົ່ວຮ້າຍເອີຍ! ໜີໄປເສັຽຈາກເຮົາ ເພື່ອເຮົາຈະຮັກສາພຣະບັນຍັດຂອງພຣະເຈົ້າຂອງເຮົາ

116 ຂໍຊົງປະຄອງຂ້າພຣະອົງໄວ້ຕາມພຣະດໍາຣັດຂອງພຣະອົງ ເພື່ອຂ້າພຣະອົງຈະມີຊີວິດຢູ່ ແລະຢ່າໃຫ້ຂ້າພຣະອົງຂາຍໜ້າໃນຄວາມຫວັງຂອງຂ້າພຣະອົງ

117 ຂໍຊົງຊູຂ້າພຣະອົງຂຶ້ນ ເພື່ອຂ້າພຣະອົງຈະປອດພັຍ ແລະມີຄວາມນັບຖືກົດລະບຽບຂອງພຣະອົງສືບໆໄປ
118 ພຣະອົງຊົງຂັບໄລ່ບັນດາຄົນທີ່ບໍ່ເຊື່ອຟັງພຣະບັນຍັດຂອງພຣະອົງ ແຜນການຫລອກລວງຂອງເຂົາກໍໄຮ້ປໂຍດ
119 ພຣະອົງຊົງຖິ້ມບັນດາຄົນອະທັມຂອງແຜ່ນດິນໂລກເຫມືອນຖິ້ມຂີ້ເຫຍື່ອ ເພາະສະນັ້ນຂ້າພຣະອົງຮັກບັນດາພຣະໂອວາດຂອງພຣະອົງ
120 ເນື້ອຫນັງຂ້າພຣະອົງສັ່ນເຊັນຍ້ອນຢ້ານຢຳພຣະອົງ ແລະຂ້າພຣະອົງຢ້ານຄຳພິພາກສາຂອງພຣະອົງ

**ຄວາມເຊື່ອຟັງຕໍ່ພຣະບັນຍັດ**

121 ຂ້າພຣະອົງໄດ້ກະທຳສິ່ງທີ່ຍຸດຕິທັມແລະຖືກຕ້ອງ ຂໍຢ່າຊົງປະລະຂ້າພຣະອົງແກ່ຜູ້ທີ່ບີບບັງຄັບຂ້າພຣະອົງ
122 ຂໍຊົງສັນຍາເພື່ອຊ່ອຍຜູ້ຮັບໃຊ້ຂອງພຣະອົງ ຂໍຢ່າຊົງໃຫ້ຄົນຈອງຫອງບີບບັງຄັບຂ້າພຣະອົງ
123 ຕາຂອງຂ້າພຣະອົງມົວມິດໄປດ້ວຍຄອຍຄວາມລອດຂອງພຣະອົງ ແລະຄອຍພຣະດຳຣັດຊອບທັມຂອງພຣະອົງສຳເຣັດ
124 ຂໍຊົງກະທຳແກ່ຜູ້ຮັບໃຊ້ຂອງພຣະອົງຕາມຄວາມຮັກຫມັ້ນຄົງຂອງພຣະອົງ ແລະຂໍຊົງສອນກົດຂໍ້ຄຳສັ່ງຂອງພຣະອົງແກ່ຂ້າພຣະອົງ
125 ຂ້າພຣະອົງເປັນຜູ້ຮັບໃຊ້ຂອງພຣະອົງ ຂໍປະທານຄວາມເຂົ້າໃຈແກ່ຂ້າພຣະອົງ ເພື່ອຂ້າພຣະອົງຈະຮູ້ເຖິງບັນດາພຣະໂອວາດຂອງພຣະອົງ
126 ເປັນວລາທີ່ພຣະເຈົ້າຄວນຊົງຈັດການ ເພາະເຂົາຫັກພຣະທັມຂອງພຣະອົງ
127 ເພາະສະນັ້ນຂ້າພຣະອົງຮັກພຣະບັນຍັດຂອງພຣະອົງ ຍິ່ງກວ່າທອງຄຳ ຍິ່ງກວ່າທອງຄຳນົພຄຸນ
128 ເພາະສະນັ້ນຂ້າພຣະອົງໃຊ້ຂໍ້ບັງຄັບຂອງພຣະອົງທັງສິ້ນນຳທາງຢ່າງຂອງຂ້າພຣະອົງ ຂ້າພຣະອົງກຽດຊັງຄວາມປະພຶດທຸດຈະຣິດທຸກທາງ

**ຄວາມປະສົງໃນການເຊື່ອຟັງພຣະທັມຂອງພຣະຜູ້ເປັນເຈົ້າ**

129 ການສັ່ງສອນຂອງພຣະເຈົ້າຊົງອັສຈັນ ຂ້າພຣະອົງເຊື່ອຟັງຄຳສອນເຫລົ່ານັ້ນຢ່າງສຸດອົກສຸດໃຈ
130 ຄຳສອນຂອງພຣະອົງໃຫ້ແສງສະວ່າງ ແລະນຳຄວາມສລຽວສລາດມາໃຫ້ຜູ້ທີ່ບໍ່ມີປະສົບການ
131 ຂ້າພຣະອົງຫິວກະຫາຍຂໍ້ຄຳສັ່ງຂອງພຣະອົງ
132 ຂໍພຣະອົງຊົງຫລິງເບິ່ງຂ້າພຣະອົງ ແລະຊົງເມດຕາກະຣຸນາຂ້າພຣະອົງດັ່ງທີ່ພຣະອົງຊົງກະທຳຕໍ່ຜູ້ທີ່ຮັກພຣະອົງ
133 ຂໍຊົງຮັກສາຂ້າພຣະອົງໃຫ້ພົ້ນຈາກການຈິບຫາຍດັ່ງທີ່ພຣະອົງຊົງສັນຍາໄວ້ ຂໍຢ່າຊົງປ່ອຍໃຫ້ຄວາມຊົ່ວຊະນະຂ້າພຣະອົງ
134 ຂໍພຣະອົງຊົງຊ່ອຍໃຫ້ຂ້າພຣະອົງໃຫ້ພົ້ນຈາກຜູ້ທີ່ຂົ່ມເຫັງ ເພື່ອວ່າຂ້າພຣະອົງຈະເຊື່ອຟັງຂໍ້ຄຳສັ່ງຂອງພຣະອົງ
135 ຂໍພຣະອົງຊົງອວຍພອນໂດຍການຊົງສະຖິດຢູ່ນຳຂ້າພຣະອົງ ແລະຊົງສອນຂ້າພຣະອົງໃຫ້ຮູ້ຈັກກົດຂໍ້ບັນຍັດຂອງພຣະອົງ
136 ນ້ຳຕາຂອງຂ້າພຣະອົງຫລັ່ງໄຫລອອກມາດັ່ງສາຍນ້ຳ ຍ້ອນມະນຸດບໍ່ເຊື່ອຟັງພຣະທັມຂອງພຣະອົງ

**ຄວາມຍຸດຕິທັມຂອງພຣະທັມ**

137 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຍຸດຕິທັມ ແລະພຣະທັມຂອງພຣະອົງຊົງຖືກຕ້ອງແລະທ່ຽງທັມ
138 ກົດລະບຽບທີ່ພຣະອົງຊົງປະທານໃຫ້ນັ້ນມີຄວາມສັດຈິງທີ່ສຸດ
139 ຄວາມຮ້າຍຂອງຂ້າພຣະອົງໄດ້ລຸກໄຫມ້ຂຶ້ນເຫມືອນດັ່ງໄຟ ເພາະວ່າສັດຕຣູຂອງຂ້າພຣະອົງບໍ່ໄດ້ຄຶດເຖິງຂໍ້ຄຳສັ່ງຂອງ ພຣະອົງ
140 ຄຳສັນຍາຂອງພຣະອົງຊົງຫມັ້ນຄົງ ຜູ້ຮັບໃຊ້ຂອງພຣະອົງຮັກຄຳສັນຍານີ້ຫລາຍ
141 ຂ້າພຣະອົງເປັນຄົນບໍ່ສຳຄັນແລະຫນ້າລັງກຽດ ແຕ່ຂ້າພຣະອົງບໍ່ໄດ້ລະເລີຍຕໍ່ກົດລະບຽບຂອງພຣະອົງ

142 ຄວາມຍຸດຕິທັມຂອງພຣະອົງຊົງເປັນຢູ່ຕລອດໄປ ແລະພຣະທັມຂອງພຣະອົງຊົງເປັນຈິງສເມີ
143 ຂ້າພຣະອົງເຕັມໄປດ້ວຍຄວາມທຸກລຳບາກ ແລະຄວາມໂສກເສົ້າ ແຕ່ວ່າກົດຂໍ້ຄຳສັ່ງຂອງພຣະອົງໄດ້ນຳເອົາຄວາມຍິນດີມາສູ່ຂ້າພຣະອົງ
144 ຄຳສອນຂອງພຣະອົງມີຄວາມຈິງຕລອດໄປ ຊຶ່ງທຳໃຫ້ຂ້າພຣະອົງເຂົ້າໃຈແລະມີຊີວິດຢູ່
145 ຂ້າພຣະອົງຮ້ອງທູນດ້ວຍຄວາມສິ້ນສຸດໃຈຂອງຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າຂໍຊົງຕອບຂ້າພຣະອົງ ຂ້າພຣະອົງຈະຮັກສາກົດລະບຽບຂອງພຣະອົງ
146 ຂ້າພຣະອົງຮ້ອງທູນພຣະອົງ ຂໍຊົງຊ່ອຍຂ້າພຣະອົງໃຫ້ລອດ ເພື່ອຂ້າພຣະອົງຈະປະຕິບັດຕາມບັນດາພຣະໂອວາດຂອງ ພຣະອົງ
147 ຂ້າພຣະອົງຕື່ນຂຶ້ນກ່ອນຮຸ່ງເຊົ້າ ທູນຂໍຄວາມຊ່ອຍເຫລືອ ຂ້າພຣະອົງຫວັງຢູ່ໃນພຣະຄຳຂອງພຣະອົງ
148 ຕາຂອງຂ້າພຣະອົງຕື່ນຢູ່ກ່ອນເຖິງຍາມ ທຸກຍາມໃນກາງຄືນເພື່ອພາວະນາພຣະດຳຣັດຂອງພຣະອົງ
149 ຂໍຊົງຟັງສຽງຂ້າພຣະອົງ ດ້ວຍຄວາມຮັກຫມັ້ນຄົງຂອງພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງສງວນຊີວິດຂອງຂ້າພຣະອົງໄວ້ຕາມກົດຫມາຍຂອງພຣະອົງ
150 ຜູ້ຂົ່ມເຫັງຂ້າພຣະອົງດ້ວຍການມຸ່ງຮ້າຍເຂົ້າມາໃກ້ແລ້ວ ເຂົາຢູ່ຫ່າງໄກຈາກພຣະທັມຂອງພຣະອົງ
151 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງຊົງສະຖິດຢູ່ໃກ້ ແລະພຣະບັນຍັດທັງສິ້ນຂອງພຣະອົງກໍຈິງ
152 ຂ້າພຣະອົງຮູ້ນານແລ້ວຈາກບັນດາພຣະໂອວາດຂອງພຣະອົງ ວ່າພຣະອົງຊົງຕັ້ງໄວ້ເປັນນິດ

**ອ້ອນວອນຂໍຄວາມພົ້ນ**

153 ຂໍພຣະອົງຊົງຫລຽວເບິ່ງຄວາມທຸກທໍຣະມານຂອງຂ້າພຣະອົງແລະຊ່ອຍຂ້າພຣະອົງໃຫ້ພົ້ນພັຍດ້ວຍ ເພາະວ່າຂ້າພຣະອົງບໍ່ໄດ້ປະລະພຣະທັມຂອງພຣະອົງ
154 ຂໍຊົງຊ່ອຍວ່າຄະດີຂອງຂ້າພຣະອົງ ແລະໃຫ້ຂ້າພຣະອົງເປັນອິສຣະ ຂໍຊົງໂຜດໃຫ້ຂ້າພຣະອົງມີຊີວິດຢູ່ຕໍ່ໄປຕາມທີ່ພຣະອົງຊົງສັນຍາໄວ້
155 ຄົນຊົ່ວຮ້າຍຈະບໍ່ໄດ້ຮັບການຊ່ອຍເຫລືອໃຫ້ພົ້ນ ເພາະເຂົາບໍ່ເຊື່ອຟັງພຣະທັມຂອງພຣະອົງ
156 ຂ້າແດ່ພຣະຜູ້ເປັນເຈົ້າ ຄວາມເມດຕາສົງສານຂອງພຣະອົງຊົງຍິ່ງໃຫຍ່ ຂໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນພັບຕາມນ້ຳພຣະທັຍຂອງພຣະອົງ
157 ຂ້າພຣະອົງມີສັດຕຣູ ແລະມີຜູ້ຂົ່ມເຫັງຫລາຍ ແຕ່ຂ້າພຣະອົງບໍ່ໄດ້ລະເລີຍໃນການເຊື່ອຟັງກົດຂໍ້ບັນຍັດຂອງພຣະອົງ
158 ເມື່ອຂ້າພຣະອົງຫລຽວເບິ່ງຄົນທໍຣະຍົດນີ້ ຂ້າພຣະອົງກໍເບື່ອຫນ່າຍເຕັມທີ ເພາະວ່າເຂົາບໍ່ເຊື່ອຟັງກົດຂໍ້ຄຳສັ່ງຂອງພຣະອົງ
159 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຮູ້ແລ້ວວ່າ ຂ້າພຣະອົງມັກການສັ່ງສອນຂອງພຣະອົງຫລາຍຊ່ຳໃດ ຂໍຊົງໂຜດຊ່ອຍຂ້າ ພຣະອົງໃຫ້ພົ້ນພັຍຕາມຄວາມຮັກຫມັ້ນຄົງຂອງພຣະອົງເທີນ
160 ແກ່ນແທ້ຂອງພຣະທັມເປັນຄວາມຈິງ ແລະກົດລະບຽບອັນສັດຈິງທັງຫມົດຂອງພຣະອົງຊົງເປັນຢູ່ຕລອດໄປ
161 ເຈົ້ານາຍໄດ້ຂົ່ມເຫັງຂ້າພຣະອົງໂດຍປາສຈາກເຫດຜົນ ແຕ່ຈິດໃຈຂອງຂ້າພຣະອົງໂຄຣົບນັບຖືພຣະຄຳຂອງພຣະອົງ
162 ຂ້າພຣະອົງຊົມຊື່ນຍິນດີເພາະພຣະຄຳຂອງພຣະອົງ ເໝືອນຜູ້ທີ່ພົບສົມບັດອັນມະຫາສານ
163 ຂ້າພຣະອົງກຽດຊັງ ແລະສະອິດສະອຽນຕໍ່ຄວາມເທັດ ແຕ່ຂ້າພຣະອົງຮັກພຣະທັມຂອງພຣະອົງ
164 ເຈັດເທື່ອແຕ່ລະມື້ທີ່ຂ້າພຣະອົງສັຣເສີນພຣະອົງ ຍ້ອນກົດຫມາຍອັນຊອບທັມຂອງພຣະອົງ
165 ບຸກຄົນເຫລົ່ານັ້ນທີ່ຮັກພຣະທັມຂອງພຣະອົງ ມີສັນຕິພາບຍິ່ງໃຫຍ່ ບໍ່ມີສິ່ງໃດກະທຳໃຫ້ເຂົາສະດຸດໄດ້

166 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຫວັງໃນຄວາມລອດຂອງພຣະອົງ ແລະຂ້າພຣະອົງທຳຕາມພຣະບັນຍັດ
ຂອງພຣະອົງ
167 ຈິດໃຈຂອງຂ້າພຣະອົງປະຕິບັດຕາມບັນດາພຣະໂອວາດຂອງພຣະອົງ ຂ້າພຣະອົງຮັກພຣະໂອວາດນັ້ນຢ່າງ
ສຸດຈິດສຸດໃຈດ້ວຍ
168 ຂ້າພຣະອົງປະຕິບັດຕາມຂໍ້ບັງຄັບ ແລະບັນດາພຣະໂອວາດຂອງພຣະອົງ ເພາະທາງທັງສິ້ນຂອງຂ້າພຣະອົງຢູ່
ຕໍ່ເບື້ອງພຣະພັກພຣະອົງ

**ການອ້ອນວອນຂໍຄວາມຊ່ອຍເຫລືອ**

169 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍໃຫ້ການຮ້ອງຂໍຄວາມຊ່ອຍເຫລືອຂອງຂ້າພຣະອົງໄປເຖິງພຣະອົງ ຂໍຊົງໃຫ້ຂ້າພຣະ
ອົງເຂົ້າໃຈຕາມທີ່ພຣະອົງຊົງສັນຍາໄວ້
170 ຂໍພຣະອົງຊົງຮັບຟັງຄຳອ້ອນວອນຂອງຂ້າພຣະອົງ ແລະຊ່ອຍໃຫ້ຂ້າພຣະອົງພົ້ນຈາກຄວາມລຳບາກຕາມທີ່ພ
ຣະອົງຊົງສັນຍາໄວ້
171 ຂ້າພຣະອົງຈະສັຣເສີນພຣະອົງຢູ່ເລື້ອຍໆ ເພາະພຣະອົງຊົງສັ່ງສອນກົດລະບຽບຂອງພຣະອົງໃຫ້ແກ່ຂ້າພຣະ
ອົງ
172 ຂ້າພຣະອົງຈະຮ້ອງເພງເຣື່ອງພຣະທັມຂອງພຣະອົງ ເພາະຂໍ້ຄຳສັ່ງຂອງພຣະອົງຊົງຖືກຕ້ອງ
173 ຂໍພຣະອົງຊົງຕຽມພ້ອມສເມີໃນການຊ່ອຍເຫລືອຂ້າພຣະອົງ ເພາະວ່າຂ້າພຣະອົງຕິດຕາມຂໍ້ຄຳສັ່ງຂອງພຣະ
ອົງ
174 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງປາຖນາຄວາມຊ່ອຍໃຫ້ພົ້ນຈາກພຣະອົງ ຂ້າພຣະອົງພົບຄວາມສຸກໃນພຣະ
ທັມຂອງ ພຣະອົງ
175 ຂໍພຣະອົງຊົງປະທານຊີວິດໃຫ້ແກ່ຂ້າພຣະອົງ ເພື່ອວ່າຂ້າພຣະອົງຈະສັຣເສີນພຣະອົງ ຂໍໃຫ້ຄຳສອນຂອງພຣະ
ອົງຊ່ອຍເຫລືອຂ້າພຣະອົງດ້ວຍ
176 ຂ້າພຣະອົງທ່ອງທ່ຽວໄປມາເຫມືອນດັ່ງແກະທີ່ຫລົງທາງ ສະນັ້ນຂໍພຣະອົງຊົງສະເດັດມາຮັກສາຂ້າພຣະອົງຜູ້
ຮັບໃຊ້ຂອງພຣະອົງ ເພາະວ່າຂ້າພຣະອົງບໍ່ໄດ້ປະລະກົດຂໍ້ບັນຍັດຂອງພຣະອົງ

## 120 ເພງສັຣເສີນ ບົດທີນຶ່ງຮ້ອຍຊາວ

**ການອ້ອນວອນຂໍຄວາມຊ່ອຍເຫລືອ**

Prayer for Deliverance from Slanderers

ບົດເພງໃຊ້ແຫ່ຂຶ້ນ

A Song of Ascents

1 ເມື່ອຂ້າພຣະອົງຕົກຢູ່ໃນຄວາມທຸກຍາກລຳບາກ ຂ້າພຣະອົງຮ້ອງຫາພຣະຜູ້ເປັນເຈົ້າ ພຣະອົງກໍຊົງຕອບຂ້າ
ພຣະອົງ
2 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຊ່ອຍໃຫ້ຂ້ານ້ອຍພົ້ນຈາກຄົນຂີ້ຕົວະ ແລະຄົນຫລອກລວງ
3 ຄົນຂີ້ຕົວະເອີຍ ພຣະເຈົ້າຈະກະທຳປະການໃດແກ່ພວກເຈົ້າ? ພຣະອົງຈະຊົງລົງໂທດພວກເຈົ້າຢ່າງໃດ?
4 ພຣະອົງຈະຊົງລົງໂທດພວກເຈົ້າດ້ວຍລູກຫນ້າທະນູອັນແຫລມຄົມຂອງທະຫານແລະດ້ວຍຖ່ານໄຟແດງທີ່ລຸກ
ຢູ່
5 ການທີ່ອາສັຍຢູ່ກັບພວກເຈົ້ານີ້ກໍຍາກເທົ່າກັບການອາສັຍຢູ່ນຳພວກເມເຊກ ຫລືຖ້າມກາງຊາວເກດາຣ໌
6 ຂ້າພຣະອົງໄດ້ອາສັຍຢູ່ກັບພວກທີ່ກຽດຊັງຄວາມສງົບສຸກເປັນເວລາດົນນານແລ້ວ
7 ເມື່ອຂ້າພຣະອົງເວົ້າເຖິງຄວາມສງົບສຸກ ພວກເຂົາກໍຢາກກໍ່ສົງຄາມຂຶ້ນໂລດ

## 121 ເພງສັດເສີນ ບົດທີນຶ່ງຮ້ອຍຊາວເອັດ

### ພຣະຜູ້ຊົງຄຸ້ມຄອງພວກເຮົາ

Assurance of God's Protection

ບົດເພງໃຊ້ແຫ່ຂຶ້ນ

A Song of Ascents.

1 ຂ້າພະເຈົ້າຫລຽວຂຶ້ນໄປເທິງພູທັງຫລາຍ ເພື່ອຢາກຮູ້ວ່າການຊ່ອຍເຫລືອນັ້ນມາແຕ່ທາງໃດ

2 ການຊ່ອຍເຫລືອຂ້າພະເຈົ້າມາຈາກພຣະຜູ້ເປັນເຈົ້າ ຊຶ່ງເປັນພຣະຜູ້ສ້າງຟ້າສວັນ ແລະແຜ່ນດິນໂລກ

3 ຂໍຢ່າໃຫ້ພຣະອົງຊົງທຳໃຫ້ຂ້າພະເຈົ້າອ່ອນແອໄປ ຂໍພຣະອົງຊົງຄຸ້ມຄອງຂ້າພະເຈົ້າແລະຢ່າຊົງນອນຫລັບໄປ

4 ແມ່ນແລ້ວຜູ້ຄຸ້ມຄອງອິສຣາເອນບໍ່ໄດ້ເຊືອບຫລັບໄປ

5 ພຣະຜູ້ເປັນເຈົ້າຈະຊົງເຝົ້າຮັກສາເຈົ້າ ພຣະອົງຈະຊົງຢູ່ຄຽງຂ້າງເພື່ອປ້ອງກັນເຈົ້າ

6 ຕາເວັນຈະບໍ່ເປັນອັນຕະລາຍແກ່ເຈົ້າໃນເວລາກາງເວັນ ດວງເດືອນຈະບໍ່ເປັນອັນຕະລາຍແກ່ເຈົ້າໃນເວລາກາງ
ຄືນ

7 ພຣະຜູ້ເປັນເຈົ້າຈະຄຸ້ມຄອງເຈົ້າໃຫ້ພົ້ນຈາກອັນຕະລາຍທຸກຢ່າງ ພຣະອົງຈະຊົງຊ່ອຍເຈົ້າໃຫ້ປອດພັຍ

8 ນັບແຕ່ເວລານີ້ໄປ ເມື່ອເຈົ້າໄປໆມາໆ ພຣະອົງຈະຊົງຄຸ້ມຄອງເຈົ້າ

## 122 ເພງສັດເສີນ ບົດທີນຶ່ງຮ້ອຍຊາວສອງ

### ການຍ້ອງຍໍສັລະເສີນນະຄອນເຢຣູຊາເລັມ

Song of Praise and Prayer for Jerusalem

ບົດເພງໃຊ້ແຫ່ຂຶ້ນ ຂອງດາວິດ

A Song of Ascents. Of David.

1 ຂ້າພະເຈົ້າມີຄວາມດີໃຈເມື່ອຫມູ່ເພື່ອນຊວນຂ້າພະເຈົ້າວ່າ, "ຂໍໃຫ້ພວກເຮົາໄປຍັງພຣະວິຫານຂອງພຣະຜູ້ເປ
ັນເຈົ້າ"

2 ແລະດຽວນີ້ພວກຂ້າພຣະອົງກໍມາຮອດບ່ອນນີ້ ກຳລັງຢືນຢູ່ທາງຂ້າງໃນປະຕູນະຄອນເຢຣູຊາເລັມ

3 ນະຄອນເຢຣູຊາເລັມເປັນເມືອງທີ່ສ້ອມແຊມຂຶ້ນໃຫມ່ຢ່າງສວຍງາມແລະແຫນ້ນຫນາດີ

4 ຊຶ່ງເປັນບ່ອນທີ່ພວກຕະກູນອິສຣາເອນຂຶ້ນໄປຢູ່ຮ່ວມກັນ ພວກເຂົາໄດ້ພາກັນມາເພື່ອຖວາຍຂອບພຣະຄຸນພ
ຣະຜູ້ເປັນເຈົ້າຕາມທີ່ພຣະອົງໄດ້ຊົງສັ່ງໄວ້ແກ່ພວກເຂົາ

5 ບ່ອນນີ້ເປັນສານຕັດສິນ ບ່ອນທີ່ເຈົ້າຊີວິດຕັດສິນປະຊາຊົນ

6 ຂໍໃຫ້ອ້ອນວອນເພື່ອຄວາມສົງບສຸກຂອງນະຄອນເຢຣູຊາເລັມດັ່ງນີ້ວ່າ ຂໍໃຫ້ບັນດາຜູ້ທີ່ຮັກເຈົ້າຈົ່ງມີຄວາມຈະ
ເຣີນຮຸ່ງເຮືອງ

7 ຂໍໃຫ້ພາຍໃນກຳແພງເມືອງຂອງເຈົ້າຈົ່ງມີແຕ່ຄວາມສົງບສຸກ ແລະພາຍໃນວັງຂອງເຈົ້າຈົ່ງມີແຕ່ຄວາມປອດ
ພັຍ

8 ເພື່ອເຫັນແກ່ຫມູ່ເພື່ອນແລະມິດສະຫາຍ ຂ້າພະເຈົ້າຂໍອວຍພອນນະຄອນເຢຣູຊາເລັມວ່າ, "ຄວາມສົງບສຸກຈົ່ງ
ມີແກ່ເຈົ້າ"

9 ເພື່ອເຫັນແກ່ພຣະວິຫານຂອງພຣະຜູ້ເປັນເຈົ້າຂອງພວກເຮົາ ຂ້າພະເຈົ້າຂໍອ້ອນວອນເພື່ອຄວາມຈະເຣີນຮຸ່ງ
ເຮືອງຂອງເຈົ້າ

## 123 ເພງສັຣເສີນ ບົດທີນຶ່ງຮ້ອຍຊາວສາມ

### ຄໍາອ້ອນວອນຂໍປະທານຄວາມກະຣຸນາປານີ

Supplication for Mercy

ບົດເພງໃຊ້ແຫ່ຂຶ້ນ

A Song of Ascents.

1 ຂ້າແດ່ພຣະອົງຜູ້ປະທັບໃນຟ້າສວັນ ຂ້າພຣະອົງເງີຍຫນ້າເບິ່ງພຣະອົງ
2 ເບິ່ງແມ ຕາຂອງຜູ້ຮັບໃຊ້ຫລຽວເບິ່ງມືນາຍຂອງຕົນສັນໃດ ແລະຕາຂອງສາວໃຊ້ຫລຽວເບິ່ງມືນາຍຍິງຂອງຕົນ
ສັນໃດ ຕາຂອງຂ້າພະເຈົ້າທັງຫລາຍ ຫລຽວເບິ່ງພຣະເຈົ້າຂອງຂ້າພະເຈົ້າທັງຫລາຍຈົນກວ່າພຣະອົງຈະມີພຣະ
ກະຣຸນາຕໍ່ຂ້າພະເຈົ້າທັງຫລາຍສັນນັ້ນ
3 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງພຣະກະຣຸນາຕໍ່ພວກຂ້າພຣະອົງ ຂໍຊົງພຣະກະຣຸນາຕໍ່ພວກຂ້າພຣະອົງເຖີດພຣະ
ເຈົ້າຂ້າ ເພາະພວກຂ້າພຣະອົງເບື່ອຫນ່າຍຄວາມຫມິ່ນປມາດ
4 ຈິດໃຈຂອງຂ້າພຣະອົງທັງຫລາຍເບື່ອຫນ່າຍການເຍີ້ຍຫຍັນຂອງຄົນຢູ່ສະບາຍ ຄືການຫມິ່ນປມາດຂອງຄົນ
ຈອງຫອງ

## 124 ເພງສັຣເສີນ ບົດທີນຶ່ງຮ້ອຍຊາວສີ່

### ພຣະຜູ້ຊ່ອຍໃຫ້ພົ້ນພັຍຂອງອິສຣາເອນ

Thanksgiving for Israel’s Deliverance

ບົດເພງໃຊ້ແຫ່ຂຶ້ນ ຂອງດາວິດ

A Song of Ascents. Of David.

1 ຖ້າວ່າພຣະຜູ້ເປັນເຈົ້າບໍ່ຊົງສະຖິດຄຽງຂ້າງພວກເຮົາ ຂໍໃຫ້ອິສຣາເອນກ່າວວ່າ,
2 “ຖ້າພຣະເຈົ້າບໍ່ຊົງສະຖິດຄຽງຂ້າງພວກເຮົາ ເມື່ອພວກສັດຕຣູມາໂຈມຕີ
3 ເຂົາກໍຈະກືນກິນເຮົາທັງເປັນ ເມື່ອຄວາມຄຽດແຄ້ນຂອງເຂົາພຸ່ງຂຶ້ນຕໍ່ເຮົາ
4 ແລ້ວກະແສນ້ຳນາກກໍຈະໄຫລພັດພວກເຮົາອອກໄປ ເຮົາກໍຕ້ອງຈົມລົງໄປໃນນ້ຳ
5 ແລະກະແສນ້ຳທີ່ແຮງກໍໄຫລຖ້ວມພວກເຮົາ
6 ຂໍໃຫ້ພວກເຮົາຂອບພຣະຄຸນພຣະຜູ້ເປັນເຈົ້າ ຜູ້ທີ່ບໍ່ຊົງອະນຸຍາດໃຫ້ສັດຕຣູທຳລາຍເຮົາ
7 ເຮົາໄດ້ປົບຫນີໄປເຫມືອນນົກທີ່ຫລຸດຫນີຈາກບ້ວງແຮ້ວ ບ້ວງແຮ້ວໄດ້ຂາດໄປແລະເຮົາກໍໄດ້ເປັນອິສຣະ
8 ການຊົດຊ່ອຍຂອງເຮົາມາຈາກພຣະຜູ້ເປັນເຈົ້າ ຊຶ່ງເປັນພຣະຜູ້ສ້າງຟ້າສວັນແລະໂລກ

## 125 ເພງສັຣເສີນ ບົດທີນຶ່ງຮ້ອຍຊາວຫ້າ

### ພຣະເຈົ້າຊົງຢູ່ຮອບຊົນຊາດຂອງພຣະອົງ

The Security of God’s People

ບົດເພງໃຊ້ແຫ່ຂຶ້ນ

A Song of Ascents.

1 ບັນດາຜູ້ທີ່ວາງໃຈໃນພຣະເຈົ້າກໍເຫມືອນພູຊີໂອນຊຶ່ງບໍ່ຫວັ່ນໄຫວ ແຕ່ດຳຣົງຢູ່ເປັນນິດ
2 ພູຢູ່ຮອບເຢຣູຊາເລັມສັນໃດ ພຣະເຈົ້າຊົງຢູ່ຮອບປະຊາກອນຂອງພຣະອົງ ຕັ້ງແຕ່ເວລານີ້ສືບຕໍ່ໄປເປັນນິດສັນ
ນັ້ນ
3 ເພາະຄະທາ(ກະບອງ)ຂອງຄວາມອະທັມຈະບໍ່ພັກຢູ່ເຫນືອແຜ່ນດິນທີ່ຕົກເປັນສ່ວນຂອງຄົນຊອບທັມ ຢ້ານວ່າ
ຄົນຊອບທັມຈະຍື່ນມືອອກກະທຳຄວາມຜິດ

4 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງປະກອບການດີຕໍ່ຜູ້ທຳດີ ແລະຕໍ່ຜູ້ທ່ຽງທັມໃນຈິດໃຈຂອງເຂົາ
5 ແຕ່ບັນດາຜູ້ທີ່ຫັນເຂົ້າຫາທາງຄົດຂອງເຂົາ ພຣະເຈົ້າຈະຊົງພາເຂົາໄປພ້ອມກັບຄົນທຳຊົ່ວ ຂໍສັນຕິພາບຈົ່ງມີຢູ່
ໃນອິສຣາເອນ

## 126 ເພງສັຣເສີນ ບົດທີນຶ່ງຮ້ອຍຊາວຫົກ

### ການອ້ອນວອນເມື່ອຖືກປົດປ່ອຍ

A Harvest of Joy

ບົດເພງໃຊ້ແຫ່ຂຶ້ນ

A Song of Ascents.

1 ເມື່ອພຣະຜູ້ເປັນເຈົ້າຊົງໃຫ້ຊີໂອນກັບຄືນສູ່ສະພາບດີ ເຮົາກໍເປັນເຫມືອນຄົນທີ່ຝັນໄປ
2 ປາກຂອງເຮົາໄດ້ຫົວ ແລະລີ້ນຂອງເຮົາໄດ້ເປັ່ງສຽງໂຮ່ຮ້ອງດ້ວຍຄວາມຍິນດີທີ່ສຸດ ແລ້ວເຂົາໄດ້ເວົ້າກັນຖ້າມ
ກາງປະຊາຊາດວ່າ, “ພຣະເຈົ້າຊົງກະທຳການຍິ່ງໃຫຍ່ໃຫ້ເຂົາ”
3 ພຣະອົງຊົງກະທຳການຍິ່ງໃຫຍ່ໃຫ້ເຮົາ ເຮົາມີຄວາມຍິນດີ
4 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໃຫ້ຂ້າພຣະອົງທັງຫລາຍກັບຄືນສູ່ສະພາບດີຢ່າງທາງນ້ຳໄຫລທີ່ໃນເນເກັບ
5 ຂໍໃຫ້ຜູ້ທີ່ຮ້ອງໄຫ້ເສັຽໃຈໃນຂນະທີ່ເຂົາປູກຝັງນັ້ນໄດ້ກ່ຽວເຂົ້າ ດ້ວຍສຽງໂຮ່ຮ້ອງຢ່າງຊື່ນບານ
6 ຜູ້ທີ່ຮ້ອງໄຫ້ອອກໄປຫອບຫິ້ວເມັດພືດເພື່ອຈະຫວ່ານຈະກັບບ້ານ ດ້ວຍສຽງໂຮ່ຮ້ອງຢ່າງຊື່ນບານນຳຟ່ອນເຂົ້າ
ຂອງຕົນມາດ້ວຍ

## 127 ເພງສັຣເສີນ ບົດທີນຶ່ງຮ້ອຍຊາວເຈັດ

### ການສັຣເສີນຄວາມດີຂອງພຣະຜູ້ເປັນເຈົ້າ

God’s Blessings in the Home

ບົດເພງໃຊ້ແຫ່ຂຶ້ນ ຂອງໂຊໂລໂມນ

A Song of Ascents. Of Solomon.

1 ວຽກການຂອງຄົນກໍ່ສ້າງເຮືອນກໍໄຮ້ປໂຍດ ຖ້າວ່າພຣະຜູ້ເປັນເຈົ້າບໍ່ເປັນຜູ້ຊົງສ້າງ ທະຫານຍືນຍາມກໍໄຮ້ປ
ໂຍດ ຖ້າວ່າ ພຣະຜູ້ເປັນເຈົ້າບໍ່ຊົງປ້ອງກັນບ້ານເມືອງໄວ້
2 ການເຮັດວຽກຫນັກເພື່ອລ້ຽງຊີວິດ ຄືໃຜນອນເດິກລຸກເຊົ້າກໍໄຮ້ປໂຍດ ເພາະວ່າພຣະຜູ້ເປັນເຈົ້າຊົງປະທານ
ການພັກຜ່ອນໃຫ້ແກ່ຜູ້ທີ່ພຣະອົງຊົງຮັກ
3 ເດັກນ້ອຍທັງຫລາຍເປັນພຣະພອນອັນແທ້ຈິງທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້
4 ຜູ້ທີ່ມີລູກເມື່ອຕົນຍັງຫນຸ່ມກໍມີປໂຍດຫລາຍເຫມືອນທະຫານທີ່ມີລູກທະນູຫລາຍລູກໃນກຳມື
5 ຜູ້ນັ້ນຈະມີຄວາມສຸກ ເມື່ອເຂົາປະເຊີນຫນ້າກັບສັດຕູທັງຫລາຍໃນສານຕັດສິນ ເຂົາຈະບໍ່ພ່າຍແພ້ຈັກເທື່ອ

## 128 ເພງສັຣເສີນ ບົດທີນຶ່ງຮ້ອຍຊາວແປດ

### ພຣະພອນໄດ້ແກ່ຜູ້ທີ່ຢຳເກງພຣະເຈົ້າ

The Happy Home of the Faithful

ບົດເພງໃຊ້ແຫ່ຂຶ້ນ

A Song of Ascents.

1 ທຸກຄົນທີ່ຢ້ານຢຳພຣະເຈົ້າກໍເປັນສຸກ ຄືຜູ້ດຳເນີນໃນທາງຂອງພຣະອົງ
2 ເມື່ອທ່ານກິນຜົນນ້ຳມືຂອງທ່ານ ທ່ານຈະເປັນສຸກ ແລະທ່ານຈະຈະເຣີນຂຶ້ນ

3 ເມັຽຂອງທ່ານຈະເປັນຢ່າງເຄືອອະງຸ່ນລູກດົກຢູ່ພາຍໃນເຮືອນຂອງທ່ານ ລູກໆຂອງທ່ານຈະເປັນເຫມືອນຫນໍ່
ຫມາກກອກເທດ
4 ດັ່ງນີ້ແຫລະ ຄົນທີ່ຢຳເກງພຣະເຈົ້າຈະໄດ້ຮັບພອນ
5 ຂໍພຣະເຈົ້າຊົງອວຍພຣະພອນທ່ານຈາກຊີໂອນ ຂໍໃຫ້ທ່ານເຫັນຄວາມຈະເຣີນຂອງເຢຣູຊາເລັມຕລອດວັນເວ
ລາຊີວິດຂອງທ່ານ
6 ຂໍໃຫ້ທ່ານເຫັນແກ່ລູກຫລານຂອງທ່ານ ຂໍໃຫ້ສັນຕິພາບມີຢູ່ໃນອິສຣາເອນ

## 129 ເພງສັຣເສີນ ບົດທີນຶ່ງຮ້ອຍຊາວເກົ້າ

### ຄຳອ້ອນວອນຂໍຊົງຂວ້ຳສັດຕຣູຂອງຊີໂອນ

Prayer for the Downfall of Israel’s Enemies

ບົດເພງໃຊ້ແຫ່ຂຶ້ນ

A Song of Ascents.

1 “ເຂົາໄດ້ໃຫ້ຂ້າພະເຈົ້າທຸກຍາກຢ່າງຫນັກ ຕັ້ງແຕ່ຫນຸ່ມໆມາ ໃຫ້ອິສຣາເອນກ່າວເຖີດວ່າ
2 “ເຂົາໄດ້ໃຫ້ຂ້າພະເຈົ້າທຸກຍາກຢ່າງຫນັກຕັ້ງແຕ່ຫນຸ່ມໆມາ ແຕ່ເຂົາຍັງເອົາຊະນະຂ້າພະເຈົ້າບໍ່ໄດ້
3 ຄົນທີ່ໄຖກໍໄຖເທິງຫລັງຂ້າພະເຈົ້າ ເຂົາເຮັດຮອຍໄຖຂອງເຂົາໃຫ້ຍາວ”
4 ພຣະເຈົ້າຊອບທັມ ພຣະອົງຊົງຕັດເຄື່ອງຈຳຈອງຂອງຄົນອະທັມ
5 ຂໍໃຫ້ບັນດາຜູ້ທີ່ກຽດຊັງຊີໂອນໄດ້ຂາຍຫນ້າ ແລະຕ້ອງຖອຍກັບຄືນໄປ
6 ໃຫ້ເຂົາເປັນເຫມືອນຫຍ້າທີ່ງອກເທິງຫລັງຄາເຮືອນຊຶ່ງຫ່ຽວແຫ້ງໄປກ່ອນມັນໃຫຍ່ຂຶ້ນ
7 ຊຶ່ງຄົນກ່ຽວບໍ່ເກັບໃສ່ມື ຫລືຄົນທີ່ມັດຟ່ອນບໍ່ເກັບໄວ້ທີ່ເອິກຂອງເຂົາ
8 ທັງໃຫ້ຄົນທີ່ຜ່ານໄປບໍ່ເວົ້າວ່າ, “ຂໍພຣະພອນຂອງພຣະເຈົ້າຢູ່ເທິງທ່ານທັງຫລາຍ ເຮົາອວຍພອນທ່ານທັງ
ຫລາຍໃນພຣະນາມພຣະເຈົ້າ”

## 130 ເພງສັຣເສີນ ບົດທີນຶ່ງຮ້ອຍສາມສິບ

### ການອ້ອນວອນຂໍຄວາມຊ່ອຍເຫລືອ

Waiting for Divine Redemption

ບົດເພງໃຊ້ແຫ່ຂຶ້ນ

A Song of Ascents.

1 ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອຂ້າພຣະອົງຂາດຄວາມຫວັງ ຂ້າພຣະອົງຮ້ອງຫາພຣະອົງ
2 ຂໍຟັງສຽງຮ້ອງຂໍຂອງຂ້າພຣະອົງ ແລະຮັບຟັງຂ້າພຣະອົງທູນຂໍຄວາມຊ່ອຍເຫລືອດ້ວຍ
3 ຖ້າພຣະອົງຊົງບັນທຶກຄວາມບາບຂອງຂ້າພຣະອົງທັງຫລາຍໄວ້ ແມ່ນໃຜໃນຂ້າພຣະອົງສາມາດຫນີພົ້ນຈາກ
ການລົງໂທດນີ້ໄດ້?
4 ແຕ່ວ່າພຣະອົງຊົງໃຫ້ອະພັຍແກ່ຂ້າພຣະອົງ ເພື່ອຂ້າພຣະອົງຈະຢຳເກງພຣະອົງ
5 ຂ້າພຣະອົງຄອງຄອຍຖ້າພຣະຜູ້ເປັນເຈົ້າດ້ວຍສຸດອົກສຸດໃຈ ແລະຂ້າພຣະອົງເຊື່ອໃນພຣະທັມຂອງພຣະອົງ
6 ຂ້າພຣະອົງຄອງຄອຍຖ້າພຣະຜູ້ເປັນເຈົ້າດ້ວຍຄວາມຮ້ອນຮົນຍິ່ງກວ່າຜູ້ເຝົ້າຍາມທີ່ຄອຍຖ້າຢາກໃຫ້ແຈ້ງ
7 ອິສຣາເອນເອີຍ ຈົ່ງເຊື່ອພຣະຜູ້ເປັນເຈົ້າ ເພາະຄວາມຮັກຂອງພຣະອົງຊົງຫມັ້ນຄົງ ແລະພຣະອົງຊົງຕັ້ງພຣະ
ທັຍຊ່ອຍໃຫ້ພົ້ນພັຍຢູ່ທຸກເວລາ
8 ພຣະອົງຊົງຊ່ອຍອິສຣາເອນທີ່ເປັນໄພ່ພົນຂອງພຣະອົງໃຫ້ພົ້ນຈາກຄວາມບາບທຸກຢ່າງຂອງເຂົາ

## 131 ເພງສັດເສີນ ບົດທີນຶ່ງຮ້ອຍສາມສິບເອັດ

### ພັກສງົບຢ່າງເດັກນ້ອຍໃນພຣະເຈົ້າ

Song of Quiet Trust

ບົດເພງໃຊ້ແຫ່ຂຶ້ນ ຂອງດາວິດ

A Song of Ascents. Of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ຈິດໃຈຂອງຂ້າພຣະອົງບໍ່ໄດ້ໂອ້ອວດ ແລະຕາຂອງຂ້າພຣະອົງບໍ່ໄດ້ຍິ່ງຈອງຫອງ ຂ້າພ
ຣະອົງບໍ່ໄດ້ໄປຫຍຸ້ງກັບເຣື່ອງໃຫຍ່ ຫລືເຣື່ອງອັສຈັນເກີນຕົວຂອງຂ້າພຣະອົງ
2 ແຕ່ຂ້າພຣະອົງໄດ້ສງົບແລະລະງັບຈິດໃຈຂອງຂ້າພຣະອົງຢ່າງເດັກທີ່ຢ່ານົມແລ້ວສງົບຢູ່ທີ່ເອິກມານດາຂອງ
ຕົນຈິດໃຈຂອງຂ້າພຣະອົງສງົບຢູ່ພາຍໃນຂ້າພຣະອົງເຫມືອນຢ່າງເດັກທີ່ຢ່ານົມແລ້ວ
3 ອິສຣາເອນເອີຍ ຈົ່ງຫວັງໃຈໃນພຣະຜູ້ເປັນເຈົ້າ ຕັ້ງແຕ່ບັດນີ້ສືບໄປເປັນນິດ

## 132 ເພງສັດເສີນ ບົດທີນຶ່ງຮ້ອຍສາມສິບສອງ

### ການສັດເສີນໃນສະຖານທີ່ນະມັສການພຣະເຈົ້າ

The Eternal Dwelling of God in Zion

ບົດເພງໃຊ້ແຫ່ຂຶ້ນ

A Song of Ascents.

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຢ່າຊົງຫລົງລືມກະສັດດາວິດ ແລະວຽກການທຸກຢ່າງທີ່ທ່ານໄດ້ເຮັດມາ
2 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງລະນຶກເຖິງຄຳສັນຍາແລະຄຳສາບານທີ່ທ່ານມີຕໍ່ພຣະຜູ້ເປັນເຈົ້າອົງຊົງມີ
ອຳນາດຍິ່ງໃຫຍ່ຂອງຢາໂຄບວ່າ
3 ຂ້າພຣະອົງຈະບໍ່ເຂົ້າໄປໃນເຮືອນຫລືເຂົ້າໄປນອນ
4 ຂ້າພຣະອົງຈະບໍ່ພັກຜ່ອນຫລືນອນຫລັບ
5 ຈົນກວ່າຂ້າພຣະອົງໄດ້ຈັດຕຽມບ່ອນສຳລັບພຣະຜູ້ເປັນເຈົ້າ ແລະທີ່ປະທັບສຳລັບພຣະເຈົ້າອົງຊົງມີອຳນາດຍິ່ງ
ໃຫຍ່ຂອງຢາໂຄບ
6 ເຮົາໄດ້ຍິນເຖິງເຣື່ອງຫີບຄຳສັນຍາຢູ່ເອຟຣາທາແລະໄດ້ພົບຫີບນີ້ຢູ່ໃນທົ່ງຫຍ້າຢາອາຣ໌
7 “ໃຫ້ເຮົາໄປຍັງທີ່ປະທັບຂອງພຣະອົງ ໃຫ້ເຮົານະມັສການທີ່ຮອງພຣະບາດຂອງພຣະອົງ”
8 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລຸກຂຶ້ນສະເດັດໄປຍັງທີ່ບ່ອນພັກຜ່ອນຂອງພຣະອົງ ທັງພຣະອົງແລະຫີບແຫ່ງຄຳ
ສັນຍາ ຊຶ່ງເປັນສັນຍາລັກແຫ່ງອຳນາດຂອງພຣະອົງ
9 ຂໍໃຫ້ປະໂຣຫິດຂອງພຣະອົງປະກອບດ້ວຍຄວາມຊອບທັມ ແລະໃຫ້ໄພ່ພົນຂອງພຣະອົງໂຮ່ຮ້ອງດ້ວຍຄວາມ
ຍິນດີ
10 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງສັນຍາກັບດາວິດຜູ້ຮັບໃຊ້ຂອງພຣະອົງ ຂໍພຣະອົງຢ່າຊົງປະຕິເສດເຈົ້າຊີວິດ
ທີ່ພຣະອົງຊົງເລືອກໄວ້
11 ພຣະອົງຊົງສັນຍາຢ່າງຫມັ້ນຄົງຕໍ່ດາວິດວ່າ, “ພາຍຫລັງເຈົ້ານີ້ ເຮົາຈະແຕ່ງຕັ້ງລູກຊາຍຂອງເຈົ້າໃຫ້ຂຶ້ນປົກຄອງ
12 ຖ້າວ່າລູກຫລານຂອງເຈົ້າສັດຊື່ຕໍ່ຄຳຫມັ້ນສັນຍາຂອງເຮົາ ແລະຂໍ້ຄຳສັ່ງທີ່ເຮົາໄດ້ໃຫ້ແກ່ເຂົາ ບັນດາລູກຊາຍ
ຂອງເຂົາຈະເປັນເຈົ້າຊີວິດປົກຄອງເຫມືອນເຈົ້າສືບຕໍ່ກັນໄປ” ພຣະອົງຈະບໍ່ຖອນຄຳສັນຍານີ້ຄືນ
13 ພຣະຜູ້ເປັນເຈົ້າຊົງເລືອກເມືອງຊີໂອນໄວ້ ພຣະອົງມີພຣະປະສົງສ້າງທີ່ປະທັບຂອງພຣະອົງໄວ້ທີ່ນັ້ນ ຄືພຣະອົງ
ຊົງກ່າວວ່າ,
14 “ນີ້ແມ່ນບ່ອນທີ່ເຮົາຢາກຢູ່ ແລະເປັນບ່ອນທີ່ເຮົາຢາກປົກຄອງຕລອດໄປ

15 ເຮົາຈະຈັດຕຽມເມືອງຊີໂອນນີ້ໄວ້ໃຫ້ຮັ່ງມີສົມບູນ ເຮົາຈະເອົາສະບຽງອາຫານໃຫ້ຄົນທຸກຍາກໃນເມືອງນີ້
16 ເຮົາຈະໃຫ້ປະໂຣຫິດຂອງເມືອງນີ້ປະກາດວ່າ ເຮົາເປັນຜູ້ຊ່ອຍໃຫ້ພົ້ນພັຍ ແລ້ວປະຊາຊົນຈະຮ້ອງເພງ ໂຮ່ຮ້ອງ
ດ້ວຍຄວາມຍິນດີ
17 ໃນເມືອງນີ້ເຮົາຈະແຕ່ງຕັ້ງຜູ້ນຶ່ງໃນເຊື້ອສາຍຂອງດາວິດເປັນເຈົ້າຊີວິດອົງຍິ່ງໃຫຍ່ ແລະເຮົາຈະໃຫ້ເຈົ້າຊີວິດອົງ
ນີ້ເປັນຜູ້ປົກຄອງ
18 ເຮົາຈະເຮັດໃຫ້ສັດຕຣູຂອງທ່ານໄດ້ຮັບຄວາມອັບອາຍ ແຕ່ວ່າຣາຊອານາຈັກຂອງທ່ານຈະຮຸ່ງເຮືອງແລະຮັ່ງມີ
ສົມບູນ”

## 133 ເພງສັຣເສີນ ບົດທີນຶ່ງຮ້ອຍສາມສິບສາມ

### ພຣະພອນແຫ່ງການເປັນນໍ້ານຶ່ງໃຈດຽວກັນ

The Blessedness of Unity

ບົດເພງໃຊ້ແຫ່ຂຶ້ນ

A Song of Ascents.

1 ເບິ່ງແມ, ຊຶ່ງພີ່ນ້ອງອາສັຍຢູ່ດ້ວຍກັນເປັນນໍ້ານຶ່ງໃຈດຽວກັນ ກໍເປັນການດີແລະຫນ້າຊື່ນໃຈຫລາຍເທົ່າໃດ
2 ເຫມືອນນໍ້າມັນປະເສີດຢູ່ເທິງຫົວໄຫລອາບລົງມາເທິງຫນວດເຄົາ ເທິງຫນວດເຄົາຂອງອາໂຣນ ໄຫລອາບລົງ
ມາເທິງຄໍເສື້ອຂອງທ່ານ
3 ເຫມືອນນໍ້າຄ້າງຂອງພູເຮີໂມນຊຶ່ງຕົກລົງເທິງເນີນເຂົາຊີໂອນ ເພາະວ່າພຣະເຈົ້າຊົງບັງຄັບບັນຊາພຣະພອນທີ່
ນັ້ນ ຄືຊີວິດຈໍາເຣີນເປັນນິດ

## 134 ເພງສັຣເສີນ ບົດທີນຶ່ງຮ້ອຍສາມສິບສີ່

### ຄໍາເຕືອນຄົນຢູ່ຍາມກາງຄືນ

Praise in the Night

ບົດເພງໃຊ້ແຫ່ຂຶ້ນ

A Song of Ascents.

1 ມາເຖີດ ມາຖວາຍສາທຸການແດ່ພຣະຜູ້ເປັນເຈົ້າ ບັນດາທ່ານຜູ້ຮັບໃຊ້ທັງສິ້ນຂອງພຣະເຈົ້າ ຜູ້ຢືນຢູ່ໃນພຣະຜາ
ສາດຂອງ  ພຣະເຈົ້າໃນກາງຄືນ
2 ຈົ່ງຍົກມືຂອງທ່ານຂຶ້ນຕໍ່ສະຖານນະມັສການ ແລະຖວາຍສາທຸການແດ່ພຣະເຈົ້າ
3 ຂໍພຣະເຈົ້າຊົງອວຍພຣະພອນທ່ານຈາກຊີໂອນ ຄືພຣະອົງຜູ້ຊົງສ້າງຟ້າສວັນແລະແຜ່ນດິນໂລກ

## 135 ເພງສັຣເສີນ ບົດທີນຶ່ງຮ້ອຍສາມສິບຫ້າ

### ຄວາມຍິ່ງໃຫຍ່ຂອງພຣະເຈົ້າແລະຄວາມໄຮ້ປໂຍດຂອງຮູບໂຄຣົບ

Praise for God’s Goodness and Might

1 ຈົ່ງສັຣເສີນພຣະຜູ້ເປັນເຈົ້າເຖີດ ຈົ່ງສັຣເສີນພຣະນາມຂອງພຣະເຈົ້າ ບັນດາຜູ້ຮັບໃຊ້ຂອງພຣະເຈົ້າເອີຍ ຈົ່ງ
ຖວາຍສັຣເສີນ
2 ທ່ານທີ່ຢືນຢູ່ໃນພຣະຜາສາດຂອງພຣະຜູ້ເປັນເຈົ້າ ທີ່ໃນບໍຣິເວນພຣະຜາສາດຂອງພຣະເຈົ້າຂອງເຮົາ
3 ຈົ່ງສັຣເສີນຜູ້ເປັນເຈົ້າ ເພາະພຣະເຈົ້າປະເສີດ ຈົ່ງຮ້ອງເພງຖວາຍພຣະນາມຂອງພຣະອົງ ເພາະພຣະອົງຊົງພ
ຣະເມດຕາ
4 ເພາະພຣະຜູ້ເປັນເຈົ້າຊົງເລືອກຢາໂຄບໄວ້ສໍາລັບພຣະອົງເອງ ເລືອກອິສຣາເອນໄວ້ເປັນກັມະສິດຂອງພຣະອົງ

5 ເພາະຂ້າພະເຈົ້າຮູ້ວ່າພຣະເຈົ້າຍິ່ງໃຫຍ່ ແລະອົງພຣະຜູ້ເປັນເຈົ້າຂອງເຮົາຍິ່ງໃຫຍ່ກວ່າພຣະອື່ນທັງຫລາຍ

6 ພຣະຜູ້ເປັນເຈົ້າພໍພຣະທັຍສິ່ງໃດ ພຣະອົງກໍຊົງກະທຳ ໃນຟ້າສວັນແລະເທິງແຜ່ນດິນໂລກ ໃນທະເລແລະທີ່ນ້ຳເລິກທັງສິ້ນ

7 ພຣະອົງຊົງກະທຳໃຫ້ເມກລອຍຂຶ້ນມາຈາກທີ່ສຸດປາຍແຜ່ນດິນໂລກ ຜູ້ຊົງກະທຳຟ້າແມບເຫລື້ອມໃຫ້ແກ່ຝົນ ແລະຊົງນຳລົມອອກມາຈາກຄັງຂອງພຣະອົງ

8 ພຣະອົງຄືຜູ້ຊົງສັງຫານລູກຫົວປີຂອງເອຢິບ ທັງຂອງຄົນແລະຂອງສັດ

9 ເອຢິບເອີຍ ຜູ້ຊົງໃຫ້ຫມາຍສຳຄັນ ແລະການອັສຈັນຖ້າມກາງເຈົ້າ ໃຫ້ຕໍ່ສູ້ກັບຟາຣາໂອ ແລະບັນດາຂ້າຣາຊການຂອງທ່ານ

10 ພຣະອົງຄືຜູ້ຊົງຕີປະຊາຊາດເປັນຈຳນວນຫລາຍ ແລະຊົງສັງຫານກະສັດຜູ້ຊົງຣິດ

11 ຄືຊີໂຮນ ພຣະຣາຊາຂອງຄົນອາໂມເລກ ແລະໂອກ ພຣະຣາຊາຂອງບາຊານ ແລະບັນດາຣາຊອານາຈັກແຫ່ງການາອານ

12 ແລະປະທານແຜ່ນດິນຂອງເຂົາທັງຫລາຍໃຫ້ເປັນມໍຣະດົກ ເປັນມໍຣະດົກແກ່ອິສຣາເອນ ປະຊາກອນຂອງພຣະອົງ

13 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະນາມຂອງພຣະອົງດຳຣົງຢູ່ເປັນນິດ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະນາມຊ່າລືຂອງພຣະອົງນັ້ນດຳຣົງຢູ່ທຸກຊົ່ວອາຍຸຄົນ

14 ເພາະພຣະຜູ້ເປັນເຈົ້າຈະຊົງແກ້ແທນປະຊາກອນຂອງພຣະອົງ ແລະຊົງກັບພຣະທັຍໃນເຣື່ອງບັນດາຜູ້ຮັບໃຊ້ຂອງພຣະອົງ

15 ຮູບໂຄຣົບຂອງບັນດາປະຊາຊາດເປັນເງິນແລະທອງຄຳເປັນສີມືຂອງມະນຸດ

16 ຮູບເຫລົ່ານັ້ນມີປາກ ແຕ່ເວົ້າບໍ່ໄດ້ ມີຕາ ແຕ່ເບິ່ງບໍ່ໄດ້

17 ມີຫູ ແຕ່ຟັງບໍ່ໄດ້ ທັງບໍ່ມີລົມຫາຍໃຈໃນປາກຂອງຮູບນັ້ນ

18 ຜູ້ທີ່ສ້າງຮູບນັ້ນຈະເຫມືອນຮູບເຫລົ່ານັ້ນ ບັນດາຜູ້ທີ່ວາງໃຈໃນຮູບນັ້ນກໍເຫມືອນກັນ

19 ເຊື້ອສາຍອິສຣາເອນເອີຍ ຈົ່ງຖວາຍສາທຸການແດ່ພຣະຜູ້ເປັນເຈົ້າ ເຊື້ອສາຍຂອງອາໂຣນເອີຍ ຈົ່ງຖວາຍສາທຸການແດ່ພຣະຜູ້ເປັນເຈົ້າ

20 ເຊື້ອສາຍຂອງເລວີເອີຍ ຈົ່ງຖວາຍສາທຸການແດ່ພຣະຜູ້ເປັນເຈົ້າ ທ່ານທີ່ຢຳເກງພຣະຜູ້ເປັນເຈົ້າ ຈົ່ງຖວາຍສາທຸການແດ່ ພຣະຜູ້ເປັນເຈົ້າ

21 ສາທຸການແດ່ພຣະຜູ້ເປັນເຈົ້າຈາກຊີໂອນ ພຣະອົງຜູ້ຊົງພຳນັກຢູ່ໃນເຢຣູຊາເລັມ ຈົ່ງສັຣເສີນພຣະຜູ້ເປັນເຈົ້າເທີນ

## 136 ເພງສັຣເສີນ ບົດທີນຶ່ງຮ້ອຍສາມສິບຫົກ

### ຄຳສັຣເສີນເພາະຄວາມຮັກຫມັ້ນຄົງຂອງພຣະເຈົ້າ

God's Work in Creation and in History

1 ຈົ່ງໂມທະນາຂອບພຣະຄຸນພຣະເຈົ້າ ເພາະພຣະອົງຊົງພຣະຄຸນ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ

2 ຈົ່ງໂມທະນາຂອບພຣະຄຸນພຣະເຈົ້າຜູ້ເຫນືອພຣະທັງຫລາຍ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ

3 ຈົ່ງໂມທະນາຂອບພຣະຄຸນຖວາຍແດ່ພຣະອົງ ຜູ້ເປັນເຈົ້າເຫນືອເຈົ້າທັງຫລາຍ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ

4 ຖວາຍແດ່ພຣະອົງ ຜູ້ຊົງກະທຳການມະຫັສຈັນທັງຫລາຍແຕ່ອົງດຽວ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳ
ຣົງຢູ່ເປັນນິດ
5 ຖວາຍແດ່ພຣະອົງ ຜູ້ຊົງສ້າງຟ້າສວັນດ້ວຍຄວາມເຂົ້າໃຈ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນ
ນິດ
6 ຖວາຍແດ່ພຣະອົງ ຜູ້ຊົງກາງແຜ່ນດິນໂລກອອກເຫນືອນ້ຳທັງຫລາຍ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳ
ຣົງຢູ່ເປັນນິດ
7 ຖວາຍແດ່ພຣະອົງ ຜູ້ຊົງສ້າງດວງສວ່າງໃຫຍ່ໆ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
8 ສ້າງດວງອາທິດໃຫ້ຄອງກາງເວັນ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
9 ດວງຈັນແລະດາວທັງຫລາຍໃຫ້ຄອງກາງຄືນ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
10 ຖວາຍແດ່ພຣະອົງ ຜູ້ຊົງຕີເອຢິບ ທາງບັນດາລູກຫົວປີ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
11 ແລະຊົງນຳອິສຣາເອນອອກມາຈາກຖ້າມກາງເຂົາ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
12 ດ້ວຍພຣະຫັດເຂັ້ມແຂງແລະພຣະກອນທີ່ຢຽດອອກ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
13 ຖວາຍແດ່ພຣະອົງ ຜູ້ຊົງແບ່ງທະເລແດງອອກຈາກກັນ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
14 ແລະຊົງໃຫ້ອິສຣາເອນຜ່ານໄປຖ້າມກາງທະເລນັ້ນ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
15 ແຕ່ຊົງຂວ້ຳຟາຣາໂອແລະກອງທັບຂອງທ່ານເສັຽໃນທະເລແດງ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່
ເປັນນິດ
16 ຖວາຍແດ່ພຣະອົງ ຜູ້ຊົງນຳປະຊາກອນຂອງພຣະອົງໄປໃນຖິ່ນກັນດານ ເພາະຄວາມຮັກຫມັ້ນຄົງຂອງພຣະອົງ
ດຳຣົງຢູ່ເປັນນິດ
17 ຖວາຍແດ່ພຣະອົງ ຜູ້ຊົງຕີພຣະມະຫາຣາຊາທັງຫລາຍ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
18 ແລະຊົງສັງຫານພຣະຣາຊາຜູ້ມີຊື່ສຽງທັງຫລາຍ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
19 ຄືເຈົ້າຊີໂຮນ ພຣະຣາຊາຂອງຄົນອາໂມຣິດ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
20 ແລະໂອກ ພຣະຣາຊາແຫ່ງເມືອງບາຊານ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
21 ແລະປະທານແຜ່ນດິນຂອງເຂົາໃຫ້ເປັນມໍຣະດົກ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
22 ໃຫ້ເປັນມໍຣະດົກແກ່ອິສຣາເອນຜູ້ຮັບໃຊ້ຂອງພຣະອົງ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
23 ຄືພຣະອົງນີ້ເອງ ຜູ້ຊົງລະລຶກເຖິງເຮົາໃນຖານະຕ່ຳຕ້ອຍຂອງເຮົາ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງ
ຢູ່ເປັນນິດ
24 ແລະຊົງຊ່ອຍເຮົາໃຫ້ລອດພົ້ນຈາກສັດຕຣູຂອງເຮົາ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
25 ພຣະອົງຜູ້ປະທານອາຫານແກ່ເນື້ອຫນັງທັງປວງ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
26 ຈົ່ງໂມທະນາຂອບພຣະຄຸນພຣະເຈົ້າແຫ່ງຟ້າສວັນ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ

## 137 ເພງສັຣເສີນ ບົດທີນຶ່ງຮ້ອຍສາມສິບເຈັດ

### ຄວາມໂສກເສົ້າຂອງອິສຣາເອນໃນຕ່າງແດນ

Lament over the Destruction of Jerusalem

1 ໃນຣິມຝັ່ງລຳນ້ຳແຫ່ງບາບີໂລນ ເຮົານັ່ງລົງເມື່ອໄດ້ລະນຶກເຖິງຊີໂອນເຮົາກໍຮ້ອງໄຫ້
2 ເຮົາແຂວນພິນເຂົາຄູ່ຂອງເຮົາໄວ້ທີ່ຕົ້ນໄຄ້
3 ເພາະທີ່ນັ້ນຜູ້ທີ່ນຳໄປເປັນຊະເລີຍ ຕ້ອງການໃຫ້ເຮົາຮ້ອງເພງ ແລະຜູ້ທີ່ມັດພາເຮົາ ຕ້ອງການໃຫ້ສນຸກສນານ
ເຂົາວ່າ, “ຈົ່ງຮ້ອງເພງຊີໂອນຈັກບົດນຶ່ງໃຫ້ເຮົາຟັງ”

4 ເຮົາຈະຮ້ອງເພງຂອງພຣະຜູ້ເປັນເຈົ້າໄດ້ຢ່າງໃດ ທີ່ໃນແຜ່ນດິນຕ່າງດ້າວ
5 ໂອ ເຢຣູຊາເລັມເອີຍ ຖ້າຂ້າພະເຈົ້າລືມເຈົ້າ ກໍຂໍໃຫ້ມືຂວາຂອງຂ້າພະເຈົ້າລືມສີມືເສັຽ
6 ຂໍໃຫ້ລີ້ນຂອງຂ້າພະເຈົ້າເກາະຕິດປາກເບື້ອງເທິງຂອງຂ້າພະເຈົ້າ ຖ້າວ່າຂ້າພະເຈົ້າບໍ່ລະລຶກເຖິງເຈົ້າ ຖ້າວ່າຂ້າ
ພະເຈົ້າບໍ່ໄດ້ຕັ້ງເຢຣູຊາເລັມໄວ້ເຫນືອຄວາມຊື່ນບານອັນສູງທີ່ສຸດຂອງຂ້າພະເຈົ້າ
7 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລະລຶກເຖິງວັນເຢຣູຊາເລັມແຕກ ໂດຍຖືໂທດຄົນເອໂດມຜູ້ທີ່ເວົ້າວ່າ, “ຈົ່ງທຳລາຍ
ມັນ ຈົ່ງທຳລາຍມັນ ລົງໄປຈົນເຖິງຮາກຖານຂອງມັນ”
8 ທິດາແຫ່ງບາບີໂລນເອີຍ ຊຶ່ງຈະຕ້ອງລ້າງຜານເສັຽ ຄວາມສຸກຈົ່ງມີແກ່ຜູ້ທີ່ສນອງເຈົ້າໃຫ້ສົມກັບທີ່ເຈົ້າໄດ້ກະ
ທຳກັບເຮົາ
9 ຄວາມສຸກຈົ່ງມີແກ່ຜູ້ທີ່ເອົາລູກອ່ອນນ້ອຍຂອງເຈົ້າຈັບຟາດເຂົາໃສ່ໂງ່ນຫີນ

## 138 ເພງສັຣເສີນ ບົດທີນຶ່ງຮ້ອຍສາມສິບແປດ

### ໂມທະນາເພາະພຣະເຈົ້າຊົງໂຜດເມດຕາ

Thanksgiving and Praise

ຂອງດາວິດ

Of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຈະຖວາຍໂມທະນາຂອບພຣະຄຸນພຣະອົງດ້ວຍສິ້ນສຸດໃຈຂອງຂ້າພຣະອົງ
ຂ້າພຣະອົງຈະຮ້ອງເພງສັຣເສີນຖວາຍພຣະອົງຕໍ່ຫນ້າພຣະທັງຫລາຍ
2 ຂ້າພຣະອົງຂາບລົງ ຕົງມາຍັງພຣະວິຫານສັກສິດຂອງພຣະອົງ ແລະຖວາຍໂມທະນາພຣະຄຸນແກ່ພຣະນາມ
ຂອງພຣະອົງ ເພາະຄວາມຮັກຫມັ້ນຄົງແລະຄວາມສັຕສຸຈຣິດຂອງພຣະອົງ ເພາະພຣະອົງຊົງເຊີດຊູພຣະນາມ
ແລະພຣະຄຳຂອງພຣະອົງເຫນືອສາຣະພັດ
3 ໃນວັນທີ່ຂ້າພຣະອົງຮ້ອງທູນ ພຣະອົງໄດ້ຊົງຕອບຂ້າພຣະອົງ ພຣະອົງຊົງເພີ້ມກຳລັງຈິດໃຈຂອງຂ້າພຣະອົງ
4 ຂ້າແດ່ພຣະຜູ້ເປັນເຈົ້າ ບັນດາກະສັດແຫ່ງແຜ່ນດິນໂລກຈະສັຣເສີນພຣະອົງ ເພາະທ່ານເຫລົ່ານັ້ນໄດ້ຍິນພຣະ
ຄຳແຫ່ງພຣະໂອດຂອງພຣະອົງ
5 ແລະທ່ານເຫລົ່ານັ້ນຈະຮ້ອງເພງເຖິງທາງຂອງພຣະຜູ້ເປັນເຈົ້າ ເພາະຣັສມີຂອງພຣະຜູ້ເປັນເຈົ້ານັ້ນໃຫຍ່ຫລວງ
6 ເຖິງແມ່ນວ່າພຣະຜູ້ເປັນເຈົ້ານັ້ນສູງຍິ່ງ ພຣະອົງກໍຊົງເຫັນແກ່ຄົນຕ່ຳຕ້ອຍ ແຕ່ພຣະອົງຊົງຮູ້ຈັກຄົນຈອງຫອງໄດ້
ແຕ່ໄກ
7 ແມ້ຂ້າພຣະອົງເດີນຢູ່ກາງຄວາມຍາກລຳບາກ ພຣະອົງຊົງສງວນຊີວິດຂອງຂ້າພຣະອົງໄວ້ ພຣະອົງຊົງຢຽດພ
ຣະຫັດຂອງພຣະອົງອອກຕໍ່ຕ້ານຄວາມພິໂຣດຂອງສັດຕຣູຂອງຂ້າພຣະອົງ ແລະພຣະຫັດຂວາຂອງພຣະອົງກໍ
ຊ່ອຍກູ້ຂ້າພຣະອົງ
8 ພຣະຜູ້ເປັນເຈົ້າຊົງໃຫ້ສຳເຣັດພຣະປະສົງຂອງພຣະອົງແກ່ຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ຄວາມຮັກຫມັ້ນ
ຄົງຂອງພຣະອົງດຳຣົງຢູ່ເປັນນິດ ຂໍຢ່າຊົງປະຖິ້ມສີພຣະຫັດຂອງພຣະອົງ

## 139 ເພງສັຣເສີນ ບົດທີນຶ່ງຮ້ອຍສາມສິບເກົ້າ

### ພຣະເຈົ້າຊົງເຝົ້າຮັກສາທຸກເວລາ

The Inescapable God

ເຖິງຫົວຫນ້ານັກຮ້ອງ ເພງສັຣເສີນ ຂອງດາວິດ

To the leader. Of David. A Psalm.

1 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງໄດ້ກວດເບິ່ງຂ້າພຣະອົງແລະຮູ້ຈັກຂ້າພຣະອົງດີ

2 ພຣະອົງຊົງຮູ້ຈັກທຸກຢ່າງທີ່ຂ້າພຣະອົງກະທຳ ເຖິງວ່າຢູ່ໄກແສນໄກ ພຣະອົງກໍຍັງເຂົ້າໃຈຄວາມນຶກຄິດຂອງຂ້າພຣະອົງ

3 ພຣະອົງຊົງເຫັນຂ້າພຣະອົງໃນເວລາທີ່ຂ້າພຣະອົງກຳລັງເຮັດວຽກ ຫລືພັກຜ່ອນ ພຣະອົງຮູ້ຈັກການກະທຳທຸກຢ່າງຂອງຂ້າພຣະອົງ

4 ແມ່ນວ່າກ່ອນຂ້າພຣະອົງຈະເວົ້າ ພຣະອົງກໍຮູ້ລ່ວງຫນ້າແລ້ວວ່າຂ້າພຣະອົງຈະເວົ້າຫຍັງ

5 ພຣະອົງຊົງສະຖິດຢູ່ອ້ອມຂ້າງອ້ອມແອ້ວຂ້າພຣະອົງ ພຣະອົງຊົງຄຸ້ມຄອງຂ້າພຣະອົງດ້ວຍອຳນາດຂອງພຣະອົງ

6 ຄວາມຮູ້ຂອງພຣະອົງມີເຫລືອຫລາຍຈົນຂ້າພຣະອົງບໍ່ສາມາດເຂົ້າໃຈໄດ້ ຊຶ່ງເປັນການເລິກລັບທີ່ສຸດທີ່ຂ້າພຣະອົງຈະເຂົ້າໃຈໄດ້

7 ຂ້າພຣະອົງຈະຫນີຈາກພຣະວິຫານຂອງພຣະອົງໄປຢູ່ທາງໃດ ຂ້າພຣະອົງຈະຫນີຈາກພຣະພັກຂອງພຣະອົງໄປບ່ອນໃດ

8 ຖ້າວ່າຂ້າພຣະອົງຂຶ້ນໄປເທິງຟ້າສວັນ ພຣະອົງກໍຢູ່ທີ່ນັ້ນ ຖ້າວ່າຂ້າພຣະອົງລົງໄປພິພົບຄົນຕາຍ ພຣະອົງກໍຢູ່ທີ່ນັ້ນ

9 ຖ້າວ່າຂ້າພຣະອົງບິນໄປຈົນສຸດທາງທິດຕາເວັນອອກ ຫລືຢູ່ຫ່າງໄກທີ່ສຸດໃນທິດຕາເວັນຕົກ

10 ພຣະອົງກໍຢູ່ທີ່ນັ້ນເພື່ອນຳຫນ້າຂ້າພຣະອົງໄປ ແລະພຣະອົງກໍຊົງສະຖິດຢູ່ທີ່ນັ້ນເພື່ອຊ່ອຍເຫລືອຂ້າພຣະອົງ

11 ຂ້າພຣະອົງອາດຮ້ອງຂໍໃຫ້ຄວາມມືດມົນອັດບັງຂ້າພຣະອົງໄວ້ ຫລືໃຫ້ແສງສະວ່າງອ້ອມຮອບຂ້າພຣະອົງກາຍເປັນຄວາມມືດ

12 ແຕ່ວ່າຄວາມມືດນັ້ນ ບໍ່ໄດ້ມືດສຳລັບພຣະອົງ ແລະກາງຄືນກໍແຈ້ງເຫມືອນກາງເວັນ ຄວາມມືດແລະຄວາມສະວ່າງກໍເປັນຢ່າງດຽວກັນສຳລັບພຣະອົງ

13 ພຣະອົງໄດ້ຊົງສ້າງທຸກໆສ່ວນໃນຕົວຂອງຂ້າພຣະອົງ ແລະຊົງປະກອບຂ້າພຣະອົງເປັນຮ່າງຄົນເວລາຍັງຢູ່ໃນທ້ອງແມ່

14 ຂ້າພຣະອົງຂໍສັຣເສີນພຣະອົງ ເພາະພຣະອົງຊົງເປັນທີ່ໂຄຣົບຢຳເກງ ທຸກໆສິ່ງທີ່ພຣະອົງຊົງກະທຳນັ້ນກໍແປກປລາດແລະ ອັສຈັນໃຈ ພຣະອົງຊົງເຂົ້າໃຈໃນຕົວຂ້າພຣະອົງດີ

15 ເວລາຂ້າພຣະອົງຢູ່ໃນທ້ອງແມ່ ແລະຈະເຣີນເຕີບໂຕຂຶ້ນຢ່າງເລິກລັບ ພຣະອົງຊົງປັ້ນກະດູກຂອງຂ້າພຣະອົງປະກອບເຂົ້າກັນ

16 ກ່ອນທີ່ຂ້າພຣະອົງໄດ້ເກີດມາ ພຣະອົງຊົງເຫັນຂ້າພຣະອົງແລ້ວ ມື້ທັງຫລາຍທີ່ຂ້າພຣະອົງມີຊີວິດຢູ່ ພຣະອົງຊົງບັນທຶກໄວ້ຫມົດແລ້ວກ່ອນທີ່ມື້ເຫລົ່ານີ້ໄດ້ບັງເກີດຂຶ້ນມາ

17 ຂ້າແດ່ພຣະເຈົ້າ ຂ້າພຣະອົງເຂົ້າໃຈຍາກໃນຄວາມຄິດຂອງພຣະອົງ ແລະຄວາມຄິດນີ້ມີຫລາຍຢ່າງທີ່ສຸດ

18 ຖ້າວ່າຂ້າພຣະອົງສາມາດນັບຄວາມຄິດນີ້ໄດ້ ມັນຈະຕ້ອງມີຫລາຍກວ່າເມັດດິນຊາຍ ເມື່ອຂ້າພຣະອົງຕື່ນຂຶ້ນຂ້າພຣະອົງກໍຍັງຢູ່ນຳພຣະອົງ

19 ຂ້າແດ່ພຣະເຈົ້າ ຂ້າພຣະອົງຢາກໃຫ້ພຣະອົງຂ້າຄົນຊົ່ວຮ້າຍນັ້ນເສັຽ ຂ້າພຣະອົງຢາກໃຫ້ຄົນຊົ່ວຮ້າຍນັ້ນຫນີຈາກຂ້າພຣະອົງ

20 ເຂົາເວົ້າສິ່ງຊົ່ວຮ້າຍໃສ່ພຣະອົງ ຄືໄດ້ເວົ້າຄຳຊົ່ວຊ້າຕໍ່ສູ້ພຣະນາມຂອງພຣະອົງ

21 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງບໍ່ໄດ້ກຽດຊັງຜູ້ທີ່ກຽດຊັງພຣະອົງຫລື ແລະຂ້າພຣະອົງບໍ່ໄດ້ຖືຄົນເຫລົ່ານັ້ນຜູ້ລຸກຂຶ້ນຕໍ່ສູ້ພຣະອົງດອກຫລື

22 ຂ້າພຣະອົງກຽດຊັງຜູ້ທີ່ກຽດຊັງພຣະອົງຫລາຍທີ່ສຸດ ແລະນັບເຂົາເປັນສັດຕຣູຂອງຂ້າພຣະອົງ

23 ຂ້າແດ່ພຣະເຈົ້າ ຂໍພຣະອົງຊົງກວດເບິ່ງຂ້າພຣະອົງ ແລະຮູ້ເຖິງຈິດໃຈຂອງຂ້າພຣະອົງ ຂໍພຣະອົງຊົງທົດສອບ
ເບິ່ງຂ້າພຣະອົງ ແລະເປີດເຜີຍຄວາມນຶກຄິດທັງຫລາຍຂອງຂ້າພຣະອົງ
24 ຂໍພຣະອົງຊົງທອດພຣະເນດເບິ່ງວ່າ ຂ້າພຣະອົງມີຫຍັງແດ່ທີ່ເຮັດໃຫ້ພຣະອົງຊົງລຳບາກພຣະທັຍ ແລະຂໍຊົງ
ນຳຫນ້າຂ້າ ພຣະອົງໄປສູ່ເສັ້ນທາງອັນຄົງຢູ່ຕລອດໄປ

## 140 ເພງສັຣເສີນ ບົດທີນຶ່ງຮ້ອຍສີ່ສິບ

### ຄຳອ້ອນວອນຂໍຊົງປົກປ້ອງໃຫ້ພົ້ນຈາກຜູ້ຂົ່ມເຫັງ

Prayer for Deliverance from Persecutors

ເຖິງຫົວຫນ້ານັກຮ້ອງ ເພງສັຣເສີນ ຂອງດາວິດ

To the leader. A Psalm of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຊ່ອຍກູ້ຂ້າພຣະອົງຈາກຄົນຊົ່ວຮ້າຍ ຂໍຊົງສງວນຂ້າພຣະອົງໄວ້ຈາກຄົນທາຣຸນ
2 ຜູ້ຄິດປອງຮ້າຍຢູ່ໃນຈິດໃຈຂອງເຂົາ ແລະກໍ່ກວນຕໍ່ເນື່ອງກັນໃຫ້ມີສົງຄາມຂຶ້ນ
3 ເຂົາເຮັດລີ້ນຂອງເຂົາໃຫ້ຄົມເຫມືອນລີ້ນງູ ແລະພາຍໃຕ້ຮີມສົບຂອງເຂົາມີພິດຂອງງູທາງໄຫມ້
4 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຣະວັງຂ້າພຣະອົງໄວ້ໃຫ້ພົ້ນຈາກມືຂອງຄົນອະທັມ ຂໍຊົງສງວນຂ້າພຣະອົງໄວ້ຈາກ
ຄົນທາຣຸນ ຜູ້ຄິດແຜນການພິກຕີນຂອງຂ້າພຣະອົງ
5 ຄົນຈອງຫອງໄດ້ເຊື່ອງກັບດັກຂ້າພຣະອົງ ແລະວາງບ້ວງໄວ້ທີ່ຂ້າງທາງ ເຂົາກາງຕາມ່າງ ເຂົາຕັ້ງບ້ວງແຮ້ວດັກ
ຈັບຂ້າ ພຣະອົງ
6 ຂ້າພະເຈົ້າທູນພຣະຜູ້ເປັນເຈົ້າວ່າ, "ພຣະອົງຊົງເປັນພຣະເຈົ້າຂອງຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າຂໍຊົງງ່ຽງ
ພຣະກັນຟັງຄຳທູນວິງວອນຂອງຂ້າພຣະອົງ
7 ຂ້າແດ່ພຣະຜູ້ເປັນເຈົ້າ ຜູ້ຊ່ອຍກູ້ເຂັ້ມແຂງຂອງຂ້າພຣະອົງ ພຣະອົງຊົງຄຸມຫົວຂອງຂ້າພຣະອົງໄວ້ໃນຍາມເສິກ
8 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຢ່າຊົງອະນຸມັດຕາມຄວາມປາຖນາຂອງຄົນອະທັມ ຢ່າໃຫ້ການຄິດປອງຮ້າຍຂອງ
ເຂົາຄືບຫນ້າໄປຢ້ານວ່າເຂົາຈະຍົກຕົວຂຶ້ນ
9 ຝ່າຍຫົວຂອງຄົນທີ່ລ້ອມຂ້າພຣະອົງໄວ້ນັ້ນ ຂໍໃຫ້ຄຳສາບຂູ່ແຫ່ງຮີມສົບຂອງເຂົາຖ້ວມເຂົາ
10 ຂໍໃຫ້ຖ່ານທີ່ລຸກຢູ່ຕົກໃສ່ເຂົາ ຂໍໃຫ້ເຂົາຖືກຖິ້ມໃນໄຟລົງໄປໃນບໍ່ ບໍ່ໃຫ້ລຸກຂຶ້ນມາອີກ
11 ຂໍຢ່າໃຫ້ເຂົາຕັ້ງຄົນທີ່ມີລີ້ນລໍ້ລວງໄວ້ໃນແຜ່ນດິນ ຂໍໃຫ້ຄວາມຮ້າຍຕິດຕາມຄົນທາຣຸນຈົນໄດ້"
12 ຂ້າພະເຈົ້າຮູ້ວ່າ ພຣະຜູ້ເປັນເຈົ້າຊົງກະທຳຄວາມທ່ຽງທັມໃຫ້ແກ່ຜູ້ທີ່ທຸກຍາກ ແລະຊົງຈັດຄວາມຍຸດຕິທັມໃຫ້
ແກ່ຄົນຂັດສົນ
13 ແນ່ນອນທີ່ສຸດ ທີ່ຄົນຊອບທັມຈະຖວາຍໂມທະນາຂອບພຣະຄຸນພຣະນາມຂອງພຣະອົງ ຄົນທ່ຽງທັມຈະອາສັຍ
ຢູ່ຕໍ່ເບື້ອງພຣະພັກພຣະອົງ

## 141 ເພງສັຣເສີນ ບົດທີນຶ່ງຮ້ອຍສີ່ສິບເອັດ

### ຄຳອ້ອນວອນຂໍຊົງກັນໄວ້ໃຫ້ພົ້ນຄວາມຊົ່ວ

Prayer for Preservation from Evil

ເພງສັຣເສີນ ຂອງດາວິດ

A Psalm of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຮ້ອງທູນຕໍ່ພຣະອົງ ຂໍຊົງຮີບຕອບຂ້າພຣະອົງ ຂໍຊົງງ່ຽງພຣະກັນຟັງສຽງຂ້າພ
ຣະອົງ ເມື່ອຂ້າພຣະອົງຮ້ອງທູນພຣະອົງ

2 ຂໍໃຫ້ຄຳອ້ອນວອນຂອງຂ້າພຣະອົງເປັນດັ່ງເຄື່ອງຫອມຕໍ່ພຣະພັກພຣະອົງ ແລະທີ່ຂ້າພຣະອົງຍົກມືຂຶ້ນອ້ອນວອນເປັນດັ່ງເຄື່ອງສັດບູຊາເວລາຄ່ຳ
3 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຕັ້ງຍາມເຝົ້າປາກຂອງຂ້າພຣະອົງ ຂໍຮັກສາປະຕູຮີມສົບຂອງຂ້າພຣະອົງ
4 ຂໍຢ່າໃຫ້ຈິດໃຈຂ້າພຣະອົງເອນອຽງໄປຫາຄວາມຊົ່ວໃດໆ ຫລືໃຫ້ຂ້າພຣະອົງສົນລະວົນຢູ່ກັບການຊົ່ວຮ້າຍຮ່ວມກັບຄົນທີ່ທຳຄວາມຜິດບາບ ແລະຂໍຢ່າໃຫ້ຂ້າພຣະອົງກິນອັນແຊບຂອງເຂົາຈັກເທື່ອ
5 ຂໍໃຫ້ຄົນຊອບທັມຕີຂ້າພຣະອົງດ້ວຍຄວາມເມດຕາ ແລະຕິເຕືອນຂ້າພຣະອົງ ນ້ຳມັນດີຢ່າງນັ້ນຢ່າໃຫ້ຫົວຂ້າພຣະອົງປະຕິເສດເລີຍ ເພາະຂ້າພຣະອົງຍັງອ້ອນວອນຕໍ່ສູ້ຄວາມອະທັມຂອງເຂົາທັງຫລາຍຢູ່
6 ຜູ້ພິພາກສາທັງຫລາຍຂອງເຂົາຖືກໂຍນລົງທີ່ໜ້າຜາ ແລະຄົນຈະໄດ້ຍິນຖ້ອຍຄຳຂອງຂ້າພຣະອົງວ່າເປັນຖ້ອຍຄຳອັນ ມ່ວນອອນຊອນ
7 ເຫມືອນສິ່ງນຶ່ງແຕກແລະຫັກຢູ່ເທິງແຜ່ນດິນສັນໃດ ກະດູກຂອງເຂົາເຫລົ່ານັ້ນກໍກະຈາຍທີ່ປາກແດນຜູ້ຕາຍສັນນັ້ນ
8 ຂ້າແດ່ພຣະເຈົ້າ ຕາຂອງຂ້າພຣະອົງເພ່ງເບິ່ງພຣະອົງ ຂ້າພຣະອົງລີ້ພັຍໃນພຣະອົງ ຂໍຢ່າໃຫ້ຂ້າພຣະອົງຂາດໃຈ
9 ຂໍພຣະອົງຊົງໃຫ້ຂ້າພຣະອົງພົ້ນຈາກກັບຊຶ່ງເຂົາວາງດັກຂ້າພຣະອົງໄວ້ ແລະຈາກບ້ວງແຮ້ວຂອງຜູ້ກະທຳຊົ່ວ
10 ຂໍໃຫ້ຄົນອະທັມຕົກໄປດ້ວຍກັນໃນຕາໜ່າງຂອງຕົນເອງ ແຕ່ຂໍໃຫ້ຂ້າພຣະອົງຜ່ານພົ້ນໄປ

## 142 ເພງສັຣເສີນ ບົດທີນຶ່ງຮ້ອຍສີ່ສິບສອງ

### ຄຳອ້ອນວອນຂໍຄວາມຊ່ອຍເຫລືອໃນເວລາຍາກລຳບາກ

Prayer for Deliverance from Difficulties

ມັສຄິລບົດນຶ່ງ ຂອງດາວິດ ເມື່ອທ່ານຢູ່ໃນຖ້ຳ ຄຳອະທິຖານ

A Maskil of David. When he ea in the cave. A Prayer

1 ຂ້າພະເຈົ້າຮ້ອງທູນພຣະເຈົ້າດ້ວຍສຽງຂອງຂ້າພະເຈົ້າ ດ້ວຍສຽງຂອງຂ້າພະເຈົ້າ ຂ້າພະເຈົ້າວິງວອນຕໍ່ພຣະເຈົ້າ
2 ຂ້າພະເຈົ້າຫລັ່ງຄຳຄ່ຳຄວນຂອງຂ້າພະເຈົ້າອອກມາຕໍ່ເບື້ອງພຣະພັກພຣະອົງ ຂ້າພະເຈົ້າທູນເຣື່ອງຄວາມລຳບາກຍາກແຄ້ນຂອງຂ້າພະເຈົ້າຕໍ່ພຣະອົງ
3 ເມື່ອໃຈຂອງຂ້າພຣະອົງອ່ອນເພັຽລົງ ພຣະອົງຊົງຮູ້ທາງຂອງຂ້າພຣະອົງ ໃນວິຖີທີ່ຂ້າພຣະອົງເດີນໄປ ເຂົາເຊື່ອງກັບໄວ້ດັກຂ້າພຣະອົງ
4 ຂໍພຣະອົງຊົງເບິ່ງທາງຂວາແລະທອດພຣະເນດ ເພາະບໍ່ມີໃຜສັງເກດເບິ່ງຂ້າພຣະອົງ ຂ້າພຣະອົງບໍ່ມີທີ່ຫລົບພັຍ ບໍ່ມີໃຜເອົາໃຈໃສ່ຂ້າພຣະອົງ
5 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຮ້ອງທູນຕໍ່ພຣະອົງ ຂ້າພຣະອົງວ່າ ພຣະອົງຊົງເປັນທີ່ລີ້ພັຍຂອງຂ້າພຣະອົງເປັນສ່ວນຂອງຂ້າພຣະອົງໃນແຜ່ນດິນຂອງຄົນເປັນ
6 ຂໍຊົງຟັງຄຳຮ້ອງທູນຂອງຂ້າພຣະອົງ ເພາະຂ້າພຣະອົງຈົມຢູ່ໃນຄວາມສິ້ນຫວັງ ຂໍຊົງຊ່ອຍກູ້ຂ້າພຣະອົງໃຫ້ພົ້ນຈາກຜູ້ຂົ່ມເຫັງຂ້າພຣະອົງ ເພາະເຂົາແຂງແຮງເກີນກຳລັງຂ້າພຣະອົງ
7 ຂໍຊົງພາຂ້າພຣະອົງອອກຈາກຄຸກ ເພື່ອຂ້າພຣະອົງຈະໂມທະນາພຣະຄຸນແດ່ພຣະນາມຂອງພຣະອົງ ຄົນຊອບທັມຈະລ້ອມຂ້າພຣະອົງໄວ້ ເພາະພຣະອົງຈະຊົງກະທຳຢ່າງດີແກ່ຂ້າພຣະອົງ

## 143 ເພງສັຣເສີນ ບົດທີນຶ່ງຮ້ອຍສີ່ສິບສາມ

**ຄຳອ້ອນວອນຂໍຊົງຊ່ອຍກູ້ແລະຊົງນຳ**

Prayer for Deliverance from Enemies

ເພງສັຣເສີນ ຂອງດາວິດ

A Psalm of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຟັງຄຳອ້ອນວອນຂອງຂ້າພຣະອົງ ຂໍຊົງງ່ຽງພຣະກັນສະດັບຄຳວິງວອນຂອງຂ້າພ
ຣະອົງ ຂໍຊົງຕອບຂ້າພຣະອົງຕາມຄວາມສັດສຸຈຣິດຂອງພຣະອົງ ຕາມຄວາມຊອບທັມຂອງພຣະອົງ

2 ຂໍຢ່າຊົງຕັດສິນຜູ້ຮັບໃຊ້ຂອງພຣະອົງ ເພາະບໍ່ມີຄົນເປັນຄົນໃດທີ່ຊອບທັມຕໍ່ພຣະພັກພຣະອົງ

3 ເພາະສັດຕຣູໄລ່ກວດຂ້າພຣະອົງ ມັນຢຽບຢ່ຳຊີວິດຂ້າພຣະອົງລົງເຖິງດິນ ມັນໄດ້ກະທຳໃຫ້ຂ້າພຣະອົງນັ່ງໃນ
ຄວາມມືດເຫມືອນຄົນທີ່ຕາຍນານແລ້ວ

4 ເຫດສັນນັ້ນ ໃຈຂອງຂ້າພຣະອົງອ່ອນລະອາຢູ່ໃນຂ້າພຣະອົງ ຈິດໃຈພາຍໃນຂ້າພຣະອົງກໍຜິດຫວັງເຕັມທີ່ນ

5 ຂ້າພຣະອົງລະລຶກເຖິງສມັຍເກົ່າກ່ອນໄດ້ ຂ້າພຣະອົງພາວະນາເຖິງທຸກສິ່ງທີ່ພຣະອົງຊົງກະທຳ ຂ້າພຣະອົງຮ່ຳເ
ພິງເຖິງ ສີພຣະຫັດຂອງພຣະອົງ

6 ຂ້າພຣະອົງຢຽດແຂນອອກໄປສູ່ພຣະອົງ ຈິດໃຈຂອງຂ້າພຣະອົງກະຫາຍຫາພຣະອົງຢ່າງແຜ່ນດິນທີ່ແຫ້ງແລ້ງ

7 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຮີບຕອບຂ້າພຣະອົງ ໃຈຂ້າພຣະອົງເສັງຄວາມຫວັງທັງຫມົດສາແລ້ວ ຂໍຢ່າຊົງ
ເຊື່ອງພຣະພັກຂອງພຣະອົງໄວ້ຈາກຂ້າພຣະອົງ ຢ້ານວ່າຂ້າພຣະອົງຈະເຫມືອນຄົນເຫລົ່ານັ້ນທີ່ລົງໄປຍັງປາກ
ແດນຜູ້ຕາຍ

8 ຂໍຊົງໂຜດໃຫ້ຂ້າພຣະອົງໄດ້ຍິນເຖິງຄວາມຮັກຫມັ້ນຄົງຂອງພຣະອົງໃນເວລາເຊົ້າ ເພາະຂ້າພຣະອົງວາງໃຈໃນ
ພຣະອົງ ຂໍຊົງສອນຂ້າພຣະອົງເຖິງທາງທີ່ຄວນໄປ ເພາະຂ້າພຣະອົງຕັ້ງໃຈແນ່ວແນ່ໃນພຣະອົງ

9 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຊ່ອຍກູ້ຂ້າພຣະອົງຈາກສັດຕຣູຂອງຂ້າພຣະອົງ ຂ້າພຣະອົງໄດ້ລີ້ຊ່ອນຕົວຢູ່ກັບພ
ຣະອົງ

10 ຂໍຊົງສອນໃຫ້ຂ້າພຣະອົງເຮັດຕາມພຣະທັຍຂອງພຣະອົງ ເພາະພຣະອົງຊົງເປັນພຣະເຈົ້າຂອງຂ້າພຣະອົງ ຂໍພ
ຣະວິນຍານປະເສີດຂອງພຣະອົງຊົງນຳຂ້າພຣະອົງໄປຕາມວິຖີທາງອັນລາບລື້ນ

11 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງສງວນຊີວິດຂ້າພຣະອົງໄວ້ ເພາະເຫັນແກ່ພຣະນາມຂອງພຣະອົງ ຂໍຊົງນຳຂ້າພຣະ
ອົງອອກມາຈາກຄວາມຍາກລຳບາກຕາມຄວາມຊອບທັມຂອງພຣະອົງ

12 ຂໍຊົງຕັດສັດຕຣູຂອງຂ້າພຣະອົງອອກໄປຕາມຄວາມຮັກຫມັ້ນຄົງຂອງພຣະອົງ ແລະຂໍຊົງທຳລາຍບັນດາຜູ້ທີ່
ຂົ່ມໃຈຂ້າ ພຣະອົງ ເພາະຂ້າພຣະອົງເປັນຜູ້ຮັບໃຊ້ຂອງພຣະອົງ

## 144 ເພງສັຣເສີນ ບົດທີນຶ່ງຮ້ອຍສີ່ສິບສີ່

**ຄຳອ້ອນວອນຂໍຊົງຊ່ອຍໃຫ້ພົ້ນແລະເພື່ອຄວາມມັ່ງຄັ່ງ**

Prayer for National Deliverance and Security

ຂອງດາວິດ

Of David.

1 ສາທຸການແດ່ພຣະເຈົ້າ ພຣະສີລາຂອງຂ້າພະເຈົ້າ ຜູ້ຊົງຝຶກມືຂອງຂ້າພະເຈົ້າໃຫ້ເຮັດສົງຄາມ ແລະນິ້ວມືຂອງ
ຂ້າພະເຈົ້າໃຫ້ເຮັດເສິກ

2 ຊົງເປັນຄວາມຮັກຫມັ້ນຄົງ ແລະປ້ອມ ເປັນທີ່ກຳບັງເຂັ້ມແຂງ ແລະເປັນຜູ້ຊ່ອຍກູ້ຂອງຂ້າພະເຈົ້າ ເປັນໂລ່ແຂງ
ຂ້າພະເຈົ້າ ແລະເປັນຜູ້ຊຶ່ງຂ້າພະເຈົ້າລີ້ພັຍໃນພຣະອົງ ຜູ້ຊົງປາບປະຊາຊາດທັງຫລາຍໄວ້ໃຕ້ຂ້າພະເຈົ້າ

3 ຂ້າແດ່ພຣະຜູ້ເປັນເຈົ້າ ມະນຸດເປັນຫຍັງຫນໍ ຊຶ່ງພຣະອົງຊົງສົນພຣະທັຍໃສ່ເຂົາ ຫລືບຸດຂອງມະນຸດເປັນຫຍັງ
ຊຶ່ງພຣະອົງຊົງຄິດເຖິງເຂົາ

4 ມະນຸດເຫມືອນລົມຫາຍໃຈ ວັນເວລາຂອງເຂົາເຫມືອນເງົາທີ່ຜ່ານໄປ

5 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໂນ້ມຟ້າສວັນຂອງພຣະອົງ ແລະຂໍສະເດັດລົງມາແຕະຕ້ອງພູເພື່ອໃຫ້ມັນມີຄວັນຂຶ້ນ

6 ຂໍຊົງສົ່ງຟ້າແມບອອກມາ ແລະກະຈາຍເຂົາໄປ ຂໍໃຫ້ລູກທະນູຂອງພຣະອົງໃຫ້ເຂົາແຕກຫນີໄປ

7 ຂໍຊົງຢຽດພຣະຫັດຂອງພຣະອົງຈາກທີ່ສູງ ຂໍຊົງຊ່ອຍແລະກູ້ຂ້າພຣະອົງໃຫ້ພົ້ນຈາກມືຂອງຊົນຕ່າງດ້າວ

8 ຜູ້ຊຶ່ງປາກຂອງເຂົາເວົ້າເທັດ ແລະຊຶ່ງມືຂວາຂອງເຂົາເປັນມືຂວາແຫ່ງຄວາມມຸສາ

9 ຂ້າແດ່ພຣະເຈົ້າ ຂ້າພຣະອົງຈະຮ້ອງເພງບົດໃຫມ່ຖວາຍແດ່ພຣະອົງ ຂ້າພຣະອົງຈະດີດພິນສິບສາຍຖວາຍພຣະອົງ

10 ຜູ້ປະທານຊັຍຊະນະແກ່ພຣະຣາຊາ ຜູ້ຊົງຊ່ອຍດາວິດຜູ້ຮັບໃຊ້ຂອງພຣະອົງໃຫ້ລອດ

11 ຂໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນຈາກດາບ ແລະຂໍຊົງຊ່ອຍກູ້ຂ້າພຣະອົງຈາກມືຄົນຕ່າງດ້າວ ຜູ້ຊຶ່ງປາກຂອງເຂົາເວົ້າເທັດ ແລະຊຶ່ງມືຂວາຂອງເຂົາເປັນມືຂວາແຫ່ງຄວາມມຸສາ

12 ຂ້າພະເຈົ້າທັງຫລາຍຜູ້ຊຶ່ງບັນດາບຸດຊາຍຂອງຂ້າພະເຈົ້າ ເມື່ອເຂົາຍັງຫນຸ່ມໆຢູ່ເປັນເຫມືອນຕົ້ນໄມ້ໃຫຍ່ເຕັມຂນາດ ຊຶ່ງບັນດາບຸດຍິງຂອງຂ້າພະເຈົ້າເປັນເຫມືອນເສົາຫົວມຸມສລັກອອກມາຕາມແບບພຣະຣາຊວັງ

13 ຊຶ່ງເລົ້າສາງຂອງຂ້າພະເຈົ້າທັງຫລາຍເຕັມມີຂອງບັນຈຸຢູ່ທຸກຢ່າງຊຶ່ງແກະຂອງຂ້າພະເຈົ້າທັງຫລາຍມີລູກຕັ້ງພັນຕັ້ງຫມື່ນທີ່ໃນທົ່ງຂອງຂ້າພະເຈົ້າ

14 ຊຶ່ງສັດໃຊ້ຂອງຂ້າພະເຈົ້າບໍ່ຫລຸລູກແຕ່ອອກລູກໃຫ້ຫລາຍ ບໍ່ມີໃຜພັງເຂົ້າມາ ບໍ່ມີອອກໄປ ແລະຊຶ່ງບໍ່ມີສຽງຮ້ອງທຸກໃນ ຖນົນຫົນທາງຂອງຂ້າພະເຈົ້າ

15 ຊົນຊາດຜູ້ມີພຣະພອນຢ່າງນີ້ຫລັ່ງລົງມາເຖິງ ກໍເປັນສຸກ ຊົນຊາດຊຶ່ງພຣະເຈົ້າຂອງເຂົາຄືພຣະຜູ້ເປັນເຈົ້າ ກໍເປັນສຸກ

## 145 ເພງສັຣເສີນ ບົດທີນຶ່ງຮ້ອຍສີ່ສິບຫ້າ

### ຄໍາສັຣເສີນເພາະພຣະຄຸນແລະຣິດທານຸພາບຂອງພຣະເຈົ້າ

The Greatness and the Goodness of God

ບົດເພງສັຣເສີນ ຂອງດາວິດ

Praise. Of David.

1 ຂ້າພຣະອົງຈະປະກາດຄວາມຍິ່ງໃຫຍ່ຂອງພຣະອົງ ຜູ້ຊົງເປັນເຈົ້າມະຫາຊີວິດຂອງຂ້າພຣະອົງ ຂ້າພຣະອົງຈະສັຣເສີນ ພຣະອົງຕລອດໄປ

2 ຂ້າພຣະອົງຈະຂອບພຣະຄຸນພຣະອົງທຸກໆວັນ ແລະຈະສັຣເສີນພຣະອົງຕລອດໄປ

3 ພຣະຜູ້ເປັນເຈົ້າຊົງຍິ່ງໃຫຍ່ ແລະສົມຄວນໄດ້ຮັບຄໍາສັຣເສີນອັນສູງສົ່ງ ຄວາມຍິ່ງໃຫຍ່ຂອງພຣະອົງຊົງໃຫຍ່ກວ່າຄວາມເຂົ້າໃຈຂອງຂ້າພຣະອົງ

4 ສິ່ງທີ່ພຣະອົງຊົງກະທໍານັ້ນ ຈະຕ້ອງໄດ້ຮັບຄໍາສັຣເສີນຈາກຄົນຊົ່ວອາຍຸນີ້ແລະຊົ່ວອາຍຸຫນ້າ ເຂົາຈະປະກາດເຖິງກິຈການອັນຍິ່ງໃຫຍ່ຂອງພຣະອົງ

5 ມະນຸດຈະກ່າວເຖິງຣັສມີ ແລະອໍານາດອັນສະງ່າຣາສີຂອງພຣະອົງ ສ່ວນຂ້າພຣະອົງກໍຈະຄິດເຖິງການກະທໍາອັນອັສຈັນຂອງພຣະອົງ

6 ມະນຸດຈະກ່າວເຖິງການກະທໍາອັນຫນ້າຢ້ານກົວຂອງພຣະອົງ ສ່ວນຂ້າພຣະອົງກໍຈະປະກາດເຖິງຄວາມຍິ່ງໃຫຍ່ຂອງພຣະອົງ

7 ເຂົາຈະເວົ້າເຖິງຄວາມດີທຸກຢ່າງຂອງພຣະອົງ ແລະຮ້ອງເພງສັຣເສີນຄວາມເມດຕາປານີຂອງພຣະອົງ

8 ພຣະຜູ້ເປັນເຈົ້າຊົງມີຄວາມຮັກແລະເມດຕາປານີ ພຣະອົງຊົງພິໂຣດຊ້າແລະເຕັມໄປດ້ວຍຄວາມຮັກໝັ້ນຄົງ

9 ພຣະອົງຊົງດີຕໍ່ທຸກໆຄົນ ແລະສົງສານຕໍ່ທຸກໆສິ່ງທີ່ພຣະອົງຊົງສ້າງມາ

10 ຂ້າແດ່ພຣະຜູ້ເປັນເຈົ້າ ທຸກໆສິ່ງທີ່ພຣະອົງຊົງສ້າງມານັ້ນຈະສັຣເສີນພຣະອົງ ແລະໄພ່ພົນຂອງພຣະອົງຈະຖວາຍຄວາມ ຂອບພຣະຄຸນແດ່ພຣະອົງ

11 ເຂົາຈະກ່າວເຖິງຣັສມີແຫ່ງຣາຊອານາຈັກຂອງພຣະອົງ ແລະບອກທຸກຄົນເຖິງອຳນາດອັນຍິ່ງໃຫຍ່ຂອງພຣະອົງ

12 ເພື່ອວ່າມະນຸດທຸກຄົນຈະຮູ້ຈັກກິຈການອັນຍິ່ງໃຫຍ່ຂອງພຣະອົງ ແລະຣັສມີອັນສະງ່າຣາສີແຫ່ງພຣະຣາຊອານາຈັກຂອງພຣະອົງ

13 ຣາຊອານາຈັກຂອງພຣະອົງຊົງເປັນຢູ່ຕລອດໄປ ແລະພຣະອົງກໍຊົງເປັນພຣະເຈົ້າມະຫາຊີວິດສືບໆໄປ ພຣະເຈົ້າຊົງສັດຊື່ຕໍ່ຄຳສັນຍາຂອງພຣະອົງ ແລະກິຈການທຸກຢ່າງຂອງພຣະອົງຊົງດີ

14 ພຣະອົງຊົງຊ່ອຍເຫລືອທຸກໆຄົນທີ່ຕົກທຸກໄດ້ຍາກ ແລະຊົງຍົກຍໍທຸກໆຄົນທີ່ຖືກຫຍໍ້ທຍັນ

15 ທຸກໆສິ່ງທີ່ມີຊີວິດກໍມີຄວາມຫວັງຢ່າງລົ້ນເຫລືອຢູ່ໃນພຣະອົງ ແລະພຣະອົງຊົງປະທານອາຫານໃຫ້ຕາມທີ່ເຂົາຕ້ອງການ

16 ພຣະອົງຊົງປະທານໃຫ້ເຂົາຢ່າງພຽງພໍ ແລະຊົງໃຫ້ເຂົາເພິ່ງພໍໃຈໃນຄວາມປະສົງທຸກຢ່າງ

17 ພຣະຜູ້ເປັນເຈົ້າຊົງຊອບທັມຕາມທາງທັງສິ້ນຂອງພຣະອົງ ແລະຊົງເອັນດູໃນການກະທຳທັງສິ້ນຂອງພຣະອົງ

18 ພຣະຜູ້ເປັນເຈົ້າຊົງຢູ່ໃກ້ໆທຸກໆຄົນທີ່ຮ້ອງຫາພຣະອົງ ທັງຜູ້ທີ່ຮ້ອງຫາພຣະອົງດ້ວຍຈິງໃຈ

19 ພຣະອົງຊົງຕອບສນອງຄວາມຕ້ອງການຂອງທຸກຄົນທີ່ຢຳເກງພຣະອົງ ພຣະອົງຊົງໄດ້ຍິນສຽງຮ້ອງໄຫ້ຂອງເຂົາ ແລະຊົງຊ່ອຍເຂົາໃຫ້ພົ້ນພັຍ

20 ພຣະອົງຊົງດູແລຮັກສາທຸກຄົນທີ່ຮັກພຣະອົງ ແຕ່ວ່າພຣະອົງຈະທຳລາຍຄົນຊົ່ວທຸກຄົນຖິ້ມຫມົດ

21 ຂ້າພຣະອົງຈະສັຣເສີນພຣະຜູ້ເປັນເຈົ້າເລື້ອຍໆ ຂໍໃຫ້ທຸກສິ່ງທີ່ພຣະອົງຊົງສ້າງມານັ້ນ ສັຣເສີນພຣະນາມອັນບໍຣິສຸດຂອງ ພຣະອົງຕລອດໄປ

## 146 ເພງສັຣເສີນ ບົດທີນຶ່ງຮ້ອຍສີ່ສິບຫົກ

### ການສັຣເສີນພຣະຜູ້ຊ່ອຍໃຫ້ພົ້ນພັຍ

Praise for God’s Help

1 ຈົ່ງສັຣເສີນພຣະຜູ້ເປັນເຈົ້າ ຈິດວິນຍານຂອງຂ້າເອີຍ ຈົ່ງສັຣເສີນພຣະອົງ

2 ຕລອດຊົ່ວຊີວິດຂອງຂ້າ ຂ້າຈະສັຣເສີນພຣະອົງ ແລະຈະຮ້ອງເພງຖວາຍແດ່ພຣະເຈົ້າຂອງຂ້າຈົນສິ້ນຊີວິດ

3 ຂໍທ່ານຢ່າໄວ້ເນື້ອເຊື່ອໃຈນຳພວກເຈົ້ານາຍທັງຫລາຍ ຄືມະນຸດທີ່ບໍ່ອາດຈະຊ່ອຍທ່ານໃຫ້ພົ້ນພັຍໄດ້

4 ເວລາເຂົາຕາຍ ເຂົາກໍກັບຄືນເປັນຂີ້ຝຸ່ນດິນ ໃນວັນນັ້ນແຜນການທຸກຢ່າງກໍຈະເຖິງຈຸດຈົບ

5 ຄວາມສຸກຈົ່ງເປັນຂອງຜູ້ທີ່ໄດ້ຮັບຄວາມຊ່ອຍເຫລືອຈາກພຣະເຈົ້າຂອງຢາໂຄບ ແລະຜູ້ທີ່ໄວ້ໃຈໃນພຣະຜູ້ເປັນເຈົ້າຂອງຕົນ

6 ຜູ້ຊົງສ້າງຟ້າສວັນ ໂລກ ແລະນ້ຳທະເລ ພ້ອມທັງທຸກໆສິ່ງທີ່ຢູ່ໃນນັ້ນ ພຣະອົງຊົງຮັກສາຄຳສັນຍາຂອງພຣະອົງໄວ້ສເມີ

7 ພຣະອົງຊົງຕັດສິນເຂົ້າຂ້າງຜູ້ທີ່ຖືກຂົ່ມເຫັງ ແລະຊົງປະທານອາຫານໃຫ້ແກ່ຜູ້ທີ່ອຶດຫິວ ພຣະຜູ້ເປັນເຈົ້າຊົງຊ່ອຍນັກໂທດເປັນອິສຣະ

8 ແລະໃຫ້ຄົນຕາບອດໄດ້ເຫັນຮຸ່ງ ພຣະອົງຊົງຍົກຍໍທຸກຄົນທີ່ຖືກຫຍໍ້ທຍັນ ແລະຊົງຮັກຄົນຊອບທັມ

9 ພຣະອົງຊົງຄຸ້ມຄອງຄົນຕ່າງດ້າວທີ່ອາສັຍຢູ່ໃນປະເທດ ພຣະອົງຊົງຊ່ອຍພວກຍິງຫມ້າຍແລະລູກກໍາພ້າ ແຕ່ຊົງ
ທໍາລາຍແຜນການຂອງຄົນຊົ່ວ
10 ພຣະຜູ້ເປັນເຈົ້າຈະຊົງເປັນພຣະເຈົ້າມະຫາຊີວິດຕລອດໄປ ເມືອງຊີໂອນເອີຍ ພຣະເຈົ້າຂອງເຈົ້າຈະປົກປັກຮັກ
ສາຕລອດເວລາ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ

## 147 ເພງສັຣເສີນ ບົດທີນຶ່ງຮ້ອຍສີ່ສິບເຈັດ

### ຄໍາສັຣເສີນເພາະພຣະເຈົ້າຊົງໂປດປານເຢຣູຊາເລັມ

Praise for God's Care for Jerusalem

1 ຈົ່ງສັຣເສີນພຣະຜູ້ເປັນເຈົ້າເຖີດ ເປັນການດີທີ່ຈະຮ້ອງເພງຖວາຍສັຣເສີນແດ່ພຣະເຈົ້າຂອງເຮົາ ເພາະພຣະອົງ
ຊົງພຣະເມດຕາ ແລະບົດເພງຖວາຍສັຣເສີນກໍເຫມາະສົມ
2 ພຣະຜູ້ເປັນເຈົ້າກໍ່ສ້າງເຢຣູຊາເລັມຂຶ້ນ ພຣະອົງຊົງຮວບຮວມຄົນອິສຣາເອນທີ່ຕ້ອງກະຈັດກະຈາຍໄປ
3 ພຣະອົງຊົງຮັກສາຄົນທີ່ຊອກຊໍ້າໃນຈິດໃຈ ແລະຊົງພັນຜູກບາດແຜຂອງເຂົາ
4 ພຣະອົງຊົງນັບຈໍານວນດາວ ພຣະອົງຊົງຕັ້ງຊື່ມັນທຸກດວງ
5 ອົງພຣະຜູ້ເປັນເຈົ້າຂອງເຮົາຍິ່ງໃຫຍ່ ແລະຊົງຣິດທານຸພາບອັນອຸດົມ ຄວາມເຂົ້າໃຈຂອງພຣະອົງນັ້ນວັດບໍ່ໄດ້
6 ພຣະຜູ້ເປັນເຈົ້າຊົງຊູຜູ້ທີ່ຖືກຢຽບຢໍ່າຂຶ້ນ ພຣະອົງຊົງໂຍນຄົນອະທັມລົງເຖິງດິນ
7 ຈົ່ງຮ້ອງເພງໂມທະນາພຣະຄຸນຖວາຍພຣະຜູ້ເປັນເຈົ້າ ຈົ່ງດີດພິນເຂົາຄູ່ຖວາຍພຣະເຈົ້າຂອງເຮົາ
8 ພຣະອົງຊົງຄຸມຟ້າສວັນດ້ວຍເມກ ພຣະອົງຊົງຕຽມຝົນໃຫ້ແກ່ແຜ່ນດິນໂລກ ພຣະອົງຊົງກະທໍາໃຫ້ຫຍ້າງອກ
ຢູ່ເທິງພູ
9 ພຣະອົງປະທານອາຫານແກ່ສັດ ແລະແກ່ລູກກາທີ່ຮ້ອງ
10 ຄວາມປິຕິຍິນດີຂອງພຣະອົງບໍ່ໄດ້ຢູ່ໃນກໍາລັງຂອງມ້າ ຫລືຄວາມສຸກໃຈຂອງພຣະອົງຢູ່ໃນທະຫານທີ່ເກັ່ງກ້າ
11 ແຕ່ພຣະຜູ້ເປັນເຈົ້າພໍໃຈໃນຄົນຍໍາເກງພຣະອົງ ແລະໃນຄົນທີ່ຄວາມຫວັງຂອງເຂົາຢູ່ໃນຄວາມຮັກຫມັ້ນຄົງ
ຂອງພຣະອົງ
12 ເຢຣູຊາເລັມເອີຍ ຈົ່ງຍົກຍ້ອງພຣະຜູ້ເປັນເຈົ້າ ຊີໂອນເອີຍ ຈົ່ງຖວາຍສັຣເສີນແດ່ພຣະເຈົ້າຂອງເຈົ້າ
13 ເພາະພຣະອົງຊົງເສີມກໍາລັງການປະຕູຂອງເຈົ້າ ພຣະອົງຊົງອວຍພຣະພອນບຸດທັງຫລາຍທີ່ຢູ່ພາຍໃນເຈົ້າ
14 ພຣະອົງຊົງກະທໍາສັນຕິພາບໃນເຂດແດນຂອງເຈົ້າ ຊົງໃຫ້ເຈົ້າອີ່ມດ້ວຍເຂົ້າສາລີທີ່ດີທີ່ສຸດ
15 ພຣະອົງຊົງໃຊ້ພຣະບັນຍັດຂອງພຣະອົງອອກໄປຍັງແຜ່ນດິນໂລກ ພຣະຄໍາຂອງພຣະອົງໄປໄວ
16 ພຣະອົງປະທານຫິມມະດັ່ງປຸຍຂົນແກະ ຊົງຫວ່ານນໍ້າຫມອກແຂງຂາວເຫລື້ອມໆ
17 ພຣະອົງຊົງໂຍນນໍ້າແຂງຂອງພຣະອົງເປັນກ້ອນໆ ໃຜຈະທົນທານຄວາມຫນາວຂອງພຣະອົງໄດ້
18 ພຣະອົງຊົງໃຊ້ພຣະຄໍາຂອງພຣະອົງອອກໄປ ແລະລະລາຍມັນເສັຽ ພຣະອົງຊົງໃຫ້ລົມພັດ ແລະນໍ້າກໍໄຫລ
19 ພຣະອົງຊົງສໍາແດງພຣະຄໍາຂອງພຣະອົງແກ່ຢາໂຄບ ກົດບັນຍັດ ແລະກົດຫມາຍຂອງພຣະອົງແກ່ອິສຣາເອນ
20 ພຣະອົງບໍ່ໄດ້ຊົງປະກອບການເຊັ່ນນີ້ແກ່ປະຊາຊາດອື່ນໃດ ເຂົາບໍ່ຮູ້ຈັກກົດຫມາຍຂອງພຣະອົງ ຈົ່ງສັຣເສີນພ
ຣະຜູ້ເປັນເຈົ້າເທີ້ນ

## 148 ເພງສັຣເສີນ ບົດທີນຶ່ງຮ້ອຍສີ່ສິບແປດ

### ທົ່ວທັງຈັກກະວານຈົ່ງສັຣເສີນພຣະເຈົ້າ

Praise for God's Universal Glory

1 ຈົ່ງສັຣເສີນພຣະຜູ້ເປັນເຈົ້າ ພວກເຈົ້າທີ່ຢູ່ເທິງຟ້າສວັນ ຈົ່ງສັຣເສີນພຣະຜູ້ເປັນເຈົ້າຈາກເບື້ອງເທິງ

2 ຄືພວກເທວະດາທັງຫລາຍ ພ້ອມທັງຝູງກອງທັບເມືອງຟ້າສວັນ ຈົ່ງສັຣເສີນພຣະອົງ
3 ດວງຕາເວັນ ແລະດວງເດືອນ ພ້ອມທັງດວງດາວທີ່ສ່ອງແສງສວ່າງ ຈົ່ງສັຣເສີນພຣະອົງ
4 ຟ້າສວັນສູງສຸດ ແລະທັງນໍ້າທີ່ຢູ່ເທິງທ້ອງຟ້າ ຈົ່ງສັຣເສີນພຣະອົງ
5 ຂໍໃຫ້ທຸກໆສິ່ງເຫລົ່ານີ້ສັຣເສີນພຣະນາມຂອງພຣະຜູ້ເປັນເຈົ້າ ເພາະພຣະອົງຊົງຊົງຮັບສັ່ງສິ່ງເຫລົ່ານີ້ຈຶ່ງເກີດຂຶ້ນ
ມາ
6 ຍ້ອນຄໍາສັ່ງຂອງພຣະອົງ ສິ່ງເຫລົ່ານີ້ຈຶ່ງຄົງຢູ່ບ່ອນເກົ່າຕລອດໄປ ແລະພວກມັນກໍບໍ່ໄດ້ລະເມີດຄໍາສັ່ງຂອງພ
ຣະອົງ
7 ຈົ່ງສັຣເສີນພຣະຜູ້ເປັນເຈົ້າຈາກແຜ່ນດິນໂລກ ສັດທະເລ ແລະມະຫາສມຸດເລິກທັງຫລາຍ
8 ຟ້າແມບ ຫມາກເຫັບ ຫິມມະ ແລະເມກຫມອກ ພ້ອມທັງລົມແຮງກ້າທີ່ເຊື່ອຟັງຄໍາສັ່ງຂອງພຣະອົງ ຈົ່ງສັຣເສີນ
ພຣະຜູ້ເປັນເຈົ້າຈາກແຜ່ນດິນໂລກ
9 ພູນ້ອຍ ແລະພູໃຫຍ່ທັງຫລາຍ ພ້ອມທັງຕົ້ນຫມາກໄມ້ ແລະປ່າດົງພົງໄພ ຈົ່ງສັຣເສີນພຣະອົງ
10 ສັດບ້ານແລະສັດປ່າທຸກຕົວ ພ້ອມທັງສັດເລືອຄານແລະຝູງນົກ ຈົ່ງສັຣເສີນພຣະອົງ
11 ບັນດາເຈົ້າຊີວິດ ພວກເຈົ້າຊາຍແລະພວກເຈົ້ານາຍ ພ້ອມທັງປະຊາຊົນທຸກທົ່ວຫນ້າ
12 ຊາຍຫນຸ່ມຍິງສາວ ຜູ້ເຖົ້າ ພ້ອມທັງເດັກນ້ອຍ ຈົ່ງພາກັນສັຣເສີນພຣະອົງ
13 ຂໍໃຫ້ທັງຫມົດນີ້ສັຣເສີນພຣະນາມຂອງພຣະຜູ້ເປັນເຈົ້າ ພຣະນາມຂອງພຣະອົງຊົງຍິ່ງໃຫຍ່ກວ່າສິ່ງອື່ນໃດ ຣັສ
ມີຂອງພຣະອົງຊົງສູງກວ່າແຜ່ນດິນໂລກ ແລະຟ້າສວັນ
14 ພຣະອົງຊົງໃຫ້ຊົນຊາດຂອງພຣະອົງແຂງແຮງຂຶ້ນ ເພື່ອວ່າໄພ່ພົນທຸກຄົນຈະສັຣເສີນພຣະອົງ ຄືຊາວອິສຣາ
ເອນຊຶ່ງເປັນຜູ້ທີ່ຮັກຂອງພຣະອົງ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ

## 149 ເພງສັຣເສີນ ບົດທີນຶ່ງຮ້ອຍສີ່ສິບເກົ້າ

### ອິສຣາເອນຖືກຕັກເຕືອນໃຫ້ສັຣເສີນພຣະເຈົ້າ

Praise for God’s Goodness to Israel

1 ຈົ່ງສັຣເສີນພຣະຜູ້ເປັນເຈົ້າເຈົ້າເຖີດ ຈົ່ງຮ້ອງເພງບົດໃຫມ່ຖວາຍພຣະຜູ້ເປັນເຈົ້າ ຮ້ອງບົດສັຣເສີນຖວາຍພຣະ
ອົງໃນຊຸມນຸມໄພ່ພົນຂອງພຣະອົງ
2 ໃຫ້ອິສຣາເອນຍິນດີໃນຜູ້ສ້າງຂອງເຂົາ ໃຫ້ລູກຊາຍທັງຫລາຍຂອງຊີໂອນຊົມຊື່ນໃນກະສັດຂອງເຂົາ
3 ໃຫ້ສັຣເສີນພຣະນາມຂອງພຣະອົງດ້ວຍເຕັ້ນລໍາ ຖວາຍເພງແດ່ພຣະອົງດ້ວຍຣໍາມະນາແລະພິນເຂົາຄູ່
4 ເພາະພຣະຜູ້ເປັນເຈົ້າຊົງຊື່ນບານໃຈໃນປະຊາກອນຂອງພຣະອົງ ພຣະອົງຊົງປະດັບຊັຍໃຫ້ແກ່ຄົນຖ່ອມໃຈ
5 ໃຫ້ປະຊາຊົນຊົມຊື່ນໃນຊັຍຊະນະ ໃຫ້ເຂົາຮ້ອງເພງດ້ວຍຄວາມຊື່ນບານເທິງທີ່ນອນຂອງເຂົາ
6 ໃນການສັຣເສີນຢ່າງສູງແດ່ພຣະເຈົ້າຢູ່ໃນລໍາຄໍຂອງເຂົາ ແລະໃຫ້ດາບສອງຄົມຢູ່ໃນມືຂອງເຂົາ
7 ເພື່ອທໍາການແກ້ແຄ້ນບັນດາປະຊາຊາດ ແລະທໍາການລົງໂທດຊົນຊາດທັງຫລາຍ
8 ເພື່ອເອົາໂສ້ລ່າມບັນດາພຣະຣາຊາຂອງເຂົາ ແລະເອົາເຄື່ອງເຫລັກຈໍາຈອງລ່າມບັນດາເຈົ້ານາຍຂອງເຂົາ
9 ເພື່ອຈະກະທໍາແກ່ເຂົາຕາມຄໍາພິພາກສາທີ່ບັນທຶກໄວ້ແລ້ວ ນີ້ເປັນກຽດແກ່ບັນດາປະຊາຊົນຂອງພຣະອົງ ຈົ່ງ
ສັຣເສີນພຣະຜູ້ເປັນເຈົ້າເທີນ

## 150 ເພງສັຣເສີນ ບົດທີນຶ່ງຮ້ອຍຫ້າສິບ

### ສັຣເສີນພຣະຜູ້ເປັນເຈົ້າ

Praise for God’s Surpassing Greatness

1 ຈົ່ງສັຣເສີນພຣະຜູ້ເປັນເຈົ້າ ຈົ່ງສັຣເສີນພຣະເຈົ້າໃນສະຖານນະມັສການຂອງພຣະອົງ ຈົ່ງສັຣເສີນຣິດທານຸພາບ
ຂອງພຣະອົງໃນຟ້າສວັນ

2 ຈົ່ງສັຣເສີນພຣະອົງຍ້ອນສິ່ງອັດສະຈັນຍິ່ງໃຫຍ່ທີ່ພຣະອົງຊົງກະທຳ ຈົ່ງສັຣເສີນຄວາມຍິ່ງໃຫຍ່ທີ່ສຸດຂອງພຣະ
ອົງ

3 ຈົ່ງສັຣເສີນພຣະອົງດ້ວຍສຽງເປົ່າແກ ຈົ່ງສັຣເສີນພຣະອົງດ້ວຍພິນເຂົາຄູ່ແລະພິນໃຫຍ່

4 ຈົ່ງສັຣເສີນພຣະອົງດ້ວຍຣຳມະນາ ແລະຟ້ອນລຳ ຈົ່ງສັຣເສີນພຣະອົງດ້ວຍດີດພິນ ແລະເປົ່າຂຸ່ຍ

5 ຈົ່ງສັຣເສີນພຣະອົງດ້ວຍສຽງສິ່ງ ຈົ່ງສັຣເສີນດ້ວຍສຽງສາບ

6 ທຸກໆສິ່ງທີ່ມີຊີວິດ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ